ໝວດວິຊາ ຄູທົ່ວໄປ

ສາຍຄູອະນຸບານ

# ຈິດຕະວິທະຍາການສຶກສາ



ສິກຮຽນ 2022

# ຈິດຕະວິທະຍາການສຶກສາ

| ລະບົບ 12+ 4 | ປີ 1 | ພາຮຽນທີ 2 |
|---|---|---|

ຮຽບຮຽງໂດຍ:
ຊອ ສີເຝືອງ ຈອມພະຈັນ
ກວດແກ້ໂດຍ:
ຊອ ປທ ສີມບູນ ຊາມຸນຕີ
ປທ ນ ລິດສະໄໝ ດວງມາລາ
ນ ຄໍາບານ ພິມມະຈັກ

ສິງຫາ 2022

# ຄຳນຳ

ຂ້າພະເຈົ້າເຊື່ອວ່າເອກະສານສະບັບນີ້ ແມ່ນເອກະສານວິທະຍາສາດຂະແໜງໜຶ່ງທີ່ຫນ້າສົນໃຈ ແລະ ປະໂຫຍດສຳຫລັບວົງການສຶກສາ ເວົ້າລວມ ແລະ ສະຖາບັນການສຶກສາວິຊາຊີບຄູ ແລະ ຂະແໜງການອື່ນ ເວົ້າສະເພາະ, ມັນມີຄວາມສຳຄັນເປັນຢ່າງຍິ່ງ ໃຫ້ແກ່ຜູ້ທີ່ເຮັດວຽກງານສຶກສາໂດຍສະເພາະແມ່ນຜູ້ທີ່ເປັນຄູ, ເນື່ອງຈາກຂ້າພະເຈົ້າໄດ້ພະຍາຍາມຈັດຫາເນື້ອໃນສຳຄັນ ກ່ຽວກັບຄວາມເປັນຄູ ວິຊານີ້ເວົ້າເຖິງຄວາມຮູ້ເບື້ອງຕົ້ນກ່ຽວກັບຈິດຕະວິທະຍາກາສຶກສາ, ຄວາມເປັນຄູ, ຄວາມສຳຄັນຂອງຄວາມເປັນຄູ, ບົດບາດ, ໜ້າທີ່ ແລະ ສະປັນຍາກັບການສອນ, ຮູບແບບການຄິດ ແລະ ການຮຽນຮູ້, ລວມທັງທິດສະທິດດີການຮຽນຮູ້ພຶດຕິກຳນິຍົມ, ທິດສະດີວາງເງື່ອນໄຂ, ທິດສະດີການຮຽນຮູ້ກຸ່ມປັນຍານິຍົມ, ແລະ ອື່ນໆທີ່ກ່ຽວຂ້ອງ ນອກນັ້ນຍັງເວົ້າເຖິງແຮງຈູງໃຈໃນການຮຽນຮູ້ ແລະ ສະໝອງກັບການຮຽນຮູ້. ຂ້າພະເຈົ້າຫວັງໃຫ້ຜູ້ອ່ານໃຊ້ເປັນຄູ່ມືສູ່ຄວາມເປັນຄູມືອາຊີບທີ່ມີຈິດຕະວິທະຍາໃນການຈັດດຳເນີນການຮຽນການສອນໄດ້ຢ່າງປະສິດທິພາບໃນການສຶກສາ.

ເອກະສານນີ້ ໄດ້ມີທີ່ຕັ້ງບົດບາດ ແລະ ຂະຫຍາຍຕົວໄປພ້ອມໆກັບການຂະຫຍາຍຕົວຂອງວິທະຍາສາດອື່ນໆໃນການສຶກສາ ມັນເປັນພື້ນຖານຄວາມຮູ້ອັນໜັກແໜ້ນໃຫ້ແກ່ນັກສຶກສາຄູທີ່ຈະກຽມເຂົ້າສູ່ວິຊາຊີບຂອງຕົນຢ່າງມີຄວາມໝັ້ນໃຈໃນອານາຄົດ.

ເຖິງແມ່ນວ່າ ເອກະສານສະບັບນີ້ແມ່ນເອກະສານປັບປຸງໃຫມ່ກໍຕາມແຕ່ຂ້າພະເຈົ້າຫວັງວ່າບໍ່ຫຼາຍກໍ່ໜ້ອຍມັນຈະເປັນການຊ່ວຍເຫຼືອພວກເຮົາເຂົ້າໃຈໃນການຄົ້ນຄວ້າ ແລະ ຮ່ຳຮຽນ ແລະ ກໍບໍ່ປາສະຈາກຄວາມຂາດຕົກບົກຜ່ອງໄດ້. ສະນັ້ນຫວັງວ່າບັນດາທ່ານນັກຄົ້ນຄວ້າ ແລະ ທ່ານຜູ້ອ່ານທັງຫຼາຍຈະໃຫ້ຄວາມຮ່ວມມືໃນການປະກອບຄຳຄິດຄຳເຫັນເພື່ອໃຫ້ເອກະສານສະບັບນີ້ດີຂຶ້ນ.

ຊອ ສີເພືອງ ຈອມພະຈັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ.122....ສພ.ວສ

# ເອກະສານຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽນຮຽງປື້ມພາກວິຊາອະນຸບານ

- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳສະພາວິທະຍາສາດຂອງ ວິທະຍາໄລຄູສາລະວັນປະຈຳສົກຮຽນ 2021 – 2022.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າບົດຮຽບຮຽງປື້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປື້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ປອ ສຸພັນ ເທບພະວົງສາ | |
| 2. ອຈ ປທ ແສນຮັກ ບຸນມີ | |
| 3. ອຈ ນາງ ລິດສະໄໝ ສິດທິຈັກ | |

ທີ່, ສາລະວັນ, ວັນທີ ..........................

ປະທານສະພາວິທະຍາສາດ

ອຈ. ບ. ສົມປອງ ແສນທະວິສຸກ

Sompong SENTHAVISOUK

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ພາກວິຊາອະນຸບານ

ເລກທີ...໐໐໗...ພ.ອບ

## ເອກະສານຮັບຮອງການກວດແກ້ບົດຮຽບຮຽງປຶ້ມ ວິຊາ ຈິດຕະວິທະຍາການສຶກສາ

| ລ/ດ | ຊື່ຫົວຂໍ້ | ພາກວິຊາ | ຜູ້ຮຽບຮຽງປຶ້ມ | ຊື່ຜູ້ກວດແກ້ |
|---|---|---|---|---|
| 1 | ຈິດຕະວິທະຍາການສຶກສາ | ພາກວິຊາ ອະນຸບານ | ຊອ ສີເພີອງ ຈອມພະຈັນ | ທ່ານ ຊອ ປທ ສົມບູນ ຊານຸນຕິ<br>ທ່ານ ປທ ລິດສະໄໝ ດວງມາລາ<br>ທ່ານ ນ ຄຳບານ ພົມມະຈັກ |

| ຄະນະກຳມະການກວດແກ້ບົດ | ລາຍເຊັນ |
|---|---|
| ທ່ານ ຊອ ປທ ສົມບູນ ຊານຸນຕິ | |
| ທ່ານ ປທ ລິດສະໄໝ ດວງມາລາ | |
| ທ່ານ ນ ຄຳບານ ພົມມະຈັກ | |

ທີ່, ສາລະວັນ, ວັນທີ ...18 MAY 2022...

ຫົວໜ້າພາກວິຊາ

ລິດສະໄໝ ສິດທິຈັກ

# ສາລະບານ

**ເນື້ອໃນ** **ໜ້າ**


**ບົດທີ 1........................................................................................................ 1**

**ຈິດຕະວິທະຍາກັບການສຶກສາ ........................................................................... 1**

**1. ຄວາມເປັນມາ, ຄວາມໝາຍ ແລະ ຄວາມສຳຄັນຂອງຈິດຕະວິທະຍາການສຶກສາ ........................ 1**

1.1. ປະຫວັດຄວາມເປັນມາຂອງຈິດຕະວິທະຍາການສຶກສາ .............................................. 1

1.2. ຄວາມໝາຍຂອງຈິດຕະວິທະຍາການສຶກສາ.......................................................... 9

1.3. ຄວາມສຳຄັນຂອງຈິດຕະວິທະຍາການສຶກສາ. ......................................................10

**2. ຄວາມຮູ້ເບື້ອງຕົ້ນກ່ຽວກັບຄວາມເປັນຄູ ............................................................ 12**

2.1. ອົງປະກອບຂອງຄວາມເປັນຄູ .........................................................................13

2.2. ຄວາມໝາຍຂອງຄຳວ່າຄູ ແລະ ອາຈານ ...............................................................16

2.3. ຄວາມໝາຍຂອງຄຳທີ່ກ່ຽວຂ້ອງກັບວ່າຄູ ແລະ ອາຈານ ............................................19

2.4. ສິ່ງທີ່ທ້າທາຍໃນການເປັນຄູ...........................................................................20

2.5. ປະເພດຂອງຄູ..........................................................................................23

2.6. ຜົນປະໂຫຍດຂອງຄວາມເປັນຄູ .......................................................................23

**3. ຄວາມສຳຄັນຂອງຈິດຕະວິທະຍາການສຶກສາຕໍ່ອາຊີບຄູ .............................................. 24**

**4. ໜ້າທີ່ ແລະ ບົດບາດຂອງຄູ ......................................................................... 25**

**5. ຄູທີ່ມີປະສິດທິພາບ .................................................................................. 27**

**6. ລັກສະນະທີ່ດີຂອງຄູ.................................................................................. 29**

**7. ຄູໃນຖານະເປັນນັກວິທະຍາສາດແຫ່ງພຶດຕິກຳ ...................................................... 30**

**8. ຈິດຕະວິທະຍາກັບການສອນ ......................................................................... 33**

**ບົດທີ 2...................................................................................................... 36**

**ສະຕິປັນຍາກັບການສອນ.................................................................................. 36**

**1. ຄວາມໝາຍຂອງສະຕິປັນຍາ. ........................................................................ 36**

**2. ຄວາມແຕກຕ່າງດ້ານສະຕິປັນຍາກັບການສິດສອນ.................................................. 37**

2.1. ການຈັດກຸ່ມຕາມຄວາມສາມາດຂອງເດັກ .............................................................37

2.2. ເດັກທີ່ມີສະຕິປັນຍາອ່ອນ .............................................................................38

2.3. ເດັກມີປັນຍາດີເລີດ ....................................................................................40

**ບົດທີ 3 ...... 46**

**ຮູບແບບການຄິດ ແລະ ການຮຽນ ...... 46**

**1. ຮູບແບບການຄິດ ( Cognitive Style ) ...... 46**

1.1. ຮູບແບການຄິດທີ່ພິຈາລະນາຄວາມໄວ ແລະ ຄວາມພິດພາດຂອງການຕອບສະໜອງ( Conseptual tempo ) ...... 47

1.2. ຮູບແບບ ການຄິດທີ່ເນັ້ນການຈຳແນກອິດທິພົນຂອງສິ່ງອ້ອມຂ້າງອອກຈາກສິ່ງທີ່ສົນໃຈ ( Psychological Diffrerentiation ) ...... 48

1.3. ຮູບແບບການຄິດກັບພຶດຕິກຳການຮຽນ-ການສອນ ...... 50

1.4. ຂໍ້ສັງເກດບາງຢ່າງກ່ຽວກັບການຄິດ ...... 54

**2. ຮູບແບບການຮຽນ ( Learning Style ) ...... 54**

2.1. ແບບການຮຽນໃນທັດສະນະຂອງດັນ ແລະ ດັນ ...... 55

2.2. ຮູບແບບການຮຽນກັບຈັດການຮຽນ - ການສອນ ...... 56

**ບົດທີ 4 ...... 59**

**ທິດສະດີການຮຽນຮູ້ພຶດຕິກຳນິຍົມ ...... 59**

**1. ຄວາມໝາຍຂອງການຮຽນຮູ້ ...... 59**

**2. ທິດສະດີການຮຽນຮູ້ ...... 61**

**3. ທິດສະດີການວາງເງື່ອນໄຂແບບຄລາສິກ (Classical Conditoining) ...... 62**

3.1. ທິດສະດີຂອງພາບລອຟ (Ivan Petrovich Pavov;1849-1936) ...... 62

3.2. ທິດສະດີຂອງວັດສັນ ...... 64

3.3. ການປະຍົກທິດສະດີການວາງເງື່ອນໄຂແບບຄລາດຊິກ ...... 68

**4. ທິດສະດີສຳພັນເຊື່ອມໂຍງຂອງທ່ານ ທອນໄດ໌ ...... 69**

4.1. ການທົດລອງຂອງທ່ານທອນໄດ໌ ...... 69

4.2. ກົດການຮຽນຮູ້ທີ່ສຳຄັນ ...... 71

4.3. ແນວຄິດກ່ຽວກັບການຖ່າຍທອດການຮຽນຮູ້ ...... 73

4.4. ການປະຍຸກທິດສະດີຂອງທ່ານ ທອນໄດເຂົ້າໃນການສອນ ...... 74

**5. ທິດສະດີການວາງເງື່ອນໄຂການກະທຳຂອງສະກິນເນີ ...... 74**

5.1. ແນວຄິດພື້ນຖານ ...... 75

5.2. ການທົດລອງຂອງທ່ານສະກິນເນີ ...... 75

5.3. ຫຼັກການ ແລະ ແນວຄິດທີ່ສຳຄັນ ...... 77

5.4. ການອາງເງື່ອນໄຂ ແລະ ການເສີມແຮງ ....................77
5.5. ການປະຍຸກທິດສະດີຂອງທ່ານສະກິນເນີ ....................81
**ບົດທີ 5 .................... 86**
**ທິດສະດີການຮຽນຮູ້ກຸ່ມປັນຍານິຍົມ .................... 86**
**1. ທິດສະດີການຮຽນຮູ້ກຸ່ມເກັດສະຕັນ .................... 86**
1.1. ແນວຄິດພື້ນຖານ ....................86
1.2. ຫຼັກການຮັບຮູ້ ....................87
1.3. ການຮຽນຮູ້ໃນທັດສະນະຂອງກຸ່ມເກັດສະຕັນ ....................90
1.4. ຫຼັກການຂອງຈິດຕະວິທະຍາກຸ່ມເກັດສະຕັນກັບການສອນ ....................92
**2. ທິດສະດີຂະບວນການປະມວນສານ ( lnformahion P rocessing Approach) .................... 92**
2.1. ແນວຄວາມຄິດພື້ນຖານ ....................93
2.2. ການຮັບຮູ້ເຂົ້າລະຫັດ ( encoding) ....................94
2.3. ການເກັບຈຳຊົ່ວຄາວ ( short Term Memory ) ....................97
2.4. ການເກັບຈຳແບບຖາວອນ ( Long term Memory) ....................99
2.5. ແນວການປະຍຸກທິດສະດີຂະບວນການປະມວນສານຢູ່ໃນຫ້ອງຮຽນ. ....................102
**3. ທິດສະດີ ຂອງທ່ານ ເຈນ ປີອາເຈ .................... 104**
3.1. ໂຄງສ້າງຂອງສະຕິປັນຍາ ....................104
3.2. ພັດທະນາການທາງສະຕິປັນຍາ. ....................105
**4. ທິດສະດີ ດີອາເລັກຕິກຂອງທ່ານ ເລັບ ເຊມາໂນວິຊ ໄວກອດສະກີ (Lev Semanovich Vygotsky) .................... 105**
**ບົດທີ 6 .................... 107**
**ທິດສະດີການຮຽນຮູ້ກຸ່ມມະນຸດນິຍົມ .................... 107**
**1. ທິດສະດີຂອງ Maslow ກ່ຽວກັບຄວາມຕ້ອງການຂອງມະນຸດ (Abraham Harold Maslow: 1908-1970). .................... 108**
**2. ທິດສະດີາຂອງ ໂຣເຈີຣ (Carl Rogers: 1902-1987). .................... 109**
2.1. ຂະບວນການພັດທະນາຄ່ານິຍົມ (Organizing Valuing Process) ....................109
2.2. ການຍອມຮັບຈາກຜູ້ອື່ນ (Positive regard from others) ....................110
2.3. ການຍອມຮັບຕົນເອງ (ຄວາມນັບຖືຕົນເອງ) ....................111
2.4. ເງື່ອນໄຂ ຫຼື ຄຸນຄ່າ ....................111

**3. ທິດສະດີຂອງ ໂຄມ (Arthur W. Combs, 1912-1999). .... 112**

**4. ການໝູນໃຊ້ໃນຫຼັກການສອນຂອງນັກຈິດຕະວິທະຍາມະນຸດນິຍົມ .... 113**

**ບົດທີ 7 .... 113**

**ທິດສະດີການຮຽນຮູ້ທາງສັງຄົມ .... 113**

**1. ປະຫວັດຫຍໍ້ ຂອງທ່ານແບນດູຣາ. .... 114**

**2. ແນວຄິດພື້ນຖານຂອງທິດສະດີການຮຽນຮູ້ທາງສັງຄົມ .... 114**

2.1. ການຮຽນຮູ້ໃນສະພາບທຳມະຊາດ. .... 114

2.2. ຄວາມສຳພັນລະຫວ່າງຜູ້ຮຽນ, ພຶດຕິກຳ ແລະ ສິ່ງແວດລ້ອມ. .... 115

2.3. ການຮຽນຮູ້ກັບຜົນງານ .... 115

**3. ອົງປະກອບຂອງການຮຽນຮູ້ .... 116**

3.1. ຕົວແບບໃນຮູບພຶດຕິກຳ .... 116

3.2. ປະເພດຂອງຕົວແບບ .... 117

3.3. ຜົນກຳຈາກພຶດຕິກຳຂອງຕົວແບບ .... 118

3.4. ຂະບວນການທາງປັນຍາຂອງຜູ້ຮຽນ. .... 119

**4. ການຮຽນຮູ້ທີ່ສັບຊ້ອນ .... 122**

**5. ການຮຽນຮູ້ດ້ວຍການສັງເກດຢູ່ໃນຫ້ອງຮຽນ. .... 124**

**ບົດທີ 8 .... 127**

**ແຮງຈູງໃຈໃນການຮຽນຮູ້ .... 127**

**1. ຄວາມໝາຍຂອງແຮງຈູງໃຈ .... 128**

1.1. ແຮງຈູງໃຈ, ຄຸນລັກສະນະ ຫຼື ພາວະ .... 129

1.2. ແຮງຈູງໃຈພາຍນອກ ແລະ ແຮງຈູງໃຈພາຍໃນ .... 129

**2. ທິດສະດີແຮງຈູງໃຈ .... 130**

2.1. ທິດສະດີພຶດຕິກຳນິຍົມ (Behavior Approaches to Motivation) .... 130

2.2. ທິດສະດີມະນຸດນິຍົມ (Humanisctic Approaches Motivation) .... 131

2.3. ທິດສະດີປັນຍານິຍົມ (Coqnitve Approaches Motivation) .... 131

2.4. ທິດສະດີການຮຽນຮູ້ທາງສັງຄົມ (Social Learninq Approaches Motivation)... 131

**3. ພາວະການຕື່ນຕົວ ແລະ ແຮງຈູງໃຈ .... 133**

3.1. ການກະຕຸ້ນຄວາມສົນໃຈແລະຄວາມຢາກຮູ້ຢາກເຫັນຂອງນັກຮຽນ .... 134

3.2. ຄວາມວິຕົກກັງວົນໃນການຮຽນ .... 134

**4. ເປົ້າໝາຍ ແລະ ແຮງຈູງໃຈ ........ 135**

4.1. ຄວາມຕ້ອງການ ແລະ ແຮງຈູງໃຈ ........ 135

4.2. ການອ້າງສາເຫດ ແລະ ແຮງຈູງໃຈ ........ 139

**5. ການເສີມສ້າງແຮງຈູງໃຈຢູ່ໃນຫ້ອງຮຽນ ........ 144**

**6. ວິທີການໃຫ້ກຳລັງໃຈ ........ 148**

**ບົດທີ 9 ........ 151**

**ສະໝອງກັບການຮຽນຮູ້ ........ 151**

**1. ຄວາມໝາຍຄວາມສຳຄັນຂອງສະໝອງກັບການຮຽນຮູ້ ........ 151**

1.1. ຄວາມໝາຍຂອງສະໝອງ ........ 151

1.2. ຄວາມສຳຄັນຂອງສະໝອງກັບການຮຽນຮູ້ ........ 152

**2. ຄຸນລັກສະນະຂອງສະຫມອງ ........ 152**

2.1. ການເຮັດວຽກຂອງສະໝອງ ........ 155

2.2. ການປ່ຽນແປງລະດັບໂຄ້ງສ້າງຂອງສະໝອງ ........ 157

**3. ສະໝອງກັບການຮຽນຮູ້ ........ 158**

3.1. ກິດຈະກຳທີ່ສົ່ງເສີມການເຮັດວຽກຂອງສະໝອງກັບການຮຽນຮູ້ ........ 158

3.2. ກິດຈະກຳທີ່ສະຫງົບ, ການສະມາທິຂອງເດັກກ່ອນໄວຮຽນ ........ 158

3.3. ໂອກາດແຫ່ງການຮຽນຮູ້ ( Windows of opportunity ) ........ 160

3.4. ປັດໃຈຕໍ່ການພັດທະນາສະໝອງຂອງເດັກກ່ອນໄວຮຽນ ........ 161

**4. ການຈັດກິດຈະກຳການຮຽນຮູ້ທີ່ເໝາະສົມກັບພັດທະນາການທາງດ້ານສະໝອງຂອງເດັກກ່ອນໄວຮຽນ ........ 162**

**ເອກະສານອ້າງອີງ ........ 163**

# ບົດທີ 1
# ຈິດຕະວິທະຍາກັບການສຶກສາ

## 1. ຄວາມເປັນມາ, ຄວາມໝາຍ ແລະ ຄວາມສຳຄັນຂອງຈິດຕະວິທະຍາການສຶກສາ

### 1.1. ປະຫວັດຄວາມເປັນມາຂອງຈິດຕະວິທະຍາການສຶກສາ

ຈິດຕະວິທະຍາເປັນວິທະຍາສາດຂະແໜງໜຶ່ງທີ່ສຶກສາເຖິງພຶດທິກຳ (Behavior) ແລະຂະບວນການທາງປັນຍາ (Mental Procss) ຫຼືເວົ້າອີກຢ່າງໜຶ່ງຈິດຕະວິທະຍາສຶກສາທາງພຶດທິກຳພາຍນອກທີ່ສັງເກດເຫັນແລະພຶດຕິກຳພາຍໃນທີ່ບໍ່ສາມາດສັງເກດເຫັນໄດ້ໂດຍກົງ, ຊຶ່ງໃຊ້ວິທີທາງວິທະຍາສາດມາຊ່ວຍໃນການຄົ້ນຄ້ວາເພື່ອຊອກຫາຄຳຕອບວ່າ: ມະນຸດເຮົາມີຄວາມສາມາດແນວໃດແດ່, ມີການຮຽນຮູ້ໄດ້ແນວໃດ, ມີຄວາມຮູ້ສຶກຢ່າງໃດ, ມີການປ່ຽນແປງພຶດຕິກຳແນວໃດ, ສິ່ງໃດທີ່ເປັນສາເຫດພຶດຕິກຳນັ້ນໆ. ຫຼັກການທາງຈິດຕະວິທະຍາ ໄດ້ພັດທະນາຂຶ້ນຈາກພື້ນຖານແນວຄິດຂອງນັກປັດສະຍາ ແລະນັກເທວະວິທະຍາໃນໄລຍະທຳອິດ ແລະມີການສຶກສາຄົ້ນຄ້ວາດ້ວຍວິທີການທີ່ມີລະບົບແບບວິທະຍາສາດໃນໄລຍະຕໍ່ມາ.

ແນວຄິດ ແລະທິດສະດີທາງຈິດຕະວິທະຍາ, ຈະມີບົດບາດຕໍ່ກັບການສຶກສາເລີ້ມຕັ້ງແຕ່ໄລຍະທຳອິດທີ່ມີການຮຽນການສອນເກີດຂຶ້ນຢູ່ໃນໂລກ. ແຕ່ຈະມີຄວາມຊັດເຈນຢູ່ໃລະຫວ່າງປະມານ 4-5 ຮ້ອຍປີກ່ອນຄ.ສ ໂດຍສະເພາະແມ່ນນັກປັດຊະຍາ ເມທີຂອງກະເລັກ.ຈິດຕະວິທະຍາໄດພັດທະນາຕໍ່ມາຢ່າງຕໍ່ເນື່ອງ ແລະມີຄວາມສຳຄັນຕໍ່ກັບການສຶກສາເພີ່ມຂຶ້ນຕາມດຳລັບ. ລາຍລະອຽດຂອງຄວາມສຳພັນລະຫ່ວາງຈິດຕະວິທະຍາກັບການສຶກສາ ແລະພັດທະນາຈິດຕະວິທະຍາ ເຊິ່ງຈະໄດ້ກ່າວໂດຍສັງເຂບດັ່ງລຸ່ມນີ້:

#### 1) ຈິດຕະວິທະຍາກັບການສຶກສາໃນສະໄໝກະເລັກ.

ຖ້າພວກເຮົາຈະຍ້ອນກັບຄືນໄປເບິ່ງການສຶກສາຢູ່ໃນຍຸກກະເລັກບູຮານ. ກໍ່ຈະເຫັນວ່າອຸດົມຄະຕິຂອງການສຶກສາ ໃນສະໄໝນັ້ນແມ່ນຈະມຸ້ງເນັ້ນໃສ່ຄຸນນະທຳ ແລະການສ້າງຄວາມດີວິເສດທາງດ້ານຮ່າງກາຍ ແລະຈິດໃຈ. ທາງຮ່າງກາຍແມ່ນພະຍາຍາມເຝິກໃຫ້ມີສຸຂະພາບດີ, ດ້ານຈິດໃຈກໍ່ຈະໃຫ້ຮັບຮູ້ເຖິງຄວາມດີແມ່ນສິ່ງໃດ,ຄວາມຈິງຄືແນວໃດ ແລະດຳເນີນຊີວິດແນວໃດ. ນອກນີ້ຊາວກະເລັກຍັງມີແນວຄິດທາງເສລີພາບ, ມີຄວາມສົນໃຈການປ່ຽນແປງຂອງສັງຄົມ, ສົນໃຈນໍ່ລະດົກທາງສິນລະປະ ແລະວັນນະຄະດີ.ສິ່ງສຳຄັນທີ່ສຸດອີກຢ່າງໜຶ່ງກໍ່ແມ່ນອຸດົມຄະຕິທີ່ຈະເຝິກໃຫ້ຄົນມີຈິດໃຈຢາກຈະໄຝ່ຮູ້ ແລະເນັ້ນໃສ່ໃຫ້ບຸກຄົນຄິດຫາຄຳອະທິບາຍປະກົດການຕ່າງໆຢ່າງມີເຫດມີຜົນ.

ນັກປັດຊະຍາທີ່ມີແນວຄິດເປັນພື້ນຖານໃນສະໄໝນັ້ນໄກ້ແກ່: ໂສເຄຣຕີສ (Soc rates: 496-399 B.C) ເພລໂຕ (Plato: 427-347 B.C) ແລະອລິດສະໂຕເຕີລ (Aristotle: 384-322 B.C), ທັງສາມທ່ານໄດ້ມີຄວາມເປັນເອກະພາບກັນວ່າ: ຄວນຈັດການສຶກສາເພື່ອຕອບສະໜອງຄວາມຕ້ອງການຂອງບຸກຄົນຫຼືຄວາມໝັ້ນຄົງຂອງສັງຄົມ. ໂດຍມີຄວາມເຫັນວ່າ: ຈຸດມຸ້ງໝາຍຂອງການສຶກສາເດີມນັ້ນ

ແມ່ນບໍ່ໄດ້ສົນໃຈເຖິງຄວາມຕ້ອງການຂອງບຸກຄົນ. ສະນັ້ນ, ການສຶກສາຂອງກະເລັກຈຶ່ງຄວນເນັ້ນເຖິງຄວາມຕ້ອງການຂອງບຸກຄົນ ແລະຂອງສັງຄົມຄວບຄູ່ກັນໄປ, ແມ່ນຈະໃຫ້ຄົນໄດ້ຮຽນທາງດ້ານສິນທຳຫຼາຍຂຶ້ນ, ໃນຂະນະນັ້ນກໍ່ໄດ້ຂະຫຍາຍເນື້ອໃນວິຊາຮຽນທີ່ຄົນໄວລຸ້ນຕ້ອງການຫຼາຍຂຶ້ນ.

ຮູບແບບການຮຽນການສອນແບບດັ້ງເດີມຈະເນັ້ນເຖິງການທ່ອງຈື່ຈຳ ແລະການບັນຍາຍເພື່ອໃຫ້ຜູ້ຮຽນຟັງຫຼາຍກ່ວາການຄິດ. ຕໍ່ມາທ່ານ ໂສເຄຣຕິສ ໄດ້ສະເໜີການສິດສອນແນວໃໝ່ ເພື່ອໃຫ້ຜູ້ຮຽນຮູ້ຈັກວິຈານແລະຕັ້ງຄຳຖາມ. ທ່ານໄດ້ໃຊ້ວິທີການສົນທະນາ ເພື່ອກະຕຸ້ນໃຫ້ຜູ້ຮຽນ ເກີດມີຄວາມຄິດໃໝ່ຂຶ້ນ ແລະຊ່ວຍຟື້ນຄືນຄວາມຈຳທີ່ຮ່ມີແລ້ວໃຫ້ປະກົດອອກມາ. ນອກຈາກນີ້ທ່ານຍັງໄດ້ເນັ້ນໃຫ້ຜູ້ຮຽນ,ຮຽນດ້ວຍການປະຕິບັດຕົວຈິງ, ເຊິ່ງທ່ານມີຄວາມໝັ້ນໃຈວ່າຈະເປັນວິທີທີ່ໄດ້ຜົນດີກ່ວາວິທີອື່ນໆ.

ທ່ານ ເພລໂຕ ແລະທ່ານອຣິສະໂຕເຕີລ ແມ່ນຜູ້ທີ່ມີບົດບາດສຳຄັນ ໃນການພັດທະນາການສຶກສາໂດຍໃຊ້ຫຼັກການທາງຈິດຕະວິທະຍາ, ທັງສອງທ່ານພະຍາຍາມສຶກສາຫາຄຳຕອບທີ່ສົນໃຈຫຼາຍຢ່າງເຊັ່ນ: ເດັກຮຽນຮູ້ໄດ້ແນວໃດ,ສິ່ງແວດລ້ອມໄດ້ມີອິດທິພົນຕໍ່ການສຶກສາແນວໃດ, ເດັກທີ່ແຕກຕ່າງກັນຄວນໄດ້ຮັບການສຶກສາຕ່າງກັນ

ຫຼືບໍ່, ເຮົາຄວນສອນໃຫ້ເດັກມີພັດທະນາການທາງດ້ານຈະລິຍະທຳ, ທາງດ້ານອາລົມໃນອັດຕາສ່ວນທີ່ແຕກຕ່າງກັນຫຼືບໍ່. ເຖິງຢ່າງໃດກໍ່ຕາມຄຳຖາມເຫຼົ່ານນີ້ສະແດງໃຫ້ເຫັນວ່າ: ຈິດຕະວິທະຍາໄດ້ເລີ່ມເຂົ້າໄປມີບົດບາດຕໍ່ການສຶກສາຢ່າງຊັດເຈນຂຶ້ນ.

**2) ຈິດຕະວິທະຍາກັບການສຶກສາໃນສະໄໝໂຣມັນ.**

ຊາວໂຣມັນຈະບໍ່ສົນໃຈຄົ້ນຄິດດ້ານສິນລະປະ ແລະວັດທະນະທຳຄືກັບຊາວກະເລັກ. ແຕ່ເຂົາສົນໃຈສິດທິຜົນປະໂຫຍດຫຼືຄຸນຄ່າທີ່ມີຕໍ່ມະນຸດຫຼາຍກ່ວາ.ສະນັ້ນ, ການສຶກສາຈຶ່ງຈັດຂຶ້ນໃນຮູບແບບຄຳນຶງເຖິງຄຸນຄ່າຈະເກີດຂຶ້ນກັບຜູ້ຮຽນແທ້ເຊັ່ນ: ມຸ້ງເນັ້ນການສຶກສາແບບການທະຫານ ເພື່ອເຮັດໃຫ້ຮ່າງກາຍແຂງແຮງ,ຮຽນວິຊາສິນລະປະການເວົ້າ, ການປົກຄອງ, ການປະຕິບັດຕົນເພື່ອໃຫ້ເປັນພົນລະເມືອງດີ,ຕະຫຼອດເຖິງການເຝິກວິຊາຊີບເພື່ອປະກອບອາຊີບໄດ້.

ວິທີການສອນທີ່ປະກົດເດັ່ນ ໃນຍຸກນີ້ມັກໃຊ້ວິທີການໃຫ້ຜູ້ຮຽນເຝິກປະຕິບັດຊ້ຳໆຕາມຄູ, ຈົນເກີດມີທັກສະ. ສະນັ້ນ, ການສຶກສາຈຶ່ງຢູ່ໃນຮູບຂອງການເຝິກອົບຮົມ (Training) ຫຼາຍກ່ວາຮູບຂອງການສອນ.ຫຼັກຈິດຕະວິທະຍາໃນການສອນກໍ່ແມ່ນການສອນແບບໃຫ້ສອດຄ່ອງກັບການພັດທະນາ ແລະການຈະເລີນເຕີບໂຕຂອງຜູ້ຮຽນ.ໂດຍຄຳນຶງເຖິງຄວາມແຕກຕ່າງລະຫວ່າງບຸກຄຸນ, ໂດຍສະເພາະແມ່ນຄວາມສາມາດ ແລະຄວາມພ້ອມຂອງຜູ້ຮຽນ.

**3) ຈິດຕະວິທະຍາກັບການສຶກສາໃນສະໄໝກາງ.**

ໃນໄລຍະທຳອິດຂອງສະໄໝກາງຖືວ່າເປັນຍຸກມືດ, ຊຶ່ງແມ່ນຍຸກທີ່ເຕັມໄປດ້ວຍຄວາມສັບສົນ ແລະວຸ້ນວາຍ, ເຕັມໄປດ້ວຍຄວາມເຊື່ອຖືແບບງົມງວາຍ ແລະ ແມ່ນຍຸກແຫ່ງຄວາມຢ້ານກົວ.ຢູ່ໃນຍຸກມືດນີ້ຖືວ່າແນວຄິດຕ່າງໆທາງສິນລະປະວິທະຍາການຕ່າງໆຈະຢຸດນິ້ງ. ເຖິງຢ່າງໃດກໍ່ຕາມຢູ່ໃນຍຸກນີ້ ໄດ້ມີນັກບຸນຜູ້ໜຶ່ງທີ່ມີຊື່ສຽງກໍ່ແມ່ນທ່ານອອດສະຕິນ (Augustine : 345-430) ໄດ້ເປັນຜູ້ສຳຄັນຂອງການ

ຄິດ ແລະ ເຜີຍແຜ່ຄວາມຮູ້ທາງດ້ານຈິດຕະວິທະຍາ ແລະການສຶກສາ. ທ່ານ ເປັນຜູ້ລິເລີ່ມ ເລື່ອງສະມັດທະພາບຂອງຈິດ, ທ່ານຄິດວ່າ: ຈິດແບ່ງອອກເປັນຫຼາຍສ່ວນ, ແຕ່ລະສ່ວນຈະພັດທະນາຂຶ້ນຢ່າງອິດສະຫຼະດ້ວຍການເຝິກຝົນ ແລະການສຶກສາອົບຮົມ.ທ່ານຄິດວ່າຄວາມເນັ້ນໃຫ້ຜູ້ຮຽນມີຄວາມຮູ້ກ່ຽວກັບຈະລິຍະທຳ ແລະສາສະໜາ, ເຝິກໃຫ້ເດັກມີຄວາມສັດທາໃນສາສະໜາ ແລະນັກບວດ.

ຫຼັງຈາກຍຸກມືດໄດ້ມີບິດບາດຕໍ່ການສຶກສາຫຼາຍຂຶ້ນ. ການຮຽນການສອນກໍ່ໄດ້ການກຳນົດຫຼັກສູດ.ວິຊາຫຼັກທີ່ຮຽນຈະແບ່ງອອກເປັນ 2 ໝວດຄື: ໝວດໄຕພາກ ( The Trivium) ກັບໝວດຈະຕຸລະພາກ (The Quadrivium) ໝວດໄຕພາກປະກອບດ້ວຍວິຊາໄວຍາກອນ, ສິລະປະການເວົ້າ, ສ່ວນໝວດຈະຕຸລະພາກຈະປະກອບດ້ວຍວິຊາຄະນິດສາດ, ເລຂາຄະນິດ, ດາລາສາດ ແລະດົນຕີ.ວິຊາເຫຼົ່ານີ້ມີຈຸດໝາຍເພື່ອໃຫ້ຮູ້ຜົນປະໂຫຍດຂອງການເຜີຍແຜ່ສາສະໜາ.

**4) ຈິດຕະວິທະຍາກັບການສຶກສາໃນສະໄໝຟື້ນຟູສິນລະປະວິທະຍາການ.**

ຕໍ່ຈາກຍຸກກາງ ແມ່ນຍຸກຟື້ນຟູສິລະປະວິທະຍາການ (Renaissance) ນັກການສຶກສາຢູ່ອິຕາລີໄດ້ຟື້ນຄືນປັດຊະຍາກະເລັກ ແລະ ໂຣມັນ, ມາໃຊ້ເພື່ອປັບປັບຫຼັກສູດ ແລະການຮຽນການສອນ. ໂດຍເນັ້ນໃສ່ດ້ານປັນຍາສຶກສາ ໃຫ້ຮູ້ສິ່ງທີ່ກະທຳຕ່າງໆ ໄດ້ຢ່າງອິດສະລະ ແລະການເຄົາລົບສັດທາພະເຈົ້າ.

ຢູ່ໃນລະຫວ່າງສະຕະວັດທີ 15 – 16 ໄດ້ມີການເຄື່ອນໄຫວທາງການສຶກສາເພີ່ມຂຶ້ນ. ໂດຍເນັ້ນໃຫ້ຜູ້ຮຽນມີຄວາມຈະເລີນທາງວດ້ານສະຕິປັນຍາ, ອາລົມ ແລະສັງຄົມ. ການຮຽນການສອນ ແມ່ນເລີ່ມໃຫ້ຜູ້ຮຽນມີການສັງເກດ ແລະທົດລອງໃນສະຖານະການທຳມະຊາດ. ການສຶກສາໃນລັກສະນະນີ້ພາໃຫ້ເກີດມີການຄົ້ນພົບຄວາມຮູ້ໃໝ່ໆທາງພູມສາດ ແລະດາລາສາດ,ຕໍ່ມາກໍ່ໄດ້ໃຊ້ເປັນພື້ນຖານອັນສຳຄັນຂອງວິຊາການທາງວິທະຍາສາດ.

ໃນຂະນະທີ່ການສຶກສາໄດ້ເລີ່ມໄດ້ເນັ້ນເຖິງຂະບວນການຊອກຫາຄວາມຮູ້ດ້ວຍວິທີການທາງວິທະຍາສາດນັ້ນ. ມີແນວຄິດຂອງກຸ່ມໜຶ່ງທີ່ຮຽກຕົນເອງວ່າ: ກຸ່ມມະນຸດນິຍົມ( Huma – nism ) ກໍ່ເລີ່ມປະກົດຕົວຂຶ້ນ, ໃນຄວາມຄິດຂອງກຸ່ມນີ້ຈະເນັ້ນເຖິງຄຸນຄ່າກຽດສັກສີ, ອຸດົມຄະຕິ ແລະຄວາມສົນໃຈຂອງແຕ່ລະບຸກຄົນ.ຜູ້ນຳພາໃນໄລຍະທຳອິດຂອງກຸ່ມແມ່ນທ່ານອີຣັດສະມັສ ( Desiderius Erasmus: 1466 – 1536 ) ທ່ານມີຄວາມສັດທາໃນພະເຈົ້າ, ແຕ່ກັບພັດບໍ່ເຊື່ອສິ່ງທີ່ນອກເໜືອທຳມະຊາດທັງຫຼາຍຈະມີອຳນາດເໜືອຈິດໃຈຂອງມະນຸດ.ທ່ານ ເຊື່ອວ່າມະນຸດເປັນສູນກາງ,ມະນຸດທຸກຄົນຈະສະແຫວງຫາຄວາມສັນຕິຫຼາຍກ່ວາສົງຄາມ.ການສຶກສາໃນທັດສະນະຂອງທ່ານ ແມ່ນການພັດທະນາໃຫ້ທຸກຄົນມີອິດສະຫຼະ ໃນການຄິດ, ເພື່ອແກ້ໄຂບັນຫາໃນອານາຄົດ. ໃນດ້ານຈິດຕະວິທະຍາທ່ານຈະເວົ້າເຖິງເລື່ອງແຮງຈູງໃຈ, ໂດຍສະເພາະແມ່ນການເລັງໃສ່ການໃຫ້ລາງວັນຫຼາຍກ່ວາການລົງໂທດ, ເພາະວ່າການລົງໂທດອາດພາໃຫ້ເກີດພຶດຕິກຳທີ່ບໍ່ດີກັບເດັກ.ຢູ່ໃນການສອນນັ້ນ, ຄູຈະເປັນຜູ້ກະຕຸ້ນທີ່ສຳຄັນທີ່ສຸດໃນການກະຕຸກໃຫ້ເດັກໄດ້ສະແດງຄວາມສາມາດອອກມາ. ນອກຈາກນັ້ນແລ້ວຄູຍັງເປັນຜູ້ໃຫ້ຄຳແນະນຳໃຫ້ເດັກມີພຶດຕິກຳທີ່ເພິ່ງປາຖະໜາ.

ໃນສະຕະວັດທີ 16 ທັງລະບົບສັກດີນາກີສະຕຽນ ແລະມະນຸດນິຍົມລ້ວນແຕ່ມີອິດທິພົນຕໍ່ການຮຽນການສອນ.ຜູ້ຮຽນໃນຍຸກນີ້ຈະໄດ້ຮັບການເຝິກຝົນເລື່ອງການຂຽນ, ການຄິດຢ່າງມີເຫດມີຜົນ, ການວິເຄາະວິຈານ, ການໂຕ້ແຍ້ງ. ໃນດ້ານວິທີສອນພວກກູົດຈະໃຊ້ວິບັນຍາຍຫຼືປາຖະກະຖາ ເພື່ອສະເໜີບົດຮຽນໃຫ້ເດັກນັກຮຽນ, ແລ້ວໃຫ້ນັກຮຽນສະແດງຄວາມຄິດເຫັນຢ້ອນກັບຫຼື ໂຕ້ແຍ້ງ. ຄູມີບົດບາດເປັນຜູ້ນຳ ແລະລວບລວມຄວາມຄິດຄວາມເຫັນຂອງເດັກແຕ່ລະຄົນເພື່ອມາສະຫຼຸບ.

ທ່ານມອງເຕນ ( Michel de Mondaign : 1533 – 1592 ) ແມ່ນນັກມະນຸດນິຍົມຜູ້ທີ່ມີບົດບາດຕໍ່ການສຶກສາໃນໄລຍະນີ້. ທ່ານມີແນວຄວາມຄິດວ່າການສຶກສາຄວນມີຈຸດມຸ້ງໝາຍ ເພື່ອພັດທະນາບຸກຄົນ.ດັ່ງນັ້ນ, ການສອນບໍ່ຄວນເນັ້ນໃສ່ແຕ່ເນື້ອໃນຕຳລາຮຽນ, ຄວນເນັ້ນເຖິງປະສົບການຂອງຊີວິດ,ທ່ານ ໄດ້ເວົ້າວ່າການສຶກສາແມ່ນເລື່ອງທີ່ກ່ຽວຂ້ອງກັບມະນຸດທາງຮ່າງກາຍ ແລະຈິດໃຈ.ການສຶກສາແມ່ນວິຖີທາງທີ່ພາໃຫ້ເກີດມີການປ່ຽນແປງ ເຈຕະຄະຕິພື້ນຖານ ເພື່ອເຮັດໃຫ້ຄົນມີຄວາມສຸກໃນຊີວິດ. ໃນການຮຽນການສອນຄູຕ້ອງໄດ້ຄຳນຶງເຖິງຄວາມຮູ້ສຶກຂອງຜູ້ຮຽນ,ຄູຕ້ອງສອນໃຫ້ເດັກເກີດຄວາມກະຕືລືລົ້ນ,ສະໜຸກສະໜານ ແລະຢາກຮຽນ.ຄູບໍ່ຄວນສອນໂດຍເນັ້ນໃຫ້ເດັກມີການທ່ອງຈຳແບບນົກແກ້ວ.

ຄຽງຄູ່ກັບແນວຄວາມຄິດຂອງ ມອງເຕນຍັງມີນັກສຶກສາທີ່ເດັ່ນອີກຄົນໜຶ່ງທີ່ຊື່ວ່າ: ຄອມເມນີອັສ ( John Amos Commenis : 1526 – 1570 )ທ່ານ ໄດ້ສົນໃຈເລື່ອງພັດທະນາການຂອງເດັກ, ໂດຍສະເພາະແມ່ນເລື່ອງປະສາດສຳພັດທັງ 5, ທ່ານຕັ້ງສົມມຸດຖານວ່າ ເດັກຮຽນເອົາຄວາມຮູ້ຕ່າງໆດ້ວຍການໃຊ້ປະສາດສຳພັດ.ສະນັ້ນ, ການສິດສອນຂອງຄູຈຶ່ງຈຳຕ້ອງເລືອກເນື້ອໃນ, ຫຼືວັດຖຸອຸປະກອນ ໃຫ້ສອດຄ່ອງ ແລະ ເໝາະສົມກັບລະດັບສະຕິປັນຍາຂອງເດັກ,ຖ້າອຸປະກອນທີ່ນຳມາໃຊ້ມີລັກສະນະດຶງດູດຈິດໃຈ, ເດັກກໍ່ຈະຮຽນດ້ວຍຄວາມສົນໃຈຫຼື ເກີດມີແຮງຈູງໃຈຕໍ່ການຮຽນ. ແນວຄວາມຄິດຂອງຄອມເມນີອັສກ່ຽວກັບເລື່ອງການຮຽນການສອນເປັນທີ່ນິຍົມຫຼາຍທີ່ສຸດກໍ່ແມ່ນສອນດ້ວຍການເລີ່ມຕົ້ນຈາກສິ່ງທີ່ງ່າຍໆ ໄປຫາສິ່ງທີ່ຍາກ ແລະ ເລີ່ມຈາກຮູບປະທຳ ໄປຫານາມມະທຳ.ຄູຄວນໃຫ້ເດັກຈົດຈຳໃນສິ່ງທີ່ສຳຄັນເທົ່ານັ້ນ ແລະຈົດຈຳດ້ວຍຄວາມເຂົ້າໃຈ ໃນເລື່ອງນັ້ນເປັນຢ່າງດີ.

5) **ຈິດຕະວິທະຍາກັບການສຶກສາຍຸກໃໝ່.**

ຫຼັງຈາກສາຕະວັດທີ 16 ຈິດຕະວິທະຍາ ແລະການສຶກສາ ໄດ້ມີການພັດທະນາຢ່າງໄວວາ. ຈິດຕະວິທະຍາໄດ້ເລີ່ມສຶກສາ ໂດຍອີງໃສ່ຂໍ້ມູນທີ່ເຫັນ, ຕໍ່ມາໄດ້ການທົດລອງ ແລະສະຫຼຸບຜົນດ້ວຍວິທີການແບບວິທະຍາສາດ, ແລ້ວກໍ່ເກີດມີຈິດຕະວິທະຍາທາງວິທະຍາສາດຂຶ້ນ.ດ້ານການສຶກສາກໍ່ມີແນວຄິດກ່ຽວກັບການສອນແບບຕ່າງໆເຊິ່ງເປັນມິຕິໃໝ່ຂອງການເຝິກຄູສອນ.

- **ຈິດຕະວິທະຍາເຊີງປະຈັກ.**

ກຸ່ມປະຈັກນິຍົມ ( Empiricism ) ເຊື່ອວ່າ: ຄວາມຮູ້ທັງໝົດ ແມ່ນເກີດມາຈາກປະສົບການ, ປະສົບການຕ່າງໆນັ້ນແມ່ນເກີດມາຈາກປະສາດສຳພັດທາງ 5 ຄື: ( ຫູ, ຕາ, ດັງ, ລີ້ນ, ຜິວໜັງ )ການຮັບຮູ້ຈາກປະສາດສຳພັດຈະເຊື່ອມສຳພັນກັນເປັນຄວາມຄິດ.

ທ່ານລອດ ( John Locke : 1632 – 1704 ) ເປັນຜູ້ໜຶ່ງທີ່ຂະຫຍາຍແນວຄິດຂອງລັດທິປະຈັກນິຍົມໃຫ້ຊັດເຈນຂຶ້ນ ແລະ ເປັນພື້ນຖານສຳຄັນຂອງການສຶກສາຈິດຕະວິທະຍາຈາກຂໍ້ມູນປະສົບການ. ເພິ່ນເຊື່ອວ່າ ຄວາມຄິດ, ຄວາມຮູ້ຕ່າງໆທີ່ເກີດຂຶ້ນມາຈາກປະສົບການ,ບໍ່ໄດ້ຕິດພັນມາຕັ້ງແຕ່ເກີດ, ເພາະຖ້າບຸກຄົນມີຄວາມຄິດຕິດຕົວມາແຕ່ເກີດ ເຂົາກໍ່ຈະມີຄວາມຄິດເຊັ່ນນັ້ນເໝືອນເດີມ ໂດຍບໍ່ມີການປ່ຽນແປງຕະຫຼອດໄປ. ແຕ່ໃນຄວາມຈິງແລ້ວບໍ່ໄດ້ເປັນດັ່ງນັ້ນ, ເພາະຄວາມຄິດຂອງບຸກຄົນຈະປ່ຽນແປງໄປຕະຫຼອດເວລາ, ເຊິ່ງຈະແຕກຕ່າງກັນ ໄປຕາມສະຖານະການ ແລະ ເຫດການຕົວຈິງ.

ທ່ານລອດ ໄດ້ສະເໜີຄວາມຄິດເຫັນວ່າ: ຄົນເຮົາເກີດມາດ້ວຍຈິດທີ່ຫວ່າງເປົ່າຄືດັ່ງເຈ້ຍຂາວທີ່ບໍ່ມີຮອຍຂີດຂຽນໃດໆ. ຈິດເກີດມີຄວາມຄິດກໍ່ຍ້ອນມີປະສົບການຈາກການໄດ້ຮູ້ ແລະສຳພັນເຊື່ອມໂຍງຄວາມຄິດໃນຈິດ.ການສຳພັດເປັນຈຸດເລີ່ມຂອງຄວາມຮູ້, ຄວາມຄິດ, ຈິດທຳໜ້າທີ່ລວມການສຳພັດຕ່າງໆເຂົ້າເປັນຄວາມຄິດ, ແລ້ວສ້າງຄວາມຄິດທີ່ສັບຊ້ອນຂຶ້ນມາຈາກການເຊື່ອມໂຍມຄວາມຄິດທີ່ງ່າຍໆ ເຂົ້ານຳກັນ.ຕາມແນວຄວາມຄິດຂອງທ່ານລອດຄວາມຮູ້, ຄວາມຄິດຕ່າງໆ ແມ່ນເກີດຈາກການມີປະຕິສຳພັນລະຫວ່າງເດັກກັບສິ່ງແວດລ້ອມອ້ອມຕົວ.ສະນັ້ນ, ຄູຈິ່ງຄວນຈັດສິ່ງແວດລ້ອມ ເພື່ອກະຕຸ້ນຄວາມຢາກຮູ້ຢາກເຫັນໃຫ້ແກ່ເດັກ ແລະສອນແບບມີການສະເໜີຕົວຢ່າງທັງໃຫ້ຄຳແນະນຳທີ່ຫຼາຍກວ່າການຂົ່ມຂູ່ເດັກ.

- **ແນວຄິດໃໝ່ກ່ຽວກັບຈິດຕະວິທະຍາ ແລະການຮຽນການສອນ.**

ຍຸກນີ້ມີນັກການສຶກສາຫຼາຍໆທ່ານທີປະຕິຮູບການສຶກສາເຊັ່ນ: ທ່ານ ເປສະຕາລອດຊີ ( Johann Heinrich Pestalozzi 1746 – 1827 ), ທ່ານ ແຮຣບາລ ( Johann Fried –rich Herbart : 1776 – 1841 ) ທ່ານ ໂຟຣເບລ ( Friedrich Froebel : 1782 – 1852 ) ເປັນຕົ້ນ. ທ່ານ ເປສຕາລອດຊີນັກການສຶກສາຊາວສະວິດ, ທ່ານໄດ້ຄິດທິດສະດີພັດທະນາການຂອງມະນຸດວຂຶ້ນຈາກພື້ນຖານຄວາມຄິດທີ່ວ່າ: ພັດທະນາການຂອງມະນຸດຈະເປັນໄປຕາມທຳມະຊາດຢ່າງເປັນລະບົບ ແລະມີຄວາມກົມກືນກັນ.ທ່ານໄດ້ແບ່ງຂັ້ນພື້ນຖານອອກເປັນ3 ໄລຍະຄື:

- ໄລຍະທີ 1 ແມ່ນໄລຍະພັດທະນາການທາງຄວາມຄິດເຊິ່ງເກີດມາຈາກປະສົບການ ແລະປະສາດສຳພັດ.
- ໄລຍະທີ 2  ແມ່ນໄລຍະພັດທະນາການທາງກ້າມເນື້ອມືທີ່ຈະຈັບຕ້ອງສິ່ງຂອງຕ່າງໆ.
- ໄລຍະທີ 3  ແມ່ນໄລຍະພັດທະນາການຈະລິຍະທຳ, ຄ່ານິຍົມ ແລະຄວາມເຊື່ອສາສະໜາ.

ທ່ານມີຄວາມຄິດເຫັນວ່ານັກການສຶກສາຈະຕ້ອງຮູ້ຈິດຕະວິທະຍາກ່ຽວກັບເດັກ ແລະວິທີການຫຼື ເດັກຮຽນຮູ້, ເພື່ອຈັດປະສົບການຕ່າງໆໃຫ້ສອດຄ່ອງກັບພັດທະນາການ ແລະຄວາມຕ້ອງການຂອງ

ເດັກແຕ່ລະໄວອາຍຸ. ທ່ານຍັງມີຄວາມຄິດຄວາມເຫັນທີ່ຈະປັບປຸງເຝິກຫັດຄູ ແລະການຮຽນການສອນຢ່າງກ້ວາງຂວາງ.

ຢູ່ໃນການຮຽນການສອນນັ້ນ, ທ່ານເຊື່ອວ່າ: ເດັກຮຽນຮູ້ຈາກປະສົບການ ໂດຍຜ່ານການຮັບຮູ້ຈາກປະສາດສຳພັດ. ສະນັ້ນ, ວິທີສອນທີ່ດີທີ່ສຸດກໍ່ແມ່ນການໃຫ້ເດັກໄດ້ກະທຳ ແລະປະຕິບັດຕົວຈິງ,ການສອນທີ່ດີຕ້ອງເລີ່ມຈາກຮູບປະທຳໄປສູ່ນາມປະທຳ, ຕ້ອງເລີ່ມຈາກສິ່ງທີ່ເດັກຮູ້ຫຼືຄຸ້ນເຄີຍໄປສູ່ສິ່ງທີ່ເດັກບໍ່ທັນຮູ້ຫຼືສິ່ງທີ່ແປກໃໝ່ຫຼືສອນຈາກສິ່ງທີ່ໃກ້ຕົວໄປສູ່ສິ່ງທີ່ໄກຕົວເຊັ່ນ: ເລີ່ມຈາກຄອບຄົວໄປສູ່ຊຸມຊົນ, ຈາກປະເທດ ແລະນາໆປະເທດ.ຫຼັກການນີ້ໄດ້ເປັນທີ່ຍອມຮັບໂດຍທົ່ວໄປ ໃນອາດີດ ແລະປະຈຸບັນ.ດັ່ງນັ້ນ, ທ່ານ ເປສະຕາລອດຊີຖືວ່າແມ່ນຜູ້ທີ່ມີບົດບາດສຳຄັນທີ່ສຸດຕໍ່ການພັດທະນາ ໃຫ້ເກີດມີຈິດຕະວິທະຍາສຶກສາຂຶ້ນ.

ທ່ານ ແຮຣບາລ ເປັນສິດຂອງທ່ານເປສະຕາລອດທີ່ມີຊື່ສຽງທາງການສຶກສາ. ໂດຍສະເໜີແນວຄວາມຄິດວ່າ:ຫຼັກສູດຢູ່ໃນໂຮງຮຽນຄວນເປັນຫຼັກສູດທີ່ມີຄວາມພົວພັນເຊິ່ງກັນ ແລະກັນຢູ່ໃນແຕ່ລະວິຊາ , ເພື່ອໃຫ້ເດັກພັດທະນາຄວາມຮູ້ເຂົ້າກັນຢ່າງເປັນລະບົບ.ທ່ານໄດ້ສະເໜີຂັ້ນຕອນວິທີການສອນເປັນຂັ້ນໆເຊິ່ງມີທັງໝົດ 5 ຂັ້ນຕອນຄື:

1) ຂັ້ນກະກຽມ (Preparation ) ແມ່ນຂັ້ນຕອນທີ່ຄູສ້າງຄວາມພ້ອມຂອງຜູ້ຮຽນ. ດ້ວຍການທົບທວນຄວາມຮູ້ທີ່ຮຽນມາຢູ່ໃນຊົ່ວໂມງກ່ອນ.
2) ຂັ້ນສອນ ( Presentation ) ແມ່ນຂັ້ນທີ່ຄູສະເໜີເນື້ອໃນບົດຮຽນໃໝ່ໃຫ້ນັກຮຽນ.
3) ຂັ້ນສຳພັດ ( Association ) ແມ່ນຂັ້ນທີ່ຄູເຊື່ອມໂຍງຄວາມຮູ້ໃໝ່ທີ່ສອນກັບຄວາມຮູ້ເດີມທີ່ມີຢູ່.
4) ຂັ້ນສະຫຼຸບຫຼັກການ ( Systematization )ແມ່ນຂັ້ນທີ່ຄູສະຫຼຸບເນື້ອໃນ ທີ່ຮຽນມາເປັນຫຼັກການ ຫຼື ເປັນທິດສະດີ.
5) ຂັ້ນນຳໃຊ້ ຫຼື ປະຍຸກ ( Application ) ແມ່ນຂັ້ນທົດສອບ ຫຼື ໃຫ້ເຮັດບົດເຝິກຫັດ ເພື່ອປະເມີນວ່າ ຜູ້ຮຽນສາມາດໃຊ້ຄວາມຮູ້ ທີ່ຮຽນມາໃນສະຖານະການໃໝ່ໄດ້ ຫຼື ບໍ່.

ທ່ານ ໂຟເບລ ນັກການສຶກສາຊາວເຢຍລະມັນ ໄດ້ເປັນຜູ້ບຸກເບີກການສຶກສາລະດັບອະນຸບານ ທີ່ມີຊື່ສຽງທີ່ສຸດ. ທ່ານສະເໜີແນວຄວາມຄິດວ່າ: ທຸກໆສິ່ງ ລ້ວນແຕ່ມີຄວາມເປັນເອກະພາບໃນຕົວເອງ ແລະ ຕົວມັນເອງຍັງເປັນສ່ວນໜຶ່ງຂອງເອກະພາບອີກສ່ວນໜຶ່ງ. ເຊິ່ງຄວາມຄິດນີ້ ກໍ່ແມ່ນພື້ນຖານຂອງຄວາມສຳພັນລະຫວ່າງສ່ວນໃຫຍ່ກັບສ່ວນລວມນັ້ນເອງ. ທ່ານໄດ້ເນັ້ນພັດທະນາການຂອງມະນຸດ ທາງກາຍ, ຈິດໃຈ ແລະ ສັງຄົມ. ທ່ານ ເຊື່ອວ່າ ເດັກທີ່ເກີດມາໂດຍທຳມະຊາດແລ້ວຈະເປັນຄົນດີ ແລະ ຄວາມດີນີ້ຈະປະກົດຂຶ້ນ ຕາມຂັ້ນພັດທະນາການ. ເດັກແຕ່ລະຄົນຈະມີຄວາມຄິດທີ່ສ້າງສັ, ເຊິ່ງເກີດຂຶ້ນຈາກພາຍໃນຂອງຕົວເດັກເອງ. ຫຼາຍກ່ວາແຮງກະຕຸ້ນຈາກສິ່ງແວດ ລ້ອມພາຍນອກ ແລະ ການທີ່ເດັກຮຽນຮູ້ສິ່ງໃດໄດ້ດີພຽງໃດນັ້ນຍ່ອມຂຶ້ນກັບສັກກາຍະພາບ ພາຍໃນຕົວເດັກເປັນສິ່ງຄັນ. ທ່ານ ໂຟຣເບລ ໄດ້ສະເໜີກິດຈະກຳຕ່າງໆ ທີ່ຈະໃຊ້ສອນເດັກເຊັ່ນ: ຈະແຕ້ມຮູບເພື່ອພັດທະນາການທາງສ້າງ ສັນ ແລະ ການສ້າງຈິນຕະນາການ, ການຫຼິ້ນຢ່າງອິດສະຫຼະ, ກິດຈະກຳເພື່ອພັດທະນາການ ທັກສະກ້າມເນື້ອເປັນຕົ້ນ.

- **ການເລີ່ມຕົ້ນຂອງຈິດຕະວິທະຍາທົດລອງ.**

ຫຼັກການທີ່ໄດ້ກ່າວມາຂ້າງເທິງນັ້ນແມ່ນ ສິ່ງທີ່ໄດ້ມາດ້ວຍວິທີການສຶກສາຄົ້ນຄ້ວາ ຂອງນັກປັດຊະຍາ, ແຕ່ບໍ່ໄດ້ມີການທົດລອງແບບວິທະຍາສາດ. ສະນັ້ນ, ໃນປີ ຄສ 1879 ນັກຈິດຕະວິທະຍາ ທີ່ມີຊື່ສຽງວ່າ: ວຸ່ນ (Wilhelm Wundt: 1832 – 1920 )ແຫ່ງມະຫາວິທະຍາໄລ ແລັບຊິກ ( Leipzig ) ປະເທດເຢຍລະມັນ ໄດ້ເປີດຫ້ອງທົດລອງທາງຈິດຕະວິທະຍາ ເຊິ່ງເປັນແຫ່ງທຳອິດຂອງໂລກ. ທ່ານ ວຸ່ນ ໄດ້ສຶກສາທາງດ້ານສາລີລະສາດ ແລະ ຈິດຕະວິທະຍາ. ໂດຍສະເພາະແມ່ນເລື່ອງການຮູ້ສຶກສຳພັດ, ການຮັບຮູ້, ຄວາມໃສ່ໃຈ, ຄວາມໄວຂອງການສະແດງປະຕິກິລິຍາໂຕ້ຕອບ ແລະ ຄວາມສາມາດ ແຍກຄວາມແຕກຕ່າງຂອງສິ່ງກະຕຸ້ນ. ວິທີການໃຊ້ເຂົ້າໃນການສຶກສາ ທ່ານ ວຸ່ນ ໄດ້ເອີ້ນວ່າ: ວິທີພິນິດພາຍໃນ ( Introspection )ເຊິ່ງແມ່ນວິທີການສັງເກດການກະທຳ ຫຼື ຄວາມຮູ້ສຶກຂອງຕົນເອງ ແລ້ວລາຍງານອອກມາ. ທ່ານ ວຸ່ນ ໄດ້ນາມມະຍຸກດວ່າ ເປັນບິດາແຫ່ງຈິດຕະວິທະຍາ ການທົດລອງແຜນໃໝ່ ແລະ ເປັນຜູ້ນຳສຳນັກໂຄງການສ້າງຂອງຈິດ ( Struc turalism ).

ແບບບິງເຮົາ ( Herman Ebbinghaus : 1850 – 1908 ) ເປັນຜູ້ໜຶ່ງທີ່ໄດ້ແຍກຈິດຕະວິະຍາອອກຈາກປັດຊະຍາ, ໂດຍສະແດງໃຫ້ເຫັນວ່າ ຂະບວນການທາງຈິດຂັ້ນສູງຂອງການຮຽນຮູ້ ແລະ ຄວາມຈຳ, ສາມາດສຶກສາໄດ້ດ້ວຍການທົດລອງຫຼາຍກ່ວາການສຶກສາ ກ້ວຍວິທີສະຫຼຸບຄວາມສຳພັນຂອງສິ່ງທີ່ປະກົດຢູ່. ເຂົາເປັນນັກວິໃຈທີ່ມີຄວາມລະອຽດ ແລະ ສະຫຼຸບຜົນຢ່າງລະມັດລະວັງ, ເຂົາມີການທົດລອງແບບຊ້ຳໆ ແລະ ສຶກສາຕໍ່ເນື່ອງເປັນໄລຍະເວລາດົນນານ ຫຼາຍປີກ່ອນຈະສະຫຼຸບຜົນ ແລະ ເຜີຍແຜ່. ການທົດລອງທີ່ມີຊື່ສຽງທີ່ໜຶ່ງໃນ 20 ນາທີທຳອິດ ແລະ ລືມເກືອບໝົດ ເມື່ອເວວລາຜ່ານໄປ 9 ຊົ່ວໂມງ. ຜົນການສຶກສາຂອງ ແອບບິງເຮົາ ນີ້ຍັງເປັນທີ່ຍອມຮັບ ແລະ ໄດ້ຮັບການອ້າງອີງເຖິງປະຈຸບັນນີ້.

6) **ຈິດຕະວິທະຍກັບການສຶກສາໃນສະຕະວັດທີ 20.**

ທ່ານ ວຸ່ນ ໄດ້ເລີ່ມສຶກສາ ຈິດຕະວິທະຍາດ້ວຍວິທີການທົດລອງທີ່ເປັນລະບົບ ຈຶ່ງເຮັດໃຫ້ຈິດຕະວິທະຍາໄດ້ກາຍ ເປັນວິທະຍາສາດຂະແໜງໃໝ່ ທີ່ມີການພັດທະນາຢ່າງໄວວາ ຢູ່ໃນສະຕະວັດທີ 19 ເຖິງວ່າ ທ່ານ ວຸ່ນ ບໍ່ໄດ້ສົນໃຈສຶກສາກ່ຽວກັບຂະບວນການຮຽນຮູ້, ແຕ່ກໍ່ມີຜູ້ນຳເອົາວິທີການສຶກສາຂອງທ່ານໄປໃຊ້ ເພື່ອຄົ້ນຄ້ວາກ່ຽວກັບພຶດຕິກຳທາງການຮຽນຮູ້ ຢູ່ໃນໄລຍະຕໍ່ມາ.

ທ່ານ ເຈມສ ( ບິວລຽມເຈມສ : 1842 – 1910 ) ແມ່ນນັກຈິດຕະວິທະຍາ ຊາວອາເມຣິກາ ທີ່ມີບົດບາດສຳຄັນຜູ້ໜຶ່ງ ທີ່ພາໃຫ້ເກີດມີຈິດຕະວິທະຍາການສຶກສາ. ແຕ່ທ່ານ ເຈມສ ກໍ່ບໍ່ໄດ້ລະເລີຍ ການສຶກສາຈິດຕະວິທະ ຍາດ້ວຍການທົດລອງ, ທ່ານໄດ້ເປີດຫ້ອງທົດລອງທາງຈິດຕະວິທະຍາ ຂຶ້ນຢູ່ທີ່ມະຫາວິທະຍາໄລ ຮາຮາວານ ສະຫາລັດອາເມລິກາ. ຢູ່ໃນໄລຍະໃກ້ຄຽງກັບການທົດລອງຂອງ ວຸ່ນ ທີ່ສຸດ.

ທ່ານເມສ ໄດ້ອະທິບາຍຈິດຕະວິທະຍາ ໃນສະຖານະທີ່ເປັນວິທະຍາສາດ ແລະ ອະທິບາຍການສອນວ່າ ເປັນສິລະປະ. ທ່ານເວົ້າວ່າ: ຄຸນນະພາບຂອງການສຶກສາ ຈະຂຶ້ນກັບຄວາມສາມາດຂອງຄູ ທີ່ປະຍຸກຫຼັກການທາງຈິດຕະວິທະຍາ ໄດ້ຢ່າງມີປະສິດທິພາບພຽງໃດ.

ຈຸດເດັ່ນຂອງການສຶກສາ ຈິດຕະວິທະຍາ ຂອງເຈມສ ແມ່ນເຂົາໄດ້ໃຫ້ຄວາມສໍາຄັນ ຂອງການສັງເກດໃນສະພາບທໍາມະຊາດເປັນພິເສດ, ໂດຍສະເພາະແມ່ນ ການສຶກສາຈິດຕະວິທະຍາ ໂດຍກົງຈາກຫ້ອງຮຽນ. ເຖິງຢ່າງໃດກໍ່ຕາມ ວິທີດັ່ງກ່າວຍັງມີຂໍ້ວິຈານວ່າ: ບໍ່ສາມາດລະບຸອົງປະກອບ ຫຼື ຕົວແປທີ່ມີອິດທິພົນຕໍ່ການຮຽນຮູ້ຂອງເດັກໄດ້ຢ່າງຊັດເຈນ ເນື່ອງຈາກຜູ້ສັງເກດບໍ່ໄດ້ຄວບຄຸມຕົວແປແຊກຊ້ອນ ຫຼື ຕົວແປເກີນ ຢູ່ໃນສະຖານະການຮຽນນັ້ນ. ດ້ວຍເຫດຜົນດັ່ງກ່າວ ທ່ານ ທອນໃດ ( ແອດວາດແອວ ທອນໃດ : 1874 – 1949 ) ຈຶ່ງອີງໃສ່ດານສຶກສາຂະບວນການຮຽນຮູ້ຕ່າງໆ ຢູ່ໃນຫ້ອງທົດລອງ ຫຼາຍກ່ວາການສັງເກດໃນຫ້ອງຮຽນ. ຜົນງານທີ່ມີຊື່ສຽງຂອງທ່ານແມ່ນ ທິດສະດີສໍາພັນເຊື່ອມໂຍງ ( Conectionism theory ) ເຊິ່ງແມ່ນທິດສະດີ ທີ່ສະຫຼຸບຜົນຈາກການທົດລອງກັບໂຕແມວຢູ່ໃນກ່ອງ. ທ່ານໄດ້ຂຽນໜັງສື ຈິດຕະວິທະຍາກາສຶກສາຂຶ້ນເປັນເຫຼັ້ມທໍາອິດ ໃນປີ ຄສ 1903 ໃນລະຫວ່າງ ປີ ຄສ 1930 – 1940 ຈິດຕະວິທະຍາການສຶກສາຂອງແນວທາງທ່ານທອນໃດໄດ້ເນັ້ນຄວາມເປັນປາລະໃນແບບພິເສດຄື ສາມາດວັດຄວາມຮູ້ຂອງຜູ້ຮຽນໄດ້ຊັດເຈນຫຼາຍຂຶ້ນ ກັ່ງນັ້ນ, ທ່ານ ທອນໃດ ຈຶ່ງໄດ້ຮັບການຍອມຮັບວ່າ ເປັນນັກຈິດຕະວິທະຍາການສຶກສາ ( Clifford, 1981: 13 )ຫຼັງຈາກທ່ານ ທອນໄດ ໄດ້ເຜີຍແຜ່ງານຈິດຕະວິທະຍາການສຶກວສາແລ້ວ, ກໍ່ປະກົດມີວາລະສານ ຈິດຕະວິທະຍາການສຶກສາ ເຫຼັ້ມທໍາອິດທີ່ມີຊື່ສຽງ Gournalof Education Phychology ທີ່ພິມເຜີຍແຜ່ໃນປີ 1910 ຕໍ່ມາກໍ່ໄດ້ມີວາລະສານສາຂາວິຊານີ້ເກີດຂຶ້ນຫຼາຍສະບັບຢ່າງຕໍ່ເນື່ອງ. ໃນຂະນະດຽວກັນນັ້ນ ທິດສະດີທາງຈິດຕະວິທະຍາການສຶກສາ ກໍ່ໄດ້ຮັບການພັດທະນາຢ່າໄວວາ, ຈົນເປັນວິທະຍາສາດໃໝ່ ທີ່ໄດ້ຮັບການນໍາໄປປະຍຸກໃຊ້ເຂົ້າໃນວົງການສຶກສາຢ່າງກ້ວາງຂວາງ.

7) **ຈິດຕະວິທະຍາການສຶກສາແມ່ນວິທະຍາສາດທີ່ເຊື່ອມໂຍງລະຫວ່າງຈິດຕະວິທະຍາກັບການສຶກສາ.**

ຈິດຕະວິທະຍາການສຶກສາ ມີຂອບເຂດເນື້ອໃນທີ່ຈັດເຈນ, ຫົວຂໍ້ສໍາຄັນທີ່ມັກປະກົດຂຶ້ນໃນຕໍາລາຈິດຕະວິທະຍາການສຶກສາທົ່ວໆໄປໄດ້ແກ່: ຄວາມແຕກຕ່າງລະຫວ່າງບຸກຄົນ, ພັດທະນາການຂອງບຸກຄົນໃນໄວຕ່າງໆ, ການຮຽນຮູ້, ແຮງຈູງໃຈ, ບຸກຄະລິກກະພາບການປະຕິສໍາພັນທາງສັງຄົມ, ການຈັດຫ້ອງຮຽນ, ການປັບພຶດຕິກໍາໃນຫ້ອງຮຽນ ແລະ ການວັດຜົນຂອງການຮຽນຮູ້. ເນື້ອໃນຕ່າງໆ ເຫຼົ່ານີ້ ແມ່ນເນັ້ນໃຫ້ເກີດຄວາມາຮູ້, ຄວາມເຂົ້າໃຈຮກ່ຽວກັບທໍາມະຊາດ ແລະ ພຶດຕິກໍາຂອງຜູ້ຮຽນ, ເພື່ອດປັນປະໂຫຍດຢູ່ໃນການດໍາເນີນການຮຽນການສອນ, ການພັດທະນາ, ການປ້ອງກັນ ແລະ ແກ້ໄຂພຶດຕິກໍາຂອງຜູ້ຮຽນ, ຕະຫຼອດເຖິງການພັດທະນາຫຼັກສູດ ແລະ ການບໍລິຫານການສຶກສາອີກດ້ວຍ.

ໃນປະຈຸບັນຫຼັກການທາງຈິດຕະວິທະຍາການສຶກສາ ໄດ້ມາຈາກທາງຂໍ້ມູນປະສົບການ ແລະ ການນໍາໃຊ້ທິດສະດີ ທີ່ມີມາກ່ອນແລ້ວ. ສໍາລັບການວິໄຈ ຈິດຕະວິທະຍາການສຶກສາຈະມີທາງການວິໄຈພື້ນຖານ ແລະ ການວິໄຈປະຍຸກ. ການວິໄຈພື້ນຖານນັ້ນ ຈະເປັນການຄົ້ນຄ້ວາຫາຄໍາຕອບ ກ່ຽວກັບທໍາມະຊາດຂອງການຮຽນຮູ້, ໂດຍບໍ່ຄໍານຶງເຖິງການປະຍຸກຜົນການວິໄຈໂດຍກົງເຊັ່ນ: ການສຶກສາເນັ້ນຫາຄໍາ

ຕອບວ່າ: ເດັກທີ່ມີອາຍຸ 5 ປີ ສາມາດໄຈແຍກຄວາມແຕກຕ່າງຂອງລະກັບສຽງດົນຕີ ໄດ້ພຽງໃດ ແລະ ມີຄວາມແຕກຕ່າງກັບເດັກທີ່ມີ ອາຍຸ 4ປີ ແລະ ອາຍຸ 6ປີ ຫຼືບໍ່? ຜົນການສຶກສານີ້ ອາດມີຄວາມສົນໃຈຫຼາຍສໍາລັບຄົນທົ່ວໄປ ແລະ ພາໃຫ້ຮັບຮູ້ເຖິງພັດທະນາການ ດ້ານການໄຈແຍກລະດັບສຽງ ຂອງເດັກກ່ອນເຂົ້າໂຮງ ຮຽນ ແຕ່ຈະບໍ່ມີຜົນປະໂຫຍດໃນການປະຍຸກໃຊ້ເຂົ້າໃນການສອນຂອງຄູໂດຍກົງ. ສໍາລັບການວິໄຈປະຍຸກນັ້ນແມ່ນ ແນ່ໃສ່ຊອກຫາຄໍາຕອບ ເພື່ອແກ້ໄຂບັນຫາທາງການສຶກສາ ບາງປະການທີ່ກໍາລັງປະສົບຟູ່ ເຊັ່ນ: ເພິ່ນຈະພັດທະນາສື່ປະກອບກັບການສອນອ່ານພາສາ ວ່າຈະເລືອກໃຊ້ສື່ປະເພດໃດ ຈຶ່ງຈະມີຜົນການອ່ານໃຫ້ມີປະສິດທິພາບສູງ, ການວິໄຈເພື່ອຕອບຄໍາຖາມນີ້ແມ່ນ ສາມາດນໍາເອົາຜົນທີ່ໄດ້ໄປໃຊ້ປະໂຫຍດໂດຍກົງສໍາລັບຄູ ຫຼື ນັກການສຶກສາ.

ຈາກຂອບເຂດທໍາມະຊາດຂອງຈິດຕະວິທະຍາການສຶກສາ ດັ່ງທີ່ກ່າວມາຂ້າງຕົ້ນນັ້ນ ຈິດຕະວິທະຍາການສຶກສາ ໂດຍຕົວມັນເອງແລ້ວກໍ່ເປັນສາຂາໜຶ່ງຂອງຈິດຕະວິທະຍາ, ເຊິ່ງຖືວ່າ ເປັນຈິຕະວິທະຍາປະສົມລະຫວ່າງ ຈິດຕະວິທະຍາບໍລິສຸດກັບຈິດຕະວິທະຍາການປະຍຸກ. ໃນຄະນະນັ້ນ, ກໍ່ເປັນຂະແໜງໜຶ່ງໃນການສຶກສາ ເຊິ່ງກ່ຽວຂ້ອງໂດຍກົງ ກັບທໍາມະຊາດຂອງຜູ້ຮຽນ, ນັກການສຶກສາຈຶ່ງຈໍາເປັນຕ້ອງເຂົ້າໃຈ ຜູ້ຮຽນຈຶ່ງສາມາດພັດທະນາຜູ້ຮຽນ ໂດຍໃຊ້ເທັກນິກທີ່ເໝາະສົມ ເພື່ໃຫ້ບັນລຸເປົ້າໝາຍຂອງການສຶກສາທີ່ກໍານົດໄວ້.

## 1.2. ຄວາມໝາຍຂອງຈິດຕະວິທະຍາການສຶກສາ.

ຈິດຕະວິທະຍາການສຶກສາ ເປັນວິທະຍາສາດທີ່ສຶກສາຄົ້ນຄ້ວາກ່ຽວກັບການຮຽນຮູ້ ແລະ ພັດທະນາການຂອງຜູ້ຮຽນ ຢູ່ໃນສະພາບການຮຽນສືບຕໍ່ການສອນໃນຫ້ອງຮຽນ ເພື່ອຄົ້ນຄ້ວາທິດສະດີ ແລະ ຫຼັກການທີ່ນໍາມາຊ່ວຍແກ້ໄຂບັນຫາ ທາງດ້ານດ້ານສຶກສາ ແລະ ສົ່ງເສີມການຮຽນການສອນໃຫ້ມີປະສິດທິພາບ.

ຈິກຕະອະທະຍາການສຶກສາ ຈະມີບົດບາດສໍາຄັນ ຕໍ່ການຈັດການຮຽນການສອນ. ການສ້າງຫຼັກສູະ ແລະ ການຮຽນການສອນໂດຍຄໍານຶງເຖິງຄວາມແຕກຕ່າງລະຫວ່າງບຸກຄົນ. ນັກການສຶກສາ ແລະ ຄູອາຈານ ຈໍາເປັນຕ້ອງມີຄວາມຮູ້ພື້ນຖານ ທາງຈິດຕະວິທະຍາການສຶກສາ ເ◌ັພື່ອໃຫ້ເຂົ້າໃຈເຖິງພຶດຕິກໍາຂອງຜູ້ຮຽນ ແລະ ຂະບວນການຮຽນຮູ້ ຕະຫຼອດເຖິງການແກ້ໄຂບັນຫາຕ່າງໆ ກ່ຽວກັບການຮຽນການສອນ ຄືດັ່ງນັກວິສະວະກອນ ຈໍາເປັນຈະຕ້ອງມີຄວາມຮູ້ພື້ນຖານ ທາງວິທະຍາສາດ ແລະ ຄະນິດສາດ. ໂດຍທົ່ວໄປແລ້ວເນື້ອໃນຂອງຈິດຕະວິທະຍາການສຶກສາທີ່ເປັນຄວາຮູ້ພື້ນຖານສໍາລັບຄູ ແລະ ນັກການສຶກສາຈະປະກອບມີຄວາຮູ້ ກ່ຽວກັບ: ຄວາມໝາຍ, ຄວາມສໍາຄັນ ຂອງຈິດຕະວິທະຍາການສຶກສາຄູທີ່ດີ ແລະ ມີປະສິດທິພາບ, ຄວາມແຕກຕ່າງລະຫວ່າງບຸກຄົນ, ທິດສະດີ ແຮງຈູງໃຈ, ທິດສະດີການຮຽນຮູ້, ຫຼັກການ ແລະ ວິທີສອນ, ການວັດ ແລະ ປະເມີນຜົນ, ການສ້າງບັນຍາກາດຂອງຫ້ອງຮຽນ ເພື່ເອື້ອອໍານວຍຕໍ່ຜູ້ຮຽນ ແລະ ການເສີມສ້າງພັດທະນາທາງບຸກຄະລິກກະພາບຂອງຜູ້ຮຽນ.

ເພື່ອເປັນການທຳຄວາມເຂົ້າໃຈກ່ຽວກັບຈິດຕະວິທະຍາການສຶກສາ ຜູ້ທີ່ເປັນຄູ ແລະ ນັກການສຶກສາ ຕ້ອງເຂົ້າໃຈກ່ຽວກັບຄວາມໝາຍຂອງຄຳສັບຕ່າງໆທີ່ມີການພົວພັນດັ່ງນີ້:

ຄຳວ່າ: ຈິດຕະວິທະຍາການສຶກສາ ( Educational Psychology ) ແມ່ນຄວາມສຳຄັນທີ່ລວມເຂົ້າກັນຄື: ຈິດຕະວິທະຍາ ແລະ ການສຶກສາ.

ຄຳວ່າ: ຈິດຕະວິທະຍາ ( psychology ) ໄດ້ມາຈາກ 2 ຄຳສັບເຊັ່ນກັນຄື:

1. Psycho: ມາຈາກພາສາກະເລັກຄື Psyche ເຊິ່ງເບື້ອງຕົ້ນມີຄວາມໝາຍວ່າ: ວິນຍານ (Soul) ຕໍ່ຈາກນັ້ນມານັກປັດຊະຍາໄດ້ປ່ຽນຄວາມໝາຍມາເປັນຈິດ (Mind)
2. Logy: ມາຈາກພາສາກະເລັກຄື: Logos ເຊິ່ງໝາຍເຖິງການສຶກສາຄົ້ນຄ້ວາ( study ).

ຄຳວ່າ: ຈິດຕະວິທະຍາ ( psychology ) ໝາຍເຖິງການສຶກສາຄົ້ນຄ້ວາ ກ່ຽວກັບວິນຍານ ຫຼື ຈິດ. ແຕ່ເລື່ອງການສຶກສາວິນຍານ ຫຼື ຈິດນີ້ ແມ່ນເປັນການຍາກທີ່ຈະສັງເກດເຫັນ ແລະ ອະທິບາຍພິສູດໄດ້. ເພາະສະນັ້ນນັກຈິດຕະວິທະຍາໃນສະໄໝຕໍ່ມາ ຈຶ່ງມີຄວາມພະຍາຍາມຈະເຮັດໃຫ້ຈິດຕະວິທະຍາກາຍເປັນວິທະຍາສາດ ທີ່ສາມາດສັງເກດ ຫຼື ພິສູດໄດ້. ຕໍ່ຈາກນັ້ນ, ໃນສະຕະວັດທີ 20 ໄດ້ມີນັກຈິດຕະວິທະຍາ ຊື່ວ່າ : ຈອນ ບີ ວັດສັນ ( John B. Watson, 1875 – 1958 )ໄດ້ສຶກສາຈິດຕະວິທະຍາໃນຮູບແບບຂອງພຶດຕິກຳ ແລະ ໄດ້ປະກາດທິດສະດີ ພຶດຕິກຳນິຍົມ. ດັ່ງນັ້ນ, ຄວາມໝາຍຂອງຈິດຕະວິທະຍາ ຊຶ່ງປ່ຽນມາເປັນການສຶກສາກ່ຽວກັບພຶດຕິກຳ (Behavior )ຂອງຄົນ ແລະ ສັດ.

ຄຳວ່າ: ການສຶກສາ ( Educatoin ) ໝາຍເຖິງການສຶກສາຄົ້ນຄ້ວາຊອກຫາຄວາມຮູ້, ການຮຽນຮູ້, ພຶດຕິກຳການຮຽນຮູ້.

ຈາກຄວາມໝາຍຂອງຈິດຕະວິທະຍາທີ່ໄດ້ກ່າວມາຂ້າເທິງນັ້ນ, ເພິ່ນສາມາດໃຫ້ຄວາມໝາຍຂອງຈິດຕະວິທະຍາການສຶກສາດັ່ງນີ້:

ນິຍາມ : ຈິດຕະວິທະຍາການສຶກສາ : ໝາຍເຖິງວິຊາທີ່ກ່ຽວຂ້ອງກັບການສຶກສາພຶດຕິກຳຕ່າງໆໃນສະຖານະການ ການຮຽນ-ການສອນ ໂດຍຄຳເນີງເຖິງທຳມະຊາດ ແລະ ຄຸນລັກສະນະຂອງຜູ້ຮຽນ, ພຶດຕິກຳການພັດທະນາຄວາມສາມາດໃນການຮຽນຮູ້, ປັດໃຈທີ່ມີອິດທິພົນຕໍ່ກັບການຮຽນຮູ້, ວິທີການນຳເອົາຈິດຕະວິທະຍາໄປໝູນໃຊ້ເຂົ້າໃນການຮຽນ-ການສອນທີ່ມີປະສິດທິພາບ.

## 1.3. ຄວາມສຳຄັນຂອງຈິດຕະວິທະຍາການສຶກສາ.

**ຈິດຕະວິທະຍາການສຶກສາຈະສາມາດຊ່ວຍຄູ ແລະນັກສຶກສາໃນເລື່ອງຕ່າງໆດັ່ງລຸ່ມນີ້:**

1. ຊ່ວຍໃຫ້ຄູຮັບຮູ້ລັກຊະນະນິດໃສຂອງນັກຮຽນທີ່ຄູຈະຕ້ອງສອນ, ໂດຍຮັບຮູ້ເຖິງພັດທະນາການດ້ານຮ່າງກາຍ, ສະຕິປັນຍາ, ອາລົມ, ບຸກຄະລິກກະພາບ ແລະທາງດ້ານສັງຄົມ.
2. ຊ່ວຍໃຫ້ຄູມີຄວາມເຂົ້າໃຈພັດທະນາການທາງບຸກຄະລິກກະພາບບາງປະການຂອງນັກຮຽນເຊັ່ນ: ມະໂນພາບທີ່ດີ ແລະ ຖືກຕ້ອງແນວໃດ.
3. ຊ່ວຍໃຫ້ຄູມີຄວາມເຂົ້າໃຈຄວາມແຕກຕ່າງລະຫວ່າງບຸກຄົນເພື່ອຈະຊ່ວຍໃຫ້ນັກຮຽນເປັນແຕ່ລະບຸກຄົນໃຫ້ມີພັດທະນາການຕາມສັກກາຍຍະພາບຂອງແຕ່ລະບຸກຄົນ.

4. ຊ່ວຍຄູຮູ້ວິທີຈັດສະພາບແວດລ້ອມຂອງຫ້ອງຮຽນ ໃຫ້ເໝາະສົມກັບອາຍຸໃນແຕ່ລະໄວ ແລະ ພັດທະນາການຂອງນັກຮຽນເພື່ອຈູງໃຈໃຫ້ນັກຮຽນມີຄວາມສົນໃຈ ແລະ ຢາກຮຽນຮູ້.
5. ຊ່ວຍໃຫ້ຄູຮັບຮູ້ຕົວແປຕ່າງໆທີ່ມີອິດທິພົນຕໍ່ການຮຽນຂອງນັກຮຽນເຊັ່ນ: ແຮງຈູງໃຈ, ມະໂນພາບ ແລະການສ້າງຄວາມມຸ້ງຫວັງຂອງຄູທີ່ມີຕໍ່ກັບນັກຮຽນ.
6. ຊ່ວຍຄູກະກຽມການສອນ, ການວາງແຜນເພື່ອເຮັດໃຫ້ການສອນມີປະສິດທິ ພາບຂອງແຕະລະຄົນ. ໃນການຮຽນການສອນ ແລະ ວາງແຜນການສອນ.
7. ຊ່ວຍໃຫ້ຄູຮູ້ຫຼັກການ ແລະ ທິດສະດີຂອງການຮຽນຮູ້ ທີ່ນັກຈິດຕະວິທະຍາໄດ້ມີການພິສູດແລ້ວວ່າໄດ່ຜົນດີເຊັ່ນ: ການຮຽນຮູ້ຈາກການສັງເກດ ຫຼື ການຮຽນແບບ.
8. ຊ່ວຍຄູຮູ້ຫຼັກການສອນ ແລະ ວິທີສອນທີ່ມີປະສິດທິພາບເຊັ່ນ: ການໃຊ້ຄຳຖາມ, ການເສີມແຮງ ແລະ ການປະພຶດຕົນທີ່ເປັນແບບຢ່າງ.
9. ຊ່ວຍໃຫ້ຄູ ຮູ້ວ່າ: ນັກຮຽນທີ່ມີຜົນຕໍ່ການຮຽນດີນັ້ນ ບໍ່ຂຶ້ນກັບລະດັບສະຕິປັນຍາພຽງຢ່າງດຽວເທົ່ານັ້ນ, ມັນຍັງຂຶ້ນກັບອົງປະກອບອື່ນໆອີກເຊັ່ນ: ແຮງຈູງໃຈ, ທັດສະນະຄະຕິມະໂນພາບຂອງນັກຮຽນ ແລະ ຄວາມຄາດຫວັງຂອງຄູທີ່ມີຕໍ່ນັກຮຽນອີກດ້ວຍ.
10. ຊ່ວຍຄູຄຸ້ມຄອງຫ້ອງຮຽນ ແລະ ສ້າງບັນຍາກາດໃນຫ້ອງຮຽນ ເພື່ອເອື້ອອຳນວຍຕໍ່ການຮຽນຮູ້ ແລະ ເສີມສ້າງບຸກຄະລິກະພາບຂອງນັກຮຽນ ເພື່ອເຮັດໃຫ້ຄູ ແລະ ນັກຮຽນມີຄວາມຮັກ ແລະ ໄວ້ວາງໃຈເຊິ່ງກັນ ແລະ ກັນ ເພື່ອໃຫ້ນັກຮຍນມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ເຮັດໃຫ້ຫ້ອງຮຽນເປັນສະຖານທີ່, ທີ່ທຸກຄົນມີຄວາມສຸກ, ມີຄວາມຮັກໂຮງຮຽນໃຜໆກໍ່ຢາກມາຮຽນ.

ເນື່ອງຈາກການສຶກສາໄດ້ມີບົບາດທີ່ສຳຄັນເຂົ້າໃນການຊ່ວຍໃຫ້ນັກຮຽນພັດທະນາການທາງດ້ານສະຕິປັນຍາ, ບຸກຄະລິກກະພາບ ເພື່ອຊ່ວຍໃຫ້ນັກຮຽນປະສົບຜົນສຳເລັດໃນຊີວິດ. ທຸກໆປະເທດຢູ່ໃນໂລກນີ້ຈິ່ງໄດ້ຊອກຫາທາງສົ່ງເສີມການສຶກສາ ໃຫ້ມີຄຸນນະພາບ, ມີມາດຕະຖານ ໃນຄວາມເປັນເລີດ ເພາະສະນັ້ນ, ຄວາມຮູ້ກ່ຽວກັບຈິດຕະວິທະຍາການສຶກສາຈິ່ງມີບົດບາດທີ່ສຳຄັນໃນການຊ່ວຍຄູ ແລະນັກການສຶກສາ ເພື່ອປັບປຸງຫຼັກສູດ ແລະການຮຽນ-ການສອນ ໃຫ້ນັບມື້ນັບມີປະສິດທິພາບຂຶ້ນ.

❖ **ສະຫຼຸບ:**

ຈິດຕະວິທະຍາມີບົດບາດຕໍ່ການສຶກສາມາຕັ້ງແຕ່ສະໄໝບູຮານ,ແນວຄິດທາງດ້ານຈິດຕະວິທະຍາໃນໄລຍະທຳອິດ ເປັນແນວຄິດທີ່ແຊກຊ້ອນຢູ່ໃນຫຼັກການທາງປັດຊະຍາເປັນສ່ວນໃຫຍ່ ແລະ ໄດ້ແຍກອອກມາເປັນຈິດຕະວິທະຍາໃນແງ່ວິທະຍາສາດຢ່າງຊັດເຈນໃນປີຄສ 1879. ເມື່ອທ່ານວຸ່ນໄດ້ເປີດຫ້ອງທົດລອງທາງຈິດຕະວິທະຍາຂຶ້ນແຫ່ງທຳອິດຂອງໂລກທີ່ປະເທດເຢຍລະມັນ. ຫຼັງຈາກນັ້ນ, ຈິດຕະວິທະຍາການສຶກສາກໍ່ໄດ້ກຳເນີດຂຶ້ນໃນເມື່ອທ່ານ ເຈມ ໄດ້ພະຍາຍາມປະຍຸກຫຼັກສູດຈິດຕະວິທະຍາໄປໃຊ້ໃນຫ້ອງຮຽນ, ໃນຂະນະດຽວກັນທ່ານທອນໄດກໍ່ໄດ້ສຶກສາຫຼັກການຮຽນຮູ້ ໃນ

ຫ້ອງທົດລອງ ແລະ ໄດ້ຂຽນໜັງສືຈິດຕະວິທະຍາການສຶກສາ ເຜີຍແຜ່ເປັນຄັ້ງທຳອິດ ຢູ່ໃນຕົ້ນສາຕະວັດທີ 20.

ຈິດຕະວິທະຍາການສຶກສາ ແມ່ນວິທະຍາສາດສາຂາທີ່ຂ້ອນຂ້າງຍັງໃໝ່ ແຕ່ກໍ່ມີພັດທະນາການຢ່າງໄວວາທັງມີຄວາມສຳຄັນຕໍ່ການສຶກສາເປັນຢ່າງຍິ່ງ.ປະຈຸບັນ ວິທະຍາສາດສາຂານີ້ ໄດ້ມີເນື້ອໃນ, ວິທີການສອນຂອງຕົນເອງຢ່າງຈັດເຈນແລະ ເປັນວິທະຍາສາດທີ່ເຊື່ອມໂຍງລະຫວ່າງຈິດຕະວິມະຍາກັບການສຶກສາ ເຊິ່ງມີບົດບາດສຳຄັນຢ່າງຍິ່ງຢູ່ໃນຂະບວນການພັດທະນາຜູ້ຮຽນໃຫ້ມີຄວາມຈະເລີນງອກງາມຕາມເປົ້າໝາຍຂອງການສຶກສາ.

## 2. ຄວາມຮູ້ເບື້ອງຕົ້ນກ່ຽວກັບຄວາມເປັນຄູ

ພາລະກິດທີ່ສຳຄັນຂອງຜູ້ປະກອບອາຊີບຄູແມ່ນ " ການສອນ" ການສອນເປັນຂະບວນການສະເພາະຕົວ ແລະ ມີຄວາມຊັບຊ້ອນ ໂດຍປົກກະຕິການສອນການສອນເປັນຂະ ບວນການທີ່ປະສົມປະສານລະຫວ່າງ " ວິທະຍາສາດ ແລະ ສິລະປະ" ຂະບວນການບາງຢ່າງຕ້ອງ ອາໄສອົງປະກອບທາງດ້ານຈິດວິໄສ (Subjective Factors) ເອີ້ນວ່າອົງປະກອບທາງດ້ານຄວາມ ສາມາດ ແລະ ບຸກຄະລິກກະພາບສ່ວນຕົວຂອງຄູ ແລະ ບາງສ່ວນຕ້ອງອາໄສຂໍ້ມູນທາງວັດຖຸວິໄສ (Objective Data) ເອີ້ນວ່າອົງປະກອບທາງດ້ານຄວາມຮູ້ໃນຫຼັກວິຊາການທີ່ໄດ້ສຶກສາຮໍ່ຮຽນມາ - ຈາກສະຖາບັນການສຶກສາ ຫຼື ຈາກການເຝິກອົບຮົມ, ການໃຊ້ອົງປະກອບທາງດ້ານຈິດວິໄສ ຫຼື ສິລະປະ ແລະ ຂໍ້ມູນທາງດ້ານວັດຖຸວິໄສ ຫຼື ວິທະຍາສາດນັ້ນ ຈະເຫັນໄດ້ຈາກຜູ້ເປັນຄູສອນບາງ ຄົນທີ່ເປັນຄູສອນໃຫມ່ໆເຊິ່ງຍັງບໍ່ທັນມີຄວາມຮູ້ ແລະ ປະສົບການ ຄູເຫຼົ່ານັ້ນໄດ້ໃຊ້ວິທີການບາງ ຢ່າງທີ່ບໍ່ເປັນໄປຕາມຫຼັກວິຊາການ ແຕ່ກໍ່ສາມາດເຮັດໃຫ້ນັກຮຽນໃນຫ້ອງຮຽນສາມາດເຂົ້າໃຈໄດ້ ນີ້ສະແດງໃຫ້ເຫັນວ່າຄູໄດ້ນາໍໃຊ້ສິລະປະ, ຄວາມສາມາດບຸກຄະລິພາບສະເພາະຕົວມາໃຊ້ໃນ ການສິດສອນ ແຕ່ ກົງກັນຂ້າມ ຄູທີ່ມີຄວາມຮູ້ ຄວາມສາມາດໃນຫຼັກວິຊາການຢ່າງຄົບຖວ້ນ ມາ ໃຊ້ໃນການຈັດການຮຽນ - ການສອນເພື່ອໃຫ້ເກີດປະສິດທິພາບດີ

ການເປັນຄູບໍ່ພຽງແຕ່ມີຄວາມຮູ້ໃນຫຼັກວິຊາການກໍ່ສາມາດເປັນຄູທີ່ດີໄດ້ແຕ່ຕ້ອງອາໄສ ແຮງຈູງໃຈຫຼາຍດ້ານມາປະກອບເຊັ່ນ: ມີຄວາມຮູ້ດ້ານຫຼັກວິຊາທີ່ຈະສອນ, ມີຄວາມສາມາດໃນ ການສອນ, ມີຄວາມຮັກອາຊີບຄູ (ຮັກການສອນ) ມີຄວາມເຕັມໃຈໃນການບໍລິການ (Service Mind) ແລະ ມີຄວາມຮັກເມດຕາຕໍ່ນັກຮຽນ

ດັ່ງນັ້ນ, ຜູ້ທີ່ຈະກ້າວເຂົ້າສູ່ຊີວິດຄູຈ ໍາເປັນຕ້ອງໄດ້ຮັບການເຝິກຝົນອົບຮົມເພື່ອໃຫ້ມີຄວາມ ຮູ້ຄວາມເຂົ້າໃຈຫຼາຍສິ່ງຫຼາຍຢ່າງກ່ຽວກັບຄູເຊັ່ນ:ເນື້ອໃນທີ່ຈະນຳໄປສອນ ຜູ້ຮຽນລະບຽບວິທີ ການທີ່ເຫມາະສົມກັບລັກສະນະວິຊາຕ່າງໆການປະຕິບັດຕົນໃຫ້ເຫມາະສົມກັບຄວາມເປັນຄູ ແລະ ການຍຶດຖືປະຕິບັດຕາມຈັນຍາບັນແຫ່ງວິຊາຊີບຄູ ເຖິງຢ່າງໃດກໍ່ຕາມເມື່ອສາໍເລັດການສຶກສາ ອອກໄປເປັນຜູ້ປະກອບອາຊີບຄູຕາມສະຖານການສຶກສາຕ່າງໆກໍ່ຕ້ອງໄດ້ຮັບການພັດທະນາຢ່າງ ຕໍ່ເນື່ອງ ເຮັດໃຫ້ຜູ້

ປະກອບອາຊີບຄູມີຄວາມຮູ້, ຄວາມສາມາດທັນສະໄໝ ສິ່ງສໍາຄັນຄືໂລກ ປັດຈຸບັນໄດ້ວິວັດທະນາການໄປສູ່ຍຸກໂລກາພິວັດ ດັ່ງນັ້ນ, ຜູ້ເປັນຄູສອນທຸກຄົນຈິ່ງຈ ໍາເປັນຕ້ອງໄດ້ ຮັບການພັດທະນາຢູ່ຕະຫຼອດເວລາ

ພາລະກິດທີ່ສໍາຄັນທີ່ເປັນຄວາມຮູ້ເບື້ອງຕົ້ນສໍາລັບການພັດທະນາສູ່ຄວາມເປັນອາຊີບຄູ ແມ່ນຜູ້ກາ ໍລັງຈະເຂົ້າສູ່ວິຊາຊີບຄູຜູ້ທີ່ປະຕິບັດໜ້າທີ່ປະຈຸບັນ ແລະ ພາກສ່ວນທີ່ມີໜ້າທີ່ໃນການສົ່ງ ເສີມ ແລະ ພັດທະນາວິຊາຊີບຄູຄວນມີຄວາມຮູ້ ຄວາມເຂົ້າໃຈຄື:

- ຄວາມໝາຍຂອງການພັດທະນາ
- ຄວາມສາຄັນຂອງການພັດທະນາຄູ
- ຫຼັກການພັດທະນາຄູ

### 2.1. ອົງປະກອບຂອງຄວາມເປັນຄູ

ຜູ້ສອນ ຫຼື ຄູ ຖືໄດ້ວ່າມີຄວາມສໍາຄັນຫຼາຍຕໍ່ການປະກອບອາຊີບຄູ ຊຶ່ງສົມຄວນຫລາຍຕໍ່ຄູທີ່ຈະຮູ້ ແລະ ເຂົ້າໃຈໃນຄວາມສໍາຄັນຂອງມັນ ເພື່ອຈະໄດ້ຈັດການກັບຕົວເອງໃຫ້ເໝາະສົມ ຊຶ່ງອົງປະກອບເຫຼົ່ານີ້ມີດັ່ງຕໍ່ໄປນີ້:




### 1) ຄວາມຮູ້ຄວາມເຂົ້າໃຈເນື້ອໃນຂອງວິຊາທີ່ຈະສອນ

ຄວາມຮູ້ຄວາມເຂົ້າໃຈໝາຍເຖິງ: ການເຂົ້າເຖິງແກ່ນເນື້ອໃນທິດສະດີຫຼັກການຕ່າງໆ ເຊິ່ງໃນບາງວິຊາຄູຈະກ່າວວ່າຄວາມຄິດລວມຍອດຂອງເນື້ອໃນນັ້ນເອງ, ຄູຈະສອນເລື່ອງຫຍັງຈະຕ້ອງເຂົ້າໃຈຊັດເຈນ ຖ້າຫາກຄູສອນບໍ່ຮູ້ຈະແຈ້ງເນື້ອໃນແລ້ວກໍ່ຈະນໍາໄປສູ່ຄວາມຫຍຸ້ງຍາກແກ່ຜູ້ຮຽນ ຫຼື ເຮັດໃຫ້ນັກຮຽນເຂົ້າໃຈແບບຜິດໆຕໍ່ບົດຮຽນ...

### 2) ບຸກຄະລິກຂອງຄູ

ບຸກຄະລິກກະພາບໝາຍເຖິງລັກສະນະລວມຂອງບຸກຄົນໃນດ້ານຊີວິດສ່ວນຕົວ,ໃນດ້ານໜ້າທີ່ວຽກງານ ແລະ ໃນສັງຄົມທົ່ວໄປນັ້ນເປັນພຽງຄວາມໝາຍລວມໆ.ໂດຍທົ່ວໄປແລ້ວບຸກຄະລິກກະພພາບໝາຍເຖິງຮູບຮ່າງລັກສະນະ,ການແຕ່ງກາຍ,ກິລິຍາທ່າທີ,ຄວາມສາມາດ,ການສະແດງອອກທາງດ້ານອາລົມ ແລະ ຜົນໄດ້ຮັບຈາກປະສົບການຕ່າງໆ. ນອກຈາກຂອງຄູແບ່ງອອກໄດ້ເປັນ 5 ດ້ານລຸ່ມນີ້:

❖ **ດ້ານກາຍຍະພາບ:**

ໝາຍເຖິງຮູບຮ່າງໜ້າຕາ, ກິລິຍາທ່າທາງ ແລະ ການຕ່າງກາຍກໍ່ເປັນສ່ວນສຳຄັນຄູທີ່ມີບຸກຄະລິກກະພາບດ້ານກາຍຍະພາບນີ້ຈະເປັນໜ້ານັບຖື ແລະ ເຊື່ອຖືຕໍ່ນັກຮຽນ ແລະ ມີໂອກາດປະສົບຜົນສຳເລັດໃນການຢູ່ຮ່ວມກັບນັກຮຽນຫລາຍກວ່າຄູທີ່ມີບຸກຄະລິກກະພາບດ້ານກາຍຍະພາບດ້ານລົບບໍ່ເປັນລະບຽບ ແລະ ບໍ່ເປັນແບບຢ່າງແກ່ນັກຮຽນ ຫາກຈະເວົ້າສະເພາະໃນດ້ານການແຕ່ງກາຍແລ້ວອາດຈະສະຫຼຸບໄດ້ວ່າ ການແຕ່ງກາຍທີ່ເໝາະສົມທີ່ສຸດຂອງຄູເຊັ່ນວ່າ: ແຕ່ງກາຍສະອາດເປັນລະບຽບຮຽບຮ້ອຍຄູດີໜ້ານັບຖື.

❖ **ດ້ານວາຈາ:**

ໝາຍເຖິງການສະແດງອອກໂດຍທາງວາຈາທີ່ດີຂອງຄູ ຫຼື ຄຳເວົ້າດ້ວຍຖ້ອຍຄຳທີ່ຖືກຕ້ອງສຸພາບອ່ອນໂຍນ, ຊັດເຈນ ເໝາະສົມກັບວຸດທິພາວະຂອງນັກຮຽນ.

❖ **ດ້ານສະຕິປັນຍາ:**

ສະຕິປັນຍາແມ່ນຄວາມສາມາດຂອງບຸກຄົນໃນການຄິດ, ການກະທຳ ແລະ ການແກ້ໄຂບັນຫາຕ່າງໆທັງສິ່ງທີ່ເປັນຮູບປະທຳ ແລະ ນາມມະທຳໄດ້ຢ່າງມີປະສິດທິພາບ.

❖ **ດ້ານອາລົມ:**

ໝາຍເຖິງການຄວບຄຸມອາລົມໄດ້ດີບໍ່ສະແດງອອກໃນຄວາມຮູ້ສຶກຕ່າງໆໄດ້ງ່າຍຍາກເກີນໄປບໍ່ວ່າຈະເປັນອາລົມດີໃຈ, ອາລົມຍາກຮ້າຍ, ອາລົມເສົ້າ ຫຼື ອາລົມແບບຕ່າງໆຕາມມາກໍ່ຕາມ ຄູທີ່ມີຄວາມສາມາດທາງອາລົມຄືຄູທີ່ມີອາລົມດີ, ໝັ້ນຄົງ ສະເໝີຕົ້ນສະເໝີປາຍ. ເຊິ່ງສະແດງອອກໃຫ້ເຫັນທາງສີໜ້າ , ຕາ, ທ່າທີ ແລະ ຄຳເວົ້າໃຫ້ນັກຮຽນຮັບຮູ້.

❖ **ດ້ານຄວາມສົນໃຈ:**

ໝາຍເຖິງຄວາມກະຕືລືລົ້ນທີ່ຈະຮັບຮູ້ເລື່ອງ ຫຼື ຄວາມຮູ້ຕ່າງໆຂອງສິ່ງແວດລ້ອມອ້ອມຕົວ ແລະ ສັງຄົມ, ຄູທີ່ມີຄວາມສົນໃຈກວ້າງຂວາງຈະເປັນຄູທີ່ສາມາດໃຊ້ຄຳເວົ້າ ຫຼື ການປະພຶດໃຫ້ຖືກໃຈຄົນໄດ້ຫຼາຍລັກສະນະ ຊຶ່ງເປັນໄປຕາມຫຼັກການຂອງການສື່ສານຄວາມຄິດວ່າບຸກຄົນທີ່ມີຄວາມສົນໃຈກົງກັນຈະເຂົ້າໃຈກັນດີ ແຕ່ວ່ານັກຮຽນມີຈຳນວນຫຼາຍແນ່ນອນຄວາມຄິດຄວາມສົນໃຈຫຼາກຫຼາຍໄປນຳກັນ ສະນັ້ນຄູຕ້ອງມີຄວາມສົນໃຈກວ້າງຂວາງເປີດໂອກາດໃຫ້ທຸກຄົນເທົ່າທຽມກັນ.

**3) ຄວາມສາມາດໃນການສອນ.**

ຄວາມສາມາດການສອນໝາຍເຖິງຄວາມສາມາດຂອງຄູເຮັດໃຫ້ນັກຮຽນເກີດການຮຽນຮູ້ຕາມຈຸດປະສົງທີ່ຄູຕ້ອງການຈະສອນ ທັງນີ້ຄວາມໝາຍຂອງການສອນບໍ່ໄດ້ໝາຍເຖິງສະເພາະແຕ່ການຖ່າຍທອດຈາກຄູໄປສູ່ນັກຮຽນເທົ່ານັ້ນແຕ່ຍັງໝາຍເຖິງຄວາມສາມາດໃນການເຮັດໃຫ້ນັກຮຽນເກີດມີອາການຍາກຮູ້ຍາກເຫັນຍາກລົງມືເຮັດໃນກິດຈະກໍານັ້ນໆ. ດ້ວຍຄວາມສາມາດຂອງຄູເກີດຂື້ນຈາກເຫດປັດໄຈຕ່າງໆດັ່ງຕໍ່ໄປນີ້:

❖ **ທັດສະນະຄະຕິຕໍ່ວິຊາຊີບ:**

ໝາຍເຖິງການມີໃຈຕໍ່ອາຊີບຄູວ່າເປັນອາຊີບທີ່ສໍາຄັນຕໍ່ສັງຄົມເປັນອາຊີບໃນລະດັບວິຊາຊີບທີ່ຕ້ອງອາໄສຄວາມຮູ້, ຄວາມສາມາດຫຼາຍໆດ້ານ, ບຸກຄົນທີ່ປະກອບອາຊີບຄູໂດຍມີທັດສະນະຄະຕິທີ່ດີຕໍ່ວິຊາຊີບຄູຍ່ອມມີໂອກາດທີ່ຈະສອນໄດ້ດີກວ່າບຸກຄົນທີ່ດູໝິ່ນຕໍ່ອາຊີບຕົນເອງ ຫຼື ເບື່ອໜ່າຍຕໍ່ວິຊີບຄູ.

❖ **ທັດສະນະຄະຕິຕໍ່ນັກຮຽນ, ມີຄວາມເມດຕາ, ປາດຖະໜາດີຕໍ່ນັກຮຽນ:**

ປາດຖະໜາຈະໃຫ້ເຂົາເກີດການຮຽນຮູ້ໃນສິ່ງທີ່ຄູສອນມີຄວາມຄິດເຊື່ອວ່ານັກຮຽນກໍ່ມີຄວາມປາດຖະໜາທີ່ຈະຮຽນຮູ້ໃນສິ່ງທີ່ຄູຈະສອນເຊັ່ນດຽວກັນ.

❖ **ຄວາມເຂົ້າໃນໃນຫຼັກສູດ ແລະ ເຂົ້າໃຈໃນວັດຖຸປະສົງ:**

ແມ່ນຂອບເຂດເນື້ອໃນຂອງລຫຼັກສູດຢ່າງຊັດເຈນ, ບໍ່ສະນັ້ນແລ້ວກໍ່ຍ່ອມບໍ່ສາມາດພານັກຮຽນໄປສູ່ເປົ້າໝາຍໃນການສອນ ຫຼື ອາດສອນນອກເລື່ອງ.

❖ **ຄວາມຮູ້ຄວາມເຂົ້າໃຈດ້ານຈິດຕະວິທະຍາພັດທະນາການ:**

ແມ່ນຮູ້ລັກສະນະທໍາມະຊາດຂອງຜູ້ຮຽນລວມເຖິງດ້ານຮ່າງກາຍ, ຈິດໃຈ, ສະຕິປັນຍາ, ອາລົມ ແລະ ສັງຄົມ.

❖ **ຄວາມຮູ້ຄວາມເຂົ້າໃຈດ້ານຈິດຕະວິທະຍາການຮຽນຮູ້ ແລະ ຈິດຕະວິທະຍາການສອນ:**

ຮູ້ແລ້ວວ່າການຮຽນຮູ້ໂດຍມີສ່ວນຮ່ວມ ຍ່ອມເກີດຜົນຫຼາຍກວ່າການຮຽນຮູ້ໂດຍການຟັງຢ່າງດຽວ ການຮຽນຮູ້ຕອງຄ່ອຍເປັນຄ່ອຍໄປ.

❖ **ຄວາມສາມາດໃນການໃຊ້ສື່ສານຄວາມຄິດກັບນັກຮຽນ:**

ໝາຍເຖິງ ການເວົ້າ, ການຟັງ, ການຂຽນ, ການອ່ານ ແລະ ການສື່ສານຄວາມຄິດດ້ວຍສີໜ້າທ່າທີໂດຍສະເພາະແມ່ນຄວາມສາມາດໃນການຮັບຟັງຄວາມຄິດ, ຄວາມສົນໃຈ ແລະ ຄວາມຕ້ອງການຂອງນັກຮຽນ, ການອະທິບາຍ, ການຖາມ ແລະ ການຕອບຄໍາຖາມຂອງນັກຮຽນ. ຄືເປັນທັກສະພື້ນຖານທີ່ສໍາຄັນແມ່ນການສອນ

❖ **ຄວາມສາມາດໃນການໃຊ້ສື່ການສອນ:**

ໝາຍເຖິງຄວາມສາມາດທີ່ຈະຄິດ ແລະ ເລືອກໃຊ້ສື່ປະກອບການສອນເພື່ອໃຫ້ນັກຮຽນເກີດການຮຽນຮູ້ຢ່າງມີປະສິດທິພາບ. ໝາຍຄວາມວ່ານັກຮຽນເກີດການຮຽນຮູ້ໄດ້ຫຼາຍໃນໄລຍະເວລາສັ້ນໆໂດຍທີ່ຄູ ແລະ ນັກຮຽນບໍ່ເມື່ອຍ ຫຼື ໜ້າເບື່ອຕໍ່ບົດຮຽນ, ຊຶ່ງຈະເປັນການໃຊ້ສື່ທີ່ເໝາະສົມ ແລະ ຫຼາຍແບບອີງຕາມບົດຮຽນ.

❖ **ຄວາມສາມາດໃນການວັດ ແລະ ປະເມີນຜົນ:**

ເປັນເຄື່ອງມືທີ່ສຳຄັນທີ່ຊ່ວຍໃຫ້ນັກຮຽນ ແລະ ຄູຮູ້ວ່າການຮຽນການສອນນັ້ນບັນລຸຕາມຈຸດປະສົງ ຫຼື ບໍ່. ການວັດຜົນທິດສະດີໃນການຮຽນຮູ້ນັ້ນ ຄູຜູ້ສອນຖືເປັນບຸກຄົນທີ່ມີບົດບາດຫຼາຍທີ່ສຸດ ເພາະບຸກຄົນເພາະບຸກຄົນທີສາມຫຼື ບຸກຄົນພາຍນອກຍ່ອມບໍ່ເຂົ້າໃຈເຖິງປັດໄຈ ແລະ ກົນໄກຂອງການຮຽນການສອນນັ້ນ. ເມື່ອຄູສອນມີຄວາມສາມາດໃນການວັດ ແລະ ປະເມີນຜົນ ຕ້ອງສາມາດບອກໄດ້ວ່າຜົນຂອງການຮຽນການສອນເປັນແນວໃດ

ເລື່ອງທີ່ບໍ່ໜ້າຈະເກີດຂຶ້ນໃນຂະບວນການຮຽນການສອນກໍ່ຄື ນັກຮຽນຖືກປະເມີນວ່າບໍ່ບັນລຸຕາມວັດຖຸປະສົງຂອງການຮຽນ ທັງທີ່ນັກຮຽນມີຄວາມຕັ້ງໃຈຮຽນຮູ້ ກົງກັນຂ້າມນັກຮຽນບາງຄົນພັດຖືກປະເມີນໄດ້ຕາມເປົ້າທັງທີ່ບໍ່ມີຄວາມໃສ່ໃຈຕໍ່ການຮຽນ ຫຼື ຮຽນອ່ອນ.

## 2.2. ຄວາມໝາຍຂອງຄຳວ່າຄູ ແລະ ອາຈານ

ເຮົາມາຮູ້ຈັກຄວາມຫມາຍຂອງຄູ, ກ່ອນອື່ນເຮົາຮູ້ວ່າຄູຄົນທຳອິດຂອງເຮົາທຸກຄົນ ຄືພໍ່ແມ່ເຮົານັ້ນເອງໃນກໍລະນີຄົນທີ່ເກີດມາບໍ່ເຫັນຫນ້າພໍ່ແມ່ກໍ່ໃຫ້ຖືເອົາຜູ້ທີ່ອຸປະກາລະລ້ຽງເບິ່ງເຮົາມາເປັນຄູທຳອິດ ແລະ ເຮົາຄວນເຂົ້າໃຈວ່າ "ທຸກຄົນເກີດມາຕ້ອງມີຄູ ແລະ ທຸກຄົນຕ້ອງເປັນຄູ

ຄູຄື ບຸກຄົນທີ່ມີຫນ້າທີ່ ຫລື ມີອາຊີບໃນການສອນນັກຮຽນ ກ່ຽວກັບວິຊາຄວາມຮູ້ ຫຼືການຄິດ ການອ່ານ ທັງໝົດເຖິງການປະຕິບັດ ແລະ ແນວທາງໃນການເຮັດວຽກງານ ໂດຍວິທີໃນການສອນຈະແຕກຕ່າງກັນອອກໄປໂດຍຄຳນຶງເຖິງພື້ນຖານຄວາມຮູ້ ຄວາມສາມາດ ແລະ ເປົ້າໝາຍຂອງນັກຮຽນແຕ່ລະຄົນ ຄຳວ່າ "ຄູ" ມາຈາກສັບພາສາສັນສະກິດວ່າ "ຄຸຣຸ" ແລະ ພາສາບາລີ "ຄຣຸ, ຄຸຣຸ"

### 1) ຄວາມໝາຍຂອງຄູ



ໃນພາສາບາລີວ່າຄຸຣຸ – ຄຣຸແປວ່າ ໜັກ , ສຽງໃນພາສາສັນສະກິດວ່າ ຄຸຣຸ ແປວ່າ ໃຫຍ່, ຕະໜັກ (ຄຳສັບເດີມສັນສະກິດ ແປວ່າ ຄາຣວະ) (ໃນມຸງຄຸນຊີວິດ ຄຳວ່າ ຄຣຸ ຫຼື ຄູນີ້ແປວ່າ ຕະໜັກ)

- ຄຳວ່າຄູທີ່ແປວ່າ ໜັກນັ້ນຫມາຍເຖິງ: ຄົນທີ່ຈະມາເປັນຄູນັ້ນຈະຕ້ອງຜ່ານການສຶກສາຮ່ຳຮຽນມາຢ່າງໜັກ
- ຄຳວ່າຄູທີ່ແປວ່າຕະໜັກນັ້ນໝາຍເຖິງ: ການຕະໜັກຄຸນງາມຄວາມດີຂອງຄູ.

**ອຳໄພ ສຸຈະລິດກຸນ ເວົ້າວ່າ ຄຳວ່າ "ຄູ" ແລະ "ຄູບາ".** ໃນສະໄໝບູຮານ ໝາຍເຖິງ ພະສົງຜູ້ເຮັດຫນ້າທີ່ສອນກຸນບຸດທຸກລະດັບອາຍຸ ຕັ້ງແຕ່ໄວເດັກ ຈົນເຖິງໄວລຸ້ນ ສອນທັງດ້ານອັກສອນ ທັງ ພາສາບາລີ ແລະ ສັນສະກິດ ສອນໃຫ້ເປັນຄົນດີມີອິຊາຊີບ ຕະຫລອດຈົນຄວາມຮູ້ທາງພະພຸດສາດສະຫນາ ເມື່ອສິດມີອາຍຸຄົບບວດແລ້ວ ກໍຍັງຄົງສຶກສາໃນວັດ ຫລືສຳນັກນັ້ນໆ ຕໍ່ໄປ ຈົນມີຄວາມຮູ້ຄວາມຊຳນານ ສາມາດ

ຖ່າຍທອດວິຊາທີ່ໄດ້ຮັບການສັ່ງສອນຝຶກຝົນຈາກຄູບາຂອງຕົນໃຫ້ແກ່ສິດລຸ້ນຫຼັງຂອງສຳນັກຕໍ່ໄປ ຫລື ອາດລາໄປສະແຫວງຫາຄວາມຮູ້ຄວາມຊຳນານຕໍ່ຈາກພະສົງ ຫລື ຄູບາ ຫຼື ສຳນັກອື່ນ ເມື່ອຊ່ຽວຊານແລ້ວ ກໍກັບມາຊ່ວຍສອນໃນສຳນັກເດີມຂອງຕົນ ຈົນເປັນຄູບາສືບທອດຕໍ່ໄປຈາກແຫຼ່ງອ້າງອີງອື່ນຄູບາຄື:

- ຄູເປັນຜູ້ນຳທາງສິດໄປສູ່ເຈົ້າທຳຊັ້ນສູງ
- ຄູຄື ຜູ້ອົບຮົມສັ່ງສອນຖ່າຍທອດວິຊາຄວາມຮູ້ໃຫ້ແກ່ສິດເປັນຜູ້ມີຄວາມໜັກແໜ້ນແກ່ການເຄົາລົບຂອງລູກສິດ
- ຄູ ຄືຜູ້ປະກອບອາຊີບຢ່າງໜຶ່ງທີ່ເຮັດຫນ້າທີ່ສອນ ມັກໃຊ້ກັບຜູ້ສອນໃນລະດັບຕ່ຳກວ່າວິທະຍາໄລ ແລະ ມະຫາວິທະຍາໄລ ຫລື ສະຖາບັນມັດທະຍົມສຶກສາ.

**ຮັງສັນຄ໌ ແສງສຸກ ອະດີດອະທິການບໍດີມະຫາວິທະຍາໄລຣາມຄຳແຫງ (2550: 38) ໄດ້ໃຫ້ຄວາມເຫັນວ່າ "ຄູ" ຄື:**

ຄູ ຄື ຜູ້ທີ່ໃຫ້ຄວາມຮູ້ບໍ່ຈຳກັດທຸກທີ່ທຸກເມື່ອ ຄູຕ້ອງເຕັມໄປດ້ວຍຄວາມຮູ້ ແລະ ຮູ້ຈັກ ຂວນຂວາຍຫາອີງປະກອບຄວາມຮູ້ໃໝ່ໆ ສະສົມຄວາມດີ ມີບາລະມີຫລາຍ ແລະ ຄູທີ່ດີຈະຕ້ອງບໍ່ປິດບັງຄວາມຮູ້ ຄວນມີຈິດ ແລະ ວິນຍານຂອງຄວາມເປັນຄູ ຄູຄື: ຜູ້ເຕີມເຕັມ ການທີ່ຄູຈະເປັນຜູ້ເຕີມເຕັມໄດ້ ຄູຄວນຈະເປັນຜູ້ສະແຫວງຫາຄວາມຮູ້ ຕ້ອງວິເຄາະ, ວິໄຈ, ວິຈານ ແລະ ຄວາມຮູ້ຕ່າງໆ ເຂົ້ານຳກັນ ຄູ ຄື ຜູ້ທີ່ມີເມດຕາຈະຕ້ອງສອນເຕັມທີ່ໂດຍບໍ່ມີການຂີ້ຄ້ານ ຫລື ປິດບັງບໍ່ໃຫ້ຄວາມຮູ້ເຕັມທີ່ ຄູຕ້ອງບໍ່ລຳອຽງບໍ່ບຽດບຽນສິດ.

**ໃນຫນັງສື ພົດນະ – ສາຣານຸກຣົມໄທ ເປື້ອງນະ ນະຄອນ (2516: 89) ໄດ້ໃຫ້ຄວາມຫມາຍຂອງຄຳວ່າ "ຄູ" ໄວ້ດັ່ງນີ້:**

- ຜູ້ມີຄວາມໜັກແໜ້ນ
- ຜູ້ຄວນແກ່ການເຄົາລົບຂອງສິດ
- ຜູ້ສັ່ງສອນ

**ຄາຣ໌ເຕີຣ໌ ວີ ກູ໊ດ (Carter V. Good. 1973: 586) ໄດ້ໃຫ້ຄວາມຫມາຍຂອງຄຳວ່າ "ຄູ" (teacher) ໄວ້ດັ່ງນີ້ ຄື:**

- ຄູແມ່ນຜູ້ທີ່ມີຄວາມສາມາດໃຫ້ຄຳແນະນຳ ເພື່ອໃຫ້ເກີດປະໂຫຍດທາງການຮຽນ ສາລັບນັກຮຽນ ຫລື ນັກສຶກສາໃນສຖາບັນການສຶກສາຕ່າງ ໆ ທັງຂອງລັດ ແລະ ເອກະຊົນ
- ຄູແມ່ນຜູ້ທີ່ມີຄວາມຮູ້ປະສົບການແລະມີການສຶກສາຫລາຍຫລືດີເປັນພິເສດ ຫລືມີ ທັງປະສົບການແລະການສຶກສາດີເປັນພິເສດໃນສາຂາໃດສາຂາໜຶ່ງທີ່ສາມາດຊ່ວຍໃຫ້ຜູ້ອື່ນເກີດ ຄວາມຈະເລີນກ້າວໜ້າໄດ້

- ຄູແມ່ນຜູ້ທີ່ຮຽນສໍາເລັດຫຼັກສູດວິຊາຊີບຈາກສຖາບັນການຝຶກຫັດຄຣູ ແລະໄດ້ ໃບຮັບຮອງທາງການສອນດ້ວຍ
- ຄູແມ່ນຜູ້ທີ່ເຮັດໜ້າທີ່ສອນໃຫ້ຄວາມຮູ້ແກ່ສິດ

ນອກຈາກນີ້ ຄາວ່າ "ຄູ" ຍັງມີຄວາມຫມາຍອື່ນໆ ໄດ້ອີກ ເຊັ່ນ:

**ກ.** "ຄູ ຄື ປູຊະຍະນີບຸກຄົນ" ໝາຍເຖິງ ຄູທີ່ເສຍສະຫຼະ ເອົາໃຈໃສ່ເພື່ອຄວາມຈະເລີນ ຂອງນັກຮຽນ ຊຶ່ງເປັນບຸກຄົນທີ່ຄວນເຄົາລົບເທີດທູນ.

**ຂ.** "ຄູ ຄື ແມ່ພິມຂອງຊາດ" ໝາຍເຖິງ ການເປັນແບບຢ່າງທີ່ດີຂອງນັກຮຽນທີ່ຈະປະຕິບັດຕົວຕາມແບບຢ່າງຄູ.

**ຄ.** "ຄູ ຄື ຜູ້ແຈວເຮືອຈ້າງ" ໝາຍເຖິງ ອາຊີບຄູເປັນອາຊີບທີ່ບໍ່ກໍ່ໃຫ້ເກີດຄວາມ ລໍ້າລວຍ ຄູຕ້ອງມີຄວາມພໍໃຈໃນຄວາມເປັນຢູ່ຢ່າງສະຫງົບຮຽບຮ້ອຍຢ່າຫວັ່ນໄຫວຕໍ່ລາບຢຶດຄວາມສະດວກສະບາຍ ໂດຍສະຫລຸບອາດກ່າວໄດ້ວ່າ ຄູ ຄື ຜູ້ທີ່ເຮັດໜ້າທີ່ສອນໃຫ້ນັກຮຽນເກີດຄວາມຮູ້ ແລະ ມີເຈົ້າທໍາຈະລິຍະທໍາທີ່ດີນໍາປະໂຫຍດໃຫ້ແກ່ສັງຄົມໄດ້ໃນອະນາຄົດ.

**2) ຄວາມໝາຍອາຈານ**

ຄວາມຫມາຍຂອງຄໍາວ່າອາຈານຄໍາວ່າ ຄູກັບອາຈານມັກຈະໃຊ້ຮ່ວມກັນຢູ່ສະເໝີຈົນບາງຄັ້ງເຮົາກໍ່ຄິດວ່າມັນເປັນຄວາມໝາຍດຽວກັນແຕ່ຄວາມຈິງແລ້ວຄໍາເດີມທັງສອງຄໍາແຕກຕ່າງກັນຄໍາສັບເດີມຂອງຄໍາວ່າ "ອາຈານ"ພາສາບາລີວ່າ **"ອາຈາຣຍ"**ພາສາສັນສະກິດວ່າ **ອາຈາຣິຍ** ໝາຍເຖິງຜູ້ເຝິກມາລະຍາດ ຫຼື ຄວບຄຸມໃຫ້ຢູ່ໃນລະບຽບວິໄນອາຈານຄື ຜູ້ສັ່ງສອນວິຊາຄວາມຮູ້.

***ພຸດທະຂ້າທາດພິກຂຸ ກ່າວວ່າ ຄໍາວ່າ "ຄູ"***

ເປັນຄໍາທີ່ສູງຫລາຍ ເປັນຜູ້ເປີດປະຕູທາງວິນຍານ ແລ້ວກໍນໍາໃຫ້ເກີດທາງວິນຍານໄປສູ່ເຈົ້າທໍາເບື້ອງສູງ ເປັນເລື່ອງທາງຈິດໃຈໂດຍສະເພາະ ບໍ່ໄດ້ໝາຍເຖິງເລື່ອງວັດຖຸ.

***ທ່ານ ພຸດທຂ້າທາດພິກຂຸ*** **(2529: 93)** ໄດ້ຈໍາແນກຄວາມຫມາຍຂອງ "ອາຈານ" ເປັນ 2 ແບບຄື:

1 ຄວາມຫມາຍດັ້ງເດີມ ໝາຍເຖິງ ຜູ້ຝຶກມານຢາດ ຫລື ເປັນຜູ້ຄວບຄຸມໃຫ້ຢູ່ໃນລະບຽບ ວິໄນເປັນຜູ້ຖືຮັກສາລະບຽບກົດເກນຕ່າງໆ.

2 ຄວາມຫມາຍປະຈຸບັນ ໝາຍເຖິງ ຖານະຊັ້ນສູງ ຫລື ຊັ້ນໜຶ່ງຂອງຜູ້ທີ່ເປັນຄູໃນຫນັງສືພົດນານຸກຣົມພຸດທະສາດ ສະບັບປະມວນທໍາຂອງພະຣາດວົນມຸນີ (ປຣະຢຸກຕ໌ ປຢຸຕໃຫຍ່) (2528: 185) ອະທິບາຍຄວາມຫມາຍຂອງອາຈານໄວ້ດັ່ງນີ້:

- ຜູ້ປະພຶດການອັນເກື້ອກູນແກ່ສິດ

- ຜູ້ທີ່ສິດເພິ່ງປະພຶດດ້ວຍຄວາມເອື້ອເຟື້ອ
- ຜູ້ສັ່ງສອນວິຊາ ແລະ ອົບຮົມເບິ່ງແຍງຄວາມປະພຶດ.

ຄວາມຫມາຍຂອງຄຳວ່າ "ອາຈານ" ຕາມທັດນະຂອງຊາວຕະເວັນຕົກ ຈະໝາຍເຖິງ ຜູ້ສອນໃນວິທະຍາໄລ ແລະ ມະຫາວິທະຍາໄລທີ່ມີຕຳແໜ່ງຕ່ຳກວ່າລະດັບສາດສະດາຈານ ແລະ ເປັນຜູ້ທີ່ຕ້ອງຮັບຜິດຊອບຕໍ່ການສອນນັກສຶກສາໃຫ້ເກີດຄວາມກ້າວໜ້າຕາມປະສົງສະເພາະຂອງການສຶກສາທີ່ກຳນົດໄວ້ ເມື່ອພິຈາລະນາຄວາມຫມາຍຂອງຄຳວ່າ "ອາຈານ" ຕາມທັດສະນະຂອງຄົນທົ່ວໄປກັບທັດສະນະ ຂອງຊາວຕະເວັນຕົກແລ້ວຈະເຫັນໄດ້ວ່າ ອາຈານຂອງຊາວຕະເວັນຕົກຈະເນັ້ນຄວາມສຳຄັນໄປທີ່ການສອນ ຄືເປັນຜູ້ມີຄວາມຊ່ຽວຊານໃນການສອນສະເພາະດ້ານ ແລະ ເປັນຜູ້ບ່ອນເຮັດວຽກສອນໃນສະຖາບັນການສຶກສາຊັ້ນສູງ ແຕ່ຄວາມຫມາຍຂອງຄຳວ່າ "ອາຈານ" ຕາມທັດນະຂອງຄົນທົ່ວໄປ ຈະມີ ຄວາມຫມາຍກວ້າງກວ່າ ຄືເປັນທັງຜູ້ສອນວິຊາຄວາມຮູ້ ອົບຮົມເບິ່ງແຍງຄວາມປະພຶດ ແລະ ເປັນຜູ້ທີ່ມີ ຖານະສູງກວ່າຜູ້ເປັນຄູ ດັ່ງນັ້ນຈຶ່ງພໍສະຫລຸບຄວາມຫມາຍຂອງຄຳວ່າ "ອາຈານ" ໄດ້ວ່າ "ເປັນຜູ້ຄົ້ນຄວ້າ ວິຊາຄວາມຮູ້ ແລະອົບຮົມຄວາມປະພຶດຂອງລູກສິດ ເປັນຜູ້ມີສະຖານະພາບສູງກວ່າ "ຄູ" ແລະ ມັກ ເປັນຜູ້ບ່ອນເຮັດວຽກສອນໃນລະດັບວິທະຍາໄລ ແລະ ມະຫາວິທະຍາໄລ" ໃນປະຈຸບັນນີ້ ຜູ້ທີ່ເຮັດຫນ້າທີ່ການສອນບໍ່ວ່າຈະມີລັກສະນະລະດັບໃດ ຕໍ່ການສອນໃນລະດັບໃດ ຈະນິຍົມເອົ້າໄດ້ວ່າ "ອາຈານ" ຄືກັນໝົດ ຊຶ່ງບໍ່ແມ່ນເລື່ອງເສຍຫາຍຫຍັງ ໃນທາງກົງກັນຂ້າມ ກັບຈະເປັນການຍົກຍ້ອງ ແລະໃຫ້ຄວາມເທົ່າທຽມກັນກັບຄົນທີ່ປະກອບວິຊາຊີບດຽວກັນ ດັ່ງນັ້ນ ສິ່ງສຳຄັນທີ່ສຸດບໍ່ແມ່ນເປັນຄຳວ່າ "ຄູ" ຫລື "ອາຈານ" ແຕ່ຢູ່ທີ່ການເຮັດຫນ້າທີ່ຂອງຕົນໃຫ້ສົມບູນທີ່ສຸດ.

### 2.3. ຄວາມໝາຍຂອງຄຳທີ່ກ່ຽວຂ້ອງກັບວ່າຄູ ແລະ ອາຈານ

**ຄຳທີ່ມີຄວາມຫມາຍຄ້າຍກັບ ຄູ ມີຫຼາຍຄຳ ເຊັ່ນ:**

1. ອຸປັດຊາ – ທ່ານພຸດທະຂ້າທາດພິກຂຸ ອະທິບາຍຄວາມຫມາຍຂອງ "ອຸປັດຊາຍ໌" ວ່າ ໝາຍເຖິງຜູ້ສອນວິຊາຊີບ ແຕ່ໃນປະຈຸບັນນີ້ ໝາຍເຖິງ ພະເຖະຜູ້ໃຫຍ່ ທີ່ເຮັດຫນ້າທີ່ເປັນຜູ້ອະຊະກຸນບຸດໃນພະພຸດທສາດສະຫນາ.

2. ທິສາປາໂມກ – ໝາຍເຖິງ ອາຈານທີ່ມີຄວາມຮູ້ ແລະ ຊື່ສຽງໂດ່ງດັ່ງ ໃນສະໄໝບູຮານ ຜູ້ມີອັນຈະກິນຈະຕ້ອງສົ່ງຫຼານຂອງຕົນໄປສູ່ສຳນັກ ທິສາປາໂມກຂ໌ ເພື່ອໃຫ້ຮຽນວິຊາທີ່ເປັນອາຊີບ ຫລື ວິຊາຊັ້ນສູງໃນສາຂາວິຊາຕ່າງໆ ເພື່ອກັບໄປເຮັດຫນ້າທີ່ກໍ່ການງານທີ່ສຳຄັນໆ.

3. ບຸນພາຈານຍ໌ ຫລື ບູນພາຈານຍ໌ ຄື ອາຈານເບື້ອງຕົ້ນ ໝາຍເຖິງ ພໍ່ ແມ່ ຊຶ່ງ ຖືວ່າເປັນຄູຄົນທຳອິດຂອງລູກ.

4. ປົນມາຈານຍ໌ ຄື ອາຈານຜູ້ເປັນຊ່ຽວຊານ ຫລື ຍອດຢ້ຽມໃນທາງວິຊາໃດວິຊາໜຶ່ງ

5. ປາຈານຢ໌ ຄື ອາຈານຂອງອາຈານສ່ວນຄຳສັບໃນພາສາອັງກິດທີ່ມີຄວາມຫມາຍຄ້າຍກັບຄຳວ່າ ຄູ ຫລື Teacher ມີຫຼາຍຄຳ ຄື:

**Teacher** ໝາຍເຖິງ ຜູ້ທີ່ເຮັດຫນ້າທີ່ປະຈຳໃນໂຮງຮຽນ ຫລື ສະຖາບັນການສຶກສາຕ່າງໆກົງກັບຄຳວ່າ ຄູ ຫລື ຜູ້ສອນ.

**Instructor** ໝາຍເຖິງ ຜູ້ທີ່ເຮັດຫນ້າທີ່ເປັນຜູ້ສອນໂດຍສະເພາະໃນວິທະຍາໄລ ຫລື ມະຫາວິທະຍາໄລ ກົງກັບຄຳວ່າ ອາຈານ

**Professor** (ໃນປະເທດອັງກິດ) ໝາຍເຖິງ ຕຳແໜ່ງຜູ້ສອນທີ່ຖືວ່າເປັນຕຳແໜ່ງສູງສຸດໃນແຕ່ລະສາຂາວິຊາໃນມະຫາວິທະຍາໄລຕ່າງໆແຕ່ໃນອາເມຣິກາ ແລະ ແຄນາດາໃຊ້ເປັນຄຳນຳໜ້ານາມສຳລັບຜູ້ສອນໃນວິທະຍາໄລ ຫລື ມະຫາວິທະຍາໄລ້ຕ່າງໆ ເຊັ່ນ:

- ຜູ້ຊ່ວຍສາດສະດານຈານ ໃຊ້ຄຳວ່າ Assistant Professor
- ຮອງສາດສະດາາຈານ ໃຊ້ຄຳວ່າ Associate Professor
- ສາດສະດາຈານ ໃຊ້ຄຳວ່າ Professor

**Lecturer** ໝາຍເຖິງ ບຸກຄົນຜູ້ສອນໃນມະຫາວິທະຍາໄລ ຫລື ວິທະຍາໄລ ກົງກັບຄຳວ່າ ຜູ້ບັນລະຍາຍ.

**Tutor** ໝາຍເຖິງ ຜູ້ທີ່ເຮັດຫນ້າທີ່ສອນນັກສຶກສາເປັນກຸ່ມນ້ອຍໆ ຫລື ລາຍບຸກຄົນໂດຍເຮັດວຽກເປັນສ່ວນຫນຶ່ງຂອງຜູ້ບັນລະຍາຍ ຄ້າຍໆກັບຜູ້ສອນເສີມ ຫລື ສອນກວດວິຊາ.

**Sophist** ເປັນພາສາກຣີກບູຮານ ໝາຍເຖິງ ປັດຊະຍາຜູ້ສອນວິຊາຕ່າງໆຄ້າຍກັບຄຳວ່າ “ທິສາປາໂມກຂ໌”

## 2.4. ສິ່ງທີ່ທ້າທາຍໃນການເປັນຄູ

- **ການປັບຕົວ**

ການປັບຕົວຂອງຄູໃຫມ່ແຕ່ລະຄົນຈະແຕກຕ່າງກັນ ແຕ່ກໍ່ມີຄວາມຫຍຸ້ງຍາກຫຼາຍປະການ ທີ່ຄູໃຫມ່ຕ້ອງພົບຄ້າຍຄືກັນເຊັ່ນ:

- ການສອນ ການຄວບຄຸມລະບຽບນັກຮຽນໃນຫ້ອງ

- ການເຮັດວຽກກັບຄູຄົນອື່ນໆ ລວມທັງຜູ້ບໍລິຫານ, ຜູ້ປົກຄອງນັກຮຽນ

### 1) ນັກຮຽນ ແລະ ລະບຽບ

ການປັບຕົວເພື່ອໃຫ້ການເຮັດວຽກກັບນັກຮຽນ ແລະ ການຄວບຄຸມນັກຮຽນໃຫ້ຢູ່ໃນລະບຽບວິໄນເປັນສາຍເຫດສຳຄັນປະການຫນຶ່ງທີ່ເປັນສາຍເຫດເຮັດໃຫ້ຄູໃຫມ່ມີຄວາມກົດດັນບັນຫາຂອງ

ນັກຮຽນເປັນຕົວກຳນົດໃຫ້ເກີດຄວາມຫຍຸ້ງຍາກທາງອາລົມ ຫຼາຍຄົນທີ່ຕັດສິນໃຈ ເລືອກວິຊາຊີບຄູເພາະເປັນຜູ້ທີ່ມີຄວາມສິນໃຈຕໍ່ເຍົາວະຊົນຢ່າງຈິງໃຈ ໃນຂະນະດຽວກັນຫຼາຍຄົນ ອອກຈາກອາຊີບຄູ ຍ້ອນບໍ່ສາມາດປັບຕົວເຂົ້າກັບນັກຮຽນໄດ້ ຢ່າງໃດກໍ່ຕາມຜູ້ປະກອບອາຊີບຄູມີ ຄວາມພະຍາຍາມອົດທົນຕໍ່ການສອນ, ມີຄວາມມຸ່ງຫມັ້ນພັດທະນາອາຊີບຄູຕົນເອງຕໍ່ໄປໃນທີ່ສຸດກໍ່ ຈະມີຄວາມຮັກອາຊີບຄູຕະຫຼອດໄປ.

ສິ່ງທີ່ຄູໃຫມ່ຄວນເອົາໃຈໃສ່ ຄື ການພະຍາຍາມສ້າງຕົນເອງກັບນັກຮຽນເຂົ້າໃຈກັນເປັນເພື່ອນທີ່ຮູ້ໃຈຂອງນັກຮຽນ ຍຸດທະວິທີນີ້ບໍ່ມີປະສິດທິພາບເທົ່າທີ່ຄວນນັກການສຶກສາຕາເວັນຕົກກໍ່ບໍ່ເຫັນດີກັບວິທີດັ່ງກ່າວ ທ່ານ ເຮນສັນ (Hanson,1988) ກ່າວວ່າ ນັກຮຽນບໍ່ຕ້ອງການໃຫ້ຄູ ໃຫມມາເປັນເພື່ອນຂອງຕົນເອງ ຍິ່ງໄປກວ່ານັ້ນນັກຮຽນຕ້ອງການໃຫ້ຄູເປັນຜູ້ແນະນຳ ແລະ ທຳຕົນໃຫ້ເປັນແບບຢ່າງທີ່ດີແກ່ຊີວິດຂອງນັກຮຽນຫຼາຍກວ່າເກົ່າ.

ແຕ່ເຖີງຢ່າງໃດກໍ່ຕາມເມື່ອຄູ ແລະ ນັກຮຽນໄດ້ມີການພົວພັນເຊິ່ງກັນ ແລະ ກັນໄລຍະ ໃດຫນຶ່ງຈະເຮັດໃຫ້ຄວາມສຳພັນລະຫວ່າງຄູ ແລະ ນັກຮຽນເປັນໄປທາງທີ່ດີ ມີຄວາມເຂົ້າໃຈຊ່ວຍ ເຫຼືອເຊິ່ງກັນແລະ ກັນ ດັ່ງກ່າວຂອງ ທ່ານ ອາສຕຣອງ ແລະ ຊາເວດ (Armstrong & Savage,1989) ໄດ້ກ່າວວ່າ: ໃນຊ່ວງໄລຍະເວລາທີ່ດົນພໍສົມຄວນ ຈະເຮັດໃຫ້ມິດຕະພາບ ລະຫວ່າງຄູ ແລະ ນັກຮຽນເປັນໄປໃນທາງບວກເມື່ອນັກຮຽນຍອມຮັບວ່າຄູຂອງຕົນເປັນຜູ້ມີ ລະບຽບວິໄນ ຄູທີ່ຕ້ອງການຮັກສາລະບຽບ ແລະ ຫວັງໃຫ້ນັກຮຽນປະຕິບັດຢ່າງຖືກຕ້ອງຈະສື່ຄວາມຫມາຍທາງວິຊາການໃນເລື່ອງທີ່ສຳຄັນໄດ້ຫຼາຍປະການເຊັ່ນ: ນັກຮຽນມີຄວາມເຊື່ອຢ່າງຈິງ ໃຈວ່າບົດຮຽນທີ່ຄູນຳມາສະເຫນີນັ້ນມີຄວາມຫມາຍສາ ໍຄັນ ແລະ ຄວາມຄາດຫວັງຂອງຄູສອນໃນ ລະດັບສູງຈະສື່ຄວາມຫມາຍຂອງຄູທີ່ມີຕໍ່ຄວາມສາມາດຂອງນັກຮຽນໃນເລື່ອງຕ່າງໆສ້າງໃຫ້ເກີດ ຄວາມເຊື່ອຖືເຊິ່ງກັນ ແລະ ກັນ.

**2) ການເຮັດວຽກຮ່ວມກັບບຸກຄົນອື່ນ**

ຄູສ່ວນຫຼາຍຈະເຮັດວຽກກັບນັກຮຽນ ແຕ່ຄູຍັງມີການພົວພັນກັບຄູສອນອື່ນໆ, ຜູ້ບໍລິຫານ ການສຶກສາ, ຜູ້ປົກຄອງນັກຮຽນ ແລະ ອຳນາດການປົກຄອງທ້ອງຖິ່ນປັດໄຈເຫຼົ່ານີ້ເປັນສິ່ງແວດລ້ອມທີ່ສຳຄັນຂອງຄູໃຫມ່ຈຳເປັນຕ້ອງຮຽນຮູ້ເຂົ້າໃຈ ແຕ່ບາງຄັ້ງຄູໃຫມ່ມີຄວາມຮູ້ສຶກວ່າຕົນເອງມີ ຄວາມຫຍຸ້ງຍາກລຳບາກຫຼາຍໃນການສ້າງສາຍພົວພັນອັນດີລະຫວ່າງຄູສອນວິຊາອື່ນໆ ຄູກໍ່ຄືກັບ ບຸກຄົນທົ່ວໄປທີ່ເຮັດວຽກຮ່ວມກັນ ນອກຈາກເວລາເຮັດວຽກສ່ວນລວມ, ມິດຕະພາບສ່ວນຕົວກັບ ກຸ່ມຄົນທີ່ມີຈິດໃຈກົງກັນຈະມີຄວາມເຂົ້າໃຈກັນດີຂຶ້ນ ແລະ ພັດທະນາສາຍພົວພັນກັບທຸກຄົນໃນ ໂຮງຮຽນໃຫ້ກວ້າງກວ່າເກົ່າ.

ຜູ້ປົກຄອງນັກຮຽນເປັນກຸ່ມຄົນທີ່ມີຄວາມສຳຄັນຕໍ່ການເຮັດວຽກຂອງໃຫມ່ໂດຍສະເພາະແມ່ນຄູທີ່ໄດ້ຮັບເປັນຄູສອນ ໃຫມ່ໆຢູ່ໃນລະດັບການສຶກສາຂັ້ນພື້ນຖານ ຍ້ອນວ່າຜູ້ປົກຄອງເປັນຕົວແທນ ຊຸມຊົນ ບາງຄັ້ງຜູ້ປົກຄອງບາງຄົນເອົາໃຈຍາກ ມັກຈະໃຫ້ຄວາມສົນໃຈຕໍ່ກັບລູກຫຼານຂອງຕົນເອງ ຜູ້ປົກຄອງເຫຼົ່ານີ້ຈະເຫັນຄູເປັນເພື່ອນມິດໃນການພັດທະນາຄວາມຈະເລີນກ້າວຫນ້າດ້ານສ່ວນຕົວ ແລະ ສະຕິປັນຍາໃຫ້ແກ່ລູກຫຼານຕົນເອງ ຜູ້ປົກຄອງສ່ວນຫຼາຍຈະໃຫ້ຄວາມສະນັບສະຫນູນຄູທີ່ໃຫ້ ຄວາມສົນໃຈຕໍ່ລູກ

ຫຼານຂອງຕົນເອງ ດັ່ງນັ້ນ, ຄູໃຫມ່ທີ່ມີລະບຽບວິໄນ, ມີຄວາມຮູ້, ຄວາມສາມາດ ສູງໃຫ້ຄວາມເອົາໃຈໃສ່ຕໍ່ນັກຮຽນຈຶ່ງມີຄວາມສະດວກໃນການສ້າງຄວາມສໍາພັນກັບຜູ້ປົກຄອງ ນັກຮຽນໄດ້ດີ.

ຄູໃຫມ່ຈະບໍ່ສາມາດຮູ້ທຸກສິ່ງທຸກຢ່າງ ໃນມື້ເປີດຮຽນມື້ທໍາອິດຄູໃຫມ່ຈໍາເປັນຕ້ອງພິຈາລະນາຕົນເອງໃນຖານະເປັນຜູ້ຮຽນ ແລະ ຖານະທີ່ເປັນຄູ ຫຼືກລຽງການຕັດສິນຄວາມຂັດແຍ່ງທີ່ຮຸນແຮງ ດ້ວຍຕົນເອງ. ຄູໃຫມ່ຄວນສະແຫວງຫາຄູທີ່ມີປະສົບການເພື່ອເປັນຜູ້ແນະນໍາ, ໃຫ້ຂໍ້ຄິດເຫັນຢ່າງ ເປີດເຜີຍ ແລະ ຍອມຮັບຟັງ ຄູທຸກຄົນໃນໂຮງຮຽນໄດ້ຜ່ານການເປັນຄູໃຫມ່ມາແລ້ວ ຄູເກົ່າຫຼາຍຄົນ ອາດຈະຈົດຈໍປະສົບການເກົ່າໆໄດ້ດີ ແລະ ຍິນດີໃຫ້ຄວາມຊ່ວຍເຫຼືອຄູໃຫມ່.

ຄູໃຫມ່ຄວນຍອມຮັບປີທໍາອິດຂອງການສອນມີຄວາມສໍາຄັນເປັນພິເສດເພາະເປັນເວລາທີ່ຄູໃຫມ່ຈະໄດ້ຮຽນຮູ້ສິ່ງຕ່າງໆກ່ຽວກັບວິຊາຊີບ. ການສອນເປັນພາລະກິດທີ່ເຕັມໄປດ້ວຍຄວາມກັງວົນ, ຄວາມເຄັ່ງຕຶງ, ຄູທຸກຄົນມີຄວາມຕ້ອງການທີ່ຈະພັດທະນາວິຊາການ ເພື່ອຫຼຸດຜ່ອນ ຄວາມກັງວົນດັ່ງກ່າວ ດັ່ງນັ້ນ, ຄູໃຫມ່ຄວນມີກິດຈະກໍາອື່ນໆເຊັ່ນ: ອອກກໍາລັງກາຍ ຫຼື ເຮັດກິດຈະກໍາຕ່າງໆ ທີ່ບໍ່ກ່ຽວຂ້ອງກັບວິຊາການເພື່ອຜ່ອນຄາຍອາລົມ.

❖ ຫຼາຍຄົນເຄີຍເວົ້າຫຼິ້ນວ່າ “ຄູລາວເປັນແບບເປັດ” ຊຶ່ງມີຄວາມໝາຍວ່າ “ບິນກໍໄດ້ແຕ່ບໍ່ສູງ, ລອຍນໍ້າກໍເປັນແຕ່ບໍ່ເກັ່ງ, ແລ່ນທາງບົກກໍໄດ້ແຕ່ກໍຊ້າ...” ຫຼື ເວົ້າແບບໜຶ່ງອີກວ່າ “ອັນໃດກໍເປັນໝົດແຕ່ບໍ່ເກັ່ງຈັກອັນ” ຊຶ່ງມີຄວາມໝາຍໄປໃນທາງລົບນັ້ນເອງ; ແຕ່ໃນອະນາຄົດ (ຕາມທ່າອ່ຽງຂອງພາກພື້ນ ແລະ ສາກົນ) ຄໍາວ່າ “ແບບເປັດ” ຈະມີຄວາມໝາຍໄປໃນທາງບວກ ຍ້ອນວ່າສັງຄົມມະນຸດໄດ້ໃຫ້ຄຸນຄ່າຂອງການມີຊີວິດແຕກຕ່າງຈາກເຄື່ອງກົນຈັກ; ໂດຍພະຍາຍາມສ້າງຄົນໃຫ້ສາມາດຮຽນຮູ້ດ້ວຍຕົນເອງ ເພື່ອພັດທະນາ ແລະ ຊ່ວຍເຫຼືອ ຕົນເອງໃຫ້ສາມາດດໍາລົງຊີວິດໄດ້ໃນສັງຄົມ ທັງປະກອບສ່ວນພັດທະນາສັງຄົມ ແລະ ປະເທດຊາດ; ເພື່ອຢູ່ຮ່ວມກັນ ແລະ ແຂ່ງຂັນກັບປະເທດອື່ນ. ມາເຖິງປະຈຸບັນ, ຄ່ານິຍົມໃນການວັດຜົນລະດັບຄວາມເຂົ້າໃຈຂອງມະນຸດ ມີທ່າອ່ຽງຫຍັບມໍ່ເຂົ້າກັບຄວາມເປັນຈິງຫຼາຍຂຶ້ນ, ໝາຍຄວາມວ່າ “ຄົນຕ້ອງຮຽນຮູ້ເພື່ອນໍາມາໃຊ້ໃນ ຊີວິດປະຈໍາວັນ ຫຼື ໃນລະດັບສູງກ່ວານັ້ນແມ່ນສາມາດນໍາໃຊ້ຄວາມຮູ້ ຢູ່ໃນສະຖານະການໃໝ່ໄດ້”,

ດັ່ງນັ້ນຈຶ່ງຈໍາເປັນຕ້ອງຮຽນຮູ້ຫຼາຍຢ່າງ, ໃຫ້ເຂົ້າໃຈດ້ານໃດໜຶ່ງແບບລົງເລິກ ແລະ ເຂົ້າໃຈການພົວພັນລະຫວ່າງແຕ່ລະດ້ານ ເພື່ອນໍາມາໃຊ້ໃນຊີວິດປະຈໍາວັນ. ຄໍາວ່າ “ມີຄວາມຮູ້ຫຼາຍຢ່າງ, ລົງເລິກສະເພາະດ້ານ, ເຂົ້າໃຈການພົວພັນລະຫວ່າງອົງປະກອບຄວາມຮູ້”, ຂ້າພະເຈົ້າໄດ້ໃຫ້ຄວາມໝາຍວ່າ “ແບບເປັດລອຍນໍ້າເກັ່ງ ຫຼື ເປັດແບບໃໝ່”, ຊຶ່ງມີຄວາມໝາຍແຕກຕ່າງຈາກສັງຄົມທີ່ກໍາລັງເວົ້າຫຼິ້ນໃນປະຈຸບັນ. “ການຮຽນຮູ້ໃນແຕ່ລະຢ່າງແບບບໍ່ມີການພົວພັນກັນ” ແມ່ນຍັງບໍ່ທັນພຽງພໍທີ່ຈະນໍາໄປໃຊ້ໃນຊີວິດປະຈໍາວັນ, ຕົວຢ່າງ ເດັກນ້ອຍຜູ້ໜຶ່ງ ເຂົ້າໃຈກ່ຽວກັບ “ການບວກ, ການລົບ, ການຄູນ ຫຼື ການຫານ” ໃນແຕ່ລະຢ່າງໄດ້ດີ, ແຕ່ບໍ່ເຂົ້າໃຈວ່າການພົວພັນລະຫວ່າງ “ການຄູນ ແລະ ການບວກ”, “ການຫານ ແລະ ການລົບ”

ຫຼືອື່ນໆ..., ເດັກນ້ອຍຜູ້ນັ້ນ ກໍຈະພົບຄວາມຫຍຸ້ງຍາກໃນການດໍາລົງຊີວິດປະຈໍາວັນ ຫຼາຍກ່ວາ ຜູ້ທີ່ເຂົ້າໃຈການພົວພັນລະຫວ່າງຄວາມຮູ້ຕ່າງໆທີ່ກ່າວມາ.

### 2.5. ປະເພດຂອງຄູ

ການແບ່ງຄູເປັນເພດຕ່າງໆຕ້ອງຂຶ້ນຢູ່ກັບຄວາມຮູ້ຄວາມສາມາດ ແລະ ໜ້າທີ່ຂອງແຕ່ລະບຸກຄົນ, ການແບ່ງປະເພດຂອງຄູອາດຈະເປັນການຊ່ວຍກະຕຸ້ນຄວາມເປັນຄູໃຫ້ຜູ້ປະກອບວິຊາຊີບຄູເຊິ່ງດັ່ງລຸ່ມນີ້:

1) **ຍົນ ຊຸ່ມຈິດ (2541: 22-23) ໄດ້ແບ່ງປະເພດຄູຕາມລັກສະນະຂອງວຽກອອກເປັນ 4 ປະເພດຄື:**

- **ຄູປະຈໍາເຮືອນ:** ໄດ້ແກ່ພໍ່ແມ່ ເຊິ່ງເປັນຄູຄົນທາອິດຂອງລູກເພາະທັງສອງທ່ານມີຄວາມໃກ້ຊິດຄ່ອຍດູແລປົກປ້ອງລູກຕະຫຼອດເວລາ ຈຶ່ງມີການຍົກຍ່ອງໃຫ້ພໍ່ແມ່ເປັນຄູອາຈານຂອງລູກ
- **ຄູປະຈໍາໂຮງຮຽນ:** ໄດ້ແກ່ຄູອາຈານທີ່ສອນນັກຮຽນຕາມໂຮງຮຽນ ຫຼື ສະຖາບັນການສຶກສາຕ່າງໆຈະປະພຶດໂດຍຈິດຮູ້ສໍານຶກ ຫຼື ດ້ວຍຈິດວິນຍານຂອງຄວາມເປັນຄູຢ່າງແທ້ຈິງ ຫຼື ປະພຶດຕາມໜ້າທີ່ທີ່ໄດ້ຮັບມອບໝາຍຈາກລາດຊະການ.
- **ຄູປະຈໍາວັດ:** ໄດ້ແກ່ພະສົງໃນພະພຸດສາສະໜາ ຫຼື ນັກບວດໃນສາສະໜານັ້ນໆທີ່ຄວາມຮູ້ຄວາມເຂົ້າໃຈໃນຫຼັກຄໍາສອນໃນສາສະໜາ ແລະ ເຮັດໜ້າທີ່ເຜີຍແຜ່ຫຼັກທໍາຄໍາສອນເພື່ອໃຫ້ປະຊາຊົນມີສິນລະທໍາຄຸນນະທໍາປະຈໍາໃຈ.
- **ຄູປະຈໍາໂລກ:** ໄດ້ແກ່ ພະທໍາສາດສະດາຂອງພະພຸດສາສະໜາ ທີ່ໄດ້ຄົ້ນພົບຫຼັກທໍາຄໍາສອນອັນປະເສີດ ແລ້ວນໍາຫຼັກທໍານັ້ນເຜີຍແຜ່ອົບຮົມໃຫ້ມະນຸດໃນໂລກໄດ້ຮູ້ໄດ້ເຂົ້າໃຈ ແລະ ນໍາໄປປະຕິບັດເພື່ອຄວາມສຸກ.

2) **ພາວິໄລ ນາຄວງ (2545: 6-9) ໄດ້ແບ່ງຄູຕາມຄຸນສົມບັດຄວາມສາມາດ ແລະ ລັກສະນະການເຮັດວຽກອອກເປັນ 3 ປະເພດຄື:**

- **ຄູທີ່ດີ:** ຄືຄູທີ່ມີຄວາມຮູ້ ແລະ ຊ່ຽວຊານໃນສາຂາວິຊາຂອງຕົນມີທັກສະການສອນ, ມີຄຸນນະທໍາ, ມີຄວາມຮັບຜິດຊອບສູງເອົາໃຈປັບປຸງຕົນເອງໃນດ້ານຄວາມຮູ້, ການສອນ ແລະ ຄຸນນະທໍາຢ່າງສະໜໍ່າສະເໝີ, ປະພຶດຕົນເປັນແບບຢ່າງທີ່ດີຂອງນັກຮຽນ.
- **ຄູທີ່ພໍໃຊ້ໄດ້:** ຄືຄູທີ່ມີຄວາມຮູ້ດີສອນໃຊ້ໄດ້ແຕ່ບໍ່ທຸ່ມເທໃນການສອນບໍ່ເຄັ່ງຄັດໃນຈັນຍາບັນວິຊາຊີບຄູບໍ່າສົນໃຈໃນການພັດທະນາຕົນເອງ ແລະ ມີຄວາມປະພຶດທີ່ບໍ່ເປັນແບບຢ່າງໃຫ້ນັກຮຽນ.
- **ຄູທີ່ບໍ່ຄວນເປັນຄູ:** ຄືຄູທີ່ບໍ່ຮູ້ຈິງໃນວິຊາທີ່ສອນ ແລະ ສອນບໍ່ດີບໍ່ຕັ້ງໃຈເຮັດວຽກຂາດຄຸນນະທໍາບໍ່າສົນໃຈປັບປຸງພັດທະນາຕົນ ແລະ ປະພຶດຕົນບໍ່ເໝາະສົມ, ບໍ່ສົມຄວນເອົາເປັນແບບຢ່າງ ຫຼື ບໍ່ສົມຄວນເປັນຄູ.

### 2.6. ຜົນປະໂຫຍດຂອງຄວາມເປັນຄູ

- ສາມາດສ້າງຄົນໃຫ້ເປັນຄົນດີ, ຄົນເກັ່ງເພື່ອພັດທະນາປະເທດຊາດ.
- ເປັນອາຊີບທີ່ມີກຽດເປັນທີ່ເຄົາລົບນັບທີ່ໜ້ານັບຖື.

- ເປັນອາຊີບທີ່ມີຈັນຍາບັນວິຊາຊີບ.
- ເປັນອາຊີບທີ່ໃຊ້ຄົນທີ່ມີຄວາມຮູ້, ຄວາມສາມາດລວມທັງຄວາມຮັກໃນການເປັນຄູ.
- ສາມາດພັດທະນາສັກກະຍະພາບຂອງຕົນເອງໄດ້.
- ເປັນອາຊີບທີ່ທ້າທາຍຄວາມສາມາດ.
- ເປັນປູຊະຍະນິບຸກຄະລາກອນ
- ເປັນແມ່ພິມຂອງຊາດ.

**ສະຫຼຸບ:** ຄູ ແລະ ອາຈານແມ່ນຜູ້ໃຫ້ຄວາມຮູ້ມີໜ້າທີ່ພັດທະນາໃຫ້ນັກຮຽນເປັນຄົນມີຄຸນນະພາບຕໍ່ປະເທດ ແລະ ສັງຄົມ ນອກຈາກນີ້ບໍ່ວ່າຈະມີຄູຈັກປະເພດທີ່ສັງຄົມປັດຈຸບັນ ແລະ ອະນາຄົດຍ່ອມຕ້ອງການຄູທີ່ ຫຼື ທີ່ມີຈັນຍາບັນວິຊາຊີບສູງ.

## 3. ຄວາມສໍາຄັນຂອງຈິດຕະວິທະຍາການສຶກສາຕໍ່ອາຊີບຄູ

ຫຼັງຈາກມີຈິດຕະວິທະຍາເກີດຂຶ້ນ ກໍ່ໄດ້ມີການອະທິບາຍ ແລະ ຖົກຖຽງກັນຢ່າງຫຼວງຫຼາຍ ກ່ຽວກັບຄໍານິຍາມຂອງ ວິທະຍາສາດໃນສາຂານີ້. ບາງທ່ານໄດ້ມີຄວາມຄິດວ່າ: ຈິດຕະວິທະຍາການສຶກສາ ເປັນເລື່ອງທີ່ວ່າ ດ້ວຍການປະຍຸກຫຼັກການ ຫຼື ວິທີການ ທາງຈິດຕະວິທະຍາທາງສາຂາຕ່າງໆໄປໃຊ້ໃນຫອ້ງຮຽນ ໃນໂຮງຮຽນ, ຕໍ່ມາໄດ້ມີຫຼາຍທ່ານເວົ້າວ່າ: ຈິດຕະວິທະຍາການສຶກ ບໍ່ໄດ້ໝາຍເຖິງເຊັ່ນນັ້ນ ແຕ່ມັນເປັນວິທະຍາສາດສາຂາໃໝ່ທີ່ມີເປົ້າໝາຍ ມີປະເດັນບັນຫາວິທີການສຶກສາ ແລະ ມີເທັກນິກຂອງຕົນເອງ. ຈິດຕະວິທະຍາໃນຄວາມໝາຍນີ້ຈຶ່ງເປັນວິທະຍາສາດສະເພາະທີ່ແຍກອອກຈາກສາຂາອື່ນໆໂດຍນົ້ນໃສ່ການຮຽນການສອນແລະການສະແຫວງຫາແນວທາງທີ່ພັດທະນາປັບປຸງຂະບວນການຮຽນການສອນດັ່ງກ່າວ.

ນັກຈິດຕະວິທະຍາການສຶກສາບໍ່ໄດ້ສຶກສາການຮຽນຮູ້ຂອງມະນຸດສະເພາະຢູ່ໃນຫ້ອງທົດລອງເທົ່ານັ້ນແຕ່ຈະສຶກສາທຸກສະຖານະການທີ່ມີການຮຽນຮູ້ທີ່ເກີດຂຶ້ນເຊັ່ນ: ຢູ່ໃນສະຖານະການທີ່ລ້ຽງເດັກໃນໂຮງຮຽນ, ໃນຄອບຄົວ ແລະອື່ນໆ... ປົກກະຕິແລ້ວຫຼັກການຫຼືທິດສະດີດັ່ງກ່າວຈະໄດ້ການກວດກາໃນສະຖານະການຕ່າງໆຢູ່ໃນຫ້ອງທົດລອງກ່ອນທີ່ຈະນໍາໄປປະຍຸກໃຊ້ ໃນຫ້ອງຮຽນ.

ການຄົ້ນຄ້ວາວ່າມະນຸດເຮົາຮຽນຮູ້ຮູ້ແນວໃດເປັນພຽງແຕ່ສ່ວນໜຶ່ງເທົ່ານັ້ນ, ອີກສ່ວນໜຶ່ງແມ່ນການສຶກສາຊອກຫາຄໍາຕອບວ່າ: ຈະດໍາເນີນການສອນແນວໃດ ເພື່ອໃຫ້ບັນລຸຜົນຕາມຈຸດໝາຍທີ່ກໍານົດໄວ້.

ຈິດຕະວິທະບາການສຶກສາມີຄວາມສໍາຄັນຢ່າງຍິ່ງສໍາລັບການເປັນຄູ, ບໍ່ວ່າຈະຜິດຈາລະນາໃນດ້ານທຸລະກິດ ແລະບົດບາດທົ່ວໆໄປຫຼືພິຈາລະນາດ້ານປະສິດຕິພາບຂອງການສອນເຊິ່ງເປັນພາລະໜ້າທີ່ຫຼັກຂອງຄູ.

## 4. ໜ້າທີ່ ແລະ ບົດບາດຂອງຄູ

ຄຳວ່າ: ຄູໝາຍເຖິງ ແມ່ນຜູ້ສັ່ງສອນລູກສິດຫຼືຜູ້ຖ່າຍທອດຄວາມຮູ້ໃຫ້ແກ່ລູກສິດການເຮັດໜ້າທີ່ສັ່ງສອນ ແລະການຖ່າຍທອດຄວາມຮູ້ຂອງຄູນັ້ນ, ຈະບໍ່ໄດ້ໝາຍເຖິງສະເພາະແຕ່ເປັນຜູ້ທີ່ບອກ, ເປັນຜູ້ບັນຍາຍ, ຫຼື ອະທິບາຍເນື້ອໃນຂອງວິຊາໃຫ້ແກ່ຜູ້ທີ່ຮຽນເທົ່ານັ້ນ. ແຕ່ຈະລວມເຖິງກິດຈະກຳທັງໝົດຢູ່ໃນຂະບວນການສອນເຊັ່ນ: ການເລືອກເນື້ອໃນ, ການຜະລິດຊື່ການສອນ, ການຈັດລະບຽບກິດຈະກຳໃນຊັ້ນຮຽນ, ການຮັກສາລະບຽບວິໄນ, ການວັດ, ການປະເມີນຜົນ ແລະອື່ນໆ….

ນອກຈາກດ້ານການສອນ ແລະ ການຖ່າຍທອດຄວາມຮູ້ ໃນຊັ້ນຮຽນແລ້ວ, ຄູຍັງມີໜ້າທີ່ ແລະບົດບາດອີກຫຼາຍປະການ.

ຄຳວ່າຄູ ໃນພາສາອັງທີ່ວ່າ Teacher ຈະມີບົດບາດໜ້າທີ່ຂອງຄູຕາມຮູບພາສາອັງກິດ ໄດ້ແຍກຄຳໃຫ້ເຫັນດັ່ງນີ້.

| | |
|---|---|
| T ( Teaching) | ໝາຍເຖິງເປັນຜູ້ທີ່ມີຈະລິຍະທຳ |
| E ( Ethic ) | ໝາຍເຖິງມີໜ້າທີ່ສອນ. |
| A ( Acadamic ) | ໝາຍເຖິງຄວາມເປັນນັກວິຊາການ |
| C ( Cultural Heritage ) | ໝາຍເຖິງການສືບທອດວັດທະນະທຳ |
| H ( Human Relationship ) | ໝາຍເຖິງຄວາມເປັນຜູ້ທີ່ມີະນຸດສຳພັນທີ່ດີ |
| E ( Evalaution ) | ໝາຍເຖິງ ການວັດ ແລະປະເມີນຜົນການສອນ |
| R ( Research ) | ໝາຍເຖິງ ໃນຖານະເປັນນັກວິໄຈ |
| S ( Service ) | ໝາຍເຖິງ ການໃຫ້ບໍລິການ |

ທ່ານ ວຸດໂຟລ ( Woolfolk 1990 : 5 - 8 ) ໄດ້ກຳນົດໜ້າທີ່ແລະ ບົດບາດຂອງຄູໄວ້ 7 ປະການຄືດັ່ງລຸ່ມນີ້:

### 1.1 ຄູຖານະເປັນຜູ້ຊ້ຽວຊານໃນການສອນ

ໃນຖານະເປັນຜູ້ສອນຄູຕ້ອງຕັດສິນໃຈວ່າ : ຄູຈະໃຊ້ກິດຈະກຳການສອນແນວໃດ ແລະ ຈະໃຊ້ຊື່ການສອນຊະນິດໃດ ຢູ່ຕະຫຼອດເວລາ. ການຕັດສິນໃຈດັ່ງກ່າວແມ່ນຂຶ້ນກັບອົງປະກອບຫຼາຍຢ່າງເຊັ່ນ : ການໃຊ້ຊື່ການສອນຊະນິດນີ້ ຈະສອດຄ່ອງກັບເນື້ອໃນຫຼືບໍ່, ສອດຄ່ອງກັບຄວາມສາມາດ ແລະ ຄວາມສົນໃຈຂອງເດັກຫຼືບໍ່, ການສອນແບບໃດທີ່ພາໃຫ້ເດັກບັນລຸຕາມຈຸດໝາຍທີ່ກຳນົດໄວ້, ຖ້າຄູຈະສອນໃນເລື່ອງຂອງການລົບເລກຢູ່ຊັ້ນປໍສອງຄູຈະສອນແບບໃດຈິ່ງຈະເຮັດໃຫ້ເດັກເຂົ້າໃຈທີ່ສຸດ, ຫຼື ການສອນໃຫ້ເດັກຮູ້ແຕ່ງເລື່ອງຢູ່ຊັ້ນປໍ 5 ທີ່ບໍ່ເຄີຍປະສົບຜົນສຳເລັດມາກ່ອນ. ຄູຈະສອນແນວໃດ, ຫຼື ຈະໃຊ້ໜັງສື ຫຼື ຊື່ ການສອນຊະນິດໃດ, ຄູຈະໃຫ້ເດັກຂຽນເປັນລາຍບຸກຄົນ ຫຼື ເປັນກຸ່ມ. ຈະໃຊ້ການສອນດ້ວຍການບັນຍາຍ, ອະພິປາຍ, ໃຫ້ຄົ້ນຄ້ວາດ້ວຍຕົນເອງ...ສິ່ງເຫຼົ່ານີ້ຄູຈະຕ້ອງໃຊ້ການຕັດສິນໃຈຢູ່ບົນພື້ນຖານຂອງຄວາມຮູ້ຂອງເນື້ອໃນວິຊາຮຽນ ແລະ ວິທີສອນທັງໝົດ.

### 1.2 ຄູໃນຖານະເປັນຜູ້ກະຕຸ້ນໃຫ້ນັກຮຽນມີແຮງຈູງໃຈໃນການຮຽນ.

ບົດບາດທີ່ສຳຄັນອີກຢ່າງໜຶ່ງຂອງຄູກໍ່ແມ່ນການເປັນຜູ້ກະຕຸ້ນໃຫ້ນັກຮຽນເກີດມີແຮງຈູງໃຈໃນການຮຽນ. ເພາະໃນປະຈຸບັນຈະມີສິ່ງກະຕຸ້ນຈິດໃຈນັກຮຽນຢູ່ນອກຫ້ອງຮຽນມີຫຼາຍທີ່ສຸດ. ກິດຈະກຳຕ່າງໆໃນຊັ້ນຮຽນຈຶ່ງດຶງດູດຄວາມສົນໃຈ ຂອງນັກຮຽນໄດ້ນ້ອຍທີ່ສຸດ. ເຖິງວ່າ ຄູຈະພະຍາຍາມໃຊ້ເທັກນິກ ການນຳເຂົ້າສູ່ບົດຮຽນໃຫ້ນັກຮຽນສົນໃຈ ແຕ່ກໍ່ຍັງບໍ່ພຽງພໍທີ່ຈະດຶງດູດຄວາມສົນໃຈຂອງເດັກນັກຮຽນໄດ້.

ສະນັ້ນ, ຄູຈຶ່ງຕ້ອງໃຊ້ຄວາມພະຍາຍາມສ້າງແຮງຈູງໃຈ ໃຫ້ແກ່ນັກຮຽນ. ການໃຫ້ຄະແນນເປັນຕົວເສີມແຮງກໍ່ແມ່ນວິທີໜຶ່ງທີ່ເຮັດໃຫ້ນັກຮຽນດຸໝັ່ນຮຽນ ຫຼື ຄູໃຊ້ຊື່ການສອນທີ່ສົນໃຈກໍ່ເປັນສິ່ງໜຶ່ງທີ່ດຶງດູດຄວາມສົນໃຈຂອງເດັກໃນແຕ່ລະຊົ່ວໂມງທີ່ສອນ. ຄູຕ້ອງຖາມຕົນເອງເລື້ອຍໆວ່າ: ຈະເຮັດແນວໃດຈຶ່ງພາໃຫ້ນັກຮຽນມີຄວາມກະຕືລືລົ້ນມີການຮຽນຫຼາຍຂຶ້ນ.

### 1.3 ຄູໃນຖານະເປັນຜູ້ຈັດການ

ໄດ້ມີການວິໄຈພົບວ່າ : ຄູສອນຢູ່ຊັ້ນປະຖົມ ສ່ວນຫຼາຍຈະໃຊ້ເວລາປະມານ 20 – 30 % ຂອງເວລາທັງໝົດ ໃນການມີປະຕິສຳພັນກັບນັກຮຽນໂດຍກົງ. ເວລາທີ່ເຫຼືອ 70 – 80 % ແມ່ນຈະໃຊ້ເຂົ້າໃນເລື່ອງການຈັດການ ( Management ) ສຳລັບຄູສອນຊັ້ນມັດທະຍົມນັ້ນ, ຈະໃຊ້ເວລາປະຕິສຳພັນກັບນັກຮຽນຫຼາຍຂຶ້ນ. ແຕ່ກໍ່ຍັງໃຊ້ເວລາໃນເລື່ອງການຈັດກນສູງຢູ່ ການຈັດການດັ່ງກ່າວນີ້ໄດ້ແກ່ ການນິເທດກິດຈະກຳໃນຫ້ອງຮຽນ, ການອະທິບາຍລາຍລະອຽດ ໃນເລື່ອງທະບຽນຕ່າງໆ, ການກະກຽມເລື່ອງການສອບເສັງ, ການຈັດເກດ, ການສະແຫວງຫາສື່ການສອນ, ການນຳເຂົ້າຮ່ວມປະຊຸມກັບຄູ ແລະ ຜູ້ປົກຄອງໃນຫ້ອງຮຽນ. ໃນຈຳນວນທີ່ມີ 24 ຊົ່ວໂມງຄູຈະຕ້ອງຮູ້ບໍລິຫານເວລາຕົນເອງໃຫ້ເໝາະສົມ.

ໃນຫ້ອງຮຽນຄູຕ້ອງເຮັດໜ້າມທີ່ບໍລິຫານ ຫຼື ຈັດການກ່ຽວກັບຮັກສາລະບຽບວິໄນ ຢູ່ໃນຫ້ອງຮຽນ. ຄູຕ້ອງຮູ້ຈັດການ ຫຼື ບໍລິຫານກິດຈະກຳຕ່າງໆ ໂດຍບໍ່ໃຫ້ເກີດມີບັນຫາ ຖ້າເກີດກໍ່ມີນ້ອຍທີ່ສຸດ.

### 1.4 ຄູໃນຖານະເປັນຜູ້ນຳ

ເຖິງວ່າການສອນຂອງຄູ ຕ້ອງໄດ້ຄຳນຶງເຖິງຄວາມຕ້ອງການ ຂອງເດັກແຕ່ລະຄົນ. ແຕ່ຄວາມເປັນຈິງແລ້ວຄູບໍ່ໄດ້ສົນໃຈເດັກຜູ້ໃດຜູ້ໜຶ່ງເທົ່ານັ້ນ. ເພາະການສອນສ່ວນໃຫຍ່ ແມ່ນລວມກັນເປັນກຸ່ມ, ໂດຍໃຫ້ມີຄູເປັນຜູ້ນຳ, ຄູຈຶ່ງມີໜ້າທີ່ກວດກາຕັດສິນ, ຄະນະດຽວກັນຄູສາມາດເປັນເພື່ອນເປັນຄູ່ຄິດເປັນຕົວແທນຂອງຜູ້ປົກຄອງ ແລະ ເປັນຜູ້ສະໜັບສະໜຸນ. ຄວາມເປັນຜູ້ນຳຂອງຄູນັ້ນ, ຈະບໍ່ຈຳກັດສະເພາະຢູ່ໃນຫ້ອງຮຽນເທົ່ານັ້ນຄູຍັງເປັນຜູ້ນຳຊຸມຊົນ ຫຼື ສັງຄົມໃນຖ້ອງຖິ່ນອີກດ້ວຍ.

### 1.5 ຄູໃນຖານະເປັນຜູ້ໃຫ້ຄຳປຶກສາ

ຢູ່ໃນໂຮງຮຽນໜຶ່ງໆ ມີເດັກນັກຮຽນທີ່ມີບັນຫາ ຄູຈຳຕ້ອງກ່ຽວຂ້ອງບໍ່ຫຼາຍກໍ່ນ້ອຍ ສະນັ້ນຄູຈຶ່ງຢູ່ໃວນຖານະໃຫ້ຄຳປຶກສາ ຫຼື ຊ່ວຍເຫຼືອເດັກເລົ່ານັ້ນ, ຄູຕ້ອງມີຄວາມຮູ້ສຶກໄວຕໍ່ກັບການປ່ຽນແປງພຶດຕິກຳຂອງນັກຮຽນ, ມີຄວາມສາມາດວິນິດໃສ ໃນເບື້ອງຕົ້ນໄດ້ວ່າ ເດັກນັກຮຽນຄົນໃດທີ່ມີຄວາມຕ້ອງການຄວາມຊ່ວຍເຫຼືອຈາກຄູ.

ໃນຖານະເປັນຜູ້ໃຫ້ຄຳປຶກສານັ້ນ ຄູຍັງເປັນຜູ້ໃວຊ້ແບບທົດສອບທາງຈິດຕະວິທະຍາຕ່າງໆ, ແລ້ວ ແປຜົນການທົດລອງດັ່ງກ່າວ ເພື່ອຜົນປະໂຫຍດທາງແນະແນວທາງການສຶກສາ ແລະ ວິນິດໃສບັນຫາທາງບຸກຄະລິກກະພາບຂອງເດັກນັກຮຽນອີກດ້ວຍ.

### 1.6 ຄູໃນຖານະທີ່ເປັນແບບຢ່າງ

ຄູໃນຖານະທີ່ເປັນແບບຢ່າງໝາຍຄວາມວ່າ ເດັກຈະຮຽນແບບຈາກຄູຫຼາຍປະການ ຖ້າຄູເປັນຜູ້ທີ່ມີຄວາມກະຕືລືລົ້ນ ໃນການສຶກສາຊອກຫາຄວາມຮູ້ກໍ່ຈະເປັນແບບຢ່າງທີ່ດີ, ທີ່ຈະພາໃຫ້ນັກຮຽນມີຄວາມກະຕືລືລົ້ນ ຄືກັນກັບຄູ ຫຼື ຄູມີຄວາມສາມາດແກ້ໄຂບັນຫາຕ່າງໆໄດ້ຢ່າງດີ, ເດັກນັກຮຽນກໍ່ຈະຮຽນແບບ ຫຼື ຮຽນຮູ້ຄຸນລັກສະນະດັ່ງກ່າວຈາກຄູ ໂດຍຄູບໍ່ຈຳເປັນຕ້ອງສອນ.

### 1.7 ຄູໃນຖານະເປັນຜູ້ພັດທະນາວິຊາຊີບ

ໄດ້ເປັນທີ່ຍອມຮັບກັນວ່າ : ອາຊີບຄູເປັນວິຊາອາຊີບຊັ້ນສູງ, ຄູມີວິນຍານໃນຄວາມເປັນຄູ ຈຶ່ງພັດທະນາໃນວິຊາອາຊີບຄູໄດ້ຕະຫຼອດເວລາເຊັ່ນ: ມີການວິເຄາະພຶດຕິກຳການສອນຫຼາຍໆຢ່າງ ແງ່ມູມ ຫຼື ຫຼາຍໆຢ່າງ ທົດສະດີເພື່ອສະແຫວງຫາແນວທາງພັດທະນາການຮຽນຮູ້ຂອງເດັກນັກຮຽນ ຫຼື ພັດທະນາວິທີການສອນ ເພື່ອໃຫ້ນັກຮຽນ, ນັກຮຽນໆດ້ວຍຄວາມມ່ວນຊື່ນ ມີຄວາມຕື່ນເຕັ້ນຕໍການຮຽນ.

ການວິເຄາະດັ່ງກ່າວ ແມ່ນເປັນການທຳຄວາມເຂົ້າໃຈ ກ່ຽວກັບການຮຽນຮູ້ຂອງເດັກນັກຮຽນ, ການຈັດສະພາບແວດລ້ອມ ເພື່ອສ້າງປະສິດທິພາບການຮຽນຮູ້, ລວມໄປເຖິງການສິດສອນ ແລະ ເນື້ອໃນຂອງວິຊາຮຽນ ຫຼື ກິດຈະກຳທີ່ຈະສອນ. ພະຍາຍາມປັບປຸງ ແລະ ພັດທະນາວິຊາອາຊີບຂອງຕົນເອງໄດ້ດີຂຶ້ນ. ເຖິງຢ່າງໃດກໍ່ຕາມເພິ່ນສາມາດສະຫຼຸບໄດ້ວ່າ : ຄູມີໜ້າທີ່ ແລະ ບົດບາດທີ່ສຳຄັນ 5 ປະການເຊັ່ນ :

- ເປັນຜູ້ສອນ ແລະ ຖ່າຍທອດຄວາມຮູ້. ໜ້າທີ່ນີ້ຈະລວມມີການກະຕຸ້ນແຮງຈູງໃຈ ໃນການຮຽນ, ເປັນຜູ້ຈັດການໃນຫ້ອງຮຽນ ແລະ ບ່ອນປະເມີນຜົນ.
- ເປັນຕົວແບບທີ່ດີ ແລະ ເປັນຜູ້ສືບທອດວັດທະນະທຳ ແລະ ຄຸນນະທຳ.
- ເປັນຜູ້ທີ່ໄຝ່ຮູ້ ແລະ ພັດທະນາຄວາມຮູ້ຢູ່ສະເໝີ.
- ເປັນຜູ້ນຳທີ່ດີ.
- ເປັນຜູ້ໃຫ້ບໍລິການທາງວິຊາການ ໃຫ້ແກ່ນັກຮຽນ ແລະ ຊຸມຊົນ.

## 5. ຄູທີ່ມີປະສິດທິພາບ

ໃນເມື່ອພິຈາລະນາບົດບາດ ແລະ ໜ້າທີ່ຂອງຄູດັ່ງທີ່ເວົ້າມາຂ້າງເທິງນັ້ນແລ້ວ, ກໍ່ສາມາດຮູ້ໄດ້ວ່າວຽກງານຂອງຄູນັ້ນສຸດທີ່ຍາກ. ດ້ວຍເຫດນີ້ ຜ່ານຈຶ່ງມີຄູຈຳນວນໜຶ່ງເທົ່ານັ້ນເປັນຄູທີ່ດີ ແລະ ມີປະສິດທິ

ພາບໄດ້. ມີຄູຈຳນວນໜຶ່ງບໍ່ສາມາດເປັນຄູທີ່ມີປະສິດທິພາບໄດ, ຄູຄວາມແຕກຕ່າງລະຫວ່າງທັງສອງປະເພດນີ້. ຜ່ານມາກໍ່ໄດ້ມີຄຳຖາມທີ່ຖາມວ່າ : ຄູທີ່ມີປະສິດທິພາບ ແມ່ນຄູທີ່ມີສະຕິປັນຍາສູງກ່ວາຄູທີ່ມີປະສິດທິພາບກ່ວາ. ຕໍ່ຄຳຖາມເຫຼົ່ານີ້ ຄູຍັງຊອກຫາຄຳຕອບບໍ່ໄດ້ຢ່າງຊັດເຈນ. ເຖິງຢ່າງໃດກໍ່ຕາມຜົນຂອງນັກວິໄຈໄດ້ພົບວ່າ : ອົງປະກອບດ້ານສະຕິປັນຍາ ແລະ ບຸກຄະລິກກະພາບ ກໍ່ຈະມີຄວາມສຳຄັນຕໍ່ກັບການເປັນຄູ ທີ່ມີປະສິດທິພາບໜ້ອຍກ່ວາທັກສະຕ່າງໆທີ່ຄູໃຊ້ໃນຫ້ອງຮຽນ.

ທ່ານ ໂກຣຟເວ ແລະ ບຸນນິງ ( Glover and Bruning 1990 :6 ) ໄດ້ກ່າວວ່າ : ມີທັກສະຫຼາຍຢ່າງທີ່ສົ່ງຜົນໃຫ້ຄຸນນະພາບການສອນຂອງຄູແຕກຕ່າງກັນ. ຄູທີ່ມີປະສິດທິພາບ ຈະສາມາດພັດທະນາທັກສະການຄິດຂອງນັກຮຽນ, ສົ່ງເສີມນັກຮຽນໃຫ້ມີພັດທະນາການທຸກດ້ານ. ສາມາດຈັດການຢູ່ໃນຫ້ອງຮຽນໄດ້ຢ່າງມີປະສທິດທິພາບ. ສາມາດຖ່າຍທອກຄວາມຮູ້ໄດ້ດີ, ສາມາດປະເມີນຜົນການຮຽນ ແລະ ຮູ້ປັບປຸງວິທີການສໃອນໃຫ້ສອດຄ່ອງກັບຄວາມແຕກຕ່າງລະຫວ່າງຜູ້ຮຽນໄດ້ຢ່າງເໝາະສົມ.

- ຄູທີ່ມີປະສິດທິພາບຈະຕ້ອງຄຳນຶງເຖິງຄວາມແຕກຕ່າງລະຫວ່າງບຸກຄົນ ໃນເລື່ອງຂະບວນການຄິດເຊັ່ນ : ຄວາມສາມາດທາງດ້ານສະຕິປັນຍາດ້ານການຄົ້ນຄິດ, ເຊິ່ງເດັກແຕ່ລະຄົນຈະມີພັດທະນາການລະດັບຂັ້ນທີ່ແຕກຕ່າງກັນກ. ນອກນີ້ ເດັກແຕ່ລະຄົນຍັງແຕກຕ່າງກັນດ້ານຮູບແບບຂອງການຄິດ, ທີ່ເປັນລັກສະນະສະເພາະຕົວ ທີ່ແຕ່ລະຄົນຈະຮັບຮູ້ຂໍ້ມູນຂ່າວສານ, ການຈັດລະບຽບຂອງຂໍ້ມູນ ແລະ ຂະບວນການປະມວນສານຂໍມູນຕ່າງໆ. ຄູທີ່ມີປະສິດທິພາບຍ່ອມຄິດເຖິງຄວາມແຕກຕ່າງເຫຼົ່ານີ້ ເພື່ອໃຊ້ເຂົ້າໃນການວາງແຜນການຮຽນ-ການສອນ.

ນອກນີ້ຄູທີ່ມີປະສິດທິພາບຍັງຕ້ອງເຂົ້າໃຈພັດທະນາການຂອງທັກສະການແກ້ບັນຫາການສົ່ງເສີມຄວາມຄິດ ແບບສ້າງສັນ ແລະ ເຂົ້າໃຈພາວະທີ່ນຳໄປສູ່ຄວາມຄິດສ້າງສັນ, ເພື່ອຈະໄດ້ວາງແຜນ ແລະ ດຳເນີນການສອນ ໃຫ້ສອດຄ່ອງກັບການພັດທະນາການ ແລະ ເໝາະສົມກັບລະດັບຄວາມສາມດຂອງຜູ້ຮຽນ.

- ຄູທີ່ມີປະສິດທິພາບບໍ່ສະເພາະແຕ່ສົ່ງເສີມໃຫ້ເດັກນັກຮຽນພັດທະນາຄວາມຄິດເທົ່ານັ້ນແຕ່ຍັງຕ້ອງສົ່ງເສີມຄວາມຮູ້ສຶກທີ່ດີຕໍ່ຕົນເອງ ແລະ ຜູ້ອື່ນ ແລະ ມີປະຕິສຳພັນກັບຄູຢ່າງອົບອຸ່ນ ສະນັ້ນ, ຄູຈະຕ້ອງເນັ້ນເຖິງການຮ່ວມມືຫຼາຍກ່ວາການແຂ່ງຂັນ ເພື່ອຊ່ວຍໃຫ້ເດັກໄດ້ຮັບປະສົບການໃນທາງບວກ, ຄູຕ້ອງເນັ້ນໃຫ້ນັກຮຽນມີຄວາມພາກພູມໃຈໃນຕົນເອງ. ສິ່ງດັ່ງກ່າວເຫຼົ່ານີ້ ຈະຊ່ວຍສ້າງມະໂນພາບທີ່ດີໃຫ້ກັບນັກຮຽນ.

- ຄູມີປະສິດທິພາບ ຈະມີຄວາມລ່າເລີງ ມີຄວາມສຸກ, ສາມາດຮັກສາລະບຽບວິໄນ ຢູ່ຫ້ອງຮຽນໄດ້ເປັນຢ່າງດີ ແລະ ມີຄວາມຮູ້ສຶກໄວຕໍ່ກັບສິ່ງທີ່ເກີດຂຶ້ນໃນຫ້ອງຮຽນ. ເວລາບັນຫາດ້ານລະບຽບວິໄນກໍ່ສາມາດແກ້ໄຂໄດ້. ນອກນີ້ຄູຍັງສາມາດເປັນແບບຢ່າງທີ່ດີ ມີຄວາມກະຕືລືລົ້ນ ເພື່ອໃຫ້ນັກຮຽນໄດ້ຮຽນເອົາແບບຢ່າງທີ່ດີນັ້ນ.

- ຄູທີ່ມີປະສິດທິພາບຈະສາມາດຖ່າຍທອດຄວາມຮູ້ໃຫ້ນັກຮຽນໄດ້ຢ່າງເປັນລະບົບ, ເປັນຂັ້ນຕອນ ແລະ ຮູ້ສື່ຄວາມໝາຍຂອງເດັກ ແລະ ນັກຮຽນໃຫ້ເຂົ້າໃຈໄດ້ຢ່າງຊັດເຈນ ແລະ ຮູ້ກະກຽມການສິດສອນຢ່າງເໝາະສົມກັບພື້ນຖານຂອງຜູ້ຮຽນ. ເຮັດໃຫ້ຜູ້ຮຽນ, ຮຽນຢ່າງມີຄວາມສຸກ ແລະ ພໍໃຈໃນສິ່ງທີ່ຕົນ

ຢາກຮຽນ. ກົງກັນຂ້າມຄູທີ່ບໍ່ມີປະສິດທິພາບໃນການສອນຈະເຮັດໃຫ້ເດັກນັກຮຽນເກີດມີຄວາມເບື່ອນ່າຍ ຫຼື ຂັດຂ້ອງໃນໃຈຕະຫຼອດເວລາ.ເນື່ອງຈາກຄູສອນເນື້ອໃນບໍ່ສອດຄ່ອງກັບລະດັບຄວາມສາມາດຂອງຜູ້ຮຽນ.

- ການສອນທີ່ດີຕ້ອງມີການປະເມີນຜົນ ແລະ ປັບປຸງຢູ່ສະເໝີ, ນັກຮຽນຈະຕ້ອງຮັບຮູ້ຜົນການຮຽນ ແລະ ຜົນການລາຍງານບົດ ຂອງເຂົາຢ່າງທັນການ. ຄູທີ່ມີປະສິດທິພາບຈະມີທັກສະການປະເມີນການຮຽນຂອງນັກຮຽນ, ມີຄວາມສາມາດສ້າງ ແລະ ໃຊ້ເຄື່ອງມື ເພື່ອປະເມີນຜົນໄດ້ເປັນຢ່າງດີ. ບໍ່ວ່າ ຈະແມ່ນແບບທົດສອບທີ່ຄູສ້າງຂຶ້ນເອງ ຫຼື ແບບທົດສອບມາດຕະຖານກໍ່ຕາມ.
- ຄູທີ່ມີປະສິດທິພາບຈະຮູ້ ຈະຮູ້ປັບວິທີການສິດສອນຂອງຕົນໃຫ້ສອດຄ່ອງກັບຄວາມຕ້ອງການ ແລະ ຄວາມສົນໃຈຂອງນັກຮຽນ ທຸກກຸ່ມໄດ້ຢ່າງເໝາະສົມ, ບໍ່ວ່າ ຈະເປັນຄົນປົກກະຕິ, ເດັກທີ່ສະຫຼາດ ຫຼື ເດັກນັກຮຽນ ທີ່ມີປັນຫາໃນການຮໍ່າຮຽນກໍ່ຕາມ.
- ສະນັ້ນ, ສາມາດສະຫຼຸບໂດຍຫຍໍ້ໄດ້ວ່າ : ການທີ່ຈະເປັນຄູທີ່ດີ ແລະ ມີປະສິດທິພາບນັ້ນ. ນອກຈາກເປັນຜູ້ທີ່ມີຄວາມຮູ້ໃນເລື່ອງການສິດສອນເປັນຢ່າງດີແລ້ວ. ຄູຕ້ອງມີທັກສະຫຼາຍໆປະການ, ນັບທັງເທັກນິກ ວິທີຖ່າຍທອດຄວາມຮູ້, ການຈັດການໃນຫ້ອງຮຽນ ເຊິ່ງທັກສະຕ່າງໆດັ່ງກ່າວ ຈະພັດທະນາຂຶ້ນຈາກຄວາມເຂົ້າໃຈ, ຫຼັກການທາງຈິດຕະວິທະຍາການສຶກສາ ເປັນພື້ນຖານ.

## 6. ລັກສະນະທີ່ດີຂອງຄູ

**ຄູທີ່ດີ ແລະ ມີປະສິດທິພາບມີລັກສະນະດັ່ງລຸ່ມນີ້:**

1) ການເປັນມະນຸດນິຍົມ ( Humanist ) ໝາຍວ່າ ຕ້ອງເປັນຜູ້ທີ່ຍອມຮັບນັກຮຽນ, ຜູ້ໃຫ້ຄວາມຮັກ ຄວາມອົບອຸ່ນແກ່ນັກຮຽນ, ສາມາດເຂົ້າໃຈນັກຮຽນ, ມີຄວາມຍຸດຕິທຳຕໍ່ກັບນັກຮຽນທຸກຄົນ.
2) ເປັນຜູ້ທີ່ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບຈິດຕະວິທະຍາການຮຽນການສອນ. ໝາຍວ່າ ຕ້ອງມີຄວາມເຂົ້າໃຈທຳມະຊາດຂອງການຮຽນຮູ້, ມີຄວາມສາມາດປະເມີນຜົນໄດ້ວ່າ ນັກຮຽນເກີດການຮຽນຮູ້ແທ້ຈິງຫຼື ບໍ່.
3) ເປັນຜູ້ທີ່ຮູ້ຈັກຕົວນັກຮຽນ, ໝາຍວ່າ : ຄູບໍ່ພຽງແຕ່ເປັນຜູ້ສິດສອນຄວາມຮູ້ທາງວິຊາການເທົ່ານັ້ນ , ຍັງເປັນຜູ້ທີ່ມີອິດທິພົນຕໍ່ການພັດທະນາບຸກຄະລິກກະພາບຂອງນັກຮຽນ. ສະນັ້ນ ຄູຈຶ່ງຕ້ອງມີຄວາມຮູ້ກ່ຽວກັບຈິດຕະວິທະຍາພັດທະນາການ ເພື່ອຊ່ວຍເຫຼືອນັກຮຽນມີພັດທະນາການ ທາງດ້ານຮ່າງກາຍ, ສະຕິປັນຍາ, ອາລົມ ແລະ ສັງຄົມອີກດ້ວຍ.
4) ເປັນຜູ້ທີ່ມີຄຸນວຸດທິດ້ານວິຊາການໂດຍສະເພາະແມ່ນວິຊາທີ່ຕົນຈະສອນ.
5) ຈະຕ້ອງແມ່ນຜູ້ທີ່ນິຍົມໃນວິທີທາງວິທະຍາສາດ ແລະ ຄວາມເຂົ້າໃຈກົດແຫ່ງພຶກຕິກຳທາງເປັນນັກວິທະຍາສາດພຶດຕິກຳອີກດ້ວຍ.

## 7. ຄູໃນຖານະເປັນນັກວິທະຍາສາດແຫ່ງພຶດຕິກຳ

**ແນວຄວາມຄິດພື້ນຖານໃນທາງວິທະຍາສາດພຶດຕິກຳທີ່ຄູຢຶດຖືເປັນຫຼັກການດັ່ງນີ້ :**

1) ພຶດຕິກຳຂອງບຸກແຕ່ລະຢ່າງຈະຕ້ອງມີສາຍເຫດ.

2) ພຶດຕິກຳໜຶ່ງອາດມາຈາກສາເຫດຫຼາຍຢ່າງທີ່ມີປະຕິສຳພັນເຊິ່ງກັນ ແລະ ກັນ.

3) ພຶດຕິກຳຄືກັນອາດມາຈາກສາເຫດທີ່ແຕກຕ່າງກັນ.

ການຈະເຂົ້າໃຈພຶດຕິກຳນອງນັກຮຽນນັ້ນ, ຄູຕ້ອງພະຍາຍາມຫຼັກການໃນການສຶກສາພຶດຕິກຳນັກຈິດຕະວິທະຍາມາໃຊ້. ການສຶກສາພຶດຕິກຳນັ້ນນັກຈິດຕະວິທະຍາເຊື່ອວ່າພຶດຕິກຳຂອງແຕ່ລະບຸກຄົນ.

( B = Behavior ) ແມ່ນຜົນການປະຕິສຳພັນ ລະຫວ່າງສິ່ງແວດລ້ອມອ້ອມຕົວຂອງບຸກຄົນ.

( E = Environment ) ແລະ ບຸກຄະລິກກະພາບຂອງບຸກຄົນ( Persionality ) ເພີ່ມຄວາມສາມາດຂຽນເປັຫຼັກສູດດັ່ງນີ້ :

**ພຶດຕິກຳ = ສິ່ງແວດລ້ອມ X ບຸກຄະລິກກະພາບ**

$$\mathbf{B = E \times P}$$

ພຶດຕິກຳຂອງບຸກຄົນຈະປ່ຽນແປງ ຖ້າສິ່ງແວດລ້ອມມີການປ່ຽນແປງ ຫຼື ອາດເວົ້າໄດ້ວ່າ : ພຶດຕິກຳຂອງບຸກຄົນ ຈະປ່ຽນແປງໄປຕາມປະສົບການທີ່ເໝາະສົມ. ຖ້າຄູຫາກຄິດວ່າ ພຶດຕິກຳທຸກຢ່າງຈະຕ້ອງມີສາເຫດ. ການພະຍາຍາມສຶກສາຫາສາເຫດຂອງພຶດຕິກຳນັ້ນ, ກໍ່ຈະເປັນວິທີການຊ່ວຍໃຫ້ການແກ້ໄຂບັນຫາຂອງນັກຮຽນໄດ້. ຖ້າຄູພະຍາຍາມຈັດສິ່ງແວດລ້ອມ ແລະ ຈັດປະສົບການທີ່ດີໃຫ້ກັບນັກຮຽນ ກໍ່ຈະຊ່ວຍໃຫ້ນັກຮຽນມີພັດທະນາການທາງດ້ານຮ່າງກາຍ, ສະຕິປັນຍາ, ດ້ານອາລົມ ແລະ ສັງຄົມໄດ້.

ສະຫຼຸບແລ້ວ ຂັ້ນຕອນການສຶກສາພຶດຕິກຳຂອງນັກຮຽນ ຈະມີດັ່ງນີ້:

1) ຄູຕ້ອງຮູ້ວ່າ ຕົນຈະສຶກສາພຶດຕິກຳຫຍັງ ແລະ ໃຫ້ຮູ້ຄວາມໝາຍຂອງພຶດຕິກຳ ທີ່ຈະສຶກສານັ້ນ. ຖ້າຕ້ອງການສຶກສາພຶດຕິກຳໂມໂຫຂອງນັກສຶກສາ, ຄູຕ້ອງອະທິບາຍໃຫ້ໄດ້ຄວາມໝາຍຂອງພຶດຕິກຳໂມໂຫ ມີຄວາມໝາຍວ່າແນວໃດ

2)ຄວນຮັບຮູ້ຕົວແປທີ່ເປັນສາເຫດຂອງພຶດຕິການັ້ນ

3)ຄວນຊອກວິທີການເກັບກາຂໍ້ມູນເພື່ອຈຮູ້ວ່າຕົວແປແຕ່ລະຢ່າງມີອິດທິພົນຕໍ່ພຶດຕິກຳ ນັ້ນແນວໃດ

ຄູຕ້ອງຄຳນຶງສະເໜີວ່າ:ອາຊີບຄູແມ່ນອາຊີບທີ່ມີຫຼັກການ ແລະມີລັກສະນະວິທະຍາສາດສະນັ້ນ, ຖ້າຄູພະຍາຍາມສຶກສາ ແລະທຳນາຍຜົນຂອງການວິໃຈກ່ງວກັບການຮຽນ - ການສອນມາໃຊ້ກໍ່ສາມາດປັບປຸງຕົນເອງໃຫ້ເປັນຄູທີ່ດີ ແລະມີຄຸນນະພາບໄດ້.

ໃນເລື່ອງຊ່ວຍໃຫ້ນັກຮຽນພັດທະນາບຸກຄະລິກກະພາບນັ້ນ. ຄູຕ້ອງມີຄວາມເຂົ້າໃຈກ່ຽວກັບເລື່ອງພຶດຕິກຳແລະພະຍາຍາມໃຊ້ວິທີທາງວິທະຍາສາດເຂົ້າຊ່ວຍໃນການຕັດສິນໃຈ. ຢ່າພ້າວຕັດສິນໃຈສາເຫດຂອງພຶດຕິກຳຢ່າງໄວວາ. ຄູຕ້ອງພິດຈາລະນາໃຫ້ຖີ່ຖ້ວນ.

ຕົວຢ່າງ: ເຊັ່ນຖ້າຄູ ເຫັນນັກຮຽນບໍ່ເຮັດວຽກບ້ານ, ຢ່າພ້າວເວົ້າວ່ານັກຮຽນຄົນນັ້ນຂີ້ຄ້ານ. ຖ້າຄູມີການສຶກສາຕໍ່ໄປອີກວ່ານັກຮຽນບໍ່ເຮັດວຽກບ້ານນັ້ນມີສາເຫດ ທີ່ກ່ຽວພັນກັບບັນຫາໃດແດ່ກ່ອນຈະຕັດສິນໃຈຕໍ່ບັນຫານັ້ນຄູຈຶ່ງພະຍາຍາມຕັ້ງເປັນສົມມຸດຖານຫຼາຍຢ່າງເພື່ອຊອກຫາຂໍ້ມູນມາພິສູດ.

**ຕົວຢ່າງ:** ມີນັກສຶກສາຊາຍຜູ້ໜຶ່ງທີ່ມີຖານະດີ, ແຕ່ມີບັນຫາໃນການ ຂີ້ລັກໄດ້ມີຜູ້ປົກຄອງມາແຈ້ງຕໍ່ຄູປະຈຳຫາຫ້ອງວ່າ: ລູກຊາຍຂອງຕົນໄດ້ລັກເງິນເປັນຈຳນວນຫຼາຍແສນກີບ ຢູ່ໃນກໍລະນີນີ້ຄູຈະຕ້ອງສຶກສາວ່າ ຍ້ອນສາເຫດໃດເຂົາຈຶ່ງລັກເງິນ ແລະ ພະຍາຍາມຊອກຫາຂໍ້ມູນເພື່ອມາພິສູດ.

ຕົວຢ່າງ: ໃນການຕັ້ງສົມມຸດຖານກ່ຽວກັບພຶດຕິກຳຂີ້ລັກຂອງນັກສຶກສາຄົນນັ້ນ.

1) ລັກເງິນເພາະຕ້ອງການເອົາມາຊື້ເຄື່ອງທີ່ຈຳເປັນເຊັ່ນ: ເສື້ອ ໂສ້ງ ແລະ ເຄື່ອງຮັບໃຊ້ການຮຽນ
2) ເອົາໄປຍ້ອນຕ້ອງການໄປທ່ຽວຫຼິ້ນຫຼັງຈາກເລີກຮຽນແລ້ວ
3) ລັກເງິນເພື່ອເອົາໄປຊື້ເຄື່ອງໃຫ້ໝູ່, ເພື່ອນໃຫ້ໝູ່ເພື່ອນຮັກຕົນ
4) ລັກເງິນຍ້ອນຄຽດໃສ່ ພໍ່ ແມ່
5) ແລະ ອື່ນໆ

ຂັ້ນທຳອິດຄູຄວນສຳພາດຜູ້ປົກຄອງ ແລະ ສັງເກດເບິ່ງພຶດຕິກຳຂອງນັກສຶກສາຜູ້ນັ້ນ ໃນເວລາຢູ່ໃນໂຮງຮຽນ ເປັຕົ້ນວ່າ: ເຂົາມີເຄື່ອງຮັບໃຊ້ການຮຽນຄົບຖ້ວນບໍ່, ຫຼື ມີການນຸ່ງຖືແນວໃດ. ແມ່ນໃຜເປັນຜູ້ຊື້ເຄື່ອງໃຊ້ ຫຼື ຊື້ເຄື່ອງນຸ່ງໃຫ້. ຖ້າຜູ້ປົກຄອງບອກວ່າພໍ່ແມ່ເປັນຜູ້ຊື້ໃຫ້ ໂດຍບໍ່ມີຄວາມເລືອດຮ້ອນປະການໃດ, ໃນແຕ່ລະມື້ພໍ່ແມ່ຍັງໃຫ້ເງິນໄປໃຊ້ຈ່າຍອີກ, ຖ້າຄູໄດ້ຂໍ້ມູນແບບນີ້ຖືວ່າ ການຕັ້ງສົມມົດຖານຂໍ້ທີໜຶ່ງບໍ່ແມ່ນສາເຫດຂອງການຂີ້ລັກເງິນ ຂອງນັກສຶກສາຄົນນັ້ນ.

ສຳລັບການຕັ້ງສົມມົດຖານໃນຂໍ້ມູນທີສອງ ວ່ານັກສຶກສາຄົນນັ້ນລັກເງິນໄປທ່ຽວຫຼັງຈາກເລີກໂຮງຮຽນ ຄູຄວນຊອກຫາຂໍ້ມູນວ່ານັກສຶກສາຄົນນັ້ນ ກັບເຮືອເວລາຈັກໂມງ ແລະ ແມ່ນໃຜເປັນຄົນຮັບສົ່ງ, ຖ້າຄູໄດ້ຂໍ້ມູນວ່າພໍ່ແມ່ເປັນຄົນໄປຮັບ-ສົ່ງ ແລະ ກັບບ້ານຖືກກັບເວລາ ກໍ່ຖືວ່າການຕັ້ງສົມຖານຂອງຄູຢູ່ໃນຂໍ້ທີສອງຈະບໍ່ແມ່ນສາເຫດຂອງການລັກເງິນ.

ສຳລັບສົມຖານໃນຂໍ້ທີ ສາມ ນັ້ນອາດຈະຊອກຫາຂໍ້ມູນກັບນັກສຶກສາເອງ, ໂດຍສຳພາດເຖິງຄວາມສຳພັນພາຍໃນຄອບຄົວວ່າ ເປັນແນວໃດ ມີຄວາມຖືກຕ້ອງປອງດອງກັນບໍ່ ເມື່ອສຳພາດແລ້ວຄວາມສຳພັນພາຍໃນຄອບ ຄົວກໍ່ບໍ່ມີບັນຫາຫຍັງ, ສົມມົດຖານໃນຂໍ້ທີ 3 ກໍ່ບໍ່ມ່ນສາເຫດຂອງການລັກເງິນ.

ສ່ວນສົມມົດຕິຖານໃນຂໍ້ທີ 4 ນັ້ນຄູອາດຈະຊອກຫາຂໍ້ມູນ ໂດຍສັງເກດພຶດຕດິກຳຂອງນັກສຶກສາໃນຫ້ອງຮຽນ ແລະ ນອກຮ້ອງຮຽນໃນການປະຕິສຳພັນລະຫວ່າງນັກສຶກສາຄົນນັ້ນກັບໝູ່ເພື່ອນ.

ນອກຈາກນີ້ກໍ່ໃຊ້ເທັກນິກສັງມິຕິເພື່ອຊອກຫາຂໍ້ມູນ. ໂດຍມີການສ້າງສະຖານະການຂຶ້ນໂດຍການຈັດໃຫ້ນັກສາຂີ່ລົດເພື່ອໄປແຂ່ງຂັນກິລາ ຢູ່ສະຖານທີ່ທາງໂຮງຮຽນໄດ້ຈັດຂຶ້ນ. ໂດຍໃຫ້ນັກສຶກສາ

ບອກຊື່ເພື່ອນມາ 3 ຄົນ ທີ່ຕົນຢາກນັ່ງໃກ້ຕາມລຳດັບ ຈາກການສ້າງສັງຄົມມິຕິ.ຂໍ້ມູນທີ່ໄດ້ປະກົດວ່າ ນັກສຶກສາຄົນນັ້ນບໍ່ມີໃຜເລືອກນັ່ງນຳເລີຍ. ແລະ ຄູຍັງຈື່ໄດ້ວ່າ ນັກສຶກສາຄົນນັ້ນເລີຍເອົາເຄື່ອງທີ່ມີລາຄາແພງມາໃຫ້ໝູ່. ຜ່ານການສຶກສາດັ່ງກ່າວມານັ້ນ ຄູສາມາດສະຫຼຸບໄດ້ວ່າ: ສາເຫດພຶດຕິກຳຂີ້ລັກຂອງນັກສຶກສາຄົນນັ້ນແມ່ນມາຈາກ ( ເຂົາບໍ່ມີໝູ່ເພື່ອນ ) ແລະ ຢາກມີໝູ່, ຢາກໃຫ້ໝູ່ຮັກຕົນ ເຂົາຈຶ່ງລັກເງິນຂອງພໍ່ແມ່ເພື່ອມາຊື້ເຄື່ອງໃຫ້ໝູ່, ຈຸດປະສົງກໍ່ແມ່ນຢາກໄດ້ຄວາມຮັກຈາກໝູ່.

❖ **ຄູຈະຕ້ອງມີວິທີຊ່ວຍນັກສຶກສາຄົນນີ້ດ້ວຍວິທີໃດ**

1. ຄູຈຶ່ງພະຍາຍາມສັງເກດພຶດຕິກຳຂອງນັກສຶກສາຄົນນັ້ນຕໍ່ໄປວ່າ: ເຂົາມີພອດຕິກຳແນວໃດ ແລະ ແນະນຳໃຫ້ເຂົາປ່ຽນແປງພອດຕິກຳນັ້ນ.

2. ຄູຄວນໃຊ້ຂໍ້ມູນຈາກສັງຄົມມິຕິໃຫ້ເປັນປະໂຫຍດ, ດ້ວຍວິທີໃຫ້ນັກສຶກສາຄົນນັ້ນຂຽນລາຍຊື່ຂອງນັກສຶກສາຢູ່ໃນຫ້ອງທີ່ຕົນຢາກເປັນເພື່ອນສະນິດມາຢູ່ໃນ 3 ຄົນ. ໃນເມື່ຮູ້ແລ້ວຄູຈຶ່ງຂໍຄວາມຮ່ວມມືຈາກນັກສຶກສາທັງ 3 ຄົນນັ້ນ, ເພື່ອຊ່ວຍປ່ຽນແປງພຶດຕິກຳຂອງເຂົາ ທີ່ໝູ່ເພື່ອນບໍ່ມັກໃນໄລຍະຜ່ານມາ. ທັງໃຫ້ເຂົາໄດ້ເຂົ້າຮ່ວມກິດຈະ ກຳຕ່າງໆ ນຳອີກດ້ວຍ.

3. ຄູຕ້ອງອະທິບາຍໃຫ້ຜູ້ປົກຄອງຮັບຮູ້ເຖິງສາເຫດຈາກການລັກເງິນຂອງລູກ ແລະ ຄວາມຮ່ວມມືນຳຜູ້ປົກຄອງເພື່ອປັບປຸງພຶດຕິດກຳອງລູກຕົນ. ເພື່ອໃຫ້ເຂົາມີໝູ່ເພື່ອນ.

\+ ຜ່ານການສຶກສາ ແລະ ການສັງເກດຂອງຄູໄດ້ພົບວ່າ: ລັກສະນະນິໄສຂອງນັກສຶກສາຄົນນັ້ນ ບໍ່ມີໝູ່ເພື່ອນກໍ່ຍ້ອນມາຈາກສາເຫດດັ່ງນີ້ .

1) ເຂົາເປັນຄົນທີ່ໂມໂຫງ່າຍ

2) ເຂົາເປັນຄົນມັກເອົາແຕ່ໃຈຕົນເອງ ພາໃຫ້ໝູ່ເຫັນວ່າເຂົາເປັນຄົນເຫັນແກ່ຕົວ. ສະນັ້ນ, ຜູ້ປົກຄອງ ແລະ ໝູ່ເພື່ອນຄວນຊ່ວຍໃຫ້ນັກສຶກສາຄົນນັ້ນປ່ຽນແປງ, ຖ້າເຂົາບໍ່ມີການປ່ຽນແປງ ກໍ່ຈະບໍ່ມີໝູ່ຍ້ອນວ່າ ວັດຖຸສິ່ງຂອງບໍ່ສມາມດຊື້ເອົາຄວາມເປັນໝູ່ເພື່ອນບໍ່ໄດ້.

ເລື່ອງທີ່ຍົກຂຶ້ນມານັ້ນມັນເປັນພຽງແຕ່ຍົກສົມໝົດຖານຂຶ້ນມາ ເພື່ອໃຫ້ຄູມີຄວາມເຂົ້າໃຈ ແຈ້ງຕື່ມອີກ ໃນຖານະຄູເປັນນັກວິທະຍາສາດແຫ່ງພຶດຕິກຳ.

**ຕົວຢ່າງ,** 2 ມີນັກສຶກສສາຜູ້ໜຶ່ງກໍ່ໄດ້ມີພຶດຕິກຳຂີ້ລັກເງິນຄືກັນ. ແຕ່ການລັກເງິນຂອງນັກສຶກສາຜູ້ນີ້ແມ່ນມີຈຸດປະສົງຄຽດໃສ່ ພໍ່ ແມ່ .ເພາະວ່າເງິນທີ່ເຂົາລັກມານັ້ນບໍ່ໄດ້ເອົາໄປໃຊ້ຈ່າຍຫຍັງເລີຍ. ພາຍຫຼັງຄູຊອກຫາສາເຫດຂອງການລັກເງິນ ແມ່ນເປັນຍ້ອນພໍ່ແມ່ມີນິດໃສຈູ້ຈີ້ ແລະ ຫາເລື່ອງທີ່ບໍ່ດີໃສ່ເຂົາຕະຫຼອດເວລາ.

ສະນັ້ນສະຫຼຸບໄດ້ວ່ານັກສຶກສາສອງຄົນມີພຶດຕິກຳຄືກັນ. ແຕ່ຈະມີສາເຫດທີ່ແຕກຕ່າງກັນ. ຈາກຕົວຢ່າງທີ່ກ່າວມາຂ້າງເທິງນັ້ນ. ຄູຈຶ່ງຕ້ອງພະຍາຍາມເປັນນັກວິທະຍາສາດ ແຫ່ງພຶດຕິກຳ. ໝາຍວ່າຄູຈະຄ້ອງຊອກຫາຂໍ້ມູນມາຊ່ວຍ ເຂົ້າໃນການຕັດສິນບັນຫາ, ບໍ່ຄວນຕັດສິນບັນຫາຢ່າງໄວວາ ແລະ ຢຶດຖືແນວຄວາມຄິດຂອງຕົນໂດຍບໍ່ຊອກຫາສາເຫດກ່ອນ.

**ຕົວຢ່າງ:** ຄູສັງເກດເຫັນນັກຮຽນຍິງຜູ້ໜຶ່ງ ທີ່ບໍ່ມັກຕອບຄຳຖາມຄູ ກໍ່ເລີຍຕັດສິນວ່າ ນັກຮຽນຄົນນັ້ນເປັນຄົນອີ້ອາຍ, ການຕັດສິນທີ່ບໍ່ໄດ້ຊອກຫາສາເຫດ, ກໍ່ຈະເປັນຄຳຕອບທີ່ບໍ່ເປັນປະໂຫຍດ ແລະ ບໍ່

ສາມາດຊ່ວຍເຫຼືອນັກຮຽນໄດ້. ສະນັ້ນ, ຄູຕ້ອງມີການສຶກສາວ່າ: ຍ້ອນຫຍັງນັກຮຽນຍິງຄົນນັ້ນຈຶ່ງບໍ່ຄ່ອຍຍົກມືຕອບຄໍາຖາມຄູຈັກເທື່ອ. ການສຶກສາຫາສາເຫດກໍເລີ່ມດ້ວຍ ການຕັ້ງສົມມຸດຕິຖານຂອງພຶດຕິກໍາການຮຽນ. ເພາະວ່າ ຖ້າເຮົາຢາກແກ້ໄຂພຶດຕິກໍາ ຈະຕ້ອງຮູ້ສາເຫດຂອງພຶດຕິກໍານັ້ນ. ຈາກຜົນການສຶກສພົບວ່າ : ສາເຫດຂອງນັກຮຽນຍິງ ທີ່ບໍ່ມັກຕອບຄໍາຖາມຍ້ອນວ່າ ໃນເວລາໃດເຂົາຕອບບໍ່ຖືກຄູກໍ່ຈະຮ້າຍ. ດັ່ງນັ້ນ, ວິທີການແກ້ໄຂບັນຫາດັ່ງກ່າວຄູຄວນແນະນໍາ ໃຫ້ນັກຮຽນຍິງນັ້ນພະຍາຍາມຕອບຄໍາຖາມຂອງຄູ. ຖ້າເຂົາຕອບບໍ່ຖືກຄູຕ້ອງແນະນໍາ ແລະ ຖາມດ້ວຍຄໍາຖາມທີ່ງ່າຍສາກ່ອນ, ຖ້າເຂົາຕອບຖືກຄູຕ້ອງໃຫ້ເກົາລັງໃຈ ຫຼື ຖາມອີກຕໍ່ໄປ.

## 8. ຈິດຕະວິທະຍາກັບການສອນ

ຈິດຕະວິທະຍາຈະມີບົດບາດຕໍ່ການຕັດສິນໃຈຂອງຄູ, ໃນທຸກຂັ້ນຕອນຂອງການສິດສອນ, ຈະເລີ່ມຕັ້ງແຕ່ການກໍານົດຈຸດມຸ້ງໝາຍຂອງການສອນ. ການສຶກສາສະເພາະຂອງຜູ້ຮຽນ ກ່ອນການສອນການດໍາເນີນການສອນຈົນເຖິງການວັດ ແລະ ປະເມີນຜົນການສອນ.

ຢູ່ໃນຂັ້ນກ່ອນການສອນ ຄູຕ້ອງກໍານົດຈຸດໝາຍວ່າ ຈະໃຫ້ຜູ້ຮຽນມີພັດທະນາການ ຫຼື ຄວາມກ້າວໜ້າດ້ານະຕິປັນຍາແນວໃດ, ທັກສະນະຄະຕິ ແລະ ດ້ານທັກສະ, ມີຫຼາຍວນ້ອຍພຽງໃດ ການກໍານົດຈຸດໝາຍດັ່ງກ່າວຈະຕ້ອງພິຈາລະນາ ແລະ ຮູ້ກໍານົດໃຫ້ສອດຄ່ອງ ກັບສະພາບພື້ນຖານຂອງຜູ້ຮຽນ, ສະນັ້ນ, ຄວາມເຂົ້າໃຈເລື່ອງພັດທະນາຄວາມສາມດ ແລະ ຄຸນລັກສະນະທາງບຸກຄະລິກກະພາບຂອງຜູ້ຮຽນຈຶ່ງແມ່ນສິ່ງທີ່ຈໍາເປັນນນຄູຕ້ອງໄດ້ຮັບຮູ້ສາກ່ອນ.

ໃນເມື່ອຕັ້ງຈຸດໝາຍຂອງການສອນແລ້ວ ຂັ້ນຕໍ່ໄປກໍ່ແມ່ນຄູຈະພິຈາລະນາ ແລະ ຕັດສິນໃຈວ່າຕົນຈະສອນແບບໃດ ເພື່ອເຮັດໃຫ້ຜູ້ຮຽນເກີດມີພັດທະນາການ ຫຼື ຈະເລີນງອກງາມຕາມທີ່ຖືກໄນົດໄວ້ ຢູ່ໃນຕຸດປະສົງມຸ້ງໝາຍ. ຄວາມຮູ້ໃນດ້ານຈິດຕະວິທະຍາການສຶກສາ ນີ້ມັນຈະຊ່ວຍຄູມີການຕັດສິນໃຈໄດ້ຢ່າງຖືກຕ້ອງເໝາະສົມ. ເພາະຄູຕ້ອງໄດ້ອີງໃສ່ຄວາມເຂົ້າໃຈຫຼັກການຮຽນຮູ້ ແລະ ຫຼັກການກ່ຽວກັບຄວາມແຕກຕ່າງ ລະຫວ່າງບຸກຄົນທີ່ເປັນພື້ນຖານ.

ຫຼັກການເລື່ອງການຮຽນຮູ້ ສາມາດຊ່ວຍໃຫ້ຄູເຂົ້າໃຈວ່າ : ຕົວແປໃດ, ພະວະໃດທີ່ຊ່ວຍຜູ້ຮຽນມີການຮຽນ ມີປະສິດທິພາບມີດີທີ່ສຸດ.

ທ່ານ ກາເຍ່ ( Gagne ) ໄດ້ຊີ້ໃຫ້ເຫັນວ່າ ການຮຽນຮູ້ຈະມີໃຫ້ຫຼາຍແບບເຊັ່ນ : ການຮຽນທັກສະ, ການຮຽນຮູ້ໂດຍເຂບ, ການຮຽນຮູ້ ຫຼັກການ, ການຮຽນຮູ້ການແກ້ໄຂບັນຫາ ແລະ ອື່ນໆ ການສອນໃຫ້ນັກຮຽນເກີດມີການຮຽນຮູ້ແຕ່ລະແບບຈຶ່ງຕ້ອງໃຊ້ວິທີການແຕກຕ່າງກັນ. ການທ່ອງຈໍາ ອາດເປັນວິທີເໝາະສົມກັບການຮຽນຮູ້ບັງສູດ, ແຕ່ອາດບໍ່ໄດ້ຜົນກັບກມານຮຽນເລື່ອງແກ້ບົດເລກ.ສະນັ້ນຫຼ.ການຮຽນຮູ້ຈຶ່ງມີຄຸນຄ່າຫຼາຍສໍາລັບຄູ.

ຫຼັກການທາງຈິດຕະວິທະຍາການສຶກສາ ອີກຢ່າງໜຶ່ງ ທີ່ຄູຕ້ອງນໍາໄປພິຈາລະນາຕັດສິນໃຈວ່າຈະສອນແນວດ, ກໍ່ແມ່ນຫຼັກຄວນແຕກຕ່າງລະຫວ່າງບຸກຄົນ. ຄູຈະພົບສະເໝີວ່າ ວິທີການໃຊ້ໄດ້ຜົນດີກັບເດັກນັກຮຽນຢູ່ລະດັບອາຍຸ 1 ຫຼື ລະດັບຊັ້ນ 1 . ອາດຈະໃຊ້ບໍ່ໄດ້ເລີຍ ຫຼື ໃຊ້ໄດ້ຜົນໜ້ອຍທີ່ສຸດກັບ

ເດັກນັກຮຽນ, ອີກລະດັບອາຍຸ ຫຼື ລະດັບຊັ້ນໜຶ່ງອີ. ເພາະວ່າເດັກນັກຮຽນຢູ່ໃນແຕ່ກຸ່ມ ຫຼື ແຕ່ລະບຸກຄົນ ຈະມີຄວາມແຕກຕ່າງກັນຫຼາຍຢ່າງເຊັ່ນ : ຮູບແບບຂອງການຮຽນ, ແຮງຈູງໃຈ, ຄວາມທະນັດ ແລະ ອື່ນໆ ສະນັ້ນ ຄູຕ້ອງຮູ້ພິຈາລະນາປັບປ່ຽນວິທີການສອນໃຫ້ເໝາະສົມກັບຜູ້ຮຽນ.

ການຈັດຫ້ອງຮຽນກໍ່ເປັນສິ່ງສຳຄັນອີກປະການໜຶ່ງ ຕໍ່ກັບຜົນສຳເລັດຂອງການສອນ, ສະນັ້ນຄູຕ້ອງເປັນຜູ້ວາງແຜນວ່າ : ຕົນຈະສອນຢ່າງໃດ, ສອນຫຍັງ, ຈະຈັດລະດັບຂັ້ນຕອນຂອງກິດຈະກຳແນວໃດ, ຈະຈັດປະສົບການ ຫຼື ສະພາບການເພື່ອໃຫ້ເກີດມີການຮຽນຮູ້ ໄດ້ຢ່າງມີປະສິດທິພາບແນວໃດ, ຈະສົ່ງເສີມເດັກທີ່ຮຽນດີ ຢູ່ແລ້ວໃຫ້ເຂົາຮັກສາລະດັບຜົນທີ່ດີນັ້ນຢ່າງໃດ. ໃນເວລາເດັກບາງຄົນຫາກມີພຶດຕິກຳທີ່ບໍ່ປາຖະນາ ຄູຈະດຳເນີນການປັບປ່ຽນພຶດຕິກຳຂອງເຂົາແນວໃດ. ມີຜົນການວິໄຈໃນຫຼາຍໆເລື່ອງພົບຜົນທີ່ສອດຄ່ອງກັນວ່າ ຖ້າຄູຈັດການໃນຫ້ອງຮຽນໄດ້ດີສໍາໃດກໍ່ເຮັດໃຫ້ຜົນການຮຽນຂອງນັກຮຽນດີຂຶ້ນພຽງນັ້ນ.

ຫຼັງຈາກການສອນກໍ່ມ່ນຂັ້ນການວັດ ແລະ ປະເມີນຜົນການຮຽນຮູ້ຂອງຜູະຮຽນ. ການວັດ ແລະ ປະເມີນຜົນຈະສະທ້ອນໃຫ້ເຫັນຄວາມເໝາະສົມຂອງການສອນຫຼາຍໆຢ່າງເຊັ່ນ : ການກຳນົດຈຸດໝາຍມີຄວາມເໝາະສົມກັບຄວາມກຽມພ້ອມຂອງນັກຮຽນຫຼືບໍ່, ການດຳເນີນການສອນໄດ້ບັນລຸຜົນຕາມຈຸດມຸ້ງໝາຍ ຫຼື ບໍ່, ຜູ້ທີ່ຮຽນໄດ້ມີຄວາມຈະເລີນງອກງາມ ຫຼື ພັດທະນາໃນດ້ານຕ່າງໆ ເພີ່ມຂຶ້ນຈາກໃນໄລຍະກ່ອນການສອນພຽງໃດ.

ສະນັ້ນ ເພິ່ນຈຶ່ງສາມາດເວົ້າໄດ້ວ່າ : ຈິດຕະວິທະຍາການສຶກສາມີຄວອາມສຳຄັນຢ່າງຍິ່ງ ຕໍ່ກັບການດຳເນີນການສອນ, ມັນແມ່ນພະລະກິດຫຼັກຂອງຄູ. ຈິດຕະວິທະຍາການສຶກສາຈະຊ່ວຍໃຫ້ຄູຕອບຄຳຖາມໄດ້ວ່າ : ຄູຈະສອນເຮັດຫຍັງ, ຈະສອນຜູ້ໃດ ແລະ ຈະສອນແນວໃດ ທ່ານ ຊິລເບຣແມນ ( Silberman , 1966: 124 ) ໄດ້ກ່າວຢ່າງໜ້າຄິດວ່າ : ຄູທີ່ບໍ່ມີຄວາມຮູ້ຫຼັກການຂອງຈິດຕະວິທະຍາການສຶກສສາ ຈະປຽບດັ່ງແພດທີ່ບໍ່ມີຄວາມຮູ້ຫຼັກເຄມີຊີວະ, ກໍ່ຈະປະສາຈາກບໍ່ໄດ້ຕໍ່ກັບຄວາມລົ້ມເຫຼວໃນການຕັດສິນໃຈຕ່າງໆໄດ້.

## ❖ ສະຫຼຸບ:

ຄູຈະບໍ່ພຽງແຕ່ເປັນຜູ້ທີ່ສິດສອນ ຫຼື ທ່າຍທອດຄວາມຮູ້ໃຫ້ກັບຜູ້ຮຽນເທົ່ານັ້ນ. ແຕ່ຍັງຕ້ອງເຮັດໜ້າທີ່ອື່ນໆອີກດ້ວຍເຊັ່ນ : ເປັນແບບຢ່າງທີ່ດີ, ເປັນຜູ້ທີ່ສືບທອດດ້ານວັດທະນະທຳ, ຄຸນນະທຳ, ເປັນຜູ້ຮູ້ໄຝຫາ ແລະ ພັດທະນາຄວາມຮູ້ຢູ່ສະເໝີ. ເປັນຜູ້ບໍລິຫານທາງວິຊາການໃຫ້ ແກ່ນັກຮຽນຮູ້ ແລະ ຊຸມຊົນ.

ຍ້ອນໜ້າທີ່ ແລະ ບົດວ“ບາດຂ້າງເທິງນັ້ນ, ວຽກງານຂອງຈຶ່ງແມ່ນວຽກທີ່ໜັກໜ່ວງ ແລະ ມີຄູພຽງສ່ວນໜຶ່ງເທົ່ານັ້ນ ທີ່ຈະເປັນຄູມີປະສິດທິພາບ ແລະ ປະສົບຜົນສຳເລັດໃນອາຊີບ. ຄູທີ່ມີປະສິດທິພາບຈະມີລັກສະນະ ແລະ ຄວາມສາມາດຫຼາຍປະການເຊັ່ນ : ຄວາມສາມາດພັດທະນາທັກສາການຄິດຂອງເດັກນັກຮຽນ, ຄວາມສາມາດການສ້າງມະໂນທັດ ແລະ ກະຕຸ້ນແຮງຈູງໃຈໃຫ້ແກ້ຜູ້ຮຽນ. ສາມາດຄວບ

ຄູມຫ້ອງຮຽນ ແລະ ເປັນແບບຢ່າງທີ່ດີ, ສາມາດຖ່າຍທອດຄວາມຮູ້ໄດ້ ແລະ ສາມາດວັດປະເມີນຜົນການຮຽນຮູ້ຂອງນັກຮຽນ ໄດ້ຢ່າງຖືກຕ້ອງເໝາະສົມ.

ຄຸນລັກສະນະ ແລະ ຄວາມສາມາດດັ່ງກ່າວລ້ວນແຕ່ອີງໃສ່ຫຼັກການ ແລະ ທິດສະດີທາງຈິດຕະວິທະຍາການສຶກສາເປັນພື້ນຖານທັງນັ້ນ.

ໃນເມື່ອພິຈາລະນາການສອນ ເຊິ່ງແມ່ນໜ້າທີ່ຫຼັກຂອງຄວາມເປັນຄູກໍ່ຍິ່ງເຫັນຢ່າງຊັດເຈນວ່າ : ຈິດຕະວິທະຍາການສຶກສາໄດ້ບົດບາດສຳຄັນຢູ່ທຸກຂັ້ນຕອນຂອງການສອນ, ເລີ້ມຕັ້ງແຕ່ການກຳນົດຈຸດມຸ້ງໝາຍໃຫ້ສອດຄ່ອງກັບສະພາບພື້ນຖານຂອງຜູ້ຮຽນ, ການວາງແຜນ ແລະ ການດຳເນີນການສອນຈົນເຖິງຂັ້ນການວັດ ແລະ ປະເມີນຜົນ, ສະນັ້ນ. ຈິດຕະວິທະຍາການສຶກສາຈຶ່ງມີຄວາມສຳຄັນຢ່າງຍິ່ງຕໍ່ການເປັນຄູທີ່ມີປະສິດທິພາບ.

# ບົດທີ 2

# ສະຕິປັນຍາກັບການສອນ

ເດັກແຕ່ລະຄົນຈະມີລັກສະນະສະເພາະຂອງຕົນທີ່ແຕກຕ່າງກັບຜູ້ອື່ນ, ເດັກທີ່ຮຽນໃນແຕ່ລະລະດັບກໍ່ຈະແຕກຕ່າງກັນເຖິງຈະຮຽນຢູ່ໃນຊັ້ນດຽວກັນກໍ່ຕາມ ແຕ່ກໍ່ມີຄວາມແຕກຕ່າງກັນເຊັ່ນ: ຮູບຮ່າງ, ຄວາມສົນໃຈ, ຄວາມສາມາດ, ລັກສະນະນິດໄສແຕກຕ່າງກັນ, ເດັກບາງຄົນຮຽນສິ່ງຕ່າງໆໄດ້ຢ່າງໄວວາ, ແຕ່ມີບາງຄົນຮຽນຮູ້ໃນສິ່ງດຽວກັນໄດ້ຢ່າງຊັກຊ້າ.

ໄດ້ມີຫຼາຍຄຳຖາມວ່າ: ຄວາມແຕກຕ່າງຂອງແຕ່ລະບຸກຄົນນັ້ນມັນເກີດຂຶ້ນໄດ້ແນວໃດ. ທີ່ຜ່ານມາກໍ່ໄດ້ຖືກຖຽງກັນມາເປັນເວລາຫຼາຍສັດຕະວັດວ່າ : ລະຫວ່າງກຳມະພັນ ແລະ ສິ່ງແວດລ້ອມ, ສິ່ງໃດທີ່ມີອິດທິພົນຕໍ່ກັບຄວາມແຕກຕ່າງລະຫວ່າງບຸກຄົນຫຼາຍກວ່າກັນ. ເຖິງປັດຈຸບັນກໍ່ບໍ່ອາດສະຫຼຸບຢ່າງຊັດເຈນໄດ້. ເຖິງຢ່າງໃດກໍ່ຕາມສິ່ງທີ່ຍອມຮັບກັນໃນຂະນະນີ້ກໍ່ແມ່ນຄວາມແຕກຕ່າງທັງຫຼາຍຂອງບຸກຄົນແມ່ນເກີດມາຈາກກຳມະພັນ ແລະ ສິ່ງແວດລ້ອມ.

ຄວາມແຕກຕ່າງຂອງສະຕິປັນຍາແມ່ນຕົວຢ່າງໜຶ່ງຂອງຜົນລວມ ລະຫວ່າງກຳມະພັນ ແລະ ສິ່ງແວດລ້ອມ, ສິ່ງດັ່ງກ່າວນີ້ກໍ່ເປັນອົງປະກອບສຳຄັນທີ່ພາໃຫ້ເກີດມີຄວາມແຕກຕ່າງທາງດ້ານຄວາມສາມາດໃນການຮຽນຂອງເດັກ. ດັ່ງນັ້ນ, ຄວາມເຂົ້າໃຈສະພາບຂອງຄວາມແຕກຕ່າງດ້ານສະຕິປັນຍາຂອງນັກຮຽນຈະເປັນຜົນປະໂຫຍດໃຫ້ແກ່ຄູໃນການກຳນົດຈຸດມຸ່ງໝາຍ ແລະ ການຈັດກິດຈະກຳການຮຽນ - ການສອນໄດ້ຢ່າງເໝາະສົມ.

## 1. ຄວາມໝາຍຂອງສະຕິປັນຍາ.

ສະຕິປັນຍາແມ່ນຫຍັງ? ຕໍ່ກັບຄຳຖາມນີ້ໄດ້ມີຫຼາຍທັດສະນະທີ່ແຕກຕ່າງກັນ. ນັກການສຶກສາໄດ້ມີຄວາມເຫັນວ່າ: ສະຕິປັນຍາ ໝາຍເຖິງຄວາມສາມາດຂອງການຮຽນຮູ້. ນັກຊີວະວິທະຍາໄດ້ມີຄວາມເຫັນວ່າ: ສະຕິປັນຍາ ໝາຍເຖິງຄວາມສາມາດໃນການປັບຕົວ. ນັກຈິດວິທະຍາໄດ້ມີຄວມເຫັນວ່າ: ສະຕິປັນຍາ ໝາຍເຖິງການອະນຸມານຄວາມສຳພັນຂອງສິ່ງຕ່າງໆ. ນັກວິທະຍາການຄອມພິວເຕີ ມີຄວາມໝາຍເຫັນວ່າ: ສະຕິປັນຍາ ໝາຍເຖິງຄວາມສາມາດໃນການປະມວນຜົນຂໍ້ມູນໄດ້ຢ່າງໄວວາ ແລະ ມີປະສິດທິພາບ ( Aiken, 19790: 107 )

ໃນທັດສະນະຂອງ ບິເນຕ ( Binet ) ສະຕິປັນຍາເປັນສິ່ງທີ່ຊັບຊ້ອນ ແລະ ກ່ຽວຂ້ອງກັບລັກສະນະສຳຄັນ 4 ປະການຄື: ເປົ້າໝາຍ ຫຼື ທິດທາງ, ຄວາມສົນໃຈ, ການຄົ້ນຄິດ ແລະ ການວິຈານທ່ານເວົ້າວ່າ ຜູ້ທີມີສະຕິປັນຍາຍ່ອມສະແດງພຶດຕິກຳຢ່າງມີຈຸດມຸ່ງໝາຍ ຫຼື ທິດທາງ, ທັງສາມາດຄິດຫາວິທີເພື່ອຈະມຸ່ງໄປສູ່ຄວາມສຳເລັດ. ນອກນີ້ຍັງສາມາດເລືອກການຕັດສິນໃຈ ແລະ ວິຈານວິທີການຕ່າງໆທີ່ຄິດຂຶ້ນມາ. ຂະບວນການແກ້ໄຂບັນຫາທັງໝົດນີ້ຈະມີປະສິດທິພາບພຽງໃດນັ້ນແມ່ນກ່ຽວຂ້ອງໂດຍກົງກັບຄວາມເຂົ້າໃຈຢູ່ໃນເລື່ອງນັ້ນ.

ທ່ານ ເວດເລຣ ( Wechsler, 1968 : 7 ) ໄດ້ນິຍາມສະຕິປັນຍາວ່າ: ສະຕິປັນຍາໝາຍເຖິງຜົນລວມຂອງສັກກາຍຍະພາບຂອງບຸກຄົນທີ່ຈະກະທຳສິ່ງຕ່າງໆຢ່າງມີຈຸດໝາຍ. ຄິດຢ່າງມີເຫດຜົນ ແລະ ປັບຕົວເຂົ້າກັບສິ່ງແວດລ້ອມໄດ້ຢ່າງມີປະສິດທິພາບ.

ຈາກການສຳຫຼວດທັດສະນະຕ່າງໆ ກ່ຽວກັບຄວາມໝາຍຂອງສະຕິປັນຍາຢູ່ໃນກຸ່ມຜູ້ຊ່ຽວຊານໃນສາຂາວິຊາຕ່າງໆ ກໍ່ສາມາດຈັດກຸ່ມຄວາມຄິດໄດ້ 3 ກຸ່ມດັ່ງນີ້:

1) . ສະຕິປັນຍາ ແມ່ນ ສາມາດໃນການແກ້ໄຂບັນຫາ, ຄວາມສາມາດທາງເຫດຜົນ ແລະ ສາມາດລະບຸວິທີການແກ້ໄຂບັນຫາໄດ້ຫຼາກຫຼາຍວິທີ.

2) .ສະຕິປັນຍາແມ່ນຄວາມຄວາມສາມາດທາງພາສາ.

3) .ສະຕິປັນຍາ ແມ່ນຄວາມສາມາດທາງສັງຄົມເຊິ່ງໝາຍເຖິງການມີປະຕິສຳພັນກັບຜູ້ອື່ນໄດ້. ນອກຈາກທີ່ກ່າວມາຂ້າງເທິງແລ້ວຍັງມີຜູ້ນິຍາມກ່ຽວກັບສະຕິປັນຍາຢ່າງຫຼວງຫຼາຍ. ແຕ່ເຖິ່ງຢ່າງໃດກໍ່ຕາມ ປະຈຸບັນນັກຈິດຕະວິທະຍາສ່ວນຫຼາຍກໍ່ຍອມຮັບວ່າສະຕິປັນຍາ ໝາຍເຖິ່ງຄວາມສາມາດ 3 ດ້ານດັ່ງຕໍ່ໄປນີ້

- ຄວາມສາມາດໃນການຮຽນຮູ້.
- ຄວາມສາມາດໃນການຄິດຢ່າງມີເຫດຜົນ, ສາມາດຄິດໃນເລື່ອງທີ່ຫຍຸ້ງຍາກຊັບຊ້ອນ ແລະສິ່ງທີ່ເປັນນາມມະທຳໄດ້.
- ຄວາມສາມາດໃນການປັບຕົວກັບສິ່ງແວດລ້ອມ.

## 2. ຄວາມແຕກຕ່າງດ້ານສະຕິປັນຍາກັບການສິດສອນ

ຢູ່ໃນຫ້ອງຮຽນໜຶ່ງໆ ຍ່ອມມີເດັກນັກຮຽນທີ່ແຕກຕ່າງກັນດ້ານຄວາມສາມາດ ຫຼື ສະຕິປັນຍາ. ສະນັ້ນ ,ວຽກສຳຄັນຂອງການແຍກກຸ່ມຄວາມສາມາດທາງສະຕິປັນຍາຂອງນັກຮຽນ.ໃນເມື່ອແຍກແລ້ວຄູກໍ່ຈັດລາຍການ ຫຼື ດຳເນີນການສອນໃຫ້ເດັກໃນແຕ່ລະກຸ່ມແນວໃດຈິ່ງຈະເຮັດໃຫ້ການຮຽນ - ການສອນມີປະສິດທິພາບສູງສຸດ.

### 2.1. ການຈັດກຸ່ມຕາມຄວາມສາມາດຂອງເດັກ

**ການຈັດກຸ່ມຕາມຄວາມສາມາດຂອງເດັກທີ່ນິຍົມໃຊ້ຈະມີ 2 ວິທີຄື:**

- ຈັດເດັກທີ່ມີຄວາມສາມາດໃກ້ຄຽງກັນໄວ້ໃນຫ້ອງດຽວກັນ. ວິທີນີ້ຈະເກີດມີຄວາມແຕກຕ່າງລະຫວ່າງຫ້ອງຮຽນ.
- ຈັດເດັກທີ່ມີຄວາມສາມາດແຕກຕ່າງກັນຢູ່ໃນຫ້ອງຮຽນດຽວກັນແລ້ວແບ່ງເດັກອອກເປັນກຸ່ມຍ່ອຍ, ໃນແຕ່ລະກຸ່ມຍ່ອຍນັ້ນ ຈະມີເດັກທີ່ມີຄວາມສາມາດເທົ່ານັ້ນ. ວິທີນີ້ຈະເຮັດໃຫ້ນັກຮຽນມີຄວາມແຕກຕ່າງກັນຢູ່ພາຍໃນຫ້ອງຮຽນດຽວກັນ.

ການຈັດກຸ່ມແບບທຳອິດຈະປະກົດເຫັນຢູ່ໃນໂຮງຮຽນໂດຍທົ່ວໄປເຊັ່ນ: ມີການສອບເສັງເບິ່ງລະດັບຄວາມສາມາດແລ້ວກໍ່ຈັດເດັກນັກຮຽນຢູ່ແຕ່ລະຫ້ອງເຊັ່ນ: ນັກຮຽນທີ່ເກັ່ງຈະຈັດຢູ່ຫ້ອງ "ກ" ແລະ ຈັດຕາມລຳດັບລົງມາ. ຜ່ານການຈັດຫ້ອງແບບນີ້ໄດ້ມີຜົນການວິໄຈ: ວິທີການຈັດຫ້ອງຮຽນແບບນີ້ຈະບໍ່ຊ່ວຍ

ໃຫ້ການຮຽນຂອງເດັກທີ່ຮຽນອ່ອນ ດີຂຶ້ນ, ຊ້ຳບໍ່ໜຳຍັງເກີດມີບັນຫາແກ່ເດັກອີກ. ຖ້າເດັກມີຄວາມສາມາດຕ່ຳ ຄູທີ່ສອນກໍ່ມີແນວໂນ້ມຕັ້ງເປົ້າໝາຍການສອນຕ່ຳ ແລະ ດຳເນີນການສອນແບບບໍ່ມີຊີວິດ, ຂາດຄວາມກະຕືລືລົ້ນ, ພ້ອມນີ້ຄູຍັງມີທັດສະນະຄະຕິທີ່ບໍ່ດີຕໍ່ກຸ່ມດັ່ງກ່າວ.ສ່ວນນັກຮຽນກໍ່ຈະມີມະໂນທັດທາງລົບ ແລະ ຂາດຄວາມພູມໃຈໃນຕົນເອງ

ເຖິງຢ່າງໃດກໍ່ຕາມຈຸດດີຂອງການຈັດການຮຽນແບບນີ້ ກໍ່ມີຈຳນວນຫຼາຍໂດຍສະເພາະແມ່ນນັກຮຽນເກັ່ງ ຫຼື ຜູ້ທີ່ມີຄວາມສາມາດສູງ. ເຂົາຈະມີຄວາມກະຕືລືລົ້ນຕໍ່ການຮຽນ ແລະ ມີຜົນການຮຽນສູງກ່ວານັກຮຽນປະເພດອື່ນໆ, ເຂົາຍັງມີມະໂນພາບໄປທາງບວກ ແລະ ພາກພູມໃຈໃນຕົນເອງສູງ.

ສຳລັບຈັດກຸ່ມເດັກນັກຮຽນຕາມວິທີທີ່ 2 ເຊິ່ງຈັດເປັນກຸ່ມຍ່ອຍໆໃນແຕ່ລະຮຽນແມ່ນວິທີພາໃຫ້ເກີດຜົນທາງບວກຂອງນັກຮຽນທີ່ມີຄວາມສາມາດຕ່າງໆທຸກລະດັບ. ການຈັດກຸ່ມຕາມວິທີນີ້ ຄູຄວນຍຶດຖືແນວທາງດັ່ງລຸ່ມນີ້.

1). ຄວນອີງໃສ່ຜົນການຮຽນຕາມຜົນການຮຽນຢູ່ປັດຈຸບັນໃນວິຊານັ້ນເປັນຫຼັກເຊັ່ນ: ການຈັດກຸ່ມການອ່ານ ກໍ່ຈັດຕາມຄວາມສາມາດໃນການອ່ານ ຫຼືຈັດກຸ່ມຕາມຄວາມສາມາດທາງຄະນິດສາດ. ມີບາງວິຊາອາດຢູ່ໃນກຸ່ມອ່ອນ. ຢູ່ໃນວິຊາດຽວກັນກໍ່ອາດມີການປ່ຽນແປງສະມາຊິກຂອງກຸ່ມຕະຫຼອດເວລາ, ຖ້ານັກຮຽນມີຜົນການຮຽນປ່ຽນແປງໄປ

2). ຄູບໍ່ຄວນເນັ້ນຄວາມສາມາດລະຫວ່າງກຸ່ມແຕ່ຄວນສົ່ງເສີມຄວາມຮ່ວມມື ແລະ ພັດທະນາຕົນເອງຂອງນັກຮຽນແຕ່ລະຄົນໃຫ້ຫຼາຍຂຶ້ນ. ການຈັດກຸ່ມວິທີນີ້ຄູຄວນເນັ້ນໃສ່ບົດຮຽນຫຼາຍໆບົດນັກຮຽນກໍ່ຕ້ອງໄດ້ໝູນວຽນປ່ຽນກຸ່ມໄປຕາມຄວາມສາມາດຢູ່ໃນແຕ່ລະບົດຮຽນ.

3). ຈຳນວນກຸ່ມບໍ່ຄວນຫຼາຍກ່ວາ 2- 3 ກຸ່ມ ເພື່ອສະດວກໃຫ້ຄູກະກຽມອຸປະກອນ ແລະ ດຳເນີນການສອນຢ່າງທົ່ວເຖິງ. ຖ້າແບ່ງເປັນຫຼາຍກຸ່ມເກີນໄປຈະເຮັດໃຫ້ຄູບໍ່ສາມາດຄວບຄຸມການດຳເນີນກິດຈະກຳ ກຸ່ມໃຫ້ທົ່ວເຖິງໄດ້ ແລະ ຈະສົ່ງຜົນສະທ້ອນຕໍ່ການຮຽນຮູ້ຂອງນັກຮຽນ.

4). ການປັບວິທີສອນທີ່ເໝາະສົມກັບຄວາມຕ້ອງການຂອງນັກຮຽນ ແລະ ມີຜົນດີນັ້ນ. ຄູຕ້ອງດຳເນີນການສອນໃຫ້ສອດຄ່ອງກັບຄວາມສາມາດ ແລະ ຄວາມຕ້ອງການຂອງນັກຮຽນອີກ.

ຜ່ານມາມີບາງຄັ້ງຄູອາດພົບບັນຫາໃນການແບ່ງກຸ່ມ, ເນື່ອງຈາກມີນັກຮຽນບາງຄົນເກັ່ງທີ່ສຸດ ຫຼື ມີສະຕິປັນຍາຂັ້ນສະຫຼາດ ຫຼື ຂັ້ນອັດສະລິຍະ ແລະ ມີນັກຮຽນບາງຄົນພັດມີສະຕິປັນຍາຕ່ຳຈົນບໍ່ສາມາດຈັດເຂົ້າກຸ່ມໃດໄດ້. ຢູ່ໃນກໍລະນີນີ້ ຄູຕ້ອງແຍກນັກຮຽນດັ່ງກ່າວອອກເປັນພິເສດເພື່ອຊອກທາງສົ່ງເສີມ ແລະ ຊ່ວຍເຫຼືອເດັກດັ່ງກ່າວ.

### 2.2. ເດັກທີ່ມີສະຕິປັນຍາອ່ອນ

#### 2.2.1 ລັກສະນະ ແລະ ແບ່ງລະດັບການຮຽນຂອງເດັກປັນຍາອ່ອນ.

ເດັກທີ່ມີສະຕິປັນຍາຕ່ຳ ຫຼື ເອີ້ນວ່າເດັກປັນຍາອອ່ນ ຫຼື ເດັກມີຄວາມບົກຜ່ອງທາງສະໝອງແຫ່ງສະຫາລັດອາເມລິກາ(Ameri-can Association on Mentai Deficiency ຫຼື AAMD) ໄດ້ກ່າວເຖິງເດັກເຫຼົ່ານີ້ໄດ້ມີລັກສະນະສຳຄັນ 2 ປະການຄື:

1). ມີລະດັບສະຕິປັນຍາຕໍ່າກວ່າຄ່າສະເລ່ຍ ຫຼື ມີ IQ ຕໍ່າກວ່າ 70 ລົງມາ.

2). ບໍ່ສາມາດປັບຕົວເຂົ້າກັບສິ່ງແວດລ້ອມໄດ້ ຫຼື ມີພຶດຕິກຳທີ່ບໍ່ເໝາະສົມກັບລະດັບອາຍຸຕາມການຄາດຫວັງຂອງສັງຄົມ.

ນອກຈາກເວົ້າມາ 2 ປະການນັ້ນແລ້ວ, ພວກເຮົາສາມາດສັງເກດເຫັນເດັກທີ່ມີປັນຍາອ່ອນໄດ້ຈາກຮູບຮ່າງທ່າທາງ ແລະ ພຶດຕິກຳເຊັ່ນ: ຈຳພວກຫົວມານນໍ້າຈະມີຫົວໃຫ່ຍກວ່າປົກກະຕິ, ຫຼື ຈຳພວກສະໝອງນ້ອຍ, ສະໝອງບໍ່ພັດທະນາເຕີບໂຕເທົ່າທີ່ຄວນ ເຮັດໃຫ້ຂະໜາດຫົວນ້ອຍກວ່າປົກກະຕິ, ອີກຈຳນວນໜຶ່ງທີ່ເຄີຍເຫັນເພິ່ນເອີ້ນວ່າ: ພວກດາວຊິນໂດມ ( DoWn Syn – drome) ຄົນພວກນີ້ໜ້າຈະບໍ່ຄືກັບພໍ່ແມ່, ຄົນພວກນີ້ຈະມີໃບໜ້າແບນ, ມີຫາງຕາຊີ້ຂຶ້ນ, ດັງນ້ອຍ, ຊ່ອງປາກແຄບ, ມີລີ້ນປົກກະຕິເຮົາຈຶ່ງເຫັນລີ້ນຈຸປາກຢູ່, ຕີນມືສັ້ນ...

ພຶດຕິກຳຂອງເດັກປັນຍາອ່ອນທີ່ເຄີຍພົບເຫັນກໍ່ແມ່ນພັດທະນາການຊັກຊ້າ, ຊ່ວຍຕົນເອງບໍ່ໄດ້, ມັກເຮັດຄຳຕັ້ງ ແລະ ຍິ້ມ, ບໍ່ສາມາດຈື່ໜ້າພໍ່ແມ່ ຫຼື ຜູ້ທີ່ໃກ້ຊິດໄດ້. ບໍ່ຮູ້ຫຼີບຫຼີກອັນຕະລາຍ. ນອກຈາກນີ້ພັດທະນາການທາງກ້າມເນື້ອກໍ່ຊັກຊ້າເຊັ່ນ: ການກິນອາຫານຕ່າງໆ, ການອາບນໍ້າ, ການແຕ່ງຕົວກໍ່ຕ້ອງໄດ້ເຝິກຝົນຊໍ້າໆກັນຫຼາຍຄັ້ງຈຶ່ງສາມາດກະທະໄດ້.

ຢູ່ໃນຈຳນວນປະຊາກອນໂລກທັງໝົດຈະມີຈຳພວກທີ່ມີສະຕິປັນຍາອ່ອນ ປະມານ 1 - 2 % ໃນຈຳພວກນີ້ມີ 75 % ແມ່ນພວກມີປັນຍາອ່ອນຢູ່ລະດັບໜ່ອຍ, 20 % ແມ່ນອ່ອນໃນລະດັບກາງ ແລະ 5 % ແມ່ນປັນຍາອ່ອນທີ່ສຸດ.

ເມື່ອພິຈາລະນາຄວາມສາມາດທາງການສຶກສາຂອງເດັກທີ່ມີສະຕິປັນຍາອ່ອນທັງໝົດ 4 ກຸ່ມທີ່ກ່າວມານັ້ນ, ເພິ່ນສາມາດແບ່ງອອກເປັນ 3 ລະດັບຄື:

1). ລະດັບທີ່ພໍຮຽນໄດ້ (Educacabie Mentally Retarded) ແມ່ນໄດ້ແກ່ກຸ່ມທີ່ມີສະຕິປັນຍາຕໍ່າກວ່າລະດັບໜ້ອຍ.

2).ລະດັບທີ່ພໍເຝິກໄດ້ (Trainable Mentally Retarded) ໄດ້ແກ່ກຸ່ມທີ່ມີສະຕິປັນຍາຕໍ່າກວ່າລະດັບປານກາງ.

3). ລະດັບທີ່ຮຽນ ແແລະ ເຝິກບໍ່ໄດ້ແມ່ນຢູ່ໃນລະດັບທີ່ຕ້ອງໄດ້ເພິ່ງພາອາໄສຄົນອື່ນ ເຊິ່ງໄດ້ແກ່ແມ່ນກຸ່ມທີ່ມີສະປັນຍາອ່ອນທີ່ສຸດ.

### 2.2.2 ການສອນເດັກທີ່ມີສະຕິປັນຍາອ່ອນ.

ຢູ່ໃນໂຮງຮຽນທົ່ວໆໄປຈະບໍ່ມີເດັກນັກຮຽນທີ່ມີສະຕິປັນຍາອ່ອນທີ່ສຸດ ຫຼື ອ່ອນປານກາງ ແຕ່ຈະມີເດັກທີ່ມີປັນຍາອ່ອນຢູ່ໃນລະດັບອ່ອນໜ້ອຍ, ນັກຮຽນຈຳພວກນີ້ຈະຮຽນຊັກຊ້າກ່ວາໝູ່ເພື່ອນ. ເມື່ອຮຽນເຖິງຫ້ອງ ປໍ 3 - 4 ການຮຽນຂອງເຂົາກໍ່ຈະຊັກຊ້າຫ່າງຈາກໝູ່ເພື່ອນຫຼາຍຂຶ້ນເລື້ອຍໆ. ການສອນເດັກນັກຮຽນທີ່ມີປັນຍາອ່ອນຢູ່ໃນໂຮງຮຽນ ຄວນດຳເນີນການ ຕາມລຳດັບຂັ້ນຕອນຢ່າງຊ້າໆ ແລະ ຄວນສອນເປັນລາຍບຸກຄົນໂດຍຍຶດຖືການສອນແບບດັ່ງນີ້:

1). ກ່ອນຈະສອນຄູຕ້ອງກວດກາຄວາມກຽມພ້ອມຂອງເດັກສາກ່ອນວ່າເຂົາມີຄວາມພ້ອມຈະຮຽນເລື່ອງຄູຈະສອນແລ້ວບໍ່, ໃນເມື່ອຮຽນເລື່ອງໜຶ່ງໆແລ້ວກໍ່ຕ້ອງປະເມີນຄວາມພ້ອມທຸກໄລຍະວ່າພວກເຂົາມີຄວາມກຽມພ້ອມທີ່ຈະຮຽນເລື່ອງຕໍ່ໄປ ຫຼື ບໍ່.

2). ກຳນົດຈຸດໝາຍທົ່ວໄປວ່າການສອນນັ້ນມີເປົ້າໝາຍຫຍັງແດ່.

3). ກຳນົດຈຸດໝາຍສະເພາະວ່າຕ້ອງການໃຫ້ນັກຮຽນຮູ້ເລື່ອງໃດແດ່ ຫຼື ສາມາດທຳສິ່ງໃດໄດ້ແດ່ໂດຍເນັ້ນໃສ່ພຶດຕິກຳເປົ້າໝາຍ 2 - 3 ປະການສະເພາະທີ່ຄູແນ່ໃຈວ່ານັກຮຽນຈະເຮັດໄດ້ສຳເລັດ.

4). ການດຳເນີນການສອນຕ້ອງສະເໜີເນື້ອໃນພຽງເລັກນ້ອຍ, ສອນໄປເທື່ອລະຂັ້ນ, ເນັ້ນໃສ່ພາກປະຕິບັດໃຫ້ຫຼາຍກ່ວາຂັ້ນອື່ນໆ.

5). ຄູບໍ່ຄວນສອນຂ້າມຂັ້ນຈິ່ງສອນທຸກໆຂັ້ນເພື່ອໃຫ້ເຂົາເຂົ້າໃຈ ແລະ ປະຕິບັດໄດ້ຢ່າງຊັດເຈນ, ຈິ່ງສອນໃຫ້ເຂົາເຫັນການເຊື່ອມໂຍງຂອງແຕ່ລະຂັ້ນຕອນ, ຄູບໍ່ຄວນຄາດຫວັງວ່າເຂົາຈະເຂົ້າໃຈຄວາມເຊື່ອມໂຍງນັ້ນດ້ວຍຕົວເຂົາເອງ.

6). ຄູຈິ່ງເນັ້ນເນື້ອໃນທີ່ສອນ ຫຼື ເນັ້ນການປະຕິບັດໃຫ້ຫຼາຍໆເທື່ອຊໍ້າໆກັນຢູ່ໃນເລື່ອງເກົ່າດ້ວຍຫຼາຍວິທີ.

7). ຖ້າສັງເກດເຫັນວ່ານັກຮຽນຕິດຕາມການສອນຂອງຄູບໍ່ທັນ, ຄູຈິ່ງກັບຄືນສອນເລື່ອງເກົ່າທີ່ໄດ້ສອນແລ້ວ ຫຼື ໃຫ້ນັກຮຽນປະຕິບັດໃນຂັ້ນນັ້ນຄືນໃໝ່.

8). ຄູຕ້ອງຮູ້ໃຊ້ເທັກນິກທີ່ກະຕຸ້ນຄວາມສົນໃຈ ແລະ ສ້າງແຮງຈູງໃຈໃຫ້ແກ່ນັກຮຽນເພື່ອໃຫ້ເຂົາມີສຳມະທິຮຽນຕະຫຼອດເວລາ.

9). ເວລາຄູສອນບໍ່ຄວນເຮັດໃຫ້ເດັກມີຄວາມຮູ້ສຶກວ່າຕົນເປັນຄົນໂງ່ ຫຼື ດູຖູກວ່າເປັນຄົນປັນຍາບໍ່ດີ.

10). ການມອບໝາຍວຽກງານໃຫ້ເດັກນັກຮຽນປະຕິບັດຈະຕ້ອງແມ່ນວຽກທີ່ງ່າຍໆ, ເໝາະກັບເຂົາ, ໃນເມື່ອເຂົາເຮັດໄດ້ແລ້ວ ຕ້ອງໃຫ້ແຮງເສີມທາງບວກເຊັ່ນ: ການຍ້ອງຍໍຊົມເຊີຍ...

11). ຈິ່ງຄິດສະເໝີວ່າ ເດັກທີ່ມີປັນຍາອ່ອນຕ້ອງຮຽນຊໍ້າບົດເກົ່າໃຫ້ຫຼາຍໆຄັ້ງ, ແລະ ເຝິກໃຫ້ຫຼາຍກ່ວາເດັກປົກກະຕິ.

12). ຄູຕ້ອງໃຫ້ຄວາມສົນໃຈ ແລະ ສ້າງຄວາມສຳພັນທີ່ດີແກ່ເດັກຢ່າງໃກ້ຊິດເພາະເດັກເຫຼົ່ານີ້ຈະມັກບໍ່ມີໝູ່ເພື່ອນ ແລະ ບໍ່ໄດ້ຮັບການຍອມຮັບຈາກໝູ່ເພື່ອນ

## 2.3. ເດັກມີປັນຍາດີເລີດ

### 2.3.1 ລັກສະນະຂອງເດັກທີ່ມມີປັນຍາດີເລີດ.

ເດັກກຸ່ມນີ້ແມ່ນພວກທີ່ມີ iQ ສູງ ຂຶ້ນໄປ ຫຼື ຮຽກວ່າເດັກນັກຮຽນທີ່ມີສະຕິປັນຍາດີເລີດເຊິ່ງຈະມີຢູ່ປະມານ 2 - 4 % ຂອງກຸ່ມປະຊາກອນທັງໝົດ.

ໃນຄວາມເປັນຈິງແລ້ວເດັກທີ່ມີປັນຍາດີເລີດນັ້ນບໍ່ໄດ້ໝາຍເຖິງສະເພາະແຕ່ເດັກມີ iQ ສູງຢ່າງດຽວ ແຕ່ຈະໃຊ້ໃນຄວາມໝາຍບຸກຄົນທີ່ມີຄວາມສາມາດສະເພາະເດັ່ນກ່ວາເດັກປົກກະຕິທົ່ວໄປເຊັ່ນ: ເດັກບາງຄົນມີຄວາມສາມາດດ້ານສິລະປະ, ດົນຕີ, ຄະນິດສາດ ແລະ ອື່ນໆ.

ຜູ້ຊ່ຽວຊານກ່ຽວກັບເດັກມີປັນຍາດີເລີດຜູ້ໜຶ່ງທີ່ມີ ຊື່ວ່າ: ທ່ານເຣນຊູລີ່ (Renzulli 1982) ທ່ານໄດ້ແຍກເດັກທີ່ມີປັນຍາດີເລີດອອກເປັນ 2 ກຸ່ມຄື: ກຸ່ມທີ່ດີເລີດທາງວິຊາການ ແລະ ກຸ່ມທີ່ດີເລີດທາງດ້ານການສ້າງສັນ.

- ກຸ່ມທີ່ດີເລີດທາງວິຊາການ ຈະຮຽນຮູ້ສິ່ງຕ່າງໆໄດ້ຢ່າງໄວວາ ແລະ ຮຽນໄດ້ຢ່າງງ່າຍດາຍ, ຄົນກຸ່ມນີ້ສ່ວນຫຼາຍແມ່ນມີສະຕິປັນຍາສູງ.

- ກຸ່ມທີ່ມີຄວາມເປັນເລີດທາງການສ້າງສັນ ຈະມີຄວາມສາມາດໃນການແກ້ໄຂບັນຫາສະເພາະໜ້າດີທີ່ສຸດ ແລະ ຮູ້ປະຍຸກຄວາມຮູ້ໃນສະຖານະການຕ່າງໆຄວາມສາມາດດ້ານການສ້າງສັນນີ້ຈະມີການພົວພັນກັບຄວາມສຳເລັດໃນຊີວິດໃນອານາຄົດຈະສູງກ່ວາຄວາມສາມາດທາງດ້ານວິຊາການ.

ທ່ານເຣນຊູລີ່ : ໄດ້ໃຊ້ຄວາມຄິດດັ່ງກ່າວເພື່ອເປັນຂອບເຂດໃນການໃຫ້ນິຍາມຂອງເດັກທີ່ມີປັນຍາດີເລີດວ່າເປັນຜົນລວມຂອງຄຸນລັກສະນະ 3 ປະການນຳກັນຄື:

1). ແມ່ນຄວາມສາມາດທົ່ວໄປທີ່ມີສູງກ່ວາບຸກຄົນອື່ນ, ຄວາມສາມາດນີ້ຈະະໝາຍເຖິງ ການມີສະຕິປັນຍາສູງກ່ວາຄົນອື່ນໆ.

2). ມີແຮງຈູງໃຈ ແລະ ມີຄວາມຕັ້ງໃຈເຮັດວຽກງານ, ມີຄວາມສະເໝີຕົ້ນສະເໝີປາຍ ແລະ ອົດທົນເຮັດວຽກໃຫ້ມີຜົນສຳເລັດ.

3). ຈະມີລະດັບຄວາມຄິດສູງ.



ທ່ານແບສກາ ( Tuttle and beeker 1983:13 Citing Nasaca D )ໄດ້ອະທິບບາຍທາງສະໝອງຂອງເດັກປັນຍາດີເລີດ, ໂດຍປຽບທຽບກັບເຄື່ອງຈັກຄອມພິວເຕີວ່າ: ເດັກປັນຍາດີເລີດຈະມີສັກກາຍຍະພາບພິເສດທີ່ສູງກວ່າເດັກປົກກະຕິທົ່ວໄປ 3 ປະການຄື:

1). ມີສັກກາຍຍະພາບໃນການຮັບຮູ້ຂໍ້ມູນຂ່າວສານຈາກສິ່ງແວດລ້ອມຫຼາຍທີ່ສຸດ.

2). ສາມາດເກັບຂໍ້ມູນ ຫຼື ຈື່ຈຳເນື້ອໃນຂອງຂໍ້ສມູນໄດ້ຫຼາຍ.

3). ສາມາດໃຊ້ກົນວິທີຫຼາກຫຼາຍໃນການປະເມີນຜົນຂໍ້ມູນ.

ກະຊວງສຶກສາແຫ່ງສະຫາລັດອາເມລິກາໄດ້ກຳນົດນິຍາມ ແລະ ລັກສະນະຂອງເດັກປັນຍາດີເລີດໄວ້ໃນປີ 1972 ມີການປັບປຸງໃໝ່ໃນປີ 1978 ໄວ້ວ່າ: ເດັກມີປັນຍາດີເລີດ ຈະໝາຍເຖິງເດັກທີ່ມີຄວາມສາມາດ ຫຼື ມີສັກກາຍຍະພາບດີເລີດກວ່າເດັກທີ່ປົກກະຕິທົ່ວໄປຢູ່ໃນດ້ານໃດໜຶ່ງ ຫຼື ຫຼາຍໆດ້ານ ດັ່ງລຸ່ມນີ້:

1). ຄວາມສາມາດດ້ານສະຕິປັນຍາ

2). ຄວາມຖະນັດທາງວິຊາການໃນນສາຂາໃດໜຶ່ງ

3). ຄວາມຄິດສ້າງສັນ

4). ຄວາມສາມາດໃນການເປັນຜູ້ນຳ

5).ຄວາມສາມາດທາງດ້ານສິລະປະດົນຕຕີ

6). ຄວາມສາມາດດ້ານກົນໄກກ້າມເນື້ອ

ນອກຈາກຄຸນລັກສະນະດັ່ງກ່າວຂ້າງເທິງແລ້ວ ເດັກມີປັນຍາດີເລີດ ຍັງມີລັກສະນະອື່ນໆທີ່ສູງກວ່າເດັກປົກກະຕິທົ່ວໄປຫຼາຍປະການ.

ທ່ານເວແມນ ແລະ ຄະນະ(Woolfolk 1993: 126 citing Terman et al, 1925; 1947; 1959) ໄດ້ສຶກສາຕິດຕາມຜົນໄລຍະຍາວຢູ່ໃນກຸ່ມເດັກທີ່ມີປັນຍາດີເລີດຈຳນວນ 528 ຄົນ(ໂຄງການນີ້ຈະມີຢ່າງຕໍ່ເນື່ອງຈົນເຖິງ ປີ ຄ.ສ 2010) ກຸ່ມຕົວຢ່າງທີ່ນຳມາສຶກສາທັງໝົດແມ່ນຈະມີ iQ ຕັ້ງແຕ່ 140 ຂຶ້ນໄປ (ວັດຈາກແບບທົດສອບຂອງສະແຕນຟໍ-ບີເນສ)ເພິ່ນໄດ້ສັງເກດເຫັນວ່າຈະມີຂະໜາດຮູບຮ່າງໃຫ່ຍ, ມີສຸຂະພາບແຂງແຮງດີ, ມີອາລົມໝັ້ນຄົງ ແລະ ສາມາດປັບຕົວໄດ້ດີກ່ວາເດັກປົກກະຕິ.

### 2.3.2 ໂຄງການ(ໂປູແກມ) ສຳລັບເດັກທີ່ມີປັນຍາດີເລີດ

ໂຄງການ ຫຼື ໂປແກມທີ່ທາງໂຮງຮຽນຈັດຂຶ້ນໃຫ້ເດັກປັນຍາດີເລີດໂດຍທົ່ວໄປ ເພິ່ນແບ່ງເປັນ 2 ປະເພດຄື:ໂປູແກມເລັ່ງ(Acceleeration) ແລະ ໂປູແກມເສີມ (Enrichment)

- ໂປູແກມເລັ່ງ: ໝາຍວ່າໃຊ້ເວລາໃນການຮຽນໃຫ້ສັ້ນເຂົ້າ, ແຕ່ເນື້ອໃນຂອງຄວາມຮູ້ແມ່ນເທົ່າເກົ່າເຊັ່ນ: ໃຫ້ຮຽນຢູ່ມັດດທະຍົມຕອນປາຍຈົບພາຍໃນ 2 ປີ ຫຼື ສອນບາງວິຊາຢູ່ຂັ້ນມະຫາວິທະຍາໄລໃຫ້ເດັກທີ່ຮຽນເກັ່ງ ໂດຍໄດ້ຮຽນລ່ວງໜ້າກ່ອນ.

- ສຳລັບໂປຼແກມເສີມ: ແມ່ນການຈັດໂຄງການ ຫຼື ຈັດກິດຈະກຳເສີມໃນຮູບແບບຕ່າງໆເຊັ່ນ: ໂຄງການວິທະຍາສາດໃນລະດູຮ້ອນ, ໂຄງການສົ່ງເສີມເດັກທີ່ມີທັກສະສິລະປະ ແລະ ໂຄງການສົ່ງເສີມທັກສະທາງການຮຽນ.

ກ່ຽວກັບໂປຼແກມສຳລັບເດັກປັນຍາດີເລີດນີ້ມີນັກການສຶກສາບໍ່ເຫັນດີນຳກັບການຈັດໂປຼແກມແບບເລັ່ງເພາະຈະເຮັດໃຫ້ເດັກມີຄວາມຮູ້ຢູ່ໃນວົງແຄບ ແລະ ອາດມີຜົນເສຍຫາຍຫຼາຍກວ່າຖ້າເດັກຫາກເລັ່ງການຮຽນຫຼາຍເກີນໄປ. ເຖິງຢ່າງໃດກໍ່ຕາມໄດ້ມີການວິໄຈພົບວ່າ: ຖ້າເດັກມີຄວາມສາມາດ ແລະໄດ້ຮັບຮອງຈາກຊ່ຽວຊານວ່າແມ່ນເດັກທີ່ມີປັນຍາດີເລີດແທ້ ແມ່ນເຂົາສາມາດຮຽນຂ້າມຂັ້ນໄດ້ດີໂດຍບໍ່ມີບັນຫາໃນການປັບຕົວ ຫຼື ບັນຫາທາງອາລົມ ແລະສັງຄົມ. ນອກນີ້ແນວທາງການເລັ່ງເດັກນັ້ນ ເຮົາອາດບໍ່ໃຫ້ເດັກຮຽນຂ້າມຂັ້ນກໍ່ໄດ້ ແຕ່ຈະໃຊ້ວິທີເລັ່ງເປັນບາງວິຊາໝາຍວ່າໃຫ້ເຂົາຮຽນເນື້ອໃນທີ່ສູງກວ່າລະດັບນັ້ນໂດຍໃຫ້ເຂົາຍັງຮຽນຮ່ວມກັບເພື່ອນໃນຫ້ອງຮຽນນັ້ນຢູ່.

### 2.3.3 ການສອນເດັກທີ່ມີປັນຍາດີເລີດ

#### 1) ລັກສະນະຂອງຄູທີ່ຈະສອນເດັກປັນຍາດີເລີດ

- ມີຄວາມຮູ້ໃນສິ່ງທີ່ຈະສອນເປັນຢ່າງດີ
- ມີຄວາມເຂົ້າໃຈໃນຈິດຕະວິທະຍາພັດທະນາການຂອງເດັກໃນໄວທີ່ຈະສອນ.
- ມີທັກສະການຜະລິດສື່ ແລະ ການກຽມເນື້ອໃນສອນໄດ້ຢ່າງໜ້າສົນໃຈ.
- ມີທັກສະໃນການຖາມ ແລະ ການອະທິບາຍ.
- ມີທັດສະນະມັກແນະແນວຫຼາຍກວ່າການອອກຄຳສັ່ງເພື່ອໃຫ້ເດັກພັດທະນາຕົນເອງທາງການຄິດ ແລະ ການກະທຳຢ່າງມີອິດສະຫຼະ.
- ແມ່ນຄູປະສົບຄວາມສຳເລັດໃນການສອນຢູ່ໃນຊັ້ນຮຽນປົກກະຕິຜ່ານມາແລ້ວ.

#### 2) ແນວທາງທີ່ຄູຄວນປະຕິບັດໃນການສອນ

- ກະກຽມເນື້ອໃນທີ່ຈະມາສອນໃຫ້ເລິກ ແລະ ກ້ວາງຂວາງຕາມຄວາມສົນໃຈຂອງເດັກ.
- ກະກຽມແບບເຝິກຫັດຈານວນຫຼາຍໄວ້ລ່ວງໜ້າ.
- ໃຫ້ໂອກາດເດັກໄດ້ທາງານ ຫຼື ສຶກສາໃນສິ່ງທີ່ເຂົາສົນໃຈ ຫຼື ເຂົາມັກຢ່າງເຕັມທີ່.
- ຍອມຮັບຈຸດດ້ອຍ ແລະ ຈຸດເດັ່ນຂອງນັກຮຽນ.
- ການົດວຽກ ຫຼື ບົດເຝິກຫັດໃຫ້ຫຼາຍກວ່າປົກກະຕິ.
- ໃຫ້ເດັກມີອິດສະຫຼະຂອງການມີປະຕິສາພັນຢູ່ໃນກຸ່ມໝູ່ເພື່ອນ.
- ສົ່ງເສີມໃຫ້ເດັກເພິ່ງຕົນເອງໄດ້.
- ເນັ້ນຄຸນນະພາບຂອງວຽກຫຼາຍກວ່າເນັ້ນໃສ່ປະລິມານຂອງວຽກ.
- ໃຫ້ເດັກຮັບຮູ້ເກນມາດຖານທີ່ຄູຕ້ອງການ.
- ຈົ່ງຮັບຟັງ ແລະ ສົນທະນາເນື້ອໃນໃຫ້ເລິກເຊິ່ງກັບນັກຮຽນ.

- ໃຫ້ໂອກາດເດັກໄດ້ຕິດຕໍ່ກັບຄູຫຼາຍທີ່ສຸດ.
- ຕອບຄາຖາມຂອງເດັກດ້ວຍຄວາມອ່ອນໂຍນ.
- ເປີດໂອກາດໃຫ້ເດັກປະເຊີນຄາຖາມທີ່ເປີດກ້ວາງໃຫ້ຫຼາຍ.
- ກະກຽມແຫຼ່ງຄວາມຮູ້ເສີມ.
- ປະຕິບັດຕໍ່ເດັກປັນຍາດີເລີດໃຫ້ຄືກັບເດັກທົ່ວໄປ.
- ສົ່ງເສີມໃຫ້ເດັກຄິດສິ່ງຕ່າງໆຢ່າງເລິກເຊິ່ງ.
- ເປີດໂອກາດໃຫ້ເດັກຊອກຫາຄາຕອບທີ່ເຂົາສົນໃຈແລ້ວລາຍງານຜົນ.
- ໃຫ້ເດັກຮູ້ຈັກຮັບຜິດຊອບຕໍ່ຕົນເອງ ແລະ ຜູ້ອື່ນໆ.
- ໃນເມື່ອເດັກຫາກທາສິ່ງໃດໄດ້ສາເລັດຈົ່ງກະຕຸ້ນໃຫ້ເດັກເລື່ອນຄວາມມຸ່ງຫວັງໃຫ້ສູງຂຶ້ນອີກ.
- ໃຫ້ກາລັງໃຈໃນເມື່ອເຂົາກະທາສິ່ງຕ່າງໆສາເລັດ.

### 3) ສິ່ງທີ່ຄວນປະຕິບັດໃນເວລາສອນ

- ໃຫ້ເດັກແຍກຕົວອອກຈາກກຸ່ມເພື່ອເປັນສິລະປິນດຽວ.
- ໃຫ້ເດັກຮູ້ສຶກອີ່ມຕໍ່ຜົນງານ.
- ຄູບໍ່ໃຫ້ໂອກາດເດັກປະກອບຄໍາຄິດຄໍາເຫັນ.
- ຖ້າເດັກຖາມກໍ່ບອກເຂົາວ່າໃຫ້ຖ້າຄໍາຕອບຢູ່ບົດຮຽນຕໍ່ໄປ.
- ຄູຖາມສະເພາະແຕ່ເດັກປັນຍາດີເລີດ.
- ອອກຄໍາສັ່ງ.
- ເຮັດໃຫ້ເດັກກປັນຍາດີເລີດມີຄວາມຮູ້ສຶກວ່າ ເຂົາມີຄວາມແຕກຕ່າງຈາກເດັກຄົນອື່ນທົ່ວໄປ.
- ຄູສະແດງອອກມາຢ່າງຈະແຈ້ງວ່າຄູນິຍົມຊົມຊອບເດັກປັນຍາດີເລີດແປກປະຫຼາດກວ່າເດັກອື່ນ.
- ໃຫ້ເດັກປັນຍາດີເລີດເຮັດໜ້າທີ່ເປັນຄູແທນຕົນ.
- ປົກປ້ອງເດັກປັນຍາດີເລີດເກີນໄປ.
- ກະຕຸ້ນໃຫ້ເດັກນັ້ນຮຽນຫຼາຍເກີນໄປ.
- ໃຫ້ເດັກເຮັດວຽກເກົ່າແບບຊໍ້າໆ.
- ຄິດເອງວ່າເດັກປັນຍາດີເລີດຈະຕ້ອງຮູ້ ແລະ ເຂົ້າໃຈໃນທຸກເລື່ອງ.

### ❖ ສະຫຼຸບ

ນັກຈິດຕະວິທະຍາໄດ້ໃຫ້ຄວາມໝາຍຂອງສະຕິປັນຍາແຕກຕ່າງກັນຢ່າງຫຼວງຫຼາຍ ແຕ່ໃນນິຍາມທັງຫຼາຍນັ້ນຈະຈໍາແນກໄດ້ 3 ປະການຄື:

- ແມ່ນຄວາມສາມາດການຮຽນຮູ້ສິ່ງອ້ອມຕົວ.
- ຄວາມສາມາດໃນການຄິດທາງນາມມະທາ.
- ຄວາມສາມາດປັບຕົວເຂົ້າກັບສະຖານະການຕ່າງໆຂອງສັງຄົມ.

ໄດ້ມີຫຼາຍໆຄຳຖາມວ່າສະຕິປັນຍາມີອົງປະກອບ ຫຼື ໂຄງສ້າງແນວໃດ ກ່ຽວກັບເລື່ອງນີ້ກໍ່ໄດ້ມີຜູ້ພະຍາຍາມສຶກສາດ້ວຍການວິເຄາະອົງປະກອບຈົນເກີດມີທິດສະດີທາງສະຕິປັນຍາຫຼາຍໆ ທິດສະດີເຊັ່ນ: ທິດສະດີອົງປະກອບ 2 ຕົວ ຂອງສະເພຍແມນ, ທິດສະດີສະມັດຕະພາບທາງສະໝອງຂອງເທຣສະໂຕນ, ທິດສະດີໂຄງສ້າງທາງສະຕິປັນຍາຂອງ ກິລຟໍ ແລະ ທິດສະດີອື່ນໆ.

ເມື່ອອີງໃສ່ຄວາມແຕກຕ່າງທາງສະຕິປັນຍານີ້ ຄູກໍ່ຈຳເປັນຕ້ອງໄດ້ແຍກກຸ່ມນັກຮຽນຕາມຄວາມສາມາດ. ວິທີການຈັດກຸ່ມທີ່ນິຍົມໃຊ້ທົ່ວໄປຈະມີ 2 ວິທີຄື: ການຈັດກຸ່ມນັກຮຽນທີ່ມີຄວາມສາມາດເທົ່າທຽມກັນຮຽນຢູ່ຫ້ອງດຽວກັນ, ວິທີນີ້ຈະພາໃຫ້ມີຄວາມແຕກຕ່າງລະຫວ່າງຫ້ອງຮຽນ ແລະ ວິທີຈັດກຸ່ມນັກຮຽນທີ່ມີຄວາມສາມາດຕ່າງກັນໃຫ້ຮຽນຢູ່ໃນຫ້ອງດຽວກັນ ແລ້ວ ຈຶ່ງແຍກນັກຮຽນເຫຼົ່ານີ້ອອກເປັນຍ່ອຍໆຕາມຄວາມສາມາດຂອງການຮຽນໃນແຕ່ລະວິຊາ. ວິທີນີ້ຈະພາໃຫ້ມີຄວາມແຕກຕ່າງລະຫວ່າງນັກຮຽນຢູ່ພາຍໃນຫ້ອງ.

ເຖິງຢ່າງໃດກໍ່ຕາມ ຖ້ານັກຮຽນຢູ່ໃນຫ້ອງຫາກມີຄວາມແຕກຕ່າງຈາກກຸ່ມຫຼາຍເຊັ່ນ: ເດັກນັກຮຽນປັນຍາອ່ອນ ຫຼື ນັກຮຽນມີປັນຍາດີເລີດ ຈຳເປັນຄູຈະຕ້ອງໄດ້ແຍກນັກຮຽນດັ່ງກ່າວອອກເປັນກໍລະນີພິເສດເພື່ອຊອກຫາວິທີຊ່ວຍເຫຼືອ ຫຼື ສົ່ງເສີມຢ່າງເໝາະສົມ.

ເດັກນັກຮຽນປັນຍາຕໍ່າຢູ່ໃນຫ້ອງຮຽນປົກກະຕິນັ້ນ ກໍ່ຈະມີຫຼາຍລະດັບຄື: ລະດັບຕໍ່າໃນລະດັບໜ້ອຍຈະມີໄອຄິວປະມານ 50 - 55 ເຖິງ 70 ແລະ ມັກເອີ້ນນັກຮຽນກຸ່ມນີ້ວ່າເດັກທີ່ຮຽນຊ້າ, ການສອນເດັກກຸ່ມນີ້ຈະຕ້ອງການໄປເປັນຂັ້ນໆຢ່າງຊ້າໆ ແລະ ໃຫ້ເຂົາປະຕິບັດຄືນຫຼາຍຄັ້ງໃນສິ່ງທີ່ຮຽນຈົນແນ່ໃຈວ່າເຂົາສາມາດເຮັດໄດ້ແລ້ວຄູຈຶ່ງສອນຂັ້ນຕໍ່ໄປ. ສຳລັບເດັກນັກຮຽນທີ່ມີປັນຍາດີເລີດນັ້ນຄູອາດຈຳແນກເປັນປະເພດທີ່ມີຄວາມເປັນເລີດທາງດ້ານວິຊາການ ແລະ ຄວາມເປັນເລີດດ້ານຄວາມຄິດສ້າງສັນ ຫຼື ຄວາມສາມາດພິເສດ. ນັກຮຽນທີ່ມີປັນຍາດີເລີດຄວນໄດ້ຮັບການສົ່ງເສີມໂດຍຈັດເປັນໂປຼແກມສອນແບບເລັ່ງ ຫຼື ໂປຼແກມການຮຽນເສີມ. ການສອນເດັກກຸ່ມນີ້ຄວນເນັ້ນໃຫ້ເຂົາມີອິດສະຫຼະໃນການຄິດ ແລະ ການຮຽນຮູ້ສິ່ງເສີມໃຫ້ເຂົາໄດ້ພັດທະນາຕາມສັກກາຍຍະພາບ, ມີພັດທະນາການທາງອາລົມ ແລະ ສັງຄົມຄວບຄູ່ໄປກັບທາງວິຊາການດ້ວຍ.

# ບົດທີ 3
# ຮູບແບບການຄິດ ແລະ ການຮຽນ

ຕົວແປທີ່ເຮັດໃຫ້ຄົນເຮົາມີຄວາມແຕກຕ່າງກັນອາດຈຳແນກເປັນ 3 ກຸ່ມໃຫ່ຍຄື: ກຸ່ມຄວາມສາມາດ, ກຸ່ມບຸກຄະລິກະພາບ ແລະ ກຸ່ມປະສົມປະສານລະຫວ່າງຄວາມສາມາດກັບບຸກຄະລິກະພາບ.

ຮູບແບບການຄິດ ( Cognitive style ) ແລະ ຮູບແບບການຮຽນ ( Learning style ) ເປັນຕົວແປຂອງຄວາມແຕກຕ່າງລະຫວ່າງບຸກຄົນຂອງກຸ່ມປະສົມປະສານຄວາມສາມາດກັບບຸກຄະລິກະພາບເພາະຜູ້ທີ່ມີຮູບແບບການຄິດ ແລະ ຮູບແບບການຮຽນຕ່າງກັນຈຶ່ງເປັນສິ່ງທີ່ບອກເຖິງຄວາມແຕກຕ່າງຂອງການປະຕິບັດຂອງການປະຕິບັດທາງປັນຍາ. ຢູ່ໃນຄະນະນັ້ນກໍ່ເປັນການຊີ້ບອກເຖິງຄວາມແຕກຕ່າງດ້ານຄຸນລັກສະນະທາງບຸກຄະລິກະພາບອີກດ້ວຍ.

ມີຫຼາຍໆຄັ້ງທີ່ນັກຈິດຕະວິທະຍາມັກໃຊ້ຄຳເວົ້າທີ່ວ່າ: ຮູບແບບການຄິດ ແລະ ຮູບແບບການຮຽນມີຄວາມໝາຍດຽວກັນ. ແຕ່ມີບາງທ່ານໄດ້ອະທິບາຍວ່າ ແບບການຄິດແມ່ນສ່ວນຍ່ອຍຂອງແບບການຮຽນ,ມີບາງທ່ານກໍ່ໄດ້ແຍກຕົວແປ 2 ຢ່າງນີ້ອອກຈາກກັນແຕ່ຈະອະທິບາຍຢູ່ໃນຮູບທີ່ພົວພັນເຊິ່ງກັນແລະ ກັນ.

ຢູ່ໃນບົດນີ້ໄດ້ເວົ້າເຖິງຮູບແແບບການຄິດ ແລະ ຮູບແບບການຮຽນ, ແຕ່ຈະພະຍາຍາມຊີ້ບອກໃຫ້ເຫັນວ່າຮູບແບບການຄິດໄດ້ມີການພົວພັນກັບວິທີການຮຽນຂອງຜູ້ຮຽນ, ວິທີການສອນຂອງຄູ ແລະ ການມີປະຕິສຳພັນລະຫວ່າງຜູ້ຮຽນ ແລະ ຜູ້ສອນ.

## 1. ຮູບແບບການຄິດ ( Cognitive Style )

ຜົນຂອງການວິໄຈກ່ຽວກັບແບບການຄິດມີຂໍ້ສະຫຼຸບທີ່ສອດຄ່ອງກັນວ່າ: ແຕ່ລະບຸກຄົນຈະມີວິຖີທາງຂອງຕົນເອງຢູ່ໃນການທີ່ຈະຮັບຂ່າວສານ, ການຈັດລະບຽບສານຂໍ້ມູນ ແລະ ຂະບວນການປະມວນສານຂໍ້ມູນ. ວິຖີທາງເຫຼົ່ານີ້ ຈະເປັນລັກສະນະນິດໃສສະເພາະຕົວຂອງແຕ່ລະບຸກຄົນທີ່ກະທຳຢູ່ໃນນະຖານະການຕ່າງໆ ເຊັ່ນ: ບາງຄົນມີປະຕິກິລິຍາຕອບສະໜອງສິ່ງທີ່ຢູ່ອ້ອມຕົວຢ່າງໄວວາ, ແຕ່ບາງຄົນພັດຄິດໄຕ່ຕອງກ່ອນການປະຕິກິລິຍາ ຫຼື ການຕອບສະໜອງລັກສະນະທີ່ເປັນແບບນີ້ຂອງແຕ່ລະບຸກຄົນຈະຮຽກວ່າ: “ຮູບແບບການຄິດ’’ ໄດ້ມີຜູ້ແບ່ງຮູບແແບບຂອງການຄິດທີ່ແຕກຕ່າງກັນມີ 2 ມິຕິຄື:

- ຮູບແບບການຄິດທີ່ພິຈາລະນາຄວາມໄວ ແລະ ຄວາມຜິດພາດຂອງການຕອບສະໜອງເປັນຫຼັກ ( Conceptual Tempo ) ເພິ່ນໄດ້ແບ່ງຮູບແບບນີ້ ອອກເປັນ 2 ປະເພດຄື: ແບບການຄິດທີ່ຟ້າວຟັ່ງ ແລະ ແບບການຄິດປະເພດທີ່ໄຕ່ຕອງ.

- ແບບຄິດທີ່ເນັ້ນການຈຳແນກອິດທິພົນຂອງສິ່ງອ້ອມຂ້າງອອກຈາກສິ່ງທີ່ສົນໃຈ ( Psy Chological Differentiation ) ເພິ່ນໄດ້ແບ່ງອອກເປັນ 2 ປະເພດຄື: ການຄິດທີ່ຂຶ້ນກັບສິ່ງແວດອ້ອມຂ້າງ ແລະ ການຄິດທີ່ເປັນອິດສະຫຼະຈາກສິ່ງແວດອ້ອມຂ້າງ.

### 1.1. ຮູບແບບການຄິດທີ່ພິຈາລະນາຄວາມໄວ ແລະ ຄວາມຜິດພາດຂອງການຕອບສະໜອງ( Conseptual tempo )

ທ່ານ ຄາແກນ ແລະ ຄະນະ ( Kagan et al 1964 )ໄດ້ສັງເກດວ່າມີເດັກບາງຄົນມັກຈະຄິດໂດຍໃຊ້ເວລາຫຼາຍກ່ອນທີ່ຈະຕອບຄໍາຖາມ ຫຼື ແກ້ບັນຫາໃດໜຶ່ງ. ຢູ່ໃນຄະນະນັ້ນມີເດັກບາງຄົນຈະຕອບທັນທີເມື່ອເຫັນຄໍາຖາມ ຫຼື ແກ້ບັນຫາທັນທີ. ຂໍ້ສັງເກດດັ່ງນີ້ເຮົາຈະເຫັນໄດ້ຢ່າງຊັດເຈນ. ເພິ່ນໄດ້ໃຊ້ແບບທົດສອບ ດ້ວຍການຈັດຄູ່ຮູບພາບທີ່ຄືກັນເອົາໄປທົດສອບ. ແບບທົດສອບສະບັບນີ້ຈະມີຮູບພາບນິ້ງ ( ບໍ່ເຄື່ອນໄຫວ ) ມາໃຫ້ເດັກເບິ່ງແລ້ວກໍ່ໃຫ້ເດັກພິຈາລະນາຮູບຈາກຕົວເລືອກທີ່ກໍານົດໃຫ້ວ່າມີຮູບໃດທີ່ຄືກັບຮູບທີ່ຄູໃຫ້ເບິ່ງທໍາອິດ. ຮູບພາບຂອງຕົວເລືອກແຕ່ລະຮູບມີລັກສະນະຄ້າຍຄືກັນໃຫ້ມີພຽງຮູບພາບດຽວເທົ່ານັ້ນທີ່ຄືກັນທຸກຢ່າງກັບຮູບທີ່ກໍານົດໃຫ້.




**ຕົວຢ່າງ:** ແບບທົດສອບສະໄຕການຄິດປະເພດຟ້າວຟັ່ງ ( Impusive ) ແລະໄຕ່ຕອງ (reflective ) ຂອງຄາແກນ.

ຈາກການໃຊ້ແບບທົດສອບການຈັບຄູ່ຮູບພາບທີ່ຄືກັນຕາມທ່ານ ຄາແກນ ໄດ້ພົບວ່າ:ເດັກທີ່ໃຊ້ເວລາຄິດພຽງເລັກນ້ອຍຈະຕອບຜິດຫຼາຍ,ເນື່ອງຈາກພວກເຂົາບໍ່ໄດ້ພິຈາລະນາຢ່າງລະອຽດກົງກັນຂ້າມກັບເດັກທີ່ໃຊ້ເວລາໃນການຄິດຫຼາຍ, ເດັກພວກນີ້ຈະພິຈາລະນາຮູບພາບຢ່າງລະອຽດກ່ອນຈະຕັດສິນໃຈຕອບ ແລະ ກໍ່ຕອບຖືກຫຼາຍກວ່າ.

ຜົນການສຶກສາຂອງ ຄາແກນ ແລະ ຄະນະໄດ້ພາໃຫ້ເກີດມີສະຕິຂອງແບບການຄິດທີ່ເອີ້ນວ່າ: ຄອນເຊັບຊວນເທມໂປ ( Conceptual Tempo ) ຂຶ້ນເຊິ່ງໝາຍເຖິງຄວາມໄວທີ່ເດັກຕອບສະໜອງຕໍ່ຄໍາຖາມ ຫຼື ບັນຫາ ແລະ ຈໍານວນຄວາມຜິດພາດຫຼາຍເພິ່ນຈະຮຽກກຸ່ມນີ້ວ່າ: ເດັກຢູ່ກຸ່ມທີ່ຄິດ ແລະ ຕອບຢ່າງໄວວາແຕ່ພັດມີຄວາມຜິດພາດຫຼາຍ, ເພິ່ນຈະຮຽກກຸ່ມນີ້ວ່າ: ຈໍາພວກທີ່ມີການຄິດຢ່າງຟ້າວຟັ່ງ (

Impulsive ) ສ່ວນເດັກຢູ່ກຸ່ມທີ່ຄິດ ແລະ ຕອບຊ້າໂດຍມີການພິຈາລະນາຕົວເລືອກຢ່າງລະມັດລະວັງນັ້ນ,ເພິ່ນຮຽກເດັກຈຳພວກນນີ້ວ່າ: ພວກທີ່ມີການຄິດປະເພດໄຕ່ຕອງ ( Refiec tive ).

ເມື່ອປຽບທຽບຜົນສຳເລັດຂອງການຮຽນລະຫວ່າງເດັກກຸ່ມທີ່ມີການຄິດປະເພດຟ້າວຟັ່ງກັບເດັກປະເພດມີການໄຕ່ຕອງກໍ່ພົບວ່າ: ເດັກທີ່ມີການຄິດປະເພດໄຕ່ຕອງຈະມີການຮຽນດີກ່ວາ. ໂດຍສະເພາະແມ່ນວິຊາອ່ານ, ເພາະເດັກທີ່ມັກຄິດແບບໄຕ່ຕອງຈະສາມາດແຍກຄວາມແຕກຕ່າງຂອງສິ່ງກະຕຸ້ນດີກວ່າເຊັ່ນ: ເຂົາສາມາດຈຳແນກຄວາມແຕກຕ່າງລະຫວ່າງຕົວອັກສອນຕົວ ຄ-ຂ ;ສ-ຊ ; ຟ-ຝ ; ຜ-ພ ແລະອື່ນໆ

ທ່ານ ຄາແກນ, ເພັຍສັນ ແລະ ທ່ານເວລ (Kagan, Pearson, and Welch 1966). ໄດ້ສະຫຼຸບວ່າ ຮູບແບບການຄິດປະເພດຟ້າວຟັ່ງ ແລະ ປະເພດມີການໄຕ່ຕອງຈະເກີດຂຶ້ນຈາກການຮຽນຮູ້ໃນສັງຄົມ. ອາດເກີດຈາກການຮຽນແບບ ຫຼື ເກີດຈາກການອົບຮົມສັ່ງສອນຂອງຄອບຄົວ ແລະໂຮງຮຽນ, ເພິ່ນຍັງສັງເກດເຫັນວ່າ: ເດັກຜູ້ຊາຍທີ່ຢູ່ນຳຄູທີ່ມີການຄິດແບບປະເພດໄຕ່ຕອງກໍ່ຈະມີລັກສະນະການຄິດແບບສຸຂຸມຮອບຄອບ ແລະຄິດຢ່າງມີການໄຕ່ຕອງ. ສະນັ້ນ, ການພັດທະນາໃຫ້ເດັກມີພຶດຕິກຳການຄິດຢ່າງຮອບຄອບ ແລະ ໄຕ່ຕອງ, ນັກຈິດຕະວິທະຍາຈຶ່ງມັກຈະເນັ້ນການນຳສະເໜີແບບຢ່າງທີ່ດີກັບການອົບຮົມສັ່ງສອນຄວບຄູ່ກັນໄປ.

ຕົວຢ່າງ: ການປັບພຶດຕິກຳການຄິດແບບຟ້າວຟັ່ງໄປສູ່ການຄິດແບບໄຕ່ຕອງທີ່ໜ້າສົນໃຈກໍ່ແມ່ນການສຶກສາຂອງທ່ານມີແຊນບອມແລະກູດແມນ (Meichenba and Goodman,1971) ພວກເພິ່ນໄດ້ພັດທະນາວິທີການເຝິກເດັກດ້ວຍການນຳສະເໜີແບບຢ່າງ (model) ແລະ ໃຫ້ເດັກສອນຕົນເອງ (Self – Instruction) ເລີ່ມທຳອິດຜູ້ທົດລອງຈະແກ້ບັນຫາດ້ວຍການ (ເລືອກຮູບພາບທີ່ຄືກັບຮູບທີ່ກຳນົດໃຫ້) ພ້ອມກັບເວົ້າກັບຕົນເອງແບບດັງໆຄູສະແດງໃຫ້ເຂົາເບິ່ງໂດຍໃຊ້ຜູ້ທົດລອງເປັນແບບຢ່າງ. ຫຼັງຈາກນັ້ນຈຶ່ງໃຫ້ເເດັກແກ້ບັນຫາຕາມວິທີການຂອງແບບຢ່າງທີ່ເຂົາໄດ້ເຫັນນັ້ນກໍ່ແມ່ນແກ້ບັນຫາພ້ອມກັບການເວົ້າ (ສອນ) ຕົນເອງດັງໆ. ເມື່ອເດັກທຳໄດ້ແລ້ວຄູກໍ່ໃຫ້ເຂົາຫຼຸດຜ່ອນສຽງທີ່ເວົ້າກັບຕົນເອງແບບຄ່ອຍໆລົງ. ຈົນສຸດທ້າຍເດັກກໍ່ສາມາດກະທຳໂດຍບໍ່ຕ້ອງເວົ້າກັບຕົນເອງ. ວິທີດັ່ງນີ້ຈະເຮັດໃຫ້ເດັກມີການຄິດຢ່າງຮອບຄອບ ແລະ ມີການໄຕ່ຕອງຫຼາຍຂຶ້ນ.

ໄດ້ມີການສັງເກດເຫັນວ່າກົນວິທີການເຝິກໃຫ້ເດັກທີ່ມີການຄິດແບບຟ້າວຟັ່ງ ໄປສູ່ການຄິດແບບໄຕ່ຕອງນັ້ນມີຕົວແບບຢ່າງດຽວຈະບໍ່ພຽງພໍເທື່ອ. ຄູຕ້ອງເຝິກເດັກໃຫ້ຮູ້ແກ້ໄຂບັນຫາດ້ວຍການສອນຕົນເອງອີກ. ນອກຈາກນັ້ນ ການເຝິກຈະບໍ່ເນັ້ນສະເພາະການໃຫ້ກະທຳແບບຊ້າລົງເທົ່ານັ້ນແຕ່ຕ້ອງໃຫ້ເດັກໄດ້ສອນຕົນເອງໃຫ້ຮູ້ພິຈາລະນາເລືອກຕົວເລືອກຢ່າງມີເຫດຜົນອີກດ້ວຍ.

### 1.2. ຮູບແບບ ການຄິດທີ່ເນັ້ນການຈຳແນກອິດທິພົນຂອງສິ່ງອ້ອມຂ້າງອອກຈາກສິ່ງທີ່ສົນໃຈ ( Psychological Diffrerentiation )

ມີອີກມິຕິໜຶ່ງຂອງການຄິດທີ່ມັກນຳມາປະຍຸກໃຊ້ເຂົ້າໃນການສຶກສາກໍ່ແມ່ນ, ການຈຳແນກອິດທິພົນຂອງສິ່ງອ້ອມຂ້າງຈາກສິ່ງທີ່ສົນໃຈ. ທ່ານ ວິທຄິນ ແລະ ຄະນະ ( Witkin et at, 1962: 1977 ).

ໄດ້ຈຳແນກອອກເປັນ 2 ແບບຄື: ຮູບແບບການຄິດປະເພດທີ່ຂຶ້ນກັບສິ່ງອ້ອມຂ້າງ ( Field – Dependence ) ປະເພດທີ່ເປັນຄິດບໍ່ຂຶ້ນກັບສິ່ງອ້ອມຂ້າງ ( Fieldl – Independence ).

ທ່ານວິທຄິນ ແລະ ຄະນະໄດ້ເຮັດການທົດລອງໂດຍໃຫ້ຜູ້ທີ່ຖືກທົດລອງນັ່ງຢູ່ຕັ່ງອີ້ທີ່ແຂວນຢູ່ໃນຫ້ອງແຄບໆ ຕັ່ງອີ້ສາມາດປິ່ນໄດ້ຕາມທິດທາງຂອງເຂັມໂມງ.ໃນຄະນະດຽວກັນໃນຫ້ອງທົດລອງນັ້ນກໍ່ສາມາດປັບໝູນໃຫ້ອ່ຽງໄດ້ຄືກັນ,ທ່ານໄດ້ສັງເກດເຫັນວ່າ: ຜູ້ຖືກທົດລອງມີຮູບແບບການຄິດປະເພດທີ່ຂຶ້ນສິ່ງອ້ອມຂ້າງ ທັງເກີດມີຄວາມສັບສົນຢູ່ໃນສະຖານະການດັ່ງກ່າວ. ເມື່ອສັ່ງໃຫ້ເຂົາປັບທີ່ນັ່ງໃຫ້ຢູ່ໃນແນວດິ່ງຈາກພື້ນເຂົາຈະບໍ່ສາມາດເຮັດໄດ້ຢ່າງຖືກຕ້ອງ ຈະມີບາງຄົນປັບທີ່ນັ່ງໃນແນວດິ່ງເຖິງ 45 ອົງສາເຊິ່ງແຕກຕ່າງຈາກຜູ້ທີ່ຖືກທົດລອງທີ່ມີການຄິດປະເພດທີ່ບໍ່ຂຶ້ນກັບສິ່ງອ້ອມຂ້າງເຂົາສາມາດປັບຕັ່ງອີ້ງໃຫ້ຢູ່ໃນແນວດິ່ງໄດ້. ຜົນການທົດລອງຈະສະແດງໃຫ້ເຫັນວ່າ: ສະພາບງ່ຽງຂອງຫ້ອງທົດລອງບໍ່ມີອິດທິພົນຕໍ່ການຮັບຮູ້ຂອງເຂົາ.

ແບບທົດສອບທີ່ໃຊ້ວັດການນຄິດທີ່ນິຍົມໃຊ້ແຜ່ຫຼາຍກໍ່ແມ່ນແບບທົດລອງຂອງທ່ານເອມບາດຟິດເກຣ ເທສ ( The Embedded Figure test ) ແບບທົດສອບນີ້ຈະມີຮູພາບຄືຮູບເລຂາຄະນິດແລ້ວໃຫ້ຜູ້ທີ່ຖືກທົດສອບຄົ້ນຫາວ່າ: ຮູບກ່າວຢູ່ທີ່ໃດໃນພາບທີ່ຊັບຊ້ອນນັ້ນ.ຖ້າຜູ້ທົດສອບເຮັດໄດ້ໄວ ແລະ ຖືກຕ້ອງ, ກໍ່ສະແດງວ່າເຂົາມີການຄິດປະເພດທີ່ບໍ່ຂຶ້ນກັບສິ່ງອ້ອມຂ້າງ,ໃຜໄດ້ຄະແນນໜ້ອຍກໍ່ຖືວ່າມີຮູບແບບການຄິດປະເພດຂຶ້ນຢູ່ກັບສິ່ງອ້ອມຂ້າງສູງ.

+ ຜູ້ມີຮູບແບບການຄິດປະເພດຂຶ້ນຢູ່ກັບສິ່ງອ້ອມຂ້າງ ແລະ ປະເພດທີ່ບໍ່ຂຶ້ນກັບສິ່ງອ້ອມຂ້າງຈະມີການຮັບຮູ້ ແລະ ຄຸນລັກສະນະທີ່ແຕກຕ່າງກັນຫຼາຍປະການເຊັ່ນ: ຜູ້ທີ່ມີຮູບແບບການຄິດປະເພດທີ່ອ້ອມຂ້າງມັກຈະຮັບຮູ້ສິ່ງຕ່າງໆ ໃນຮູບພາບລວມ, ຈະບໍ່ໄຈ້ແຍກສິ່ງທີ່ເຫັນຢູ່ໃນຮູບເປັນລາຍລະອຽດ ຫຼື ແຍກອົງປະກອບ. ການຕັດສິນເລື່ອງຕ່າງໆ ແມ່ນຈະຂຶ້ນກັບຄົນອ້ອມຂ້າງ ຫຼື ກຸ່ມທີ່ມີສວນຮ່ວມຢູ່, ມີຄວາມສົນໃຈໃນຄວາມຮູ້ສຶກຂອງຜູ້ອື່ນ, ມີການປະຕິສຳພັນກັບຄົນອື່ນໆ ແລະ ມະນຸດສຳພັນດີ.

+ ສ່ວນຜູ້ທີ່ມີຮູບແບບການຄິດປະເພດບໍ່ຂຶ້ນກັບສິ່ງອ້ອມຂ້າງຈະກົງກັນຂ້າມຄື: ການຮັບຮູ້ສິ່ງຕ່າງໆໃນການວິເຄາະລາຍລະອຽດສ່ວນຍ່ອຍ. ການຕັດສິນໃຈ ຫຼື ການແກ້ໄຂບັນຫາຕ່າງໆເຂົາບໍ່ສົນໃຈຄົນອື່ນໆ. ແຕ່ເຂົາຈະຄຳນຶງເຖິງເຫດຜົນຂອງການກຳນົດເປົ້າໝາຍຕ່າງໆແມ່ນເຂົາກຳນົດດ້ວຍຕົນເອງໂດຍບໍ່ໄດ້ສົນໃຈກຸ່ມເພື່ອນ ຫຼື ຄົນອື່ນເຂົາບໍ່ມັກການຄົບຄ້າສາມາຄົມັບຜູ້ອື່ນ. ສະນັ້ນເຂົາຈຶ່ງເປັນບຸກຄົນທີ່ມີລັກສະນະເຢັນຊາ ແລະ ບໍ່ມີຄວາມຮູ້ສຶກ.







### 1.3. ຮູບແບບການຄິດກັບພຶດຕິກຳການຮຽນ-ການສອນ.

#### 1.3.1. ຮູບແບບການຄິດກັບພຶດຕິກຳການຮຽນ

ໃນດ້ານການຮຽນຈຳພວກທີ່ມີຮູບແບບການຄິດປະເພດທີ່ຂຶ້ນກັບສິ່ງອ້ອມຂ້າງຈະມີນັກຮຽນ ຫຼື ເຮັດວຽກເປັນກຸ່ມ, ມັກປະຕິສຳພັນກັບໝູ່ເພື່ອນ ແລະ ຄູອາຈານ. ຕ້ອງການຮັບການເສີມແຮງຈາກພາຍນອກເຊັ່ນ: ການຍົກຍ້ອງຊົມເຊີຍຈາກຄູ, ມັກຄູສອນດ້ວຍວິທີການກຳນົດພຶດຕິກຳໃຫ້ຫຼາຍກວ່າໃຫ້ຄິດເອງ. ວິຊາທີ່ເດັກກຸ່ມນີ້ມັກຮຽນແມ່ນວິຊາສັງຄົມສາດ, ອັກສອນສາດ. ອາຊີບທີ່ເໝາະກັບຄົນກຸ່ມນີ້ແມ່ນອາຊີບທີ່ມີການປະຕິສຳພັນກັບຜູ້ຄົນ. ສ່ວນຈຳພວກທີ່ມີຮູບແບບການຄິດປະເພດບໍ່ຈຶ້ນກັບສິ່ງອ້ອມຂ້າງນັ້ນ. ກົງກັນຂ້າມພວກເຂົາພັດບໍ່ມັກທຳງານແບບເປັນກຸ່ມ. ແຕ່ມັກກິດຈະກຳທີ່ສຶກສາດ້ວຍຕົນເອງເຊັ່ນ:

ໂຄງການອິດສະຫຼະ ຫຼື ການຄົ້ນຄົ້ວວິໄຈເປັນລາຍບຸກຄົນ. ຄົນຈຳພວກນີ້ມັກກຳນົດເປົ້າໝາຍຂອງຕົນເອງເມື່ອເຮັດສຳເລັດກໍ່ຈະພາກພູມໃຈ ( ເປັນການໄດ້ຮັບແຮງເສີມຈາກພາຍໃນຕົນເອງ ). ວິຊາທີ່ພວກເຂົາມັກຮຽນແມ່ນວິຊາທາງວິທະຍາສາດ, ຄະນິດສາດ. ອາຊີບທີ່ບໍ່ເໝາະສົມກໍ່ແມ່ນອາຊີບບໍ່ຕ້ອງມີປະຕິສຳພັນກັບຜູ້ອື່ນເຊັ່ນ: ນັກວິທະຍາສາດທີ່ທຳງານຢູ່ໃນຫ້ອງທົດລອງ, ພະຍາບານຢູ່ຫ້ອງຜ່າຕັດ ຫຼື ຜູ້ບໍລິຫານຝ່າຍຜະລິດເປັນຕົ້ນ.

ຕາຕະລາງ 8 – 1 ປຽບທຽບຮູບແບບການຮຽນລະຫວ່າງຜູ້ມີການຄິດປະເພດຂຶ້ນຢູ່ກັບສິ່ງອ້ອມຂ້າງ ແລະປະເພດບໍ່ຂຶ້ນກັບສິ່ງອ້ອມຂ້າງ.

| ແບບການຄິດປະເພດຂຶ້ນຢູ່ກັບສິ່ງຢູ່ອ້ອມຂ້າງ | ແບບການຄິດປະເພດບໍ່ຂຶ້ນກັບສິ່ງອ້ອມຂ້າງ |
|---|---|
| 1.ການຮັບຮູ້ສິ່ງຕ່າງ ໃນຮູບພາບລວມ ( Glo – bally ) | 1.ຮັບຮູ້ສິ່ງຕ່າງໆໃນລັກສະນະວິເຄາະຫຼືພິຈາລະນາລາຍລະອຽດ. |
| 2.ເກີດການຮຽນຮູ້ ຫຼື ປະສົບການໃນທາງກວ້າງໆ ແລະ ຍຶດຕິດກັບໂຄງສ້າງຄວາມຮູ້ທີ່ໄດ້ຮັບ | 2. ເກີດການຮຽນຮູ້ ຫຼື ປະສົບການໃນທາງເລິກ ແລະ ເປັນຜູ້ກຳນົດໂຄງສ້າງຄວາມຮູ້ຂຶ້ນເອງ. |
| 3. ຮຽນຮູ້ສັງເຂບແຕ່ລະຢ່າງ ແລະ ເຫັນຄວາມສຳພັນຂອງສັງເຂບແຕ່ລະຊະນິດໃນຮູບກວ້າງໆ | 3. ຮຽນຮູ້ສັງເຂບແຕ່ລະຊະນິດໃນຮູບທີ່ເປັນສັງເຂບສະເພາະຢ່າງ ເຊິ່ງມີຄວາມສຳພັນກັນໜ້ອຍ. |
| 4. ມັກຮຽນເປັນກຸ່ມ | 4. ມັກຮຽນເປັນລາຍບຸກຄົນ. |
| 5. ຮຽນຮູ້ວິຊາສັງຄົມສາດໄດ້ດີທີ່ສຸດ | 5. ຮຽນຮູ້ວິຊາສັງຄົມສາດສະເພາະສິ່ງທີ່ຮັບໃຊ້ວຽກງານ. |
| 6. ສົນໃຈຮຽນເນື້ອໃນກ່ຽວກັບກັບປະສົບການຂອງຕົນ. | 6. ສົນໃຈຮຽນຮູ້ສິ່ງໃໝ່ໆເພາະແມ່ນເລື່ອງໜ້າສົນໃຈບໍ່ຈຳເປັນຕ້ອງກ່ຽວຂ້ອງກັບປະສົບການຂອງຕົນ. |
| 7.  ໃຫ້ຄົນອື່ນການົດເປົ້າໝາຍແລະເສີມແຮງໃຫ້. | 7. ການົດເປົ້າໝາຍ ແລະ ການເສີມແຮງດ້ວຍຕົນເອງ. |
| 8. ຕ້ອງການໃຫ້ຄົນອື່ນກຳນົດໂຄງສ້າງເນື້ອໃນທີ່ຈະຮຽນໃຫ້. | 8. ສາມາດການົດສະຖານະການ ຫຼື ໂຄງສ້າງຄວາມຮູ້ທີ່ຈະຮຽນດ້ວຍຕົນເອງ. |
| 9. ການວິຈານຂອງຜູ້ອື່ນມີຜົນກະທົບຕໍ່ການຮຽນຂອງເຂົາຫຼາຍ. | 9. ການວິຈານຂອງຜູ້ອື່ນມີຜົນກະທົບຕໍ່ການຮຽນຂອງເຂົາໜ້ອຍ. |
| 10. ຮຽນຮູ້ຈາກການຖ້າຮັບຈາກຄູ | 10. ຮຽນຮູ້ຈາກການຄົ້ນຄົ້ວດ້ວຍຕົນເອງດ້ວຍການທົດສອບສົມມຸດຖານ. |

ຕາຕະລາງ 8 – 2 ສະແດງລັກສະນະອາຊີບທີ່ສົນໃຈຂອງຜູ້ທີ່ມີການຄິດປະເພດຂຶ້ນກັບສິ່ງອ້ອມຂ້າງ ແລະ ປະເພດບໍ່ຂຶ້ນກັບສິ່ງອ້ອມຂ້າງ.

| ຮູບແບບການຄິດຂຶ້ນຢູ່ກັບສິ່ງອ້ອມຂ້າງ | ຮູບແບບການຄິດປະເພດບໍ່ຂຶ້ນກັບສິ່ງອ້ອມຂ້າງ |
|---|---|
| - ຈິດຕະວິທະຍາຄູລີນິກ<br>- ພະຍາບານຈິດຕະເວດ<br>- ຈິດຕະແພດທີ່ປະຕິບັດງານເຊິ່ງຈະຕ້ອງມີປະຕິສຳພັນກັບຜູ້ປ່ວຍ.<br>- ຜູ້ຈັດການ ຫຼື ຜູ້ບໍລິຫານຝ່າຍບຸກຄົນ.<br>- ຄູທຸລະກິດສຶກສາ.<br>- ຄູສັງຄົມສາດ ແລະ ອັກສອນສາດ.<br>- ຄູປະຖົມສຶກສາ. | - ຈິດຕະວິທະຍາການທົດລອງ<br>- ພະຍາບານສັກຍາກາ<br>- ຈິດຕະແພດທີ່ປະຕິບັດງານເຊິ່ງບໍ່ຕ້ອງມີການສຳພັນກັບຜູ້ປ່ວຍ.<br>- ຜູ້ຈັດການ ຫຼື ຜູ້ບໍລິຫານຝ່າຍຜະລິດ.<br>- ຜູ້ຈັດການ ຫຼື ຜູ້ບໍລິຫານດ້ານທຸລະກິດ.<br>- ຄູວິທະຍາສາດທາມະຊາດ<br>- ຄູອຸດສາຫະກາ |

### **1.3.2.** ຮູບແບບການຄິດກັບພຶດຕິກຳການສອນ

ຮູບແບບຂອງການຄິດທີ່ແຕກຕ່າງກັນນອກຈາກຈະມີອິດທິພົນຕໍ່ພຶດຕິກກຳການຮຽນຂອງຜູ້ຮຽນແລ້ວ.ຍັງມີອິດທິພົນຕໍ່ກັບພຶດຕິກຳການສອນຂອງຄູອີກດ້ວຍເຊັ່ນ: ຖ້າຄູມີການຄິດແບບປະເພດຂຶ້ນຢູ່ກັບສິ່ງອ້ອມຂ້າງ, ເຂົາກໍຈະມີແນວໂນ້ມຈະເນັ້ນການສອນທີ່ຄຳນຶງເຖິງການມີປະຕິສຳພັນກັບເດັກນັກຮຽນ ເຊັ່ນ: ສອນແບບອະພິປາຍ ຫຼື ມີກິດຈະກຳລວມກຸ່ມ ແລະ ຄຳນຶງເຖິງຄວາມຮູ້ສຶກ, ຄວາມຕ້ອງການຂອງຂອງຜູ້ຮຽນ ຫຼື ຢຶດເອົານັກຮຽນເປັນສູນກາງ. ສະແດງບົດບາດຂອງຄູ.ໃນຖານະເປັນຜູ້ໃຫ້ຄວາມຮູ້ໃຫ້ແກ່ນັກຮຽນບໍ່ຄ່ອຍວິຈານ ຫຼື ປະເມີນນັກຮຽນໄປໃນທາງລົບ ເຂົາຈະສ້າງບັນຍາກາດໃນຫ້ອງຮຽນໃຫ້ອົບອຸ່ນ.

ສ່ວນຄູຜູ້ທີ່ມີແບບການຄິດປະເພດທີ່ບໍ່ຂຶ້ນກັບກັບສິ່ງອ້ອມຂ້າງ ຈະມັກສອນແບບບັນຍາຍ ແລະ ຍ້ຳໃຫ້ນັກຮຽນຄິດແມ່ນຜູ້ທີ່ຈັດລະບຽບຕວາມຮູ້ທີ່ສອນດ້ວຍຕົນເອງ, ຖືບົດບາດຂອງຕົນເປັນຜູ້ຊ່ວຍເດັກນັກຮຽນໃຫ້ມີຄວາມສາມາດປະຍຸກຄວາມຮູ້ ຫຼື ຫຼັກການກ້າວິຈານ ຫຼື ໃຫ້ຜົນຍ້ອນກັບໃນທາງລົບ ແລະ ເນັ້ນບົດບາດຂອງຄູເອງໃນຖານະເປັນຜູ້ແນະນຳ ແລະ ຈັດຄວາມຮູ້ໃຫ້ແກ່ນັກຮຽນ. ໂດຍບໍ່ໄດ້ສ້າງກິດຈະກຳທີ່ເດັກທີ່ນັກຮຽນຕ້ອງມີປະຕິສຳພັນເຊິ່ງກັນ ແລະ ກັນ.

ຕາຕະລາງ 8 – 3 ປຽບທຽບພຶດຕິກາການສອນຂອງຄູທີ່ມີແບບການຄິດຢູ່ປະເພດຂຶ້ນກັບສິ່ງອ້ອມຂ້າງ ແລະ ປະເພດບໍ່ຂຶ້ນກັບສິ່ງອ້ອມຂ້າງ.

| ແບບການຄິດປະເພດຂຶ້ນຢູ່ກັບສິ່ງຢູ່ອ້ອມຂ້າງ | ແບບການຄິດປະເພດບໍ່ຂຶ້ນກັບສິ່ງຢູ່ອ້ອມຂ້າງ |
|---|---|
| 1. ມັກສະຖານະການ, ການສອນທີ່ຄູມີປະຕິສຳພັນ ແລະ ອະພິປາຍຮ່ວມກັບເດັກນັກຮຽນ.<br>2. ໃຊ້ຄາຖາມເພື່ອປະເມີນຄວາມຮູ້ຂອງ ນັກຮຽນຫຼັງຈາກສອນແລ້ວ.<br>3. ເນັ້ນກິດຈະກາແບບຍຶດເດັກເປັນສູນກາງ<br>4. ຄູມີບົດບາດໃນຖານະຜູ້ສອນຮູ້ຂໍ້ເທັດຈິງທີ່ມີຢູ່ແລ້ວ<br>5. ໃຫ້ຜົນສະທ້ອນທາງລົບແກ່ເດັກນັກຮຽນ ແລະ ຫຼີກລຽງການປະເມີນຜົນ.<br>6. ເນັ້ນການສ້າງບັນຍາກາດຂອງການຮຽນໃຫ້ອົບອຸ່ນ ດ້ວຍການສ້າງຄວາມສຳພັນທີດີກັບເດັກ | 1. ມັກສະຖານະການ, ການສອນທີ່ບໍ່ກ່ຽວຂ້ອງກັບເດັກນັກຮຽນເປັນລາຍບຸກຄົນເຊັ່ນ: ການສອນແບບບັນຍາຍ ໂດຍເນັ້ນໃສ່ດ້ານປັນຍາຈິດສຶກສາ<br>2. ໃຊ້ຄາຖາມເພື່ອນາເຂົ້າສູ່ບົດຮຽນ ແລະ ໃຊ້ຄຳຖາມຫຼັງຈາກຕອບຄຳຖາມ.<br>3. ເນັ້ນກິດຈະກາແບບຍຶດຄູເປັນສູນກາງ.<br>4. ຄູມີບົດບາດໃນຖານະເປັນຜູ້ສະໜັບສະໜູນ ຫຼື ປະຍຸກກົດເກນທີມີຢູ່ແລ້ວ.<br>5. ໃຫ້ຜົນສະທ້ອນກັບເພື່ອ ໃຫ້ເດັກນັກຮຽນປັບປຸງແກ້ໄຂ, ຖ້າປະເມີນຜົນງານຂອງເດັກໃນທາງລົບ<br>6. ເນັ້ນການຈັດລະບຽບຄວາມຮູ້, ຄູຈະຢູ່ໃນຖານະເປັນຜູ້ແນະນຳເດັກໂດຍບໍ່ມີການສົນໃຈຄວາມສຳພັນລະຫວ່າງບຸກຄົນ. |

ຕາຕະລາງປຽບທຽບແຮງຈູງໃຈໃຫ້ເດັກ ລະຫວ່າງຄູມີຮູບແບບການຄິດປະເພດຂຶ້ນກັບສິ່ງອ້ອມຂ້າງ ແລະ ປະເພດທີ່ບໍ່ຂຶ້ນກັບສິ່ງອ້ອມຂ້າງ

| ແບບການຄິດປະເພດຂຶ້ນຢູ່ກັບສິ່ງຢູ່ອ້ອມຂ້າງ | ແບບການຄິດປະເພດບໍ່ຂຶ້ນກັບສິ່ງຢູ່ອ້ອມຂ້າງ |
|---|---|
| 1.ໃຊ້ວິທີການຊົມເຊີຍ<br>2. ໃຊ້ວິທີການໃຫ້ເດັກມີສ່ວນຮ່ວມ ຫຼື ຊ່ວຍຄູ.<br>3. ໃຊ້ການໃຫ້ລາງວັນຕ່າງໆ.<br>4. ໃຊ້ວິທີການສະແດງຜົນງານທີ່ດີຂອງເດັກຕໍ່ຊຸມຊົນ.<br>5.ໃຊ້ວິທີການກະກຽມໂຄງສ້າງເນື້ອໃນທີ່ຈະສອນໃຫ້ເດັກ. | 1. ໃຊ້ວິທີການໃຫ້ຄະແນນ ຫຼື ເກຼດ.<br>2. ໃຊ້ວິທີການແຂ່ງຂັນ.<br>3. ໃຊ້ວິທີການໃຫ້ເດັກເຮັດກິດຈະກາທີ່ເຂົາມັກ.<br>4.ໃຊ້ການສະແດງຜົນງານຂອງເດັກວ່າ ຜົນງານນັ້ນມີຄຸນຄ່າ ຫຼື ປະໂຫຍດຕໍ່ຕົວເຂົາແນວໃດ.<br>5. ໃຊ້ວິທີການໃຫ້ເດັກມີອິດສະຫຼະທີ່ຈະກຳນົດໂຄງສ້າງຄວາມຮູ້ດ້ວຍຕົນເອງ. |

| | |
|---|---|

**1.4. ຂໍ້ສັງເກດບາງຢ່າງກ່ຽວກັບການຄິດ**

(1). ຜູ້ທີ່ມີການຄິດປະເພດທີ່ຂຶ້ນກັບສິ່ງອ້ອມຂ້າງຈະມີຜົນການຮຽນດີໃນວິຊາສັງຄົມສາດ ແລະ ອັກສອນສາດ. ຜູ້ທີ່ມີການຄິດແບບບໍ່ຂຶ້ນກັບສິ່ງອ້ອມຂ້າງຈະມີຜົນການຮຽນດີໃນວິຊາວິທະຍາສາດ ແລະ ຄະນິດສາດ.

(2). ຜູ້ທີ່ມີການຄິດປະເພດຂຶ້ນກັບສິ່ງອ້ອມຂ້າງ. ຈະມັກເຮັດວຽກປະເພດສັງຄົມສົງເຄາະເປັນຜູ້ໃຫ້ຄຳປຶກສາ, ເປັນຄູສອນ, ເປັນນັກບໍລິຫານບຸກຄົນ,ເປັນຕຳຫຼວດ. ສ່ວນຜູ້ທີ່ມີແນວຄິດປະເພດບໍ່ຂຶ້ນກັບສິ່ງອ້ອມຂ້າງຈະມັກເຮັດອາຊີບກ່ຽວພັນກັບທິດສະດີ ແລະ ການວິເຄາະເຊິ່ງໄດ້ແກ່: ຄະນິດສາດ, ນັກເຄມີສາດ, ນັກຊີວະວິທະຍາ,ນັກວິຊາວະກອນ, ແພດ, ຜູ້ຈັດການຝ່າຍຜະລິດ,ມັກເຮັດວຽກກ່ຽວກັບເຄື່ອງຈັກກົນ, ນັກສິນລະປະເປັນຕົ້ນ... ແຕ່ໃນບາງສາຂາອາຊີບອາດຈຳແນກອອກເປັນກຸ່ມຍ່ອຍໆ.ຖ້າມີແບບການຄິດຕ່າງກັນກໍ່ຈະມັກກຸ່ມອາຊີບຍ່ອຍທີ່ຕ່າງກັນເຊັ່ນ: ຜູ້ທີ່ມີການຄິດປະເພດຂຶ້ນຢູ່ກັບສິ່ງອ້ອມຂ້າງຈະມັກອາຊີບພະຍາບານທາງຈິດຕະເວດ, ຜູ້ມີແບບການຄິດປະເພດບໍ່ຂຶ້ໜກັບສິ່ງອ້ອມຂ້າງຈະມັກອາຊີບພະຍາບານຢູ່ໃນຫ້ອງຜ່າຕັດ.

(3). ເພດຊາຍຈະມີການຄິແບບບໍ່ຂຶ້ນກັບສິ່ງອ້ອມຂ້າງສູງກວ່າເພດຍິງ ແລະ ເພດຍິງຈະມີການຄິດແບບຂຶ້ນກັບສິ່ງອ້ອມຂ້າງສູງກວ່າເພດຊາຍ

(4). ແຕ່ລະບຸກຄົນຈະມີຮູບແບບການຄິດພຽງແບບໃດໜຶ່ງຕະຫຼອດການ ມີບາງສະຖານະການ ຫຼື ບາງຄັ້ງບຸກຄົນນັ້ນອາດມີການຄິດປະເພດຂຶ້ນກັບສິ່ງອ້ອມຂ້າງ, ແຕ່ສະຖານະການອາດມີການຄິດທີ່ບໍ່ຂຶ້ນກັບສິ່ງອ້ອມຂ້າງ. ເຖິງຢ່າງໃດກໍ່ຕາມການຈະຕີລາຄາວ່າບຸກຄົນໃດທີ່ມີການຄິດແບບໃດນັ້ນແມ່ນຈະຄຳນຶງເຖິງຄ່າສະເລ່ຍທີ່ແຕ່ລະບຸກຄົນຕອບສະໜອງຕໍ່ກັບສິ່ງກະຕຸ້ນຕ່າງໆ.

**ຈາກສິ່ງກ່າວມານັ້ນຈະເຫັນໄດ້ວ່າ:** ຮູບແບບການຄິດທີ່ມີອິດທິພົນຕໍ່ກັບພຶດຕິກາການຮຽນຮູ້ ແລະ ການຕອບສະໜອງໂດຍກົງ.ດັ່ງນັ້ນຄູທີ່ມີແນວຄິດແຕກຕ່າງຈາກແນວຄິດຂອງເດັກນັກຮຽນຈະມັກດຳເນີການສອນທີ່ບໍ່ສອດຄ່ອງກັບລັກສະນະຂອງຜູ້ຮຽນສະນັ້ນ,ໃນການສອນຄູຄວນຄຳນຶງເຖິງຮູບແບບການຄິຂອງນັກຮຽນຫຼາຍກວ່າການຄຳນຶງເຖງການຄິດຂອງຕົນ, ຄວາມຮູ້ເລື່ອງຂອງການຄິດນີ້ຈະເປັນປະໂຫຍດໃຫ້ແກ່ຄູເພື່ອວາງແຜນການສອນໃຫ້ສອດຄ່ອງກັບນັກຮຽນເປັນລາຍບຸກຄົນໄດ້ຫຼາຍກວ່າການສອນນັກຮຽນເປັນກຸ່ມ.

## 2. ຮູບແບບການຮຽນ ( Learning Style ).

ແຕ່ລະບຸກຄົນຈະຮຽນຮູ້ໄດ້ດີໃນແນວທາງທີ່ແຕກຕ່າງກັນ, ມີບາງຄົນໄດ້ດີໃນການຟັງຄຳບັນຍາຍ, ມີບເງຄົນຮຽນຮູ້ໄດ້ດີຖ້າໄດ້ເຫັນ ຫຼື ໄດ້ອ່ານ, ບາງຄົນຮຽນຮູ້ໄດ້ດີເມື່ອໄດ້ສາພັດ ຫຼື ໄດ້ມີສ່ວນຮ່ວມກິດຈະກຳການຮຽນນັ້ນ.

ແບບການຮຽນຈະເປັນລັກສະນະນິໄສ ຫຼື ຄວາມມັກຂອງແຕ່ລະບຸກຄົນໃນສະຖານະການຕ່າງໆ ຕ້ອງພິຈາລະນາວ່າ: ແຕ່ລະບຸກຄົນມັກຮຽນຢູ່ໃສ່, ເວລາໃດ, ຮຽນນຳໃຜ, ຈະຮຽນໄດ້ດີຢູ່ໃນສະພາບແວດລ້ອມໃດ, ແລະ ເງື່ອນໄຂທີ່ມີຢູ່ໃນພາວະຮ່າງກາຍຢູ່ໃນລັກສະນະໃດ.

### 2.1. ແບບການຮຽນໃນທັດສະນະຂອງດັນ ແລະ ດັນ

ດັນ ແລະ ດັນ ( Dunn and Dunn 1978 ) ໄດ້ຈຳແນກຄວາມແຕກຕ່າງຂອງແບບການຮຽນໄປຕາມສະພາວະທີ່ແຕກຕ່າງກັນ 4 ດ້ານຄື: ສິ່ງແວດລ້ອມ ( Environment ) ແລະ ອາລົມ ( Emotionnal ) ສັງຄົມ ( Sociological ) ແລະ ຮ່າງກາຍ ( Physical )ລາຍລະອຽດມີດັ່ງລຸ່ມນີ້.

#### 2.1.1. ສະພາວະດ້ານສິ່ງແວດລ້ອມ

**(1) ສຽງ**: ມີບາງຄົນທີ່ມັກຮຽນ ຫຼື ສຶກສາຢູ່ໃນຫ້ອງທີ່ມີດງຽບ, ແຕ່ມີບາງຄົນສາມາດຮຽນໄດ້ຢູ່ບ່ອນມີສຽງລົບກວນໄດ້.

**(2) ແສງ:** ບາງຄົນຈະຮຽນໄດ້ດີຢູ່ບ່ອນທີ່ມີແສງສະຫວ່າງຫຼາຍ, ແຕ່ບາງຄົນພັດມັກຮຽນບ່ອນທີ່ມີແສງໄຟພໍມືວໆ.

**(3) ອຸນຫະພູມ:** ບາງຄົນມັກຮຽນໃນສະພາບອາກາດໜາວ,ແຕ່ບາງຄົນພັດມັກຮຽນຢູ່ບ່ອນອາກາດອົບອຸ່ນ ຫຼື ຮ້ອນ.

**(4) ບ່ອນນັ່ງ:** ບາງຄົນມັກຮຽນຢູ່ໂຕະຮ່ວມກັບຄົນອື່ນຫຼາຍຄົນ, ແຕ່ບາງຄົນພັດມັກສຶກສາຮໍ່າຮຽນຢູ່ໂຕະທີ່ອອກແບບໄວ້ໃຫ້ນັ່ງສະເພາະຄົນດຽວ,.

#### 2.1.2. ສະພາບດ້ານອາລົມ

**(1) ແຮງຈູງໃຈ:** ມີບາງຄົນຮຽນຍ້ອນມີແຮງຈູງໃຈພາຍໃນ ( Self – Motivated ) ບາງຄົນຮຽນຍ້ອນມີແຮງຈູງໃຈພາຍນອກເຊັ່ນ: ຕ້ອງການລາງວັນ, ຄຳຊົມເຊີຍ ຫຼື ເນື່ອງຈາກການບັງຄັບຈາກຄູ ແລະ ພໍ່ແມ່.

**(2)ຄວາມພາກພຽນ:** ບາງຄົນຈະຮຽນດ້ວຍຄວາມພາກພຽນພະຍາຍາມ, ແຕ່ບາງຄົນພັດຮຽນດ້ວຍຄວາມພາກພຽນຕໍ່າການຮຽນ.

**(3) ຄວາມຮັບຜິດຊອບ:** ບາງຄົນຈະມີຄວາມຮັບຜິດຊອບສູງ, ແຕ່ບາງຄົນຂາດຄວາມຮັບຜິດຊອບ.

**(4) ການກຳນົດຕາຕະລາງການຮຽນ:** ບາງຄົນມີການກຳນົດຕາຕະລາງການຮຽນປະຈຳວັນຂອງຕົນເອງເຊັ່ນ: ວັນຈັນຈະຮຽນວິຊາສັງຄົມ, ວັນອັງຄານຈະສຶກສາວິຊາວິທະຍາສາດ, ແລ້ວກໍປະຕິບັດຕາມຕາຕະລາງທີ່ກຳນົດໄວ້, ມີບາງຄົນຈະຮຽນດ້ວຍຕົນເອງໂດຍບໍ່ໄດ້ກຳນົດຕາຕະລາງໄວ້.

#### 2.1.3. ສະພາວະດ້ານສັງຄົມ.

ແມ່ນລັກສະນະຂອງແຕ່ລະບຸກຄົນໃນຄະນະທີ່ກຳລັງຮຽນ ຫຼື ສຶກສາ. ບາງຄົນຈະມັກຮຽນ ຫຼື ສຶກສາເປັນລາຍບຸກຄົນ, ບາງຄົນມັກຮຽນເປັນຄູ່, ບາງຄົນມັກຮຽນເປັນກຸ່ມ,ບາງຄົນມັກຮຽນໂດຍມີຜູ້

ໃຫຍ່ ຫຼື ຜູ້ປົກຄອງນັ່ງຢູ່ນຳ. ແຕ່ບາງຄົນຈະບໍ່ມີລັກສະນະທີ່ແນ່ນອນ, ເພາະມີບາງຄັ້ງເຂົາກໍ່ມັກຮຽນຄົນດຽວ, ມີບາງຄັ້ງເຂົາກໍ່ມັກຮຽນເປັນກຸ່ມ.

**2.1.4. ສະພາວະດ້ານຮ່າງກາຍ**

**(1) ການຮັບຮູ້:** ມີບາງຄົນມັກຮຽນດ້ວຍການເບິ່ງ ຫຼື ສັງເກດ, ບາງຄົນມັກຮຽນດ້ວຍການຟັງ,ບາງຄົນມັກຮຽນດ້ວຍການສຳພັດ, ບາງຄົນມັກຮຽນດ້ວຍກິດຈະກຳການເຄື່ອນໄຫວ.

**(2) ການຮັບປະທານອາຫານ ໃນຄະນະກຳລັງຮຽນ:** ມີບາງຄົນມັກກິນອາຫານອາຫານຫວ່າງ ຫຼື ເຄື່ອງດື່ມໄປພ້ອມໆກັບການຮຽນ ຫຼື ສຶກສາຄົ້ນຄົ້ວ, ແຕ່ບາງຄົນບໍ່ມັກກະທຳແບບນັ້ນ.

**(3) ເວລາ:** ບາງຄົນຈະຮຽນໄດ້ດີທີ່ສຸດໃນເວລາຕອນເຊົ້າ, ບາງຄົນຮຽນໄດ້ດີໃນຕອນບ່າຍ, ບາງຄົນອ່ານໜັງສືຢ່າງມີສຳມາທິຢູ່ໃນຕອນເດິກ, ບາງຄົນອ່ານໜັງສືມີສຳມາທິດີຕອນເຊົ້າໆ. ສິ່ງທັງໝົດນີ້ກໍ່ເພາະວ່າການເຮັດໜ້າທີ່ຂອງຮ່າງກາຍຢູ່ໃນແຕ່ລະຄົນຈະມີປະສິດທິພາບດີທີ່ສຸດໃນຊ່ວງເວລາທີ່ແຕກຕ່າງກັນ.

**(4) ການເຄື່ອນໄຫວ:** ບາງຄົນຈະຮຽນໄດ້ດີເມື່ອມີການເຄື່ອນໄຫວຂອງຮ່າງກາຍ, ແຕ່ບາງຄົນຈະຮຽນໄດ້ດີເວລາບໍ່ເຄື່ອນໄຫວ.

**2.2. ຮູບແບບການຮຽນກັບຈັດການຮຽນ - ການສອນ**

ຮູບແບບການຮຽນຂອງເດັກນັກຮຽນແຕ່ລະຄົນຈະເປັນສິ່ງສຳຄັນທີ່ຄູຄວນຈະຮູ້ ແລະ ຄຳນຶງເຖິງ. ເພື່ອຈັດສະພາບການຮຽນ - ການສອນໃຫ້ສອດຄ່ອງກັບຮູບແບບການຮຽນຂອງເຂົາຢູ່ ທ່ານ ດັນ ແລະ ດັນ ແລະ ໄພຣ ( Dunn and Dunn Price, 1985 ) ໄດ້ສ້າງແບບວັດການຮຽນ ແລະ ໃສ່ຊື່ວ່າ: ( Learning Style Inventory ) ເພື່ອເປັນການຊ່ວຍຄູກວດວ່ານັກຮຽນແຕ່ລະຄົນ ໄດ້ມີຮູບແບບການຮຽນແບບໃດ. ໃນແຕ່ລະກຸ່ມ ຫຼື ບຸກຄົນ.

**ຕົວຢ່າງແບບວັດ.**

| ຂໍ້ຄວາມ | ລະດັບຄວາມຄິດເຫັນ | | | | |
|---|---|---|---|---|---|
| | ເຫັນດີທີ່ສຸດ | ເຫັນດີ | ເຫັນດີເປັນບາງຄັ້ງ | ບໍ່ເຫັນດີ | ບໍ່ເຫັນດີທີ່ສຸດ |
| 1. ຂ້າພະເຈົ້າຈະຮຽນໄດ້ດີເວລາຫ້ອງງຽບສະຫງົບ<br>2. ໃນຂະນະທີ່ຂ້າພະເຈົ້າຮຽນຂ້າພະເຈົ້າບໍ່ສົນໃຈສິ່ງໃດໆ | | | | | |

ໃຫ້ນັກຮຽນອ່ານແບບວັດການຮຽນແລ້ວພິຈາລະນາວ່າຂໍ້ຄວາມນັ້ນກົງກັບລັກສະນະນິດໄສ ຫຼື ພຶດຕິກຳການຮຽນຂອງຕົນລະດັບໃດ, ຖ້າກົງ ຫຼື ສອດຄ່ອງກັບຕົວເອງຫຼາຍທີ່ສຸດ ກໍ່ໃສ່ຂໍ້ “ ເຫັນດີທີ່ສຸດ ”, ຖ້າບໍ່

ກົງເລີຍໃຫ້ໝາຍໃສ່ຊ່ອງ “ ບໍ່ເຫັນດີທີ່ສຸດ ” ສ່ວນກົງ ຫຼື ສອດຄ່ອງແດ່ກໍ່ໝາຍໃສ່ “ ເຫັນດີບາງຄັ້ງ ” ຖ້າເຫັນດ້ວຍລະຫວ່າງເຫັນດີທີ່ສຸດກັບເຫັນດີບາງຄັ້ງຈຶ່ງໝາຍໃສ່ຊ່ອງ “ ເຫັນດີ ” ຖ້າຢູ່ລະຫວ່າງບໍ່ເຫັນດີທີ່ສຸດກັບເຫັນດີເປັນບາງຄັ້ງຈຶ່ງໝາຍໃສ່ຊ່ອງ“ ບໍ່ເຫັນດີ ”.

ແບບວັດການຮຽນນີ້ຈະມີປະໂຫຍດໃຫ້ຄູເພື່ອຈະໄດ້ຈັດສະພາບແວດລ້ອມຂອງການຮຽນໃຫ້ສອດຄ່ອງກັບນັກຮຽນແຕ່ລະຄົນ, ຫຼື ຈັດກຸ່ມນັກຮຽນຕາມແບບການຮຽນທີ່ມີຄວາມຄ້າຍຄືກັນ, ຢູ່ໃນການເຮັດກິດຈະກຳ ຫຼື ຢູ່ໃນສະພາບການຮຽນຮູ້ທີ່ຄ້າຍຄືກັນ. ກໍ່ຍ້ອນວ່າຜົນການສຶກສາຂອງ ດັນ ແລະ ດັນ ( Dunn and Dunn, 1987 ) ການຈັດສະພາບແວດລ້ອມໃຫ້ສອດຄ່ອງກັບຮູບແບບການຮຽນຈະພາໃຫ້ນັກຮຽນມີທັດສະນະຄະຕິດີຕໍ່ການຮຽນທີ່ສຸດ.

ຜ່ານມາຍັງມີຄູຫຼາຍຄົນທີ່ຖຖົກຖຽງກັນວ່າ: ຈະເຮັດໄດ້ແນວໃດເພື່ອຈະໃຊ້ວິທີສອນໃຫ້ສອດຄ່ອງກັບນັກຮຽນເປັນລາຍບຸກຄົນຢູ່ໃນຫ້ອງຮຽນໄດ້. ຕໍ່ກັບບັນຫານີ້ ດັນ ແລະ ດັນ ໄດ້ສະເໜີແນະໄວ້ວ່າ: ວິທີການທີ່ດີທີ່ສຸດຂອງຄູກໍ່ແມ່ນການຈັດສະພາບແວດລ້ອມ ຫຼື ສະພາບການຮຽນທີ່ມີລັກສະນະໃຫ້ເໝາະສົມຫຼາຍຂຶ້ນເຊັ່ນ: ເດັກທີ່ຈະຮຽນໄດ້ດີໃນສະພາຍທີ່ງຽບສະຫງັດ ກໍ່ອະນຸຍາດ ໃຫ້ເຂົາໄປສຶກສາ ຫຼື ຮຽນໄດ້ໃນສະຖານທີ່ເຊິ່ງຫ່າງໄກຈາກສຽງລົບກວນ ຂະນະດຽວກັນ ເດັກທີ່ມັກຮຽນ ທ່າມກາງສຽງອຶກກະທຶກ ກໍ່ອະນຸຍາດໃຫ້ເຂົາຟັງວິທະຍຸທີ່ມີຫູຟັງສະເພາະຕົວເອງ ເປັນຕົ້ນ.

## ❖ ສະຫຼຸບ

ແຕ່ລະບຸກຄົນຈະມີວິຖີທາງຂອງາຕົນໃນການຮຽນຮູ້ ( Perceive ) ການຈັດລະບຽບຂໍ້ມູນ ( OR r – ganized ) ແລະ ຂະບວນການປະມວນຂໍ້ມູນ ( Information Processing ). ວິຖີທາງດັ່ງກ່າວນີ້ຈະມີລັກສະນະສະເພາະຕົວທີ່ແຕກຕ່າງຈາກຄົນອື່ນເຊັ່ນ: ບາງຄົນມີປະຕິກິລິຍາໂຕ້ຕອບສິ່ງທີ່ຄິດຢ່າງໄວວາຟ້າວຟັ່ງແຕ່ບາງຄົນຄິດຢ່າງສຸຂຸມຮອບຄອບ. ລັກສະນະທີ່ເປັນນິດໄສດັ່ງກ່າວນີ້ຈະຮຽກວ່າແບບການຄິດ ( Congnitive Stule ) ຂອງບຸກຄົນ.

ໄດ້ມີຜູ້ແບ່ງປະເພດຂອງການຄິດອອກເປັນປະເພດຕ່າງໆອອກເປັນຫຼາຍປະເພດ, ແຕ່ຈະເວົ້າເຖິງຫຼາຍທີ່ສຸດກໍ່ມີ 2 ມິຕິຄື: ການຄິດແບບພິຈາລະນາຄວາມໄວ ແລະ ຄວາມຜິດພາດຂອງການຕອບສະໜອງເປັນຫຼັກ ແລະ ການຄິດແບບຈະແນກເຖິງອິດທິພົນຂອງສິ່ງອ້ອມຂ້າງຈາກສິ່ງທີ່ສົນໃຈ.

ແບບການຄິດທີ່ພິຈາລະນາຄວາມໄວ ແລະ ຄວາມຜິດພາດຂອງການຕອບສະໜອງໄດ້ແບ່ງອອກເປັນ 2 ແບບຄື: ປະເພດການຄິດແບບຟ້າວຟັ່ງ ແລະ ປະເພດການຄິດແບບໄຕ່ຕອງ. ແບບການຄິດຈະເປັນປະເພດກໍ່ຍ່ອມຂຶ້ນກັບການຮຽນຮູ້ໃນສັງຄົມ, ເຊິ່ງອາດຢູ່ໃນຮູບຂອງການຮຽນແບບຂະບວນການທາງສັງຄົມປົກກະຕິນັບທັງຢູ່ໃນຄອບຄົວ ແລະ ຢູ່ໃນໂຮງຮຽນ.

ການຄິດທີ່ຈຳແນກຕາມອິດທິພົນຂອງສິ່ງອອ້ອມຂ້າງ ແລະ ປະເພດບໍ່ຂຶ້ນກັບສິ່ງອ້ອມຂ້າງ. ທ່ານວິທຄິນ ( Witkin ) ໄດ້ພົບວ່າ ຜູ້ທີ່ມີການຄິດທັງ 2 ແບບຈະມີລັກສະນະການຮຽນແຕກຕ່າງກັນຫຼາຍຢ່າງເຊັ່ນ: ຜູ້ມີການຄິດປະເພດຂຶ້ນກັບສິ່ງອ້ອມຂ້າງຈະມັກຮຽນເປັນກຸ່ມ ແລະ ສົນໃຈວິຊາສັງຄົມສາດ, ຕ້ອງການໄດ້ຮັບການເສີມແຮງຈາກຄົນອື່ນ. ສ່ວນຜູ້ທີ່ມີການຄິດປະເພດບໍ່ຂຶ້ນກັບສິ່ງອ້ອມຂ້າງຈະມັກຮໍາ

ຮຽນ ຫຼື ເຮັດວຽກຄົນດຽວ ແລະ ມີຄວາມສົນໃຈໃນວິຊາວິທະຍາສາດມີການເສີມແຮງດ້ວຍຕົນເອງ. ຄວາມແຕກຕ່າງດັ່ງກ່າວນີ້ຈະມີການພົວພັນກັບອາຊີບ ຫຼື ວຽກທີ່ເຂົາຈະກະທຳອີກ. ຜູ້ທີ່ມີການຮຽນປະເພດໃຂື້ນກັບສິ່ງອ້ອມຂ້າງຈະເໝາະກັບອາຊີບທີ່ເຮັດວຽກກັບຫຼາຍຄົນ. ສ່ວນຜູ້ທີມີການຄິດປະເພດບໍ່ຂື້ນກັບສິ່ງອ້ອມຂ້າງຈະເໝາະກັບອາຊີບຢູ່ກັບເຄື່ອງມື ຫຼື ໃນຫ້ອງທົດລອງ.

ນອກຈາກມີຄວາມແຕກຕ່າງໃນດ້ານຮູບແບບການຄິດແລ້ວ ຜູ້ຮຽນຈະມີແບບການຮຽນແຕກຕ່າງກັນອີກ. ແບບກການຮຽນກໍ່ແມ່ນລັກສະນະນິດໄສ ຫຼື ຄວາມມັກຂອງແຕ່ລະບຸກຄົນຢູ່ໃນສະຖານະການ, ການຮຽນຕ່າງໆເຊັ່ນ: ມີບາງຄົນມັກຮຽນບ່ອນສະຫງົບ, ແຕ່ບາງຄົນມັກຮຽນຢູ່ທ່າມກາງທີ່ມີສຽງດັງບົນແຊວ, ບາງຄົນມັກຄິດ ແຕ່ບາງຄົນມັກກະທຳເປັນຕົ້ນ

ທ່ານ ດັນ ແລະ ດັນ ( Dunn and Dunn ) ໄດ້ຈຳແນກແບບການຮຽນຕາມຄວາມແຕກຕ່າງຂອງອົງປະກອບ 4 ປະການຄື: ສິ່ງແວດລ້ອມ, ອາລົມ, ສັງຄົມ ແລະ ຮ່າງກາຍ ສະນັ້ນຄູຄວນໃຫ້ຄວາມສຳຄັນ ແລະ ສົນໃຈແບບການຄິດ ແລະ ແບບການຮຽນຂອງນັກຮຽນແຕ່ລະບຸກຄົນ ຫຼື ແຕ່ລະກຸ່ມເພື່ອດຳເນີນການສອນ ຫຼື ກະກຽມກິດຈະກຳໃຫ້ສອດຄ່ອງກັບຄວາມແຕກຕ່າງດັ່ງກ່າວ. ນອກຈາກນີ້ ຄວາມຮູ້ເລື່ອງຮູບແບບການຄິດ ແລະ ແບບການຮຽນ, ຄູຄວນນຳມາເປັນຂໍ້ມູນເຂົ້າການແນະນຳ ການສຶກສາ ແລະອາຊີບໃຫ້ແກ່ເດັກນັກຮຽນອີກດ້ວຍ.

# ບົດທີ 4
# ທິດສະດີການຮຽນຮູ້ພຶດຕິກຳນິຍົມ

ເມື່ອເວົ້າເຖິງການຮຽນຮູ້ຄົນຈຳນວນຫຼາຍມັກຄິດເຖິງການຮຽນຮູ້ຢູ່ໃນລາຍວິຊາຕ່າງໆຢູ່ໃນຊັ້ນຮຽນ. ສະນັ້ນຖ້າຢາກຍົກຕົວຢ່າງກ່ນຮຽນຮູ້ທີ່ແຕ່ລະບຸກຄົນທີ່ຕົນຮຽນຜ່ານມາ,ແມ່ນພວກເຂົາຈະໄດ້ຮຽນຮູ້ຢູ່ໃນຄອບຄົວ ແລະ ຢູ່ໃນສັງຄົມ. ເຖິງວ່າຈະມີຜູ້ໃຫ້ຕົວຢ່າງການຮຽນຮູ້ຫຼາຍຊະນິດຢູ່ໃນໂຮງຮຽນ ແລະ ຢູ່ນອກໂຮງຮຽນກໍ່ຕາມ ແຕ່ຕົວຢ່າງທັງໝົດນັ້ນຈະເປັນພຽງບາງສ່ວນຂອງການຮຽນຮູ້ໃນຊີວິດຂອງເຂົາເທົ່ານັ້ນ ກໍ່ຍ້ອນວ່າແຕ່ລະບຸກຄົນຕ່າງກໍ່ມີການຮຽນຮູ້ຢູ່ຕະຫຼອດເວລາ ແລະ ຮຽນຮູ້ສິ່ງຕ່າງໆຢ່າງຫຼວງຫຼາຍ.

ຢູ່ໃນ 3 ບົດຕໍ່ໄປນີ້ຈະໄດ້ນຳສະເໜີກ່ຽວກັບການຮຽນຮູ້ໂດຍອະທິບາຍທິດສະດີການຮຽນຮູ້ທີ່ສຳຄັນເພື່ອໃຫ້ຜູ້ອ່ານເຫັນໄດ້ເງື່ອນໄຂ ຫຼື ອົງປະກອບຂອງຂະບວນການຮຽນຮູ້, ພ້ອມກັບສະເໜີຫຼັກການ ແລະ ແນວທາງປະຍຸກເຂົ້າໃນຊັ້ນຮຽນຕ່າງໆ.

ສຳລັບຢູ່ໃນບົດນີ້ແມ່ນຈະເລີ່ມຕົ້ນດ້ວຍນິຍາມໂດຍທົ່ວໄປຂອງການຮຽນຮູ້ ທີ່ນັກຈິດຕະວິທະຍາສ່ວນຫຼາຍຍອມຮັບ ແລະ ເວົ້າເຖິງທິດສະດີການຮຽນຮູ້ໃນກຸ່ມພຶດຕິກຳນິຍົມ (Beha-viorism) ເຊິ່ງໄດ້ແກ່ ເຊິ່ງໄດ້ແກ່ທິດສະດີຂອງທ່ານພັບລອບ ຫຼື ປາບລົບ;ທິດສະດີຂອງວັດສັນ;ທິດສະດີຂອງທອນໄດ ແລະ ທິດສະດີຂອງສະກິນເນີ ຕາມລຳດັບ.

## 1. ຄວາມໝາຍຂອງການຮຽນຮູ້

ການຮຽນຮູ້ ເປັນການຍາກທີ່ຈະໃຫ້ຄຳນິຍາຍເປັນຄຳໜຶ່ງໄດ້, ທັງໆທີ່ ເປັນຄຳທີ່ທຸກຄົນໃຊ້ຢູ່ສະເໝີ ແລະ ເຂົ້າໃຈວ່າມັນແມ່ນສິ່ງໃດ. ນັກຈິດວິທະຍາໃຫ້ຄວາມໝາຍຂອງການຮຽນຮູ້ທີ່ແຕກຕ່າງກັນຢ່າງຫຼວງຫຼາຍ. ມີບາງທ່ານໄດ້ໃຫ້ຄວາໝາຍເປັນຮູບປະທຳ, ມີບາງທ່ານໄດ້ໃຫ້ຄວາມໝາຍ ຢ່າງກວ້າງບໍ່ສາມາດເຫັນພາບທີ່ຊັດເຈນໄດ້. ຄຳນິຍາມການຮຽນຮູ້ເປັນທີ່ຍອມຮັບກັນຫຼາຍກໍ່ແມ່ນ.
ການຮຽນຮູ້ ໝາຍເຖິງການປ່ຽນແປງພຶດຕິກຳ ຫຼື ສັກກາຍະພາບຂອງພຶດຕິກຳທີ່ຂ້ອນຂ້າງຖາວອນທີ່ເປັນຜົນມາຈາກປະສົບການ.

**ຈາກຄຳນິຍາຍຂ້າງເທິງນັ້ນ, ຈະມີປະເດັນທີ່ຄວນພິຈາລະນາໃນລາຍລະອຽດດັ່ງນີ້:**

**(1)** ການປ່ຽນແປງພຶດຕິກຳ ຫຼື ສັກກາຍະພາບຂອງພຶດຕິກຳໝາຍຄວາມວ່າ: ແມ່ນການປ່ຽນແປງຢູ່ພາຍນອກເຊິ່ງສະແດງອອກມາໃຫ້ເຫັນຢ່າງຊັດເຈນ ຫຼື ອາດຢູ່ໃນຮູບແບບການປ່ຽນແປງຂອງການປ່ຽນແປງສັກກາຍະພາບ ເຊິ່ງເປັນການປ່ຽນແປງພາຍໃນທີ່ບໍ່ໄດ້ສະແດງອອກມາໃຫ້ເຫັນເປັນຜົນຂອງການກະທຳໃນເວລານັ້ນກໍ່ໄດ້.

**ຕົວຢ່າງທີ 1** ທ້າວສູນບໍ່ເຄີຍລ້າງມືກ່ອນກິນເຂົ້າເລີຍ ຕໍ່ມາລາວໄດ້ຮັບການສອນວ່າ: ກ່ອນຈະກິນເຂົ້າຕ້ອງໄດ້ລ້າງມືທຸກຄັ້ງ. ຫຼັງຈາກນັ້ນລາວກໍ່ລ້າງມືກ່ອນກິນເຂົ້າຢູ່ສະເໝີ. ຈາກຕົວຢ່າງນີ້ພຶດຕິກຳທີ່ປ່ຽນ

ໄປແມ່ນພຶດຕິກຳພາຍນອກທີ່ສາມາດສັງເກດໄດ້ ແລະ ການວັດວ່າທ້າວສູນໄດ້ມີການປ່ຽນແປງ ຫຼື ບໍ່ກໍ່ອີງໃສ່ຜົນຂອງການກະທຳ.

**ຕົວຢ່າງທີ 2** ມີຄູຝຶກນັກກິລາແລ່ນ 100 ແມັດຄູໄດ້ຮຽກນັກກິລາ ເພື່ອມາຝຶກອົບຮົມ, ໂດຍໃຫ້ນັກກິລາເບິ່ງເທັບບັນທຶກພາບຂອງນັກກິລາແລ່ນໃນລະດັບໂລກປະກອບກັບຄຳອະທິບາຍຂອງຄູຝຶກເປັນເວລາ 2 ວັນ. ເນື້ອໃນຂອງການອົບຮົມຄັ້ງນີ້ແມ່ນມີຄວາມຕ້ອງການໃຫ້ນັກກິລາເກີດມີຄວາມຮູ້ ຄວາມເຂົ້າໃຈເພື່ອພັດທະນາທັກສະການກຽມແລ່ນ ແລະ ຂໍ້ຄວນປະຕິບັດໃນເວລາກຳລັງແລ່ນເພື່ອເຂົ້າເສັ້ນໄຊ, ຜ່ານການຝຶກອົບຮົມແລ້ວທຸກຄົນສາມາດເຂົ້າໃຈ ແລະ ຮູ້ວິທີປະຕິບັດຖືກຕ້ອງ. ຈາກຕົວຢ່າງນີ້ສາມາດຊີ້ໃຫ້ເຫັນວ່າ: ໃນສະພາບຄວາມເປັນຈິງແມ່ນເຮົາໄດ້ເກີດມີການຮຽນຮູ້ແລ້ວຕັ້ງແຕ່ບໍ່ທັນໄດ້ລົງມືປະຕິບັດ. ສະນັ້ນ, ການຮຽນຮູ້ເປັນຂະບວນການພາຍໃນບໍ່ອາດສັງເກດເຫັນໄດ້, ແມ່ນຂະບວນການປ່ຽນແປງພາຍໃນຕົວເອງ, ສິ່ງນີ້ສາມາດແຍກຄວາມແຕກຕ່າງລະຫວ່າງການຮຽນຮູ້ກັບຜົນຂອງການກະທາຈຶ່ງເຮັດໃຫ້ເກີດມີຄວາມສັບສົນ ແລະ ເຂົ້າໃຈຜິດວ່າການຮຽນຮູ້ກັບຜົນການກະທຳເປັນສິ່ງດຽວກັນ.

**(2)** ກາຮປ່ຽນແປງພຶດຕິກຳ ຫຼື ສັກກາຍະພາບຂອງພຶດຕິກຳທີ່ເວົ້າມານັ້ນບໍ່ໄດ້ໝາຍຄວາມວ່າ: ຕ້ອງເປັນການ

ປ່ຽນແປງທາງບວກ ( ແມ່ນການປ່ຽນແປງທີ່ສັງຄົມຍອມຮັບວ່າດີ ) ສະເໜີໄປແຕ່ອາດຈະເປັນການປ່ຽນແປງທາງລົບ ( ທີ່ສັງຄົມບໍ່ຍອມຮັບວ່າດີ ) ກໍ່ໄດ້ດັ່ງຕົວຢ່າດັ່ງລຸ່ມນີ້:

**ຕົວຢ່າງທີ 1** ໂດຍປົກກະຕິແລ້ວ ທ້າວ ວັນໄຊ ແມ່ນເດັກທີ່ດີ, ແຕ່ພໍໄປຕິດກັບໝູ່ເພື່ອນທີ່ເປັນນັກເລງດຶງກະເປົ໋າກໍ່ກາຍເປັນນັກເລງດຶງກະເປົ໋າຢູ່ໃນລະດັບທີ່ມີປະສົບການໄດ້.

**ຕົວຢ່າງທີ 2** ນາງ ວັນນາເປັນພະນັກງານພິມດີດທີ່ພິມໄດ້ວ່ອງໄວ,ຄ່ອງແຄ້ວ,ຊັດເຈນ ແລະ ຄຳຜິດໜ້ອຍທີ່ສຸດ. ໃນໄລຍະຫຼັງລາວໄດ້ສັງເກດເຫັນວ່າ: ລາວຍິ່ງພິມໄດ້ດີເທົ່າໃດຫົວໜ້າກໍ່ຍິ່ງມອບວຽກໃຫ້ລາວຫຼາຍຂຶ້ນເທົ່ານັ້ນ. ຖ້າໄລຍະໃດລາວພິມຊ້າ ແລະ ມີຄຳຜິດຫຼາຍ, ຫົວໜ້າກໍ່ບໍ່ໃຊ້ລາວພິມໃຫ້. ສະນັ້ນ, ລາວຈຶ່ງປ່ຽນແປງພຶດຕິກຳມາເປັນຄົນທີ່ພິມຊັກຊ້າ ແລະ ພິມຜິດເພີ່ມຂຶ້ນຕະຫຼອດມາ.

**(3)** ການປ່ຽນແປງພຶດຕິກຳ ຫຼື ສັກກາຍະພາບຂອງພຶດຕິກຳຕ້ອງແມ່ນການປ່ຽນແປງທີ່ຖາວອນ ຫຼື ຂ້ອນຂ້າງຖາວອນ.ຢູ່ໃນຂໍ້ນີ້ຕ້ອງເນັ້ນວ່າ ພຶດຕິກຳການຮຽນຮູ້ຕ້ອງເປັນການປ່ຽນແປງທີ່ຄົງຢູ່ ແລະ ສາມາດເຮັດຊ້ຳໆກັນຈົນສາມາດແນ່ໃຈວ່າມີການປ່ຽນແປງເກີດຂຶ້ນແທ້.ດັ່ງນັ້ນ, ການປ່ຽນແປງໃດທີ່ເກີດຂຶ້ນໃນຊົ່ວຄະນະໃດໜຶ່ງຈະບໍ່ຖືວ່າເປັນການຮຽນຮູ້.

**ຕົວຢ່າງ** ທ້າວ ສີທັດ ອາຍຸ 4 ປີເຝິກຂີ່ລົດຖີບ 2 ລໍ້. ເນື່ອງຈາກອາຍຸຍັງນ້ອຍ ແລະ ຫາກໍ່ເຝິກຂີ່ເຂົາຈຶ່ງບໍ່ສາມາດຊົງຕົວໄດ້ຕ້ອງໄດ້ໃຊ້ຂາທັງສອງຊ່ວຍຄຶງລົດບໍ່ໃຫ້ລົ້ມ. ມື້ຕໍ່ມາສີທັດກໍ່ເຝິກຂີ່ລົດອີກ ແລະ ເຂົາສາມາດຄຶງຕົວໄດ້, ເວລານີ້ເຂົາດີໃຈຫຼາຍເພາະເຊື່ອວ່າຕົນເອງຂີ່ລົດໄດ້ແລ້ວແຕ່ພໍ່ບອກໃຫ້ທົດລອງຂີຄືນໃໝ່ເຂົາພັດຄຶງຕົວບໍ່ໄດ້ອີກ. ກໍລະນີນີ້ຖືວ່າ ການປ່ຽນແປງທີ່ເກີດຂຶ້ນເປັນການປ່ຽນແປງໄລຍະໃດໜຶ່ງເທົ່ານັ້ນ ແລະ ບໍ່ຖືວ່າ ສີທັດໄດ້ເກີດການຮຽນຮູ້ໃນການຂີ່ລົດຖີບ 2 ລໍ້ໄດ້.

**(4)** ການປ່ຽນແປງພຶດຕິກຳ ຫຼື ສັກກາຍະພາບຈະຖືວ່າເປັນການຮຽນຮູ້ກໍ່ຕໍ່ເມື່ອເປັນຜົນມາຈາກ ປະສົບການເທົ່ານັ້ນ. ການປ່ຽນແປງທີ່ມາຈາກສາເຫດອື່ນໆເຊັ່ນ: ຄວາມຈະເລີນເຕີບໂຕ ແລະ ວຸທິພາວະ ຈະບໍ່ຖືວ່າເປັນການຮຽນຮູ້.

**ຕົວຢ່າງ:** ເມື່ອນາງ ໄໝ ມີອາຍຸ 5 ປີນາງສາມາດແລ່ນໄດ້ໄລຍະທາງ 50ແມັດ ໂດຍໃຊ້ເວລາ 20 ວິນາທີ, ອີກ 3 ປີຕໍ່ມານາງສາມາດແລ່ນໄດ້ໄລຍະທາງ 50 ແມັດ ໄດ້ໃຊ້ເວລາພຽງແຕ່ 15 ວິນາທີເທົ່ານັ້ນ. ການປ່ຽນແປງນີ້ຖືວ່າເປັນຜົນຈາກຄວາມຈະເລີນເຕີບໂຕ ຫຼື ວຸດທິພາວະທາງກາຍຈຶ່ງບໍ່ຖືວ່າເປັນການຮຽນ ຮູ້.

## 2. ທິດສະດີການຮຽນຮູ້

ເຖິງວ່ານິຍາມທີ່ກ່າວມານັ້ນຈະໄດ້ຮັບການຍອມຮັບຢ່າງກວ້າງຂວາງຢູ່ໃນກຸ່ມຈິດຕະວິທະຍາແຕ່ ເຂົາເຈົ້າກໍ່ມີຄິດເຫັນທີ່ແຕກຕ່າງກັນຫຼາຍປະການກ່ຽວກັບຂະບວນການຮຽນຮູ້ໂດຍສະເພາະແມ່ນ ຄວາມ ພະຍາຍາມທີ່ຈະອະທິບາຍວ່າການຮຽນຮູ້ໄດ້ເກີດຂຶ້ນແນວໃດ, ການກຳກອບຂອງການທົດລອງເພື່ອຊອກ ຫາຂໍ້ສະຫຼຸບກ່ຽວກັບພາວະ ຫຼື ເງື່ອນໄຂທີ່ພາໃຫ້ເກີດມີການຮຽນຮູ້. ຕະຫຼອດເຖິງຂໍ້ຈຳກັດໃນການນຳໃຊ້. ດ້ວຍເຫດນີ້ຈຶ່ງເກີດມີທິດສະດີການຮຽນຮູ້ ຫຼາຍໆທິດສະດີເກີດຂຶ້ນ.

**ທິດສະດີການຮຽນຮູ້ໃນຍຸກປັດຈຸບັນຈະມີ 3 ກຸ່ມໃຫຍ່ຄື:** ທິດສະດີຈອງກຸ່ມພຶດຕິກຳນິຍົມ (Behvior Learning Theories ), ທິດສະດີຈອງກຸ່ມປັນຍານິຍົມ(Cognitive Lear Theories ) ແລະ ກຸ່ມປະຕິສຳພັນ ຫຼື ກຸ່ມມະນຸດນິຍົມ(Interactoinist Approach).

**ທິດສະດີການຮຽນຮູ້ທີ່ສຳຄັນຂອງກຸ່ມພຶດຕິກຳນິຍົມໄດ້ແກ່:** ທິດສະດີຂອງ ພາບລອຟ(Pavlov) ທິດສະດີຂອງວັດສັນ(Watson) ທິດສະດີຂອງທອນໄດ(Thorndike) ທິດສະດີຂອງສະກິນເນີ (Skinner) ເປັນຕົ້ນ.

**ທິດສະດີກຸ່ມປັນຍານິຍົມກໍ່ມີຫຼາຍທິດສະດີທີ່ສຳຄັນເຊິ່ງໄດ້ແກ່:** ທິດສະດີກຸ່ມຈິດຕະວິທະຍາ ກຸ່ມ ເກສະຕັນ (Gestalt) ທິດສະດີຂອງບລູເນີ(Bruner) ທິດສະດີຂອງອອດຊູເບີ(Au-subel) ທິດສະດີ ຂອງຂະບວນການປະມວນສານ(Information Processing Approach) ເປັນຕົ້ນ.

ສຳລັບທິດສະດີກຸ່ມປະຕິສຳພັນນັ້ນແມ່ນກຸ່ມທີ່ພັດທະນາມາຈາກກຸ່ມພຶດຕິກຳນິຍົມ ແລະ ກຸ່ມປັນຍາ ນິຍົມ. ໂດຍມີການປະສົມປະສານແນວຄິດຂອງທັງ 2 ກຸ່ມເຂົ້ານຳກັນເຊິ່ງໄດ້ແກ່: ທິດສະດີປັນຍາສັງຄົມ ຂອງທ່ານ ແບນດູລາ (Bandura) ທິດສະດີກຸ່ມໜ້າທີ່ນິຍົມ (Functoinalism) ເປັນຕົ້ນ. ລາຍ ລະອຽດຂອງທິດສະດີຈະກ່າວດັ່ງລຸ່ມນີ້:

## 3. ທິດສະດີການວາງເງື່ອນໄຂແບບຄລາສິກ (Classical Conditoining)

### 3.1. ທິດສະດີຂອງພາບລອຟ (Ivan Petrovich Pavov;1849-1936)

ເປັນຄົນຣັດ-ເຊຍ. ໃນປີ1904 ທ່ານໄດ້ສົນໃຈການວາງເງື່ອນໄຂກັບໂຕໝາ ເມືອທ່ານມີອາຍຸໄດ້ 50 ປີ ແລະ ໄດ້ດຳເນີນການສຶກສາເລື້ອຍໆມາເປັນເວລາ 30 ປີທິດສະດີຂອງທ່ານໄດ້ຮັບການຍອມຮັບຢ່າງກວ້າງຂວາງຢູ່ໃນກຸ່ມນັກຈິດຕະວິທະຍາ.

#### 3.1.1. ການທົດລອງຂອງພາບລອຟ

ກ່ອນເລີ່ມການທົດລອງທ່ານໄດ້ຜ່າຕັດເປີດທໍ່ນ້ຳລາຍຢູ່ແກ້ມໝາໃຫ້ກວ້າງອອກເພື່ອແຍ່ສາຍຢາງເຂົ້າໄປຮອງຮັບນ້ຳລາຍທີ່ໄຫຼອອກມາເຂົ້າເຄື່ອງວັດ. ປະລິມານນ້ຳລາຍທີ່ໄຫຼອອກມາຈະຫຼາຍຂຶ້ນຫຼືໜ້ອຍລົງຈະເປັນການຊີ້ບອກເຖິງການປ່ຽນແປງພຶດຕິກຳທີ່ເກີດຂຶ້ນ.ຕໍ່ຈາກນັ້ນທ່ານໄດ້ມັດໂຕໝາໄວ້ແລ້ວກໍ່ຕິດຕາມສັງເກດພຶດຕິກຳການຕອບສະໜອງຂອງໝາດັ່ງກ່າວສະແດງໃນຮູບພາບ.

ຂັ້ນການທົດລອງທ່ານພາບລອຟ ໄດ້ສະເໜີສິ່ງກະຕຸ້ນ 2 ຢ່າງຂອງໂຕໝາເຊັ່ນ: ຝຸ່ນຊີ້ນກັບສຽງກະດິ່ງໂດຍມີການດຳເນີນການດັ່ງນີ້:

**+ ກ່ອນການວາງເງື່ອນໄຂ**

**ຂັ້ນທີ 1** ສັ່ນກະດິ່ງ ຜົນໄດ້ຮັບກໍ່ແມ່ນໝາຈະບໍ່ເກີດີປະຕິກິລິຍາສະທ້ອນ (ນ້ຳລາຍໄຫຼ)

**ຂັ້ນທີ 2** ພົ່ນຝຸ່ນຊີ້ນເຂົ້າໄປໃນປາກໝາ ກໍ່ປະກົດວ່າມີປະຕິກິລິຍາສະທ້ອນ (ນ້ຳລາຍໄຫຼ)

**+ ລະຫວ່າງການວາງເງື່ອນໄຂ:**

**ຂັ້ນທີ 3** ສັ່ນກະດິ່ງແລ້ວຕາມດ້ວຍການພົ່ນຝຸ່ນຊີ້ນເຂົ້າໄປໃນປາກໝາ, ຈະປະກົດວ່າມີປະຕິກິລິຍາສະທ້ອນ (ນ້ຳລາຍໄຫຼ) ເຮັດແບບນີ້ຫຼາຍໆຄັ້ງ.

**ຂັ້ນທີ 4** ສັ່ນກະດິ່ງຢ່າງດຽວໂດຍບໍ່ໄດ້ພົ່ນຝຸ່ນຊີ້ນກໍ່ປະກົດວ່າໝາໄດ້ເກີດປະຕິກິລິຍາສະທ້ອນ (ນ້ຳລາຍໄຫຼ).

ຕາຕະລາງທີ່ສະແດງຂັ້ນຕອນໃນຂະບວນການວາງເງື່ອນໄຂຂອງພາບລອຟ.

| **ໄລຍະຂອງການວາງເງື່ອນໄຂ** | **1** | **ການໃຫ້ສິ່ງກະຕຸ້ນ ແລະ ການຕອບສະໜອງ** |
|---|---|---|
| ກ່ອນການວາງເງື່ອນໄຂ | 2 | ສຽງກະດິ່ງ(CS) ບໍ່ມີນ້ຳລາຍໄຫຼ<br>ຝຸ່ນຊີ້ນ (UCS)------ນ້ຳລາຍໄຫຼ |
| ລະຫວ່າງການວາງເງື່ອນໄຂ | 3 | ສຽງກະດິ່ງ(CS)<br>ແລະ ຝຸ່ນຊີ້ນ(UCS)------ນ້ຳລາຍໄຫຼ (UCR) |
| ຫຼັງການວາງເງື່ອນໄຂ | 4 | ສຽງກະດິ່ງ (CS)-------ນ້ລາຍໄຫຼ (CR). |

**ຜ່ານຕາຕະລາງນັ້ນເຮົາຄວນເຂົ້າໃຈກ່ຽວກັບສິ່ງກະຕຸ້ນ ແລະ ການຕອບສະໜອງໃນການທົດລອງດັ່ງນີ້:**

**(1)** ສິ່ງກະຕຸ້ນຂັ້ນທີ 1 ແລະ ຂັ້ນທີ 4 ແມ່ນສິ່ງດຽວກັນ (ນັ້ນກໍ່ແມ່ນສຽງກະດິ່ງ) ແຕ່ໃຫ້ຜົນຕໍ່ການຕອບສະໜອງແຕກຕ່າງກັນ. ສຽງກະດິ່ງຢູ່ຂັ້ນທີ 1 ( ກ່ອນອານວາງເງື່ອນໄຂ ) ບໍ່ເຮັດໃຫ້ໂຕໝາມີນໍ້າລາຍໄຫຼ. ແຕ່ສຽງກະດິ່ງຢູ່ໃນຂັ້ນຕອນທີ 4 ( ຫຼັງຂາກມີການວາງເງື່ອນໄຂ) ຈະມີຜົນເຮັດໃຫ້ໂຕໝາມີນໍ້ລາຍໄຫຼ ກໍ່ສະແດງວ່າໂດຍພື້ນຖານແລ້ວສຽງກະດິ່ງແມ່ນສິ່ງກະຕຸ້ນທີ່ປານກາງ(Neutral Stimulus ທ່ານພາບລອຟຮຽກສິ່ງກະຕູ້ນປະເພດນີ້ວ່າ: ສິ່ງກະຕຸ້ນທທີ່ວາງເງື່ນໄຂ (Condi-Tioned Stimulusໄດ້ໃຊ້ຕົວຫຍໍ້ວ່າ CS)

**(2)** ສິ່ງກະຕຸ້ນຢູ່ຂັ້ນທີ 2 ແມ່ນຝຸ່ນຊີ້ນ.ສາມາດກະຕຸ້ນປະຕິກິລິຍາສະທ້ອນຫຼືນໍ້າລາຍໄຫຼຂອງໝາໄດ້ໂດຍບໍ່ທັນໄດ້ວາງເງື່ອນໄຂ. ທ່ານໄດ້ຮຽກສິ່ງກະຕຸ້ນນີ້ວ່າ: ສິ່ງກະຕຸ້ນທີ່ບໍ່ວາງເງື່ອນໄຂ (UnConditioned Stimulus ໄດ້ໃຊ້ຕົວຫຍໍ້ວ່າ: UCS ຫຼື US).

**(3)** ການຕອບສະໜອງ(ນໍ້າລາຍໄຫຼ) ທີ່ເກີດຂຶ້ນຢູ່ຂັ້ນທີ 2 ແລະ ຂັ້ນທີ 4 ຈະມີລັກສະນະແຕກຕ່າງກັນ. ນໍ້າລາຍທີ່ເກີດມາຈາກຝຸ່ນຊີ້ນຢູ່ໃນຂັ້ນທີ 2 ນັ້ນ, ມັນເກີດຂຶ້ນເອງໂດຍບໍ່ຕ້ອງມີການວາງເງື່ອນໄຂເພີ່ນຈຶ່ງເອີ້ນວ່າການຕອບສະໜອງທີ່ບໍ່ວາງເງື່ອນໄຂ (UnConditioned Res-ponseໄດ້ໃຊ້ຕົວຫຍໍ້ວ່າ: UCR ຫຼື UR). ສ່ວນນໍ້າລາຍທີ່ເກີດມາຈາກສຽງກະດິ່ງຢູ່ໃນຂັ້ນທີ 4 ນັ້ນ, ແມ່ນເກີດຈາກຜົນການວາງເງື່ອນໄຂເພີ່ນຈຶ່ງຮຽກການຕອບສະໜອງນີ້ວ່າ: ການຕອບສະໜອງທີ່ວາງເງື່ອນໄຂ (Conditioned Responseໄດ້ໃຊ້ຕົວຫຍໍ້ວ່າ:CR )

### 3.1.2. ຫຼັກການວາງເງື່ອນໄຂຂອງພາບລອຟ

**(1)** ຖ້າສິ່ງກະຕຸ້ນທີ່ວາງເງື່ອນໄຂ (CS) ຄວບຄູ່ກັບສິ່ງກະຕຸ້ນທີ່ບໍ່ວວາງເງື່ອນໄຂ (UCS) ໃນໄລຍະທຳອິດ, ສິ່ງກະຕຸ້ນທີ່ວາງເງື່ອນໄຂກໍ່ຈະເກີດມີການຕອບສະໜອງຄືກັບສິ່ງກະຕຸ້ນທີ່ບໍ່ວາງເງື່ອນໄຂ. ຖ້າສັ່ນກະດິ່ງ (CS) ແລ້ວໃຫ້ຝຸ່ນຊີ້ນແກ່ໂຕໝາ ( ເຮັດແບບນີ້ຊໍ້າໆກັນ ) ຕໍ່ມາພຽງແຕ່ສັ່ນກະດິ່ງຢ່າງດຽວກໍ່ເຮັດໃຫ້ໝານໍ້າລາຍໄຫຼຄືກັບການພົ່ນຝຸ່ນຊີ້ນເຂົ້າໄປໃນປາກໝາ.

**(2)** ຈາກຜົນການທົດລອງຂອງທ່ານພາບລອຟ ແລະ ຜູ້ອື່ນໆໃນເວລາຕໍ່ມາກໍ່ໄດ້ພົບວ່າການວາງເງື່ອນໄຂຈະມີປະສິດທິພາບທີ່ສຸດກໍ່ໃນເມື່ອສິ່ງກະຕຸ້ນທີ່ວາງເງື່ອນໄຂ (CS) ກ່ອນແລ້ວຈຶ່ງຕາມດ້ວຍສິ່ງກະຕຸ້ນທີ່ບໍ່ຕ້ອງວາງເງື່ອນໄຂ (UCS) (ສັ່ນກະດິ່ງກ່ອນຈຶ່ງໃຫ້ຝຸ່ນຊີ້ນ) ການວາງເງື່ອນໄຂທີ່ໃຫ້ສິ່ງກະຕຸ້ນທັງ 2 ຢ່າງພ້ອມກັນຈະມີປະສິດທິພາບລະດັບກາງ. ແຕ່ການໃຫ້ສິ່ງກະຕຸ້ນທີ່ວາງເງື່ອນໄຂ (CS) ຫຼັງສິ່ງກະຕຸ້ນທີ່ບໍ່ວາງເງື່ອນໄຂ (UCS) ຈະມີປະສິດທິພາບໜ້ອຍທີ່ສຸດ.

**(3)** ຖ້າການທົດລອງດຳເນີນຂັ້ນສຸດທ້າຍຜູ້ທົດລອງຈະໃຫ້ສະເພາະສິ່ງທີ່ກະຕຸ້ນທີ່ວາງເງື່ອນໄຂ (CS) ພຽງຢ່າງດຽວ ແລະ ຢຸດໃຫ້ສິ່ງກະຕຸ້ນທີ່ບໍ່ວາງເງື່ອນໄຂ (UCS) ໂດຍເດັດຂາດຜົນທີ່ປະກົດກໍ່ແມ່ນປະຕິກິລິຍາຕອບສະໜອງອັນເນື່ອງມາຈາກການວາງເງື່ອນໄຂ (CR) ຄ່ອຍໆຫຼຸດລົງຈົນກະທັ້ງບໍ່ເກີດ

ມີການຕອບສະໜອງເລີຍ ລັກສະນະແບບນີ້ທ່ານ ພາບລອຟຮຽກວ່າ: ( ການລຶບພຶດຕິກຳທີ່ຖືກວາງເງື່ອນໄຂ) Extinction.

(4) ຫຼັງຈາກລຶບພຶດຕິກຳທີ່ຖືກວາງເງື່ອນໄຂແລ້ວ. ຕໍ່ມາກໍ່ປາກົດວ່າການຕອບສະໜອງເນື່ອງມາຈາກການວາງເງື່ອນໄຂ (CS) ໃນກໍລະນີນີ້ຈະຮຽກວ່າ: ຂະບວນການຟື້ນສະພາບການຕອບສະໜອງທີ່ວາງເງື່ອນໄຂ Spontaneous Recovery.

(5) ຫຼັງຈາກສິ່ງກະຕຸ້ນທີ່ວາງເງື່ອນໄຂ (CS) ພາໃຫ້ເກີດການຕອບສະໜອງ (CR) ຕໍ່ມາເມື່ອຜູ້ຖືກທົດລອງໄປພົບສິ່ງກະຕຸ້ນອື່ນທີ່ມີລັກສະນະຄື: ກັບສິ່ງກະຕຸ້ນທີ່ວາງເງື່ອນໄຂແລ້ວພາໃຫ້ເກີດມີການຕອບສະໜອງ (CR) ຄືກັນເພິ່ນຮຽກວ່າ: ການສະຫຼຸບຄວາມຄ້າຍຄືກັນກັບສິ່ງກະຕຸ້ນ ຕົວຢ່າງ: ຖ້າໂຕໝາໄດ້ຮຽນຮູ້ການຫຼັ່ງນໍ້າລາຍ (CR) ຈາກສຽງກະດິ່ງ (CS) ໃນເວລາໝາໂຕນັ້ນໄດ້ໄປພົບກັບສິ່ງອື່ນໆ ທີ່ຄ້າຍຄືກັບສຽງກະດິ່ງມັນກໍ່ຫຼັ່ງນໍ້າລາຍຄືກັບສຽງກະດິ່ງທີ່ມັນໄດ້ຍິນ ໂດຍບໍ່ມີການວາງເງື່ອນໄຂອີກ.

## 3.2. ທິດສະດີຂອງວັດສັນ

ທ່ານວັດສັນ (John B Watson: 1878-1958) ແມ່ນຜູ້ກໍ່ຕັ້ງກຸ່ມພຶດຕິກຳຂຶ້ນທີ່ສາຫາລັດອາເມລິກາທ່ານເປັນຄົນປະເທດສາຫາລັດອາເມລິກາ.

ໃນປີ ຄສ 1913 ທ່ານວັດສັນໄດ້ຂຽນບົດເລື່ອງ: ຈິດຕະວິທະຍາໃນມຸມມອງຂອງ ນັກພຶດຕິກຳນິຍົມ ເຊິ່ງມີຄວາມສຳຄັນຕໍ່ວົງການຈິດຕະວິທະຍາຢ່າງຫຼວງຫຼາຍ.ໃນບົດຄວາມນີ້ເຂົາໄດ້ສະແດງທັດສະນະທີ່ບໍ່ເຫັນດີນຳການສຶກສາຈິດຕະວິທະຍາກົດຈະກຳທາງຈິດ (ເຊັ່ນ: ຈິດສຳນຶກ, ພາວະທາງຈິດ,ຂົນຕະນານ ແລະ ອື່ນໆ)ດ້ວຍວິທີການພິນິດພາຍໃນ(Instropection) ເພາະຂໍ້ມູນເຫຼົ່ານີ້ແມ່ນສິ່ງທີ່ບໍ່ສາມາດສັງເກດເຫັນໄດ້ ແລະ ບໍ່ສາມາດເຊື່ອຖືໄດ້ເຊິ່ງບໍ່ແມ່ນລັກສະນະຂອງການສຶກສາທາງດ້ານວິທະຍາສາດ, ເຂົາມີຄວາມເຫັນວ່າ: ການສຶກສາຈິດຕະວິທະຍາຄວນສຶກສາ ສະເພາະສິ່ງກະຕຸ້ນ,ການຕອບສະໜອງ,ລັກສະນະນິໄສທີ່ສັງເກດ ແລະ ວັດໄດ້ຢ່າງຊັດເຈນເທົ່ານັ້ນ.

ປີຕໍ່ມາ ທ່ານວັດສັນໄດ້ອ່ານພົບຜົນງານຂອງພາບລອຟທີ່ໄດ້ທົດລອງກັບໂຕໝາ ມັນໄດ້ເຮັດໃຫ້ເຂົາສົນໃຈສຶກສາເພີ່ມເຕີມ ໃນປີ ຄສ 1916 ເຂົາໄດ້ເລີ່ມການທົດລອງວາງເງື່ອນໄຂກັບເດັກທາລົກຄົນໜຶ່ງ. ການສຶກສານີ້ເປັນເລີ່ມປະຍົກຫຼັກການຮຽນຮູ້ໄປສູ່ເລື່ອງພັດທະນາການຂອງມະນຸດ.

### 3.2.1. ແນວຄິດພື້ນຖານ

#### (1) ແນວຄິດກ່ຽວກັບອິດທິພົນຂອງສິ່ງແວດລ້ອມ

ດັ່ງທີ່ກ່າວມາແລ້ວວ່າ ທ່ານວັດສັນແມ່ນນັກພຶດຕິກຳນິຍົມ() ທ່ານເນັ້ນການສຶກສາສະເພາະພຶດຕິກຳພາຍນອກເທົ່ານັ້ນ. ທ່ານເຊື່ອວ່າພຶດຕິກຳຕ່າງໆ ຂອງມະນຸດຈະເກີດຂຶ້ນຢູ່ພາຍໃຕ້ອິດທິພົນຂອງສິ່ງແວດລ້ອມ.

ເຖິງວ່າຄຳເວົ້າດັ່ງກ່າວນີ້ ຈະບໍ່ໄດ້ຮັບຄຳພິສູດກໍ່ຕາມແຕ່ໄດ້ຮັບການຍອມຮັບຈາກນັກຈິດຕະວິທະຍາກຸ່ມພຶດຕິກຳນິຍົມວ່າ: ສິ່ງແວດລ້ອມມີອິດທິພົນຫຼາຍຕໍ່ການປັບຕົວຫຼືການສ້າງພຶດຕິກຳ.

(2) ແນວຄິດພື້ນຖານກ່ຽວກັບອາລົມຂອງມະນຸດ

ທ່ານວັດສັນ ມີຄວາມສົນໃຈຫຼາຍກ່ຽວກັບການວາງເງື່ອນໄຂທາງອາລົມ. ທ່ານເວົ້າວ່າຄົນເຮົາເກີດມາຈະມີປະຕິກິລິຍາທາງດ້ານອາລົມທີ່ຕິດຕົວມາໂດຍບໍ່ຕ້ອງມີການຮຽນຮູ້ຢູ່ 3 ຢ່າງຄື: ຄວາມຢ້ານກົວ, ຄວາມຊັງ ແລະ ຄວາມຮັກ.

**ຄວາມຢ້ານ:** ພວກເຮົາສາມາດສັງເກດເຫັນຄວາມຢ້ານຂອງເດັກໄດ້ຈາກອາການສະດຸ້ງ,ການຫາຍໃຈໄວ,ກຳມືແໜ້ນ,ຫຼັບຕາ,ການຫົດຕົວນອນລົງ ແລະ ຮ້ອງໄຫ້. ຈະມີສິ່ງກະຕຸ້ນທີ່ບໍ່ວາງເງື່ອນໄຂ 2 ຢ່າງທີ່ພາໃຫ້ເດັກເກີດຄວາມຢ້ານຄື:

- ສຽງດັງທີ່ເກີດຂຶ້ນໂດຍບໍ່ຄາດຄິດ
- ແມ່ນບໍ່ໄດ້ຮັບຄວາມຊ່ວຍເຫຼືອ (ເຊັ່ນເວລາຍົກຂາເດັກຂຶ້ນໃຫ້ຢ່ອນຫົວລົງ)

ການກະທຳແບບນີ້ເວລາເດັກໃຫຍ່ຂຶ້ນເຂົາຈະຢ້ານສິ່ງຕ່າງໆເຊັ່ນ: ຢ້ານຄົນແປກໜ້າ, ຢ້ານໂຕໜູ, ຢ້ານໝາ,ຢ້ານຄວາມມືດ. ທ່ານວັດສັນໄດ້ອະທິບາຍວ່າ ຄວາມຢ້ານທີ່ເກີດຂຶ້ນໃນໄລຍະຫຼັງຕໍ່ມາຈະເປັນຄວາມຢ້ານທີ່ເກີດມາຈາກການຮຽນຮູ້ເຊັ່ນ: ເດັກນ້ອຍຢ້ານໂຕງູກໍ່ເພາະມີຄວາມຕົກໃຈຈາກສຽງຮ້ອງຂອງຄົນອື່ນທີ່ເຫັນງູ. ດັ່ງນັ້ນ ງູຈະບໍ່ແມ່ນສິ່ງກະຕຸ້ນທີ່ເດັກຢ້ານແບບທຳມະຊາດ. ແຕ່ເກີດຈາກການວາງເງື່ອນໄຂໃຫ້ຢ້ານ.

**ຄວາມຄຽດຊັງ ຫຼື ຄວາມຊັງ:** ແມ່ນພຶດຕິກຳອີກປະການໜຶ່ງທີ່ເກີດຂຶ້ນໂດຍບໍ່ຕ້ອງມີການຮຽນຮູ້. ເດັກມັກຊັງ ແລະ ຄຽດເວລາຖືກຈຳກັດການເຄື່ອນໄຫວເຊັ່ນ: ຖ້າເຮົາຈັບເດັກອາຍຸ 2 ປີບໍ່ໃຫ້ເຂົາໄປໃນສິ່ງທີ່ເຂົາຢາກໄປ, ເດັກກໍ່ຮ້ອງດັງໆ ແລະ ເຮັດໜ້າບູດບຶ້ງ, ຖ້າເດັກຖືກບັງຄັບແບບນີ້ຊ້ຳເລື້ອຍໆ,ເຂົາກໍ່ຈະສະແດງຄວາມຄຽດຊັງຕໍ່ສະຖານະການຕ່າງໆນັ້ນຫຼາຍຂຶ້ນ. ເຊັ່ນ:ເດັກຈະຄຽດຊັງເວລາພໍ່ແມ່ບອກເດັກໄປລ້າງໜ້າ,ອາບນ້ຳຫຼືສັ່ງໃຫ້ກະທຳສິ່ງຕ່າງໆ. ເດັກຈະຄຽດເມື່ອຖືກອອກຄຳສັ່ງກໍ່ເພາະວ່າເຂົາຈະເຊື່ອມໂຍງຄຳສັ່ງເຂົ້າກັບການຖືກຈັບໄວ້ບໍ່ໃຫ້ເຂົາເຄື່ອນໄຫວຢ່າງມີອິດສະຫຼະນັ້ນເອງ.

**ຄວາມຮັກ:** ແມ່ນອາລົມທີ່ເກີດຂຶ້ນເມື່ອເດັກໄດ້ຮັບການສຳພັດເບົາໆຈາກການອູ້ມລູບຄຳ.ເດັກຈະຕອບສະໜອງດ້ວຍການຍິ້ມການຫົວດັງໆ.ທ່ານວັດສັນກໍ່ມີຄວາມເຫັນຄືກັບທ່ານ ຟອຍວ່າ: ຄວາມຮັກ:ຄວາມພໍໃຈຂອງເດັກແມ່ນເກີດຈາກການຖືກສຳພັດອະໄວຍະວະທີ່ກ່ຽວກັບເພດເຊັ່ນ: ບໍລິເວນຫົວນົມ, ຮີມປາກ ແລະ ອະໄວຍະວະເພດ. ທ່ານວັດສັນອະທິບາຍວ່າອາລົມໃນໄລຍະຫຼັງແມ່ນເກີດຈາກການຮຽນຮູ້ ຫຼື ການວາງເງື່ອນໄຂເຊັ່ນ: ການທີ່ເດັກຮັກແມ່ນັ້ນກໍ່ຍ້ອນໃບໜ້າຂອງແມ່ປາກົດຄວບຄູ່ກັບການອູ້ຫອມລູບຄຳ ຫຼື ການສຳພັດເບົາໆ. ດັ່ງນັ້ນແມ່ຈຶ່ງເປັນສິ່ງກະຕຸ້ນທີ່ວາງເງື່ອນໄຂເຊິ່ງມີຜົນເຮັດໃຫ້ເດັກເກີດມີຄວາມຮູ້ທີ່ດີ. ຕໍ່ມາຖ້າຄົນອື່ນໆ ໄດ້ປະກົດຕົວຂຶ້ນພ້ອມກັບແມ່ເດັກກໍ່ຈະເກີດມີຄວາມຮູ້ສຶກທີ່ດີຕໍ່ກັບຄົນອື່ນນັ້ນຕາມໄປດ້ວຍ ລັກສະນະແບບນີ້ກໍ່ແມ່ນການວາງເງື່ອນໄຂທີ່ສູງຂຶ້ນຂັ້ນທີ 2 ນັ້ນເອງ.

**ໄດ້ມີຂໍ້ສັງເກດວ່າ:** ບົດຂຽນຂອງທ່ານ ວັດສັນບໍ່ຊັດເຈນເພາະເພິ່ນກ່າວເຖິງລັກສະນະທາງອາລົມພື້ນຖານ 3 ປະການແຕ່ຍັງຂາດລາຍລະອຽດ ແລະ ຄວາມຕໍ່ເນື່ອງໂດຍສະເພາະແມ່ນການພັດທະນາທາງອາລົມພື້ນຖານດັ່ງກ່າວ.

### 3.2.2. ການທົດລອງເງື່ອນໄຂຄວາມຢ້ານຂອງ ວັດສັນ

ການທົດລອງມີຊື່ສຽງທີ່ສຸດຂອງທ່ານ ວັດສັນແມ່ນ ການທົດລອງເພື່ອວາງເງື່ອນໄຂໃຫ້ເດັກຄົນໜຶ່ງເກີດຄວາມຢ້ານໂຕໜູຂາວ ( Watson and Rayner,1964:20-25 ) ເດັກທີ່ ວັດສັນນໍາມາທົດລອງຄັ້ງນີ້ຊື່ ອັລເບຣ (Albert, B) ເຊິ່ງເກີດ ແລະ ໄດ້ຮັບການລ້ຽງດູຢູ່ໃນໂຮງຮຽນອະນຸບານ. ເຂົາເປັນເດັກທີ່ມີສຸຂະພາບດີ, ມີພັດທະນາການປົກກະຕິ. ອາຍຸເຂົາໄດ້ 9 ເດືອນປະມານ9໐໌,5 ກິໂລ. ອັລເບຣເປັນເດັກທີ່ບໍ່ມີຄວາມກະຕືລືລົ້ນປານໃດ,ມີສະພາບອາລົມທີ່ໝັ້ນຄົງ, ບໍ່ອ່ອນໄຫວງ່າຍ, ປົກກະຕິບໍ່ຄ່ອຍຮ້ອງໄຫ້. ແຕ່ຖ້າເຂົາຢູ່ໃນສະພາບແວດລ້ອມທີ່ອັນຕະລາຍພຽງເລັກນ້ອຍລາວກໍ່ຈະຮ້ອງໄຫ້ຂຶ້ນທັນທີ.
ເມື່ອອັລເບຣປະມານອາຍຸ 9 ເດືອນ ທ່ານ ວັດສັນກໍ່ເລີ່ມການທົດລອງໂດຍໃຫ້ເຂົາໄດ້ພົບກັບສິ່ງກະຕຸ້ນຕ່າງໆຄື: ໜູຂາວ, ກະຕ່າຍ, ໝາ, ລິງ ແລະ ໜ້າກາກຂອງຊັນຕາຄອດ...ຜົນໄດ້ຮັບກໍ່ແມ່ນເຂົາຈະບໍ່ໄດ້ຮັບຄວາມຮູ້ສຶກຢ້ານກົວຕໍ່ກັບສິ່ງກະຕຸ້ນຕ່າງໆເຫຼົ່ານັ້ນເລີຍ. ເມື່ອອັລເບຣ ອາຍຸໄດ້ 9 ເດືອນກັບ 26 ວັນ,ທ່ານໄດ້ເຮັດການທົດລອງຄວາມຢ້ານໂດຍມີການຕີດແຜ່ນເຫຼັກໃຫ້ມີສຽງດັງ,ກໍ່ປະກົດວ່າມີການເຄາະແຜ່ນເຫຼັກຄັ້ງທໍາອິດ ອັລເບຣພຽງແຕ່ຫຼຽວ (ໂດຍປິ່ນຫົວໄປຮອບໆ ແລະ ຄານເຂົ້າໄປຫາແມ່ ) ຫົວໃຈເຕັ້ນແຮງຂຶ້ນ ແຕ່ບໍ່ໄດ້ຮ້ອງໄຫ້. ເມື່ອເຂົາໄດ້ຍິນສຽງດັງດ້ວຍການຕີເຫຼັກຄັ້ງທີ 2 ພຶດຕິກໍາດັ່ງກ່າວກໍ່ປະກົດຂຶ້ນອີກ ພ້ອມກັບການເບະສົບຄືຈະຮ້ອງໄຫ້,ຕົນຕົວສັ່ນ ແລະ ເຄາະເຫຼັກຄັ້ງທີ 3 ກໍ່ປະກົດວ່າອັລເບຣເລີ່ມຮ້ອງໄຫ້. ສະແດງວ່າການທົດລອງນີ້ເດັກໄດ້ມີຄວາມຢ້ານເກີດຂຶ້ນໂດຍສັງເກດເຫັນໄດ້ຢ່າງຊັດເຈນ.

ທ່ານ ວັດສັນໄດ້ດໍາເນີນການທົດລອງວາງເງື່ອນໄຂເມື່ອ ອັລເບຣ ມີອາຍຸ 11 ເດືອນ 3 ວັນໂດຍມີການດໍາເນີນເປັນລໍາດັບຂັ້ນດັ່ງນີ້:

**(1) ເອົາໜູຂາວວາງໄວ້ຕໍ່ໜ້າອັລເບຣຢ່າງທັນທີ, ທ່ານສັງເກດເຫັນວ່າ**: ອັລເບຣຄານເຂົ້າໄປຫາໜູໂຕນັ້ນ ແລະ ຍື່ນມືຊ້າຍອອກໄປແຕະຕົວໜູ, ເວລາອັລເບຣແຕະໂຕໜູ ທ່ານ ວັດສັນກໍ່ຕີເຫຼັກໃຫ້ເກີດສຽງດັງຂຶ້ນທັນທີ. ສຽງດັງນີ້ເຮັດໃຫ້ອັລເບຣຕົກໃຈ ແລະ ກົ້ມໜ້າລົງແຕ່ບໍ່ຮ້ອງໄຫ້.

**(2) ຕໍ່ມາເວລາອັລເບຣເອົາມືຂ້າງຂວາຍື່ນໄປແຕະຕົວໜູ,** ທ່ານກໍ່ຈະຕີເຫຼັກໃຫ້ເກີດມີສຽງດັງ ອັນທີ່ຜົນເຮັດໃຫ້ອັລເບຣຕົກໃຈ ແລະ ເລີ່ມຮ້ອງໄຫ້.

ຫຼັງຈາກການທົດລອງດັ່ງກ່າວນີ້ໄດ້ 7 ວັນເມື່ອອັລເບຣມີອາຍຸໄດ້ 11 ເດືອນ 10 ວັນ ວັດສັນໄດ້ດໍາເນີນການທົດລອງກັບອັລເບຣ້ຳອີກໂດຍມີລໍາດັບຂັ້ນທົດລອງດັ່ງນີ້:

- ທ່ານໄດ້ເອົາໜູມາໃຫ້ອັລເບຣເບິ່ງ, ແຕ່ບໍ່ໃຫ້ເກີດສຽງດັງ. ກໍ່ສັງເກດເຫັນວ່າອັລເບຣບໍ່ມີແນວໂນ້ມທີ່ຈະຄານເຂົ້າໄປຫາໜູເມື່ອໜູມາໃກ້ໆ ເຂົາກໍ່ມີອາການຫວາດກົວ, ບໍ່ກ້າເຂົ້າໃກ້. ສະແດງວ່າການເຊື່ອມໂຍງລະຫວ່າງໜູກັບສຽງ

1) ທ່ານໄດ້ເອົາໜູເຂົ້າຊູ່ກັບສຽງດັງໝາຍເວລາ ອັລເບຣເຫັນໜູຂາວ ວັດສັນກໍ່ຈະຕີເຫຼັກໃຫ້ເກີດສຽງດັງ. ຄັ້ງນີ້ປະກົດວ່າອັລເບຣ ຟ້າວໜີຈາກໜູຂາວຢ່າງໄວວາແຕ່ບໍ່ຮ້ອງໄຫ້.

2) ທ່ານເຮັດການທົດລອງຄືກັບຂໍ້ທີ 2 ອີກ. ຜົນໄດ້ຮັບກໍ່ແມ່ນອັລເບຣຫັນໜ້າໜີຈາກໜູຂາວທັນທີ ແຕ່ບໍ່ໄດ້ຮ້ອງໄຫ້.

3) ເຮັດການທົດລອງຄືກັບຂໍ້ທີ 3 ຜົນໄດ້ຮັບກໍ່ຄືກັບຂໍ້ທີ 3.

4) ນຳເອົາແຕ່ໜູຂາວມາໃຫ້ອັລເບຣ ໂດຍບໍ່ໄດ້ເຄາະເຫຼັກໃຫ້ເກີດສຽງດັງອີກກໍ່ປະກົດວ່າອັລເບຣ ເຮັດໜ້າເບະ ແລະ ຮ້ອງໄຫ້ແລະກໍ່ຟ້າວຄານໜີ.

5) ນຳເອົາໜູຂາວ ແລະ ສຽງດັງຈາກການຕີເຫຼັກມາຄູ່ກັນອີກ. ອັລເບຣຮີບໜີ ແລະ ຮ້ອງໃຫ້.

6) ນຳເອົາໜູຂາວ ແລະ ສຽງດັງມາຄູ່ກັນອັລເບຣເລີ່ມຮ້ອງໄຫ້ຂຶ້ນແລ້ວຫັນໜ້າໜີຈາກໜູຂາວ.

7) ໃຫ້ອັລເຣເຫັນສະເພາະໜູຂາວ,ເຂົາກໍ່ຮ້ອງໄຫ້, ຖ້າເອົາໜູມາເບື້ອງຊ້າຍຟ້າວຫັນໜ້າເຂົ້າໄປທາງຂວາຢ່າງໄວວາ.ໃນເມື່ອເຮັດການທົດລອງເຖິງຂັ້ນນີ້ກໍ່ເຊື່ອວ່າ. ທ່ານໄດ້ວາງເງື່ອນໄຂໃຫ້ອັລເບຣຢ້ານຢ່າງສົມບູນແລ້ວຈາກການທົດລອງດັ່ງກ່າວສະແດງດ້ວຍຜັງຢ່າງຊັດເຈນດັ່ງນີ້:

1. ໜູຂາວ (CS) -----------------------ຢາກຈັບຫຼິ້ນ
2. ຕີເຫຼັກສຽງດັງ (UCS) -------------------ຢ້ານຕົວສັ່ນ ແລະ ຮ້ອງໄຫ້ (UCR)
3. ໜູຂາວ(CS) ແລະ ຕີເລັກສຽງດັງ (UCS)--------------ຢ້ານຕົວສັ່ນຮ້ອງໄຫ້(UCR)
4. ໜູຂາວ(CS)-----------------------------ຢ້ານຕົວສັ່ນຮ້ອງໄຫ້(CR)

ພາບສະແດງຂັ້ນການວາງເງື່ອນໄຂໃນທົດສະດີຂອງວັດສັນ.

ສະຫຼຸບ. ບັນຫາທີ່ທ່ານ ວັດສັນສົນໃຈທີ່ສຸດບັນຫາໜຶ່ງກໍ່ແມ່ນທ່ານໄດ້ວາງເງື່ອນໄຂໃຫ້ອັລເບຣເກີດມີຄວາມຢ້ານໜູແລ້ວ ຄວາມຢ້ານນັ້ນກໍ່ຈະຂະຫຍາຍໄປສູ່ສິ່ງກະຕຸ້ນອື່ນໆ ຫຼື ບໍ່ກ່ຽວກັບເລື່ອງນີ້ທ່ານໄດ້ເຮັດການທົດລອງຕື່ມອີກຄັ້ງໜຶ່ງໃນເວລາອັລເບຣອາຍຸ 11 ເດືອນ 15 ວັນການທົດລອງນີ້ທ່ານໄດ້ເອົາສິ່ງກະຕຸ້ນອື່ນເຊິ່ງມີຈະໜາດຄ້າຍຄືກັບໜູຂາວ (ນັ້ນແມ່ນໂຕກະຕ່າຍ,ໝາ,ເສື້ອຂົນສັດ,ໜ້າກາກຊັນຕາຄອດ ...) ມາໃຫ້ອັລເບຣເບິ່ງ. ຜົນທີ່ໄດ້ຮັບກໍ່ແມ່ນອັລເບຣເກີດມີຄວາມຢ້ານສິ່ງກະຕຸ້ນເຫຼົ່ານັ້ນຄືກັບໜູຂາວ ແຕ່ຄວາມຮຸນແຮງຂອງຄວາມຢ້ານຈະຫຼຸດລົງໜ້ອຍກວ່າຄວາມຢ້ານໜູຂາວ. ສິ່ງນີ້ຈະສະແດງວ່າໄດ້ເກີດການຂະຫຍາຍຂອບຂ່າຍຂອງຄວາມຢ້ານ ຫຼື ໄດ້ເກີດການຖ່າຍໂອນຄວາມຢ້ານທີ່ມີຕໍ່ກັບໜູຂາວໄປສູ່ສິ່ງກະຕຸ້ນອື່ນໆ.

**+ ການວາງເງື່ອນໄຂກັບ:**

ເມື່ອທ່ານໄດ້ວາງເງື່ອນໄຂໃຫ້ອັລເບຣເກີດຄວາມຢ້ານໜູຂາວແລ້ວ ທ່າວັດສັນກໍ່ຄິດຊອກຫາວິທີຈະລຶບຄວາມຢ້ານນັ້ນໃຫ້ກາຍໄປ, ແຕ່ທ່ານບໍ່ສາມາດເຮັດການທົດລອງອັລເບຣໄດ້ ເນື່ອງຈາກອັລເບຣເປັນ

ເດັກກຳພ້າ ແລະ ມີຜູ້ອື່ນເອົາໄປລ້ຽງດູຢູ່ເມືອງອື່ນເສຍກ່ອນ. ເຖິງຢ່າງໃດກໍ່ຕາມທ່ານວັດສັນໄດ້ສະເໜີໃຫ້ໂຈນສ (Mary C Jones) ເຮັດການທົດລອງເພື່ອລົບຄວາມຢ້ານຂອງເດັກອາຍຸ 3 ປີຜູ້ໜຶ່ງຊື່ວ່າປີເຕີ (Peter).

ປີເຕີ ເປັນເດັກທີ່ມີສຸຂະພາບດີ ແຕ່ພັດເປັນຄົນຂີ້ຢ້ານ. ເຂົາຈະຢ້ານສັດ ແລະ ສິ່ງຂອງຫຼາຍຊະນິດເຊັ່ນ: ໜູຂາວ, ກະຕ່າຍ, ເສື້ອຂົນສັດ, ສຳລີ, ປາ ແລະ ອື່ນໆ.

**ທ່ານໂຈນ** ໄດ້ພະຍາຍາມລົບຄວາມຢ້ານຂອງປີເຕີດ້ວຍຫຼາຍວິທີເຊັ່ນໃຫ້ປີເຕີເບິ່ງເດັກທີ່ຫຼິ້ນກະຕ່າຍເພື່ອໃຫ້ເຂົາຮຽນແບບນຳເພື່ອນຫຼືເຂົາໄດ້ເຫັນກະຕ່າຍເລື້ອຍໆເພື່ອໃຫ້ຊິນເຄີຍແຕ່ກໍ່ບໍ່ໄດ້ຜົນຫຍັງ. ສະນັ້ນວິທີທີ່ໂຈນໄດ້ສົນໃຈ ແລະ ພົບໄດ້ວ່າຜົນດີກໍ່ແມ່ນການວາງເງື່ອນໄຂກັບ(Counter Conditioning). ການວາງເງື່ອນໄຂກັບນີ້ເປັນການສະເໜີສິ່ງກະຕຸ້ນທີ່ບໍ່ວາງເງື່ອນໄຂ(UCS ) ໃໝ່ທີ່ກົງກັນຂ້າມກັບສິ່ງທີ່ກະຕຸ້ນ (UCS) ເກົ່າເພື່ອໃຫ້ເກີດການຕອບສະໜອງ(CR) ທີ່ກົງກັນຂ້າມກັບສິ່ງທີ່ຕອບສະໜອງເດີມ. ວິທີການທົດລອງແມ່ນທ່ານໂຈນໄດ້ເອົາກົງກະຕ່າຍໄປຫ່າງໆ. ໃນເວລາປີເຕີກຳລັງກິນເຂົ້າໜົມ. ປີເຕີກິນເຂົ້າໜົມຢ່າງເພີດເພີນ ແລະ ບໍ່ຢ້ານເພາະກະຕ່າຍຢູ່ໄກ. ໂຈນໄດ້ເຮັດກາທົດລອງແບບນີ້ທຸກມື້ກໍ່ຄ່ອຍໆ ເລື່ອນກົງກະຕ່າຍເຂົ້າມາໃກ້ປີເຕີເທື່ອລະນ້ອຍ, ເມື່ອສິ້ນສຸດການທົດລອງໂຈນໄດ້ສັງເກດເຫັນວາ ປີເຕີໄດ້ໃຊ້ມືເບື້ອງໜຶ່ງຫຼິ້ນນຳກະຕ່າຍ, ໃນຂະນະທີ່ໃຊ້ມືອີກເບື້ອງໜຶ່ງຈັບເຂົ້າໜົມກິນ. ປາກົດການນີ້ບໍ່ພຽງແຕ່ເຂົາເຊົາຢ້ານກະຕ່າຍເທົ່ານັ້ນ, ແຕ່ເຂົາຍັງສາມາດຫຼິ້ນນຳກະຕ່າຍອີກດ້ວຍ.

### 3.3. ການປະຍຸກທິດສະດີການວາງເງື່ອນໄຂແບບຄລາດຊິກ

ຢູ່ໃນຫ້ອງຮຽນໜຶ່ງໆ ນັກຮຽນຈະມັກໄດ້ຮັບການວາງເງື່ອນໄຂຢູ່ສະເໝີເຊັ່ນ:ໃນຊົ່ວໂມງຮຽນວິຊາຄະນິດສາດ (CS) ເວລາໃດຄູຮ້າຍດ່າຫຼືລົງໂທດທຸກຄັ້ງ (UCS) ໃນທີ່ສຸດເດັກຄົນນັ້ນກໍ່ຄຽດຊັງວິຊາຄະນິດສາດ (CR) ເຊິ່ງກົງກັນຂ້າມກັບວິຊາວິທະຍາສາດ (CS) ທີ່ຄູສ້າງບັນຍາກາດຢູ່ໃນຫ້ອງຮຽນດີ (UCS) ເດັກກໍ່ມີອິດສະຫຼະໃນການຄິດ, ການທົດລອງ ແລະ ການສະຫຼຸບຜົນ,ກ່ອນຈະໝົດຊົ່ວໂມງຮຽນທຸກຄັ້ງເດັກມີຄວາມພູມໃຈຕໍ່ຜົນທີ່ເຂົາໄດ້ພົບຈາກການທົດລອງ. ດັ່ງນັ້ນເວລາໃດເຂົາຮຽນວິຊານີ້ກໍ່ມີຄວາມມ່ວນຊື່ນກັບການຄົ້ນຄ-+ວ້າທົດລອງ, ສຸກທ້າຍເດັກກໍ່ຮູ້ສຶກວ່າຕົນມັກວິຊານີ້ເປັນພິເສດ(CR)

ຄູສາມາດໃຊ້ຫຼັກການວາງເງື່ອນໄຂແບບຄລາດຊິກນີ້ເພື່ອເຮັດໃຫ້ນັກຮຽນມັກ ຫຼື ບໍ່ມັກວິຊາທີ່ຮຽນ, ມັກສິ່ງແວດລ້ອມໃນໂຮງຮຽນຫຼືຕົວຄູເອງ. ສະນັ້ນ. ຄູຄວນພິຈາລະນາສະເໝີວ່າ: ຄວາມຮູ້ສຶກຂອງນັກຮຽນຕໍ່ວິຊາທີ່ຄູສອນເປັນແນວໃດ. ຖ້າສັງເກດເຫັນວ່າເຂົາບໍ່ມັກຫຼືເຈດຕະຄະຕິບໍ່ດີຕໍ່ວິຊານັ້ນຄູຄວນວິເຄາະເບິ່ງວ່າມັນເກີດມາຈາກສິ່ງໃດແມ່ນສິ່ງໃດເປັນສິ່ງທີ່ກະຕຸ້ນ (UCS) ທີ່ພາໃຫ້ເກີດມີຄວາມຮູ້ສຶກແບບນັ້ນແລ້ວຄູກໍ່ຊອກຫາທາງຊ່ວຍເດັກ ໂດຍພະຍາຍາມບໍ່ໃຫ້ມີສິ່ງກະຕຸ້ນທີ່ເດັກບໍ່ມັກນັ້ນເກີດຂຶ້ນອີກ.ພ້ອມກັບຈັດສິ່ງກະຕຸ້ນໃໝ່(UCS)ທີ່ເດັກສົນໃຈຫຼືພໍໃຈເຂົ້າມາແທນເຊິ່ງເປັນລັກສະນະຂອງການວາງເງື່ອນໄຂກັບຄືດັ່ງການທົດລອງຂອງທ່ານໂຈນທີ່ໄດ້ກ່າວມານັ້ນ.

## 4. ທິດສະດີສຳພັນເຊື່ອມໂຍງຂອງທ່ານ ທອນໄດ໌

ທອນໄດ໌ (Thor ndike EdWssachuslls) ເກີດຢູ່ເມືອງວິນລຽມສະບຣູ() ລັດແມສຊາຊູເຊທ ເມື່ອວັນທີ31ເດືອນ 8 ປີ1874 ເປັນລູກຜູ້ທີ 2 ທັງໝົດ 3 ຄົນ, ເຂົ້າໄດ້ສຶກສາໃນສະຖາບັນທີ່ມີຊື່ສຽງຫຼາຍແຫ່ງ. ທອນໄດໄດ້ສຳເລັດການສຶກສາຂັ້ນປະລິນຍາເອກ ອາຍຸພຽງ24ປີ ( ຄ.ສ 1898) ວິທະຍານິພົນເລື່ອງ : ສະຕິປັນຍາຂອງສັດ ວິທະຍາສາດນິພົນຂອງເຂົາ ເປັນງານວິໄຈທົດລອງທີ່ມີຊື່ສຽງທີ່ສຸດເລື່ອງໜຶ່ງ. ຜົນງານການຂຽນຂອງທ່ານ ທອນໄດ ກໍ່ມີຫຼາຍເລື່ອງ ສ່ວນຫຼາຍແມ່ນກ່ຽວຂ້ອງທາງການສຶກສາ ແລະ ຈິດຕະວິທະຍາ.

ທ່ານທອນໄດໄດ້ສ້າງທິດສະດີການຮຽນຮູ້ທີ່ແຜ່ຫຼາຍ ແລະ ເປັນທີ່ຍອມຮັບຢ່າງກວ້າງຂວາງ. ທິດສະດີຂອງທ່ານຈະເນັ້ນຄວາມສຳພັນເຊື່ອມໂຍງ(Connection) ລະຫວ່າງສິ່ງກະຕຸ້ນ(S) ກັບການຕອບສະໜອງ(R). ທ່ານທອນໄດ ເຊື່ອມການຮຽນຮູ້ຈະເກີດຂຶ້ນໄດ້ກໍ່ຍ້ອນຄົນ ແລະ ສັດເອົາປະຕິກິລິຍາຕອບສະໜອງເຊື່ອມຕໍ່(Connect) ເຂົ້າກັບສິ່ງກະຕຸ້ນຢ່າງເໝາະສົມ ຫຼື ການຮຽນຮູ້ເກີດມາຈາກການສ້າງສິ່ງເຊື່ອມໂຍງຫຼືພັນທະ(Bond) ລະຫວ່າງສິ່ງກະຕຸ້ນກັບການຕອບສະໜອງນັ້ນເອງ. ດ້ວຍເຫດນີ້ຈຶ່ງຮຽກທິດສະດີນີ້ວ່າ: ທິດສະດີພັນທະລະຫວ່າງສິ່ງກະຕຸ້ນກັບການຕອບສະໜອງ (S-R Boond Theory) ຫຼືທິດສະດີສຳພັນເຊື່ອມໂຍງ (Con- nectionism Theory).

### 4.1. ການທົດລອງຂອງທ່ານທອນໄດ໌

ທ່ານທອນໄດ ໄດ້ທົດລອງດ້ວຍການຍສ້າງກົງໄມ້,ຂ້າງໃນຂອງກົງຈະມີຄານທີ່ຜູກດ້ວຍເຊືອກແຂວນງ່ຽງໄວ້,ເຊືອກນີ້ຈະຕໍ່ໄປໃສ່ປະຕູ.ຖ້າມີການກົດຄານໄມ້ປະຕູຈະເລື່ອນຂຶ້ນ ແລະ ເປີດອອກ.
ໃນການທົດລອງທ່ານໄດ້ເອົາໂຕແມວຂັງໄວ້ໃນກົງ, ແລ້ວຈຶ່ງເອົາປາວາງໄວ້ນອກກົງໃຫ້ຫ່າງພໍປະມານ, ແມວບໍ່ສາມາດຍື່ນມືໄປເຂ່ຍເອົາໄດ້. ໃນຊ່ວງການທົດລອງນັ້ນຈະເປັນຊ່ວງທີ່ໂຕແມວກຳລັງຫິວ ແລະ ຕ້ອງການອາຫານ ຈຶ່ງເກີດມີບັນຫາກັບແມວວ່າ ຈະອອກຈາກກົງໄປກິນປາໄດ້ແນວໃດ. ຜ່ານມາບັນທຶກການທົດລອງ, ທ່ານທອນໄດໄດ້ພົບວ່າ: ໄລຍະທຳອິດແມວຈະໃຊ້ເວລາກັບການແກ້ໄຂບັນຫາດົນ,ມັນພະຍາຍາມຈະໃຊ້ວິທີຕ່າງໆ ເພື່ອຈະອອກຈາກກົງ. ຈົນກະທັ້ງຂາຂອງມັນໄດ້ຢຽບຈາກຄານໂດຍບັງເອີນ ແລະເຮັດໃຫ້ປະຕູເປີດອອກ. ຫຼັງຈາກນັ້ນແມວກໍ່ສາມາດແກ້ໄຂບັນຫາໂດຍອອກຈາກກົງໄດ້ໄວຂຶ້ນຕາມລຳດັບ.

ຈາກການທົດລອງນີ້ທ່ານທອນໄດໄດ້ອະທິບາຍວ່າ: ການຕອບສະໜອງຂອງແມວທີ່ຈະແກ້ໄຂບັນຫານັ້ນແມ່ນ ການຕອບສະໜອງແບບສຸ່ມເດົາ ຫຼື ແບບລອງຜິດລອງຖືກ (Trial and Error) ແມວເປີດປະຕູໄດ້ດ້ວຍການກົດໄມ້ຄານໂດຍບັງເອີນຫຼາຍກວ່າການຕັ້ງໃຈ ຫຼື ໄດ້ວາງແຜນມາກ່ອນ. ແມວສາມາດເປີດປະຕູໄດ້ໄວຂຶ້ນໃນໄລຍະຕໍ່ມາ ກໍ່ສະແດງວ່າແມວໄດ້ເກີດການຮຽນຮູ້ດ້ວຍການສ້າງສຳພັນທະພາບ ຫຼື ຕົວເຊື່ອມ (Bond) ຂຶ້ນລະຫວ່າງໄມ້ຄານ(S) ກັບການກົດ ແລະ ຢຽບໄມ້ຄານ(R) ນັ້ນເອງ.

+ ສໍາລັບຂັ້ນຕອນການຮຽນຮູ້ດ້ວຍການແກ້ບັນຫາລອງຜິດລອງຖືກນັ້ນອະທິບາຍໄດ້ດັ່ງນີ້:




**ການສະແດງການຮຽນຮູ້ລອງຜິດລອງຖືກໃນທັດສະນະຂອງທ່ານ ທອນໄດ**

1) ແມວມີພະລັງ ຫຼື ແຮງຈູງໃຈ (Motive) ເນື່ອງມາຈາກອິນຊີຢູ່ໃນພາວະທີ່ບໍ່ສົມບູນຫຼືເກີດມາຈາກຄວາມຕ້ອງການ.

2) ພະລັງແຮງຈູງໃຈຈະກະຕຸ້ນໃຫ້ອິນຊີສະແດງພຶດຕິກໍາຕອບສະໜອງຫຼາຍໆຢ່າງ ເພື່ອຊອກຫາທາງຕອບສະໜອງຄວາມຕ້ອງການນັ້ນ.

3) ການກົດຄານໄມ້ ແລະ ສາມາດເປີດປະຕູໄດ້ຂອງແມວໃນຄັ້ງທໍາອິດນັ້ນຈະເປັນໄປດ້ວຍຄວາມບັງເອີນ. ໃນຂະນະນີ້ແມວຍັງບໍ່ທັນສັງເກດເຫັນຄວາມສໍາພັນ ລະຫວ່າງການກົດໄມ້ຄານແລ້ວເຮັດໃຫ້ປະຕູເປີດອອກຫຼືກ່າວໄດ້ວ່າ ໃນໄລຍະນີ້ແມວບໍ່ທັນສາມາດເຊື່ອມໂຍງ ຫຼື ສ້າງພັນທະ(Bond) ລະຫວ່າງສິ່ງກະຕຸ້ນ(S) ກັບການຕອບສະໜອງ(R) ໃຫ້ດີຂຶ້ນໄດ້.

4) ແມວຈະຄ່ອຍໆປະຖິ້ມການຕອບສະໜອງທີ່ບໍ່ຊ່ວຍແກ້ບັນຫາອອກໄປ ຫຼັງຈາກໄດ້ທົດລອງຊໍ້າໆ ແລະ ແນ່ໃຈວ່າບໍ່ເກີດປະໂຫຍດຕໍ່ການແກ້ໄຂບັນຫານັ້ນ.

5) ເມື່ອແມວຕອບສະໜອງໄປເລື້ອຍໆ, ແມວກໍ່ຄ່ອຍໆຄົ້ນພົບວ່າ ຈະມີຄວາມສໍາພັນບາງຢ່າງລະຫວ່າງການກົດຄານໄມ້ກັບການເປີດປະຕູ.ການຄົ້ນພົບເຫັນຈາກຕອນທໍາອິດແມວພຽງແຕ່ເອົາຕີນໄປແຕະປາຍຄານໄມ້ເບົາໆ ກໍ່ພາກັນເປີດປະຕູອອກ,ແມວຈຶ່ງໃຊ້ຕີນໜ້າກົດຄານໄມ້ ແລ້ວປະຕູກໍ່ເປີດອອກ. ຢູ່ໃນຂັ້ນຕອນນີ້ຈະເຫັນວ່າ ແມວໄດ້ປະຖິ້ມກິດຈະກໍາອື່ນໆ ເຊັ່ນ: ການສົ່ງສຽງ ຟຸ້ງ ແລະທໍາຕົວໂກ່ງຂຶ້ນ ຫຼື ຄວັດເຂ່ຍພື້ນ.

6) ຜ່ານການທົດລອງ ແລະ ເຝິກເລື້ອຍໆຈະມີຈະມີຜົນໃຫ້ໜ້າທີ່(Bond) ລະຫວ່າງສິ່ງກະຕຸ້ນ(S) ແລະ ການຕອບສະໜອງ (R) ມີຄວາມເຂັ້ມແຂງເພີ່ມຂຶ້ນ. ການຕອບສະໜອງກົດຄານໄມ້ເພື່ອເປີດປະຕູໄດ້ກໍ່ຈະມີຄວາມເຂັ້ມແຂງເພີ່ມຂຶ້ນ ແລະ ສາມາດແກ້ໄຂບັນຫາໄດ້ຢ່າງຖືກຕ້ອງໄວວາຂຶ້ນ.

ຜ່ານການທົດລອງກັບໂຕແມວ ທ່ານ ທອນໄດ ໄດ້ສັງເກດເຫັນວ່າ: ການຮຽນຮູ້ແມ່ນສິ່ງທີ່ຄ່ອຍໆປະສົມ ແລະ ພູນຂຶ້ນເທື່ອລະເລັກລະນ້ອຍ ຫຼາຍກວ່າການເກີດຂຶ້ນຢ່າງໄວວາ ຫຼື ເວົ້າອີກຢ່າງໜຶ່ງວ່າ: ການຮຽນຮູ້ຈະຄ່ອຍໆ ພັດທະນາເທື່ອລະກ້າວ ດ້ວຍການລອງຜິດລອງຖືກ ຈະບໍ່ເກີດຂຶ້ນຢ່າງໄວວາກະທັນຫັນ

ຫຼື ຄວາມກະຈ່າງແຈ້ງໂດຍທັນທີ. ຕົວຢ່າງໃນການທົດລອງຂ້າງເທິງນັ້ນເປັນການສະແດງໃຫ້ເຫັນເຖິງການແກ້ບັນຫາຂອງແມວທີ່ໃຊ້ເວລາໃນການແກ້ໄຂບັນຫາໜ້ອຍລົງເລື້ອຍໆ ຫຼັງຈາກໃຊ້ວິທີແກ້ໄຂບັນຫາແບບລອງຜິດລອງຖືກ ສະແດງວ່າແມວໄດ້ເກີດການຮຽນຮູ້ຂຶ້ນເທື່ອລະຂັ້ນຢ່າງມີລະບົບ ແລະ ບໍ່ໄດ້ເກີດການຮຽນຮູ້ຢ່າງໄວວາໂດຍທັນທີແຕ່ປະການໃດ.

### 4.2. ກົດການຮຽນຮູ້ທີ່ສຳຄັນ

ທ່ານ ທອນໄດ ໄດ້ອະທິບາຍກົດການຮຽນຮູ້ທີ່ສຳຄັນ 3 ກົດຄື: ກົດຄວາມພໍໃຈ, ກົດເຝິກຫັດ ແລະ ກົດຄວາມພ້ອມ.

❖ **ກົດຄວາມພໍໃຈ**

ກົດຂໍ້ນີ້ຈະເປັນກົດທີ່ສຳຄັນແລະໄດ້ຮັບຄວາມສົນໃຈຈາກທອນໄດຫຼາຍທີ່ສຸດ. ກົດນີ້ມີໃຈຄວາມວ່າໜ້າທີ່ຫຼືຕົວເຊື່ອມລະຫວ່າງສິ່ງກະຕຸ້ ແລະ ການຕອບສະໜອງຈະເຂັ້ມແຂງ ຫຼືອ່ອນກຳລັງລົງຍ້ອນຂຶ້ນກັບຜົນຕໍ່ເນື່ອງຫຼັງຈາກທີ່ໄດ້ຕອບສະໜອງໄປແລ້ວກໍ່ຄື: ຖ້າການຕອບສະໜອງທີ່ກະທຳໄປນັ້ນເຮັດໃຫ້ເກີດຄວາມພໍໃຈ, ໜ້າທີ່ຫຼືຕົວເຊື່ອມລະຫວ່າງຕົວກະຕຸ້ນ ແລະ ການຕອບສະໜອງກໍ່ແໜ້ນແຟ້ນ ແລະເຂັ້ມແຂງຂຶ້ນ. ຖ້າການຕອບສະໜອງທີ່ກະທຳໄປນັ້ນເຮັດໃຫ້ເກີດຄວາມບໍ່ພໍໃຈ, ຄວາມເຂັ້ມແຂງຂອງໜ້າທີ່ຫຼືຕົວເຊື່ອມໂຍງລະຫວ່າງສິ່ງກະຕຸ້ນ ແລະການຕອບສະໜອງກໍ່ຈະອ່ອນກຳລັງລົງ ຫຼື ເວົ້າອີກຢ່າງໜຶ່ງວ່າ: ຖ້າການຕອບສະໜອງທີ່ກະທຳຕໍ່ສິ່ງກະຕຸ້ນນັ້ນນຳໄປສູ່ການໄດ້ຮັບລາງວັນ ພຶດຕິກຳກໍ່ເຂັ້ມແຂງ. ກົງກັນຂ້າມ ຖ້າການຕອບສະໜອງທີ່ກະທຳຕໍ່ສິ່ງກະຕຸ້ນນັ້ນໄປສູ່ການລົງໂທດຄວາມສຳພັນລະຫວ່າງສິ່ງກະຕຸ້ນ ແລະ ການຕອບສະໜອງກໍ່ອ່ອນກຳລັງລົງ.

ເຖິງຢ່າງໃດກໍ່ຕາມ ທອນໄດ ໄດ້ພົບໃນຕອນຫຼັງວ່າ: ກົດຄວາມພໍໃຈທີ່ກ່າວໄວ້ນັ້ນຈະເປັນຄວາມຈິງພຽງເຄິ່ງດຽວເທົ່ານັ້ນເຈົາໄດ້ປັບປຸງກົດຂໍ້ນີ້ໃໝ່ຫຼັງຈາກປີ ຄ.ສ 1930 ແລະໄດ້ສະຫຼຸບວ່າ:ລາງວັນຈະມີຜົນໃຫ້ຄວາມສຳພັນລະຫວ່າງສິ່ງກະຕຸ້ນ ແລະ ການຕອບສະໜອງເຂັ້ມແຂງຂຶ້ນ. ສ່ວນການລົງໂທດຈະບໍ່ມີຜົນໃດໆຕໍ່ຄວາມເຂັ້ມແຂງຫຼືການອ່ອນກຳລັງຂອງຄວາມສຳພັນລະຫວ່າງສິ່ງກະຕຸ້ນ ແລະ ການຕອບສະໜອງ.

ກົດຂໍ້ນີ້ໄດ້ສ້າງແຮງຈູງໃຈ,ການໃຫ້ລາງວັນ ຫຼື ການໃຫ້ການເິມທ່າແຮງທ່ານ ທອນໄດ ເຊື່ອວ່າການເສີມແຮງຫຼືລາງວັນ, ຄວາມສຳເລັດຈະສົ່ງເສີມການສະແດງພຶດຕິກຳຕ່າງໆຫຼືມີການຮຽນຮູ້ເກີດຂຶ້ນ.

ນອກນີ້ ທ່ານ ທອນໄດ ຍັງໄດ້ຂະຫຍາຍກົດຄວາມພໍໃຈນີ້ເພີ່ມຂຶ້ນອີກວ່າ:ລາງວັນບໍ່ພຽງແຕ່ມີຜົນເຮັດໃຫ້ເກີດການຕອບສະໜອງກັບຊໍ້າໃນສິ່ງທີ່ເຄີຍໄດ້ຮັບລາງວັນມາແລ້ວເທົ່ານັ້ນ ແຕ່ວ່າລາງວັນຍັງເຮັດໃຫ້ມີການຕອບສະໜອງຕ່າງໆທີ່ຄືກັນ ຫຼືໃກ້ຄຽງກັບການຕອບສະໜອງເດີມອີກເຊັ່ນ: ຄົນທີ່ຊື້ຕົວມ້າໝາຍເລກທີ 13 ໃນເມື່ອຊື້ຖືກເຂົາກໍ່ໄດ້ລາງວັນ ຕໍ່ມາເຂົາເຈົ້າກໍ່ຈະມີແນວໂນ້ມທີ່ຈະຊື້ຕົວມ້າທີມີໝາຍເລກ 13 ຫຼື ໝາຍເລກທີ່ໃກ້ຄຽງກັບເລກ 13 ນັ້ນສະເໝີ. ສະນັ້ນລັກສະນະແບບນີ້ຈະເວົ້າວ່າພາວະຄວາມ

ພໍໃຈຈາກການກະທຳຢ່າງໜຶ່ງໄດ້ແຜ່ຂະຫຍາຍໄປສູ່ການກະທຳ ຫຼື ວຽກງານທີ່ໃກ້ຄຽງກັບການກະທຳເດີມນັ້ນເອງ.

❖ **ກົດການເຝິກຫັດ**

**ກົດຂອງການເຝິກຫັດເພິ່ນໄດ້ແບ່ງອອກເປັນ2ກົດຍ່ອຍຄື:**

**ກ. ກົດການໄດ້ໃຊ້(Low of Use)**

ກົດນີ້ມີໃຈຄວາມວ່າ: ຕົວເຊື່ອມລະຫວ່າງສິ່ງກະຕຸ້ນ ແລະ ການຕອບສະໜອງຈະເຂັ້ມແຂງຂຶ້ນໃນເມື່ອໄດ້ກະທຳເລື້ອຍໆ.

**ຂ. ກົດທີ່ບໍ່ໄດ້ໃຊ້(Law of Disuse)**

ຈະມີໃຈຄວາມວ່າ:ຕົວເຊື່ອມລະຫວ່າງສິ່ງກະຕຸ້ນ ແລະ ການຕອບສະໜອງຈະອ່ອນກຳລັງລົງ, ຖ້າບໍ່ໄດ້ກະທຳຢ່າງຕໍ່ເນື່ອງເຊັ່ນ: ມີການຂາດວັກຂາດຕອນ ຫຼື ບໍ່ໄດ້ກະທຳເລື້ອຍໆ. ຄຳວ່າພັນທະລະຫວ່າງສິ່ງກະຕຸ້ ແລະ ການຕອບສະໜອງທີ່ເຂັ້ມແຂງນັ້ນ ຈະໝາຍເຖິງໂອກາດທີ່ຈະຕອບສະໜອງໃນເມື່ອພົບກັບສິ່ງກະຕຸ້ນຄື: ເກົ່າອີກ. ຈະເພີ່ມຫຼາຍຂຶ້ນ.ກົງກັນຂ້າມຖ້າພັນທະນັ້ນອ່ອນກຳລັງລົງກໍ່ໝາຍຄວາມວ່າໂອກາດທີ່ຈະຕອບສະໜອງຕໍ່ກັບສິ່ງທີ່ກະຕຸ້ນນັ້ນໃນເວລາຕໍ່ມາແມ່ນຈະຫຼຸດລົງ.

\+ ທ່ານໄດ້ສະຫຼຸບຂໍ້ນີ້ໂດຍສັ້ນວ່າພວກເຮົາຈະຮຽນຮູ້ຫຼືຈື່ໄດ້ໂດຍການກະທຳຫຼືໄດ້ໃຊ້,ຖ້າບໍ່ໄດ້ໃຊ້ຫຼືບໍ່ໄດ້ກະທຳຕົວຈິງການຮຽນຮູ້ກໍ່ຈະບໍ່ເກີດຂຶ້ນ ຫຼື ເກີດຂຶ້ນກໍ່ຈະລືມ.

ກ່ຽວກັບການເຝິກຫັດນີ້ຈະມີການສັງເກດເຫັນຫຼາຍໆຂໍ້ເຊັ່ນວ່າ:ການເຝິກຝົນຫຼືການກະທຳທີ່ຊ້ຳໆກັນຢູ່ໃນກິດຈະກຳບາງຢ່າງກໍ່ຈະບໍ່ເຮັດໃຫ້ການຮຽນຮູ້ກໍ່ຈະບໍ່ເຮັດໃຫ້ການຮຽນຮູ້ມີຄວາມຈະເລີນກ້າວໜ້າສະເໝີໄປເພາະທ່ານຍັງໄດ້ພົບວ່າ: ຄູສອນໄດ້ໃຫ້ນັກຮຽນທີ່ມັກຂຽນຜິດເພື່ອມາແກ້ຄືນປະໂຫຍກທີ່ມັກຜິດນັ້ນຄືນໃໝ່ເປັນຮ້ອຍໆຄັ້ງແຕ່ບໍ່ສາມາດໃຫ້ເຂົາຂຽນຖືກໃນໄລຍະຕໍ່ມາໄດ້ ຫຼື ທ່ານຍັງໄດ້ພົບອີກວ່າ:ຄູບໍ່ໃຫ້ນັກຮຽນເຝິກເລື້ອຍໆ ມີບາງຄັ້ງເຂົາກໍ່ຍັງຈື່ຈຳສິ່ງນັ້ນຢ່າງຊັດເຈນ. ດ້ວຍເຫດຜົນດັ່ງກ່າວນັ້ນປີ ຄ.ສ 1930 ທ່ານ ທອນໄດຈຶ່ງໄດ້ປະກາດຍົກເລີກກົດການເຝິກທັງໝົດຂອງເຂົາ. ທ່ານເວົ້າວ່າ ການກະທຳແບບຊ້ຳໆນັ້ນຈະບໍ່ໄດ້ເຮັດໃຫ້ພັນທະຫຼືຕົວເຊື່ອມມີຄວາມເຂັ້ມແຂງຂຶ້ນ. ຢູ່ໃນຂະນະດຽວກັນນັ້ນການກະທຳຫຼືໄດ້ໃຊ້ເລື້ອຍໆກໍ່ບໍ່ໄດ້ເຮັດໃຫ້ພັນທະຫຼືຕົວເຊື່ອມອ່ອນກຳລັງລົງແຕ່ຢ່າງໃດເລີຍ.

ເຖິງວ່າທ່ານ ທອນໄດ ຈະຫຼຸດຄວາມສຳຄັນຂອງກົດເກນແຫ່ງການເຝິກຫັດລົງແຕ່ທ່ານກໍ່ຍັງທັນເຫັນຄຸນຄ່າຂອງການເຝິກຫັດໄດ້ຮັບຄວາມພໍໃຈຫຼືມີລາງວັນ ສະນັ້ນ,ການທີ່ຄູໃຫ້ນັກຮຽນກະທຳແບບຊ້ຳໆຄືນ ເພື່ອເຮັດໃຫ້ເຂົາເກີດມີການຮຽນຮູ້ນັ້ນ ຈະຕ້ອງແມ່ນການກະທຳທີ່ຜູ້ກະທຳໄດ້ຮັບຮູ້ເຖິງຜົນ ຫຼື ລາງວັນ. ຕົວຜູ້ກະທຳເອງກໍ່ຕ້ອງມີແຮງຈູງໃຈ ແລະ ເຫັນຄຸນຕຄ່າໃນສິ່ງທີ່ຕົນເອງກະທຳນັ້ນອີກການເຝິກຫັດຈຶ່ງຈະເກີດການຮຽນຮູ້.

❖ **ກົດຄວາມພ້ອມ**

**ກົດຂໍ້ນີ້ຈະມີໃຈຄວາມສະຫຼູບວ່າ:**

(ກ). ເມື່ອບຸກຄົນພ້ອມທີ່ຈະກະທຳແລ້ວໄດ້ທຳ, ເຂົາກໍ່ຍ່ອມມີຄວາມພໍໃຈ.

(ຂ). ໃນເມື່ອບຸກຄົນພ້ອມທີ່ຈະກະທຳແຕ່ບໍ່ໄດ້ກະທຳ, ເຂົາກໍ່ຍ່ອມເກີດມີຄວາມບໍ່ພໍໃຈ.

(ຄ). ໃນເມື່ບຸກຄົນບໍ່ພ້ອມທີ່ຈະກະທຳແຕ່ຕ້ອງກະທຳ, ເຂົາກໍ່ຍ່ອມເກີດມີຄວາມບໍ່ພໍໃຈ.

ຄຳວ່າ: ຄວາມພໍໃຈ ໝາຍເຖິງ ພາວະທີ່ມະນຸດຫຼືສັດມີຄວາມຕ້ອງການໄດ້ຮັບ ແລະ ບໍ່ພະຍາຍາມຫຼີບໜີ. ສ່ວນຄຳທີ່ວ່າ: ບໍ່ພໍໃຈ ແມ່ນພາວະທີ່ມະນຸດຫຼືສັດບໍ່ມີຄວາມຕ້ອງການໄດ້ຮັບ ແລະ ພະຍາຍາມຫຼີບໜີຫຼືກຫຼ່ຽງ.

ຄວາມພ້ອມຕາມຄວາມໝາຍນີ້ຈະລວມເຖິງການມີວຸດທິພາວະທາງກາຍ(Physical Maturation) , ວິທິພາວະທາງປັນຍາ, ຄວາມຮູ້ພື້ນຖານ ຫຼື ປະສົບການເດີມ ແລະ ສະພາບແຮງຈູງໃຈເຊັ່ນ: ເດັກທີ່ມີຄວາມພ້ອມທາງດ້ານກ່ານອ່ານໜັງສືກໍ່ຄວນມີຄວາມພ້ອມທາງດ້ານສາຍຕາ ແລະ ກ້າມເນື້ອ, ມີຄວາມພ້ອມທາງສະໝອງ, ມີຄວາມຮູ້ທາງດ້ານພາສາເວົ້າໃນສ່ວນທີ່ພົວພັນກັບສິ່ງທີ່ໄດ້ອ່ານ ແລະ ມີຄວາມສົນໃຈຍາວນານພໍສົມຄວນ.

### 4.3. ແນວຄິດກ່ຽວກັບການຖ່າຍທອດການຮຽນຮູ້

ການຖ່າຍທອດການຮຽນຮູ້ຈະເກີດຂຶ້ນໄດ້ກໍ່ຕໍ່ເມື່ອການຮຽນຮູ້ ຫຼື ກິດຈະກຳຢູ່ໃນສະຖານະການໜຶ່ງໄດ້ສົ່ງຜົນຕໍ່ການຮຽນຮູ້ຫຼືກິດຈະກຳຢູ່ໃນອີກສະຖານະການໜຶ່ງ. ການສົ່ງຜົນນັ້ນອາດຢູ່ໃນຮູບການສະໜັບສະໜູນ ຫຼື ການສົ່ງເສີມໃຫ້ນັກຮຽນສາມາດຮຽນໄດ້ດີຂຶ້ນ( ແມ່ນການຖ່າຍທອດທາງບວກ) ຫຼື ອາດເປັນການຂັດຂວາງເຮັດໃຫ້ການຮຽນຮູ້ ຫຼື ປະກອບກິດຈະກຳອີກຢ່າງໜຶ່ງຫຍຸ້ງຍາກ ຫຼື ຊັກຊ້າລົງ ( ແມ່ນການຖ່າຍທອດທາງລົບ)ກໍ່ເປັນໄດ້, ການຖ່າຍທອດຄວາມຮູ້ທາງລົບນັ້ນຈະເປັນພື້ນຖານທີ່ສຳຄັນຂອງການຮຽນ-ການສອນ ແລະ ກໍ່ມີການອະພິປາຍສະເໜີວ່າ: ຢູ່ໃນພາວະແນວໃດທີ່ເຮັດໃຫ້ການຖ່າຍທອດຄວາມຮູ້ໄປໃນທາງບວກຫຼາຍທີ່ສຸດ.

ກ່ຽວກັບເລື່ອງຖ່າຍທອດຄວາມຮູ້ ທ່ານໄດ້ສະເໜີທິດສະດີອົງປະກອບຄ້າຍຄືເຊິ່ງມີໃຈຄວາມວ່າ: ການຮຽນຮູ້ຢູ່ໃນສະຖານະການໜຶ່ງຈະຖ່າຍທອດໃນທາງບວກໄປຫາການຮຽນຮູ້ອີກສະຖານະການໜຶ່ງກໍ່ຕໍ່ເມື່ອການຮຽນຮູ້ທັງ 2 ສະຖານະການມີອົງປະກອບທີ່ຄ້າຍຄືກັນ ແລະ ຄວາມຄ້າຍຄືທີ່ກ່າວມານີ້ອາດຄ້າຍຄືທາງດ້ານເນື້ອໃນ ຫຼື ຄ້າຍຄືທາງດ້ານວິທີຂອງການດຳເນີນງານຢ່າງໃດຢ່າງໜຶ່ງ, ທັງ 2 ຢ່າງຮ່ວມກັນກໍ່ໄດ້. ນອກນີ້ຍັງມີຄວາມຄ້າຍທາງດ້ານເຈດຕະຄະຕິຂອງຜູ້ຮຽນຕໍ່ກັບສະຖານະການ, ການຮຽນຮູ້ ຫຼື ວຽກທັງ 2 ຢ່າງນັ້ນ.

ດັ່ງນັ້ນ, ວິທີຈະສົ່ງເສີມການຮຽນຮູ້ທາງບວກກໍ່ແມ່ນທາງໂຮງຮຽນຕ້ອງພະຍາຍາມກຳນົດຫຼັກສູດໃຫ້ສອດຄ່ອງກັບສະພາບຄວາມເປັນຈິງໃນສັງຄົມຕົວຢ່າງ: ການຮຽນ-ການສອນວິຊາຄະນິດສາດບໍ່ພຽງ

ແຕ່ເປັນການເຝິກສະໝອງໃຫ້ແກ່ນັກຮຽນເທົ່ານັ້ນ ແມ່ນຮຽນເພື່ອເອົາໄປນຳໃຊ້ໃນຊີວິດຢູ່ນອກໂຮງຮຽນໃຫ້ໄດ້.

### 4.4. ການປະຍຸກທິດສະດີຂອງທ່ານ ທອນໄດເຂົ້າໃນການສອນ

ທ່ານ ທອນໄດເນັ້ນສະເໜີວ່າ: ການສິດສອນຢູ່ໃນຫ້ອງຮຽນນັ້ນຕ້ອງກຳນົດຈຸດມຸ່ງໝາຍໃຫ້ຊັດເຈນໝາຍວ່າການຕັ້ງຈຸດໝາຍທີ່ຕອບສະໜອງໄດ້ຄູຕ້ອງແບ່ງເນື້ອໃນບົດຮຽນອອກເປັນໜ່ວຍກິດ ແລະ ໃຫ້ເຂົາໄດ້ຮຽນເທື່ອລະໜ່ວຍກິດເພື່ອເຮັດໃຫ້ຜູ້ຮຽນເກີດຄວາມຮູ້ສຶກພູມໃຈຕໍ່ຜົນການຮຽນໃນແຕ່ລະໜ່ວຍກິດນັ້ນ. ທ່ານຍັງເນັ້ນອີກວ່າ: ການສອນນັ້ນຕ້ອງເລີ່ມແຕ່ງ່າຍຫາຍາກສະເໝີ.

ການສ້າງແຮງຈູງໃຈກໍ່ມີຄວາມສຳຄັນຫຼາຍ ເພາະເຮັດໃຫ້ຜູ້ຮຽນເກີດມີຄວາມພໍໃຈໃນເມື່ອຕົນໄດ້ຮັບສິ່ງທີ່ຕ້ອງການ ຫຼື ໄດ້ຮັບລາງວັນ. ລາງວັນແມ່ນສິ່ງທີ່ຄວບຄຸມພຶດຕິກຳຂອງຕົນເອງໂດຍສະເພາະແມ່ນຂັ້ນທຳອິດຄູຕ້ອງສ້າງແຮງຈູງໃຈພາຍນອກໃຫ້ກັບນັກຮຽນ. ຄູຕ້ອງໃຫ້ຜູ້ຮຽນຮູ້ເຖິງການກະທຳ ຫຼື ຜົນການຮຽນຂອງຕົນເພາະການຮັບຮູ້ຜົນຈະເຮັດໃຫ້ຜູ້ຮຽນຮັບຮູ້ວ່າການກະທຳຂອງຕົນວ່າ: ດີ ຫຼື ບໍ່ດີ, ພໍໃຈ ຫຼື ບໍ່ພໍໃຈ ເຂົາກໍ່ຈະແກ້ໄຂປັບປຸງໃຫ້ຖືກຕ້ອງ ເພື່ອຈະໄດ້ຮັບສິ່ງທີ່ຕົນພໍໃຈຕໍ່ໄປ.

ການເຝິກແມ່ນສິ່ງທີ່ຈຳເປັນສຳລັບສຳລັບການເພີ່ມທັກສະໃຫ້ແກ່ການຮຽນຮູ້ ແຕ່ການເຝິກນັ້ນຈະຕ້ອງໃຫ້ຜູ້ຮຽນຮັບຮູ້ເຖິງຜົນຂອງຜູ້ກະທຳ ຫຼື ຄວາມກ້າວໜ້າຕ້ອງໃຫ້ຜູ້ຮຽນຮູ້ຄຸນຄ່າ ຫຼື ເປົ້າໝາຍໃນສິ່ງທີ່ເຝິກໃຫ້ຊັດເຈນ, ການເຝິກນັ້ນຈິ່ງຈະເກີດມີຜົນຢ່າງຊັດເຈນໄດ້.

ຢູ່ໃນໂຮງຮຽນຄູມັກຕັ້ງຄຳຖາມສະເໜີວ່າ: ຈະສາມາດສອນເດັກທີ່ຮຽນຊ້າ ໃຫ້ທັນກັບໝູ່ເພື່ອນທີ່ຢູ່ໃນຫ້ອງໄດ້ແນວໃດ ຫຼື ຈະສອນວິຊານີ້ໃຫ້ແກ່ຈຳພວກທີ່ມີໄອຄິວຕ່ຳແນວໃດ, ຄຳຖາມຕ່າງໆເຫຼົ່ານີ້ຢ່າງໜ້ອຍກໍ່ຈະມີການກ່ຽວຂ້ອງກັບຄວາມພ້ອມ. ຫຼັກທີ່ສຳຄັນຂອງການສອນກໍ່ແມ່ນຄູຕ້ອງສອນໃນເມື່ອເຂົາມີຄວາມພ້ອມ ແລະ ຍອມຮັບລະດັບຄວາມພ້ອມຂອງເດັກຢູ່ໃນປັດຈຸບັນຕ້ອງພໍໃຈກັບພັດທະນາການ ແລະ ຄວາມກ້າວໜ້າດ້ານການຮຽນຮູ້ຂອງເດັກທີ່ຮຽນຊ້າ ແລະ ແມ່ນໜ້າທີ່ຂອງຄູຕ້ອງຮູ້ຈັກປະສົບການ ຫຼື ເນື້ອໃນໃຫ້ເໝາະສົມກັບຄວາມພ້ອມຂອງນັກຮຽນນັ້ນ.

ນອກຈາກການສອນຢູ່ໃນຫ້ອງຮຽນແລ້ວຄູຍັງຕ້ອງສອນໃຫ້ນັກຮຽນໄດ້ຮຽນຮູ້ຕົວຈິງເພື່ອໃຫ້ເຂົາໄດ້ຖ່າຍທອດຄວາມຮູ້ຈາກການຖ່າຍທອດຄວາມຮູ້ຢູ່ໃນຫ້ອງຮຽນໄປສູ່ສັງຄົມພາຍນອກໄດ້ເປັນຢ່າງດີ.

## 5. ທິດສະດີການວາງເງື່ອນໄຂການກະທຳຂອງສະກິນເນີ

**ສະກິນເນີ (Skinner, Burrhus Frederic 1904-1990)** ຄົນສະຫະລັດອາເມລິກາ. ສະໄໝຍັງນ້ອຍ ທ່ານມັກປະດິດສິ່ງຕ່າງໆເຊັ່ນ: ເຮືອແພ, ລໍ້ແກ່,ລົດລາກ ແລະ ຍັງມັກຂຽນເລື່ອງ, ແຕ່ງກອນ.ຫຼັງຈາກຈົບມັດທະຍົມແລ້ວ, ທ່ານກໍ່ໄດ້ຮຽນຢູ່ວິທະຍາໄລແຮມິນຕັນ(Hamil-ton College)ໃນນະຄອນນິວຢອກ ສາຂາວັນນະຄະດີອັງ.

ທ່ານສະກິນເນີໃຊ້ເວລາ 2 ປີ ຫຼັງຈາກຈົບປະລິນຍາຕີເພື່ອກຽມເປັນນັກຂຽນ ແຕ່ບໍ່ປະສົບຜົນສຳເລັດ. ຕໍ່ມາເຂົາກໍ່ຕັດສິນໃຈເຂົ້າສຶກສາຕໍ່ທາງຈິດຕະວິທະຍາທີ່ມະຫາວິທະຍາໄລຮາວານ ແລະ ຮັບປະລິນຍາເອກປີຄສ1931. ທ່ານໄດ້ໃຊ້ເວລາສຶກສາວິໄຈ ເພື່ອຄົ້ນຄິດທິດສະດີການຮຽນຮູ້. ຫຼັງຈາກສຳເລັດການສຶກສາໄດ້ 5 ປີກ່ອນຈະເປັນອາຈານສອນທີ່ມະຫາວິທະຍາໄລມິນນີໂຊຕາ(University of Minnesota), ມະຫາວິທະຍາໄລອິນເດຍນາ(In-diana University:1945-1947). ຕັ້ງແຕ່ປີຄສ 1947 ເປັນຕົ້ນມາເຂົາໄດ້ເຂົ້າສອນທີ່ມະຫາວິທະຍາໄລຮາວານ(Harvard University)

## 5.1. ແນວຄິດພື້ນຖານ

ແນວຄິດພື້ນຖານຂອງສະກິນເນີ ເກີດຈາກການວິເຄາະການທົດລອງຂອງພາບລອຟ ແລະ ທອນໄດ. ການທົດລອງຂອງທ່ານພາບລອຟກ່ຽວກັບພຶດຕິກຳນ້ຳລາຍໄຫຼຂອງໝາ ແມ່ນລັກສະນະພຶດຕິກຳລະຫວ່າງສິ່ງກະຕຸ້ນ ກັບ ການຕອບສະໜອງມີຄວາມສຳພັນກັນ. ທ່ານສະກິນເນີເອີ້ນພຶດຕິກຳນີ້ວ່າ: ພຶດຕິກຳແບບປະຕິກິລິຍາຕອບໂຕ້ (Respondent Behavior )

ສ່ວນພຶດຕິກຳຂອງສັດໃນການທົດລອງຂອງ ທອນໄດນັ້ນການຕອບສະໜອງໄດ້ເກີດມາຈາກອິນຊີເປັນຜູ້ກະທຳ(Act) ຕໍ່ສິ່ງກະຕຸ້ນເພື່ອໃຫ້ເກີດຜົນບາງຢ່າງ, ເປັນການກະທຳທີ່ມີຈຸດມຸ່ງໝາຍ ຫຼືຈິງໃຈເຊັ່ນ: ຮ້ອງເພງເພື່ອໄດ້ຮັບສຽງຕົບມືຫຼືໄດ້ຮັບພວງມະໄລ. ຮຽນໜັງສືເພື່ອຈະໄດ້ຮັບອະນຸຍາດຈາກພໍ່ແມ່ໃຫ້ໄດ້ເບິ່ງໂທລະທັດ. ທ່ານສະກິນເນີໄດ້ເອີ້ນພຶດຕິກຳນີ້ວ່າ:ພຶດຕິກຳອິນຊີກະທຳ(Operant Behavior). ຫຼືທິດສະດີການວາງເງື່ອນໄຂແບບໂອເປີແລນ.

ພຶດຕິກຳແບບປະຕິກິລິຍາແບບໂຕ້ຕອບມີບາງຄັ້ງເອີ້ນວ່າ: ພຶດຕິກຳວາງເງື່ອນໄຂແບບ S( Type S ). ສ່ວນພຶດຕິກຳແບບອິກຊີກະທຳເອີ້ນວ່າ: ພຶດຕິກຳເງື່ອນໄຂແບບ R (Type R )ເອີ້ນແບບນີ້ກໍ່ເພາະວ່າພຶດຕິກຳແບບປະຕິກິລິຍາໂຕ້ຕອບເກີດຈາກສິ່ງກະຕຸ້ນ(Sti-mulus ໃຊ້ຕົວຫຍໍ້ວ່າ: S) ສິ່ງກະຕຸ້ນທີ່ມີອິນຊີຕໍ່ການຕອບສະໜອງ,ໃນຂະນະພຶດຕິກຳແບບອິນຊີກະທຳ, ການຕອບສະໜອງເພີ່ມຂຶ້ນແມ່ນເພື່ອຫວັງຜົນ ຫຼື ຕົວເສີມແຮງ(Reinfocemrnt ໃຊ້ຕົວຫຍໍ້ວ່າ: R ) ຫຼືການເສີມແຮງມີອິດທິພົນຕໍ່ການຕອບສະໜອງ, ທ່ານສະກິນເນີຖືວ່າ: ພຶດຕິກຳສ່ວນໃຫຍ່ຂອງມະນຸດນັ້ນ.ຈະແມ່ນພຶດຕິກຳແບບອິນຊີກະທຳຫຼາຍກວ່າແບບປະຕິກິລິຍາຕອບໂຕ້.

## 5.2. ການທົດລອງຂອງທ່ານສະກິນເນີ

ຈາກແນວຄິດການທົດລອງໂດຍໃຊ້ແມວແກ້ໄຂບັນຫາໃນກົງໄມ້ຂອງ ທ່ານ ທອນໄດ ໄດ້ເຮັດໃຫ້ສະກິນເນີອອກແບບແນວຄິດຂອງຕົນ. ອຸປະກອນການທົດລອງ ຈະເປັນກ່ອງຊຶ່ງເອີ້ນວ່າກ່ອງສະກິນເນີ (Skinner Box). ກ່ອງນີ້ຈະເປັນຮູບສີ່ຫຼ່ຽມ,ຢູ່ຂ້າງໃນຈະມີສ່ວນປະກອບຕ່າງໆຄື: ຄານທີ່ເປັນຕົວບັງຄັບໃຫ້ອາຫານຕົກລົງມາໃສ່ຈານທີ່ຮັບຮອງ ແລະ ມີຫຼອດໄຟຕໍ່ກັບຄານ ເວລາໃດກົດຖືກ ຄານຈະເຮັດໃຫ້ດອກໄຟແຈ້ງສະຫວ່າງແລ້ວກໍ່ມີອາຫານຕົກລົງມາ.

ການທົດລອງ: ທ່ານໄດ້ນຳເອົາໜູຂາວໄວ້ໃນກົງທີ່ສ້າງຂຶ້ນ,ປະໄວ້ຈົນໂຕໜູເກີດຄວາມຫິວ,ທ່ານສັງເກດເຫັນວ່າ: ເມື່ອໜູເຫັນມັກຈະກະວົນກະວາຍແລ່ນຕຳພຸ້ນຕຳພີ້ ບັງເອີນໜູແລ່ນໄປຕຳຖືກຄານຢູ່ໃນ

ກົງ, ເຮັດໃຫ້ດອກໄຟແຈ້ງຂຶ້ນ ແລະ ມີອາຫານຕົກລົງມາຈໍານວນໜຶ່ງ (ແຕ່ບໍ່ພໍອີ່ມ) ໝູກໍ່ກິນອາຫານນັ້ນ. ໃນໄລຍະທໍາອິດໝູຍັງບໍ່ທັນຮູ້ວ່າອາຫານນຕົກລົງມາໄດ້ແນວໃດ, ຕໍ່ມາໝູກໍ່ແລ່ນວຸ້ນວາຍຄືກັບຕອນທໍາອິດ ເປັນດັ່ງນີ້ໄປເລື້ອຍໆ ໃນທີ່ສຸດໝູກໍ່ໄດ້ເກີດການຮຽນຮູ້ວິທີເພື່ອຊອກອາຫານມາກິນ ເຊິ່ງປະກົດວ່າອັດຕາຕອບສະໜອງຂອງການກົດໄມ້ຄານນັ້ນຈະມີຄວາມເພີ່ມຂຶ້ນຢ່າງໄວວາ.



ເວລາ

ຈາກການທົດລອງທ່ານສະກິນເນີໄດ້ອະທິບາຍວ່າ: ການຕອບສະໜອງຂອງໝີ(ການກົດຄານ) ຈະມີແນວໂນ້ມເພີ່ມຂຶ້ນ ຫຼືບໍ່ນັ້ນຈະຂຶ້ນກັບ ຕົວເສີມແຮງ ຫຼື ສິ່ງກະຕຸ້ນທີ່ມີອໍານາດເສີມແຮງ (ຫຼື) ເຊິ່ງຢູ່ໃນການທົດລອງນີ້ ແຮງເສີມຈະແມ່ນອາຫານ ແລະ ສາມາດຂຽນເປັນແຜນຜັງສະແດງການທົດລອງໄດ້ດັ່ງນີ້:

ແຜນຜັງການວາງເງື່ອນໄຂການກະທໍາ.

ຂັ້ນທີ 1. (ກ່ອນການຮຽນຮູ້.)

ສິ່ງກະຕຸ້ ແລະ ການເຄື່ອນໄຫວ---------ກົດຄານ ( ໂດຍບັງເອີນ )---------ອາຫານ

ຂັ້ນທີ 2. ( ຫຼັງການຮຽນຮູ້ )

S --------------------R------------------------S

(ຄານ) (ກົດຄານ) (ອາຫານ)

ຈາກແຜນຜັງນີ້ຈະເຫັນໄດ້ວ່າ: ໃນຂັ້ນທີ 1 ສິ່ງກະຕຸ້ນທີ່ເລີ່ມຕົ້ນທີ່ຈະກະຕຸ້ນໃຫ້ໝູ່ກົດຄານນັ້ນຈະມີຫຼາຍຢ່າງ, ເຮົາບໍ່ສາມາດກໍານົດໄດ້ຢ່າງແນ່ນອນວ່າສິ່ງກະຕຸ້ນນັ້ນແມ່ນສິ່ງໃດ. ມັນອາດຈະເປັນກິ່ນຂອງອາຫານ ຫຼືກິ່ນອື່ນໆກໍ່ເປັນໄດ. ການເຄື່ອນໄຫວຂອງໝູ ເປັນໄປແມ່ນເພື່ອຊອກຫາອາຫານ, ໝູກໍ່ໄດ້ກິນອາຫານ. ເຮົາສາມາດເວົ້າໄດ້ວ່າ ຢູ່ໃນຂັ້ນນີ້ໝູຍັງບໍ່ທັນເກີດມີການຮຽນຮູ້ ແຕ່ຢູ່ໃນ ຂັ້ນທີ 2 ໝູ

ສາມາດຈຳແນກໄດ້ວ່າ ຄານແມ່ນສິ່ງກະຕຸ້ນເດັ່ນພິເສດ (ຈະໃຊ້ຕົວຫຍໍ້) ເຊິ່ງຈະນຳໄປສູ່ການເສີມແຮງ ເມື່ອເຫັນຄານ, ໜູກໍ່ຈະຮູ້ວ່າເມື່ອກົດຄານແລ້ວກໍ່ຈະໄດ້ຮັບອາຫານ ຫຼື ຕົວເສີມແຮງ (ໃນແຜນຜັງນີ້ຈະໃຊ້ຕົວຫຍໍ້ວ່າ ).

ເພື່ອໃຫ້ມີຄວາມເຂົ້າໃຈແຈ້ງຂອງຂະບວນການຮຽນຮູ້ດັ່ງກ່າວ,ທ່ານຈະໄດ້ທົດລອງກັບນົກກັ່ງແກ ໃນໄລຍະທຳອິດທ່ານໄດ້ສັງເກດເຫັນວ່າ: ນົກຊະນິດນີ້ມັກຈະເຮັດຄໍຢືດໆ ຫົດໆ. ທ່ານບໍ່ສາມາດຮູ້ໄດ້ວ່າ ເບື້ອງຕົ້ນໄດ້ມີສິ່ງກະຕຸ້ນໃດແດ່ທີ່ເຮັດໃຫ້ນົກມີພຶດຕິກຳແບບນີ້.ທ່ານຈິ່ງເຮັດການທົດລອງໂດຍໃຫ້ອາຫານ ນົກໃນທຸກຄັ້ງທີ່ມັນຢືດຄໍອອກ ແຕ່ທ່ານໄດ້ກຳນົດເງື່ອນໄຂວ່າ ຈະໃຫ້ອາຫານສະເພາະເມື່ອນົກຢືດຄໍຕອນ ທີ່ທ່ານເປີດໄຟແວັບເທົ່ານັ້ນ. ຫຼັງຈາກໄດເຮັດການທົດລອງ2-3ຄັ້ງກໍ່ສັງເກດເຫັນວ່ານົກຈະຢືດຄທັນທີ ເມື່ອເຫັນແສງຢຟແວັບ.

ຈາກການທົດລອງນີ້ສາມາດອະທິບາຍໄດ້ວ່າ: ແສງໄຟແວັບເປັນສິ່ງກະຕຸ້ນເດັ່ນພິເສດ ເມື່ອນົກ ເຫັນມັນກໍ່ຈະຢືດຄໍເພື່ອຈະໄດ້ຮັບອາຫານ ຫຼື ຕົວເສີມແຮງ. ລັກສະນະຂອງສິ່ງກະຕຸ້ນເດັ່ນພິເສດນີ້ກໍ່ເຄີຍ ພົບຢູ່ໃນພຶດຕິກຳຂອງມະນຸດເຊັ່ນ: ຖ້າເຮົາຈະຂໍຄວາມຊ່ວຍເຫຼືອຈາກຜູ້ໃດຜູ້ໜຶ່ງກໍ່ຕ້ອງຮູ້ລໍຄອຍຈັ່ງຫວະ ຫຼື ເວລາເຂົາມີໜ້າຕາຍິ້ມແຍ້ມແຈ່ມໃສດີເທົ່ານັ້ນ. ຍ້ອນເວລານີ້ໂອກາດທີ່ເຮົາຈະໄດ້ຮັບການຕອບສະໜ ອງແມ່ນມີສູງ.ເວລາໃດເຂົາມີໜ້າບູດບຶ້ງອາລົມເສຍ ເຮົາບໍ່ສາມາດໄປຂໍຄວາມຊ່ວຍເຫຼືອ ຫຼື ສິ່ງທີ່ພວກເຮົາ ເຄີຍພົບຜ່ານມາກໍ່ຄື: ຄົນຂໍທານເຂົາມັກຈະຍ່າງໄປຂໍເງິນນຳຊາຍໜຸ່ມທີ່ນັ່ງກັບຍິງສາວ, ເພາະໂອກາດທີ່ເຂົາ ຈະໄດ້ເງິນມີຫຼາຍກວ່າໄປຂໍເງິນນຳຊາຍໜຸ່ມທີ່ກຳລັງນັ່ງຢູ່ກັບຄົນປະເພດອື່ນ.

### 5.3. ຫຼັກການ ແລະ ແນວຄິດທີ່ສຳຄັນ

**1) ການຮຽນຮູ້ ແລະ ການວັດ**

ຕາມທັດສະນະຂອງທ່ານສະກິນເນີ ການຮຽນຮູ້ກໍ່ແມ່ນການປ່ຽນແປງພຶດຕິກຳ(Lear-Ning is Behavior Chang) ຖ້າພິຈາລະນາວ່າຜູ້ທີ່ຮຽນໄດ້ເກີດການຮຽນຮູ້ຫຼືບໍ່ແມ່ນຈະສັງເກດເບິ່ງແນວໂນ້ມ ຂອງການປ່ຽນແປງການຕອບສະໜອງ. ຖ້າການຕອບສະໜອງມີທ່າທີ ຫຼື ມີໂອກາດຈະເພີ່ມຂຶ້ນກໍ່ສະແດງ ວ່າຜູ້ຮຽນໄດ້ເກີດມີການຮຽນຮູ້ແລ້ວ.

ເນື່ອງຈາກວ່າທ່າທີ ຫຼື ໂອກາດທີ່ໄດ້ເວົ້າມານັ້ນມັນເປັນສິ່ງທີ່ສັງເກດເຫັນຍາກ. ທ່າສະກິນເນີຈິ່ງ ສະເໜີວ່າການຮຽນຮູ້ຈະສາມາດວັດໄດ້ຈາກຄວາມຖີ່ຂອງການຕອບສະໜອງ ເຊິ່ງເອີ້ນວ່າອັດຕາການຕອບ ສະໜອງ(Response Rate).

### 5.4. ການວາງເງື່ອນໄຂ ແລະ ການເສີມແຮງ

❖ **ເພື່ອໃຫ້ມີຄວາມເຂົ້າໃຈການວາງເງື່ອນໄຂງ່າຍຂຶ້ນ ເຮົາຈິ່ງພິຈາລະນາຕົວຢ່າງລຸ່ມນີ້:**

1) ໃນກໍລະນີການທົດລອງກັບໜູ ເງື່ອນໄຂກຳນົດໄວ້ກໍ່ແມ່ນ ຖ້າໜູກົດຄານແລ້ວກໍ່ຈະໄດ້ອາຫານ
2) ໃນກໍລະນີການທົດລອງກັບນົກກາງແກ ເງື່ອນໄຂທີ່ກຳນົດໄວ້ແມ່ນ ຖ້ານົກຈິກແປ້ນສີແດງແລ້ວ ຈະໄດ້ກິນເມັດໝາກຖົ່ວ

3) ສຳລັບຊີວິດຂອງນັກຮຽນ ຕົວຢ່າງເງື່ອນໄຂທີ່ກຳນົດໄດ້ແມ່ນ ຖ້າບໍ່ລືມກັນໃນຫ້ອງແລ້ວຈະໄດ້ຮັບຄຳຊົມເຊີຍຈາກຄູ

ຈາກກໍລະນີຕົວຢ່າງຂ້າງເທິງນັ້ນ ການວາງເງື່ອນໄຂກໍ່ຄືເລື່ອງ ຖ້າ(ກະທຳ) ແລ້ວຈະໄດ້ຮັບຜົນດັ່ງນັ້ນທ່ານສະກິນເນີ ຈຶ່ງເອີ້ນການວາງເງື່ອນໄຂລັກສະນະນີ້ວ່ານີ້ວ່າ: ການວາງເງື່ອນໄຂການກະທຳ.

ສະກິນເນີໄດ້ອະທິບາຍວ່າ:ໄດ້ອະທິບາຍວ່າການວາງເງື່ອນໄຂ ຈະມີຜົນເຮັດໃຫ້ອັດຕາການຕອບສະໜອງປ່ຽນໄປຫຼືບໍ່ນັ້ນຂຶ້ນຢູ່ກັບຜົນການກະທຳ ຫຼື ສິ່ງທີ່ໄດ້ຮັບຫຼັງຈາກກະທຳສິ່ງນັ້ນ ວ່າຈະເປັນໄປແນວໃດ. ຖ້າກະທຳແລ້ວຈະໄດ້ຮັບຜົນກະທຳທີ່ພໍໃຈ ອິນຊີກໍ່ມີແນວໂນ້ມຈະກະທຳ ຫຼື ມີຄວາມຖີ່ເພີ່ມຂຶ້ນ, ການດຳເນີນເພື່ອໃຫ້ອິນຊີໄດ້ຮັບຜົນກະທຳທີ່ພໍໃຈ ແລະ ເຮັດໃຫ້ອັດຕາການຕອບສະໜອງມີແນວໂນ້ມຖີ່ ຫຼື ເພີ່ມຂຶ້ນນີ້ ຈະເອີ້ນວ່າ: ການເສີມແຮງ (Reinforcement ) ສິ່ງກະຕຸ້ນ ຫຼື ຜົນກະທຳເອີ້ນວ່າ: ຕົວເສີມແຮງ(Reinforcer).

ເມື່ອວາງເງື່ອນໄຂແລ້ວ, ຕໍ່ມາຖ້າອິນຊີກະທຳພຶດຕິກຳຄືເກົ່າອີກແຕ່ບໍ່ໄດ້ຮັບການເສີມແຮງ(ມີການຢຸດໃຫ້ຕົວເສີມແຮງ) ພຶດຕິກຳຫຼືການກະທຳທີ່ຖືກວາງເງື່ອນໄຂນັ້ນກໍ່ຈະຄ່ອຍໆຫາຍໄປ ແລະ ຖືກລຶບໄປ. ຫຼັກການນີ້ແມ່ນຫຼັກການດຽວກັບທິດສະດີການວາງເງື່ອນໄຂແບບຄລາດຊິກ ດັ່ງທີ່ກ່າວມາແລ້ວ.

❖ **ປະເພດຂອງຕົວເສີມແຮງ**

ຕົວເສີມແຮງແບ່ງອອກເປັນ 2 ຊະນິດຄື: ຕົວເສີມແຮງທາງບວກ (Positive Rein-forcer) ແລະ ຕົວເສີມແຮງທາງລົບ (Negative Reinforce)

**(ກ) ຕົວເສີມແຮງທາງບວກ (Positive Rein-forcer**) ແມ່ນສິ່ງກະຕຸ້ນເມື່ອຜູ້ຮຽນຮັບແລ້ວຈະເຮັດໃຫ້ອັດຕາການຕອບສະໜອງມີຄວາມຖີ່ ແລະ ເພີ່ມຂຶ້ນ. ຕົວຢ່າງຂອງການເສີມແຮງທາງບວກໄດ້ແກ່: ອາຫານ , ຄຳຊົມເຊີຍ, ຄວາມສົນໃຈ...

**(ຂ) ຕົວເສີມແຮງທາງລົບ (Negative Reinforce)** ແມ່ນສິ່ງກະຕຸ້ນໃນເມື່ອຖືກຖອນອອກໄປແລ້ວ. ຈະມີຜົນໃຫ້ແກ່ອັດຕາການຕອບສະໜອງມີມີຄວາມຖີ່ ຫຼື ເພີ່ມຂຶ້ນຫຼາຍ. ຕົວຢ່າງ: ໃນຂະນະກຳລັງມີການຮຽນ-ການສອນໄດ້ມີສຽງດັງອຶກກະທຶກທີ່ລົບກວນການສອນ. ເມື່ອຫຼຸດຜ່ອນ ຫຼື ກຳຈັດສຽງລົບກວນນັ້ນລົງ. ກໍ່ຈະເຮັດໃຫ້ການຮຽນ-ການສອນດຳເນີນໄປດ້ວຍດີຂຶ້ນ. ສຽງລົບກວນນັ້ນກໍ່ແມ່ນຕົວກວນເສີມແຮງທາງລົບ ຫຼື ເວລາໃດມີຫົວໜ້າຢູ່ນຳພະນັກງານພິມດີດກໍ່ຈະພິມຊ້າ ແລະ ພິມຜິດຫຼາຍ. ເວລາໃດຫົວນ້າອອກຈາກຫ້ອງໄປພະນັກງານພິມດີດກໍ່ສາມາດພິມໄດ້ໄວຂຶ້ນ ແລະ ກໍ່ພິມບໍ່ຜິດ.ກໍລະນີ ນີ້ຫົວໜ້າກໍ່ເປັນຕົວເສີມແຮງທາງລົບ.

ນອກຈາກຈະແບ່ງຕົວເສີມແຮງເປັນເສີມແຮງທາງບວກ ແລະ ເສີມແຮງທາງລົບແລ້ວ. ທານ ສະກິນເນີຍັງແບ່ງຕົວເສີມແຮງຕາມສະພາບອີກ 2 ແບບຄື: ຕົວເສີມແຮງທີ່ບໍ່ເກີດຂຶ້ນຈາກການວາງເງື່ອນໄຂ (Uvcon-ditioned Reinforcer) ກັບການເສີມແຮງທີ່ເກີດຈາກການວາງເງື່ອນໄຂ(conditioned Reinforcer)

ຕົວເສີມແຮງທີ່ບໍ່ເກີດຈາກການວາງເງື່ອນໄຂ ມັກນິຍົມເອີ້ນວ່າ: ຕົວເສີມແຮງຂັ້ນທີໜຶ່ງ (Primary Reinforcer) ແມ່ນສິ່ງກະຕຸ້ນທີ່ມີຄຸນສົມບັດເປັນຕົວເສີມແຮງທີ່ບໍ່ຕ້ອງຮຽນຮູ້. ສິ່ງທີ່ກະຕຸ້ນການຕອບສະໜອງຄວາມຕ້ອງການແມ່ນ ອາຫານ,ນໍ້າ,ຄວາມສຳພັນທາງເພດເປັນຕົ້ນ.

ຕົວເສີມແຮງທີ່ເກີດຈາກການວາງເງື່ອນໄຂ ຈະນິຍົມເອີ້ນວ່າ: ຕົວເສີມແຮງຂັ້ນທີ2 ໂດຍພື້ນຖານແລ້ວຕົວເສີມແຮງປະເພດນີ້ແມ່ນສິ່ງກະຕຸ້ນໄປເຊື່ອມໂຍງກັບຕົວເສີມແຮງຂັ້ນທີໜຶ່ງເລື້ອຍໆສິ່ງກະຕຸ້ນທີ່ເປັນກາງໄປເສີມແຮງກັບຕົວເສີມແຮງຂັ້ນທີໜຶ່ງຫຼາຍກວ່າຕົວ.ຫຼັງຈາກນັ້ນສິ່ງກະຕຸ້ນທີ່ເປັນກາງດັ່ງກ່າວກໍ່ມີອຳນາດໃນການເສີມແຮງເຊັ່ນ: ເງິນເປັນຕົວຢ່າງຂອງຕົວເສີມແຮງແຜ່ຂະຫຍາຍເພາະເງິນເກີດຈາກຕົວເຊື່ອມໂຍງກັບຕົວເສີມແຮງຂັ້ນທີ 1 ຫຼາຍຊະນິດຄື: (ອາຫານ,ເຄື່ອງດື່ມ,ທີ່ພັກພາອາໄສ ແລະ ອື່ນໆ) ຕົວຢ່າງຂອງການເສີມແຮງແຜ່ຂະຫຍາຍອື່ນໆໄດ້ແກ່: ການໃຫ້ຄວາມສົນໃຈ,ການຍອມຮັບ,ການຍິ້ມ, ການຊົມເຊີຍ ແລະ ອື່ນໆ

4) ຕາຕະລາງກຳນົດ ແລະ ເສີມແຮງ(Schedules of reinforcement)

ສະກິນເນີໄດ້ສະເໜີວ່າ: ສະພາບການທີ່ມີຄວາມສຳຄັນຕໍ່ການຄວບຄຸມອັດຕາການຕອບສະໜອງກໍ່ແມ່ນ ການກຳນົດໄລຍະເວລາ(Schedules) ຂອງການເສີມແຮງ.

ຕາຕະລາງກຳນົດໄລຍະເວລາຂອງການເສີມແຮງແບ່ງອອກເປັນ2ແບບໃຫຍ່ໆຄື:

- ແບບໃຫ້ຕົວເສີມແຮງທຸກຄັ້ງ (Conntinuous or 100 ເປີເຊັນReinforcerment )
- ແບບໃຫ້ຕົວເສີມແຮງເປັນບາງຄັ້ງ (Intermittent or Partial Reinforcement)

ການໃຫ້ຕົວເສີມແຮງທຸກຄັ້ງ ຫຼື ການເສີມແຮງແບບ 100 ເປີເຊັນນັ້ນ. ເປັນການໃຫ້ຕົວເສີມແຮງທຸກຄັ້ງເມື່ອອິນຊີໄດ້ສະແດງການຕອບສະໜອງຕາມທີ່ຕ້ອງການ,ການເສີມແຮງປະເພດນີ້ໄດ້ຜົນດີໃນໄລຍະທຳອິດຂອງການເຝິກ,ແຕ່ຕໍ່ມາໄລຍະຫຼັງເມື່ອອິນຊີໄດ້ເກີດການຮຽນຮູ້ແລ້ວ, ການເສີມແຮງເປັນບາງຄັ້ງມີຜົນດີກວ່າ. ໂດຍສະເພາະແມ່ນການຕອບສະໜອງ ຫຼືພຶດຕິກຳນັ້ນຈະຖາວອນຫຼາຍຂຶ້ນ.

5) ການລົງໂທດ

ການລົງໂທດ (Punishment) ຈະແຕກຕ່າງຈາກການເສີມແຮງ. ເພາະການລົງໂທດແມ່ນການໃຫ້ສິ່ງທີ່ຜູ້ຮັບບໍ່ປາຖະໜາຫຼືຖອດຖອນການກະຕຸ້ນທີ່ອິນຊີພໍໃຈອອກໄປ,ໂດຍມີຈຸດໝາຍ ເພື່ອຫຼຸດຫຼືຈຳກັດພຶດຕິກຳທີ່ບໍ່ປາຖະໜາ.ຄວາມແຕກຕ່າງລະຫວ່າງການລົງໂທດ ແລະ ການເສີມແຮງຈະເຫັນຢ່າງຊັດເຈນຈາກຜັງລຸ່ມ.

| ສິ່ງທີ່ປາຖະໜາ | ສິ່ງທີ່ບໍ່ປາຖະໜາ |
|---|---|
| ການເສີມສ້າງແຮງທາງບວກ (1) | ການລົງໂທດ (2) |
| ການລົງໂທດ (3) | ການເສີມສ້າງທາງບວກ (4) |

**ຊ່ອງໝາຍເລກ (1)** ແມ່ນ ສິ່ງກະຕຸ້ນທີ່ປາຖະໜາຫຼັງຈາກການຕອບສະໜອງ ( ແມ່ນການເສີມແຮງທາງບວກ )

**ຕົວຢ່າງ:** ກ້າປະກອບຄຳຄິດຄຳເຫັນກໍ່ຈະໄດ້ຮັບຄຳຊົມເຊີຍ. ຖ້າຮຽນໜັງສື ແລ້ວກໍ່ຈະອະນຸຍາດໃຫ້ເບິ່ງໂທລະທັດ).

**ຊ່ອງໝາຍເລກທີ (2)**ສິ່ງກະຕຸ້ນທີ່ບໍ່ປາຖະໜາຫຼັງຈາກການຕອບສະໜອງ (ເປັນການລົງໂທດ)

**ຕົວຢ່າງ:** ລົມກັນໃນໂມງຮຽນໃນຫ້ອງກໍ່ຖືກຄູຮ້າຍ.ຫຼືກອັບປົດລາຍງານນຳໝູ່ກໍ່ຖືກຄູຕັດຄະແນນ.

**ຊ່ອງໝາຍເລກ(3)** ຖອດຖອນສິ່ງກະຕຸ້ນທີ່ປາຖະໜາອອກໄປຫຼືຈາກການຕອບສະໜອງ(ເປັນການລົງໂທດ)

**ຕົວຢ່າງ:** ຕີນ້ອງຫຼືກວນນ້ອງແມ່ຈະຫ້າມບໍ່ໃຫ້ເບິ່ງໂທລະທັດ(ປົກກະຕິເບິ່ງທຸກວັນ) ຫຼືແກ້ວຽກບ້ານບໍ່ແລ້ວຄູບໍ່ໃຫ້ຫຼິ້ນກິລາ 1 ວັນ.

**ຊ່ອງໝາຍເລກ (4)** ຖອດຖອນສິ່ງກະຕຸ້ນທີ່ບໍ່ປາຖະໜາອອກໄປຫຼັງຈາກການຕອບສະໜອງ (ເປັນການເສີມແຮງທາງລົບ)

**ຕົວຢ່າງ:** ສີລິຕັ້ງໃຈຮຽນເວລາຢູ່ໃນຫ້ອງ,ຄູຈິ່ງບໍ່ໃຫ້ເຮັດວຽກບ້ານຕໍ່ມາສີລິຈະຕັ້ງໃຈຮຽນເພີ່ມຕໍ່ມາ ສີລິຈະຕັ້ງໃຈຮຽນເພີ່ມຂຶ້ນຫຼືວັນໄຊມາຮຽນທັນເວລາທຸກວັນ. ຄູຈະບໍ່ໃຫ້ເຮັດສະອາດ (ປົກກະຕິມາເຮັດທຸກວັນ) ຕໍ່ມາວັນໄຊກໍ່ມາຮຽນທຸກວັນ.

ການລົງໂທດແມ່ນວິທີການທີ່ເຮົາເຄີຍພົບໂດຍທົ່ວໄປ. ເວລາຕ້ອງລະງັບພຶດຕິກຳທີ່ບໍ່ປາຖະໜາເຊັ່ນວ່າ: ເວລານັກຮຽນຢອກກັນຢູ່ໃນຫ້ອງຮຽນ ຄູກໍ່ຈະດ່າຫຼືຕີ,ຖ້າເດັກນັກຮຽນມາໂຮງຮຽນບໍ່ທັນເວລາຄູກໍ່ຈະໃຊ້ວິທີກັກຕົວໄວ້ແລ້ວໃຫ້ເຂົາເກັບຂີ້ເຫຍື່ອຢູບໍລິເວນໂຮງຮຽນໃນທັດສະນະຂອງທ່ານສະກິນເນີ ຈະບໍ່ສະໜັບສະໜູນການລົງໂທດ. ເພາະທ່ານມີຄວາມຄິດວ່າ: ການລົງໂທດຈະພາໃຫ້ເກີດມີຜົນຂ້າງຄຽງຫຼາຍປະການຄື:

- ການລົງໂທດເປັນການລະງັບພຶດຕິກຳທີ່ບໍ່ປາຖະໜາໃນຊົ່ວຂະນະໜຶ່ງຫເທົ່ານັ້ນທ່ານຍົກຕົວຢ່າງກໍລະນີທົດລອງກັບໃນກ່ອງ ສະກິນເນີອີກແບບໜຶ່ງຄື: ເມື່ອໜູຢຽບຄານ, ຄານຈະຟາດໜູທັນທັນທີ,ໜູກໍ່ຈະຢຸດການຢຽບໄມ້ຄານນັ້ນ. ແຕ່ອີກບໍ່ດົນໜູກໍ່ຈະກັບມາຢຽບໄມ້ຄານນັ້ນອີກ.
- ຜູ້ທີ່ລົງໂທດຕະເກີດມີຄວາມຮູ້ສຶກຜິດ ຫຼື ມີຄວາມອາຍ ຫຼືຄຽດຊັງຜູ້ທີ່ໃສ່ໂທດຕົນ. ຈະພາໃຫ້ເກີດບັນຫາໃນອາລົມຂ້າງໜ້າ.
- ຜົນຈາກການລົງໂທດຈະເຮັດໃຫ້ຜູ້ທີ່ຖືກລົງໂທດຫຼີກຫຼ່ຽງການກະທຳບາງຢ່າງ ຜົນຫຼີກຫຼ່ຽງການກະທຳດັ່ງກ່າວຈະກາຍເປັນຕົວເສີມແຮງໃຫ້ເຂົາມີພຶດຕິກຳທີ່ບໍ່ປາດຖະໜາອື່ນໆເພີ່ມຂຶ້ນ ອີກການແກ້ງເຈັບປ່ວຍຈະເປັນຕົວເສີມແຮງເຮັດໃຫ້ເດັກນັກຮຽນມີພຶດຕິກຳຕົວະພໍ່ແມ່ເພື່ອຈະບໍ່ໄດ້ໄປໂຮງຮຽນ.

ນອກຈາກນີ້ທ່ານສະກິນເນີ ຍັງມີຄວາມຄິດວ່າ:ການລົງໂທດຈະບໍ່ເຮັດໃຫ້ການແຜ່ຂະຫຍາຍພຶດຕິກຳທາງບວກເກີດຂຶ້ນຄືກັບພຶດຕິກຳເສີມແຮງ. ສະນັ້ນ ແທນທີ່ຄູຈະໃຊ້ວິທີການລົງໂທດ. ຄູຄວນໃຊ້ວິທີລົບພຶດຕິກຳ ຕົວຢ່າງເດັກນັກຮຽນສະແດງພຶດຕິກຳທີ່ບໍ່ປາຖະໜາເຊັ່ນ: ກ້າວລ້າວໂມໂຫ, ຄູບໍ່ຕ້ອງສົນໃຈພຶດຕິກຳນັ້ນ ( ການໃຫ້ຄວາມສົນໃຈເປັນການເສີມແຮງທາງບວກ ).

ເຖິງຢ່າງໃດກໍ່ຕາມໄດ້ຜູ້ທີ່ບໍ່ເຫັນດີນຳທ່ານສະກິນເນີທີ່ຈະຕັດການລົງໂທດອອກໄປຢ່າງສິ້ນເຊີງ. ເພາະມີບາງກໍລະນີການລົງໂທດນັ້ນຍັງມີປະໂຫຍດການຢຸດຕິ ຫຼືລະງັບຢັບຢັ້ງພຶດຕິກຳທີ່ບໍ່ປາຖະໜາໄດ້. ຖ້າເຮົາໃຊ້ການລົງໂທດຈຶ່ງຕ້ອງລະມັດລະວັງ ແລະ ຫຼັກການຢ່າງດີ.

## 5.5. ການປະຍຸກທິດສະດີຂອງທ່ານສະກິນເນີ

### 5.5.1. ການສ້າງພຶດຕິກຳໃໝ່ (Shaping Behavior)

ການສ້າງພຶດຕິກຳໃໝ່ ເປັນການດຳເນີນການເພື່ອໃຫ້ໄດ້ພຶດຕິກຳທີ່ບໍ່ປະກົດມາກ່ອນ. ເນື່ອງຈາກພຶດຕິກຳທີ່ບໍ່ປາຖະໜາບາງຢ່າງຈະບໍ່ເກີດຂຶ້ນມາເອງ. ເຮົາຈຶ່ງຄ່ອຍໆເປັນຫຼືດັດ(Shaping) ໂດຍມີການໃຫ້ຕົວເສີມແຮງຫຼັງຈາກເຂົາໄດ້ສະແດງພຶດຕິກຳບາງຢ່າງ ເຊິ່ງມີສ່ວນຄ້າຍຄືກັບພຶດຕິກຳເປົ້າໝາຍຫຼາຍຂຶ້ນຈົນກະທັ່ງເຂົາສະແດງພຶດຕິກຳທີ່ມີສ່ວນໃກ້ຄຽງ ພຶດຕິກຳເປົ້າໝາຍຫຼາຍຂຶ້ນຈົນກະທັ້ງເຂົາສະແດງພຶດຕິກຳທີ່ເຮົາຕ້ອງການ.

ຂັ້ນຕອນການສ້າງພຶດຕິກຳໃໝ່ມີດັ່ງນີ້:

❖ **ກຳນົດພຶດຕິກຳເປົ້າໝາຍ(Desired Behavior)**

ພຶດຕິກຳເປົ້າໝາຍແມ່ນສິ່ງທີ່ປະສົງສຸດທ້າຍທີ່ເຮົາຕ້ອງການ

**ຕົວຢ່າງ:** ສູນທອນເປັນຄົນຂີ້ອາຍເຂົາບໍ່ກ້າເວົ້ານຳຄູຈັກເທື່ອ,ທັງທີ່ຄູຈະພະຍາຍາມໂອ້ລົມນຳ. ຕົວຢ່າງນີ້ ພຶດຕິກຳເປົ້າໝາຍທີ່ຕ້ອງການກໍ່ແມ່ນ ໃຫ້ສູນທອນກ້າສົນທະນານຳຄູ.

❖ **ເລືອກພຶດຕິກຳເລີ່ມຕົ້ນ ເນື່ອງຈາກພຶດຕິກຳເປົ້າໝາຍບໍ່ໄດ້ເກີດຂຶ້ນໃນຊ່ວງທຳອິດ (ສູນທອນບໍ່ເຄີຍປາກນຳຄູເລີຍ)**

ແຕ່ສູນທອນຈະມັກເວົ້າກັບເພື່ອນພຽງແຕ່ 2-3 ຄຳກັບເພື່ອນທີ່ສະໜິດ. ສະນັ້ນ, ຄູອາດກຳນົດພຶດຕິກຳການເວົ້າກັບເພື່ອນທີ່ສະໜິດ2-3ຄຳເປັນພຶດຕິກຳທີ່ເລີ່ມຕົ້ນ (Starting Behavior).

❖ **ການກຳນົດພຶດຕິກຳຍ່ອຍລະຫວ່າງພຶດຕິກຳທີ່ເລີ່ມຕົ້ນກັບພຶດຕິກຳເປົ້າໝາຍ**

ການດຳເນີນສ້າງພຶດຕິກຳໃໝ່. ເຮົາຕ້ອງກຳນົດພຶດຕິກຳຍ່ອຍກັບພຶດຕິກຳເລີ່ມຕົ້ນກັບພຶດຕິກຳເປົ້າໝາຍໃຫ້ຊັດເຈນ. ຕົວຢ່າງກໍລະນີສູນທອນພວກເຮົາອາດກຳນົດພຶດຕິກຳຍ່ອຍດັ່ງນີ້:

| | |
|---|---|
| ເປັນຜູ້ເລີ່ມຕົ້ນລົມກັບຄູ | 6 |
| ເປັນຜູ້ເລີ່ມຕົ້ນເວົ້າກັບຜູ້ໃຫຍ່ທີ່ຄຸ້ນເຄີຍ | 5 |
| ເປັນຜູ້ເລີ່ມຕົ້ນລົມກັບໝູ່ຫຼາຍກວ່າໜຶ່ງຄຳ | 4 |
| ເປັນຜູ້ເລີ່ມຕົ້ນລົມກັບໝູ່ແຕ່ເວົ້າພຽງຄຳດຽວ | 3 |
| ເວົ້າ(ເມື່ອເວລາໝູ່ຖາມ)2ຄຳຂຶ້ນໄປ | 2 |
| ເວົ້າ(ເມື່ອເວລາໝູ່ຖາມ) ພຽງຄຳດຽວ | 1 |

ເລກອັນດັບທີ 6 ແມ່ນພຶດຕິກຳເປົ້າໝາຍ.

ເລກອັນດັບທີ 1 ແມ່ນພຶດຕິກຳເລີ່ມຕົ້ນ.

❖ **ດຳເນີນໃຫ້ການເສີມແຮງໃນພຶດຕິກຳຍ່ອຍແຕ່ລະຂັ້ນທີ່ໄດ້ແບ່ງໄວ້**

ຫຼັງຕາຈາກທີ່ໄດ້ກຳນົດພຶດຕິກຳຍ່ອຍແລ້ວ. ຂັ້ນຕໍ່ໄປກໍ່ໃຫ້ການເສີມແຮງ. ເມື່ອສູນທອນໄດ້ສະແດງພຶດກຳໃນແຕ່ລະຂັ້ນທີ່ໄດ້ກຳນົດໄວ້ເຊັ່ນ: ການລວມກຸ່ມກັບເພື່ອນ,ເມື່ອເຂົາເວົ້າ ( ຫຼັງຈາກເພື່ອນຖາມ) 1 ຄຳກໍ່ໃຫ້ການເສີມແຮງ.ຕໍ່ມາເຂົາກໍ່ມີແນວໂນ້ມຕອບຄຳຖາມເພີ່ມຂຶ້ນ.ເມື່ອເຂົາທຳຂັ້ນນີ້ໄດ້ແລ້ວ, ຖ້າເຂົາເວົ້າພຽງຄຳດຽວຈະບໍ່ໃຫ້ການເສີມແຮງ. ແຕ່ຈະເລີ່ມໃຫ້ການເສີມແຮງສະເພາະເວລາເຂົາຕອບຄຳຖາມໝູ່ແຕ່ 2 ຄຳຂຶ້ນໄປ. ຕໍ່ມາເມື່ອສູນທອນຕອບຄຳຖາມຫຼາຍກວ່າ 2 ຄຳເພີ່ມຂຶ້ນເລື້ອຍໆແມ່ນຈິ່ງຢຸດຕິໃຫ້ການເສີມແຮງດັ່ງກ່າວ ແລະ ເລີ່ມຕົ້ນດ້ວຍຕົວເສີມແຮງສະເພາະເວລາເຂົາເປັນຜູ້ເລີ່ມຕົ້ນສົນທະນາກັບໝູ່ 1 ຄຳເຊິ່ງເປັນຂັ້ນຕອນຕໍ່ໄປແລະ ດຳເນີນການເຊັ່ນນີ້ຈົນກະທັ້ງເຖິງຂັ້ນສຸດທ້າຍຊຶ່ງແມ່ນພຶດຕິກຳເປົ້າໝາຍທີ່ຕ້ອງການ.

ນອກຈາກການສ້າງພຶດຕິກຳໃໝ່ແລ້ວ, ຫຼັກການໃຫ້ການເສີມແຮງໃນເມື່ອເດັກນັກຮຽນໄດ້ມີພຶດຕິກຳທີ່ປາຖະໜານີ້ ແລະ ສາມາດນຳເອົາໄປໃຊ້ປັບພຶດຕິກຳທີ່ມີບັນຫາຕ່າງໆໃນຫ້ອງຮຽນໄດ້ຢ່າງມີປະສິດທິພາບເຊັ່ນ: ການໃຊ້ຕົວເສີມແຮງເພື່ອຫຼຸດພຶດຕິກຳການລົມກັນຂອງນັກຮຽນເວລາຮຽນ ຢູ່ໃນຫ້ອງຮຽນຫຼືພຶດຕິກຳລົບກວນເພື່ອນເປັນຕົ້ນ.

### 5.5.2. ການປະຍຸກໃຊ້ເຂົ້າການສອນ

ທ່ານ ສະກິນເນີໄດ້ໃຫ້ຂໍ້ຄິດກ່ຽວກັບການປະຍຸກຫຼັກການທິດສະດີການວາງເງື່ອນໄຂການກະທຳໄປໃຊ້ເຂົ້າໃນການສອນໜ້າສົນໃຈມີດັ່ງນີ້: ກ່ອນອື່ນຄູຕ້ອງເຂົ້າໃຈວ່າ: ເດັກນັກຮຽນບໍ່ໄດ້ເກີດມີການຮຽນຮູ້ໄດ້ງ່າຍໆດ້ວຍການທີ່ຄູເປັນຜູ້ບອກຫຼືຄູໃຫ້ເດັກໃນສິ່ງທີ່ຈະໃຫ້ເຂົາໄດ້ຮຽນຮູ້, ແຕ່ການຮຽນຮູ້ຈະເກີດຂຶ້ນກໍ່ຕໍ່ເມື່ອເຂົາມີຄວາມຢາກຮູ້,ແລະຮູ້ວ່າຜົນການກະທຳຫຼືຄຸນຄ່າທີ່ຈະເກີດຂຶ້ນຈາກການຮຽນນັ້ນແມ່ນສິ່ງໃດ.ເມື່ອເຂົາຟັງຄູເວົ້າຫຼືເບິ່ງໃນສິ່ງທີ່ກະກຽມໃຫ້ນັ້ນແລ້ວເຂົາຈະໄດ້ຮັບຜົນຫຍັງຈາກການກະທຳນັ້ນ. ຖ້າເຂົາເຮັດໃຫ້ແລ້ວໄດ້. ຖ້າເຂົາກະທຳແລ້ວໄດ້ຕົວເສີມແຮງເຂົາກໍ່ຈະກະທຳເລື້ອຍໆ.ຖ້າຄູພຽງແຕ່ບອກຫຼືໃຫ້ເບິ່ງ,ແຕ່ບໍ່ມີການເສີມແຮງທາງບວກ,ການກະທຳທີ່ຄູປາຖະໜານັ້ນກໍ່ຈະບໍ່ເກີດຂຶ້ນມາ.

ແນວທາງການປະຍຸກຫຼັກການຂອງສະກິນເນີ ຢູ່ໃນຫ້ອງຮຽນກໍ່ແມ່ນການວິເຄາະພຶດຕິກຳທີ່ປາຖະໜາອອກເປັນພຶດຕິກຳຍ່ອຍທີ່ສາມາດສັງເກດເຫັນໄດ້ຢ່າງຊັດເຈນ ເຊັ່ນວ່າ: ໃນບົດຮຽນວິຊາວິທະຍາສາດຕ້ອງລະບຸໃຫ້ໄດ້ວ່າ: ນັກຮຽນສາມາດເຮັດສິ່ງໃດໄດ້ເມື່ອເຂົາຮຽນ ບົດນັ້ນຈົບແລ້ວ, ຖ້າຄູບໍ່ສາມາດລະບຸໄດ້ຄູກໍ່ບໍ່ອາດປະເມີນຜົນການສອນ ແລະ ຄວາມກ້າວໜ້າຂອງພຶດຕິກຳທີ່ຕ້ອງການໄດ້. ສິ່ງສຳຄັນແມ່ນການໃຫ້ການເສີມແຮງອາດຈະບໍ່ເໝາະສົມ, ເພາະຄູບໍ່ຮູ້ວ່າຈະໃຫ້ການເສີມແຮງຫຼັງຈາກຜູ້ຮຽນມີພຶດຕິກຳແບບໃດ.

ໃນທິດສະດີຂອງສະກິນເນີ ທ່ານ ທ່ານສົນໃຈເລື່ອງແຮງຈູງໃຈເພື່ອຈະໃຫ້ຕົວເສີມແຮງເທົ່ານັ້ນ. ຫຼື ນໍ້າຈະເປັນຕົວເສີມແຮງກໍ່ຕໍ່ເມື່ອຜູ້ທີ່ຮັບເກືອການກະຫາຍເປັນຕົ້ນ... ສໍາລັບຢູ່ໃນຫ້ອງຮຽນນັ້ນຕົວເສີມແຮງທີ່ມີຄວາມສໍາຄັນທີ່ສຸດກໍ່ແມ່ນການເສີມແຮງຂັ້ນທີ 2 ແລະ ຕົວເສີມແຮງແຜ່ຂະຫຍາຍເຊັ່ນໄດ້ແກ່ ການສະແດງໃບໜ້າຍິ້ມແຍ້ມຈາກຄູ, ຄະແນນ ຫຼື ອື່ນໆ.....ຢູ່ໃນການຮຽນ-ການສອນຄູຕ້ອງໃຫ້ຕົວເສີມແຮງເຫຼົ່ານີ້ຢ່າງມີຄວາມເໝາະສົມ. ຄູທີ່ຍຶດຫຼັກການ ສະກິນເນີ ຈະຕ້ອງຫຼີກຫຼ່ຽງການລົງໂທດ. ມີແຕ່ລາງວັນເທົ່ານັ້ນທີ່ຈະພາໃຫ້ເກີດພຶດຕິກໍາທີ່ປາຖະໜາໄດ້. ເມື່ອຜູ້ຮຽນຫາກມີພຶດຕິກໍາບໍ່ເໝາະສົມຄູຕ້ອງທໍາທ່າທາງເສີຍເມີຍ ບໍ່ສົນໃຈ() ຕາມຄວາມຄິດຂອງສະກິນເນີ ຖືວ່າ: ບັນຫາຕ່າງໆຢູ່ໃນໂຮງຮຽນນັ້ນເປັນຜົນມາຈາກຄວາມຫຼົ້ມເຫຼວຕ່າງໆຂອງຄູເຊັ່ນ: ຫຼົ້ມເຫຼວຈາກການສົ່ງເສີມຄວາມກ້າວໜ້າ ຂອງບຸກຄົນ, ແລະຈາກການໃຊ້ຕົວເສີມແຮງທີ່ບໍ່ເໝາະສົມ,ຫຼົ້ມເຫຼວຈາກການລົງໂທດຫຼືການບັງຄັບໃຫ້ຢູ່ໃນລະບຽບວິໃນຢ່າງເຄັ່ງຄັດເກີນໄປ.

## ❖ ສະຫຼຸບ

ຄໍານິຍາຍຂອງການຮຽນຮູ້ທີ່ນັກຈິດຕະວິທະຍາສ່ວນຫຼາຍໄດ້ຍອມຮັບກັນຫຼາຍ ທີ່ສຸດກໍ່ແມ່ນການຮຽນຮູ້ໝາຍເຖິງການປ່ຽນແປງພຶດຕິກໍາ ຫຼືສັກກາຍະພາບຂອງພຶດຕິກໍາທີ່ຂ້ອນຂ້າງຖາວອນອັນເປັນຜົນມາຈາກປະສົບການ. ເຖິງວ່າ: ຈິດຕະວິທະຍາຈະຍອມຮັບຄໍານິຍາມດັ່ງກ່າວ . ແຕ່ກໍ່ມີແນວຄິດກ່ຽວກັບການຮຽນຮູ້ດັ່ງກ່າວ. ແຕ່ກໍ່ມີແນວຄິດກ່ຽວກັບການຮຽນຮູ້ຕ່າງໆທີ່ແຕກຕ່າງກັນຢ່າງຫຼວງຫຼາຍ. ໃນຈໍານວນນີ້ເພິ່ນອາດຈໍາແນກອອກເປັນ 3 ກຸ່ມຄື:ຈິດຈະວິທະຍາການຮຽນຮູ້ກຸ່ມພຶດຕິກໍານິຍົມ (Behavior Learning Yheory) ຈິດຕະວິທະຍາການຮຽນຮູ້ກຸ່ມພຶດຕິກໍານິຍົມ (Congnitive Learning Theory) ຈິດຕະວິທະຍາການຮຽນຮູ້ທາງສັງຄົມ (Interactionist Approach) ຢູ່ໃນບົດນີ້ຈະໄດ້ເວົ້າສະເພາະທິດສະດີການຮຽນຮູ້ໃນກຸ່ມພຶດຕິກໍານິຍົມເທົ່ານັ້ນ.

ທິດສະດີການວາງເງື່ອນໄຂແບບ ຄລາດຊິກເປັນທິດສະດີດັ່ງເດີມ ຂອງກຸມພຶດຕິກໍານິຍົມທີ່ມີຄວາມສໍາຄັນທີ່ສຸດໃນທິດສະດີໃດໜຶ່ງ. ຜູ້ທີ່ຄິດຄົ້ນທິດສະດີນີ້ກໍ່ແມ່ນທ່ານພາບລອຟ,ໂດຍເຮັດການທົດລອງວາງເງື່ອນໄຂປະຕິກິລິຍາສະທ້ອນຂອງໂຕໝາ,ແລ້ວທ່ານວັດສັນໄດ້ນໍາຫຼັກການດັ່ງກ່າວໄປທົດລອງວາງເງື່ອນໄຂທາງອາລົມກັບມະນຸດ.ຫຼັກການສໍາຄັນຂອງທິດສະດີນີ້ກໍ່ແມ່ນ,ຖ້ານໍາສິ່ງກະຕຸ້ນທີ່ວາງເງື່ອນໄຂ (Cs) ໄປຄຽງຄູ່ກັບສິ່ງກະຕຸ້ນທີ່ບໍ່ວາງເງື່ອນໄຂ (UCS) ເຊິ່ງມີອໍານາດພາໃຫ້ເກີດມີການຕອບສະໜອງຢ່າງໜຶ່ງ (UCR)ໄດ້. ຕໍ່ມາສິ່ງກະຕຸ້ນທີ່ວາງເງື່ອນໄຂນັ້ນກໍ່ຈະພາໃຫ້ເກີດມີການຕອບສະໜອງໄດ້ຄືກັບສິ່ງກະຕຸ້ນທີ່ບໍ່ວາງເງື່ອນໄຂເຊັ່ນ: ຖ້ານໍາເອົາໜູຂາວ (CS) ໄປເຂົ້າຄູ່ກັບສຽງດັງ(UCS) ສຽງນີ້ຈະເຮັດໃຫ້ເກີດມີການຕົກໃຈ,ຢ້ານກົວ,ຮ້ອງໄຫ້. ຕໍ່ມາພຽງແຕ່ເຫັນໜູຂາວເດັກກໍຈະຢ້ານກົວຄືກັນກັບເວລາໄດ້ຍິນສຽງດັງ.

ຢູ່ໃນຫ້ອງຮຽນຄູກໍ່ສາມາດວາງເງື່ອນໄຂໃຫ້ນັກຮຽນເກີດມີອາລົມທາງບວກ ແລະ ທາງລົບໄດ້ເຊັ່ນ: ເຮັດໃຫ້ເຂົາຢ້ານຫຼືຮັກຄູກໍໄດ້.ໃນທາງການປະຕິບັດຄູອາດວາງເງື່ອນໄຂໃຫ້ເດັກຢ້ານຄູໂດຍບໍ່ໄດ້ຕັ້ງໃຈ, ຫຼື

ໃຫ້ເດັກມີຄວາມວິຕົກກັງວົນຈາກການສອບເສັງໂດຍຄູບໍ່ໄດ້ຈິງໃຈໃຫ້ເດັກເກີດມີຄວາມຮູ້ສຶກແບບນັ້ນ. ເມື່ອເປັນເຊັ່ນນັ້ນ ຄູຕ້ອງພະຍາຍາມລຶບການວາງເງື່ອນໄຂດັ່ງກ່າວ.ອາດເຮັດໃຫ້ມີສິ່ງກະຕຸ້ນທີ່ພາໃຫ້ເກີດມີຄວາມວິຕົກກັງວົນຫຼືຄວາມຢ້ານກົວເກີດຂຶ້ນ ຫຼືອາດໃຊ້ເທັກນິກການວາງເງື່ອນໄຂກັບທິດສະດີການຮຽນຮູ້ກຸ່ມພຶດຕິກຳນິຍົມ ໃນໄລຍະທຳອິດອີກທິດສະດີໜຶ່ງກໍ່ແມ່ນທິດສະດີຄວາມສຳພັນເຊື່ອມໂຍງຂອງທອນໄດ.ທິດສະດີນີ້ເຊື່ອວ່າ: ການຮຽນຮູ້ເກີດມາຈາກການເຊື່ອມຕໍ່ລະຫວ່າງສິ່ງກະຕຸ້ນກັບການຕອບສະໜອງ. ພາວະທີ່ເຮັດໃຫ້ພັນທະຫຼືການເຊື່ອມໂຍງລະຫວ່າງສິ່ງກະຕຸ້ນກັບການຕອບສະໜອງເກີດຂຶ້ນຫຼາຍປະການ.

ທ່ານທອນໄດ ໄດ້ອະທິບາຍວ່າ: ພາວະດັ່ງກ່າວໃນປະກົດການຮຽນຮູ້ເຊິ່ງມີກົດທີ່ສຳຄັນ 3 ປະການຄື: ກົດຄວາມພໍໃຈ,ກົດການເຝິກຫັດ ແລະ ກົດຄວາມພ້ອມ.

- ກົດຄວາມພໍໃຈ ຈະມີໃຈຄວາມວ່າ: ຖ້າການຕອບສະໜອງພາວະກໍ່ໃຫ້ເກີດຄວາມພໍໃຈ,ສິ່ງກະຕຸ້ນກັບການຕອບສະໜອງຈະເຂັ້ມແຂງແໜ້ນແຟ້ນຂຶ້ນຫຼືເວົ້າອີກຢ່າງໜຶ່ງວ່າແມ່ນຄວາມພໍໃຈຫຼືລາງວັນຈະພາໃຫ້ການຕອບສະໜອງເກີດຊ້ຳໃນສິ່ງທີ່ເຄີຍຮັບລາງວັນມາແລ້ວ.
- ກົດການເຝິກຫັດນັ້ນມີໃຈຄວາມວ່າ: ຖ້າໄດ້ກະທຳເລື້ອຍໆພັນທະລະຫວ່າງສິ່ງກະຕຸ້ນກັບການຕອບສະໜອງຈະແໜ້ນແຟ້ນຂຶ້ນ,ຕໍ່ມາກົດນີ້ຈະປັບໃໝ່ໂດຍເນັ້ນວ່າການເຝິກຈະບໍ່ມີຜົນຕໍ່ຄວາມແໜ້ນແຟ້ນຂອງພັນທະ, ຖ້າຜູ້ເຝິກບໍ່ໄດ້ຮັບຜົນຂອງການເຝິກ ແລະ ຜູ້ເຝິກບໍ່ມີແຮງຈູງໃຈໃນການເຝິກ.
- ກົດຄວາມພໍໃຈນັ້ນສະຫຼຸບໄດ້ວ່າ: ຖ້າບຸກຄົນພ້ອມທີ່ຈະກະທຳຍ່ອມຈະເກີດມີຄວາມພໍໃຈ,ຖ້າບໍ່ພ້ອມກໍ່ຈະເກີດມີຄວາມບໍ່ພໍໃຈ.

ດັ່ງນັ້ນເວລາຄູສອນຄວນຄຳນຶງເຖິງຫຼັກການຂອງທ່ານທອນໄດທີ່ກ່າວມານັ້ນ, ນອກນີ້ການສອນຕ້ອງໃຫ້ສອດຄ່ອງກັບຊີວິດຈິງຂອງຜູ້ຮຽນເພື່ອຖ່າຍໂອນການຮຽນຮູ້ ຈາກສິ່ງທີ່ຮຽນໃນຫ້ອງຮຽນໄປສູ່ການດຳລົງຊີວິດປະຈຳວັນ.

ທິດສະດີການວາງເງື່ອນໄຂການກະທຳຂອງສະກິນເນີ ໄດ້ຖືວ່າແມ່ນທິດສະດີການຮຽນຮູ້ກຸ່ມພຶດຕິກຳນິຍົມທີ່ໄດ້ຮັບຄວາມສົນໃຈຫຼາຍໃນປັດຈຸບັນ. ຕາມທັດສະນະຂອງສະກິນເນີ.ການຮຽນຮູ້ກໍ່ແມ່ນການປ່ຽນແປງພຶດຕິກຳ.ການພິຈາລະນາວ່າຜູ້ຮຽນໄດ້ເກີດມີການຮຽນຮູ້ຫຼືບໍ່ກໍ່ສັງເກດເບິ່ງ ການປ່ຽນແປງອັດຕາການຕອບສະໜອງ ແລະ ສິ່ງທີ່ມີອິດທິພົນຕໍ່ການປ່ຽນແປງອັດຕາການຕອບສະໜອງເຊັ່ນ:ຜົນຂອງການກະທຳສິ່ງທີ່ໄດ້ຮັບຫຼັງຈາກການກະທຳນັ້ນວ່າເປັນແນວໃດຖ້າຜົນທີ່ໄດຮັບເຮັດໃຫ້ເກີດມີຄວາມພໍໃຈອິນຊີກໍ່ຈະມີແນວໂນ້ມກະທຳພຶດຕິກຳອັນຖີ່ຫຼືເພີ່ມຂຶ້ນ.ການດຳເນີນງານເພື່ອໃຫ້ອິນຊີໄດ້ຮັບຜົນທີ່ເພິ່ງພໍໃຈແລະເຮັດໃຫ້ອັດຕາການຕອບສະໜອງມີແນວໂນ້ມຖີ່ຫຼືເພີ່ມຂຶ້ນນັ້ນຕະເອີ້ນວ່າ:ການເສີມແຮງ (Reinforcement) ແລະສິ່ງກະຕຸ້ນຫຼືຜົນການກະທຳທີ່ໄດ້ຮັບຈາກການຕອບສະໜອງດັ່ງກ່າວຈະຮຽກວ່າ: ຕົວເສີມແຮງ(Reinforcer)

ຕົວເສີມແຮງອາດແບ່ງອອກເປັນ 2 ແບບຄື: ແບ່ງອອກຕາມຊະນິດ ແລະ ແບ່ງອອກຕາມແຫຼ່ງທີ່ມາ, ຖ້າແບ່ງອອກຕາມຊະນິດກໍ່ຈະແບ່ງອອກເປັນ 2 ປະເພດຄື: ຕົວເສີມແຮງທາງບວກກັບຕົວເສີມແຮງທາງລົບ. ຕົວເສີມແຮງທາງບວກເປັນສິ່ງກະຕຸ້ນ ໃນເມື່ອໄດ້ຮັບແລ້ວຈະພາໃຫ້ອັດຕາການຕອບສະໜອງຖີ່

ຫຼືເພີ່ມຂຶ້ນ. ສ່ວນຕົວເສີມແຮງທາງລົບແມ່ນສິ່ງກະຕຸ້ນໃນເມື່ອນຳອອກໄປແລ້ວຈະເຮັດໃຫ້ອັດຕາການຕອບສະໜອງມີແນວໂນ້ມເພີ່ມຂຶ້ນ. ຕົວເສີມແຮງທາງລົບນີ້ຈະແຕກຕ່າງຕາກການລົງໂທດ. ເພາະການລົງໂທດແມ່ນໃຫ້ສິ່ງກະຕຸ້ນທີ່ບໍ່ປາຖະໜາ (ສິ່ງທີ່ຄົນບໍ່ມັກ)ຫຼືນຳເອົາສິ່ງກະຕຸ້ນທີ່ພໍໃຈອອກໄປ. ໂດຍມີຈຸດປະສົງເຮັດໃຫ້ພຶດຕິກຳທີ່ບໍ່ປາຖະໜາຢຸດຕິ.

ຖ້າແບ່ງຕົວເສີມແຮງຕາມແຫຼ່ງທີ່ມາກໍ່ແບ່ງອອກເປັນ 2 ປະເພດຄື: ຕົວເສີມແຮງທີ່ບໍ່ໄດ້ວາງເງື່ອນໄຂ ແລະ ເກີດຈາກການວາງເງື່ອນໄຂ.

- **ການເສີມແຮງທີ່ບໍ່ໄດ້ເກີດຈາກການວາງເງື່ອນໄຂຈະແມ່ນຕົວເສີມແຮງທີ່ມີຄຸນສົມບັດເປັນຕົວເສີມແຮງຢູ່**

ໃນຕົວມັນເອງຢູ່ແລ້ວເຊັ່ນ: ອາຫານແມ່ນຕົວເສີມແຮງບຸກຄົນທີ່ກຳລັງຫິວ,ນ້ຳຈະເປັນຕົວເສີມແຮງຂອງຄົນທີ່ກຳລັງກະຫາຍ,ການນອນເປັນຕົວເສີມແຮງສຳລັບຜູ້ທີ່ກຳລັງເຫງົານອນ... ແລະ ກໍ່ມັກເອີ້ນຕົວເສີມແຮງນີ້ວ່າ: ຕົວເສີມແຮງຂັ້ນທຳອິດ. ສ່ວນຕົວເສີມແຮງອີກປະເພດໜຶ່ງແມ່ນສິ່ງກະຕຸ້ນທີ່ບໍ່ໄດ້ປັບຕົວເສີມແຮງໃນຕົນເອງ. ແຕ່ຖ້ານຳເອົາໄປຄູ່ກັບຕົວເສີມແຮງ ຂັ້ນທຳອິດເລື້ອຍໆກໍ່ຈະມີອຳນາດໃນການເສີມແຮງ ແລະເອີ້ນຕົວເສີມແຮງປະເພດນີ້ວ່າ: ຕົວເສີມແຮງຂັ້ນທີ 2 . ຖ້າຕົວເສີມແຮງຂັ້ນທີ2 ໄດ້ໄປເຊື່ອມໂຍງກັບຕົວເສີມແຮງຂັ້ນທີ1ຫຼາຍໆຕົວເຮົາຈະເອີ້ນວ່າ:ຕົວເສີມແຮງແຜ່ຂະຫຍາຍເຊັ່ນ: ເງິນ,ການຍິ້ມ,ການຊົມເຊີຍ ແລະ ອື່ນໆ.

- **ສະພາບການທີ່ທ່ານສະກິນເນີ ໄດ້ພົບວ່າມີຄວາມສຳຄັນຕໍ່ການຄວບຄຸມຕໍ່ອັດຕາການຕອບສະໜອງກໍ່**

ແມ່ນການກຳນົດເວລາຂອງຕົວເສີມແຮງປົກກະຕິຢູ່ໃນໄລຍະທຳອິດຂອງການວາງເງື່ອນໄຂນັ້ນຈຳເປັນຕ້ອງໃຊ້ການເສີມແຮງທຸກຄັ້ງທີ່ເຂົາກະທຳໃນສິ່ງທີ່ເຮົາຕ້ອງການ. ຫຼັງຈາກເຂົາໄດ້ເກີດການຮຽນຮູ້ແລ້ວກໍ່ປ່ຽນມາເປັນການໃຫ້ການເສີມແຮງບາງຄັ້ງ. ການໃຫ້ການເສີມແຮງບາງຄັ້ງທີ່ມີຜົນເຮັດໃຫ້ອັດຕາການຕອບສະໜອງເກີດຂຶ້ນສູງ ແລະ ສະເໝີຕົ້ນສະເໝີປາຍກໍ່ແມ່ນແບບການກຳນົດອັດຕາຈຳນວນຫຼາຍຄັ້ງບໍ່ຕາຍຕົວ ແລະ ແບບກຳນົດເສີມແຮງຕາມເວລາແບບບໍ່ຕາຍຕົວ.

ທິດສະດີການວາງເງື່ອນໄຂການກະທຳຂອງທ່ານສະກິນເນີ. ຈະສາມາດປະຍຸກໃຊ້ໄດ້ຫຼາຍລັກສະນະນັບທັງການປັບພຶດຕິກຳການຮຽນ-ການສອນ ແລະ ການພັດທະນາການຮຽນແບບອື່ນໆອີກດ້ວຍ.

# ບົດທີ 5
# ທິດສະດີການຮຽນຮູ້ກຸ່ມປັນຍານິຍົມ

ທິດສະດີກຸ່ມພຶດຕິກຳນິຍົມຈະສັງເກດການຮຽນຮູ້ໃນຮູບແບບການເຊື່ອມໂຍງລະຫວ່າງສິ່ງກະຕຸ້ນກັບການຕອບສະໜອງໂດຍມີການເສີມແຮງເປັນປັດໄຈຄວບຄຸມແຕ່ທິດສະດີການຮຽນຮູ້ກຸ່ມນີ້ຈະເນັ້ນອົງປະກອບຂອງການສ້າງຄວາມຄິດ(conceptuai Aspcts )ຫຼາຍກ່ວາອົງປະກອບດ້ານພຶດຕິກຳ ( Behavioral Asepcts) ນັກຈິດຕະວິທະຍາກຸ່ມນີ້ໄດ້ອະທິບາຍການຮຽນຮູ້ໂດຍມຸ່ງເນັ້ນໃສ່ຄວາມສົນໃຈຂະບວນການພາຍ C: \ WINDOWS\Hinhem. Scr .ໃນການຕອບສະໜອງໂດຍສະເພາະແມ່ນການຮັບຮູ້ ( Percaphion)ການຈັດລະບຽບຄວາມຮູ້ (REoerganlzation)ການເກັບສາລະຄວາມຮູ້ ( Stornd)  ແລະ ລວມທັງການຮຽກສາລະຄວາມຮູ້ທີ່ເກັບໄວ້ອອກມາໃຊ້ (Retrieval ) ທິດສະດີກຸ່ມນີ້ກໍ່ແມ່ນທິດສະກີປັນຍານິຍົມ ( Cognitive Psychology ).

ຢູ່ໃນບົດນີ້ຈະໄດ້ກ່າວເຖິງທິດສະດີການຮຽນຮູ້ຂອງ ເກຕັລທ ( Gestalt psychology)ເຊິ່ງເປັນພື້ນຖານສຳຄັນຂອງທິດສະດີຢູ່ໃນກຸ່ມນີ້, ແລ້ວຍັງຈະກ່າວເຖິງທິດສະດີຂະບວນການປະມວນສານ ( Informa – tion Processong Approach) ເຊິ່ງເປັນທິດສະດີປັນຍານິຍົມທີ່ໃໝ່ທີ່ສຸດ ແລະ ກຳລັງໄດ້ຮັບຄວາມສົນໃຈຫຼາຍໃນປະຈຸບັນນີ້.

## 1. ທິດສະດີການຮຽນຮູ້ກຸ່ມເກັດສະຕັນ

ໃນຊ່ວງ 30 ປີທຳອິດຂອງສັດຕະວັດທີ່ 20 ເຊິ່ງແມ່ນໄລຍະກຸ່ມພຶດຕິກຳນິຍົມກຳລັງໄດ້ຮັບຄວາມນິຍົມຢ່າງຫຼວງຫຼາຍຢູ່ໃນສະຫະລັດເມລິການັ້ນ ກໍມີກຸ່ມຈິດຕະວິທະຍາກຸ່ມອື່ນໆເກີດຂຶ້ນຢູ່ທາງຢູໂລບເຊັ່ນ: ກຸ່ມຈິດວິເຄາະໄດ້ເກີດຂຶ້ນຢູ່ກຸ່ມວຽນນາ, ເພຍເຈຕ ເກີດຢູ່ກຸງເຈນີວາ, ການວັດຈິດຕະວິທະຍາເກີດຂຶ້ນຢູ່ຝັ່ງເສດ ແລະ ອັງກິດ ແລະ ຈິດຕະວິທະຍທີ່ນິຍົມເກີດຢູ່ເຢຍລະມັນ

ຜູ້ນຳຂອງກຸ່ມປັນຍານິຍົມໃນໄລຍະທຳອິດໄດ້ແກ່ເ ເວີໄທເມີ ( Max  Wertseimer: 1880-1943 )ຄອຟກາ( Kurt kwffa : 1886-1941 ) ໂຄເລີ ( Wolfgang klohler : 1887-1963 ) ທັງໝົດບັນດາທ່ານເລົ່ານີ້ໄດ້ຮຽກຕົນເອງວ່າ: ກຸ່ມ ເກສຕັລ ( Gestalt) ຄຳວ່າ ( Gestalt ) ມີຄວາມໝາຍວ່າການຈັດລະບຽບອົງປະກອບຕ່າງໆ ຫຼື ສ່ວນຍ່ອຍເຂົ້າກັນໃຫ້ເປັນໂຄງສ້າງລວມທີ່ມີຄວາມໝາຍນັ້ນເອງ.

### 1.1. ແນວຄິດພື້ນຖານ

ນັກຈິດຕະວິທະຍາກຸ່ມນີ້ຈະມີຄວາມເຊື່ອວ່າ:  ຄົນເຮົາຈະຮັບຮູ້ສິ່ງອ້ອມຕົວໃນລັກສະນະທີ່ມີຄວາມໝາຍໃນຮູບລວມທັງໝົດຈະບໍ່ຮັບຮູ້ແຕ່ສະເພາະລວມໃດໜຶ່ງ ຫຼື ສິ່ງກະຕຸ້ນທີ່ແຍກອອກຈາກກັນ, ເຮົາຈະຮັບຮູ້ໃນລັກສະນະທີ່ມີຄວາມໝາຍທັງໝົດຮູບຮ່າງ, ຈະບໍ່ເລືອກຮັບຮູ້ສະເພາະເສັ້ນ, ສີສັນ ຫຼື ສ່ວນໃດ ສ່ວນໜຶ່ງເທົ່ານັ້ນ.

ຈິດຕະວິທະຍາພະຍາຍາມປະຢຸກທິດສະດີໃນສະໜາມວິຊາຟີຊິກມາອະທິບາຍປະກົດການທາງຈິດດັ່ງນັ້ນ: ເພິ່ນຈຶ່ງຮຽກທິດສະດີນີ້ວ່າ “ ທິດສະດີສະໜາມ “ ( field theory)ຄຳວ່າສະໜາມກະທົບສ່ວນໃດສ່ວນໜຶ່ງພາຍໃນລະບົບຍ່ອມຈະສົ່ງຜົນກະທົບໄປເຖິງສ່ວນອື່ນໆທັງໝົດລະບົບດຽວກັນນັ້ນ ເຊັ່ນ: ເຮົາຈະຖືວ່າຕົວຂອງເຮົາກໍ່ແມ່ນສະໜາມ ຫຼືເປັນລະບົບຂອງຄວາມສຳພັນຂອງລະບົບໜຶ່ງເຮົາຈະເຫັນວ່າ ຖ້າຕີນມີອາການເຈັບປວດ ຢູ່ນິ້ວຕີນ ຫຼື ມີອາການຖອກທ້ອງມັນກໍຈະເປັນຜົນສະທ້ອນໄປທຸກພາກສ່ວນຂອງຮ່າງກາຍ ສະນັ້ນດ ການສຶກສາລະບົບຂອງຮ່າງກາຍຈຶ່ງຈຳເປັນຕ້ອງສຶກສາລັກສະນະທີ່ກ່ຽວຂ້ອງພົວພັນກັບແບບທັງໝົດ ເຮົາຈະບໍ່ສຶກສາໃນລັກສະນະ ທີ່ແຍກ ແຕ່ລະສ່ວນອອກຈາກກັນຢ່າງອິດສະຫຼະ.

**1.2. ຫຼັກການຮັບຮູ້**

ການຮັບຮູ້ ( Perception) ຖືວ່າແມ່ນພື້ນຖານທີ່ສຳຄັນຂອງທິດສະດີການຮຽນຮູ້ຂອງກຸ່ມເກສຕັລ ພວກທ່ານໄດ້ສຶກສາ ແລະ ຄົ້ນຄ້ວາກ່ຽວກັບກົດຂອງການຮັບຮູ້ຢ່າງຫຼວງຫຼາຍ ແຕ່ກົດທີ່ຄວບຄຸມກົດອື່ນໆກໍ່ແມ່ນກົດແປກແນນ

( Law of Pragnanz ) ທ່ານຄອຟກາຟ ໄດ້ອະທິບາຍກົດຂໍ້ນີ້ວ່າ: ການຮັບຮູ້ຈະມີການຈັດໝວດໝູ່ ຫຼື ຈັດຢູ່ໃນຮູບທີ່ດີໝາຍຄວາມວ່າການເບິ່ງພາບນັ້ນໃຫ້ເປັນຮູບທີ່ມີຄວາມໝາຍ, ມີຄວາມສົມບູນ, ມີລະບຽບກົດເກນ ເຖິງວ່າພາບນັ້ນຈະບໍ່ມີຄວາມໝາຍຂາດລະບຽບກົດເກນ ຫຼື ຂາດຄວາມສົມບູນກໍ່ຕາມ.

ພື້ນຖານຂອງການຈັດລະບຽບໝວດໝູ່ ຫຼື ຮູບຮ່າງຂອງສິ່ງທີ່ຮັບຮູ້ກໍ່ແມ່ນການແຍກສະໜາມການຮັບຮູ້ອອກເປັ 2 ສ່ວນຄື: ສ່ວນທີ່ເປັນພາບ ( FIgure) ເຊິ່ງເປັນສ່ວນທີ່ເດັ່ນເປັນຈຸດສູນລວມຂອງສິ່ງທີ່ສົນໃຈ ແລະ ອີກສ່ວນໜຶ່ງກໍ່ແມ່ນພື້ນ ( Ground) ເຊິ່ງເປັນສ່ວນປະກອບຂອງພາບ ເປັນສ່ວນທີ່ຮັບຮອງຂອງພື້ນ ຕົວຢ່າງ: ຖ້າເຮົາສົນໃຈຜູ້ໃດຜູ້ໜຶ່ງ

ທີ່ຢູ່ໃນຫ້ອງຮຽນດຽວກັນ, ບຸກຄົນທີ່ເຮົາສົນໃຈ ນັ້ນກໍຈະເປັນພາບ, ສ່ວນຄົນອື່ນໆ ຫຼື ສິ່ງອື່ນໆທີ່ເຮົາບໍ່ສົນໃຈກໍ່ຈະເປັນພື້ນ ຫຼື ເວົ້າຢ່າງງ່າຍໆວ່າສິ່ງທີ່ເຮົາຮັບຮູ້ນັ້ນກໍ່ແມ່ນພາບ, ແລະ ສວ່ນທີ່ເຮົາຮັບຮູ້ແຕ່ບໍ່ທັນປະກົດເປັນຮູບຮ່າງກໍ່ຈະແມ່ນພື້ນຮູບໜ້າ ພາບພິມຫີນທີ່ມີຊື່ສຽງຂອງ ເອສເຊີ ເປັນພາບທີ່ເຮົາສາມາດເບິ່ງສ່ວນສີດຳ ແລະ ສີຂາວເປັນພາບ ຫຼື ເປັນພື້ນກໍ່ໄດ້.




ນັກຈິດຕະວິທະຍາກຸ່ມເກສະຕັລທໄດ້ອະທິບາຍວ່າຄວາມແຕກຕ່າງຂອງພື້ນຈະມີອິດທິພົນຕໍ່ການຮັບຮູ້ພາບຂອງບຸກຄົນຕົວຢ່າງຈຸດສີເທົ່າຖ້ານອນຢູ່ໃນພື້ນສີດຳມັນຈະເປັນສີເທົາອ່ອນແຕ່ຖ້ານອນຢູ່ໃນພື້ນສີຈາງມັນກໍ່ຈະການເປັນສີເທົາແກ່ນັກຈິດຕະວິທະຍາກຸ່ມນີ້ມີຄວາມສົນໃຈໃນການສຳພັນລະຫວ່າງພື້ນ ແລະ ພາບເຊິ່ງໄດ້ຕັ້ງກົດລະບຽບ, ໝວດໝູ່ ຫຼືຮູບຮ່າງຂອງສິ່ງທີ່ຮັບຮູ້ໄດ້ຢ່າງຫຼວງລາຍ ແຕ່ກົດທີ່ສຳຄັນທີ່ມັກກ່າວເຖິງສະເໜີຈະມີດັ່ງນີ້:

**1) ກົດຄວາມໃກ້ສິດ**

ກົດນີ້ໄດ້ເອີ້ນວ່າ: ສິ່ງກະຕຸ້ນໃດທີ່ຢູ່ໃກ້ໆກັນ ພວກເຮົາຈະມັກຄິດວ່າເປັນພວກດຽວກັນ.



ແມ່ນຕົວຢ່າງຂອງການຈັດມວດໝູ່ຂອງສິ່ງກະຕຸ້ນຕາມກົດຄວາມໃກ້ສິດ ແຖທີ1 ເຮົາສັງເກດເຫັນວ່າວົງມົນເປັນ 4 ກຸ່ມ ແຖວທີ 2 ເຫັນວົງມົນເປັນ 3 ກຸ່ມ ແລະ ແຖວທີ່ 3 ຈະເຫັນວົງມົນກົມ 2 ກຸ່ມ ອີງຕາມຫຼັກໃກ້ສຊິດກັນແມ່ນຈັດເປັນໝວດດຽວກັນ

**2) ກົດຄວາມຄ້າຍກັນ**

ກົດນີ້ຈະມີໃຈຄວາມວ່າສິ່ງກະຕຸ້ນໃດໆ ກໍຕາມທີ່ມີລັກສິນະຮູບຮ່າງ. ຂະໜາດ ຫຼື ສີຄ້າຍໆ ຄືກັນ ເຮົາມັກຮັບຮູ້ວ່າເປັນພວກດຽວກັນ.

| | | | | | | | |
|---|---|---|---|---|---|---|---|
| X | O | X | O | X | O | X | O |
| X | O | X | O | X | O | X | O |
| X | O | X | O | X | O | X | O |
| X | O | X | O | X | O | X | O |
| X | O | X | O | X | O | X | O |

ຕົວຢ່າງຂອງການຈັດໝວດໝູ່ຂອງສິ່ງກະຕຸ້ນຕາມກົດຄ້າຍຄືກັນຢູ່ໃນພາບທີ່ເຮົາຮັບຮູ້ເປັນແຖວ ໃນແຖວຕັ້ງໂດຍແຍກກຸ່ມຕົວ x ແລະ o

**3) ກົດຂອງຄວາມຕໍ່ເນື່ອງ ( PrIncIple of Continuity)**

ບາງຄັ້ງຮຽກກົດນີ້ວ່າ : ( PrIncIple of Direction) ໃຈຄວາມສຳຄັນຂອງກົດນີ້ກໍ່ແມ່ນ ບຸກຄົນທີ່ມີແນວໂນ້ມຈະຮັບຮູ້ສິ່ງຕ່າງໆໃນລັກສະນະທີ່ມີຄວາມຕໍ່ເນື່ອງ ຫຼື ມີທິດທາງໄປທາງດຽວກັນ ຕົວຢ່າງການຮັບຮູ້ຕາມກົດຕໍ່ເນື່ອງ ຈາກພາບນີ້ ເຮົາມັກຈະເຫັນເປັນຮູບລັກສະນະຂີດເປັນວົງ, ກໍ່ຍ້ອນເຮົາ ໄດ້ຮັບຮູ້ພາບໃນລັກສະນະຕໍ່ເນື່ອງ ຫຼື ໄປໃນທິດທາງດຽວກັນ

**4) ກົດຄວາມງ່າຍ ( PrIncIple of Simeplicity)**

ໃນການຮັບຮູ້ພວກເຮົາມັກຮັບຮູ້ພາບຕ່າງໆໃນລັກສະນະທີ່ເປັນຮູບຊີງງ່າຍຫຼາຍກ່ວາຈະຮັບຮູ້ໃນ ລັກສະນະທີ່ເປັນຮູບຊັບຊ້ອນ



ຕົວຢ່າງຂອງການຮັບຮູ້ຂອງກົດຄວາມງ່າຍໆ: ພາບທີ່ເຮົາມັກຮັບຮູ້ແມ່ນພາບ ສີ່ຫຼ່ຽມທັບຮູບສາມຫຼ່ຽມ ຫຼາຍກ່ວາທີ່ຈະຮັບຮູ້- ຮູ້ເປັນຮູບຊົງເລຂາະນິດທີ່ຊັບຊ້ອນ

5) **ກົດການປິດ ( PrIncIple of  Closure):**

ບາງຄັ້ງກໍ່ເອີ້ນນີ້ວ່າກົດຄວາມສົມບູນ ເພາະພວກເຮົາຈະເຫັນພາບທີ່ຂາດຄວາມສົມບູນໃຫ້ເປັນພາບທີ່ສົມບູນ ຫຼື ເບິ່ງເສັ້ນທີ່ຂາດຕອນໃຫ້ຕິດ ຫຼື ໃຫ້ຕໍ່ກັນໃຫ້ເປັນຮູບຂຶ້ນມາໄດ້



ພາບສະແດງການຮັບຮູ້ຕາມກົດການປິດເຮົາຈະເຫັນພາບທີ່ບໍ່ສົມບູນເປັນຮູບຮ່າງສົມບູນຂຶ້ນມາຕາມກົດຂໍ້ນີ້ໄດ້ສັງເກດເຫັນວ່າ ກົດການຮັບຮູ້ທັງ 5 ຂໍ້ນີ້ ( Law of pragnanz ) ທັງສິ້ນ ການຈັດລະບຽບໝວດໝູ່ ຫຼື ຮູບຮ່າງຂອງສິ່ງຕ່າງໆນັ້ນມັກຢູ່ໃນຮູບທີ່ມີຄວາມໝາຍ, ມີຄວາມສົມບູນ ແລະ ເປັນຮູບຮ່າງທີ່ງ່າຍໆນັ້ນເອງ

**1.3. ການຮຽນຮູ້ໃນທັດສະນະຂອງກຸ່ມເກັດສະຕັນ**

ຈິດຕະນັກວິທະຍາກຸ່ມນີ້ຈະມີຄວາມເຫັນວ່າ ເມື່ອເຮົາປະເຊີນກັບສະຖານະການທີ່ມີບັນຫາພາວະຂອງຄວາມຮູ້, ຄວາມເຂົ້າໃຈກໍ່ຈະຢູ່ໃນລັກສະນະທີ່ບໍ່ສົມບູນຂອງຄວາມຮູ້ຄວາມເຂົ້າໃຈຈະມີລັກສະນະເປັນແຮງຈູງໃຈທີ່ຊຸກຍູ້ໃຫ້ອິນຊີມີກົດຈະກຳເພື່ອຈະເຮັດໃຫ້ເກີດມີພາວະທີ່ສົມດູນຂອງຄວາມຮູ້, ຄວາມເຂົ້າໃຈຂຶ້ນມາ.

ໃນທັດສະນະຂອງກຸ່ມເກສຕັລ, ເພິ່ນໄດ້ຖືວ່າ: ການຮຽນຮູ້ແມ່ນປະກົດການທີ່ພົວພັນກັບຄວາມຮູ້ຄວາມເຂົ້າໃຈ, ເວົ້າອີກຢ່າງໜຶ່ງກໍ່ແມ່ນການຮຽນຮູ້ຈະເປັນເລື່ອງການຈັດລະບຽບໝວດໝູ່ ຫຼື ຮູບຮ່າງຂອງປະກົດການໃຫ້ເປັນໂຄງສ້າງຂອງຄວາມຮູ້ຄວາມເຂົ້າໃຈ. ໃນເມື່ອຄົນເຮົາປະເຊີນກັບບັນຫາ ກໍ່ຈະຮຽນຮູ້ການແກ້ບັນຫາດ້ວຍການຮັບຮູ້ບັນຫາແບບທັງໝົດ ແລະ ພະຍາຍາມຈັດຮູບຂອງສິ່ງທີ່ຮັບຮູ້ນັ້ນຂຶ້ນມາໃໝ່, ໃນຄະນະທີ່ຊອກຫາຊ່ອງທາງທີ່ຈະແກ້ໄຂໃນບັນຫານັ້ນ.

ການປ່ຽນຂອງສິ່ງຮັບຮູ້ ຫຼື ການສັງເກດເຫັນວິຖີທາງໃໝ່ນັ້ນ ຈະເກີດຂຶ້ນພາຍຫຼັງເຮົາຄິດມີການໄຕ່ຕອງແລ້ວ ແລະເປັນສິ່ງທີ່ເກີດຂຶ້ນຢ່າງກະທັນຫັນ, ການປ່ຽນແປງຮູບແບບຂອງສິ່ງທີ່ຮັບຮູ້ໃນລັກສະນະທີ່ເຮັດໃຫ້ເກີດມີຄວາມເຂົ້າໃຈຢ່າງກະຈ່າງແຈ້ງ ຈະຮຽກວ່າ " ການຢັ້ງເຫັນ " ຫຼື ການຢັ້ງຮູ້ " ໃນພາສາອັງກິດແມ່ນ ( Insight).

ນັກຈິດຕະວິທະຍາກຸ່ມເກສຕັລ ໄດ້ສະຫຼຸບແນວຄິດວ່າ: ການຮຽນຮູ້ເກີດຂຶ້ນເມື່ອເຮົາສາມາດແກ້ໄຂບັນຫາທີ່ປະເຊີນຢູ່ໂດຍນຳເອົາຄວາມເຂົ້າໃຈກະຈ່າງແຈ້ງ ຫຼື ການຢັ້ງເຫັນເຫດການທີ່ປະກອບເປັນຮູບບັນຫານັ້ນ, ການຢັ້ງເຫັນດັ່ງກ່າວແມ່ນເກີດມາຈາກຜູ້ຮຽນສາມາດສັງເກດ ຫຼື ຮັບຮູ້ຄວາມສຳພັນຂອງເຫດການ ຫຼື ບັນຫາທີ່ປະກົດຢູ່ ຈະບໍ່ເກີດຈາກການເຊື່ອມໂຍງລະຫວ່າງສິ່ງກະຕຸ້ນ ແລະ ການຕອບສະໜອງຄູ່ໃດ ຄູ່ໜຶ່ງ

ເຮົາສັງເກດເຫັນວ່າ: ແນວຄວາມຄິດນີ້ຈະຕ່າງການຮຽນຮູ້ໃນທັດສະນະຂອງທ່ອນໄດ ເພາະທ່ອນໄດ ຖືວ່າການຮຽນຮູ້ນັ້ນຈະຄ່ອຍໆເກີດຂຶ້ນເທື່ອລະໜ້ອຍຢ່າງຕໍ່ເນື່ອງກັນດ້ວຍການລອງຜິດ ລອງຖືກແບບສຸ່ມເດົາ ແຕ່ການຮຽນຮູ້ຈາກການຢັ້ງເຫັນ ຈະເກີດຂຶ້ນທັນຢ່າງທີທັນໃດຈະບໍ່ເກີດຂຶ້ນແບບສະສົມເທື່ອລະໜ້ອຍ

ຜົນງານການລອງກ່ຽວກັບການຮຽນຮູ້ແບບຢັ້ງເຫັນທີ່ມີຊື່ສຽງທີ່ສຸດກໍ່ແມ່ນການສຶກສາຂອງທ່ານໂຄເລີຣ ທ່ານໄດ້ທົດລອງຢູ່ມະຫາວິທະຍາໄລ ເບີລິນໃນປີ ຄ.ສ 1913 ເຖິງປີ ຄ.ສ 1917

ທ່ານໂຄເລີຣໄດ້ເຮັດການທົດລອງຫຼາຍຢ່າງ, ການທົດລອງທີ່ສຳຄັນທີ່ສຸດກໍ່ແມ່ນການທົດລອງ " ກັບລິງ " ທ່ານໄດ້ເອົາໝາກກ້ວນແຂວນໄວ້ເທິງເພດານທີ່ສູງເກີນກ່ວາລິງຈະຢື້ມືເຖິງໄດ້. ຢູ່ໃນບໍລິເວນນັ້ນຈະມີລັງໄມ້ວາງໄວ້ 2 ລັງ ທ່ານສັງເກດເຫັນວ່າ ລິງໄດ້ທົດລອງຢື້ຂຶ້ນ ແລ້ວ ຢື້ມືເພື່ອຈະຈັບເອົາໝາກກ້ວຍມາກິນ ແຕ່ເຂົາບໍ່ສາມາດຢື້ເຖິງໄດ້ ຫຼັງຈາກນັ້ນລິງໄດ້ງຽບໄປໜ້ອຍໜຶ່ງ ແລ້ວກໍ່ຫຼຽວເບິ່ງຮອບຕົວມັນແລ້ວກໍ່ຟ້າວຟັ່ງຍົກລັງໄມ້ອັນໜຶ່ງມາຊ້ອນລັງໄມ້ ອັນທີ່ໜຶ່ງ ລິງກໍ່ໂດດຂຶ້ນຢືນຢູ່ເທິງລັງໄມ້ເຂົາກໍ່ຈັບໝາກກ້ວຍມາກິນໄດ້.

ທ່ານໂຄເລີ ໄດ້ອະທິບາຍພຶດຕິກຳລິງວ່າ ເມື່ອລິງບໍ່ສາມາດຢື້ມືໄປຈັບໝາກກ້ວຍມາກິນໄດ້ ມັນກໍ່ເກີດມີບັນຫາ ຫຼັງຈາກຄິດໜ້ອຍໜຶ່ງມັນກໍ່ເຫັນຊ່ອງທາງແກ້ໄຂບັນຫາໄດ້ ( ເກີດການຢັ້ງເຫັນ )ເປັນການເຫັນແນວທາງແກ້ໄຂບັນຫາໂດຍບໍ່ໄດ້ອາໄສໃສ່ການລອງຜິດລອງຖືກແຕ່ຢ່າງໃດເລີຍ

ເຖິງຢ່າງໃດກໍ່ຕາມທ່ານໂຄເລີ ໄດ້ທົດລອງໂດຍສະເໜີບັນຫາໃໝ່ໆກໍ່ຈະເຫັນວ່າລິງບໍ່ໄດ້ແກ້ບັນຫາໄດ້ສະເໝີໄປທ່ານພົບວ່າ ລິງແກ້ບັນຫາໄດ້ກໍ່ຕໍ່ເມື່ອການກະກຽມອຸປະກອນ ຫຼື ອົງປະກອບທີ່ເອື້ອອຳນວຍໃຫ້ແກ່ການແກ້ບັນຫາຢ່າງເປັນລະບຽບເຊັ່ນ: ທ່ານທົດລອງໂດຍນຳເອົາລິງໄປຂັງໄວ້ໃນກົງ. ຂ້າງນອກກົງຈະມີໝາກກ້ວຍສາງໄວ້ໄກເກີນກ່ວາລິງຈະຢື້ມືຈັບກິນໄດ້ ແຕ່ຢູ່ໃກ້ກົງຈະມີໄມ້ ທ່ອນສັ້ນ ແລະທ່ອນຍາວວາງໄວ້, ຖ້າວ່າທ່ານວາງໄມ້ໄວ້ຂ້າງດຽວກັບໝາກກ້ວຍ ລິງກໍ່ຈະແກ້ບັນຫາໄດ້ໄວ ( ຍ້ອນເກີດການຢັ້ງຮູ້) ແຕ່ທ່ານໄດ້ທົດລອງເອົາໄມ້ວາງໄວ້ຕ່າງທິດກັບກ້ວຍ ແມ່ນລິງຈະເກີດການຢັ້ງເຫັນແມ່ນຊ້າ ຫຼື ບໍ່ສາມາດການຢັ້ງຮູ້ເລີຍກໍ່ເປັນໄດ້. ຢູ່ໃນການທົດລອງນີ້ ເບື້ອງຕົ້ນລິງເອົາໄມ້ສັ້ນເຂ່ຍເອົາໝາກກ້ວຍແຕ່ບໍ່ເຖິງ ລິງຈິ່ງເອົາໄມ້ສັ້ນເຂ່ຍເອົາໄມ້ຍາວ ແລ້ວລິງກໍ່ເອົາຍາວເຂ່ຍເອົາກ້ວຍໃນທີ່ສຸດລິງກໍ່ໄດ້ກິນໝາກກ້ວຍ.

ຜ່ານການທົດລອງທ່ານໂຄເລີໄດ້ສະຫຼຸບວ່າ, ການຮຽນຮູ້ແມ່ນພຶດຕິກຳທີ່ເກີດຂຶ້ນຈາກການຄິດ, ແລ້ວເຫັນຄວາມສຳ ພັນຢ່າງກະຈ່າງແຈ້ງລະຫວ່າງ ອົງປະກອບບັນຫາດ ແມ່ນການແກ້ບັນຫາດ້ວຍການ ກະທຳພຽງຄັ້ງດຽວຈະບໍ່ໄດ້ເກີດຂຶ້ນດ້ວຍວິທີສຸ່ມເດົາ ຫຼື ລອງຜິດລອງຖືກຫຼາຍໆຄັ້ງເມື່ອແກ້ບັນຫາໄດ້ ແລ້ວ ຄັ້ງຕໍ່ໄປກໍ່ຈະແກ້ບັນຫານັ້ນໄດ້ທັນທີໂດຍບໍ່ຕ້ອງເສຍເວລາຄິດ ກໍ່ເພາະວ່າການຮຽນຮູ້ເດີມນັ້ນຍັງມີ ຢູ່.

### 1.4. ຫຼັກການຂອງຈິດຕະວິທະຍາກຸ່ມເກັດສະຕັນກັບການສອນ

ຈິດຕະວິທະຍາກຸ່ມເກສຕັລ ຄວາມໝາຍ ແລະ ຄວາມເຂົ້າໃຈແມ່ນສິ່ງສຳຄັນຂອງການຮຽນຮູ້ ສ່ວນຍ່ອຍໆຈະຕ້ອງລວມກັນເຂົ້າເປັນສ່ວນລວມເທົ່ານັ້ນຈິ່ງຈະມີຄວາມໝາຍເຊັ່ນ: ຊື່ຂອງບຸກຄົນ. ວຜນ ປະຫວັດສາດຕ່າງໆຈະມີຄວາມໝາຍໜ້ອຍຖ້າບໍ່ມີເຫດການພົວພັນກັບເຫດການປະຈຸບັນທີ່ກ່ຽວຂ້ອງກັບ ປະຫວັດສາດ ສະນັ້ນຢູ່ໃນການຮຽນ-ການສອນຄູຈະຕ້ອງເປັນຜູ້ຊ່ວຍແນະແນວເພື່ອໃຫ້ນັກຮຽນຄົ້ນ ພົບ ຄວາມໝາຍ ແລະ ເກີດມີຄວາມເຂົ້າໃຈເລື່ອງທີ່ຕົນຈະສອນ .

ການຮຽນ-ການສອນຄວນເປັນໄປລັກສະນະຜູ້ຮຽນໄດ້ເຫັນຮູບຮ່າງທັງໝົດ ຫຼື ໂຄງສ້າງລວມ ຂອງທີ່ຈະຮຽນແລ້ວຈິ່ງຮຽນໃນສ່ວນຍ່ອຍໆ ການຮຽນໃນແຕ່ລະວິຊາຄູອາດແບ່ງອອກເປັນຫົວຂໍ້ຍ່ອຍໆ ແຕ່ລະຫົວຂໍ້ມີຄວາມໝາຍທີ່ສົມບູນ ແລະ ມີຄວາມສຳພັນທີ່ເຊື່ອມໂຍງກັນເຊັ່ນ: ຄູສອນກ່ຽວກັບ ພູມີ ປະເທດລາວ ຄູສອນອາດເລີ່ມຕົ້ນດ້ວຍແຜນທີ່ປະເທດລາວ ຄູສອນອາດເລີ່ມຕົ້ນດ້ວຍແຜນທີ່ທົ່ວ ປະເທດລາວ ແລ້ວກໍ່ແບ່ງເປັນພາກສ່ວນຕ່າງໆ , ໃນແຕ່ລະພາກຈະຖືເປັນສ່ວຍຍ່ອຍທີ່ມີຄວາມໝາຍ ແລະ ມີຄວາມສຳພັນກັບພາກອື່ນໆ.

ຫຼັກການເລື່ອງພາບ ແລະ ພື້ນກໍ່ສາມາດນຳມາປະຍຸກເຂົ້າມນການສອນໄດ້ຢ່າງດີໃນເວລາບັນຍາຍ ຄູບໍ່ຄວນໃຫ້ສຽງຂອງຕົນດັງແບບບໍ່ສະໝ່ຳສະເໝີ ແຕ່ໃຫ້ມີສຽງຂຶ້ນ, ສຽງລົງ ຫຼື ເວົ້າຊ້າໆສະລັບການໄປ ໂດຍສະເພາະແມ່ນຈຸດທີ່ສຳຄັນຄູຕ້ອງການເນັ້ນກໍ່ຕ້ອງເວົ້າດັງ ແລະ ເວົ້າໃຫ້ຊ້າລົງ ຫຼື ເວົ້າຊ້ຳກັນຫຼາຍເທື່ອ ທັງນີ້ກໍ່ເພື່ອໃຫ້ສຽງຂອງຄູນັ້ນເປັນພາບທີ່ສົນໃຈ, ເຮັດໃຫ້ຜູ້ຮຽນມີຄວາມຕັ້ງໃຈ ແລະ ຮັບຮູ້ໃນສິ່ງທີ່ຄູ ກຳລັງເວົ້າ ຫຼັກການນີ້ເພີ່ມຍັງໃຊ້ເຂົ້າໃນການຜະລິດກີການສອນເຊັ່ນ: ການໃຊ້ສີສັນ, ການຂີດເສັ້ນໃສ່ກ້ອງ ຄວາມສຳຄັນ ການໃຊ້ຂອບເພື່ອເນັ້ນບ່ອນເປັນຈຸດກາງຂອງເລື່ອງການໃຊ້ຕົວໜັງສືທີ່ມີຂະໜາດໃຫຍ່ ຫຼື ໃຊ້ຕົວເນີ້ງໃນເວລາຕ້ອງການເນັ້ນເປັນພິເສດ ແລະ ອື່ນໆ.

## 2. ທິດສະດີຂະບວນການປະມວນສານ ( lnformahion P rocessing Approach)

ທິດສະດີກຸ່ມປັນຍານິຍົມແມ່ນທິດສະດີທີ່ສົນໃຈຫຼາຍທີ່ສຸດໃນຍຸກປະຈຸບັນໂດຍສະເພາະແມ່ນ ທິດສະດີການປະມວນສານ, ທິດສະດີນີ້ເກີດມາຈາກຜົນການວິໄຈກ່ຽວກັບຂະບວນການຮັບສານຂໍ້ມູນ, ການໃສ່ໃຈ, ການຮັບຮູ້, ການເຂົ້າລະຫັດເພື່ອຈຳ, ການຮຽກສາລະຂໍ້ມູນຕ່າງໆທີ່ໄດ້ເກັບໄວ້ອອກມາໃຊ້. ຜົນຂອງການສຶກສາເຫຼົ່ານີ້ໄດ້ນຳມາພັດທະນາ ແລະ ໄດ້ຈັດລະບຽບເປັນອົງຄວາມຮູ້ ແລະ ເປັນທິດສະດີ ຂຶ້ນມາ, ສະນັ້ນທິດສະດີນີ້ຈິ່ງບໍ່ໄດ້ມີຜູ້ໃດຜູ້ໜຶ່ງເປັນເຈົ້າຂອງຄືກັບຫຼາຍໆທິດສະດີທີ່ກ່າວມາແລ້ວນັ້ນ.

**2.1. ແນວຄວາມຄິດພື້ນຖານ**

ທິດສະດີຂອງການປະມວນສານ ໄດ້ອະທິບາຍການຮຽນຮູ້ຂອງມະນຸດໃນຮູບແບບການທຳງານຂອງຄອມພິວເຕີກໍ່ຄື: ຂະບວນການທຳງານຂອງຄອມພິວເຕີຈະເລີ່ມຕົ້ນດ້ວຍການຮັບຂ່າວສານຂໍ້ມູນ, ການຈັດການກະທຳ ຫຼື ການປ່ຽນແປງຮູບແບບສາລະຂອງຂໍ້ມູນທີ່ໄດ້ຮັບເຂົ້າມາ, ການເກັບກຳຂໍ້ມູນ ແລະ ການຮຽກຂໍ້ມູນທີ່ເກັບໄວ້ອອກມາໃຊ້ເມື່ອຕ້ອງການ ຂະບວນການທັງໝົດນີ້ຈະຖືກຄວບຄຸມໂດຍໂປແກຼມ ຫຼື ຄຳສັ່ງທີ່ກຳນົດໄວ້ວ່າ ຂໍ້ມູນທັງຫຼາຍຈະຖືກການດຳເນີນການແນວໃດ, ເວລາໃດ ຢ່າງເປັນລະບົບ.

ນັກຈິດຕະວິທະຍາກຸ່ມປັນຍານິຍົມມີບາງທ່ານໃຫ້ຄວາມຄິດວ່າ: ຮູບແບບການທຳງານຂອງຄອມພິວເຕີເປັນພຽງການອຸປະມາການທຳງານສະໝອງເທົ່ານັ້ນ ແຕ່ກໍ່ມີບາງທ່ານສຶກສາໃນຮູບແບບທີ່ເຮັດໃຫ້ເກີດໝ!ຍທີ່ແທ້ຈິງວ່າ: ຂະບວນການຄິດຂອງຄອມພິວເຕີນັ້ນເປັນຈິງຄືກັບສະໝອງຂອງມະນຸດເຊັ່ນ: ໄດ້ສຶກສາຄອມພິວເຕີໃນຮູບແບບປັດຊະຍາການປະດິດ (   ) ເຊິ່ງເປັນການອອກແບບ ແລະ ຂຽນໂປຼແກຼມໃຫ້ຄອມພິວເຕີຄິດ ແລະ ແກ້ບັນຫາທີ່ຄ້າຍຄືກັບມະນຸດ ທີ່ກະທຳຢູ່.

ນັກຈິດຕະວິທະຍາຂະບວນການທາງປັນຍາໄດ້ສຶກສາການຮຽນຮູ້ໂດຍເນັ້ນໃສ່ຄວາມຈຳເປັນພື້ນຖານ




ຢູ່ໃນຮູບຈະປະກອບດ້ວຍ 3 ພາກສ່ວນ. ສ່ວນທຳອິດແມ່ນຂະບວນການເຂົ້າລະຫັດຂໍ້ມູນ ( Enoediong) ປຽບດັ່ງຂະບວນຮັບຂໍ້ມູນຈາກເປັນພິມຈາກເຄື່ອງຄອມພິວເຕີ. ສ່ວນທີ ສອງ (2 )ແມ່ນສ່ວນຂອງເກັບກຳຄວາມຈຳສານຂໍ້ມູນໄວ້ຊົ່ວຄາວ, ປຽບດັ່ງຂໍ້ມູນປະກົດຢູ່ເທິງຈໍພາບເວລາໃດເຮົາປິດເຄື່ອງ ຫຼື ໄຟຟ້າດັບຂໍ້ມູນນັ້ນກໍ່ຫາຍໄປ. ສ່ວນທີ່ສາມ ( 3)ແມ່ນສ່ວນທີ່ເກັບຈຳນວນຖາວອນສ່ວນນີ້ ປຽບ

ດັ່ງການບັນທຶກຂໍ້ມູນໄວ້ໃນ ( ຮາດດິດ)  ຫຼື ຈານບັນທຶກຂອງເຄື່ອງ ໄມໂຄຣຄອມພິວເຕີແຕ່ລະສ່ວນຂອງຂະບວນການດັ່ງກ່າວຈະເຊື່ອມໂຍງດ້ວຍລູກສອນທີ່ສະແດງເຖິງການຖ່າຍທອດສານຂໍ້ມູນຈາກສ່ວນໜຶ່ງໄປຫາອີກສ່ວນໜຶ່ງ ແລະ ທັງໝົດນີ້ຈະຢູ່ໃຕ້ການຄວບຄຸມຂອງກອງອຳນວຍ ການຄວບຄຸມຂອງຂະບວນການທັງລະບົບ ເຊິ່ງສະແດງໄວ້ຢູ່ໃນຂອບສີ່ຫຼ່ຽມຂ້າງເທິງສຸດຂອງພາບ, ເພິ່ນໄດ້ອະທິບາຍ
ແຕ່ລະສ່ວນຄືດັ່ງນີ້:

❖ **ສ່ວນທີ 1 . ການເຂົ້າລະຫັດ ( Encoding)**

ໃນການຮຽນຮູ້ຂອງມະນຸດ, ຂັ້ນທຳອິດທີ່ສຸດຂອງຂະບວນການປະມວນສານກໍ່ແມ່ນການຮັບຂໍ້ມູນຂ່າວສານດ້ວຍໄລຍະອະສຳພັດຢ່າງໃດຢ່າງໜຶ່ງ ຫຼື ຫຼາຍໆຢ່າງເຊັ່ນ: ( ໂດຍການໄດ້ຍິນ, ການເຫັນ, ການສຳພັດ ແລະ ອື່ນໆ ) ຈາກສິ່ງກະຕຸ້ນພາຍນອກ ອະໄວຍະອະສຳພັດຈະເກັບຂໍ້ມູນບາງສ່ວນໄວ້ຢູ່ໃນໜ່ວຍບັນທຶກ . ເຊິ່ງຢູ່ໃນຮູບມີສຽງດັ່ງກ້ອງຫູ ຫຼື ພາບ
ຕິດຕາ, ຖ້າວ່າສານຂໍ້ມູນນັ້ນຫາກວ່າມີຫຼາຍແມ່ນອິນຊີກໍ່ຈະເລືອກຮັບຮູ້ ແລະ ໃສ່ໃຈຂໍ້ມູນບາງຢ່າງ

❖ **ສ່ວນທີ 2 .  ການເກັບກຳໄລຍະສັ້ນ ( temporary storge )**

ຫຼັງຈາກຮັບຮູ້ ແລະ ໃສ່ໃຈຕໍ່ກັບສານຂໍ້ມູນຢ່າງໃດຢ່າງໜຶ່ງແລ້ວສາລະຕ່າງໆນັ້ນກໍ່ຈະສົ່ງໄປໜ່ວຍຄວາມຈຳໄລຍະສັ້ນ ເຊິ່ງແມ່ນໜ່ວຍຄວາມຈຳທີ່ຈຳກັດ  ການເກັບກຳສານຂໍ້ມູນນີ້ສະໝອງຈະເກັບ ຫຼື ບັນທຶກໄວ້ໃນໄລຍະສັ້ນໆຢູ່ຊ່ວງເວລານັ້ນ ແລະ ແມ່ນສານຂໍ້ມູນຈະຖືກນຳມາປະຕິບັດ ຫຼື ໃຊ້ເປັນປະໂຫຍດ.

❖ **ສ່ວນທີ 3     ການເກັບຈຳແບບຖາວອນ ( permanent storage )**

ສ່ວນຂໍ້ມູນຈາກໜ່ວຍຄວາມຈຳໄລຍະສັ້ນທີ່ມີຄຸນປະໂຫຍດບາງສ່ວນ, ຈະສົ່ງໄປຫາໜ່ວຍຄວາມຈຳຖາວອນ ຫຼື ໜ່ວຍເກັບຈຳໄລຍະຍາວ ເຊິ່ງມີສັກກາຍຍະພາບທີ່ຈະເກັບກຳຂໍ້ມູນໄວ້ໄດ້ຢ່າງຫຼວງຫຼາຍເຖິງການເກັບຈະຢູ່ຜິດກຸ່ມບ່ອນກໍ່ຕາມ  ໃນເມື່ອເຮົາຕ້ອງການໃຊ້ສານຂໍ້ມູນນັ້ນ, ເຮົາກໍ່ຈະຄົ້ນຄວ້າມັນ, ມີບາງຄັ້ງກໍ່ພົບມັນໄດ້ຢູ່ໃນລະດັບເທິງຂອງຈິດ, ແມ່ນລະນຶກໄດ້ທັນທີ ແຕ່ມີສານຂໍ້ມູນຈາກໜ່ວຍການຈຳນີ້ຈະຖືກຮຽກອອກມາໃຊ້ໂດຍຍ້ອນໄປຫາຄວາມຈຳໄລຍະສັ້ນ ແລະ ເກີດມີປະຕິບັດການໃນໜ່ວຍຄວາມຈຳນີ້ຂຶ້ນນັ້ນ ກໍ່ແມ່ນການປະສົມປະສານກັນລະຫວ່າງສານຂໍ້ມູນໃໝ່ທີ່ຫາກໍຮັບເຂົ້າມາກັບສານຂໍ້ມູນເກົ່າທີ່ຮຽກອອກມາໃຊ້ ເພື່ອຊ່ວຍໃຫ້ເກີດມີຄວາມຮູ້ ຫຼື ເຂົ້າໃຈສະຖານະການທີ່ກຳລັງປະເຊີນຢູ່ ຕົວຢ່າງ: ໃນເມື່ອທ່ານໄດ້ອ່ານຂໍ້ຄວາມທີ່ວ່າ: “ ຂະບວນການປະມວນສານ “ ທີ່ມີລັກສະນະທີ່ຄ້າຍຄືກັບການປະຕິບັດງານຂອງຄອມພິວເຕີ  ທ່ານກໍ່ຈະລະນຶກ ຫຼື ຟື້ນຄວາມຮູ້ກ່ຽວກັບຄອມພິວເຕີຈາກນ່ວຍຄວາມຈຳຖາວອນ, ເພື່ອທຳຄວາມເຂົ້າຄວາມໝາຍຂອງຂໍ້ຄວາມດັ່ງກ່າວ.

## 2.2. ການຮັບຮູ້ເຂົ້າລະຫັດ ( encoding)

### 2.2.1.  ການບັນທຶກຂໍ້ມູນດ້ວຍປະສາດສຳພັດ ( sensory pegister)

ການເກັບກຳຂໍ້ມູນດ້ວຍປະສາດສຳພັດແມ່ນການເກັບກຳສານຂໍ້ມູນທີ່ຍັງເປັນສານຂໍ້ມູນດິດໝາຍວ່າ ( ຍັງບໍ່ທັນໄດ້ໄຈ້ແຍກເປັນປະເພດ ແລະ ແປເປັນຄວາມໝາຍເທື່ອ)  ໄດ້ຊົ່ວຄາວກ່ອນຈະຄັດເລືອກ

ສານຂໍ້ມູນທີ່ສຳຄັນເພື່ອສົ່ງຜ່ານໄປຍັງຂະບວນການຮັບຮູ້ ແລະ ການຈຳຕໍ່ໄປ, ການສຶກສາກ່ຽວກັບເລື່ອງນີ້ສ່ວນຫຼາຍຈະເນັ້ນສະພາບການບັນທຶກຂໍ້ມູນດ້ວຍປະສາດ "ຕາ" ( Iconic Memory ) ແລະ ການບັນທຶກສານຂໍ້ມູນດ້ວຍປະສາດ " ຫູ " (Echoic Menory ) ເທົ່ານັ້ນການສຶກສາກ່ຽວກັບການບັນທຶກສານຂໍ້ມູນໂດຍການສຳພັດ, ການດົມກິ່ນ ແລະ ການສຳພັດນັ້ນຈະບໍ່ປະກົດໃຫ້ເຫັນ.

ຕົວຢ່າງຂອງການບັນທຶກສານຂໍ້ມູນດ້ວຍປະສາດສຳພັດ

1. ການບັນທຶກຂໍ້ມູນໂດຍປະສາດຕາ ( Iconic Memory )

ທ່ານຈົ່ງເອົາໄຟສາຍເບືອງໃສ່ຝາທີ່ມີຄວາມມືດແລ້ວເຄື່ອນໄຟສາຍນັ້ນໄປໃຫ້ເປັ ວົງມົນໂດຍໄວ, ເຮົາສາມາດເຫັນພາບແສງໄຟປະກົດເປັນວົງມົນຢູ່ (ແຕ່ຄວາມເປັນຈິງແລ້ວພາບຂອງແສງໄຟສາຍຢູ່ເທິງຝານັ້ນ, ມັນໄດ້ຫາຍໄປແຕ່ຕອນທຳອິດພຸ້ນ ແຕ່ທ່ານຍັງເຫັນຕິດຕາຢູ່ , ຈຶ່ງສາມາດຮັບຮູ້ເປັນວົງມົນໄດ້)

2. ການບັນທຶກສານຂໍ້ມູນດ້ວຍປະສາດຫູ (Echoic Menory )

ເຮົາເຄາະໂຕໃຫ້ເປັນຈັງຫວະຕິດຕໍ່ກັນໄດ້ ,ໂດຍຄວາມເປັນຈິງແລ້ວສຽງເຄາະໂຕຕອນທຳອິດໄດ້ຫາຍໄປແລ້ວ, ແຕ່ສຽງນັ້ນຍັງໄກ້ຍິນຢູ່, ເພາະສຽງນັ້ນກ້ອງຢູ່ໃນຫູ

3. ການບັນທຶກສານຂໍ້ມູນໂດຍຜິວໜັງ ( Tactll ຫຼື touch Mermory )

ທານຈົ່ງເອົາໃບຕານ 1 ໃບ ວາງເບື້ອງຄົມໄວ້ຂອບໂຕະດແລ້ວໃຊ້ມືລູບຄວາມຄົມຂອງໃບຕານໄປຕາມຂອບໂຕະນັ້ນ ທ່ານຈະຮູ້ສຶກເຖິງຄວາມຄົມຂອງໃບຕານຢູ່ດເຖິງແມ່ນວ່າມືຈະພົ້ນຂອບໂຕະແລ້ວກໍ່ຕາມ, ກໍ່ຍ້ອນວ່າໄດ້ມີການບັນທຶກສານຂໍ້ມູນນັ້ນໄວ້ໂດຍຜິວໜັງຂອງທ່ານ.

### 2.2.2. ການແປຄວາມໝາຍຂໍ້ມູນ

ສານຂໍ້ມູນທີ່ສົ່ງຜ່ານປະສາດສຳຜັດທີ່ບໍ່ທັນແປຄວາມໝາຍນັ້ນຈະເອີ້ນວ່າ " ຂໍ້ມູນດິບ " ຂໍ້ມູນດິບເຫຼົ່ານີ້ ຈະຖືກແປຄວາມໝາຍຢູ່ໃນຂະບວນການຮັບຮູ້. ການໄດ້ຄວາມໝາຍສ່ວນໜຶ່ງ ແມ່ນແປມາຈາກຄວາມຈິງທີ່ໄດ້ຮັບໂດຍກົງ. ແຕ່ມີບາງສ່ວນອາດແປຄວາມໝາຍມາຈາກການຈັດລະບຽບສານຂໍ້ມູນໂດຍອາໄສພື້ນຖານຄວາມຮູ້ເດີມທີ່ແຕ່ລະຄົນມີຢູ່ເຊັ່ນ: " 13 " ຖ້າມີຄົນຖາມວ່າ: ສິ່ງທີ່ເຫັນນັ້ນແມ່ນຕົວອັກສອນໃດ, ເຮົາກໍ່ຈະຕອບວ່າເປັນຕົວອັກສອນ ບີ (B) ແຕ່ຖ້າຖາມວ່າສິ່ງທີ່ເຫັນແມ່ນເລກໃດ, ເຮົາກໍ່ຈະຕອບວ່າເປັນເລກສິບສາມ ທັ້ງໆສິ່ງທີ່ເຫັນເປັນສິ່ງດຽວກັນ.

ຈາກຕົວຢ່າງຂ້າງເທິງຈະເຫັນວ່າ: ການແປຄວາມໝາຍສານຂໍ້ມູນຈະແຕກຕ່າງກັນໄປຕາມການຈັດລະບຽບສານຂໍ້ມູນຂອງແຕ່ລະບຸກຄົນ. ມີການຈັດລະບຽບສານຂໍ້ມູນແນວໃດນັ້ນຍ່ອມຂຶ້ນກັບຄວາມຮູ້ບຸກຄົນທີ່ມີຢູ່. ການແປຂໍ້ມູນຕາມຄວາມຮູ້ນີ້ຈະແບ່ງອອກເປັນ 2 ແນວຄວາມຄິດຄື:

1) **ການແປຂໍ້ມູນທີ່ເລີ່ມຈາກສ່ວນຍ່ອຍໄປຫາສ່ວນລວມ ຫຼື ຈາກລຸ່ມຂຶ້ນເທິງ ຫຼື ການວິເຄາະລັກສະນະຕ່າງໆ.**

ການທີ່ເຮົາເຫັນໂຕໝາ ແລະ ຮັບຮູ້ມັນວ່າ: ແມ່ນໝາ ກໍ່ຍ້ອນວ່າເຮົາໄດ້ເລີ່ມຕົ້ນການຮັບຮູ້ວ່າ: ໝາຈະມີຂົນ, ມີ ສີ່ ຂາມີຫູ, ມີຕາ.. ເຊິ່ງເປັນການເລີ່ມຕົ້ນດ້ວຍສ່ວນຍ່ອຍໆ ແລ້ວຈຶ່ງສະຫຼຸບວ່າມັນ ແມ່ນສິ່ງໃດ. ສະນັ້ນການແປຄວາມໝາຍໃນລັກສະນະນີ້ແມ່ນການເພີ່ມພິຈາລະນາ ລາຍລະອຽດລາຍລະອຽດ ຫຼື ຈາກສ່ວນຍ່ອຍຈຶ່ງສະຫຼຸບເປັນພາບລວມທີ່ຮຽກວ່າ. ເປັນຂະບວນການແປຄວາມໝາຍສານຂໍ້ມູນຈາກລຸ່ມຂຶ້ນເທິງນັ້ນກໍ່ປຽບໄດ້ ກັບການສ້າງຕຶກອາຄານຫຼາຍເຊັ່ນ: ເພິ່ນຈະກໍ່
ສ້າງພື້ນຖານຈາກລຸ່ມຂຶ້ນໄປ ເທື່ອລະສ່ວນກ່ອນ ຈຶ່ງຈະເປັນຕຶກທີ່ມີຄວາມໝາຍໄດ້.

2) **ການແປສານຂໍ້ມູນໂດຍພິຈາລະນາຈາກພາບລວມໄປສູ່ສ່ວນຍ່ອຍ ຫຼື ພິຈາລະນາຈາກເທິງລົງລຸ່ມ**

ການທີ່ພວກເຮົາຮັບຮູ້ວ່າ: ສິ່ງທີ່ຕົນໄດ້ພົບເຫັນນັ້ນແມ່ນສິ່ງໃດ , ເຮົາບໍ່ຈຳເປັນຕ້ອງໄດ້ວິເຄາະລັກສະນະຍ່ອຍທຸກຢ່າງຂອງສິ່ງກະຕຸ້ນນັ້ນ ແຕ່ຈະອີງໃສ່ຄວາມຮູ້ທີ່ມີຢູ່ກັບສິ່ງທີ່ຢູ່ຮອບຂ້າງ ຂອງສິ່ງນັ້ນມາຊ່ວຍແປຄວາມໝາຍເປັນສ່ວນລວມກ່ອນຈະພິຈາລະນາລາຍລະອຽດເຊັ່ນ: ນາຍພານເຂົ້າປ່າເພື່ອລ່າສັດ, ໃນເມື່ອເຂົາເຫັນສັດຕົວໜຶ່ງກະໂດດຢູ່ຫຼັງພຸ່ມໄມ້ເຂົາຈະແນມເຫັນພຽງແຕ່ແວັບດຽວກໍ່ສາມາດຮັບຮູ້ວ່ານັ້ນແມ່ນໂຕກະຕ່າຍ ຫຼື ເວລາເຮົາເບິ່ງແຜນທີ່ໂລກເຮົາຫຼຽວເບິ່ງກໍ່ຮູ້ໂລດວ່າ: ບໍລິເວນໃດແມ່ນທີ່ຕັ້ງຂອງປະເທດເຮົາ

ນັກຈິດຕະວິທະຍາກຸ່ມປັນຍານິຍົມໄດ້ມີຄຳເຫັນວ່າ: ກ່ອນທີ່ພວກເຮົາຈະຮັບຮູ້ວ່າສິ່ງກະຕຸ້ນນັ້ນແມ່ນສິ່ງໃດ ຈຳເປັນຕ້ອງໄດ້ອາໄສຂະບວນການແປສານຂໍ້ມູນໂດຍຂະບວນການຈາກລຸ່ມຂຶ້ນເທິງ ຈາກເທິງລົງລຸ່ມ ຫຼື ເວົ້າອີກຢ່າງໜຶ່ງການຈະຮັບຮູ້ສິ່ງໃດໜຶ່ງວ່າແມ່ນສິ່ງໃດຈະຕ້ອງອີງໃສ່ຄວາມເຂົ້າໃຈລັກສະນະທີ່ສະເພາະໂຮມເຂົ້າກັນເປັນສ່ວນລວມ ແລະ ມີຄວາມຮູ້ໃນສິ່ງນັ້ນໂດຍພາບລວມມາກ່ອນແລ້ວ

### 2.2.3. ຄວາມເຂົ້າໃຈ ( Artetion)

ສິ່ງກະຕຸ້ນທີ່ເຮົາຮັບສຳພັດໂດຍປະສາດສຳພັດທີ່ເປັນພາບ, ເປັນສຽງ, ກິ່ນ, ລົດຊາດ ແລະ ຄວາມຮູ້ສຶກຈາກການສຳພັດ ດ້ວຍຜິວໜັງຈະມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ, ເຊິ່ງເຮົາບໍ່ສາມາດຮັບຮູ້ໄດ້ທັງໝົດ, ສະນັ້ນຈຶ່ງຕ້ອງເລືອກໃສ່ໃຈສະເພາະສິ່ງກະຕຸ້ນບາງຢ່າງ ແລະ ປະປ່ອຍສິ່ງກະຕຸ້ນອື່ນໆສິ່ງກະຕຸ້ນທີ່ເຮົາໃສ່ໃຈເທົ່ານັ້ນທີ່ຈຳເອົາມາຄົ້ນຄິດ ແລະ ຈົດຈຳ.

ການໃສ່ໃຈຂອງຄົນເຮົາຈະມີຂອບເຂດຈຳກັດ ເຮົາຈຶ່ງບໍ່ສາມາດໃສ່ໃຈໂດຍແຍກສ່ວນທີ່ຮັບສຳພັດແຕ່ລະສ່ວນອອກຈາກກັນໄດ້ທັງໝົດເຊັ່ນ: ຕາເບິ່ງ, ຫູຟັງ, ດັງດົມກິ່ນ…ໃນຂະນະທີ່ມີບຸກຄົນໜຶ່ງກຳລັງເຝິກຂັບລົດ, ເຂົາບໍ່ສາມາດຟັງວິທະຍຸໃນຂະນະທີ່ກຳລັງຂັບລົດ ແຕ່ຖ້າຫາກເຂົາຂັບລົດມີຄວາມສຳນິຊຳນານແລ້ວ, ເຂົາສາມາດຂັບລົດ ແລະ ຟັງວິທະຍຸໄປພ້ອມໆກັນໄດ້ ແຕ່ເຖິງເຂົາຈະຊຳນານແລ້ວ, ແຕ່ເຂົາຊຳນານກໍ່ຕາມ ຖ້າຂັບລົດຢູ່ໃນພາວະສັບສົນ ການຈາລະຈອນຕິດຄັດ ເວລານີ້ຄວາມໃສ່ໃຈກໍ່ສຸ່ມໃສ່ສະເພາະການຂັບລົດເທົ່ານັ້ນ ສິ່ງດັ່ງກ່າວສະແດງໃຫ້ເຫັນວ່າ ເຮົາສາມາດໃສ່ໃຈໃນສິ່ງຕ່າງໆໄດ້ 2 ຢ່າງພ້ອມກັນຢູ່ໃນວຽກງານທີ່ຕົນຊຳນານຈົນສາມາດເຮັດແບບອັດໂຕມະມັດໄດ້.

ຂອບຄວາມໃສ່ໃຈກັບການຮຽນ-ການສອນ

ອົງປະກອບທີ່ສຳຄັນທຳອິດຂອງການຮຽນຮູ້ກໍ່ແມ່ນການໃສ່ໃຈ, ຖ້າຜູ້ຮຽນຂາດໃສ່ການໃສ່ໃຈ ຈະບໍ່ສາມາດດຳເນີນການຄິດ ແລະ ຈົດຈຳໄດ້ສະນັ້ນສິ່ງທີ່ຄູຄວນຄຳນຶງຄືກັນ ຄູຈະເຮັດແນວໃດຈິ່ງສາມາດເຮັດໃຫ້ນັກຮຽນເກີດມີຄວາມໃສ່ໃຈຕໍ່ສິ່ງທີ່ຄູສອນນັ້ນ.

ອົງປະກອບຫຼາຍຢ່າງທີ່ມີອິດທິພົນຕໍ່ຄວາມໃສ່ໃຈຂອງນັກຮຽນຢູ່ໃນຫ້ອງຮຽນເຊິ່ງໄດ້ແກ່ ຮູບພາບສະດຸດຕາ ຫຼື ມີການກະທຳທີ່ຕື່ນເຕັ້ນສຳລັບເດັກນັກຮຽນເຊັ່ນ: ຄູສອນເລື່ອງຄວາມດັນຂອງອາກາດ ກ່ອນການສອນຖ້າຄູເປົ່າປຸມເປົ້າຈົນໃຫ້ມັນແຕກມີສຽງດັ່ງໂປ່ງ ຫຼື ອາດໃຫ້ເດັກເຫັນສີສັນຂໍ້ຄວາມທີ່ຄູຕ້ອງເນັ້ນໜັກ ຫຼື ຄູສ້າງເຫດການຈຳລອງທີ່ເຮັດໃຫ້ນັກຮຽນແປກປະຫຼາດໃຈ. ການເວົ້າຂອງຄູມີລະດັບສຽງສູງ-ສຽງຕ່ຳ, ການໃຊ້ແສງສີ ຫຼື ການສະແດງທ່າທາງແບບການເຄື່ອນໄຫວໄປມາຂອງຄູ. ທັງໝົດລ້ວນແຕ່ເປັນສິ່ງຊັກຊວນໃຫ້ນັກຮຽນເກີດມີຄວາມໃສ່ໃຈໄດ້ທັງໝົດນັ້ນ.

- ທ່ານວຸລໂຟລ ( Woolfolk , 1993: 241) ທ່ານໄດ້ສະຫຼຸບແນວທາງສອນທີ່ກະຕຸ້ນໃຫ້ນັກຮຽນເກີດຄວາມໃສ່ໃຈໄດ້ດັ່ງນີ້ :

1. ຄູບອກຈຸດມຸ່ງໝາຍຂອງບົດຮຽນ  ເພື່ອໃຫ້ນັກຮຽນຮູ້ເປົ້າໝາຍຂອງບົດຮຽນນັ້ນ
2. ຄູເລີ່ມການສອນໂດຍມີປິດສະໜາໃຫ້ນັກຮຽນໄດ້ຄິດວ່າ: ບົດຮຽນທີ່ຈະຮຽນມີຄຸນຄ່າ ຫຼື ຄວາມສຳຄັນຕໍ່ກັບຕົນເອງແນວໃດ
3. ກະຕຸ້ນຄວາມຢາກຮູ້ຢາກເຫັນຂອງນັກຮຽນ ດ້ວຍການຖາມເຊັ່ນ: ສິ່ງໃດຈະເກີດຂຶ້ນຖ້າ… ?
4. ສ້າງສະຖານະການທີ່ເຮັດໃຫ່ເກີດຄວາມຕື່ນເຕັ້ນທີ່ບໍ່ຄາດຝັນມາກ່ອນເຊັ່ນ: ຄູສົນທະນາດ້ວຍນ້ຳສຽງດັງກັບນັກຮຽນກ່ອນການສອນ
5. ປ່ຽນແປງສິ່ງແວດລ້ອມທາງກາຍຍະພາບເຊັ່ນ: ຈັດຫ້ອງຮຽນໃໝ່ ຫຼື ເຄື່ອນຍ້າຍສິ່ງຂອງພາຍໃນຫ້ອງຮຽນ
6. ໃຫ້ເດັກນັກຮຽນໄດ້ສຳພັດໃນສິ່ງທີ່ຈະຮຽນດ້ວຍປະສາດສຳພັດຫຼາຍໆທາງເຊັ່ນ: ໄດ້ດົມ, ໄດ້ຊີມນອກຈາກການໄດ້ຍິນ ແລະ ໄດ້ເຫັນ
7. ຄູຄວນມີການເຄື່ອນໄຫວ, ມີການສະແດງທ່າທາງ ແລະ ເວົ້າຈາດ້ວຍລະດັບສຽງດັງ ສຽງຂຶ້ນ, ສຽງລົງສະລັບກັນຕະຫຼອດເວລາ
8. ລົກລ້ຽງການກະທຳທີ່ລົບກວນ ຫຼື ຫັນເຫຄວາມໃສ່ໃຈຂອງນັກຮຽນ

### 2.3. ການເກັບຈຳຊົ່ວຄາວ ( short Term Memory )

ສານຂໍ້ມູນທີ່ມີຄວາມສຳຄັນຈະສົ່ງໄປເກັບໄວ້ ໜ່ວຍເກັບຄວາມຈຳຊົ່ວຄາວ ຫຼື  ຄວາມຈຳໄລຍະສັ້ນ. ນອກຈາກເກັບສານຂໍ້ມູນແລ້ວຍັງດຳເນີນການທາງສະໝອງຄວບຄູ່ກັນໄປ

### 2.3.1. ການບັນຈຸ ແລະ ໄລຍະເວລາໃນການເກັບຈຳ

ການບັນຈຸໃນໜ່ວຍເກັບຈຳໄລຍະສັ້ນນີ້ຈະມີຂໍ້ຈຳກັດ. ຖ້າທຽບໃສ່ການບັນທຶກຂໍ້ມູນດ້ວຍປະສາດສຳພັດແມ່ນຈະນ້ອຍກ່ວາ. ຜ່ານການທົດລອງກໍ່ພົບວ່າ: ຄົນສາມາດເກັບສານຂໍ້ມູນໄວ້ໃນໜ່ວຍຄວາມຈຳໄລຍະສັ້ນນີ້ຈະໄດ້ປະ 7 ໜ່ວຍຂໍ້ຄວາມເທົ່ານັ້ນເຊັ່ນ: ຢູ່ໃນຊີວິດປະຈຳວັນພວກເຮົາບໍ່ສາມາດຈື່ຈຳເລກໝາຍໂທລະສັບຈາກປຶ້ມບັນທຶກເພື່ອຈະຍ່າງໄປໂທລະສັບຢູ່ອີກຫ້ອງໜຶ່ງໄດ້ຄັ້ງລະ 2 ເລກໝາຍໃນເວລາດຽວກັນ.

ເຖິງຢ່າງໃດກໍ່ຕາມ ຂໍ້ກຳຈັດເຫຼົ່ານີ້ ອາດຈະລຸດລົງໄປດ້ວຍວິທີການຈັດກຸ່ມເພື່ອຈື່ເຊັ່ນ: ໃນໝາຍເລກໂທລະສັບທີ່ມີເລກ 7 ຕົວຄື: 7210913 ເຮົາກໍ່ຈື່ດ້ວຍການແບ່ງເປັນ 2 ໜ່ວຍຄື: 721-0913 ( ໜ່ວຍທີ 1 ປະກອບດ້ວຍເລກ 3 ຫຼັກ ໜ່ວຍ ທີ່2 ປະກອບດ້ວຍເລກ 4 ຫຼັກ )ດ້ວຍວິທີນີ້ເຮົາສາມາດເກັບກຳສານຂໍ້ມູນໄດ້ຫຼາຍຂຶ້ນ.

### 2.3.2. ຂະບວນການເກັບຈຳ

ເນື່ອງຈາກສານຂໍ້ມູນເກັບຈຳໄລຍະສັ້ນຍັງກະແຈກກະຈາຍບໍ່ທັນເປັນລະບຽບຈຶ່ງເຮັດໃຫ້ລືມງ່າຍ , ສະນັ້ນວິທີການທີ່ເຮັດໃຫ້ສານຂໍ້ມູນຢູ່ໄດ້ດົນນານຂຶ້ນຈະຕ້ອງມີການຈຳດ້ວຍການທ່ອງໃນໃຈ ຫຼື ເຊື່ອມໂຍງສານຂໍ້ມູນທີ່ກຳລັງຈຳໃນໜ່ວຍ ຄວາມຈຳໃນໄລຍະສັ້ນຈາກສານຂໍ້ມູນໃນໜ່ວຍເກັບຈຳຖາວອນທີ່ມີຢູ່ແລ້ວ. ເຖິງຢ່າງໃດກໍ່ຕາມ ການລືມອາດເກີດຂຶ້ນຂຶ້ນໄດ້ຖ້າມີສິ່ງມາແຊກຊ້ອນຂະບວນການເກັບຈຳໄລຍະສັ້ນຈະມີຂໍ້ຄວນພິຈາລະນາ 2 ຢ່າງຄື: ວິທີການເກັບສານຂໍ້ມູນໄວ້ໃຫ້ດົນ ແລະ ການລືມ.

### 2.3.3. ການເກັບກຳສານຂໍ້ມູນໄວ້ໃຫ້ດົນຂຶ້ນ.

**ເພື່ອເຮັດໃຫ້ສານຂໍ້ມູນມີຄວາມຄົງທົນຢູ່. ຄົນຈຳນວນຫຼາຍຈະໃຊ້ວິທີການ 2 ຢ່າງຄືດັ່ງນີ້:**

1) ການທ່ອງຈຳໃນໃຈນີ້ຖ້າທ່ອງດົນເທົ່າໃດ ກໍ່ສາມາດເກັບສານຂໍ້ມູນໄວ້ໃນນ່ວຍການຈຳໄລຍະສັ້ນໄດ້ດົນເທົ່ານັ້ນ. ຄົນສ່ວນຫຼາຍຈະທ່ອງຈຳແຕ່ເມື່ອໃຊ້ປະໂຫຍດແລ້ວກໍ່ປະຖິ້ມໄປເຊັ່ນ: ການຈຳເລກໝາຍໂທລະສັບແລ້ວກໍ່ລືມໄປ

2) ການເຊື່ອມໂຍງສານຂໍ້ມູນທີ່ພະຍາຍາມຈົດຈຳເຂົ້າກັບສານຂໍ້ມູນທີ່ມີຢູ່ແລ້ວຢູ່ໜ່ວຍຈຳຖາວອນເຊັ່ນ: ຖ້າເຮົາພົບຊາຍຄົນໜຶ່ງຢູ່ໃນງານລ້ຽງ, ຊື່ກັບຊາຍຄົນນັ້ນຄືກັບຊາຍຜູ້ນັ້ນ ຄືກັບຊື່ຂອງນ້ອງຊາຍຂອງຕົນ ເຮົາກໍ່ບໍ່ຈຳເປັນຕ້ອງທ່ອງຈຳຊື່ຂອງຊາຍຄົນນັ້ນອີກ ພຽງແຕ່ສ້າງ ຄວາມເຊືອມໂຍງສຳພັນລະຫວ່າງສານຂໍ້ມູນລະຫວ່າງສານຂໍ້ມູນທັງສອງເຂົ້ານຳກັນກໍ່ຈື່ຈຳໄດ້ແລ້ວແຕ່ຍັງຊ່ວຍໃຫ້ສານຂໍ້ມູນຈາກໜ່ວຍການຈຳໄລຍະສັ້ນສົ່ງຜ່ານໄປຫາໜ່ວຍການຈຳຖາວອນຫຼາຍຂຶ້ນຕື່ມ.

### 2.3.4. ການລືມ ( Forgtting)

ສານຂໍ້ມູນໃນໜ່ວຍຄວາມຈຳໄລຍະສັ້ນອາດຈະສູນຫາຍໄປ ຖ້າມີສິ່ງມາແຊກຊ້ອນ. ການແຊກຊ້ອນອາດຢູ່ໃນຮູບແບບທີ່ສານຂໍ້ມູນໃໝ່ມາແຊກຊ້ອນເຂົ້າກັບສານຂໍ້ມູນເກົ່າ ຫຼື ຄວາມຮູ້ໃໝ່ເຂົ້າມາແຊກ

ຊ້ອນຄວາມຮູ້ເກົ່າເຮັດໃຫ້ຄວາມຮູ້ເກົ່າສູນຫາຍໄປ. ການເຊື່ອມຫາຍໄປນັ້ນແມ່ນການລືມເກີດມາຈາກການເວລາ ຫຼື ເກີດມາຈາກການບໍ່ໄດ້ນໍາໃຊ້ໃນເລື່ອງນັ້ນ.

### 2.4. ການເກັບຈໍາແບບຖາວອນ ( Long term Memory)

ການເກັບກໍາໄລຍະສັ້ນຈະແມ່ນການເກັບກໍາສານຂໍ້ມູນທີ່ປະຕິບັດການໃນຊົ່ວຄາວນັ້ນເທົ່ານັ້ນ ຕົວຢ່າງ: ການຈື່ຈໍາເລກໝາຍໂທລະສັບ ຈາກປຶ້ມບັນທຶກເພື່ອໃຊ້ໂທໃນຂະນະນັ້ນ ແຕ່ຖ້າເລກໝາຍໂທລະສັບນັ້ນມີຄວາມສໍາຄັນທີ່ຈະໃຊ້ຕໍ່ໄປອີ, ສານຂໍ້ມູນນີ້ກໍ່ຈະຖືກສົ່ງເກັບໄວ້ໃນໜ່ວຍຄວາມຈື່ຈໍາຖາວອນ ເຊິ່ງສາມາດຈັດຈໍາໄດ້ດົນນານ.

#### 2.4.1. ການບັນຈຸ ແລະ ໄລຍະເວລາໃນການເກັບກໍາ

ໜ່ວຍການເກັບຄວາມຈໍາຖາວອນຈະມີການບັນຈຸ ແລະ ໄລຍະເວລາໃນການເກັບກໍາຄວາມຈໍາແຕກຕ່າງກັບໜ່ວຍເກັບຄວາມຈໍາໄລຍະສັ້ນຄື: ໜ່ວຍເກັບກໍາຄວາມຈໍາໄລຍະສັ້ນຈະຈື່ຈໍາສານຂໍ້ມູນໄດ້ປະມານ 7 ໜ່ວຍ . ແຕ່ລະໜ່ວຍເກັບກໍາຄວາມຈໍາຖາວອນສາມາດເກັບສານຂໍ້ມູນໄດ້ເປັນຈໍານວນຫຼາຍ ແລະ ບໍ່ມີຂອບເຂດຈໍາກັດ, ໄລຍະຂອງການຈື່ຈໍາກໍ່ຍາວນານ ແລະ ຖາວອນ

ນອກຈາກໜ່ວຍການຈື່ຈໍາແບບໄລຍະສັ້ນຈະມີຄວາມແຕກຕ່າງໜ່ວຍການຈໍາຖາວອນໃນດ້ານການບັນຈຸ ແລະ ໄລຍະເວລາການເກັບກໍາ ແລະ ຍັງມີຄວາມແຕ່ກຕ່າງດ້ານອື່ນໆອີກເຊັ່ນ: ການຮັບສານຂໍ້ມູນ, ການບັນຈຸ ໄລຍະເວລາເກັບເນື້ອໃນ ແລະ ການຮຽກສານຂໍ້ມູນອອກມາໃຊ້ຄືດັ່ງສະແດງໄວ້ໃນຕາຕະລາງລຸ່ມນີ້.

| ຊະນິດການຈໍາ | ການຮັກສາຂໍ້ມູນ | ການບັນຈຸ | ໄລຍະເວລາເກັບກໍາ | ເນື້ອໃນ | ການຮຽກມາໃຊ້ |
|---|---|---|---|---|---|
| ການເກັບກໍາໄລຍະສັ້ນ ການເກັບຈໍາຖາວອນ | ໄວທີ່ສຸດ ຊ້ອນຊ້າງຊ້າ | ມີຂີດຈໍາກັດ (ປະມານ 7 ໜ່ວຍ) ບໍ່ມີຂີດຈໍາກັດ | ສັ້ນທີ່ສຸດ (ປະມານ 20-30 ວິນາທີ) ບໍ່ມີຂີດຈໍາກັດ | ຄໍາຈິນຕະນາການ ເຫດການ ຈິນຕະນາການ ປະພຶດ | ທັນທີ ຂຶ້ນກັບເນື້ອໃນ ແລະ ການຈັດລະບຽບຂໍ້ມູນ |

#### 2.4.2. ການເຂົ້າລະຫັດສານຂໍ້ມູນເພື່ອເກັບໄວ້ໃນໜ່ວຍການຈໍາຖາວອນ

ດັ່ງທີ່ໄດ້ກ່າວມາແລ້ວສາລະຂໍ້ມູນທີ່ເກັບໄວ້ໃນໜ່ວຍການຈໍາຖາວອນຈະມີຈໍານວນຫຼວງຫຼາຍຢ່າງທີ່ບໍ່ມີຂີດຈໍາກັດ ແລະ ເກັບໄວ້ເປັນໄລຍະເວລາທີ່ດົນນານ ການຈະຮັບຂໍ້ມູນໄວ້ໃນໜ່ວຍການຈໍາຖາວອນນີ້ ຈະບໍ່ເກີດຂຶ້ນຢ່າງໄວອາທັນທີຄືກັບໃນໜ່ວຍການຈໍາໄລຍະສັ້ນ. ຍ້ອນມີການເຂົ້າລະຫັດເຊິ່ງເປັນ

ຂະບວນການຖ່າຍໂອນສານຂໍ້ມູນລະຫວ່າງໜ່ວຍການຈຳ ໂດຍການເຊື່ອມໂຍງ ຫຼື ບູລະນາການສາລະສານຂໍ້ມູນໃໝ່ໃນໜ່ວຍການຈຳໄລຍະສັ້ນກັບຂໍ້ມູນເກົ່າທີ່ມີຢູ່ໃນໜ່ວຍໃນໜ່ວຍການຈຳຖາວອນນັ້ນ.

ການເຂົ້າລະຫັດສານຂໍ້ມູນເພື່ອເກັບໄວ້ໃນໜ່ວຍການຈຳຖາວອນນັ້ນ. ຈະພາໃຫ້ສານຂໍ້ມູນມີຄວາມໝາຍ. ຂະບວນການເຂົ້າລະຫັດເພື່ອໃຫ້ສານຂໍ້ມູນມີຄວາມໝາຍຈະມີຫຼາຍວິທີ ທີ່ສຳຄັນຄື: ການຂະຫຍາຍລະອຽດຂອງສາລະ . ການຈັດລະບຽບສາລະ ແລະ ການປະຕິບັດ ຫຼື ການປະກອບກິດຈະກຳ

1) **ການຂະຫຍາຍລາຍລະອຽດ ( Elaboration)**

ຂະບວນການຂະຫຍາຍລາຍລະອຽດຂອງສາລະແມ່ນການເພີ່ມເຕີມ ແລະ ຂະຫຍາຍສາລະສານຂໍ້ມູນໃໝ່ດ້ວຍການເຊື່ອມໂຍງສາລະໃມ່ກັບສາລະທີ່ມີຢູ່ໃນໜ່ວຍຄວາມຈຳຖາວອນ.

**ຕົວຢ່າງ:** ເດັກຜູ້ໜຶ່ງ ( ຊື່ທ້າວ ກ ) ບໍ່ເຄີຍເຫັນໂຕຫ່ານມາກ່ອນສະນັ້ນ “ ຫ່ານ “ ຈະແມ່ນສາລະໃໝ່ທີ່ຈະເຂົ້າລະຫັດເພື່ອເກັບໄວ້ໃນໜ່ວຍຄວາມຈຳຖາວອນ, ແຕ່ເດັກຊາຍຄົນນີ້ພັດເຄີຍເຫັນໂຕເປັດມາກ່ອນແລ້ວ, ເຂົາຈຶ່ງເຊື່ອມໂຍງ ໂຕຫ່ານ ເຂົ້າກັບລັກສະນະສະເພາະຂອງໂຕເປັດເຊັ່ນ: ຫ່ານຈະມີຂົນກັບຄືກັນກັບເປັດ ຄື ກັນກັບນົກຊະນິດໜຶ່ງແຕ່ມັນໃຫຍ່ກ່ວາເປັດ, ສຽງຮ້ອງຈະແຕກຕ່າງຈາກເປັດການເຊື່ອມໂຍງລະຫວ່າງສິ່ງທີ່ຈະຈົດຈຳກັບສິ່ງທີ່ຈຳໄດ້ແລ້ວ ຈະເຮັດໃຫ້ຊາຍຄົນນັ້ນໄດ້ຂະຫຍາຍສະກິມມາ ( schema) ຂອງສັດປະເພດນົກເພີ່ມເຕີມຢູ່ໃນໜ່ວຍການຈຳຖາວອນ ຂະບວນການຂະຫຍາຍລາຍລະອຽດສາລະນີ້ ແມ່ນວິທີການເຂົ້າລະຫັດທີ່ມີປະສິດທິພາບທີ່ສຸດ ແລະ ແມ່ນວິທີສາມາດປະຍຸກໄດ້ຢ່າງກ້ວາງຂວາງໃນການຮຽນ-ການສອນ

**ຕົວຢ່າງ:** ຄູສອນວິຊາເລກຢູ່ຫ້ອງປໍ 2 ການລົບເລກດ້ວຍ 2 ຫຼັກຄູຈະເລີ່ມຕົ້ນດ້ວຍການທົບທວນວິທີການລົບທີ່ໄດ້ສອນມາແລ້ວ ( ຕົວຕັ້ງຂອງຫຼັກໜ່ວຍທີ່ຫຼາຍກ່ວາຕົວລົບ )

| | |
|---|---|
| 65 | 47 |
| -3 | -4 |

ເມື່ອເດັກລະນຶກການແກ້ບັນຫາເຂົ້າລະຫັດໄດ້ແລ້ວ. ຄູກໍ່ສອນການແກ້ບັນຫາເພີ່ມເຕີມ ( ຕົວຕັ້ງຂອງຫຼັກໜ່ວຍຈະນ້ອຍກ່ວາຕົວລົບ).

ໃນກໍລະນີນີ້ເດັກຈະເພີ່ມເດີມ ຫຼື ຂະຫຍາຍຫຼັກການລົບເພີ່ມຂຶ້ນ ດ້ວຍການເຊື່ອມໂຍງສິ່ງທີ່ຮູ້ໃໝ່ໃນໜ່ວຍການຈຳໃນໄລສັ້ນກັບສິ່ງທີ່ຮູ້ມາກ່ອນຢູ່ໃນໜ່ວຍການຈຳຖາວອນ.

2) **ການຈັດລະບຽບສາລະ ( Organization)**

ການຈັດລະບຽບສາລະແມ່ນການຕັດຕອນ. ຕັດຕໍ່ສາລະຂໍ້ມູນເຂົ້າເປັນກຸ່ມໆ. ຢູ່ພາຍໃນກຸ່ມຈະມີຄວາມກ່ຽວໂຍງສຳພັນກັນເປັນລະບົບເຂົ້າລະຫັດເພື່ອຫຼາຍວິທີ.

**ຕົວຢ່າງ:** ສາລະຂໍ້ມູນທີ່ບໍ່ທັນໄດ້ຈັດລະບຽບ

| |
|---|
| ໝາ; ຊ້ອມ; ໝາກມ່ວງ; ເລື່ອຍ; ໄກ່; ກ້ວຍ; ຄ້ອນຕີ; ຈານ; ແມວ; ໝາກກ້ຽງ |

ສາລະຂໍ້ມູນທີ່ຈັດລະບຽບແລ້ວ

| | | | |
|---|---|---|---|
| ໝາ | ຖ້ວຍ | ເລື່ອຍ | ໝາຫມ່ວງ |
| ແມວ | ຊ້ອມ | ຄ້ອນຕີ | ໝາກກ້ວຍ |
| ໄກ່ | ຈານ | ຄີມ | ໝາກກ້ຽງ |

ຫຼັງຈາກຈັດລະບຽບສາລະແລ້ວ. ກໍ່ຈະມີສາລະຂໍ້ມູນ 4 ກຸ່ມຄື: ກຸ່ມສັດລ້ຽງ, ກຸ່ມພາສະນະ, ກຸ່ມເຄື່ອງມື, ກຸ່ມໝາກໄມ້ ການຈັດລະບຽບສາລະນີ້ຈະເຮັດໃຫ້ເຮົາເກັບໄວ້ຢູ່ໜ່ວຍການຈຳຖາວອນງ່າຍຂຶ້ນໃນເວລາເຮົານຶກເຖິງ ຫຼື ຮຽກເອົາມາໃຊ້

(3). ການປະຕິບັດ ຫຼື ການປະກອບກິດຈະກຳ ( Activlty)

ນັກຈິດຕະວິທະຍາກຸ່ມນິຍົມຄິດວ່າ: ຜູ້ຮຽນບໍ່ພຽງແຕ່ຈະຮັບຮູ້ ຫຼື ດູດຊຶມສາລະຄວາມຮູ້ຄືດັ່ງຟອງນໍ້າ. ແຕ່ຜູ້ຮຽນຈະຕ້ອງຮູ້ສ້າງຄວາມຮູ້ ແລະ ຈັດລະບຽບສາລະຂໍ້ມູນດ້ວຍຕົນເພື່ອເກັບໄວ້ໃນຄວາມຈຳຖາວອນ, ສະນັ້ນການໃຫ້ຜູ້ຮຽນໄດ້ມີບົດບາດໃນຖານະເປັນຜູ້ກະທຳ ຫຼື ຜູ້ປະຕິບັດ ກໍ່ຍ່ອມເຮັດໃຫ້ເຂົາມີຄວາມສາມາດເຂົ້າລະຫັດສາລະຂໍ້ມູນໄປຢ່າງມີປະສິດທິພາບ.

**ຕົວຢ່າງ**: ການເນັ້ນໃຫ້ນັກຮຽນໄດ້ປະຕິບັດ ຫຼື ປະກອບກິດຈະກຳ

- ຄູພະຍາຍາມໃຫ້ນັກຮຽນໄດ້ຄິດແບຊໍ້າໆ ແລະ ວິເຄາະ
- ໃຫ້ນັກຮຽນສະຫຼຸບສາລະດ້ວຍພາສາຂອງເຂົາເອງຫຼາຍກວ່າໃຫ້ເຂົາຫຼອກເອົາຄຳເວົ້າ ຫຼື ຂໍ້ຄວາມຈາກບົດຮຽນ
- ເນັ້ນໃສ່ການປະຍຸກໃຫ້ຫຼາຍກ່ວາການຈື່ຈຳນິຍາມ
- ເນັ້ນໃສ່ການແກ້ບັນຫາ
- ໃຫ້ແບບຝຶກຫັດ ແລະ ວຽກບ້ານ
- ໃຫ້ວຍກຄົ້ນຄ້ສາໃນຮູບແບບຂອງການເຮັດບົດລາຍງານ
- ໃນການທົດລອງຂອງຄູຈົ່ງເນັ້ນການວັດຄວາມເຂົ້າໃຈ ແລະ ການຄົ້ນຄິດຫຼາຍກ່ວາການຈຳ

### 2.4.3. ການຮຽກສາລະຂໍ້ມູນຈາກໜ່ວຍການຈຳຖາວອນອອກມານຳໃຊ້ ( retrievel )

ສາລະຂໍ້ມູນໃນໜ່ວຍການຈຳຖາວອນຈະມີຈຳນວນຫຼວງຫຼາຍ ເຖິງວ່າສາລະຂໍ້ມູນເຫຼົ່ານັ້ນຈະມີການເຂົ້າລະຫັດ ແລະ ຈັດເກັບໄວ້ຢ່າງເປັນລະບຽບ, ແຕ່ການຮຽກອອກມາໃຊ້ກໍຈະຕ້ອງໃຊ້ເວລາໃນການລະນຶກອອກມາ, ອາດຊັກຊ້າ ຫຼື ໄວວາທີ່ແຕກຕ່າງກັນໄປ.

ການລະນຶກສານຂໍ້ມູນທີ່ມີຢູ່ໃນໜ່ວຍການຈຳຖາວອນອອກມາໃຊ້ ມີບາງຄັ້ງກໍ່ຄາດເຄື່ອນຈາກຄວາມເປັນຈິງເພາະວ່າ ພວກເຮົາມັກເພີ່ມເຕີມ ຫຼື ສ້າງເລື່ອງລາວຂຶ້ນມາໃໝ່ ໂດຍໃຊ້ການຊີງຈຳ, ການຄາດຫວັງ ແລະ ຄວາມຮູ້ເດີມມີຢູ່ເຊັ່ນ: ຢູ່ໃນການດຳລົງຊີວິດ ມີຫຼາຍຄັ້ງທີ່ພວກເຮົາພະຍາຍາມທີ່ຈະຮຽນ

ສາລະຂໍ້ມູນອອກມາຈາກໜ່ວຍຄວາມຈຳຖາວອນໂດຍຮູ້ສຶກວ່າຕົນເອງຈື່ຈຳໄດ້ແຕ່ຊໍ້າພັດລະນຶກອອກມາບໍ່ ໄດ້ ເປັນຕົ້ນແມ່ນໃນເວລາສອບເສັງກໍຄຳຖາມບໍ່ຍາກ ແຕ່ຕົນນຶກອອກມາຕອບບໍ່ໄດ້ດ ມີບາງຄົນກໍ່ເວົ້າວ່າ ໃນເວລາສອບເສັງນັ້ນ ພໍເມື່ອຕົນລະນຶກໄດ້ກໍໝົດເວລາສອບເສັງແລ້ວ ຫຼື ມີເຫດການທີ່ຄ້າຍຄືເຊັ່ນ: ເວລາ ເຮົາພົບເພື່ອນເກົ່າທີ່ຈາກກັນດົນນານແລ້ວທີ່ພວກເຮົາຈື່ຈຳໄດ້ແນ່ນອນ ແຕ່ເຮົາລະນຶກຊື່ຂອງເຂົາບໍໄດ້, ຕົນ ຈະຮູ້ສຶກວ່າ ຊື່ຂອງເຂົາຕິດຢູ່ຮີມປາກນີ້ ແຕ່ພໍເພື່ອນເກົ່າຄົນນັ້ນໄປແລ້ວເຮົາຈິ່ງລະນຶກຊື່ຂອງເຂົາໄດ້.

### 2.4.4. ການລືມ ( Forgetting)

ການລືມກໍ່ແມ່ນສານຂໍ້ມູນທີ່ຢູ່ໃນນ່ວຍຄວາມຈຳໄດ້ສູນຫາຍ ຫຼື ສະຫຼາຍໄປໃນໜ່ວຍຄວາມຈຳ ໃນໄລຍະສັ້ນ. ຖ້າສາລະຂໍ້ມູນຖືກສູນຫາຍໄປເຮົາຈະບໍ່ສາມາດຮຽກອກມາໃຊ້ໄດ້ສິ່ງດັ່ງນີຈະຄ້າຍໆເກັບຂໍ້ ມູນທີ່ຫາຍໄປຈາກຈໍພາບຂອງຄອມພິວເຕີ ເວລາໄຟຟ້າດັບກ່ອນເວລາເກັບສານຂໍ້ມູນນັ້ນໄວ້ໃນຈານ ບັນທຶກ, ແຕ່ສຳລັບໃນໜ່ວຍການຈຳຖາວອນ ນັກຈິດຕະວິທະຍາໄດ້ໃຫ້ທັດສະນະທີ່ແຕກຕ່າງກັນຄື: ມີ ບາງທ່ານມີຄວາມເຊື່ອວ່າສາລະຂໍ້ມູນຢູໃນໜ່ວຍການຈຳຖາວອນນັ້ນຈະບໍ່ມີວັນຈຳເຊື່ອມຫາຍພຽງແຕ່ເຮົາ ບໍ່ສາມາດລະນຶກອອກມາໄດ້ເທົ່ານັ້ນ, ແຕ່ມີບາງທານເຊື່ອວ່າ: ສາລະຂໍ້ມູນດັ່ງກ່າວອາດສູນເສຍໄປ ຫຼື ອາດ ແທນດ້ວຍຂໍ້ມູນອື່ນ.

ເຖີງຢ່າງໃດກໍ່ຕາມຜົນການວິໄຈໃນປະຈຸບັນພົບຜົນທີ່ສອດຄ່ອງກັນວ່າ: ໃນເມື່ອມີສາລະຂໍ້ມູນ ອື່ນໄດ້ມາແຊກຊ້ອນ ຫຼື ເປັນເວລາດົນນານ, ເຮົາມີຄວາມສາມາດລະນຶກສານຂໍ້ມູນນັ້ນອອກມາໄດ້ໜ້ອຍ ແລະ ຫຼຸດລົງເຊັ່ນ: ເວລາເຮົາທ່ອງຄຳສັບພາສາອັງກິດ, ແລ້ວທ່ອງສາພາຝຼັ່ງຈະເຮັດໃຫ້ພວກເຮົາສັບສົນຈື່ຈຳ ບໍ່ໄດ້, ຖ້າເຮົາຮຽນພາສາອັງກິດຢ່າງດຽວກໍ່ສາມາດລືມໄດ້ ຖ້າຕົນບໍ່ໄດ້ໃຊ້ມີບາງທ່ານກໍ່ໄດ້ອະທິບາຍວ່າ: ການທີ່ຕົນລະນຶກສານຂໍ້ມູນອອກມາໄດ້ໜ້ອຍນັ້ນປຽບດັ່ງກ້ານຊີ້ນທີ່ຢ່ອນຍານ ຫຼື ຂຸດຄຸ້ຍອອກມາໃຊ້ໄດ້

ໃນສ່ວນຂອງການແຊກຊ້ອນທີ່ພາໃຫ້ເຮົາເກີດມີການລືມນັ້ນ, ອາດແບ່ງອອກມາ ສອງ ແບບຄື:

❖ **ຄວາມຮູ້ໃໝ່**

ເຂົ້າໄປແຊກຊ້ອນຄວາມຮູ້ເກົ່າ, ເຮັດໃຫ້ຈື່ຈຳສາລະຂໍ້ມູນຄວາມຮູ້ເກົ່າບໍ່ໄດ້

❖ **ຄວາມຮູ້ເກົ່າ ຫຼື ສິ່ງທີ່ຮຽນຮູ້ມາກ່ອນ**

ໄປແຊກຊ້ອນກັບຄວາມຮູ້ໃໝ່ ຫຼື ສິ່ງທີ່ຮຽນຕາມໃຫ້ຄວາມຈຳສາລະຂໍ້ມູນຄວາມຮູ້ທີ່ຮຽນໃໝ່ບໍ່ ໄດ້.

## 2.5. ແນວການປະຍຸກທິດສະດີຂະບວນການປະມວນສານຢູ່ໃນຫ້ອງຮຽນ.

### 2.5.1. ກະຕຸ້ນໃຫ້ຜູ້ຮຽນມີຄວາມສົນໃຈຕໍ່ບົດຮຽນ

1) ໃຫ້ສັນຍານເຕືອນເດັກນັກຮຽນຈິ່ງຢຸດສິ່ງກະທຳອື່ນໆແລ້ວຫັນທີມາສົນໃຈເຊັ່ນ: ໄດ້ຍິນສຽງ ໝາກວິດເພື່ອໃຫ້ທຸກຄົນມີດຽງບ, ຫຼື ມີແສງແວບເພື່ອໃຫ້ຕັ້ງໃຈຟັງຄູ

2) ໃນເວລາສອນຄູຄວນມີການເຄື່ອນໄຫວ ແລະ ມີທ່າທາງປະກອບ, ອະທິບາຍດ້ວຍລະດັບສຽງຕໍ່າ ສູງສະຫຼັບກັນ, ຫຼີກເວັ້ນການເວົ້າສຽງໃນລະດັບດຽວສະເໝີໄປ.

3) ເລີ່ມສອນບົດໃໝ່ດ້ວຍການຕັ້ງຄຳຖາມເພື່ອກະຕຸ້ນໃຫ້ນັກຮຽນສົນໃຈ

4) ຖ້າຫາກເດັກນັກຮຽນສົນໃຈສິ່ງອື່ນໆ, ຄູຈິ່ງດຶງຄວາມໃສ່ໃຈສິ່ງອື່ນໆ. ຄູຈິ່ງດຶງຄວາມໃສ່ໃຈຂອງເຂົາໃຫ້ກັບມາໂດຍການຍ່າງເຂົ້າໄປໃກ້ໆ ຫຼື ເອີ້ນຊື່ ຫຼື ຖາມເພື່ອໃຫ້ເຂົາຕອບ.

### 2.5.2. ຄູຊ່ວຍເດັກນັກຮຽນແຍກລາຍລະອຽດທີ່ຈຳເປັນ ແລະ ເນັ້ນສາລະຂໍ້ມູນທີ່ສຳຄັນ

1) ຄູກ່າວຈຸດມຸ່ງໝາຍໃນການສອນ ເພື່ອໃຫ້ນັກຮຽນເຫັນພາບໂດຍລວມວ່າພວກເຂົາຈະໄດ້ຮຽນເລື່ອງໃດ ແລະ ເຊື່ອມໂຍງຄວາມສຳພັນຂອງເນື້ອໃນທີ່ຈະສອນກັບຈຸດມຸ່ງໝາຍໃນເວລາສອນເຊັ່ນ: ຄູບອກນັກຮຽນວ່າ " ໃນຂະນະນີ້ກຳລັງອະທິ ຄູກຳລັງອະທິບາຍສ່ວນປະກອບຂອງດອກໄມ້ເພື່ອເປັນພື້ນຖານໃຫ້ການເຂົ້າໃຈປະສົມພັນຂອງດອກໄມ້ຕາມຈຸດມຸ່ງໝາຍໃນຂໍ້ທີ່ 1 "

2) ເມື່ອຄູສອນເລື່ອງສຳຄັນຈິ່ງເວົ້າຊ້ຳຈຸດສຳຄັນນັ້ນເພື່ອຈະໃຫ້ນັກຮຽນສະຫຼຸບດ້ວຍຕົນເອງ, ຄູອາດຂຽນຈຸດສຳຄັນໃສ່ກະດານດ້ວຍສໍສີ ຫຼື ໃຫ້ນັກຮຽນຂີດກ້ອງໃສ່ຈຸດສຳຄັນນັ້ນ.

### 2.5.3. ຄູຊ່ວຍນັກຮຽນໃຫ້ເຫັນຄວາມເຊື່ອມໂຍງລະຫວ່າງສານຂໍ້ມູນໃໝ່ກັບສິ່ງທີ່ຮູ້ຢູ່ກ່ອນແລ້ວ

1) ຄູທົບທວນບົດຮຍນທີ່ນັກຮຽນໄດ້ຮຽນມາກ່ອນແລ້ວ, ເພື່ອເປັນພື້ນຖານໃຫ້ແກ່ການທຳຄວາມເຂົ້າໃຈເນື້ອໃນທີ່ຈະຮຽນໃນຊົ່ວໂມງນັ້ນ.

2) ຄູໃຊ້ແຜ່ນພູມ ຫຼື ໂຄງຮ່າງຂອງເລື່ອງເພື່ອສະແດງໃຫ້ນັກຮຽນເຫັນຄວາມສຳພັນລະຫວ່າງສິ່ງທີ່ຈະຮຽນຮູ້ກັບຂອບຄວາມຄິດຂອງເຂົາທີ່ມີຢູ່

3) ໃຫ້ວຽກໃນລັກສະນະທີ່ຕ້ອງໃຊ້ສາລະຂໍ້ມູນໃໝ່ກັບຄວາມຮູ້ເດີມຂອງນັກຮຽນ

### 2.5.4. ໃຫ້ນັກຮຽນທ່ອງຈຳຊ້ຳໆແບບຫຼາຍເທື່ອ ແລະ ທົບທວນສາລະຄວາມຮູ້ເພື່ອໃຫ້ສິ່ງທີ່ເຂົາຮຽນຮູ້ມີຄວາມໝັ້ນຄົງ

1) ຄູຕ້ອງໝັ່ນທົດສອບດ້ວຍຂໍ້ສອບສັ້ນໆຢູ່ສະເໝີ
2) ໃຫ້ນັກຮຽນ ຫຼື ເຮັດກິດຈະກຳໃນເລື່ອງທີ່ຄູສອນແບບຊ້ຳໆ
3) ຄູຈະເວົ້າເຖິງສິ່ງທີ່ຕ້ອງການໃຫ້ນັກຮຽນຈື່ຢູ່ສະເໝີ

### 2.5.5. ການສອນຄູຕ້ອງສະເໜີເນື້ອໃນທີ່ຊັດເຈນ ແລະ ເປັນລະບຽບ

1) ກຳນົດຈຸດໝາຍຂອງບົດຮຽນໃຫ້ຊັດເຈນ
2) ສອນເນື້ອໃນບົດຮຽນໃຫ້ຕາມລຳດັບ, ຈັດລຽງເນື້ອໃນບົດໃຫ້ເປັນລະບົບ ເວລານັກຮຽນຖາມຄູສາມາດເຊື່ອມໂຍງໃຫ້ນັກຮຽນເຫັນສຳພັນລະຫວ່າງຄຳຖາມກັບໂຄງຮ່າງຂອງເລື່ອງທີ່ຄູຈະສອນໃຫ້ຊັດເຈນ
3) ເວລາສອນໄດ້ໄປເຄິ່ງຕອນ ແລະ ສອນຈົບບົດຄູຈິ່ງສະຫຼຸບບົດຮຽນ

### 2.5.6. ຄູເນັ້ນການຈື່ຈຳໃຫ້ມີຄວາມເຂົ້າໃຈຄວາມໝາຍບໍ່ແມ່ນຈື່ແບບທ່ອງຂຶ້ນໃຈ

1) ໃນການສອນບັນຫາໃໝ່ຈິ່ງພະຍາຍາມເຊື່ອມໂຍງຄວາມຮູ້ໃໝ່ກັບຄວາມເປັນຈິງທີ່ກ່ຽວຂ້ອງກັບນັກຮຽນ

2) ການສອນເລື່ອງລົບເລກໃນວິຊາຄະນິດສາດຄູອາດໃຫ້ນັກຮຽນ, ຮຍນຈາກການສົມມຸກຖານ, ການທອນເງິນເວລາເດັກນັກຮຽນຫຼິ້ນການຂາຍເຄື່ອງ

## 3. ທິດສະດີ ຂອງທ່ານ ເຈນ ປີອາເຈ

ທ່ານ ເຈນ ປີອາເຈ ມີຄວາມສົນໃຈສຶກສາຈິດຕະວິທະຍາ ໂດຍສະເພາະຂະບວນການພັດທະນາ ຄວາມຮູ້,ຄວາມຄິດຕັ້ງແຕ່ໄວເດັກຈົນເຖິງໄວລຸ້ນ ເດັກໄວລຸ້ນມີສະຕິປັນຍາຢູ່ໃນຂັ້ນຄົ້ນຄິດມີເຫດຜົນ ແບບນາມມະທຳທ່ານພີອາເຈດ ໄດ້ຄົ້ນຄ້ວາເລື່ອງໄອຄິວຂອງເດັກມາເປັນເວລາດົນນານ,ຈາກຜົນຂອງການ ສຶກສາເຫຼົ່ານັ້ນທ່ານໄດ້ຕັ້ງທິດສະດີຂຶ້ນຊຶ່ງເອີ້ນວ່າ: ທິດສະດີປັນຍານິຍົມ.

ທ່ານ ປີອາເຈ ໄດ້ແບ່ງອອກເປັນ 2 ສ່ວນຄື:

- ໂຄງສ້າງຂອງສະຕິປັນຍາ
- ພັດທະນາການທາງສະຕິປັນຍາ

### 3.1. ໂຄງສ່າງຂອງສະຕິປັນຍາ

ສະຕິປັນຍາເກີດມາຈາກຄວາມສາມາດ ໃນການປັບແນວຄິດ ແລະພຶດຕິກຳເຂົ້າກັບສະພາບແວ້ດ ລ້ອມແລະຈັດສະພາບແວ້ດລ້ອມໃຫ້ເຂົ້າກັບຕົນເອງ.

❖ ການປັບແນວຄິດ ແລະ ພຶດຕິກຳຕ້ອງອາໄສ 2 ຂະບວນການຄື:

1) ຂະບວນການດູດຊຶມ:ເພື່ອຮັບປະສົບການໃໝ່ ປຽບເໝືອນອະໄວຍະວະຕ່າງໆໃນຮ່າງກາຍຂອງ ຄົນເຮົາ ດູດຊຶມແຮ່ທາດຈາກອາຫານທີ່ກິນເຂົ້າໄປ ຫຼືໝາຍເຖິງບຸກຄົນທີ່ມີປະທະສ້າງສັນກັບສິ່ງແວ້ດລ້ອມ ກໍ່ຈະເກີດຄວາມຮູ້ສຶກ, ຄວາມຮູ້ ແລະຄວາມຄິດຂຶ້ນສິ່ງທີ່ເກີດຂຶ້ນເຫຼົ້ານັ້ນຈະເຊື່ອມຊຶມເຂົ້າໄປລວມກັບ ຄວາມຮູ້ເດີມທີ່ມີຢູ່ແລ້ວ

2) ຂະບວນການປັບຂະຫຍາຍ: ເປັນການໂຄງສ້າງຄວາມຄິດເດີມໃຫ້ສອດຄ່ອງກັບປະສົບການໃຫ່ມ ທີ່ໄດ້ຮັບເຂົ້າມາ,ປຽບເໝືອນກະເພາະອາຫານຂອງຄົນຕ້ອງປັບໃຫ້ສາມາດຍ່ອຍອາຫານຊະນິດໃໝ່ທີ່ບໍ່ ເຄີຍກິນມາກ່ອນຫຼືເປັນການປັບແນວຄິດເດີມໃຫ້ສອດຄ່ອງກັບສິ່ງໃໝ່ໆໃນການຮັບຮູ້,ໝາຍເຖິງ ການທີ່ ບຸກຄົນໄດ້ພົບເຫັນເຫດການໃດໜຶ່ງ ເຊິ່ງບໍ່ອາດເຂົ້າໄດ້ກັບຄວາມຄິດເກົ່າທີ່ມີຢູ່.ບຸກຄົນນັ້ນກໍຈະຕ້ອງ ພະຍາຍາມປັບປຸງໂຄງສ້າງທີ່ມີຢູ່,ເພື່ອໃຫ້ເຂົ້າກັບເຫດການໃໝ່ໆ ຫຼື ບໍ່ກໍ່ອາດສ້າງໂຄງສ້າງໃໝ່ຂຶ້ນ,ເພື່ອ ໃຫ້ເໝາະສົມກັບສິ່ງກະທົບໃໝ່. ຕົວຢ່າງ: ເລື່ອງພະທີ່ບວດຢູ່ວັດບ້ານເຮົາກັບພະທີ່ຢູ່ໃນສາສະໜາຂອງ ພວກຕິເບດ.

ການປັບແນວຄິດ ແລະ ພຶດຕິກຳຈະເຮັດໄດ້ໃຫ້ເກີດພາວະສົມດູນແລ້ວເກີດເປັນໂຄງສ້າງທາງ ສະຕິປັນຍາຂຶ້ນ ດັ່ງນັ້ນສະຕິປັນຍາຈິ່ງເກີດຈາກການປັບແນວຄິດ ແລະພຶດຕິກຳຈົນເຂົ້າສູ່ພາວະສົມດູນ ເປັນລັກສະນະການສ້າງພາວະສົມດູນ ໝາຍເຖິງ ການທີ່ບຸກຄົນມີປະທະສ້າງສັນກັບສິ່ງໃດກໍຕາມໃນຄັ້ງ

ທຳອິດ ເຂົາຈະທຳຄວາມເຂົ້າໃຈປະສົບການໃໝ່ດ້ວຍການໃຊ້ປະສົບການຫຼືຄວາມຄິດເດີມຈົນໃນທີ່ສຸດຄວາມສາມາດປະສົມປະສານຄວາມຄິດໃຫ່ມໃຫ້ກົມກືນກັບຄວາມຄິດເກົ່າ.ລັກສະນະດັ່ງກ່າວເອີ້ນວ່າການກໍ່ໃຫ້ເກີດຄວາມສົມດູນເຊິ່ງຈະນຳໄປສູ່ພັດທະນາການທາງສະຕິປັນຍາ.

### 3.2. ພັດທະນາການທາງສະຕິປັນຍາ.

ທ່ານ ພີອາເຈດ ໄດ້ສຶກສາເດັກຕັ້ງແຕ່ເກີດຈົນໄວຜູ້ໃຫ່ຍຈຶ່ງສະຫຼຸບໄດ້ວ່າ:ສະຕິປັນຍາຂອງມະນຸດມີການປ່ຽນແປງຢ່າງຕໍ່ເນື່ອງ ຕັ້ງແຕ່ມື້ເກີດຈົນເຖິງໄວຜູ້ໃຫ່ຍ,ຊຶ່ງແບ່ງອອກເປັນ 4 ຂັ້ນຕອນຄື:

1) ຮັບຮູ້ດ້ວຍປະສາດສຳຜັດ ແລະການເຄື່ອນໄຫວ ສະຕິປັນຍາເກີດຈາກການໃຊ້ປະສາດສຳຜັດແລະການເຄື່ອນໄຫວແບບອັດຕະໂນມັດ,ເກີດຂຶ້ນກັບເດັກທີ່ມີອາຍຸແຕ່ 0-2ປີ.

2) ການຄົ້ນຄິດກ່ອນເຫດຜົນ ເດັກໃຊ້ພາສາ,ໃຊ້ສັນຍາລັກແທນວັດຖຸຕົວຈິ່ງໄດ້,ເດັກເລີ່ມຄິດຢາກຮູ້ (ສ່ວນຫຼາຍແມ່ນເກີດກັບເດັກ 3-7ປີ)

3) ການຄົ້ນຄິດແບບມີເຫດຜົນ ແບບຮູບປະທຳ ເດັກຈະຄິດແບບຕັກກະຖານ (ຄວາມນຶກຄິດຫຼືຕັກກະສາດໝາຍເຖິງປັດຊະຍາວ່າດ້ວຍຄົ້ນຄິດສົມເຫດສົມຜົນຫຼືບໍ່?)ສາມາດແກ້ໄຂບັນຫາໃນສິ່ງທີ່ເປັນປະທຳຄື:ສາມາດຈັບບາຍ, ເບິ່ງ, ເຫັນໄດ້(ອາຍຸແຕ່ 8-11 ປີ)

4) ການຄົ້ນຄິດແບບມີເຫດຜົນ ແລະ ນາມມະທຳ ແມ່ນການຄົ້ນຄິດແບບວິທະຍາສາດ,ສາມາດແກ້ບັນຫາໃນສິ່ງທີ່ເປັນນາມມທຳຄື ຄິດຈາກຂໍ້ມູນນອກເໜືອຈາກສິ່ງທີ່ເກີດດ້ວຍຕາ(ອາຍຸແຕ່ 12-15 ປີ)

## 4. ທິດສະດີ ດ້ອາເລັກຕິກຂອງທ່ານ ເລັບ ເຊມາໂນວິຊ ໄວກອດສະກີ (Lev Semanovich Vygotsky)

ແນວຄວາມຄິດຂອງທິດສະດີນີ້ ແມ່ນຄວາມເປັນມາທາງປະຫວັດສາດ,ລັສະນະສັງຄົມ, ວັດທະນາທຳຂອງສັງຄົມໃດສັງຄົມໜຶ່ງ,ວັດທະນາທຳເປັນຕົວແປທີ່ມີອິດທິພົນຍິ່ງໃຫ່ຍຕໍ່ພັດທະນາການດ້ານຄວາມຮູ້,ຄວາມຄິດ,ສະຕິປັນຍາ ແລະຄ່ານິຍົມຂອງບຸກຄົນທຸກໄວໃນສັງຄົມນັ້ນໆ.ແນວຄິດທີ່ເດັ່ນຂອງທິດສະດີນີ້ ແມ່ນແນວຄິດຂອງທ່ານ ເລັບ ເຊມາໂນວິຊ ໄວກອດສະກີ

ທ່ານ ເລັບ ເຊມາໂນວິຊ ໄວກອດສະກີ 1896-1934 ເປັນນັກຈິດຕະວິທະຍາຄົນຣັດເຊຍ.ທ່ານມີຄວາມເຫັນວ່າອິດທິພົນວັດທະນາທຳສັງຄົມ ເຊິ່ງບຸກຄົນເຊື່ອມຊຶມເຂົ້າໄປພາຍໃນຕົວ,ເປັນຕົວແປທີ່ສຳຄັນທີ່ກໍໃຫ້ເກີດພັດທະນາການດ້ານການປ່ຽນແປງແນວຄວາມຄິດ,ການຮຽນຮູ້ ແລະການຮັບຮູ້,ແນວຄວາມຄິດເດັ່ນຂອງ ໄວກອດສະກີ ມີ 3 ຢ່າງຄື:

1) ມະນຸດມີຄວາມສາມາດໃນການສ້າງເຄື່ອງມື ແລະສັນຍາລັກຕ່າງໆ,ຈາກ2ຢ່າງນີ້ເຮັດໃຫ້ມະນຸດມີວັດທະນາການທາງອະລິຍະທຳ ແລະວັດທະນາທຳ ເຊິ່ງມີຜົນກະທົບຕໍ່ວິທີຄິດ,ແຜນພັດທະນາການ ແລະການດຳລົງຊີບຂອງມະນຸດໃນສັງຄົມນັ້ນໆແລະແຜ່ຂະຫຍາຍໄປສູ່ສັງຄົມອື່ນໆດ້ວຍ.

2) ພາສາມີຄວາມສຳຄັນຕໍ່ພັດທະນາການຂອງມະນຸດໃນແງ່ບຸກຄົນ ແລະສັງຄົມຫຼາຍທິດທາງ,ພາສາເປັນສື່ໃຫ້ຄົນໄດ້ຕິດຕໍ່ສຳພັນ,ສື່ສານທັງຄວາມຮູ້ສຶກສ່ວນຕົວ,ຄວາມຮູ້,ຄວາມຄິດ ແລະວິທະຍາການຕ່າງໆ ພາສາເປັນສື່ຖ່າຍທອດມໍລະດົກທາງວິທະຍາການ ແລະວັດທະນາທຳຈາກຄົນໃນສັງຄົມໜຶ່ງໄປຫາອີກສັງຄົມໜຶ່ງ,ຈາກຄົນລຸ້ນໜຶ່ງໄປຫາອີກລຸ້ນຖັດໄປ,ພາສາເປັນລະບົບສັນຍາລັກທີ່ເພີ່ມພູນພັດທະນາການທາງສະຕິປັນຍາລະດັບຂອງບຸກຄົນ,ສັງຄົມ ແລະອະລິຍະທຳຂອງໂລກ,ຫາກປາສະຈາກພາສາມະນຸດຈະມີຊີວິດທາງຄວາມຄິດ ແລະສັງຄົມເທົ່າທຽມກັບລີງເທົ່ານັ້ນ.

3) ຄວາມສຳພັນອັນດີ ແລະໃກ້ຊິດລະຫວ່າງເດັກກັບຜູ້ໃຫ່ຍ (Zone of proximal growth), ເພື່ອນກັບເພື່ອນ,ຈະຊ່ວຍໃຫ້ເດັກຮຽນຮູ້ເລື່ອງຍາກໆໄດ້ງ່າຍ ແລະໄວເຊັ່ນ:ເດັກທີ່ມີຄູຫຼືພໍ່ແມ່ທີ່ຢູ່ໃກ້ໆຄອຍຊ່ວຍເຫຼືອເຂົາ ເວລາເຂົາແກ້ເລກຄະນິດສາດຍາກໆເຂົາຈະຮຽນຮູ້ໄດ້ດີ ແລະໄວ,ເຊິ່ງຄວາມສຳພັນໃກ້ຊິດດັ່ງກ່າວ,ກໍ່ໃຫ້ເກີດຄວາມຈະເລີນເຕີບໂຕແຕກຕ່າງກັນແຕ່ລະຄົນ.ແນວຄິດເລື່ອງເປັນແນວຄິດທີ່ນັກຈິດຕະວິທະຍາລຸ້ນປັດຈຸບັນໄດ້ນຳໃຊ້ເຂົ້າໃນການປັບປຸງການຮຽນ-ການສອນຢ່າງກ້ວາງຂວາງໃນສະຖາບັນການສຶກສາ.

- **ສະຫຼຸບ**

ທິດສະດີການຮຽນກຸ່ມປັນຍານິຍົມ, ຈະມີແນວຄິດທີ່ແຕກຕ່າງກັບທິດສະດີການຮຽນຮູ້, ກຸ່ມພຶດຕິກຳນິຍົມຫຼາຍປະການທີ່ສຳຄັນເຊັ່ນ: ຈິດຕະວິທະຍາການຮຽນຮູ້ ກຸ່ມປັນຍານິຍົມເຊື່ອວ່າ: ການຮຽນຮູ້ເກີດມາຈາກຂະບວນການພາຍໃນຂອງບຸກຄົນຫຼາຍກ່ວາເກີດມາຈາກສິ່ງກະຕຸ້ນຈາກພາຍນອກຕົວບຸກຄົນ

ທິດສະດີການຮຽນຮູ້ ກຸ່ມເກສຕັລແມ່ນທິດສະດີກຸ່ມປັນຍານິຍົມກຸ່ມທຳອິດທີ່ສະແດງຢ່າງເຊັດເຈນວ່າ: ການຮັບຮູ້ເປັນປັດໃຈສຳຄັນຂອງການຮຽນຮູ້, ການຮຽນຮູ້ເກີດມາຈາກການຈັດໝວດໝູ່ ຫຼື ຮູບຮ່າງຂອງສິ່ງທີ່ຮັບຮູ້ຂຶ້ນຢູ່ໃນສະໝອງເມື່ອຄົນເຮົາໄດ້ປະເຊີນກັບສະຖານະການທີ່ຕ້ອງການ ການຮຽນຮູ້, ເຮົາກໍ່ເລີ່ມຮັບຮູ້ສ່ວນລວມທັງໝົດກ່ອນຈິ່ງພິຈາລະນາ ຫຼື ວິເຄາະຄວາມສຳພັນຂອງລາຍລະອຽດ.

ທິດສະດີການຮຽນຮູ້ກຸ່ມປັນຍານິຍົມຈະມີຫຼາຍທິດສະດີ, ແຕ່ລະທິດສະດີທີ່ໃໝ່ທີ່ສຸດ ແລະກຳລັງໄດ້ຮັບຄວາມສົນໃຈຫຼາຍໃນຍຸກປະຈຸບັນກໍ່ແມ່ນທິດສະດີ ຂະບວນການປະມານສານ (information processing) ທິດສະດີນີ້ໄດ້ອະທິບາຍການຮຽນຮູ້ຂອງມະນຸດໃນຮູບແບບຂະບວນການໂດຍອຸປະມາໄດ້ກັບຂະບວນການປະຕິບັດງານຂອງຄວາມພິວເຕີ. ຂະບວນການດັ່ງກ່າວຈະແບ່ງອອກມາ 3 ສ່ວນຄື :

- ຂະບວນການຮັບສານຂໍ້ມູນເພື່ອເຂົ້າລະຫັດ ( Encoding)
- ຂະບວນປະຕິບັດການຈຳໃນໜ່ວຍການຈຳໃນໄລຍະສັ້ນ ( Short-Term Memory )
- ຂະບວນການເກັບສາລະຂໍ້ມູນໄວ້ໃນໜ່ວຍການຈຳຖາວອນ ( Long - Term Memory)

ຂະບວນການທັງໝົດຈະຢູ່ໃນການຄວບຄຸມຂອງໜ່ວຍຄວບຄຸມ ( Executive – Control ) ຄວາມເຂົ້າໃຈໃນຂະບວນການປັນຍາດັ່ງທີ່ກ່າວມານີ້ຈະເຮັດໃຫ້ຄູໄດ້ຮັບຮູ້ເຖິງຂະບວນການຮຽນຮູ້ທີ່ສຳຄັນຫຼາຍປະການທີ່ສາມາດມາປະຍຸກໃຊ້ເຂົ້າໃນການຮຽນ- ການສອນ

# ບົດທີ 6
# ທິດສະດີການຮຽນຮູ້ກຸ່ມມະນຸດນິຍົມ

ທິດສະດີມະນຸດສະທຳໄດ້ພັດທະນາມາຈາກທິດສະດີກຸ່ມທີ່ເນັ້ນໜັກໃສ່ການພັດທະນາທຳມະຊາດ. ແຕ່ມັນຈະເປັນວິທະຍາສາດ ເປັນຂະບວນການຫຼາຍກວ່າ. ທິດສະດີມະນຸດນິຍົມແມ່ນທິດສະດີທີ່

ຄັດຄ້ານການທົດລອງພຶດຕິກຳຂອງສັດ ແລະ ນຳໃຊ້ພວກມັນເປັນການອ້າງອີງເຖິງມະນຸດ ແລະ ປະຕິເສດການນຳໃຊ້ມະນຸດເປັນການທົດລອງແທນສັດ. ນັກທິດສະດີໃນກຸ່ມນີ້ເຫັນວ່າມະນຸດມີຄວາມຄິດ, ສະໝອງ, ອາລົມ ແລະອິດສະລະໃນການປະຕິບັດ. ການສອນຕາມທິດສະດີນີ້ເຊື່ອວ່າຜູ້ຮຽນເປັນສູນກາງຂອງການຮຽນຮູ້. ດັ່ງນັ້ນ, ການຮຽນ-ການສອນແມ່ນແນໃສ່ການຮຽນຮູ້ທາງດ້ານຄວາມເຂົ້າໃຈ. ທັກສະ ແລະທັດສະນະຄະຕິ ໃນເວລາດຽວກັນ ເນັ້ນໃສ່ຄວາມຮູ້ສຶກ, ຄຸນຄ່າ, ການສະແດງອອກ, ພ້ອມທັງເລືອກຮຽນຕາມຄວາມສົນໃຈຂອງຜູ້ຮຽນ. ສະພາບແວດລ້ອມການຮຽນຮູ້ແມ່ນການຮ່ວມມືຫຼາຍກວ່າການແຂ່ງຂັນ, ແລະຄູສອນຊ່ວຍ, ຊຸກຍູ້ແລະອຳນວຍຄວາມສະດວກໃນຂະບວນການຮຽນຮູ້ຂອງນັກຮຽນໂດຍການຈັດປະສົບການມະຫາຊົນ. ຊຸກຍູ້ໃຫ້ນັກຮຽນຮຽນຮູ້

ຫຼັກການ ຫຼື ຄວາມເຊື່ອຂອງທິດສະດີມະນຸດນິຍົມແມ່ນ

1. ມະນຸດມີຄວາມກະຕືລືລົ້ນໃນການຮຽນຮູ້.

2. ຜູ້ຊາຍມີສິດທີ່ຈະຕ້ານທານຫຼືບໍ່ພໍໃຈກັບຜົນຂອງສິ່ງຕ່າງໆ. ເຖິງແມ່ນວ່າມັນໄດ້ຖືກຍອມຮັບວ່າເປັນຄວາມຈິງ

3. ການຮຽນຮູ້ທີ່ສຳຄັນທີ່ສຸດຂອງມະນຸດແມ່ນວິທີການທີ່ມະນຸດປ່ຽນແນວຄິດຂອງເຂົາເຈົ້າ. ຫຼື ແນວຄວາມຄິດຂອງຕົນເອງ

ນອກນັ້ນກຸ່ມມະນຸດນິຍົມ ຄຳນຶງເຖິງບຸກຄະລິກກະພາບຂອງບຸກຄົນ ຄຸນຄ່າຂອງປະຊາຊົນແມ່ນຕົ້ນຕໍ ໂດຍການເບິ່ງທຳມະຊາດຂອງມະນຸດ ໃນລັກສະນະ ຜູ້ຊາຍເກີດມາມີຄວາມແຂງກະດ້າງສູງສຸດຕັ້ງແຕ່ເກີດ, ຜູ້ຊາຍມີຄວາມສາມາດຝຶກຝົນຕົນເອງ, ແລະ ກຸ້ມຕົນເອງເປັນຄົນທີ່ມີ ແນວຄວາມຄິດສ້າງສັນຜົນປະໂຫຍດໃຫ້ແກ່ສັງຄົມ ມີອິດສະລະໃນການເລືອກ ສິ່ງສິ່ງທີ່ເຈົ້າເຮັດບໍ່ໄດ້ ເຮັດໃຫ້ໃຜທຸກທໍລະມານລວມທັງຕົວຂ້ອຍເອງ ມະນຸດມີຄວາມຮັບຜິດຊອບ ແລະເປັນຜູ້ສ້າງສັງຄົມ. ນັກຄົ້ນຄວ້າກຸ່ມມະນຸດນິຍົມນີ້ມີບົດບາດສຳຄັນໃນ ຄວາມສຳຄັນຂອງການສຶກສາແມ່ນ Maslow, Rogers, Combs.

## 1. ທິດສະດີຂອງ Maslow ກ່ຽວກັບຄວາມຕ້ອງການຂອງມະນຸດ (Abraham Harold Maslow: 1908-1970).

Maslow ເຫັນວ່າທຳມະຊາດເປັນມະນຸດທີ່ດີ. ແລະພ້ອມທີ່ຈະເຮັດດີ ຖ້າຫາກວ່າຄວາມຕ້ອງການພື້ນຖານແມ່ນຕອບສະໜອງຢ່າງພຽງພໍ ພະອົງເປັນຜູ້ທີ່ເຫັນວ່າຄວາມດີໃນມະນຸດເປັນສິ່ງທີ່ສືບທອດມາແຕ່ເກີດ. ການຮຽນຮູ້ຫຼືການສະແດງ ພຶດຕິກຳແມ່ນຂັບເຄື່ອນໂດຍແຮງຈູງໃຈພາຍໃນຂອງບຸກຄົນ. ໂດຍທຳມະຊາດເດັກນ້ອຍພ້ອມທີ່ຈະສຳຫຼວດສິ່ງຕ່າງໆ. ແລະມະນຸດທຸກຄົນມີກຳລັງພາຍໃນເພື່ອເຂົ້າຫາສະຖານະການທີ່ເອີ້ນວ່າ. "ການຮັບຮູ້ຕົນເອງ" ຫຼືຄວາມຕ້ອງການທີ່ຈະຮັບຮູ້ຄວາມສາມາດຂອງຕົນເອງ ຊຶ່ງຫມາຍຄວາມວ່າຄວາມສາມາດໃນການເຂົ້າໃຈຕົນເອງ ການຍອມຮັບຕົນເອງໃນຂໍ້ບົກຜ່ອງແລະຂໍ້ດີ ຮູ້ທັງຈຸດອ່ອນ ແລະ ຮູ້ຄວາມສາມາດຂອງຕົນເອງ, ພ້ອມທີ່ຈະຮັບຟັງຄວາມຄິດເຫັນຂອງຄົນອື່ນກ່ຽວກັບຕົນເອງ. Maslow ກ່າວ ມະນຸດທຸກຄົນມີຄວາມຕ້ອງການ ແລະຈະຕອບສະໜອງຄວາມ

ຕ້ອງການຂອງຕົນເອງ. ຂໍ້ກໍານົດໄດ້ຖືກຈັດຮຽງຈາກຄວາມຕ້ອງການຕໍ່າ່ສຸດທີ່ເຖິງຄວາມຕ້ອງການສູງສຸດດັ່ງຕໍ່ໄປນີ້:

1) ຄວາມຕ້ອງການທາງດ້ານຮ່າງກາຍ
2) ຄວາມຕ້ອງການຄວາມປອດໄພ
3) ຄວາມຕ້ອງການສໍາລັບຄວາມຮັກແລະເປັນຂອງ
4) ຄວາມຕ້ອງການທີ່ຈະໄດ້ຮັບການຍອມຮັບແລະ ໄດ້ຮັບການຍ້ອງຍໍ
5) ຄວາມຕ້ອງການທີ່ຈະຮັບຮູ້ຄວາມສາມາດຂອງຕົນເອງຫຼືຮູ້ຈັກຕົນເອງ.
6) ຄວາມຕ້ອງການທີ່ຈະຮູ້ແລະເຂົ້າໃຈ
7) ຄວາມຕ້ອງການຄວາມງາມ

ດັ່ງທີ່ Maslow ອະທິບາຍ, ເມື່ອຄວາມຕ້ອງການໃນລະດັບຕໍ່າແມ່ນບັນລຸໄດ້ ມະນຸດຈະມີຄວາມຕ້ອງການໃນຂັ້ນຕອນຕໍ່ໄປ. ຂໍ້ກໍານົດທີ່ບັນລຸໄດ້ໃນແຕ່ລະຂັ້ນຕອນບໍ່ຈໍາເປັນຕ້ອງມີ 100 ເປີເຊັນເຕັມກ່ອນທີ່ຂັ້ນຕອນຕໍ່ໄປຈະສູງກວ່າ.

ນອກຈາກນັ້ນ, Maslow ໄດ້ແບ່ງ 7 ລະດັບຄວາມຕ້ອງການອອກເປັນສອງກຸ່ມ:

1) ຄວາມຕ້ອງການກຸ່ມ 1 (ໄລຍະ 1 - 4) ເອີ້ນວ່າ "ຄວາມຕ້ອງການຕໍ່າທີ່ສຸດ, ຫຼື ຄວາມຕ້ອງການເນື່ອງຈາກການຂາດຫຼືບໍ່ມີ, ເຊິ່ງເປັນການຕອບສະໜອງຕໍ່ປັດໃຈພາຍນອກ.

2) ກຸ່ມທີສອງ (ລະດັບ 5 - 7) ເອີ້ນວ່າ "ຄວາມຕ້ອງການກ້າວໜ້າ" ຫຼືຄວາມຕ້ອງການພັດທະນາ. ມັນເປັນຄວາມຕ້ອງການທີ່ເກີດຈາກການສະແຫວງຫາ. ບໍ່ແມ່ນຍ້ອນຂາດ ຫຼືບໍ່ມີ ຖ້າຫາກວ່າຄວາມຕ້ອງການຕໍ່າທີ່ສຸດ ແມ່ນພຽງພໍ ມະນຸດຈະພັດທະນາໄປເຖິງຂັ້ນທີ 5 ຂອງຄວາມຕ້ອງການ, ຄືການຮູ້ຈັກຕົນເອງຕາມເງື່ອນໄຂ. ມັນເປັນຄວາມຕ້ອງການຂອງຜູ້ທີ່ຈະພັດທະນາເປັນຜູ້ທີ່ສາມາດໃຊ້ຄວາມສາມາດຂອງຕົນໄດ້ຢ່າງເຕັມທີ່. ຈະເປັນຜູ້ທີ່ຄໍານຶງເຖິງບັນຫາຫຼາຍກ່ວາບຸກຄົນ ມີຄວາມນັບຖືຄົນອື່ນ ນີ້ແມ່ນຍ້ອນວ່າເຂົາເຈົ້າໄດ້ບັນລຸໄດ້ຢ່າງເຕັມສ່ວນຄວາມຕ້ອງການຕໍ່າ່ສຸດທີ່. ທັງສອງແມ່ນຜູ້ທີ່ເຫັນກຽດສັກສີແລະຄຸນຄ່າຂອງຕົນເອງ. ພ້ອມທັງມີຄວາມນັບຖືຕົນເອງວ່າເມື່ອເປັນເຊັ່ນນີ້ ຄວາມດີທີ່ເກີດມາກໍຈະປະກົດຂຶ້ນ. ອີງຕາມຄວາມຄິດຂອງ Maslow ມະນຸດພ້ອມແລ້ວທີ່ຈະໃຊ້ຄວາມສາມາດຂອງຕົນເພື່ອສ້າງຜົນປະໂຫຍດຕໍ່ສັງຄົມຢ່າງເຕັມທີ່.

## 2. ທິດສະດີຂອງ ໂຣເຈີຣ (Carl Rogers: 1902-1987).

Rogers ອະທິບາຍຂະບວນການພັດທະນາບຸກຄະລິກກະພາບວ່າມີສອງຂະບວນການ:

### 2.1. ຂະບວນການພັດທະນາຄ່ານິຍົມ (Organizing Valuing Process)

ດັ່ງທີ່ກ່າວມາຂ້າງເທິງ. Rogers ເຊື່ອວ່າບຸກຄົນແມ່ນເກີດມາດ້ວຍພະລັງງານ, ຫຼືແຮງຈູງໃຈ, ເພື່ອພັດທະນາຕົນເອງໄປສູ່ສະພາບຂອງຄວາມຮູ້ຕົນເອງທີ່ແທ້ຈິງ. ແລະເນື່ອງຈາກວ່າບຸກຄົນທີ່ເກີດມາຈາກ

ສະພາບແວດລ້ອມທີ່ແຕກຕ່າງກັນ ດັ່ງນັ້ນ, ມັນເປັນສິ່ງຈຳເປັນທີ່ຈະເຂົ້າໃຈສະພາບແວດລ້ອມສ່ວນບຸກຄົນຂອງບຸກຄົນແລະໂລກ (Internal Frame of Reference), ເຊິ່ງເປັນສ່ວນສຳຄັນຂອງວິທີການທີ່ບຸກຄົນເລືອກທີ່ຈະຮັບຮູ້ແລະໃຫ້ຄວາມຫມາຍກັບປະສົບການເຊັ່ນ: ເດັກນ້ອຍຖືກນຳໄປສູ່ສະພາບແວດລ້ອມໃຫມ່, ອາດຈະພັດທະນາຄວາມຢ້ານກົວນັ້ນ. ອາດຈະເກີດຂຶ້ນຈາກຄວາມຮັບຮູ້, ບໍ່ຈຳເປັນຕ້ອງຈາກສະພາບການ ສະເຫມີຄວາມເປັນຈິງຂອງສະພາບແວດລ້ອມ ແລະເມື່ອເດັກມີປະສົບການເພີ່ມເຕີມທີ່ນຳໄປສູ່ຄວາມເຊື່ອທີ່ວ່າສະພາບແວດລ້ອມທີ່ມັນເປັນ ມັນບໍ່ຫນ້າຢ້ານເທົ່າທີ່ມັນເຄີຍເປັນ. ເຮັດໃຫ້ເດັກນ້ອຍຮັບຮູ້ ໂດຍບໍ່ຈຳເປັນຕ້ອງມາຈາກເງື່ອນໄຂ ສະເຫມີຄວາມເປັນຈິງຂອງສະພາບແວດລ້ອມ ແລະເມື່ອເດັກມີປະສົບການເພີ່ມເຕີມທີ່ນຳໄປສູ່ຄວາມເຊື່ອທີ່ວ່າສະພາບແວດລ້ອມທີ່ມັນເປັນ ມັນບໍ່ຫນ້າຢ້ານເທົ່າທີ່ມັນເຄີຍເປັນ. ເຮັດໃຫ້ເດັກນ້ອຍມີການປ່ຽນແປງໃນການຮັບຮູ້ ເປັນຄວາມຮັບຮູ້ໃຫມ່ ສະຫລຸບລວມແລ້ວ, ມັນສາມາດເຫັນໄດ້ວ່າການເກີດລູກໃນສະພາບແວດລ້ອມທີ່ອົບອຸ່ນ ເຕັມໄປດ້ວຍຄວາມປອດໄພ ຮັກການດູແລ ຈະເຮັດໃຫ້ເດັກນ້ອຍຮັບຮູ້ ແລະເຫັນຄຸນຄ່າ ໃນທາງບວກ, ເດັກນ້ອຍໄດ້ຮັບຮູ້ສິ່ງແວດລ້ອມ ແລະໃຫ້ຄວາມໝາຍເຖິງຄວາມຮັບຮູ້ຂອງເຂົາເຈົ້າເຖິງຄວາມເປັນຈິງ, ໃນອີກດ້ານໜຶ່ງ, ເດັກນ້ອຍສຳຜັດກັບສິ່ງແວດລ້ອມທາງລົບ. ລາວໃຫ້ຄຸນຄ່າປະສົບການທາງລົບ ສິ່ງເຫຼົ່ານີ້ຖືວ່າເປັນຂະບວນການພັດທະນາຄຸນຄ່າ. ທີ່ມີການປ່ຽນແປງເນື່ອງຈາກປະສົບການທີ່ເພີ່ມຂຶ້ນ. ເພາະສະນັ້ນ, ປະສົບການຂອງບຸກຄົນ ຈະມີບົດບາດສຳຄັນໃນການພັດທະນາຄຸນຄ່າຂອງບຸກຄົນ

### 2.2. ການຍອມຮັບຈາກຜູ້ອື່ນ (Positive regard from others)

ເຫັນໄດ້ວ່າຕົວຕົນ (self) ຂອງຄົນເຮົາຈະເລີ່ມພັດທະນາເມື່ອຄົນ. ປະຕິກິລິຍາ ກັບສະພາບແວດລ້ອມອ້ອມຂ້າງລາວ, ລາວຈະຮັບຮູ້ຄວາມຈິງຂອງສະພາບແວດລ້ອມ. ແລະນຳເອົາປະສົບການທີ່ແຕກຕ່າງກັນມາຫມາຍເຖິງຄວາມຮັບຮູ້ທີ່ເອີ້ນວ່າ ປະສົບການຂອງຕົນເອງ (Self-Experience) ການພົວພັນລະຫວ່າງຕົນເອງ. ກັບຄົນສຳຄັນໃນສະພາບແວດລ້ອມຂອງລາວ ຈະນຳໄປສູ່ການພັດທະນາແນວຄວາມຄິດຂອງຕົນເອງ (Self-Concept) ເນື່ອງຈາກວ່າມັນເຮັດໃຫ້ປະຊາຊົນມີຄວາມຮູ້ສຶກ ເອກະລັກຂອງຕົນເອງ.

ການພັດທະນາບຸກຄະລິກກະພາບຂອງບຸກຄົນເລີ່ມຕົ້ນດ້ວຍ ໃນຕອນເລີ່ມຕົ້ນຂອງຊີວິດເດັກນ້ອຍບໍ່ສາມາດແຍກຕົວເອງອອກຈາກສິ່ງອ້ອມຂ້າງໄດ້. ແລະຄິດວ່າຕົນເອງເປັນສ່ວນຫນຶ່ງຂອງສະພາບແວດລ້ອມ ເຮັດໃຫ້ເດັກນ້ອຍຕິດກັບພໍ່ແມ່ ແລະສະພາບແວດລ້ອມເອງ ແລະເລີ່ມເຂົ້າໃຈຕົວຕົນຂອງຕົນເອງ. ຄວາມຕ້ອງການຂອງເຂົາເຈົ້າ ຍ້ອນວ່າລາວບໍ່ສາມາດເພິ່ງພາຕົນເອງ, ຕ້ອງເພິ່ງພາຄົນອື່ນສະນັ້ນຮຽນຮູ້ທີ່ຈະອ້າງ ຄວາມສົນໃຈແລະການຍອມຮັບຈາກຄົນອື່ນ ເມື່ອເຂົາເຈົ້າໃຫຍ່ຂຶ້ນ, ເດັກນ້ອຍເລີ່ມຮຽນຮູ້ວ່າພຶດຕິກຳບາງຢ່າງເຮັດໃຫ້ຄົນອື່ນຕອບສະຫນອງຕໍ່ເຂົາດ້ວຍຄວາມຮັກ. ບາງຄົນອາດຈະເຮັດຜິດຕໍ່ຄົນອື່ນ. ບໍ່ຍອມຮັບແລະບໍ່ຕອບສະຫນອງ ປະຕິກິລິຍາເຫຼົ່ານີ້ເຮັດໃຫ້ເດັກເລືອກພຶດຕິກຳທີ່ພໍໃຈຄົນອື່ນ. ແລະຫຼີກເວັ້ນການກະທຳທີ່ເຮັດໃຫ້ຄົນອື່ນ offend. ເດັກນ້ອຍຮຽນຮູ້ທີ່ຈະເອົາຄຸນຄ່າຂອງຄົນອື່ນ

ເຂົ້າໄປໃນຕົນເອງ. ເຮັດໃຫ້ເກີດການປະເມີນຕົນເອງ (Self-Evaluation) ຈາກພຶດຕິກຳທີ່ຜູ້ອື່ນຍອມຮັບ. ຫຼືບໍ່ຍອມຮັບ ລາວເປັນຜູ້ພິພາກສາ

**2.3. ການຍອມຮັບຕົນເອງ (ຄວາມນັບຖືຕົນເອງ)**

ບຸກຄົນຮຽນຮູ້ທີ່ຈະຍອມຮັບຕົນເອງໂດຍວິທີທີ່ລາວຮັບຮູ້ວ່າຄົນອື່ນຈະຍອມຮັບລາວຫຼືບໍ່, ບໍ່ວ່າຈະເປັນແນວໃດ. ຄວາມຕ້ອງການຂອງຕົນເອງ, ແຕ່ຈະເອົາຄຸນຄ່າຂອງຄົນອື່ນໄປຫາເຂົາ ມັນເປັນມາດຖານສຳລັບການປະເມີນພຶດຕິກຳຂອງເຂົາເຈົ້າວ່າດີຫຼືບໍ່ດີ, ເຮັດໃຫ້ເຂົາເຈົ້າປະຕິບັດເພື່ອໃຫ້ເຂົາເຈົ້າພໍໃຈ. ຄວາມຕ້ອງການຂອງຄົນອື່ນ ແລະອະນຸຍາດໃຫ້ຜູ້ອື່ນຍອມຮັບຫຼາຍກວ່າຄວາມພໍໃຈຂອງຕົນເອງ ເຮັດໃຫ້ເຂົາຮັບຮອງເອົາ (Interject) ຄຸນຄ່າຂອງຄົນອື່ນເຂົ້າໄປໃນຕົນເອງ.

**2.4. ເງື່ອນໄຂ ຫຼື ຄຸນຄ່າ**

ບຸກຄົນຮູ້ສຶກວ່າຕົນເອງມີຄຸນຄ່າ ເພາະສາມາດຍອມຮັບຕົນເອງໄດ້. ໂດຍຮູບພາບຂອງຕົນເອງທີ່ລາວຮັບຮູ້ແມ່ນສອດຄ່ອງກັບຄວາມເປັນຈິງໃນເວລາທີ່ພົວພັນກັບຄົນອື່ນ ແຕ່ຖ້າພາບຕົນເອງແຕກຕ່າງຈາກຄວາມຈິງກໍຈະເຮັດໃຫ້ລາວເກີດ. ຄວາມກັງວົນແລະການປະຕິເສດ ການບໍ່ຍອມຮັບວ່າຕົນເອງເປັນຄວາມຈິງເຮັດໃຫ້ລາວປະພຶດຕົນບໍ່ມີເຫດຜົນ. ບໍ່ສາມາດປັບຕົວໄດ້ ຖ້າຫາກວ່າບຸກຄົນທີ່ຮັບຮອງເອົາຄຸນຄ່າຂອງຄົນອື່ນ ຫຼືມາດຕະຖານຂອງຄົນອື່ນ ແລະສັງຄົມເຂົ້າໄປໃນຕົນເອງເຊັ່ນດຽວກັນ ຈະເຮັດໃຫ້ລາວຍອມຮັບຕົນເອງບໍ່ໄດ້, ຮູ້ສຶກວ່າລາວບໍ່ມີຄ່າ, ເຮັດໃຫ້ເກີດຄວາມອຸກອັ່ງ

ສາມາດເຫັນໄດ້ວ່າສຳລັບບຸກຄົນທີ່ຈະພັດທະນາບຸກຄະລິກກະພາບຂອງຕົນຢ່າງຖືກຕ້ອງ, ມັນຈະຂຶ້ນກັບປະສົບການທີ່ເດັກມີໂດຍສະເພາະ. ຖ້າເດັກໄດ້ຮັບ ຄວາມຮັກຄອບຄົວທີ່ບໍ່ມີເງື່ອນໄຂ (Unconditional Positive regard) ຈະເຮັດໃຫ້ເດັກເກີດມາ. ຄວາມຮູ້ສຶກຂອງຄວາມອົບອຸ່ນແລະຄວາມປອດໄພຊຶ່ງເປັນ ຄວາມຮູ້ສຶກທີ່ເປັນພື້ນຖານຂອງການມີບຸກຄະລິກກະພາບທີ່ສົມບູນ. ນີ້ແມ່ນຍ້ອນການຍອມຮັບໂດຍບໍ່ມີເງື່ອນໄຂ. ມັນຈະຊ່ວຍໃຫ້ບຸກຄົນຮຽນຮູ້ເຖິງແມ່ນວ່າບາງພຶດຕິກຳຂອງລາວບໍ່ໄດ້ຮັບການຍອມຮັບ. ແຕ່ພໍ່ແມ່ຍັງໃຫ້ ເພື່ອຮັກແລະຍອມຮັບພຣະອົງ, ລາວຈະບໍ່ເກີດມາ. ຄວາມຮູ້ສຶກທີ່ບໍ່ມີຄ່າ ແລະຍັງສາມາດຍອມຮັບຕົວເອງໄດ້ ແລະສາມາດເຫັນຕົນເອງໃນແງ່ບວກ (Positive Self-Regard) ແລະເຖິງແມ່ນວ່າລາວໄດ້ຕັດສິນໃຈຜິດບາງຢ່າງ ລາວຍັງກ້າທີ່ຈະຮັບຜິດຊອບຕໍ່ການກະທຳຂອງຕົນເອງ. ສາມາດຄວບຄຸມພຶດຕິກຳຂອງຕົນເອງ ການປ່ຽນແປງແລະແກ້ໄຂ ກ້າທີ່ຈະປະເຊີນກັບປະສົບການໃຫມ່ ສາມາດນຳໃຊ້ອຳນາດທີ່ມີຢູ່ໃນຕົນເອງຢ່າງມີປະສິດທິພາບ ເຮັດໃຫ້ຂະບວນການພັດທະນາຄຸນຄ່າ ແລະ ການຍອມຮັບຕົນເອງໄປໃນທິດທາງດຽວກັນ, ສາມາດຮັບຮູ້ ແລະ ໃຫ້ຄວາມໝາຍຕໍ່ປະສົບການໃນຕົວຈິງ, ມີຄວາມເພິ່ງພໍໃຈໃນຕົນເອງ. ແລະສາມາດພັດທະນາຕົນເອງໃຫ້ມີຊີວິດຢ່າງມີປະສິດທິພາບ (Fully Functioning Person)

ລັກສະນະຂອງບຸກຄະລິກກະພາບທີ່ສົມບູນແບບ (ສຸຂະພາບດີ) ບຸກຄະລິກທີ່ສົມບູນ, ໃນທັດສະນະຂອງ Rogers. ຈະມີລັກສະນະຕ່າງໆເຊັ່ນ: ຜູ້ທີ່ມີຄວາມສາມາດທີ່ຈະປັບຕາມຄວາມເປັນຈິງ

ສາມາດເປີດຕົນເອງຮັບປະສົບການໃໝ່, ຍອມຮັບຄວາມຕ້ອງການພາຍໃນ ແລະ ພາຍນອກ ໄດ້ເຂົ້າໃຈຕົນເອງຢ່າງຖືກຕ້ອງ ສາມາດເລືອກແລະຕັດສິນໃຈທີ່ຈະຕອບສະໜອງ ຄວາມຕ້ອງການຂອງຕົນເອງ ຮັບຮູ້ຕົນເອງຢ່າງມີປະສິດທິພາບ ດໍາລົງຊີວິດໃນປັດຈຸບັນເປັນຕົວເຈົ້າເອງ, ສາມາດນໍາເອົາປະສົບການມາພັດທະນາຕົນເອງ, ເຊື່ອໝັ້ນໃນຄວາມສາມາດຂອງຕົນເອງ. ພ້ອມທັງຮັບຜິດຊອບຕໍ່ການກະທໍາຂອງຕົນເອງ ແລະບໍ່ຕັດສິນໃຈເຮັດສິ່ງຕ່າງໆໂດຍອີງໃສ່ການຍອມຮັບຫຼືປະຕິເສດຈາກຄົນອື່ນ.

## 3. ທິດສະດີຂອງ ໂຄມ (Arthur W. Combs, 1912-1999).

Combs ແມ່ນນັກຈິດຕະສາດຄົນອາເມລິກາທີ່ເກີດໃນປີ 1912. "ພຶດຕິກໍາຂອງບຸກຄົນສ່ວນໃຫຍ່ ມັນແມ່ນຜົນມາຈາກຄວາມຮັບຮູ້ຂອງສະພາບແວດລ້ອມໃນເວລານັ້ນ ແລະ ເວລານັ້ນ, ເຊິ່ງເປັນແນວຄວາມຄິດດຽວກັນກັບ "ຊ່ອງຊີວິດ" ຂອງ Levin. ຄູຄວນພະຍາຍາມເຂົ້າໃຈສະພາບການຮຽນ-ການສອນ. ໂດຍການເຂົ້າໃຈວິທີທີ່ນັກຮຽນເບິ່ງສິ່ງຕ່າງໆຈາກຈຸດນີ້ນໍາໄປສູ່ການສະຫລຸບວ່າ ເພື່ອຊ່ວຍໃຫ້ຜູ້ຮຽນຮູ້, ພວກເຂົາເຈົ້າຕ້ອງກະຕຸ້ນໃຫ້ຜູ້ຮຽນປັບຄວາມເຊື່ອຂອງເຂົາເຈົ້າແລະ ການຮັບຮູ້ຂອງຜູ້ຮຽນຈົນກ່ວາເຂົາເຈົ້າສາມາດເຫັນສິ່ງທີ່ແຕກຕ່າງກັນ. ແລະສະແດງພຶດຕິກໍາທີ່ແຕກຕ່າງກັນ ແນວຄວາມຄິດຂອງ Combs ບາງຄົນແມ່ນຄ້າຍຄືກັນກັບ Brunner ໃນກຸ່ມສະຕິປັນຍາ, ແຕ່ສຸມໃສ່ການຮັບຮູ້ຂອງຜູ້ຮຽນຫຼາຍຂຶ້ນ. ຄິດແລະສົມເຫດສົມຜົນເຊັ່ນດຽວກັນກັບທຸກຄົນ. ວິທີການທີ່ບຸກຄົນຮັບຮູ້ວ່າຕົນເອງມີຄວາມສໍາຄັນ. ຊຶ່ງນໍາໄປສູ່ຫຼັກການທີ່ສໍາຄັນໃນການຄຸ້ມຄອງການຮຽນ-ການສອນ ແມ່ນເພື່ອຊ່ວຍໃຫ້ຜູ້ຮຽນພັດທະນາຄວາມຮູ້ສຶກຂອງເຂົາເຈົ້າກ່ຽວກັບ ຕົນເອງໃນທາງບວກ ທັງ Maslow ແລະ Combs ເນັ້ນໜັກວ່າມະນຸດແມ່ນມີລັກສະນະທີ່ຕົນເອງພຽງພໍ. ເຮັດສິ່ງຕ່າງໆດ້ວຍຕົນເອງ, ແຕ່ Maslow ເນັ້ນໜັກວ່າແຮງຈູງໃຈພາຍໃນແມ່ນແຮງຈູງໃຈຂອງພຶດຕິກໍາຂອງມະນຸດໃນລໍາດັບຊັ້ນຂອງຄວາມຕ້ອງການ. Combs ອະທິບາຍວ່າພຶດຕິກໍາຂອງບຸກຄົນແມ່ນຕົນເອງພຽງພໍ. ນີ້ຫມາຍຄວາມວ່າຄວາມຕ້ອງການພື້ນຖານຂອງ ຜູ້ຊາຍແມ່ນຄວາມພຽງພໍນັ້ນ ມັນຈະກະຕຸ້ນໃຫ້ບຸກຄົນປະຕິບັດ. ຖ້າເປັນດັ່ງນັ້ນ, ຫຼັງຈາກນັ້ນ ຜູ້ຮຽນຕ້ອງການ ຄວາມພຽງພໍເທົ່າທີ່ເປັນໄປໄດ້ໃນທຸກສະຖານະການ ດັ່ງນັ້ນ, ບົດບາດຂອງຜູ້ສອນແມ່ນແຕກຕ່າງຈາກແນວຄວາມຄິດຂອງກຸ່ມ. ພຶດຕິກໍາ S-R ທີ່ສາມາດດັດແປງພຶດຕິກໍາຂອງນັກຮຽນໂດຍໃຊ້ການເສີມສ້າງ Combs ໃຫ້ຄວາມຄິດທີ່ວ່າ ວຽກງານຂອງຄູອາຈານບໍ່ແມ່ນພຽງແຕ່ວາງກົດລະບຽບ, ປັ້ນເດັກ, ຂົ່ມຂູ່, ຍ້ອງຍໍ ຫຼືຊ່ວຍເຫຼືອເດັກ. ສາມາດເຮັດກິດຈະກໍາ ເປັນຜູ້ປະກອບສ່ວນ ແລະເປັນເພື່ອນກັບຜູ້ຮຽນ." ອີງຕາມຄວາມເຊື່ອຂອງ Combs ສະນັ້ນການນໍາສະເຫນີຄຸນລັກສະນະທີ່ດີ ຂອງຄູອາຈານດັ່ງຕໍ່ໄປນີ້:

1) ມີຄວາມຮູ້
2) ມັນເປັນການເຮັດວຽກກັບນັກຮຽນ.
3) ມີຄວາມເຊື່ອ ແລະ ເຊື່ອວ່າຜູ້ຮຽນທຸກຄົນມີ ຄວາມສາມາດໃນການຮຽນຮູ້
4) ເປັນຄົນທີ່ມີຄວາມຄິດເຫັນແກ່ຕົວເອງທີ່ນໍາໄປສູ່ຄວາມຮູ້ສຶກໃນທາງບວກຕໍ່ຜູ້ອື່ນ.

5) ມີຄວາມເຊື່ອວ່າເຂົາເຈົ້າສາມາດຊ່ວຍໃຫ້ຜູ້ຮຽນທຸກຄົນເຮັດໄດ້ດີທີ່ສຸດເທົ່າທີ່ຜູ້ຮຽນສາມາດເຮັດໄດ້.
6) ສາມາດນໍາໃຊ້ກັບຕົ້ນຕໍ ທິດສະດີໄດ້ຖືກນໍາໃຊ້ໃນການຄຸ້ມຄອງການຮຽນ-ການສອນ.

## 4. ການໝູນໃຊ້ໃນຫຼັກການສອນຂອງນັກຈິດຕະວິທະຍາມະນຸດນິຍົມ

1) ຄູຄວນໃຫ້ຄວາມເຂົ້າໃຈກັບຜູ້ຮຽນ. ຄວນເປັນໃຈກວ້າງ ບໍ່ຕິດກັບຄວາມຄິດ ຫຼືຄວາມເຊື່ອຂອງຕົນເອງ ຄວນຟັງຜູ້ຮຽນໃຫ້ຫຼາຍຂຶ້ນ
2) ຊຸກຍູ້ໃຫ້ຜູ້ຮຽນມີຄວາມຮັບຜິດຊອບຕໍ່ການຮຽນຂອງຕົນເອງ. ໜ້າທີ່ໄດ້ຖືກຈັດສັນໃຫ້ນັກຮຽນແຕ່ລະຄົນມີບົດບາດເທົ່າທຽມກັນໃນຫ້ອງຮຽນ.
3) ຄວນຈັດຫ້ອງຮຽນຕາມສະພາບຕົວຈິງ ຫຼືເງື່ອນໄຂສ່ວນບຸກຄົນທີ່ແຕກຕ່າງກັນ
4) ການຮຽນຮູ້ຄວນຈະຖືກຈັດຕັ້ງໂດຍບໍ່ຍຶດຕິດກັບເງື່ອນໄຂວັດທະນະທໍາສັງຄົມຫຼືຂໍ້ຈໍາກັດ.
5) ຄວນຈັດການການຮຽນຮູ້ຕາມຄວາມຕ້ອງການ ຫຼື ຄວາມຕ້ອງການຂອງຜູ້ຮຽນ.
6) ຄວນຈັດໃຫ້ຜູ້ຮຽນຮຽນຮູ້ວ່າຊີວິດ ແລະສິ່ງຂອງມີຄ່າ. ໃຫ້ຜູ້ຮຽນເຫັນຄຸນຄ່າໃນຕົວເອງແລະທຸກເຫດການ.

# ບົດທີ 7
# ທິດສະດີການຮຽນຮູ້ທາງສັງຄົມ

ທິດສະດີການຮຽນຮູ້ກຸ່ມພຶດຕິກໍານິຍົມ ແລະ ກຸ່ມປັນຍານິຍົມດັ່ງທີ່ໄດ້ກ່າວມາແລ້ວ ຈະມີແນວຄວາມຄິດທີ່ແຕກຕ່າງກັນ. ກຸ່ມພຶດຕິກໍານິຍົມໄດ້ມີຄວາມຄິດວ່າ: ພຶດຕິກໍາຂອງມະນຸດຈະຂຶ້ນຢູ່ກັບສິ່ງແວດລ້ອມເປັນຕົວກໍານົດ. ຕົວແທນຂອງແນວຄິດນີ້ໄດ້ແກ່ທິດສະດີຂອງ ທ່ານ.ສະກິນເນີ. ກຸ່ມປັນຍານິຍົມໄດ້ມີຄວາມຄິດວ່າ: ພຶດຕິກໍາຂອງມະນຸດຂຶ້ນກັບ ການຮັບຮູ້, ການຄິດ ຫຼື ຂະບວນການທາງປັນຍາຂອງບຸກຄົນ ຕົວແທນຂອງກຸ່ມນີ້ ແມ່ນຈິດຕະວິທະຍາກຸ່ມເກສຕັລ

ໃນໄລຍະຕໍ່ມາພັດໄດ້ເກີດມີທິດສະດີໃໝ່ທີ່ຮຽກວ່າ: ກຸ່ມປະຕິສຳພັນ ( Interactionist AS-proach )ກຸ່ມນີ້ໄດ້ປະສົມປະສານແນວຄິດຂອງກຸ່ມພຶດຕິການີ້ຍົມ ແລະ ກຸ່ມປັນຍານິຍົມລວມເຂົ້າກັນ ແລະ ມີຄວາມຄິດວ່າ: ພຶດຕິກຳຂອງມະນຸດຈະຂຶ້ນຢູ່ກັບຜົນລົບລະຫວ່າງຂະບວນການທາງປັນຍາຂອງບຸກຄົນ ແລະ ສິ່ງແວດລ້ອມອອ້ມຕົວ. ທິດສະດີສຳຄັນຂອງກຸ່ມນີ້ໄດ້ແກ່ " ທິດສະດີຮຽນຮູ້ທາງສັງຄົມຂອງແບນດູລາ " ( Bandura s Soclal Cogni – tive Theory )

## 1. ປະຫວັດຫຍໍ້ ຂອງທ່ານແບນດູຣາ.

ແບນດູຣາ ( Albert Bandura : 1925 ) ເກີດທີ່ອັລເບີຕາ ( Alberta ) ທີ່ປະເທດການາດາ ທ່ານເຕີບໃຫຍ່ຢູ່ຕົວເມືອງນ້ອຍ ໂຮງຮຽນທີ່ທ່ານຮຽນນັ້ນມີນັກຮຽນພຽງແຕ່ 20 ຄົນ ແບນດູຣາຮຽນມະຫາວິທະຍາໄລບຼິຕິຊໂຄລັມເບັຍ ( University of Britich Columbia ) ແລະ ຮຽນລະດັບປະ ລິນຍາຕີ ສາຂາຈິດຕະວິທະຍາທີ່ມະຫາວິທະຍາໄລໄອໂອວາ ( University of Iowa )

ໃນປີ 1953 ແບນດູຣາໃດ້ເປັນອາຈານສອນທີ່ມະຫາວິທະຍາໄລ ສະແຕນຟໍຣ ( Stanford Universit ) ແລະ ທຳງານຢູ່ທີ່ນັ້ນຈົນເຖິງ ຄ.ສ. 1974 ເພິ່ນໃດ້ດຳລົງຕຳແໜ່ງເປັນປະທ່ານສະມາຄົມຈິດຕະວິທະຍາແຫ່ງສະຫາລັດອາເມລິກາ. ທ່ານແບນດູຣາໄດ້ຮັບການຍົກຍ້ອງຈາກລູກສິດທັງຫຼາຍວ່າ: ທ່ານແມ່ນນັກປັດຊະຍາຍຸກໃໝ່ ທີ່ມີຄວາມຮອບຮູ້ດ້ານສັງຄົມສາດຢ່າງກວ້າງຂວາງຂອງຫຼາຍສາຂາ.

## 2. ແນວຄິດພື້ນຖານຂອງທິດສະດີການຮຽນຮູ້ທາງສັງຄົມ

ແນວຄິດພື້ນຖານ ຂອງທິດສະດີການຮຽນຮູ້ທາງສັງຄົມຂອງແບນດູຣາ ອາດພິຈາລະນາໄດ້ 3 ປະເດັນຄື:

- ປະເດັນກ່ຽວກັບການຮຽນຮູ້ໃນສະພາບທຳມະຊາດ.
- ປະເດັນຄວາມສຳພັນລະຫວ່າງຜູ້ຮຽນ ແລະ ສິ່ງແວດລອ້ມ.
- ປະເດັນກ່ຽວກັບນິຍາມຂອງການຮຽນຮູ້ ໂດຍສະເພາະແມ່ນຄວາມແຕກຕ່າງລະຫວ່າງການຮຽນຮູ້ກັບຜົນງານ.

### 2.1. ການຮຽນຮູ້ໃນສະພາບທຳມະຊາດ.

ທ່ານແບນດູຣາມີແນວຄິດທີ່ສອດຄ່ອງກັບ ນັກຈິດຕະວິທະຍາການຮຽນຮູ້ທາງສັງຄົມລຸນໃໝ່ທັງຫຼາຍວ່າ: ທິດສະດີການຮຽນຮູ້ຂອງພຶດຕິກຳນິຍົມທັງໝົດນັ້ນ ຈະມີຂໍ້ຈຳກັດຢ່າງໜອ້ຍ 3 ປະການຄື:

- ທິດສະດີທັງຫຼາຍໄດ້ອະທິບາຍການຮຽນຮູ້ໃນສະຖານທີ່ຄັບແຄບບໍ່ສອດຄອ່ງກັບສະພາບການຮຽນຮູ້ໃນຊີວິດຈິງ
- ການສຶກສາຂອງກຸ່ມພຶດຕິກຳນິຍົມກະທຳສະເພາະຢູ່ໃນຫ້ອງທົດລອງເທົ່ານັ້ນ ແລະ ບໍ່ໄດ້ເວົ້າເຖິງການຮຽນຮູ້ທີ່ຈະແກ້ໄຂບັນຫາໃໝ່ໆໃນໂລກທີ່ກວ້າງໄດ້

- ນັກຈິດຕະວິທະຍາກຸ່ມພຶດຕິກຳນິຍົມ ແມ່ນຈະເວົ້າເຖິງສະເພາະການຮຽນຮູ້ຈາກການກະທຳ ແລະ ໄດ້ຮັບຜົນກຳໂດຍກົງເທົ່ານັ້ນ ແຕ່ບໍ່ໄດ້ສົນໃຈພຶດຕິກຳການຮຽນຮູ້ທີ່ຜູ້ຮຽນ, ໄດ້ຮຽນຈາກຕົວແບບ ຫຼື ຮຽນຈາກການກະທຳຂອງຜູ້ອື່ນໆ. ຈາກຂໍ້ຈຳກັດເຫຼົ່ານີ້ທ່ານແບນດູຣາ ຈຶ່ງເກີດມີຄວາມຄິດວ່າ: ຄວນສຶກສາການຮຽນຮູ້ທຳມະຊາດຫຼາຍກວ່າຢູ່ຫ້ອງທົດລອງ ໂດຍສະເພາະທ່ານໄດ້ສົນໃຈການຮຽນຮູ້ຈາກການຮຽນແບບ ຫຼື ການສັງເກດ.

**2.2. ຄວາມສຳພັນລະຫວາງຜູ້ຮຽນ, ພຶດຕິກຳ ແລະ ສິ່ງແວລ້ອມ.**

ຕາມທັດສະນະຂອງທ່ານແບນດູຣາ ການອະທິບາຍການຮຽນຮູ້ຂອງທິດສະດີອື່ນໆນັ້ນ ກໍ່ມີຂໍ້ຕົກລົງທີ່ຜິດຢູ່ຕອນຕົ້ນ ໂດຍສະເພາະແມ່ນທັງກຸ່ມຂອງພຶດຕິກຳນິຍົມ ແລະ ມະນຸດນິຍົມຕ່າງກໍ່ກ່າວວ່າ: ຄວາມສຳພັນລະຫວ່າງພຶດຕິກຳຂອງບຸກຄົນ ແລະ ສິ່ງແວດລອ້ມ ເປັນຄວາມສຳພັນແບບທາງດຽວ. ກຸ່ມພຶດຕິກຳນິຍົມໄດ້ມີຄວາມເຫັນວ່າ: ພຶດຕິກຳຂອງບຸກຄົນຈະຂຶ້ນຢູ່ກັບສິ່ງແວດລ້ອມ. ກຸ່ມມະນຸດນິຍົມພັດມີຄວາມເຫັນວ່າ: ສິ່ງແວດລ້ອມຈະຂຶ້ນຢູ່ກັບຄວາມຄິດ ແລະ ການກະທຳຂອງບຸກຄົນ.

ທ່ານແບນດູຣາ ໄດ້ອະທິບາຍວ່າ: ການຮຽນຮູ້ຈະກ່ຽວຂ້ອງກັບປັດໃຈຫຼັກ 3 ປະການຄື:

1. ຄວາມຄິດ ຫຼື ຄວາມຄາດຫວັງ ຫຼື ຄວາມເຊື່ອ ແລະ ອົງປະກອບຂອງບຸກຄົນ.
2. ພຶດຕິກຳ.
3. ສິ່ງແວດລອ້ມ.

ປັດໄຈທັງ 3 ນີ້ຈະມີຄວາມສຳພັນກັນແບບສອງທາງຄື: ຕ່າງກໍ່ມີອິດທິພົນເຊິ່ງກັນ ແລະ ກັນ,ເພິ່ນເອີ້ນຄວາມສຳພັນລັກສະນະນີ້ວ່າ: ປັດໄຈທີ່ກຳນົດເຊິ່ງກັນ ແລະ ກັນ.

**ຕົວຢ່າງ: ຢູ່**ໃນຫອ້ງຮຽນໜຶ່ງນັກຮຽນສວ່ນຫຼາຍໄດ້ມີນ້ຳໃຈເອື້ອເຟື້ອເຊິ່ງກັນ ແລະ ກັນ ( ຄວາມເອື້ອເຟື້ອນີ້ ເປັນສິ່ງແວດລອ້ມ ) ສິ່ງແວດລອ້ມທີ່ເອື້ອເຟື້ອນີ້ຈະມີອິດທິພົນຕໍ່ກັບ ທ້າວ ສີທອນ ສາມາດເຮັດໃຫ້ລາວເກີດມີຄວາມຄິດເອື້ອເຟື້ອ ແລະ ມີທັດສະນະດີຕໍ່ໝູ່. ພຶດຕິກຳນີ້ຈະກາຍເປັນຕົວແບບທີ່ມີອິດທິພົນຕໍ່ໝູ່ເພື່ອນຄົນອື່ນອີກ.

**2.3. ການຮຽນຮູ້ກັບຜົນງານ.**

ຂໍ້ແຕກຕ່າງລະຫວ່າງທິດສະດີການຮຽນຮູ້ທາງສັງຄົມຂອງແບນດູຣາ ກັບທິດສະດີການຮຽນຮູ້ພຶດຕິກຳນິຍົມກໍ່ຄືນິຍາມຂອງການຮຽນຮູ້ ແລະ ທິດສະດີອື່ນໆ. ມີຫຼາຍໆທິດສະດີຈະເວົ້າວ່າ: ຜົນງານເປັນຕົວບົ່ງຊີເຖິງການຮຽນຮູ້ ຫຼື ເວົ້າອີກຢ່າງໜຶ່ງວ່າ: ກຸ່ມທິດສະດີພຶດຕິກຳນິຍົມຈະບໍ່ໄດ້ແຍກຄວາມແຕກຕ່າງລະຫວ່າງການຮຽນຮູ້ກັບຜົນງານຢ່າງຊັດເຈນ.

ທ່ານ ແບນດູຣາ ມີຄຳເຫັນວ່າ: ການຮຽນຮູ້ກັບຜົນງານທີ່ປະກົດຂຶ້ນນັ້ນ ຈະແມ່ນສອງສ່ວນທີ່ແຍກຈາກກັນ. **ການຮຽນຮູ້** ເປັນຂະບວນການມາຈາກຄວາມຮູ້ ແມ່ນຂະບວນການທີ່ປະກອບດ້ວຍການເລືອກໃສ່ໃຈຕໍ່ສິ່ງກະຕຸ້ນເຂົ້າລະຫັດໃນຮູບສັນຍາລັກແລ້ວເກັບໄວ້ໃນໜ່ວຍຄວາມຈຳ. **ສ່ວນຜົນງານ** ແມ່ນພຶດຕິກຳທີ່ບຸກຄົນສະແດງອອກ ຫຼື ຕອບສະໜອງອອກມາໃຫ້ເຫັນ. ທ່ານແບນດູຣາ ໄດ້ກ່າວວ່າ: ການຮຽນຮູ້ອາດສະແດງອອກມາເປັນຜົນງານ ຫຼື ເປັນການກະທຳກໍ່ອາດເປັນໄດ້ ຫຼື ອາດບໍ່ເປັນຜົນງານ ຫຼື

ການກະທຳກໍ່ໄດ້. ການຮຽນຮູ້ດ້ວຍການສັງເກດນັ້ນ, ຜູ້ຮຽນບໍ່ໄດ້ສະແດງການຮຽນແບບອອກມາໂດຍທັນທີທີ່ດ້ເຫັນ. ແຕ່ອາດມີການກະທຳໃນເມື່ອເຂົາຢູ່ໃນສະຖານະການທີ່ເໝາະສົມ ຫຼັງຈາກທີ່ໄດ້ຮຽນຮູ້ແລ້ວ

| ສິ່ງກະຕຸ້ນ | ບຸກຄົນ | ການກະທຳ |
|---|---|---|
| 1 | | 2 |

**ຂັ້ນທີ 1. ແມ່ນຂັ້ນໄດ້ມາເຊິ່ງຄວາມຮູ້** **ຂັ້ນທີ 2. ແມ່ນຂັ້ນການກະທຳ ຫຼື ຜົນງານ.**

## 3. ອົງປະກອບຂອງການຮຽນຮູ້

ທິດສະດີຂອງທ່ານແບນດູຣາໄດ້ສະເໜີວ່າວິທີທີ່ຄົນເຮົາຮຽນຮູ້ຕ່າງໆກ່ຽວກັບສິ່ງແວດລ້ອມ ຫຼືພຶດຕິກຳຕ່າງໆກໍ່ແມ່ນວິທີສັງເກດພຶດຕິກຳຂອງຄົນອື່ນ(ພຶດຕິກຳຂອງຄົນອື່ນໆ)ເຖິງຢ່າງໃດກໍ່ຕາມຄົນເຮົາຈະບໍ່ໄດ້ຮຽນແບບຈາກທຸກສິ່ງທຸກຢ່າງທີ່ໄດ້ພົບການຈະຮຽນແບບ ຫຼື ບໍ ມັນຂຶ້ນກັບຜົນກຳທີ່ຕົວແບບໄດ້ຮັບຈາກການກະທຳນັ້ນໆເປັນແນວໃດ ແລະ ຂຶ້ນກັບຂະບວນການທາງປັນຍາຂອງຜູ້ຮຽນເອງ.ສະນັ້ນ,ອົງປະກອບທີ່ສຳຄັນຂອງການຮຽນຮູ້ຕ່າງໆຈຶ່ງຈຳແຍກໄດ້ 3 ປະການ:

1. ຕົວແບບໃນພຶດຕິກຳຕ່າງໆ ( behavioral model )
2. ຜົນກຳຈາກພຶດຕິກຳຂອງຕົວແບບ ( conseguences of the modeled behavior )
3. ຂະບວນການທາງປັນຍາຂອງຜູ້ຮຽນ ( learner's cognitive process )

### 3.1. ຕົວແບບໃນຮູບພຶດຕິກຳ

ໜ້າທີ່ພື້ນຖານຂອງຕົວແບບກໍ່ແມ່ນການຖ່າຍທອດສານສົນເທດໄປຫາຜູ້ສັງເກດໜ້າທີ່ນີ້ອາດຈະເກີດຂຶ້ນໃນລັກສະນະໃດລັກສະນະໜຶ່ງດັ່ງລຸ່ມນີ້:

1) **ພຶດຕິກຳທີ່ເປັນຕົວແບບ** ຈະເຮັດໜ້າທີ່ແນະນຳເພື່ອໃຫ້ຜູ້ສັງເກດປະຕິບັດຄືກັບຕົວແບບເຊັ່ນ: ເຮົາໄດ້ຮັບເຊີນໄປງານລ້ຽງສ້າງສັນ,ຕົນກໍ່ບໍ່ແນ້ໃຈວ່າຈະນຸ່ງຊຸດແບບໃດ ແລະ ໃສ່ເຄື່ອງປະດັບແບບໃດຈຶ່ງຈະມີຄວາມເໝາະສົມການສັງເກດຂອງເຈົ້າພາບງານກໍ່ຈະເປັນແນວທາງສຳລັບການປະຕິບັດຂອງຜູ້ຖືກເຊີນ

2) **ຜົນກຳຈາກພຶດຕິກຳຂອງຕົວແບບ** ຜົນກຳນີ້ຈະເຮັດໜ້າທີ່ຂັດຂວາງ ຫຼື ສົ່ງເສີມໃຫ້ຜູ້ທີ່ສັງເກດປະຕິບັດຕາມຕົວແບບ. ນ້າທີ່ທາງດ້ານການຂັດຂວາງ ຫຼື ກົດໜ່ວງການຮຽນແບບ ຈະເກີດຂຶ້ນເມື່ອຜູ້ສັງເກດພົບວ່າ: ຕົວແບບທີ່ໄດ້ຮັບຜົນກຳທີ່ບໍ່ປະສົງ ຫຼື ຖືກລົງໂທດ.

**ຕົວຢ່າງ:** ມີຊາຍຄົນໜຶ່ງທີ່ຂັບລົດດ້ວຍຄວາມໄວພໍດີໄປເຫັນຕຳຫຼວດສາຍກວດກຳລັງຂຽນໃບສັ່ງເພື່ອປັບໄໝລົດຄັນໜຶ່ງທີ່ຂັບລົດດ້ວຍຄວາມໄວສູງ. ຊາຍຄົນນັ້ນກໍ່ຈະຄ່ອຍຜ່ອນຄວາມໄວລົງ ກົງກັນຂ້າມ

ໜ້າທີ່ການສົ່ງເສີມໃຫ້ຜູ້ສັງເກດປະຕິບັດຕາມຕົວແບບ ຈະເກີດຂຶ້ນຖ້າການກະທຳຂອງຕົວແບບໄດ້ຮັບຜົນກຳທີ່ສັງຄົມຍອມຮັບວ່າເປັນສິ່ງທີ່ດີ,ຖືກຕ້ອງ ຫຼື ໄດ້ຮັບລາງວັນ.

3) **ໜ້າທີ່ປະການທີ 3 ຂອງຕົວແບບ**ກໍ່ແມ່ນ ການເປັນຊື່ທີ່ຖ່າຍທອດທາງວັດທະນະທຳ ຕົວແບບຈະເປັນຊື່ທີ່ສຳຄັນຢູ່ໃນຂະບວນການຂອງສັງຄົມທີ່ປະກົດອອກມາທາງດ້ານພາສາ, ຮີດຄອງປະເພນີ, ການສຶກສາ ແລະ ພຶດຕິກຳທາງສັງຄົມອື່ນໆ.

**3.2. ປະເພດຂອງຕົວແບບ**

ທ່ານແບນດູຣາ ໄດ້ແບ່ງອອກເປັນ 3 ປະເພດຄື: ຕົວແບບທີ່ມີຊີວິດ,ຕົວແບບສັນຍາລັກ, ແລະແບບທີ່ເປັນຄຳສອນ.

**1. ຕົວແບບທີ່ມີຊີວິດ ( Live model )** ເຊິ່ງໄດ້ແກ່ບຸກຄົນຢູ່ໃນຄອບຄົວ,ໝູ່ເພື່ອນ ຫຼື ຜູ້ຄົນອື່ນໆ ທົ່ວໄປເຊິ່ງຜູ້ສັງເກດສາມາດຕິດຕໍ່ພົວພັນໄດ້.

**2. ຕົວແບບສັນຍາລັກ ( Symdolic model )** ເຊິ່ງໄດ້ແກ່ພາບຂອງຕົວແບບຢູ່ໃນສື່ສານມວນຊົນທັງຫຼາຍເຊັ່ນ: ຮູບເງົາ,ໂທລະທັດ,ໜັງສືພິມ,ຄອມພິວເຕີ ແລະ ອື່ນໆ...

**3. ຮູບແບບໃນຄຳສອນ ( Verbal description or Instruuction )** ແມ່ນຕົວແບບທີ່ເປັນພາສາເວົ້າ,ການບອກທາງວາຈາ ຫຼື ເປັນຄຳສອນໃນພາສາຂຽນເຊັ່ນ: ຊຸນຄຳສອນໃນການປະຕິບັດງານການຄວບຄຸມເຄື່ອງຈັກ ຫຼື ຄຳອະທິບາຍການປະກອບສິ້ນສ່ວນຕ່າງໆ ເພື່ອເຂົ້າເປັນອຸປະກອນຊະນິດໜຶ່ງ. ຕົວແບບຊະນິດນີ້ ຫາກໃຊ້ປະກອບເປັນຕົວແບບຂອງພຶດຕິກຳກໍ່ຈະເພີ່ມປະສິດທິພາບໃຫ້ແກ່ການຮຽນຮູ້.

**3.2.1. ຕົວແບບທີ່ມີປະສິດທິພາບ**

ອົງປະກອບທີ່ສຳຄັນຢູ່ໃນຂະບວນການຮຽນຮູ້ອີກປະການໜຶ່ງກໍ່ແມ່ນປະສິດທິພາບຂອງຕົວແບບມີຕົວແບບບາງຢ່າງຈະເຮັດໃຫ້ຜູ້ຮຽນໃສ່ໃຈທີ່ສຸດ,ຕົວແບບບາງຢ່າງຈະມີປະສິດທິພາບຕໍ່ຄວາມໃສ່ໃຈຂອງຜູ້ທີ່ຮຽນໜ້ອຍ.ລັກສະນະຂອງຕົວແບບທີ່ມີປະສິດທິພາບກໍ່ຄື: ຄວາມມີກຽດ,ຄວາມເຊື່ອຖື, ລັກສະນະນິໃສໃຈຄໍທີ່ກຸ່ມຍອມຮັບ ແລະ ມີຄຸນລັກສະນະທີ່ເປັນແບບຢ່າງ ເຊິ່ງຜູ້ສັງເກດໃຝ່ຝັນທີ່ຈະເປັນດັ່ງນັ້ນ.

3.2.2. **ຄຸນລັກສະນະຂອງຜູ້ສັງເກດ.**

ນອກຈາກປະສິດທິພາບຂອງຕົວແບບແລ້ວ,ຄຸນລັກສະນະຂອງຜູ້ສັງເກດກໍ່ເປັນອົງປະກອບຢ່າງໜຶ່ງທີ່ມີຄວາມສຳຄັນຕໍ່ຂະບວນການຮຽນແບບ.ມີການວິໄຈບາງເລື່ອງໄດ້ພົບວ່າ: ຜູ້ທີ່ຂາດຄວາມເຊື່ອໝັ້ນຕົວເອງ ແລະ ມີຄວາມພູມໃຈຕົວເອງຕໍ່າຈະມີແນວໂນ້ມຮັບເອົາພຶດຕິກຳຂອງຕົວແບບປະສົບຜົນສຳເລັດໄດ້ງ່າຍກ່ວາຜູ້ທີ່ມີຄວາມເຊື່ອໝັ້ນ ແລະ ມີຄວາມພູມໃຈຕົວເອງສູງ.

ຢູ່ໃນສ່ວນການຮຽນແບບດ້ານຄວາມສາມາດນັ້ນ ທ່ານແບນດູຣາໄດ້ພົບວ່າ:ຜູ້ທີ່ມີຄວາມພູມໃຈຕົວເອງສູງ ມີແນວໂນ້ມທີ່ຈະຮຽນແບບຫຼາຍກວ່າ, ການຮຽນແບບຈະເກີດຂຶ້ນໃນເວລາທີ່ໄວອາ.ສ່ວນຜູ້ທີ່ຂາດຄວາມເຊື່ອໝັ້ນຕົວເອງນັ້ນຈະເກີດມີຄວາມກັງວົນລັງເລ,ຕ້ອງເບິ່ງຜູ້ອື່ນໆກ່ອນຈຶ່ງຈະທຳຕາມ.

**3.3. ຜົນກຳຈາກພຶດຕິກຳຂອງຕົວແບບ**

ທິດສະດີການຮຽນຮູ້ທາງສັງຄົມເຊື່ອວ່າ: ຜົນກຳຈາກການກະທຳຂອງຕົວແບບຈະມີຄວາມສຳຄັນຕໍ່ກັບການຮຽນຮູ້. ຫຼັກການຂໍ້ນີ້ຄ້າຍຄືກັບທິດສະດີ ການວາງເງື່ອນໄຂການກະທຳຂອງສະກິນເນີ.ເຖິງຢ່າງໃດກໍ່ຕາມແນວຄິດຂອງທ່ານແບນດູຣາ ມີຄວາມແຕກຕ່າງກັບທິດສະດີຂອງສະກິນເນີ 2 ປະການຄື:

1. **ໃນທິດສະດີການຮຽນຮູ້ຂອງສະກິນເນີ** ການເສີມແຮງແມ່ນສິ່ງທີ່ຈຳເປັນ ແລະ ແມ່ນອົງປະກອບຫຼັກຂອງການຮຽນຮູ້ ສ່ວນທິດສະດີຂອງທ່ານແບນດູຣາໄດ້ຖືວ່າ ກາງເສີມແຮງເປັນພຽງອົງປະກອບໜຶ່ງທີ່ຊ່ວຍເສີມສ້າງການຮຽນຮູ້ໃຫ້ເກີດຂຶ້ນເທົ່ານັ້ນ.

2. **ໃນທິດສະດີການຮຽນຮູ້ຂອງທ່ານສະກິນເນີ** ຈະເນັ້ນໃສ່ຜົນກຳທີ່ຜູ້ຮຽນໄດ້ຮັບໂດຍກົງຈາກການກະທຳ ຫຼື ການຕອບສະໜອງ.ແຕ່ທິດສະດີຂອງທ່ານແບນດູຣາຈະກ່າວເຖິງຜົນກຳທີ່ກວ້າງຂວາງກວ່າໂດຍເພີ່ມເຕີມການເສີມແຮງຈາກການເຫັນຕົວແບບທີ່ໄດ້ຮັບ.

ທ່ານແບນດູຣາ ມີຄວາມເຫັນວ່າ ຜົນກຳທີ່ຕົວແບບໄດ້ຮັບອາດຢູ່ໃນຮູບການເສີມແຮງທີ່ຕົວແບບໄດ້ຮັບ ຫຼື ການລົງໂທດທີ່ຕົວແບບໄດ້ຮັບ,ທັງສອງທິດສະດີລ້ວນແຕ່ມີບົດບາດສຳຄັນຕໍ່ການຮຽນຮູ້ທາງສັງຄົມຂອງຜູ້ຮຽນ.

**3.3.1. ການໄດ້ຮັບການເສີມແຮງຂອງຕົວແບບ ( vicarious reinforcement )**

ຜູ້ສັງເກດເຫັນຕົວແບບໄດ້ຮັບການເສີມແຮງ,ເຂົາກໍ່ມີແນວໂນ້ມທີ່ຈະຮຽນແບບເພີ່ມຂຶ້ນ. ລັກສະນະດັ່ງນີ້ຈະຖືວ່າ: ການໄດ້ຮັບການເສີມແຮງຂອງຕົວແບບ ຈະເປັນຕົວເສີມແຮງຂອງຜູ້ທີ່ສັງເກດທີ່ຈະກະທຳພຶດຕິກຳຄືດັ່ງຕົວແບບເພີ່ມຂຶ້ນ.

ທ່ານແບນດູຣາໄດ້ອະທິບາຍວ່າຕົວແບບໄດ້ຮັບການເສີມແຮງຈະມີຜົນຕໍ່ຜູ້ສັງເກດ 3 ປະການຄື:

1) ເປັນຂໍ້ສານສົນເທດໃຫ້ແກ່ຜູ້ສັງວ່າ: ພຶດຕິກຳນັ້ນເປັນສິ່ງຄວນກະທຳຢູ່ໃນສະພາບການນັ້ນໆ
2) ເປັນສິ່ງກະຕຸ້ນຄວາມຮູ້ສຶກ ຫຼື ອາລົມຂອງຜູ້ສັງເກດເຊັ່ນ: ເວລາເຮົາເບິ່ງໂທລະທັດບາງລາຍການ. ຖ້າຜູ້ເບິ່ງເກີດມີຄວາມຮູ້ສຶກຊື່ນຊົມ ເພື່ອຈະຮຽນແບບຕາມດາລາເຊັ່ນວ່າ: ຮຽນແບບການນຸ່ງຖື, ການແຕ່ງກາຍ ແລະ ອື່ນໆ.
3) ເມື່ອພຶດຕິກຳຕົວແບບຫາກໄດ້ຮັບການເສີມແຮງຊໍ້າໆ,ຜູ້ທີ່ສັງເກດຈະເກີດຄວາມຄິດວ່າ:ພຶດຕິກຳດັ່ງກ່າວຈະມີຄຸນຄ່າ ແລະ ຄາດຫວັງຈະກະທຳພຶດຕິກຳນັ້ນດວ້ຍຕົນເອງ ຫຼື ເວົ້າອີກຢ່າງໜຶ່ງ ຜົນກຳທີ່ດີເຊິ່ງຕົວແບບໄດ້ຮັບນັ້ນສາມາດເຮັດໃຫ້ຜູ້ສັງເກດມີພຶດຕິກຳນັ້ນໃນອານາຄົດ.

### 3.3.2. ການໄດ້ຮັບໂທດຂອງຕົວແບບ ( vicarious punhment )

ການໄດ້ຮັບໂທດຂອງຕົວແບບກໍ່ຈະມີອິດທິພົນຕໍ່ພຶດຕິກຳຂອງຜູ້ສັງເກດຄືກັນກັບການເສີມແຮງທີ່ຕົວແບບໄດ້ຮັບ. ທ່ານແບນດູຣາ ໄດ້ເວົ້າເຖິງຂອງການໄດ້ຮັບໂທດຂອງຕົວແບບຕໍ່ຜູ້ສັງເກດມີ2 ປະການດັ່ງນີ້:

( 1 ) ກໍ່ໃຫ້ເກີດການຢັບຢັ້ງ ຫຼື ກີດໜ່ວງການຮຽນແບບພຶດຕິກາຈາກຕົວແບບ.

( 2 ) ເນື່ອງຈາກພຶດຕິກາດັ່ງກ່າວພາໃຫ້ເກີດຜົນກາທີ່ບໍ່ປາຖະໜາ,ຄຸນຄ່າຂອງຕົວແບບກໍ່ຈະຫຼຸດຄຸນຄ່າລົງ, ຜູ້ທີ່ສັງເກດກໍ່ມີແນວໂນ້ມວ່າໃນອານາຄົດກໍ່ຈະບໍ່ກະທຳພຶດຕິກຳນັ້ນອີກ.

ເຮົາສາມາດເວົ້າໄດ້ວ່າ: ການລົງໂທດທີ່ຕົວແບບໄດ້ຮັບຈະເປັນສິ່ງຢັບຢັ້ງພຶດຕິກຳຮຽນແບບຂອງຜູ້ທີ່ສັງເກດ. ເຖິງຢ່າງໃດກໍ່ຕາມຖ້າຕົວແບບກະທຳພຶດຕິກຳທີ່ບໍ່ເໝາະສົມແລ້ວແຕ່ບໍ່ຖືກລົງໂທດ,ຜູ້ທີ່ສັງເກດກໍ່ເກີດມີການຮຽນຮູ້ວ່າ: ການກະທຳຂອງຕົວແບບນັ້ນໄດ້ຮັບການຍອມຮັບ ຜູ້ສັງເກດກໍ່ຈະມີແນວໂນ້ມເຮັດຕາມ. ຕົວຢ່າງເຊັ່ນ: ຖ້າມີນັກຮຽນຄົນໜຶ່ງສຸດຈະລິດໃນເວລາສອບເສັງ,ແຕ່ອາຈານຄວບຄຸມຫ້ອງພັດບໍ່ລົງໂທດ ແລະ ຍັງປ່ອຍໃຫ້ພຶດຕິກຳດັ່ງນີ້ເກີດຂຶ້ນກັບນັກຮຽນຜູ້ອື່ນກໍ່ຈະມີແນວໂນ້ມກະທຳຕາມແລ້ວກໍ່ຈະມີການສຸດຈະລິດຫຼາຍຂຶ້ນຢູ່ໃນຄັ້ງຕໍ່ໄປອີກ.

ເຖິງຢ່າງໃດກໍ່ຕາມ ຢູ່ໃນສະຖານະການເຮົາກໍ່ຈະໄ້ດຮັບປະໂຫຍດຈາກການບໍ່ຖືກລົງໂທດຈາກຕົວແບບເຊັ່ນ: ກໍລະນີການຫຼຸດຜ່ອນຄວາມຢ້ານກົວຂອງຄົນປ່ວຍທີ່ມີອາການຢ້ານງູທີ່ສຸດ. ເຮົາອາດຈະໃຫ້ຄົນປ່ວຍໄດ້ເຫັນຕົວແບບທີ່ຫຼິ້ນກັບໂຕງູ ໂດຍບໍ່ຖືກງູກັດ. ພຶດຕິກຳຂອງຕົວແບບລັກສະນະນີ້ຈະຊ່ວຍໃຫ້ຄົນປ່ວຍທີ່ຢ້ານງູຈະບໍ່ຢ້ານງູອີກ.

### 3.4. ຂະບວນການທາງປັນຍາຂອງຜູ້ຮຽນ.

ທ່ານແບນດູຣາຈະເນັ້ນບຸກຄົນເລື່ອງຂະບວນການທາງປັນຍາ. ຂະບວນການມາງປັນຍາເປັນຕົວເຊື່ອມລະຫ່ວາງພຶດຕິກຳ ແລະ ຜົນການກະທຳທີ່ຕົວແບບໄດ້ຮັບ ແລະ ຖືວ່າເປັນອົງປະກອບທີ່ມີບົດບາດໃນຖານະສູນກາງຂອງການຮຽນຮູ້. ສະນັ້ນ ເພິ່ນຈຶ່ງເອີ້ນຂະບວນດັ່ງກ່າວນີ້ວ່າ: “ ຂະບວນການຮຽນຮູ້ ”

ຂະບວນການຂອງການຮຽນຮູ້ໃນທັດສະນະຂອງທ່ານແບນດູຣາຈະເກີດຂຶ້ນໃນ 4 ຂັ້ນຕອນຄືດັ່ງນີ້:

- ຜູ້ຮຽນເກີດຈາກຄວາມໃສ່ໃຈ ( Attention ).
- ຜູ້ຮຽນຈົດຈຳ ( Retention ).
- ຜູ້ຮຽນສະແດງພຶດຕິກຳຕາມຕົວແບບ ( producing Behavior ).
- ຜູ້ຮຽນເກີດມີແຮງຈູງໃຈທີ່ສະແດງພຶດຕິກຳແບບຊ້ຳໆ ( Motivated to Repeat the Behaviors ).

### 3.4.1. ຂະບວນການໃສ່ໃຈ ( Attention Process )

ຄວາມໃສ່ໃຈມີບົດບາດທີ່ສຳຄັນຕໍ່ການຮຽນ ຖ້າຜູ້ຮຽນບໍ່ມີການໃສ່ໃຈພຶດຕິກຳໃໝ່ໆກໍ່ຈະບໍ່ເກີດຂຶ້ນໄດ້. ເຖິງຢ່າງໃດກໍ່ຕາມຜູ້ຮຽນຈະບໍ່ໃສ່ໃຈຕົວແບບທຸກຕົວທີ່ປະກົດຂຶ້ນຢູ່ອ້ອມຂ້າງເຂົາ ແຕ່ເຂົາຈະເລືອກໃສ່ໃຈສະເພາະຕົວແບບບາງຢ່າງເທົ່ານັ້ນ. ຄວາມໃສ່ໃຈຂອງຜູ້ສັງເກດຕໍ່ກັບຕົວແບບຈະຂຶ້ນກັບອົງປະກອບຫຼາຍຢ່າງທີ່ສຳຄັນເຊິ່ງໄດ້ແກ່ ປະສິດທິພາບຂອງຕົວແບບ ແລະ ລັກສະນະຂອງຜູ້ທີ່ສັງເກດ. ລັກສະນະດັ່ງກ່າວຈະມີດັ່ງນີ້:

- **ຄວາມເດັ່ນ:** ຕົວແບບທີ່ເດັ່ນກໍ່ຍ່ອມດຶງດູດໃຫ້ຜູ້ສັງເກດມີຄວາມສົນໃຈຫຼາຍກ່ວາຕົວແບບທີ່ເດັ່ນ.
- **ຄວາມຊັບຊ້ອນ**: ຜູ້ສັງເກດມີຄວາມໃສ່ໃຈຕໍ່ເຫດການຂອງຕົວແແບທີ່ຊັບຊ້ອນໜ້ອຍຫຼາຍກ່ວາເຫດການຂອງຕົວແບບທີ່ມີຄວາມຊັບຊ້ອນຫຼາຍເຊັ່ນ. ຄຳເວົ້າທີ່ຍືດຍາວຈະມີຄວາມຊັບຊ້ອນເກີນໄປສຳລັບເດັກ ຈຶ່ງພາໃຫ້ເຂົາບໍ່ສົນໃຈ. ຖ້າຫຼຸດຄຳເວົ້າລົງໂດຍເວົ້າໃຫ້ເຂົ້າໃຈງ່າຍໆເດັກກໍ່ຈະມີຄວາມສົນໃຈເພີ່ມຂຶ້ນ.
- **ຈຳນວນຕົວແບບ:** ໃນພຶດຕິກຳທີ່ຕົວແບບຖ້າມີຕົວແບບຫຼາຍໆຕົວກໍ່ຈະຮຽກຮອ້ງຄວາມສົນໃຈ ແລ"ະ ເຮັດໃຫ້ເກີດມີຄວາມສົນໃຈຫຼາຍກ່ວາຈຳນວນຕົວແບບທີ່ມີໜ້ອຍ.
- **ຄວາມກ່ຽວຂ້ອງ ແລະ ການມີຄຸນຄ່າ:** ປົກກະຕິແລ້ວທຸກຄົນຈະໃສ່ໃຈຕົວແບບທີ່ກ່ຽວຂ້ອງ ແລະ ມີຄຸນຄ່າກັບຕົນເອງສະເໜີເຊັ່ນ: ຜູ້ທີ່ກຳລັງຊື້ລົດໃຫຍ່ໃໝ່ກໍ່ຈະໃສ່ໃຈພຶດຕິກຳການຂັບລົດຈາກຕົວແບບ. ເພດຍິງທີ່ຈະກຳລັງຈະເປັນເຈົ້າສາວກໍ່ຈະໃສ່ໃຈພຶດຕິກຳຂອງເຈົ້າສາວ.

ອົງປະກອບທີ່ສຳຄັນຕໍ່ການໃສ່ໃຈກໍ່ແມ່ນຕົວຜູ້ທີ່ສັງເກດເອງ. ລັກສະນະຂອງຜູ້ສັງເກດທີ່ມີອິດທິພົນຕໍ່ຂະບວນການໃສ່ໃຈມີຄື:

- ການຮັບຮູ້: ການຮັບຮູ້ນີ້ຈະໝາຍເຖິງຄວາມສາມາດໃນການຮັບຮູ້ ແລະ ປະສົບການຮັບຮູ້ໃນອາດີດ. ຜູ້ທີ່ສາມາດຮັບຮູ້ໄດ້ດີຍ່ອມມີແນວໂນ້ມການໃສ່ໃຈໄດ້ດີກ່ວາຜູ້ທີ່ມີການຮັບຮູ້ບໍ່ດີ ປະຊົບການຮັບຮູ້ໃນອາດີດຈະເປັນແນວທາງໃຫ້ຜູ້ສັງເກດໃສ່ໃຈຕົວແບບໃນແງ່ໃດແງ່ໜຶ່ງ ແລະ ເປັນແນວທາງແປຄວາມໝາຍຈາກການຮັບຮູ້ນັ້ນ.
- ລະດັບຄວາມຕື່ນຕົວ: ການຕື່ນຕົວທີ່ກ່າວນີ້ອາດຜິດຈາລະນາໄດ້ຈາກພາວະຕ່າງໆຂອງອິນຊີ. ຕົວຢ່າງ: ນັກກິລາແລ່ນ,ເວລາກຳລັງໃສ່ໃຈຕໍ່ສຽງສັນຍານການປ່ອຍຕົວຈະຢູ່ໃນພາວະການຕື່ນຕົວສູງ,ໃນເວລາກຳມະການບອກໃຫ້ຢືນປະຈຳທີ່ຈະແມ່ນພາວະການຕື່ນຕົວລະດັບປານກາງ. ເວລາຄົນກຳລັງນັ່ງຫຼັບຈະຢູ່ໃນພາວະຕື່ນຕົວຕໍ່າ. ນັກຈິດຕະວິທະຍາໄດ້ພົບວ່າ: ເວລາຄົນຢູ່ໃນພາວະຕື່ນຕົວລະດັບປານກາງຈະມີຄວາມໃສ່ໃຈຕໍ່ກັບຕົວແບບດີກ່ວາພາວະການຕື່ນຕົວຕໍ່າ.
- ຄວາມຮູ້ສຶກເດີມທີ່ມີຢູ່ແລ້ວ. ຖ້າຜູ້ສັງເກດມີຄວາມຮູ້ສຶກມັກຕົວແບບໃດໜຶ່ງມາກ່ອນແລ້ວເຂົາກໍ່ຈະມີຄວາມສົນໃຈຕໍ່ກັບສິ່ງນັ້ນຫຼາຍທີ່ສຸດ.

- ທັກສະຂອງການສັງເກດ: ຜູ້ສັງເກດມີທັກສະການສັງເກດສູງ ແລະ ມີຄວາມສາມາດພິດຈາລະນາລາຍລະອຽດຂອງຕົວແບບໄດ້ດີຍ່ອມມີຄວາມສົນໃຈໃນພຶດຕິກຳຂອງຕົວແບບຫຼາຍກວ່າທີ່ສັງເກດທີ່ມີທັກສະການສັງເກດຕ່ຳ.

### 3.4.2. ຂະບວນການຈຳ ( Retention )

ໃນການຮຽນແບບຈາກຕົວແບບ,ຜູ້ຮຽນຈະຕອ້ງຈົດຈຳໃນສິ່ງທີ່ຕົນເຫັນຈາຕົວແບບ.ການຈົດຈຳນີ້ ອາດຈະຢູ່ໃນຮູບແບບສັນຍາລັກ ຫຼື ພາສາ ຫຼື ໃນຮູບຂອງຈິນຕະນາພາບ ຫຼື ທັງ2 ຢ່າງການຈົດຈຳຈະໄດ້ດີຂຶ້ນ ຖ້າຫາກໄດ້ຮັບການເຝິກພົນ ເຊິ່ງສາມາດເຝິກໄດ້ທັງຮູບການທົບທວນໃນໃຈ ຫຼື ໂດຍເຝິກການກະທຳ. ການເຝິກເຫຼົ່ານີ້ຈະຊ່ວຍໃຫ້ຜູ້ຮຽນຈົດຈຳລາຍລະອຽດ ແລະ ຈັດລຳດັບຂອງພຶດຕິກຳໄດ້ຢ່າງເປັນລະອຽດ.

### 3.4.3. ຂະບວນການປະຕິປັບຕາມຕົວແບບ ( Production Process )

ເມື່ອບຸກຄົນເກີດມີຄວາມໃສ່ໃຈ ແລະ ຈົດຈຳພຶດຕິກຳຈາກຕົວແບບແລ້ວ, ກໍ່ບໍ່ໝາຍຄວາມວ່າເຂົາຈະປະຕິບັດ ຫຼື ຮຽນພຶດຕິກຳຈາກຕົວແບບນັ້ນໂດຍດີ. ມີບາງຄັ້ງຈະຕ້ອງໄດ້ເຝິກພົນ,ຕ້ອງການຮັບຮູ້ພົນຂອງການເຝິກ ແລະ ການແນະນຳບາງເລື່ອງກ່ຽວກັບການກະທຳຂອງພຶດຕິກຳນັ້ນ.

ການຮັບຮູ້ພົນຂອງການເຝິກນັ້ນ,ອາດຢູ່ໃນຮູບແບບການບອກເຫຼົ່າຂອງຄົນອື່ນ ຫຼື ຈາກການພິຈາລະນາດ້ວຍການບັນທຶກສຽງຂອງການເຝິກ. ນອກຈາກການອາໃສການລະນຶກ ແລະ ສັງເກດພຶດຕິກຳຂອງຕົວແບບແລ້ວ.ຜູ້ທີ່ຮຽນກໍ່ຕ້ອງມີຄວາມໝັ້ນໃຈວ່າ ຕົນເອງມີຄວາມສາມາດທີ່ຈະກະທຳໄດ້.

### 3.4.4. ຂະບວນການຈູງໃຈ ( MocTivational Process )

ຄືດັ່ງທີ່ໄດ້ກ່າວມາຕອນຕົ້ນແລ້ວວ່າ: ທິດສະດີຂອງ ທ່ານແບນດູຣາ ໄດ້ແຍກຄວາມແຕກຕ່າງລະຫວ່າງການຮຽນຮູ້ ແລະ ພົນງານໄວ້ຢ່າງຊັດເຈນ ເຮົາອາດຮຽນຮູ້ທັກສະໃໝ່ໆ ຫຼື ພຶດຕິກຳໃໝ່ໆຈາກການສັງເກດ,ແຕ່ບໍ່ໄດ້ສະແດງ ຫຼື ກະທຳພຶດຕິກຳທີ່ຮຽນຮູ້ຈາກຕົວແບບນັ້ນໂດຍທັນທີ.ເຮົາຈະສະແດງອອກ ຫຼື ກະທຳກໍ່ຕໍ່ເມື່ອເຮົາມີແຮງຈູງໄຈບາງຢ່າງ ຫຼື ມີສິ່ງຍົວະໃຈໃຫ້ເກີດມີພຶດຕິກຳນັ້ນ.ມັນຈະສະແດງອອກພາຍຫຼັງຮຽນຮູ້ມາແລ້ວເປັນເວລາດົນນານ.

ການເສີມແຮງຈະມີບົດບາດຫຼາຍຢ່າງຢູ່ໃນການຮຽນຮູ້ດ້ວຍການສັງເກດ.ຖ້າເຮົາໄດ້ຮັບການເສີມແຮງພາຍຫຼັງໄດ້ຮຽນແບບພຶດຕິກຳຈາກຕົວແບບ.ເຮົາກໍ່ຈະມີແຮງຈູງໃຈທີ່ຈະໃສ່ໄຈຈົດຈຳ ແລະ ສະແດງພຶດຕິກຳຕາມຕົວແບບນັ້ນຫຼາຍຂຶ້ນກ່ວາເກົ່າ.ການເສີມແຮງນີ້ ຍັງເຮັດໃຫ້ການຮຽນຮູ້ມີຄວາມໝັ້ນທ່ຽງ.ຜູ້ທີ່ທົດລອງພຶດຕິກຳໃໝ່ໆ ຈະສະແດງພຶດຕິກຳນັ້ນຕໍ່ໄປ ຖ້າເຂົາໄດ້ຮັບການເສີມແຮງ

ທ່ານແບນດູຣາ ໄດ້ຈຳແນກການເສີມແຮງນັ້ນອອກເປັນ 3 ລະບົບຄື: ການເສີມແຮງໂດຍກົງ ( Direct R einforcement ) ການເສີມແຮງຈາກການເຫັນຕົວແບບໄດ້ຮັບຜົນກຳທີ່ດີ ( Vicarious Reinforcement ) ແລະ ການເສີມແຮງດ້ວຍຕົນເອງ ( Self-Reinforcement ) .

( 1 ) **ການເສີມແຮງໂດຍກົງ:** ແມ່ນຜົນກຳທີ່ຜູ້ສັງເກດໄດ້ຮັບໂດຍກົງຫຼັງຈາກເຂົາສະແດງພຶດຕິກຳຕາມຕົວແບບ ເຊັ່ນ: ນັກກິລານາສະຕິກ ໄດ້ສະແດງທ່າຕີລັງກາຢູ່ເທິງຮາວຄູ່ທີ່ສຳເລັດແລ້ວກໍ່ໄດ້ຮັບຄຳຊົມເຊີຍຈາກຄູເຝິກວ່າ ດີເລີດ.

( 2 ) **ການເສີມແຮງຈາກການເຫັນຕົວແບບໄດ້ຮັບຜົນກຳທີ່ດີ**: ເປັນລັກສະນະທີ່ຜູ້ສັງເກດເຫັນຕົວແບບໄດ້ຮັບການເສີມແຮງແລະເຮັດເຂົາມີແນວໂນ້ມຈະກະທຳຄືກັບຕົວແບບນັ້ນ.

(3) **ການເສີມແຮງດ້ວຍຕົນເອງ:** ການເສີມແຮງທີ່ຜູ້ກະທຳໄດ້ຮັບໂດຍກົງ ແລະ ການເຫັນຜູ້ອື່ນໄດ້ຮັບການເສີມແຮງ ລ້ວນແຕ່ເປັນຜົນກຳທີ່ໄດ້ຮັບຈາກສິ່ງແວດລ້ອມພາຍນອກຕົວທັງນັ້ນ ແຕ່ການເສີມແຮງດ້ວຍຕົນເອງຈະກົງກັນຂ້າມເພາະເປັນການເສີມແຮງທີ່ມີອິດສະຫຼະຈາກສັງຄົມຫຼືສິ່ງແວດລ້ອມ. ຜູ້ກະທຳຈະເປັນຜູ້ດຳເນີນການແລະຄວບຄຸມການເສີມແຮງດ້ວຍຕົນເອງ.

❖ **ການເສີມແຮງດ້ສຍຕົນເອງຈະປະກອບດ້ວຍປັດໄຈ 3 ຢ່າງຄື:**

1. ມາດຖານຂອງພຶດຕິກຳຈະໄດ້ຮັບການເສີມແຮງ,ຕົນເອງເປັນຜູ້ກຳນົດຂຶ້ນເພື່ອປະເມີນຕົນເອງ.
2. ລັກສະນະຕົວເສີມແຮງທີ່ຈະໄດ້ຮັບໃນເມື່ອກະທຳ ຫຼື ສະແດງພຶດຕິກຳໄດ້ຕາມມາດຖານທີ່ກຳນົດ.
3. ບຸກຄົນໃນຖານະເປັນຜູ້ດຳເນີນການໃຫ້ ແລະ ກຳນົດການເສີມແຮງໃຫ້ຕົນເອງ.

ການເສີມແຮງດ້ວຍຕົນເອງນີ້ຈະເປັນສິ່ງສຳຄັນທີ່ສຸດສຳລັບຄູ ແລະ ນັກຮຽນ.ຍ້ອນວ່າຄູຕ້ອງການໃຫ້ນັກຮຽນມີຄວາມກ້າວໜ້າຂຶ້ນໂດຍບໍ່ຄິດເຖິງແຕ່ລາງວັນພາຍນອກເທົ່ານັ້ນ ແຕ່ຄູຕອ້ງການໃຫ້ນັກຮຽນເກີດມີຄວາມພູມໃຈ. ເຫັນຄຸນຄ່າ ແລະ ເກີດມີຄວາມສຸກໃຈຕໍ່ກັບພັດທະນາການທີ່ມີຄວາມກ້າວໜ້າຂຶ້ນນັ້ນ.

## 4. ການຮຽນຮູ້ທີ່ສັບຊອ້ນ

ປັດໄຈທີ່ມີຄວາມສຳຄັນຕໍ່ການຮຽນຮູ້ທີ່ສັບຊ້ອນຂອງມະນຸດ ຈະບໍ່ມີສະເພາະແຕ່ຂະບວນການໃສ່ໃຈ,ການຈົດຈຳ,ການກະທຳ ແລະ ແຮງຈູງໃຈເທົ່ານັ້ນ ແຕ່ຕອ້ງອີງໃສ່ອົງປະກອບທີ່ສຳຄັນອີກ2 ປະການຄື:ຄວາມຮູ້ສຶກເຊື່ອໝັ້ນ, ແລະ ຂະບວນການຮັບຜິດຊອບຕົນເອງຂອງຜູ້ຮຽນ.

### .1. ຄວາມຮູ້ສຶກເຊື່ອໝັ້ນ.

ຄວາມຮູ້ສຶກເຊື່ອໝັ້ນຈະເປັນປັດໄຈທີ່ສຳຄັນປະການໜຶ່ງຢູ່ໃນຂະບວນການປະຕິບັດຕາມຕົວແບບ.ຄວາມຮູ້ສຶກນີ້ຈະເກີດຂື້ນຈາກການປະເມີນຕົນເອງວ່າ: ມີຄວາມສາມາດກະທຳສິ່ງຕ່າງໆໄດ້ສຳເລັດ, ສາມາດໃຊ້ກົນໄກວິທີທີ່ມີປະສິດທິພາບໃນການແກ້ບັນຫາ ຫຼື ກະທຳສິ່ງໃດສິ່ງໜຶ່ງຢູ່ໃນສະຖານະການທີ່ແປກໆໃໝ່ໆໄດ້, ຫຼັງຈາກປະເມີນຕົນເອງແລ້ວເຂົາຈະເກີດມີຄວາມຮູ້ສຶກເຊື່ອໝັ້ນຕໍ່ຄວາມສາມາດຂອງຕົນວ່າຈະກະທຳຢ່າງໜຶ່ງໃຫ້ສຳເລັດໄດ້.

**ທ່ານແບນດູຣາ ໄດ້ກ່າວເຖິງປັດໄຈກໍ່ໃຫ້ເກີດມີຄວາມຮູ້ສຶກເຊື່ອໝັ້ນຕົນເອງ 4 ປະການຄື:**

**1. ການສະແດງບົດບາດຕາມຕົວແບບໄດ້ສຳເລັດ:** ການຮຽນແບບຈາກຕົວແບບ ຫຼື ກະທຳຫຼັງຈາກເຫັນຕົວແບບ ຈະເຮັດໃຫ້ຜູ້ຮຽນເກີດມີຄວາມຮູ້ສຶກເຊື່ອໝັ້ນຕົນເອງ. ກົງກັນຂ້າມຖ້າຫາກເຂົາຫາກລົ້ມເຫວໃນການກະທຳຊໍ້າຄືນເລື່ອຍໆ ກໍ່ຈະພາໃຫ້ຄວາມຮູ້ສຶກເຊື່ອໝັ້ນຕົນເອງນັ້ນຫຼຸດຕໍ່າລົງ. ໄດ້ມີການສັງເກດເຫັນວ່າ: ບຸກຄົນທີ່ມີຄວາມຮູ້ສຶກເຊື່ອໝັ້ນຕົນເອງສູງ ເຖິງວ່າເຂົາຈະພົບກັບຄວາມລົ້ມເຫວບາງຄັ້ງ, ແຕ່ເຂົາກໍ່ຍັງມີຄວາມຮູ້ສຶກເຊື່ອໝັ້ນສູງຢູ່.ກົງກັນຂ້າມ ຜູ້ທີ່ມີຄວາມຮູ້ສຶເຊື່ອໝັ້ນຕົນເອງຕໍ່າ,ຄວາມລົ້ມເຫວຈະມີຜົນກະທົບຕໍ່ກັບຄວາມຮູ້ສຶກເຊື່ອໝັ້ນຂອງເຂົາຫຼາຍທີ່ສຸດ.

**2.ປະສົບການສ່ວນບຸກຄົນ:** ການຜູ້ທີ່ສັງເກດໄດ້ເຫັນຄົນອື່ນໆທີ່ຄືກັບເຂົາກະທຳສິ່ງຕ່າງໆໄດ້ສຳເລັດກໍ່ມີຜົນພາໃຫ້ເກີດມີຄວາມເຊື່ອໝັ້ນຕົນເອງສູງ.

**3.ການເວົ້າທີ່ຊັກຈູງໃຫ້ເຊື່ອວ່າເຂົາມີຄວາມສາມາດ:** ການໃຊ້ຄຳເວົ້າຊັກຈູງໃຫ້ເຊື່ອວ່າເຂົາມີຄວາມສາມາດຈະຊ່ວຍຫຼຸດຄວາມຮູ້ສຶກສົງໃສຄວາມສາມາດຂອງຕົນ.ໃນຂະນະດຽວກັນກໍ່ຈະເພີ່ມຄວາມຮູ້ສຶກເຊື່ອໝັ້ນຂຶ້ນຕື່ມ.

**4.ພາວະທາງສະລີລະສາດ:** ໃນເມື່ອບຸກຄົນຫາກນອນຢູ່ໃນພາວະກຳລັງອິດເມື່ອຍ ຫຼື ຮ່າງກາຍຢູ່ໃນສະພາບກຳລັງຕຶງຄຽດ ກໍ່ຈະເຮັດໃຫ້ການຮັບຮູ້ກ່ຽວກັບຄວາມເຊື່ອໝັ້ນເປັນໄປໃນທາງລົບຫຼາຍກ່ວາທາງບວກ.

**4.2. ລະບົບການຮັບຜິດຊອບຕົນເອງ**

ໃນການກຳກັບຕົນເອງ ( helf-regultory ) ໝາຍເຖິງຜູ້ຮຽນຈະເປັນຜູ້ກຳນົດເປົ້າໝາຍຫຼືມາດຕະຖານຂອງພຶດຕິກຳທີ່ເຂາເອງມີຄວາມໝຸ້ງຫວັງຈະສັງເກດ,ບັນທຶກແລະປະເມີນຜົນຫຼືພຶດຕິກຳຂອງຕົນວ່າບັນລຸຕາມເປົ້າໝາຍຫຼືມາດຕາຖານທີ່ກຳນົດໄວ້ຫຼາຍນ້ອຍພຽງໃດ.ຜົນຈາກການປະເມີນອາດພາໃຫ້ເກີດມີຄວາມຮູ້ສຶກເພິ່ງພໍໃຈຫຼືບໍ່ພໍໃຈໃນຕົນເອງແລະຈະນຳໄປສູ່ການເສີມແຮງດ້ວຍຕົນເອງ.

ການກຳນົດເປົ້າໝາຍຫຼືມາດຕະຖານຂອງພຶດຕິກຳທີ່ຕ້ອງການ ອາດກຳນົດໂດຍພິຈາລະນາການກະທຳຂອງຜູ້ອື່ນຫຼືກຳນົດຈາກການພິຈາລະນາຜົນງານຂອງຕົນຢູ່ອາດີດ. ການປະເມີນແມ່ນອີງໃສ່ຜົນງານທີ່ປະກົດຂຶ້ນວ່າບັນລຸຕາມມາດຕະຖານທີ່ກຳນົດໄວ້ຫຼືບໍ່. ຖ້າບັນລຸເປົ້າໝາຍກໍ່ຈະມີຄວາມຮູ້ສຶກປິຕິຊົມຊື່ນ

ແລະພາກພູມໃຈໃນຕົນເອງ. ຖ້າເຮັດບໍ່ໄດ້ຕາມເປົ້າໝາຍເຂົາກໍ່ຈະທຸ້ມເທໃສ່ວຽກງານນັ້ນຈົນໄດ້ຮັບຜົນສຳເລັດຕາມເປົ້າໝາຍທີ່ວາງໄວ້.

ເຖິງຢ່າງໃດກໍ່ຕາມ ຖ້າການຕັ້ງເປົ້າໝາຍນັ້ນຫາກເປັນມາດຕະເກນສູງເກີນໄປ ຈົນບໍ່ສາມາດປະຕິບັດຕາມເປົ້າໝາຍທີ່ວາງໄວ້ກໍ່ຈະພາໃຫ້ເຂົາໄປສູ່ຄວາມຂັບຂ້ອງໃຈແລະມີຄວາມທຸກຫຼືການປະເມີນຕົນນັ້ນຫາກເຂັ່ງຂັດເອົາຈິງເອົາຈັງ.ຜູ້ທີ່ບໍ່ຜ່ານການປະເມີນກໍ່ຈະເກີດມີຄວາມຮູ້ສຶກວ່າຕົນເອງບໍ່ມີຄຸນຄ່າ,ບໍ່ມີຄວາມສາມາດຫຼືດູໝິ່ນຕົນເອງ. ຖ້າຜູ້ໃດຫາກເປັນຄົນເກັບກົດຄວາມຮູ້ສຶກແບບນັ້ນຍິ່ງເພີ່ມຂຶ້ນ ເພາະບຸກຄົນທີ່ມີບຸກຄະລິກລະພາບແບບເກັບກົດແມ່ນມີຄວາມຮູ້ສຶກຮຸນແຮງຕໍ່ກັບຄວາມລົ້ມເລວຂອງຕົນເອງຄວາມຮູ້ສຶກດັ່ງກ່າວຈະສົ່ງຜົນກະທົບຕໍ່ພຶດຕິກຳທາງສັງຄົມເນື່ອງຈາກເຂົາຈະກາຍເປັນຄົນທີ່ມີອາລົມຄຽດ ແລະ ມີມະນຸດສຳພັນກັບໝູ່ເພື່ອນ.

ສະນັ້ນພຶດຕິກຳຮັບຜິດຊອບຂອງຕົນເອງນີ້ ອາດອະທິບາຍແຈ້ງຢູ່ໃນຄວາມສຳພັນລະຫວ່າງບຸກຄົນ,ພຶດຕິກຳແລະສິ່ງແວດລ້ອມທີ່ເປັນປັດໃຈກຳນົດເຊິ່ງກັນແລະກັນ.

## 5. ການຮຽນຮູ້ດ້ວຍການສັງເກດຢູ່ໃນຫ້ອງຮຽນ.

ການຮຽນຮູ້ດ້ວຍການສັງເກດຈະເກີດຂຶ້ນຢ່າງຫຼວງຫຼາຍຢູ່ໃນຫ້ອງຮຽນ. ເດັກນັກຮຽນຈະໄດ້ຮຽນຮູ້ທັດສະນະຄະຕິ,ການກະທຳແລະທັດສະນະຕ່າງໆຈາກຕົວແບບ,ຕົວແບບທີ່ມີບົດບາດຕໍ່ການຮຽນຮູ້ຈາກການສັງເກດຫຼາຍທີ່ສຸດກໍ່ແມ່ນຄູແລະເພື່ອນຢູ່ໃນຫ້ອງຮຽນ.

### .2. ຄູໃນຖານະທີ່ເປັນຕົວແບບທັງບຸກຄະລິກແລະພຶດຕິກຳທາງບຸກຄະລິກ

ຈາກທິດສະດີການຮຽນຮູ້ທາງສັງຄົມທີ່ກ່າວມານັ້ນ ມັນໄດ້ຊີ້ບອກວ່າຕົວແບບຈະມີອິດທິພົນສູງຕໍ່ພຶດຕິກຳຂອງບຸກຄົນ.ນກຮຽນຈະພົບກັບຕົວແບບຫຼາຍໆຊະນິດຢູ່ໃນສິ່ງແວດລ້ອມທີ່ເຂົາອາໄສຢູ່ເຊັ່ນ: ໝູ່ເພື່ອນ໌ບຸກຄົນພາຍໃນຄອບຄົວແລະຊື່ຕ່າງໆ. ຢູ່ໃນຫ້ອງຮຽນຄູຈະເປັນຕົວແບບສຳຄັນທີ່ສຸດເພາະເຂົາຈະໃຊ້ເວລາຢູ່ນຳຄູເປັນສ່ວນໃຫຍ່.

ໂດຍທົ່ວໄປຜູ້ໃຫຍ່ຈະມັກສັ່ງສອນເດັກວ່າ:ຈົ່ງກະທຳຕາມທີ່ຜູ້ທີ່ເວົ້າ,ຢ່າຊູກະທຳຕາມຜູ້ໃຫຍ່ກະທຳ.ການສອນລັກສະນະນີ້ ຈະກົງກັນຂ້າມກັບທຳມະຊາດການຮຽນຮູ້ຂອງເດັກເພາະເດັກຈະຮຽນຮູ້ດ້ວຍການຮຽນແບບຫຼາຍກ່ວາປະຕິບັດຕາມຄຳເວົ້າ.ສິ່ງທີ່ຄວນນຳໄປປະຍຸກກໍ່ແມ່ນຄູໃນຖານະເປັນຕົວແບບຕ້ອງຄຳນຶງເຖິງສິ່ງທີ່ຕົນກະທຳ ເພາະການກະທຳຂອງຄູ ຈະເປັນຕົວຢ່າງຂອງເດັກຮຽນແບບ ຖ້າຄູມີຄວາມຫວັງຢາກໃຫ້ນັກຮຽນມີຄວາມດຸໝັ່ນຂະຫຍັນຄູຕ້ອງພິຈາລະນາຕົນເອງວ່າ:ໄດ້ກະທຳຕົນເປັນຕົວຢ່າງທີ່ດີແລ້ວບໍຖ້າຕ້ອງການໃຫ້ເດັກເປັນຄົນມີເຫດຜົນຄູກໍ່ຕ້ອງເປັນຄົນທີ່ມີເຫດຜົນ. ນອກຈາກນີ້ຄູກໍ່

ພິຈາລະນາຕົນເອງວ່າຍັງມີພຶດຕິກຳໃດທີ່ເປັນຕົວແບບໃນທາງລົບເພາະເດັກຈະຮຽນເອົາແບບດັ່ງກ່າວໂດຍຄູບໍ່ໄດ້ສອນ.

ຄູມີຄວາມສຳຄັນໃນຖານະທີ່ເປັນຕົວແບບໃຫ້ເດັກດ້ວຍຫຼາຍໆເຫດຜົນຄື: ເຫດຜົນທີ 1 ແມ່ນຄູເປັນບຸກຄົນທີ່ເດັ່ນສຳລັບເຂົາ, ເປັນປົ້າໝາຍໃຫ້ເດັກສົນໃຈ. ເຫດຜົນທີ 2 ຢູ່ໃນຫ້ອງຮຽນຄູຈະເປັນຜູ້ຄວບຄຸມການເສີມແຮງແກ່ເຂົາ. ເຫດຜົນທີ 3 ເດັກມີຄວາມສັດທາໃນຕົວຂອງຄູ. ເຂົາຈະເບິ່ງຄູໃນຖານະຜູ້ທີ່ມີຄວາມສາມາດແລະມີກຽດ. ຄຸນລັກສະນະຕ່າງໆເຫຼົ່ານີ້ຄູຈຶ່ງເປັນຕົວແບບທີ່ມີປະສິດທິພາບສະນັ້ນ, ພຶດຕິກຳຕ່າງໆຂອງຄູຈຶ່ງມີອິດທິພົນຢ່າງໃຫຍ່ຫຼວງຕໍ່ກັບນັກຮຽນ.

**.3. ຄູໃນຖານະທີ່ເປັນຕົວແບບທາງວິຊາການ**

ຄູບໍ່ພຽງແຕ່ເປັນຕົວແບບທີ່ມີອິດທິພົນສະເພາະພຶດຕິກຳທາງສັງຄົມເທົ່ານັ້ນ ແຕ່ຍັງເປັນຕົວແບບທາງການພັດທະນາທັກສະວິຊາການໃຫ້ແກ່ນັກຮຽນອີກດ້ວຍເຊັ່ນ: ຄູເປັນຕົວແບບທາງການຄິດການແກ້ບັນຫາແລະທັກສະທາງວິຊາການຕະຫຼອດເວລາ. ກໍ່ຍ້ອນວ່າຄູໄດ້ສະແດງຄວາມສາມາດທາງວິຊາການໃຫ້ນັກຮຽນເຫັນໂດຍກົງ.

ເວລາຄູສອນທັກສະທາງສັງຄົມ. ຄູກໍ່ວາງພື້ນຖານພຶດຕິກຳເພື່ອໃຫ້ນັກຮຽນສາມາດປະຍຸກຄວາມຮູ້ທີ່ໄດ້ຮຽນມາຢູ່ໃນສະຖານະການອື່ນໆໄດ້.ການສອນໃຫ້ນັກຮຽນມີທັກສະທາງປັນຍາກໍ່ຄືກັນ,ຄູຈະຕ້ອງໃຫ້ນັກຮຽນໄດ້ເຮັດຕົວຢ່າງແບບຊ້ຳໆຫຼາຍູບແບບ ເພື່ອໃຫ້ນັກຮຽນມີປະສົບການຢ່າງພຽງພໍ, ເພື່ອແກ້ໄຂບັນຫາຢູ່ໃນສະຖານະການທີ່ແຕກຕ່າງກັນເຊັ່ນ: ຖ້າຄູສອນການບວກເລກຫຼັກຄູຕ້ອງສາທິດຫຼືມີຕົວຢ່າງການບວກເລກຫຼາຍໆຕົວຢ່າງທີ່ມີຄວາມແຕກຕ່າງກັນ.ຖ້າຄູສະເໜີຕົວຢ່າງພຽງຂໍ້ດຽວເຂົາກໍ່ຈະຮັບຮູ້ບັນຫາດຽວເທົ່ານັ້ນ.

**ທ່ານຣໍເຊແລະນິໂຄຊັນ** **( Rosser and Nicholson,1984:147 )**ໄດ້ສະເໜີຕົວແບບໃນຮູບແບບຂອງການສອນທາງວິຊາການໄວ້ວ່າ:

1. ຈົ້ງສະເໜີຕົວຢ່າງໃຫ້ຫຼາຍ.

2. ໃນຈຳນວນຕົວຢ່າງນັ້ນຈົ່ງໃຫ້ມີຫຼາຍຕົວຢ່າງທີ່ແຕກຕ່າງກັນ

3. ຈົ່ງສະເໜີຕົວຢ່າງໃຫ້ສອດຄ່ອງກັບຫຼັກການກ່ຽວກັບການສອນ

4. ວິທີການນຳສະເໜີຕົວຢ່າງນັ້ນ, ຄູທັງອະທິບາຍແລະກະທຳໄປພ້ອມໆກັນເພາະຜົນການວິໃຈພົບວ່າ: ການອະທິບາຍຄວບຄູ່ໄປພ້ອມການກະທຳຂອງຄູ ຈະຊ່ວຍໃຫ້ຜູ້ສັງເກດສ້າງລະຫັດທາງພາສາແລະຈື່ຈຳຕົວແບບໄດ້ດີຂຶ້ນ.

5. ການສາທິດວິທີແກ້ໄຂບັນຫາຂອງຄູນັ້ນ ຄູຄວນສະເໜີເປັນຫຼັກການຫຼືກົດການປະຕິບັດໃນຮູບພາສາ. ເພື່ອສະດວກໃນການຈື່ຈຳແລະການຈັດລະບຽບຂອງຜູ້ທີ່ຮຽນ.

**.4. ໝູ່ເພື່ອນໃນຖານະທີ່ເປັນຕົວແບບ.**

ການທີ່ໄດ້ເຫັນເພື່ອນຄົນອື່ນໆໄດ້ຮັບລາງວັນຫຼືຮັບການລົງໂທດຈະເປັນສິ່ງສຳຄັນຕໍ່ການຮຽນຮູ້ຂອງນັກຮຽນ,ຖ້ານັກຮຽນຫາກໄດ້ພົບເຫັນຄູຕຳນິນັກຮຽນຄົນໃດໜຶ່ງທີ່ກະທຳສິ່ງໃດໜຶ່ງທີ່ບໍ່ເໝາະສົມກໍ່ຈະເຮັດໃຫ້ນັກຮຽນຄົນອື່ນໆທີ່ຢູ່ໃນຫ້ອງນັ້ນບໍ່ກ້າສະແດງພຶດຕິກຳດັ່ງກ່າວນັ້ນ. ໃນທຳນອງດຽວກັນນັ້ນ, ຖ້າຄູໃຫ້ການເສີມແຮງແກ່ນັກຮຽນຜູ້ໃດຜູ້ໜຶ່ງ.ນັກຮຽນຄົນອື່ນໆກໍ່ຈະເກີດມີຄວາມຫວັງຕໍ່ກັບການເສີມແຮງນັ້ນ ໂດຍມີແນວໂນ້ມຈະກະທຳພຶດຕິກຳຄືກັບຕົວແບບນັ້ນເພື່ອຕ້ອງການໄດ້ການເສີມແຮງຈາກຄູ

ເຮົາຈະເຫັນໄດ້ວ່າ: ເວລາໃຫ້ການເສີມແຮງແກ່ນັກຮຽນຄົນໃດໜຶ່ງ.ການດຳເນີນການນັ້ນຈະກະທຳໜ້າທີ່ 2 ຢ່າງພ້ອມກັນຄື: ຈະເປັນຕົວເສີມແຮງໂດຍກົງສຳລັບຕົວແບບທີ່ໄດ້ຮັບ.ຢູ່ໃນຂະນະດຽວກັນກໍ່ມີຜົນການປັບຕົວເສີມແຮງໃຫ້ແກ່ນັກຮຽນຄົນອື່ນໆ ເພື່ອເຮັດໃຫ້ເຂົາ ຢາກກະທຳຕາມຕົວແບບນັ້ນ. ສະນັ້ນ, ຄູຈຶ່ງຍົກຕົວຢ່າງໃຫ້ນັກຮຽນໃນຫ້ອງເຫັນວ່າ: ຖ້ານັກຮຽນຜູ້ໃດກະທຳດີກໍ່ຈະໄດ້ຮັບການຍ້ອງຍໍຊົມເຊີຍໃນຫ້ອງຮຽນອີກດ້ວຍ.

❖ **ສະຫຼຸບ.**

ທິດສະດີຂອງທ່ານແບນດູຣາແມ່ນຈິດຕະວິທະຍາການຮຽນຮູ້ຢູ່ໃນກຸ່ມປະຕິສຳພັນທີ່ໄດ້ເນັ້ນແນວຄວາມຄິດວ່າ:ພຶດຕິກຳຕ່າງໆແມ່ນຜົນບວກລະຫວ່າງຂະບວນການທາງປັນຍາຂອງບຸກຄົນ ແລະ ສິ່ງແວດລ້ອມ. ພຶດຕິກຳ, ບຸກຄົນ ແລະ ສິ່ງແວດລ້ອມຈະເປັນປັດໄຈ 3 ປະການທີ່ມີອິດທິພົນເຊິ່ງກັນ ແລະ ກັນ.

ທ່ານແບນດູຣາໄດ້ແຍກຄວາມແຕກຕ່າງລະຫວ່າງການຮຽນຮູ້ກັບຜົນງານໄວ້ຢ່າງຊັດເຈນວ່າ: ການຮຽນຮູ້ແມ່ນຂະບວນການທີ່ໄດ້ມາເຊິ່ງຄວາມຮູ້ທີ່ປະກອບດ້ວຍອົງປະກອບທີ່ສຳຄັນຄື: ການໃສ່ໃຈ, ການເຝົ້າລະຫັດໃນຮູບສັນຍາລັກແລ້ວເກັບໄວ້ຢູ່ໃນໜ່ວຍຄວາມຈຳ.ສ່ວນຜົນງານແມ່ນພຶດຕິກຳທີ່ບຸກຄົນໄດ້ສະແດງອອກມາສິ່ງທີ່ບຸກຄົນມີຈາກການຮຽນຮູ້ນັ້ນອາດຈະບໍ່ສະແດງອອກມາໃຫ້ເຮົາເຫັນກໍ່ເປັນໄປໄດ້.

ອົງປະກອບທີ່ສຳຄັນໃນການຮຽນຮູ້ນັ້ນທ່ານແບນດູຣາໄດ້ອະທິບາຍວ່າ ຈະປະກອບມີ 3 ປະການຄື: ຕົວແບບໃນຮູບພຶດຕິກຳ,ຜົນການຈາກພຶດຕິກຳຂອງຕົວແບບ ແລະ ຂະບວນການທາງປັນຍາຂອງຜູ້ຮຽນກ

- ຕົວແບບໃນຮູບພຶດຕິກາອາດເປັນຕົວແບບທີ່ມີຊີວິດ,ສັນຍາລັກ,ຢູ່ໃນຮູບຂອງຄາສອນ ຫຼື ການບອກທາງວາຈາເມື່ອຕົວແບບສະແດງພຶດຕິກຳ ອາດມີຜົນເຮັດໃຫ້ຜູ້ສັງເກດມີແນວໂນ້ມຄ້ອຍຕາມ ຫຼື ບໍ່ຄ້ອຍຕາມແມ່ນຈະຂຶ້ນກັບຜົນກຳທີ່ຕົວແບບໄດ້ຮັບ.ຖ້າຕົວແບບຫາກໄດ້ຮັບຜົນກຳທີ່ດີ,ຜູ້ສັງເກດກໍ່ຈະມີແນວໂນ້ມຮຽນແບບ ( ຫຼື ລອກແບບ ) ຖ້າຕົວແບບຫາກຖືກລົງໂທດ ຫຼື ໄດ້ຮັບຜົນກຳທີ່ບໍ່ດີຜູ້ທີ່ສັງເກດກໍ່ຈະບໍ່ຮຽນແບບນຳຕົວແບບນັ້ນ.

ຂະບວນການທາງປັນຍາຈະເປັນຕົວເຊື່ອມທາງພຶດຕິກຳ ແລະ ຜົນການກະທຳທີ່ຕົວແບບໄດ້ຮັບ ເຊິ່ງທ່ານແບນດູຣາໄດ້ຖືວ່າເປັນສູນການຂອງການຮຽນຮູ້ ຂະບວນການດັ່ງກ່າວຈະປະກອບດ້ວຍຂະບວນການໃສ່ໃຈ,ຂະບວນການຈົດຈຳ,ຂະບວນການປະຕິບັດຕາມຕົວແບບ ແລະ ຂະບວນການຈູງໃຈ. ຢູ່ໃນຂະບວນການຮຽນຮູ້ທີ່ຊັບຊ້ອນນັ້ນຜູ້ທີ່ຮຽນຕ້ອງອີງໃສ່ປັດໄຈໃນການຮຽນຮູ້ 2 ປະການຄື: ຄວາມຮູ້ສຶກເຊື່ອໝັ້ນໃນປະສິດທິພາບແຫ່ງຕົນ ແລະ ການຮັບຜິດຊອບຕົນເອງ.

ຢູ່ໃນຫ້ອງຮຽນ ຄູຈະມີບົດບາດສຳຄັນທີ່ສຸດໃນຖານະທີ່ເປັນຕົວແບບໃຫ້ແກ່ນັກຮຽນ ນັບທັງພຶດຕິກຳ,ບຸກຄະລິກກະພາບ ແລະ ທາງວິຊາການ.ເຖິງຢ່າງໃດກໍ່ຕາມ ໝູ່ເພື່ອນກໍ່ແມ່ນຕົວແບບທີ່ມີຄວາມສຳຄັນທີ່ສຸດຕໍ່ກັບການຮຽນແບບ ຫຼື ການລອກແບບຂອງນັກຮຽນ.

# ບົດທີ 8
# ແຮງຈູງໃຈໃນການຮຽນຮູ້

ໃນເວລາສອນ ຄູຈະພົບກັບບັນຫາກ່ຽວກັບແຮງຈູງໃຈຂອງຜູ້ຮຽນ ໃນຮູບແບບຕ່າງໆສະເໝີເຊັ່ນ: ມີນັກຮຽນບາງຄົນມີພຶດຕິກຳຫຼົບຫຼີກ, ທໍ້ຖອຍຫຼາຍກວ່າການພະຍາຍາມ ເພື່ອນໃຫ້ມີຜົນສຳເລັດບາງຄົນກໍ່ທໍ້ຖອຍເພາະເຊື້ອວ່າ ຕົນບໍ່ສາມາດຮຽນສຳເລັດໄດ້,ມີບາງຄົນກໍ່ວິຕົກກັງວົນສູງເກີນໄປ, ມີບາງຄົນກໍ່ມີຄວາມສາມາດໃນການຮຽນຮູ້ສູງ ແຕ່ຊ້ຳພັດບໍ່ໃສ່ໃຈຕໍ່ການຮຽນ ແລະ ອື່ນໆ. ພຶດຕິກຳຕ່າງໆຂອງຜູ້ຮຽນຄືດັ່ງເວົ້າມາຂ້າງເທິງນີ້ ອາດຈະລຸດຜ່ອນລົງ ຖ້າຄູຫາກມີຄວາມເຂົ້າໃຈກ່ຽວກັບທິດສະດີ ແລະ ລັກສະນະແຮງຈູງໃຈຂອງຜູ້ທີ່ຮຽນຮູ້ ແລະ ມີການປະຕິບັດຕໍ່ກັບຜູ້ຮຽນທີ່ເໝາະສົມ.

ຢູ່ໃນບົດນີ້ ຈະມີຄຳຖາມທີ່ວ່າ: ແຮງຈູງໃຈແມ່ນຫຍັງ? ແລ້ວກໍ່ຈະເວົ້າເຖິງທິດສະດີແຮງຈູງໃຈ 4 ທິດສະດີຄື: ທິດສະດີພຶດຕິກຳນິຍົມ, ທິດສະດີມະນຸດນິຍົມ, ທິດສະດີປັນຍານິຍົມ ແລະ ທິດສະດີທາງສັງຄົມ. ນອກນີ້ ຍັງໄດ້ເວົ້າເຖິງອົງປະກອບຫຼາຍໆຢ່າງທີ່ມີສິ່ງກ່ຽວຂ້ອງກັບແຮງຈູງໃຈຂອງຜູ້ຮຽນ ເຊິ່ງໄດ້ແກ່ຄວາມສົນໃຈ, ຄວາມຢາກຮູ້ຢາກເຫັນ, ຄວາມວິຕົກກັງວົນ, ເປົ້າໝາຍຄວາມຕ້ອງການ, ການອ້າງເຫດຜົນຂອງຄວາມສຳເລັດ, ຄວາມຫຼົ້ມເຫຼວ ແລະ ການເສີມສ້າງແຮງຈູງໃຈຕໍການຮຽນຮູ້ຕາມລຳດັບ.

## 1. ຄວາມໝາຍຂອງແຮງຈູງໃຈ

ຄຳວ່າ "ແຮງຈູງໃຈ" ພາສາອັງກິດ ແມ່ນ "Motive" ຄານີ້ຈະມີຮາກສັບມາຈາກພາສາ ລາຕິນ "Movere" ເຊິ່ງໝາຍເຖິງ "ເຄື່ອນໄຫວ" (to move) (Hodqetts, 1993-42) ເວລາເຮົາເຫັນເດັກນັກຮຽນກຳລັງຮຽນໜັງສືດ້ວຍຄວາມດູໝັ້ນຂະຫຍັນ ຫຼື ເຫັນເຂົາທຳຄວາມສະອາດໃນຫ້ອງຮຽນ ເຮົາກໍ່ສາມາດເວົ້າໄດ້ວ່າ: ພວກເຂົາມີແຮງຈູງໃຈ ເພາະເຮົາສັງເກດເຫັນວ່າ ພວກເຂົາກຳລັງມີການເຄື່ອນໄຫວຢູ່

ຄຳເວົ້າທີ່ວ່າ: ແຮງຈູງໃຈ ຈະບໍ່ໝາຍເຖິງການສະເພາະການເຄື່ອນໄຫວທາງກາຍທີ່ເຮົາສາມາດເຫັນໄດ້ເທົ່ານັ້ນ ແຕ່ມັນລວມເຖິງການເຄື່ອນໄຫວທາງດ້ານຈິດໃຈອີກດ້ວຍ. ການທີ່ເຮົາສາມາດເຫັນໄດ້ເທົ່ານັ້ນ ແຕ່ຢູ່ໃນໃຈເຂົາກຳລັງບັນທຶກເນື້ອໃນຕ່າງໆທີ່ໄດ້ຮຽນໃສ່ໃນປື້ມຂຽນນັ້ນ ເຂົາບໍ່ພຽງແຕ່ສະແດງໃຫ້ຜູ້ອື່ນເຫັນເທົ່ານັ້ນ ແຕ່ຢູ່ໃນໃຈເຂົາອາດກຳລັງຄິດ ແລະ ຈົດຈຳສິ່ງທີ່ເຂົາບັນທຶກອີກດ້ວຍ. ພຶດຕິກຳການຄິດ ແລະ ການຈົດຈຳຂອງນັກຮຽນນັ້ນ ເຮົາກໍ່ຖືວ່າການເຄື່ອນໄຫວພາຍໃນ ເຊິ່ງແມ່ນລັກສະນະໜຶ່ງທີ່ບົ່ງບອກວ່າ ເຂົາມີແຮງຈູງໃຈ.

ໂດຍທົ່ວໄປແລ້ວ ຖ້າເຮົາວິເຄາະພຶດຕິກຳທັງຫຼາຍທີ່ເກີດຈາກແຮງຈູງໃຈ. ຄົນເຮົາມັກຖາມດ້ວຍ 2 ຄຳຖາມດ້ວຍຄື: ພຶດຕິກຳນັ້ນເກີດຂື້ນມາໄດ້ຢ່າງໃດ ແລະ ເປັນຫຍັງຈິ່ງເກີດມີພຶດຕິກຳເຊັ່ນນັ້ນ. ຢູ່ໃນ 2 ຄຳຖາມນີ້, ຄຳຖາມທີ 1 ພວກເຮົາສາມາດອະທິບາຍໄດ້ ແຕ່ຄຳຖາມທີ່ 2 ແມ່ນຍາກທີ່ສຸດທີ່ຈະລະບຸໃຫ້ຊັດເຈນໄດ້, ຕົວຢ່າງເຊັ່ນ: ທ້າວ ສຸລິດ ແລ່ນມາບອກທ່ານວ່າ: ວັນເສົານີ້ເຂົາຈະມາຕັດຫຍ້າຢູ່ເດີນໜ້າເຮືອນຂອງທ່ານ, ຖ້າມີຄົນຖາມວ່າ: ທ່ານເຮັດແນວໃດເຂົາຈິ່ງມາເຮັດວຽກໃຫ້ທ່ານທັ້ງໆ ທີ່ເປັນວັນພັກຜ່ອນ.ທ່ານອາດຕອບໄດ້ທັນທີວ່າ: "ໃຫ້ເງິນເຂົາ" ແຕ່ຖ້າມີຄົນຖາມຕໍ່ໄປວ່າ: ເປັນຫຍັງເຂົາຈິ່ງມາເຮັດວຽກດັ່ງກ່າວ, ທ່ານກໍ່ຕອບຍາກ ແລະ ຕອບບໍ່ຖືກຍ້ອນຫຍັງເຂົາຈິ່ງມາເຮັດວຽກດັ່ງກ່າວນີ້. ບາງເທື່ອເຂົາອາດຈະຕ້ອງເງິນເພື່ອເອົາໄປຊື້ເຂົ້າໜົມ, ໄປທ່ຽວຫຼີ້ນ ຫຼື ຊື້ເຄື່ອງຮຽນ ແລະ ອື່ນໆ...ຄຳຕອບທີ່ບໍ່ສາມາດຮັບຮູ້ ຢ່າງຊັດເຈນນີ້ຈະເປັນແຮງຈູງໃຈທີ່ ທ້າວສຸລິດ ມີຢູ່ໃນໃຈ. ຈາກຕົວຢ່າງນີ້ສາມາດເຫັນໄດ້ວ່າ: ການພິຈາລະນາແຮງຈູງໃຈຕ້ອງໄດ້ພິຈາລະນາຜ່ານການເຄື່ອນໄຫວ ຫຼື ພຶດຕິກຳທີ່ເຂົາໄດ້ກະທຳ ແລະ ພິຈາລະນາສິ່ງກະຕຸ້ນ ຫຼື ພະລັງທາງໃຈທີ່ຢູ່ເບື້ອງຫຼັງຂອງການທຳນັ້ນຄວບຄູ່ກັນໄປ.

ພຶດຕິກຳເກີດຈາກແຮງຈູງໃຈສ່ວນຫຼາຍບໍ່ວ່າຈະມີກໍລະນີໃດກໍ່ຕາມ, ກໍ່ຈະເປັນພຶດຕິກຳທີ່ມີລັກສະນະສຳຄັນ 3 ປະການຄື: ( 1 ) ແມ່ນພຶດຕິກຳທີ່ເກີດຈາກພະລັງ ຫຼື ຕົວກະຕຸ້ນ, ພະລັງນີ້ອາດມາຈາກພະລັງຄວາມຕ້ອງການທາງກາຍ ຫຼື ທາງຈິດໃຈກໍ່ອາດເປັນໄດ້. ( 2 ) ແມ່ນພຶດຕິກຳທີ່ເປົ້າໝາຍທີ່ມີທິດທາງ, ຊັດເຈນ. ( 3 ) ແມ່ນພຶດຕິກຳທີ່ມີຄວາມມຸ່ງໝັ້ນ ຫຼື ມີຄວາມພາກພຽນພະຍາຍາມ ເພື່ອນຳໄປສູ່ຄວາມສຳເລັດ ຫຼື ເປົ້າໝາຍທີ່ໄດ້ກຳນົດໄວ້. ດ້ວຍເຫດນີ້ ໃນເມື່ອຖາມວ່າ: ແຮງຈູງໃຈແມ່ນຫຍັງ ນັກຈິດຕະວິທະຍາຈະມັກໃຫ້ຄຳນິຍາມວ່າ:

ແຮງຈູງໃຈ ໝາຍເຖິງພະລັງທາງຈິດ ເຊິ່ງແມ່ນພາວະພາຍໃນທີ່ກະຕຸ້ນ, ກຳນົດທິດທາງ ແລະ ຄົງສະພາບຂອງພຶດຕິກຳເພື່ອບັນລຸຈຸດປະສົງ ຫຼື ເປົ້າໝາຍ.

**1.1. ແຮງຈູງໃຈ, ຄຸນລັກສະນະ ຫຼື ພາວະ**

ຄືດັ່ງທີ່ໄດ້ກ່າວມາແລ້ວວ່າ: ໃນເມື່ອເກີດມີແຮງຈູງໃຈກໍ່ເກີດມີພະລັງຊຸກດັນໃຫ້ເກີດມີພຶດຕິກຳໄປສູ່ເປົ້າໝາຍ ແລະ ມີຄຳຖາມວ່າ:ແຮງຈູງໃຈທີ່ເກີດຂຶ້ນນັ້ນແມ່ນຄຸນລັກສະນະທາງບຸກຄະລິກະພາບທີ່ຖາວອນຂອງບຸກຄົນ ຫຼື ເປັນລັກສະນະທີ່ເກີດຂຶ້ນຕາມພາວະເຫດການ.

ເພື່ອທຳຄວາມເຂົ້າໃຈເລື່ອງນີ້ໃຫ້ຊັດເຈນ. ທ່ານຈຶ່ງຖາມຕົວເອງວ່າ: ຍ້ອນຍັງທ່ານຈຶ່ງອ່ານເນື້ອໃນຂອງບົດຮຽນບົດນີ້ ? ທ່ານມີຄວາມສົນໃຈເລື່ອງແຮງຈູງໃຈ ແລະ ເກີດມີຄວາມຢາກຮູ້ແມ່ນບໍ່ ? ຫຼື ວ່າຕ້ອງການເຂົ້າໃຈແຮງຈູງໃຈຂອງຕົນເອງຫຼາຍຂຶ້ນ ຫຼື ອ່ານເພາະຄູອາຈານກຳນົດໃຫ້ອ່ານລ່ວງໜ້າເພື່ອນຳສະເໜີຢູ່ໃນຫ້ອງຮຽນ ຫຼື ອ່ານ ເພາະມີພາວະບີບຄັ້ນ ເນື່ອງຈາກຈະສອບເສັງວິຊານີ້ໃນມື້ອື່ນ.

ຈາກເຫດການທີ່ເປັນຄຳຕອບຂ້າງເທິງນັ້ນ ເຮົາສາມາດຈຳແນກອອກເປັນ 2 ກຸ່ມໃຫຍ່ຄື: ກຸ່ມທີ່ເປັນຄຸນລັກສະນະສ່ວນບຸກຄົນໄດ້ແກ່: ອ່ານເພາະມີຄວາມຕ້ອງການຄວາມສຳເລັດຕາມມາດຖານທີ່ກຳນົດໄວ້ ຫຼື ມີຄວາມພາກພຽນ ແລະ ອົດທົນເພື່ອຊອກຫາຄຳຕອບໃນສິ່ງທີ່ຕົນຢາກຮັບຮູ້. ສ່ວນອີກກຸ່ມໜຶ່ງແມ່ນເຫດຜົນທາງພາວະໃນເຫດການທີ່ເກີດຂຶ້ນເຊັ່ນ: ອ່ານເພາະຕ້ອງການກະກຽມເພື່ອອະພິປາຍໃນຫ້ອງຮຽນ ຫຼື ອ່ານເພາະຈະສອບເສັງໃນມື້ອື່ນ. ໂດຍທົ່ວໄປແລ້ວແຮງຈູງໃຈທີ່ປະກົດມັກຈະແມ່ນຜົນບວກລະຫວ່າງຄຸນລັກສະນະທາງບຸກຄະລິກກະພາບ ແລະ ພາວະເຫດຜົນ. ສະນັ້ນໃນກໍລະນີຕົວຢ່າງທີ່ກ້າວມານັ້ນ ຫຼາຍໆທ່ານທີ່ໄດ້ອ່ານບົກນີ້ກໍ່ເນື່ອງມາຈາກມີຄວາມຢາກຮູ້, ຕ້ອງການສຶກສາໃຫ້ຮູ້ຄວາມຈິງຂອງເປົ້າໝາຍທີ່ກຳນົດໄວ້ ໃນຂະນະດຽວກັນນັ້ນກໍ່ເພື່ອກຽມຕົວສອບເສັງ.

**1.2. ແຮງຈູງໃຈພາຍນອກ ແລະ ແຮງຈູງໃຈພາຍໃນ**

ກ່ອນທີ່ຈະເວົ້າເຖິງທິດສະດີຂອງແຮງຈູງໃຈ ເຮົາຄວນທຳຄວາມເຂົ້າໃຈປະເພດຂອງແຮງຈູງໃຈໂດຍທົ່ວໄປຂອງຜູ້ຮຽນສາກ່ອນ. ນັກຈິດຕະວິທະຍາໄດ້ແບ່ງແຮງຈູງໃຈຂອງບຸກຄົນອອກເປັນ 2 ປະເພດຄື: ແຮງຈູງໃຈພາຍນອກ ແລະ ແຮງຈູງໃຈພາຍໃນ.

**- ແຮງຈູງໃຈພາຍນອກ (Extrinsic Motivation)**ແມ່ນສິ່ງທີ່ເກີດມາຈາກອົງປະກອບພາຍນອກບຸກຄົນ ອົງປະກອບດັ່ງກ່າວອາດເປັນສິ່ງຊວນໃຈ, ລາງວັນ ຫຼື ກິດຈະກຳຕ່າງໆ ທີ່ມີຄວາມສຳພັນກັບພຶດຕິກຳທີ່ກະທຳໂດຍກົງເຊັ່ນ: ນາງລຸນ ຖູເຮືອນດ້ວຍຄວາມຕັ້ງໃຈ ເພາະແມ່ໄດສັນຍາວ່າ ຖ້າເຮັດວຽກແລ້ວແມ່ຈະພາໄປທ່ຽວຫຼິ້ນອານຸສາວະລີເພື່ອກິນກະແລັມ ຫຼື ໃນເວລາຮຽນຢູ່ໃນຫ້ອງ ທ້າວກີນ້ອຍ ຕັ້ງໃຈຮຽນເປັນພິເສດ, ເພາະຄູບອກວ່າໃຜຕັ້ງໃຈຮຽນຄູຈະອະນຸຍາດໃຫ້ອອກຫ້ອງ ເພື່ອໄປຫຼິ້ນໄວກວ່າປົກກະຕິ. ຈາກຕົວຢ່າງດັ່ງກ່າວເຮົາຈະເຫັນໄດ້ວ່າ: ການໄດ້ກິນກະແລັມ ແລະ ໄດ້ອອກຫ້ອງໄປຫຼິ້ນໄວ ຈະແມ່ນອົງປະກອບພາຍນອກເຊິ່ງໂດຍຄວາມເປັນຈິງແລ້ວຈະມີຄວາມສຳພັນກັບການຕັ້ງໃຈຮຽນເລີຍ.

**- ແຮງຈູງໃຈພາຍໃນ:** ແຮງຈູງໃຈພາຍໃນນີ້ຈະກົງກັນຂ້າມກັບແຮງຈູງໃຈພາຍນອກແຮງຈູງໃຈຊະນິດນີ້ເກີດມາຈາກເກີດຈາກອົງປະກອບພາຍໃນຕົວຂອງບຸກຄົນເຊັ່ນ: ກະທຳໄປຍ້ອນຄວາມສົນໃຈ ຫຼື

ມີຄວາມພໍໃຈກັບວຽກງານນັ້ນ. ຄວາມສຳເລັດກິດຈະກຳທີ່ກະທຳຈະເປັນລາງວັນໂດຍຕົວມັນເອງ ຈຶ່ງບໍ່ມີສິ່ງມາຊວນໃຈ ຫຼື ລໍຖ້າໃຫ້ຄົນອື່ນບັງຄັບຄືກັບແຮງຈູງໃຈພາຍນອກ.

**ຕົວຢ່າງ:** ທ້າວ ສັນຕິ ກຳລັງຊອກຫາຂໍ້ມູນເພື່ອມາຂຽນບົດລາຍງານ(ຊີວິດເດັກຊົນເຜົ່າ)ເຂົາສຶກສາຊີວິດຂອງເດັກເຫຼົ່ານັ້ນຈາກເອກະສານທີ່ເຂົາພໍຊອກໄດ້ ແລະ ສົ່ງຈົດໝາຍສ່ວຍຕົວໄປຫາຫົວໜ້າໂຮງຮຽນຊົນເຜົ່າເພື່ອໃຫ້ເດັກເຫຼົ່ານັ້ນໄດ້ເລົ່າລາຍລະອຽດກ່ຽວກັບການດຳລົງຊີວິດ. ທ້າວ ສັນຕິ ຈະມີຄວາມສຸກ ແລະເບີກບານກັບຂໍ້ມູນທີ່ລາວໄດ້ຮັບ. ຈົດໝາຍຫຼັກຂອງສັນຕິ ຈະບໍ່ຢູ່ໃນເກຼດ A ແຕ່ເຂົາປາຖະໜາທີ່ຢາກຮັບຮູ້ ແລະ ເຂົ້າໃຈກ່ຽວກັບການດຳລົງຊີວິດຂອງເດັກຊົນເຜົ່າທີ່ເຂົາກຳສຶກສາ ຢ່າງແທ້ຈິງ.

## 2. ທິດສະດີແຮງຈູງໃຈ

ເພິ່ນໄດ້ກ່າວເຖິງທິດສະດີແຮງຈູງໃຈ ໄວ້ຢ່າງກວ້າງຂວາງ ແລະ ຊັບຊ້ອນ ແຕ່ທິດສະດີກໍ່ມີແນວຄິດ ແລະ ຂໍ້ສະຫຼຸບແຕກຕ່າງກັນ. ບາງທິດສະດີເກີດຂຶ້ນຈາກການທົດລອງກັບສັດ, ບາງທິດສະດີເກີດຂຶ້ນຈາກການສຶກສາກັບມະນຸດໃນສະຖານະການທີ່ຈຳລອງ, ບາງທິດສະດີເກີດຂຶ້ນຈາກການສຶກສາຢູ່ໃນຄຼະລີນິກ ຫຼື ອົງການ.

ທິດສະດີທີ່ສຳຄັນທີ່ຈະກ່າວເຖິງນີ້ຈະມີຢູ່ 4 ທິດສະດີຄື: ທິດສະດີພຶດຕິກຳນິຍົມ (Behavior Approaches to Motivatioon), ທິດສະດີມະນຸດນິຍົມ (Humanistic Approaches to Motivation), ທິດສະດີປັນຍານິຍົມ (Coqnitive Approaches to Motivation) ແລະ ທິດສະດີການຮຽນຮູ້ທາງສັງຄົມ (Social Learninq Approaches Motivation).

### 2.1. ທິດສະດີພຶດຕິກຳນິຍົມ (Behavior Approaches to Motivation)

ນັກຈິດຕະວິທະຍາກຸ່ມພຶດຕິກຳນິຍົມໄດ້ມີຄວາມຄິດວ່າ: ພຶດຕິກຳເກີດມາຈາກສິ່ງກະຕຸ້ນທິດທາງຂອງພຶດທິກຳຈະກຳກຳນົດໂດຍການເສີມສ້າງ ແລະ ການລົງໂທດ. ຫຼັກການເລົ່ານີ້ ໄດ້ອະທິບາຍກ່ຽວກັບແຮງຈູງໃຈຄືກັນເຊັ່ນ: ການເສີມແຮງຂັ້ນທີໜຶ່ງ ຈະກ່ຽວຂ້ອງໂດຍກົງກັບຄວາມຕ້ອງການທາງດ້ານສະລີລະ (ຄວາມຫິວ, ຄວາມກະຫາຍ, ຄວາມຕ້ອງການທາງເພດ) ຫຼື ຕົວເສີມແຮງຂັ້ນສອງຈະກ່ຽວຂ້ອງກັບສິ່ງກະຕຸ້ນເຊິ່ງ ເກີດຂຶ້ນຄວບຄູ່ກັບຕົວເສີມແຮງຂັ້ນທີ່ 1 ຈົນມີຄຸນສົມບັດຄ້າຍຄືກັບຕົວເສີມແຮງຢູ່ຂັ້ນທີ່ 1 ນັ້ນ.

ຖ້ານັກຮຽນ ຫຼື ເດັກຫາກໄດ້ຮັບຕົວເສີມແຮງຫຼັງຈາກທີ່ກະທຳພຶດຕິກຳຢ່າງໃດຢ່າງໜຶ່ງເຂົາກໍ່ມີແນວໂນ້ມສະແດງພຶດຕິກຳເລື້ອຍໆ. ລັກສະນີ້ປັນການສ້າງນິດໃສ ຫຼື ການກະທຳບາງຢ່າງຂອງທຸກຄົນເຊັ່ນ: ໃນຊົ່ວໂມງຮຽນພາສາລາວ. ຖ້າຫາກນັກຮຽນໄດ້ຮັບລາງວັນເປັນຄຳຊົມເຊີຍ ຫຼື ໄດ້ຮັບຄວາມສົນໃຈຈາກຄູ, ຮັບຄວາມຮັກຈາກຄູ. ຖ້າເຂົາໄດ້ຮັບສິ່ງທີ່ເວົ້າມາດັ່ງກ່າວນັ້ນເລື່ອງໆພວກເຂົາຈະມີທັດສະນະຄະຕິດີ ແລະ ກໍ່ມັກຮຽນວິຊາດັ່ງກ່າວນັ້ນ.

ທິດສະດີພຶດຕິກຳນິຍົມນີ້ ເພິ່ນຈະເນັ້ນໃສການໃຫເກາານເສີມແຮງພາຍນອກ (ແຮງຈຄູງໃຈພາຍນອກ) ເຊັ່ນ: ຄະແນນ,ຄຳຊົມເຊີຍ, ແລະ ລາງວັນອື່ນໆ ເຊິ່ງກົງກັບຂ້າມກັບທິດສະດີກຸ່ມບັນຫານິຍົມ ທີ່ເນັ້ນການໃຫ້ລາງວັນດ້ວຍຕົວເອງ (ແຮງຈູງໃຈພາຍນອກ)

**2.2. ທິດສະດີມະນຸດນິຍົມ (Humanisctic Approaches Motivation)**

ນັກທິດສະດີມະນຸດນິຍົມທີ່ມີຊື່ສຽງທີ່ສຸດກໍ່ແມ່ນ ທ່ານ ມາສະໂລ (Abraham Maslow) ແລະ ທ່ານ ໂຣເຈີ (Carl Roqers)ກຸ່ມຈິດຕະວິທະຍານິຍົມ ໄດ້ອະທິບາຍເລື່ອງແຮງຈູງໃຈຂອງມະນຸດ ໂດຍເນັ້ນໃສ່ອິດສະລະພາບຂອງບຸກຄົນໃນການເລືອກກະທຳ, ກຳນົດແນວທາງພຶດຕິກຳຂອງຕົນ,ຕະຫຼອດເຖິງການພັດທະນາສັກກະຍະພາບແຫ່ງຕົນ. ຈິດຕະວິທະຍາກຸ່ມນີ້ ຈະເນັ້ນຄວາມສຳຄັນແຮງຈູງໃຈພາຍໃນ. ບາງທ່ານໄດ້ມີທັດສະນະວ່າ: ຄວາມຕ້ອງການນັບຖືຕົວເອງ ແລະ ຄວາມຕ້ອງການພັດທະນາສັກກະຍະພາບແຫ່ງຕົນ ຈະເປັນສູນກາງຂອງການສະແດງພຶດຕິກຳທັງຫຼາຍເຫຼົ່ານັ້ນ.

**2.3. ທິດສະດີປັນຍານິຍົມ (Coqnitve Approaches Motivation)**

ທັດສະນະທິດສະດີຂອງກຸ່ມປັນຍານິຍົມ ຄິດວ່າ: ພຶດຕິກຳຂອງບຸກຄົນຈະບໍ່ເກີດຈາກການຕອບໜອງຕໍ່ເຫດການພາຍນອກ ຫຼືຈາກພາວະທີ່ບໍ່ສົມບູນທາງກາຍເຊັ່ນ: ຄວາມຫິວ, ຄວາມກະຫາຍຄືດັ່ງກຸ່ມພຶດຕິກຳນິຍົມໄດ້ກ່າວໄວ້ ແຕ່ພຶດຕິກຳຕ່າງໆນັ້ນ ຈະເກີດມາຈາກການແປຄວາມໝາຍຈາກເຫດການເຫຼົ່ານັ້ນ (ການຮັບຮູ້). ຕົວຢ່າງເວລາ 12 ໂມງທ່ຽງ ຈະມີຄວາມຮູ້ສຶກ, ກະວົນກະວາຍ ເຮັດວຽກບໍ່ມີສຳມະທິເພາະເຖິງເວລາຮັບປະທານອາຫານແລ້ວ. ລັກສະນະນີ້ ຈະອະທິບາຍວ່າ: ພຶດຕິກຳທີ່ຫງຸດຫງິດຂອງຕົວເຮົາຈະບໍ່ເກີດມາຈາກການຂາດອາຫານ ແຕ່ເກີດມາຈາກການແປຄວາມໝາຍວ່າ: 12 ໂມງທ່ຽງແມ່ນເວລາທີ່ເຮົາຈະຮັບປະທານອາຫານແລ້ວ ນັກຈິດຕະວິທະຍາກຸ່ມນີ້ຈະມີຄວາມເຊື່ອວ່າ: ພຶດຕິກຳຈະຖືກກຳນົດໂດຍຄວາມຄິດ (ຄວາມເຊື່ອ, ຄວາມຄາດຫວັງ, ເປົ້າໝາຍ, ຄ່ານິຍົມ ແລະ ອື່ນໆ...) ບໍ່ໄດ້ເກີດມາຈາກການຮັບລາງວັນ ຫຼື ເສີມແຮງ ຫຼື ປະສົບການທີ່ເກີດຂຶ້ນໃນອາດີດ.

**2.4. ທິດສະດີການຮຽນຮູ້ທາງສັງຄົມ (Social Learninq Approaches Motivation)**

ກຸ່ມທິດສະດີການຮຽນຮູ້ແມ່ນກຸ່ມທີ່ປະສົບປະສານລະຫວ່າງແນວຄິດຂອງກຸ່ມພຶດຕິກຳນິຍົມ ແລະ ປັດສະຍານິຍົມແມ່ນໃຫ້ຄວາມສົນທາງຜົນຂອງການກະທຳ ແລະ ຄສາມຄິດ ຄວາມເຊື້ອຂອງບຸກຄົນ. ທິດສະດີນີ້ອະທິບາຍແຮງຈູງໃຈໃນຮູບຜົນຄູນຂອງຄາດຫວັງກັບຄຸນຄ່າເປົ້າໝາຍທີ່ຕ້ອງການ ຫຼື ເວົ້າອີກຢ່າງໜຶ່ງເພື່ອໃຫ້ເຂົ້າໃຈງ່າຍກໍ່ແມ່ນ(ຖ້າຂ້ອຍພະຍາຍາມເພີ່ມຂຶ້ນຂ້ອຍຈະໄດ້ຮັບຜົນສຳເລັດ ຫຼື ບໍ) ແລະ (ຖ້າວ່າຂ້ອຍປະສົບົນສຳເລັດ,ຜົນທີ່ໄດ້ຮັບຈະມີຄຸນຄ່າສຳລັບຂ້ອຍ ຫຼື ບໍ) ເນື່ອງຈາກແຮງຈູງໃຈໃນຮູບແບບຜົນຄູນ. ສະນັ້ນຕົວປະກອບຕົວໃດໜຶ້ງເທົ່າ ສູນ ແຮງຈູງໃຈຈະມີຄ່າເທົ່າສູນ

**ຕົວຢ່າງ:** ຖ້າເຮົາຄິດວ່າຕົນເອງກໍ່ມີໂອກາດຫຼາຍທີ່ສຸດທີ່ຈະໄດ້ຮັບເລືອກໃຫ້ເປັນນັກກິລາບານສົ່ງຂອງໂຮງຮຽນ (ນີ້ແມ່ນຄວາມຄາດຫວັງ) ແລະ ຖ້າຕົນຄິດວ່າ ການໄດ້ເຂົ້າຮ່ວມທີມກິລາບານສົ່ງນີ້ໄດ້ມີຄວາມສຳຄັນສູງ (ມີຄ່າຫຼາຍ) ຕົນເອງກໍ່ຍ່ອມມີແຮງຈູງໃຈເພື່ອໃຫ້ໄດ້ເປັນນັກກິລາບານສົ່ງນັ້ນ.

ແຕ່ຖ້າຕົວປະກອບໃດໜຶ່ງຫາກເທົ່າສູນໃດໜຶ່ງເຊັ່ນ: ຖ້າມີຄວາມເຊື່ອວ່າ ຕົນຈະບໍ່ມີໂອກາດທີ່ຈະໄດ້ຮັບເຂົ້າເປັນນັກກິລາບານສິ່ງແນ່ນອນ ຫຼື ຄິດວ່າການເປັນນັກກິລາບໍ່ເປັນປະໂຫຍດ ຫຼື ຄຸນຄ່າຫຍັງເລີຍ, ຕົນເອງກໍ່ຈະບໍ່ມີແຮງຈູງໃຈເພື່ອໃຫ້ໄດ້ເປັນນັກກິລາໂຮງຮຽນອີກ.

ທິດສະດີການຮຽນຮູ້ປັນຍາສັງຄົມຂອງທ່ານ ແບນດູຣາ ຈະເປັນຕົວຢ່າງຂອງທິດສະດີຄວາມຄາດຫວັງ ແລະ ຄຸນຄ່າຂອງເປົ້າໝາຍ. ທ່ານ ແບນດູຣາ ໄດ້ສະເໜີແນວຄວາມຄິດວ່າ: ແຮງຈູງໃຈເກີດຂຶ້ນຈາກອົງປະກອບຫຼາຍປະການຄື: ຄວາມຄິດ ແລະ ຄວາມຄາດຫວັງ, ຜົນກຳທີ່ທ່າໄດ້ຮັບຈາກການກະທຳ (ຂ້ອຍຈະປະສົບຜົນສຳເລັດ ຫຼື ຫຼົ້ມເຫຼວ?ຂ້ອຍຈະໄດ້ຮັບການນິຍົມຊົມຊອບ ຫຼື ຖືກຄົນເຍາະເຍີ້ຍ?)ຄົນຈະຄາດຫວັງຜົນກຳໂດຍອາໄສໃສ່ພື້ນຖານຈາກປະສົບການຈາກອາດີດ ຫຼື ຜົນກຳທີ່ຜູ້ອື່ນໄດ້ຮັບຈາກການກະທຳນັ້ນ. ຄວາມຄາດຫວັງເຫຼົ້ານີ້ ຈະມີຄວາມສຳພັນທາງເຫດຜົນກັບຄວາມຮູ້ສຶກເຊັ່ນ: ຖ້າເຮົາມີຄວາມເຊື້ອວ່າ: ຕົນມີຄວາມສາມາດກໍ່ຍ່ອມມີຄວາມຄາດຫວັງ, ຄວາມສຳເລັດສູງ, ແຕ່ຖ້າມີຄວາມເຊື້ອ ຫຼື ຄວາມຄິດ ຕົນເອງຂາດຄວາມສາມດການຄາດຫວັງ ເພື່ອປະສົບຜົນສຳເລັດໃນກິດຈະກຳນັ້ນກໍ່ຈະຕໍ່ລົງ.

ນອກຈາກການຄາດຫວັງແລ້ວ ອົງປະກອບອີກຢ່າງໜຶ່ງຂອງແຮງຈູງໃຈຕາມທັດສະນະຂອງ ແບນດູຣາ ໝາກໍ່ແມ່ນການຕັ້ງເປົ້າໝາຍ, ເປົ້າໝາຍທີ່ຕັ້ງໄວ້ຈະເປັນມາດຖານ ຫຼື ເກນທີ່ຕົນຈະຕ້ອງໄດ້ພາກພຽນອົດທົນກະທຳໃຫ້ສຳເລັດ. ຖ້າບັນລຸເປົ້າໝາຍເຮົາກໍ່ຍ່ອມມີຄວາມພູມໃຈ ແລະ ຕໍ່ໄປກໍ່ຈະຕັ້ງເປົ້າໝາຍໃຫ້ສູງຂຶ້ນ ແລະ ຈະພະຍາຍາມເຮັດໃຫ້ດີກ່າວເກົ່າ. ການກຳນົດເປົ້າໝາຍໄວ້ສູງ ຫຼື ຕ່ຳ ນັ້ນຈະກ່ຽວຂ້ອງກັບຄວາມສາມາດຂອງຕົນ. ຜູ້ທີ່ມີຄວາມຮູ້ສຶກວ່າຕົນມີຄວາມສາມາດສູງ ກໍ່ຍ່ອມຕັ້ງເປົ້າໝາຍໄວ້ສູງ ແລະ ພະຍາຍາມທຳງານດ້ວຍຄວາມມະນະອົດທົນຫຼາຍກວ່າຜູ້ມີຄວາມຮູ້ສຶກ ວ່າຕົນມີຄວາມສາມາດຕ່ຳ.

ແນວຄິດຂອງທິດສະດີແຮງຈູງໃຈທັງໝົດທີ່ເວົ້າມາຈະສະຫຼຸບຢູ່ໃນຕະຕາລາງລຸ່ມນີ້:

| ເລື່ອງທີ່ປຽບທຽບ | ກຸ່ມພຶດຕິກຳນິຍົມ | ກຸ່ມມະນຸດນິຍົມ | ກຸ່ມປັນຍານິຍົມ | ການຮຽນຮູ້ປັນຍາສັງຄົມ |
|---|---|---|---|---|
| ແຫ່ງຂອງແຮງຈູງໃຈ | ການເສີມແຮງພາຍນອກ | ການເສີມແຮງພາຍໃນ | ການເສີມແຮງພາຍໃນ | ການເສີມແຮງພາຍນອກ ແລະ ເສີມແຮງພາຍໃນ |
| ສິ່ງທີ່ມີອິດທິພົນຕໍ່ແຮງພາຍໃນ | ຕົວເສີມແຮງທີ່ 1 ຕົວເສີມແຮງຂັ້ນທີ່ 2 ແລະການລົງໂທດ | ຄວາມຕ້ອງການນັບຖືຕົນເອງແລະການພັດທະນາຕົນເອງໃຫ້ມີສະມັດທະພາບສູງສຸດ | ຄວາມເຊື້ອແລະອ້າງສາເຫດຂອງຄວາມສຳເລັດແລະຄວາມຫຼົ້ມເຫຼວແລະຄາດຫວັງ | ການຄາດຫວັງທີ່ຈະບັນລຸເປົ້າໝາຍຄຸນຄ່າຂອງເປົ້າໝາຍແລະຄຸນນະພາບ. |

| | | | | |
|---|---|---|---|---|
| ທິດສະດີທີ່ສຳຄັນ | ສະກິນເນີ | ມາສະໂລ | ໄວເນ | ແບນດູເຣ |

## 3. ພາວະການຕື່ນຕົວ ແລະ ແຮງຈູງໃຈ.

ການຕື່ນຕົວ (Arousal) ແມ່ນພາວະທີ່ກ່ຽວຂ້ອງນັບທັງປະຕິກິລິຍາທາງກາຍ ແລະ ທາງຈິດ. ເມື່ອເວລາຢູ່ໃນພາວະຕື່ນຕົວຈະມີການປ່ຽນແປງທັງຄື້ນສະໝອງ, ອັດຕາການເຕັ້ນຂອງຫົວໃຈ, ຄວາມດັນຂອງເລືອດ ແລະ ອັດຕາການຫາຍໃຈ. ໃນຂະນະດຽວກັນຈິດໃຈກໍ່ຈະຢູ່ໃນພາວະກຽມພ້ອມໃສ່ໃຈ. ຕື່ນຕົວ ຫຼື ຕື່ນເຕັ້ນ. ເພື່ອໃຫ້ເຂົ້າໃຈວ່າ ລະດັບການຕື່ນຕົວມີຄວາມສຳພັນກັບແຮງຈູງໃຈມີທ່າດີເພຣ່ມຂຶ້ນ. ຈິ່ງພິຈາລະນາສະຖານະການ 2 ຢ່າງທີ່ກົງກັນຂ້າມກັນ.

**- ສະຖານະການທີ່ 1 ພາວະການຕື່ນຕົວຕໍ່າ**

ຕອນເດິກຂອງຄືນຜ່ານມາທ້າວ ສຸລິດ ໄດ້ພະຍາຍາມແລ້ວພະຍາຍາມອີກ ເພື່ອທຳຄວາມເຂົ້າໃຈເນື້ອໃນບົດຮຽນທີ່ຖືກມອບໝາຍໃຫ້ ແຕ່ທ້າວ ສຸລິດ ຮູ້ສຶກເຫງົານອນທີ່ສຸດຈົນບໍ່ສາມາດໃສ່ໃຈບົດຮຽນນັ້ນໄດ້ເລີຍ ເຖິງວ່າໃກ້ຈະສອບເສັງກໍ່ຕາມ ແຮງຈູງໃຈຕໍ່ການອ່ານບົດຮຽນຂອງເຂົາມີໜ້ອຍທີ່ສຸດ, ເຂົາຈິ່ງຕັດສິນໃຈເຂົ້າໄປນອນທັນທີ່ ໃນສະຖານະການນີ້(ທ້າວ ສຸລິດ ມີພາວະການເກີດຕື່ນຕົວຕໍ່າ)

**- ສະຖານະການທີ່ 2 ພາວະການຕື່ນຕົວສູງ**

ຢູ່ໃນຫ້ອງສອບເສັງຄັດເລືອກເພື່ອເອົາພະນັກງານຄູສອນຂອງກົມສາກົນ. ນາງ ຈິດຕາ ຫາກໍ່ແກ່ຂໍ້ສອບໄດ້ພຽງແຕ່ເຄິ່ງໜຶ່ງເທົ່ານັ້ນ. ກຳມະການຍາມຫ້ອງເສັງພັດແຈ້ງວ່າ ເຫຼືອເວລາພຽງ 30 ນາທີ, ນາງມີຄວາມຮູ້ສຶກວ່າ ຖ້າແກ່ຂໍ້ສອບບໍ່ໄດ້ 60% ລາວກໍ່ຈະຕ້ອງສອບຕົກ ແລະ ຈະພາໃຫ້ນາງເສຍເວລາລໍຖ້າເສັງຄັ້ງໃໝ່ອີກເປັນເວລາ 1 ປີ ເວລານີ້ນາງຕົກຢູ່ໃນສະພາວະຕຶ່ງຄຽດ, ວິຕົກກັງວົນ ແລະ ເລັ່ມການໃສ່ໃຈໃນການແກ່ຂໍ້ສອບເປັນຈິງເປັນຈັງ. ໃນ,ສະຖາການນີ້ (ນາງ ຈິດຕາ ມີພາວະການຕຶ່ງຕົວສູງ).

ໄດ້ມີການວິໄຈພົບວ່າ: ໃນການປະກອບກິດຈະກຳຕ່າງໆ ຈະມີຈຸດສູງສຸດຂອງພາວະການຕື່ນຕົວ. ພາວະການຕື່ນຕົວນີ້ຈະມີຜົນຕໍ່ກັບປະສິດທິພາບຂອງການທຳງານ ແຕ່ຈະຜົນແນວໃດນັ້ນມັນຍັງຂຶ້ນກັບຄວາມຢາກງ່າຍຂອງວຽກງານນັ້ນອີກດ້ວຍເຊັ່ນ: ຖ້າວຽກງານນັ້ນເປັນວຽກງ່າຍໆພາວະການຕື່ນຕົວສູງຈະຊ່ວຍໃຫ້ມີປະສິດຕິພາບການທຳງານດີກ່ວາພາວະການຕື່ນຕົວຕໍ່າ,ແຕ່ຖ້າເປັນວຽກງານທີ່ຍາກພາວະການຕື່ນຕົວຕໍ່າຈະຊ່ວຍໃຫ້ປະສິດຕິພາບການທຳງານດີກ່ວາພາວະການຕື່ນຕົວສູງ

ຢູ່ໃນຫ້ອງຮຽນ ຄູຈະມັກພົບມັນຫາສຳຄັນກ່ຽວກັບພາວະການຕື່ນຕົວຂອງເດັກນັກຮຽນກໍລະນີນີ້ຄື:ກໍລະນີທີ່ນັກຮຽນຕື່ນຕົວຕໍ່າເກີນໄປຫຼືບໍ່ມີການຕື່ນຕົວເລີຍ,ກັບກໍລະນີທີ່ນັກຮຽນມີພາວະການຕື່ນຕົວສູງເກີນໄປ.ຖ້ານັກຮຽນມີພາວະຕື່ນຕົວຕໍ່າຫຼືບໍ່ຕື່ນຕົວເລີຍເຂົາຍ່ອມຂາດແຮງຈູງໃຈກ່ຽວກັບການຮຽນ

ກົງກັນຂ້າມນັກຮຽນທີ່ມີພາວະການຕື່ນຕົວສູງເກີນໄປຍ່ອມມີການວິຕົກກາງວົນສູງທີ່ສຸດມັນຈະບໍ່ເກີດຜົນດີຕໍ່ການຮຽນຮູ້ຄືກັນ.ສະນັ້ນ,ຄູຈຶ່ງຕ້ອງຊອກຫາວິທີຊ່ວຍໃຫ້ນັກຮຽນມີພາວະຕື່ນຕົວທີ່ເໝາະສົມຄືດັ່ງນີ້:

### 3.1. ການກະຕຸ້ນຄວາມສົນໃຈແລະຄວາມຢາກຮູ້ຢາກເຫັນຂອງນັກຮຽນ

ຜູ້ຮຽນຫາກມີພາວະການຕື່ນຕົວຕໍ່າຫຼາຍ,ເຂົາກໍ່ບໍ່ສົນໃຈຫຼືຢາກຮູ້, ຢາກເຫັນໃນສິ່ງທີ່ຢູ່ອ້ອມຕົວເຂົາ,ສະນັ້ນ,ບັນຫາທີ່ສໍາຄັນຂອງຄູກໍແມ່ນສອນແນວໃດຈຶ່ງຈະຮຽນໃຫ້ນັກຮຽນສົນໃຈ ແລະ ຢາກຮູ້ຢາກເຫັນໃນສິ່ງທີ່ຄູສອນນັ້ນ.

ການທີ່ຈະໃຫ້ນັກຮຽນສົນໃຈນັ້ນ ຄູຈະຕ້ອງສອນໃຫ້ສອດຄ່ອງ ກັບຄວາມສົນໃຈຂອງນັກຮຽນ, ຂັ້ນທໍາອິດຂອງຄູກໍແມ່ນການຄົ້ນຫາວ່ານັກຮຽນສົນໃຈຫຍັງກ່ຽວກັບ ວິທີຈະຮຽນຮູ້ນັ້ນຈະມີຫຼາຍວິທີຄື: ການຖາມເດັກນັກຮຽນ,ການອະພິປາຍກ່ຽວກັບນັກຮຽນ,ດ້ວຍວິທີການໃຊ້ແບບສອບຖາມຫຼືດ້ວຍວິທີສັງເດກ. ເມື່ອຄູຮູ້ວ່ານັກຮຽນສົນໃຈບັນຫາໃດຄູກໍສາມາດນໍາມາປະຍຸກໃນໃຊ້ເຂົ້າໃນການສອນເຊັ່ນ:ຖ້າຮູ້ວ່ານັກຮຽນສົນໃຈໃນເລື່ອງກະຕູນຄູກໍໃຫ້ເຂົາຮຽນຮູ້ກ່ຽວກັບປະຫວັດສາດບຸກຄົນທີ່ສໍາຄັນຂອງໂລກດ້ວຍຄໍາບັນຍາຍປະກອບຮູບພາບກະຕູນເປັນຕົ້ນ

ຄວາມຢາກຮູ້ຢາກເຫັນຈະແມ່ນລັກສະນະຢ່າງໜຶ່ງຂອງແຮງຈູງໃຈ ຄູຈຶ່ງກະຕຸ້ນແຮງຈູງໃຈຂອງນັກຮຽນເປັນຕົ້ນແມ່ນໃຫ້ນັກຮຽນເຂົ້າຮ່ວມກິດຈະກໍາຕ່າງໆຫຼືໃຫ້ໂອກາດນັກຮຽນໄດ້ຄົ້ນພົບໃນສິ່ງທີ່ເຂົາສົນໃຈ,ຖ້ານັກຮຽນຜູ້ໃຫຍ່ ຄູຄວນກະຕຸ້ນຄວາມຢາກຮູ້ຢາກເຫັນຫຼືກະຕຸ້ນດ້ວຍຄໍາຖາມເພື່ອໃຫ້ເຂົາສົນທະນະກັນທັງເຫດແລະຜົນ

### 3.2. ຄວາມວິຕົກກັງວົນໃນການຮຽນ

ນັກຮຽນທີ່ມີການຕື່ນຕົວສູງກໍຈະມີຄວາມວິຕົກກາງວົນສູງ ແລະ ມີການສຶກສາພົບວ່າ:ປະສິດຕິພາບຂອງການທໍາງານກັບຄວາມວິຕົກກັງວົນຈະມີຄວາມສໍາພັນກັນຄືກັບປະສິດຕິພາບຂອງການທໍາງານກັບພາວະຕື່ນຕົວ,ຖ້າມີຄວາມວິຕົກກາງວົນສູງຈະເຮັດໃຫ້ການທໍາງານທີ່ງ່າຍໆແລະດີ, ແຕ່ອາດເປັນອຸປະສັກຕໍ່ການຮຽນ,ການທໍາງານທີ່ຍາກແລະສັບຊ້ອນ ສ່ວນຄວາມວິຕົກກັງວົນຕໍ່າຈະຊ່ວຍໃຫ້ກການທໍາງານຍາກໆໄດ້ດີຄວາມວິຕົກກັງວົນນີ້ຈະເປັນໄປໄດ້ທັງສາເຫດແລະຜົນຂອງຄວາມລົ້ມເລວຢູ່ໃນການຮຽນຮູ້ ເຊັ່ນ: ເດັກນັກຮຽນທີ່ຮຽນບໍ່ໄດ້ດີກໍ່ອາດເປັນຜົນມາຈາກຄວາມວິຕົກກາງວົນກົງກັນຂ້າມຖ້າຜົນການຮຍນຂອງເຂົາຫລຸດລົງກໍ່ຈະເປັນສາເຫດເຮັດໃຫ້ເຂົາມີຄວາມວິຕົກກັງວົນເພີ່ມຂຶ້ນ

ຄວາມວິຕົກກັງວົນຈະເກີດມາຈາກຫຼາຍສາເຫດກໍດັນ. ຖ້ານັກຮຽນມີຄວາມວິຕົກກັງວົນສູງ ຄູຄວນແນະນໍາໃຫ້ນັກຮຽນຕັ້ງຄວາມຫວັງໃຫ້ເໝາະສົມກັບຄວາມສາມາດຂອງຕົນກໍເພາະວ່ານັກຮຽນນັ້ນມີບັນຫາຕໍ່ການເລືອກເປົ້າໝາຍເຊັ່ນ:ບາງຄົນມີແນວໂນ້ມທີ່ຈະທໍາສິ່ງທີ່ຢາກທີ່ສຸດຫຼືເຂົ້າເລືອກເປົ້າໝາຍທີ່ຢາກທີ່ສຸດ.ຖ້າເຂົາເລືອກເປົ້າທີ່ຢາກທີ່ສຸດເຂົາກໍຈະມີໂອກາດພົບກັບຄວາມລົ້ມເລວສູງສິ່ງນີ້ຈະເພີ່ມຄວາມ

ສິ້ນຫວັງ ແລະ ເບື່ອນ່າຍຕໍ່ການຮຽນກົງກັນຂ້າມຖ້າເຂົາເລືອກເປົ້າໝາຍທີ່ຈະສຳເລັດໄດ້ງ່າຍທີ່ສຸດເຂົາກໍ່ຈະປະສົບຜົນສຳເລັດແຕ່ຈະຂາດຄວາມຮູ້ສຶກຂາດຄວາມພາກພູມໃຈທີ່ຕົນບໍ່ໄດ້ໃຊ້ຄວາມພາຍາຍາມ.

## 4. ເປົ້າໝາຍ ແລະ ແຮງຈູງໃຈ

ທິດສະດີການຮຽນຮູ້ທາງສັງຄົມຂອງແບນດູເຣໄດ້ເນັ້ນຢ່າງຊັດເຈນວ່າ: ຜູ້ທີ່ຮຽນຈະເປັນຜູ້ກຳນົດເປົ້າໝາຍ (Goai) ຫຼື ມາດຖານຂອງພຶດຕິກຳທີ່ເຂົາມຸ່ງຫວັງໄວ້ ແລະ ພະຍາຍາມເຮັດໃຫ້ໄດ້ເປົ້າໝາຍ ຫຼື ມາດຖານນັ້ນ. ວິທີດັ່ງກ່າວນີ້ມີຫຼາຍໆຄົນກໍ່ໄດ້ປະຕິບັດເຊັ່ນ: ເຮົາຕັ້ງເປົ້າໝາຍວ່າ ມື້ນີ້ຈະອ່ານໜັງສືບົດນີ້ໃຫ້ຈົບຖ້າຕົນເຮັດບໍ່ໄດ້ເປົ້າໝາຍກໍ່ຈະເກີດມີຄວາມບໍ່ສະບາຍໃຈ.

- **ປະເພດຂອງເປົ້າໝາຍ**

ເປົ້າໝາຍແຕ່ຈະແຕກຕ່າງກັນບາງເປົ້າໝາຍກໍ່ຍາກ, ບາງເປົ້າໝາຍກໍ່ງ່າຍ, ບາງເປົ້າໝາຍກໍ່ຈະສຳເລັດໃນໄລຍະເວລາໃກ້, ບາງເປົ້າໝາຍກໍ່ຈະສຳເລັດໃນໄລຍະເວລາອັນໄກ ຢູ່ໃນການຮຽນຮູ້ຂອງນັກຮຽນຈະມີເປົ້າໝາຍ 2 ປະເພດຄື: ການກຳໝາຍເພື່ອຮູ້ ແລະ ກຳນົດເປົ້າໝາຍເພື່ອຜົນງານ

- **ເດັກນັກຮຽນກຳນົດເປົ້າໝາຍເພື່ອຮູ້:**

ຈະແມ່ນບຸກຄົນທີ່ມຸ່ງຫວັງເພີ່ມພູນຄວາມຮູ້ ແລະ ປັບປຸງພັດທະນາສັດກະຍາພາບຂອງຕົນເອງໃຫ້ກ້າວໜ້າ. ນັກຮຽນປະເພດນີ້ຈະມັກຮຽນວິຊາທີ່ຍາກໆ ແລະ ມີຄວາມທ້າທາຍຄວາມສາມາດ, ເວລາພົບອຸປະສັກກໍ່ຈະບໍ່ທໍ້ຖອຍ ແຕ່ພັດມີຄວາມພັດທະນາພາກພຽນ ແລະ ມີຄວາມມຸ່ງໝັ້ນເພື່ອຊະນະອຸກປະສັກນັ້ນ

- **ນັກຮຽນກຳນົດເປົ້າໝາຍເພື່ອຜົນງານ:**

ຈະແມ່ນຄວາມມຸ່ງໝັ້ນການຍອມຮັບຂອງຄົນອື່ນ, ມີຄວາມຕ້ອງການລະດັບຄະແນນທີ່ດີ (ຕ້ອງຄະແນນສູງກວ່າຄວາມຮູ້). ເຂົາຈະເລືອກຮຽນວິຊາທີ່ງ່າຍໆ ແລະ ຫຼີກເວັ້ນການຮຽນຮູ້ໃນສະຖານະທີ່ທ້າທາຍ, ເວລາພົບກັບອຸກປະສັກກໍ່ຈະທໍ້ຖອຍ.

### 4.1. ຄວາມຕ້ອງການ ແລະ ແຮງຈູງໃຈ

ຄວາມຕ້ອງການ (Need) ໝາຍເຖິງສະພາວະທີ່ເກີດຈາກຄວາມບໍ່ສົມດູນທັງກາຍ ແລະ ຈິດໃຈ. ຄວາມຕ້ອງການຂອງຄົນຈະບໍ່ຮັບການຕອບສະໜອງຢ່າງສົມບູນຖ້າໄດ້ຮັບການຕອບສະໜອງ ລະດັບໃດໜຶ່ງ ກໍ່ຈະເກີດມີຄວາມຕ້ອງການຫຼາຍຂຶ້ນອີກ, ແນວຄິດນີ້ອາດຈະເຫັນໄດ້ຢ່າງຈະແຈ້ງຢູ່ທິດສະດີລຳດັບຂັ້ນຂອງ ທ່ານ ມາສະໂລ ດັ່ງນີ້:

#### 4.1.1. ຄວາມຕ້ອງການຂອງມະນຸດຕາມທິດສະດີຂອງມາສະໂລ

ມາສະໂລ ( Marlowe Abrahm 1970 ) ໄດ້ສະເໜີທິດສະດີລາດັບຂັ້ນຂອງຄວາມຕ້ອງການໂດຍອະທິບາຍວ່າ: ມະນຸດມີຄວາມຕ້ອງການຈາກລຳດັບພື້ນຖານໄປສູ່ລະດັບສູງດັ່ງນີ້:

**( 1 ). ຄວາມຕ້ອງການທາງສະລີລະ (Physioqical Need):** ແມ່ນຄວາມຕ້ອງການອາຫານ,ນ້ຳ,ອາກາດ, ການພັກຜ່ອນ,ການຫຼັບນອນ,ທາງເພດ,ການຫຼີກເວັ້ນຄວາມເຈັບປວດ...

**( 2 ). ຄວາມຕ້ອງການຄວາມໝັ້ນຄົງປອດໄພ (Safety Need):** ໄດ້ແກ່ຄວາມຕ້ອງການອົບອຸ່ນ, ຕ້ອງການຄຸ້ມຄອງ ແລະ ໝົດຈາກອັນຕະລາຍ....ຄວາມຕ້ອງການປະເພດນີ້ມີມາຕັ້ງແຕ່ຍັງຢູ່ໄວທາລົກ. ເຮົາສັງເກດເຫັນວ່າ ເດັກພະຍາຍາມຫຼົບຫຼີກຈາກສະຖານະການທີ່ເປັນອັນຕະລາຍ ແລະ ຫຼົບຫຼີກຈາກສະຖານະການທີ່ແປກໆ ຫຼື ຄົນທີ່ແປກໜ້າ.

**( 3 ). ຄວາມຕ້ອງການຄວາມຮັກ ແລະ ການຍອມຮັບວ່າເປັນສ່ວນໜຶ່ງຂອງກຸ່ມ (Belon qess and Love Needs):** ໄດ້ແກ່ຄວາມຕ້ອງການເພື່ອນມິດ, ຕ້ອງການຜູ້ຮ່ວມວຽກງານ, ຕ້ອງການຄູ່ຮັກ ຫຼື ຄອບຄົວ.

**( 4 ). ຄວາມຕ້ອງການຍົກຍ້ອງສັນລະເສີນ (Esteem Needs):** ໄດ້ແກ່ຄວາມຕ້ອງການໃຫ້ຜູ້ອື່ນເຄົາລົບນັບຖືຕົນ. ຕ້ອງການໃຫ້ຜູ້ອື່ນຍອມຮັບວ່າຕົນມີຄ່າ ຫຼື ໄດ້ຮັບການຍົກຍ້ອງສັນລະເສີນ, ຕ້ອງການເຊື້ອໝັ້ນໃນຄວາມສາມາດຂອງຕົນ. ຜູ້ທີ່ບໍ່ໄດ້ຮັບການຕອບສະໜອງນີ້ກໍ່ຈະມີປົມດ້ອຍ ຫຼື ຂາດຄວາມຮູ້ສຶກວ່າບໍ່ຜູ້ຊ່ວຍເຫຼືອຕົນ.

**( 5 ). ຄວາມຕ້ອງການຮັບຮູ້ ແລະ ເຂົ້າໃຈ (Need to Know and):** ແມ່ນຄວາມຕ້ອງການຄວາມປາຖະໜາເພື່ອຈະຮູ້ ( ຫຼື ຢາກຮູ້ ແລະ ເຂົ້າໃຈສິ່ງຕ່າງໆ ດ້ວຍຄວາມສົນໃຈຢ່າງແທ້ຈິງ) ທ່ານມາສະໂລມີຄວາມເຫັນວ່າ ຄວາມຕ້ອງການນແຕ່ຂັ້ນນີ້ເປັນຕົ້ນໄປຈະບໍ່ມີກັບມະນຸດທຸກຄົນ.

**( 6 ). ຄວາມຕ້ອງການສຸນທະລີຍະ (Aesthenic Needs):** ໄດ້ແກ່ຄວາມຕ້ອງການຄວາມເປັນລະບຽບ , ສັດຈະທາ ແລະ ຄວາມງາມ.

**( 7 ). ຄວາມຕ້ອງການສ້າງຄວາມປະຈັກຕົນ ແລະ ພັດທະນາສັກກະພາບແຫ່ງຕົນ (Self Actulization Needs):** ແມ່ນຄວາມຕ້ອງການທີ່ຈະເຂົ້າໃຈຕົນເອງ ແລະ ຮັບຮູ້ຕົນຢ່າງເຖິງຖອງແທ້, ຕ້ອງການຄິດ ຫຼື ກະທຳທີສອດຄ່ອງກັບສະພາບທີ່ແທ້ຈິງຂອງຕົນເອງຢ່າງສ້າງສັນ ແລະ ຕ້ອງການພັດທະນາສູງສຸດຕາມສັກກະຍະພາບຂອງຕົນ.

ຈາກຄວາມຕ້ອງການທັງ 7 ຂັ້ນຕົ້ນ. ຂ້າງຕົ້ນ ທ່ານ ມາສະໂລ ໄດ້ແບ່ງອອກເປັນ 2 ກຸ່ມໃຫ່ຍຄື: ຄວາມຕ້ອງທີ່ບົກຜ່ອງ (Deficieny Needs) ເຊິ່ງປະກອບດ້ວຍຄວາມຕ້ອງການຂອງ 4 ຂັ້ນທາອິດໄດ້ແກ່: ຄວາມຕ້ອງການທາງສະລີລະ, ຄວາມຕ້ອງການໝັ້ນຄົງ ແລະ ປອດໄພ, ຄວາມຕ້ອງການຄວາມຮັກ ແລະ ການຍອມຮັບວ່າເປັນສ່ວນໜຶ່ງຂອງກຸ່ມ ແລະ ຄວາມຕ້ອງການຍົກຍໍ້ສັນລະເສີນ. ເວລາໃດຄວາມຕ້ອງການດັ່ງກ່າວໄດ້ຮັບການຕອບສະໜອງ (ອາດໄດ້ຮັບການຕອບສະໜອງເປັນບາງສ່ວນ) ກໍ່ຈະເກີດມີຄວາມຕ້ອງການຂັ້ນສູງຕໍ່ໄປເລື່ອຍໆ. ຖ້າຄວາມຕ້ອງການຂັ້ນຕົ້ນບໍ່ໄດ້ຮັບຄວາມຕອບສະໜອງ,

ຄວາມຕ້ອງການຂັ້ນສູງກໍ່ຈະບໍ່ເກີດຂຶ້ນ. ທ່ານ ມາສະໂລ ໄດ້ເນັ້ນວ່າ ຄວາມຕ້ອງຢູ່ກຸ່ມນີ້ໃນເມື່ອໄດ້ຮັບການຕອບສະໜອງແລ້ວແຮງຈູງໃຈກໍ່ຈະຫຼຸດລົງ.

ສໍາລັບຄວາມຕ້ອງການອີກກຸ່ມນັ້ນ ທ່ານ ມາສະໂລ ໄດ້ເອີ້ນວ່າ: ຄວາມຕ້ອງການທີ່ງອກງາມທີ່ສົມບູນ. (Beinq ຫຼື Grwth Needs) ຄວາມຕ້ອງກຸ່ມນີ້ໄດ້ແກ່: ຄວາມຕ້ອງການໃນ 3 ຂັ້ນທັດໄປຄື: ຄວາມຕ້ອງການຮູ້ ແລະ ເຂົ້າໃຈ, ຄວາມຕ້ອງການສູນທະລິຍະ, ຄວາມຕ້ອງການສ້າງປະຈັກຕົນ ແລະ ພັດທະນາສັກກະຍາພາບແຫ່ງຕົນ. ທ່ານ ມາສະໂລ ໄດ້ອະທິບາຍວ່າ ຄວາມຕ້ອງການນີ້ຈະກົງກັນຂ້າມກັບຄວາມຕ້ອງໃນສິ່ງທີ່ຂາດ ຫຼື ບົງຜ່ອນຢູ່ໃນ 4 ຂັ້ນທໍາອິດນັ້ນເພາະຄວາມຕ້ອງການນີ້ຖ້າໄດ້ຮັບການຕອບສະໜອງແຮງຈູງໃຈເພີ່ມຂຶ້ນ. ຕົວຢ່າງ: ນັກຫຼິ້ນດົນຕີຍິ່ງຫຼິ້ນເກັ່ງຍິ່ງຕ້ອງການຄວາມຮູ້,ຄວາມສໍານາຍເພີ່ມຂຶ້ນ.

ທິດສະດີຂອງມາສະໂລ ໄດ້ຮັບການວິຈານຢ່າງກວ້າງຂວາງ ແລະ ສົມເຫດສົມຜົນວ່າ: ມະນຸດຈະບໍ່ມີການຕ້ອງການຕາມລໍາດັບທີ່ທ່ານ ມາສະໂລ ໄດ້ກ່າວໄວ້ສະເໜີໄປເຊັ່ນ: ໄດ້ມີຄົນຈໍານວນຫຼາຍທີ່ທຸ່ມເທັ່ແຮງກາຍ,ແຮງໃຈ ເພື່ອສະແຫວງຫາຄວາມຮູ້ຄວາມເຂົ້າໃຈ ໂດຍບໍ່ໄດ້ສົນໃຈວ່າປອດໄພ ຫຼື ມີຄົນນິຍົມສົມຊອບເຂົາ ຫຼື ບໍ່, ນອກຈາກນີ້ຄວາມຕ້ອງການຂອງມະນຸດຈະບໍ່ເກີດຂຶ້ນເທື່ອລະຂັ້ນຫຼືເທື່ອລະຢ່າງແຕ່ຈະເກີດມີຄວາມຕ້ອງການຫຼາຍໆຢ່າງຢູ່ໃນເວລາດຽວກັນເຊັ່ນ: ຢູ່ໃນເວລາຫິວນັ້ນ,ຄົນເຮົາກໍຍັງຕ້ອງການຄວາມປອດໄພ,ຕ້ອງການຄວາມຮັກ ຫຼື ຢູ່ໃນຂະນະທີ່ຕ້ອງການຍົກຍ້ອງສັນລະເສີນ ກໍຕ້ອງການຄວາມຮູ້ຄວາມເຂົ້າໃຈຄວບຄູ່ກັນໄປອີກດ້ວຍ.

ຈາກຂໍ້ທີ່ວິພາກວິຈານຂ້າງເທິງນັ້ນ ພາໃຫ້ເຮົາພິຈາລະນາຜູ້ທີ່ຮຽນໃນລັກສະນະພາບລວມກໍແມ່ນບຸລະນາການທັງກາຍ,ອາລົມ ແລະ ປັນຍາພ້ອມກັນໂດຍວິທີການດັ່ງກາວນີ້ຈະຊ່ວຍໃຫ້ເຮົາສາມາດນໍາເອົາທິດສະດີ ຂອງທ່ານມາສະໂລ ໄປປະຍຸກໃຊ້ເຂົ້າການສຶກສາຢ່າງມີປະສິດຕິພາບ.ການພິຈາລະນາວ່າຜູ້ຮຽນໄດ້ຮັບການຕອບສະໜອງຄວາມຕ້ອງການຕາມລໍາດັບຂັ້ນກໍ່ຍັງມີຄຸນຄ່າໃນການປະຍຸກເຂົ້າໃນການສຶກສາຫຼາຍ ຕົວຢ່າງ:ວ່າ: ນັກຮຽນທີ່ມາຮຽນຫາກມີຄວາມຫິວໂຫຍຄູຢາກໃຫ້ເຂົາເກີດມີຄວາມຕ້ອງການຮູ້ແລະເຂົ້າໃຈກໍ່ຈະເປັນການຢາກຫຼືວ່ານັກຮຽນເຖິງຈະໄດ້ກິນອີ່ມແລ້ວແຕ່ຢູ່ໃນຫ້ອງຮຽນຂາດຄວາມປອດໄພ, ເຂົາກໍ່ຈະບໍ່ເກີດມີຄວາມຕ້ອງການຢາກຮູ້ ແລະ ເຂົ້າໃຈຕໍ່ບົດຮຽນທີ່ກໍາລັງຮຽນຢູ່ນັ້ນ. ສະນັ້ນ ແນວຄິດຂອງມາດສະໂນຈຶ່ງເຮັດໃຫ້ເຮົາສັງເກດເບິ່ງຄວາມຕ້ອງການຂອງນັກຮຽນຈະແຈ້ງຂຶ້ນ.ຖ້ານັກຮຽນປາດຖະໜາໃຫ້ເຂົາມີຄວາມຕ້ອງການໃນລະດັບສູງ.ສະນັ້ນ ທາງທີ່ເໝາະສົມທີ່ສຸດກໍ່ແມ່ນຄູຕ້ອງພິຈາລະນາວ່ານັກຮຽນໄດ້ຮັບການຕອບສະໜອງຄວາມຕ້ອງການລະດັບຈທໍາອິດແລ້ວຫຼືບໍ່ກ່ອນຄູຈະຫວັງໃຫ້ເຂົາເກີດມີຄວາມຕ້ອງການໃນລະດັບສູງຕໍ່ໄປ.

#### 4.1.2. ຄວາມຕ້ອງການສໍາເລັດ (Achievement Needs)

ແມັດເຄລແລນ ແລະ ແອັທຄິນຊັນ (McClellaand and Atkison) ເປັນຜູ້ສຶກສາກ່ຽວກັບເລື່ອງຄວາມຕ້ອງການຄວາມສຳເລັດ ຫຼື ຄວາມໄຝສຳເລັດ.ບຸກຄົນທີ່ມີຄວາມຕ້ອງການສຳເລັດສູງຈະເລືອກສະຖານະການທີ່ເຂົາສາມາດເຮັດສຳເລັດຕາມມາດຖານທີ່ກຳນົດໄວ້ເລືອກກະທຳ,ທີ່ມີຄວາມຢາກ,ທີ່ທະທາຍຄວາມສາມາດແລະບໍ່ເລືອກວຽກທີ່ງ່າຍຫຼືຍາກເກີນໄປ.ກົງກັນຂ້າມບຸກຄົນທີ່ຕ້ອງການຄວາມສຳເລັດຕໍ່າ ຈະມີແນວໂນ້ມ,ທໍ້ແທ້ຫຼຸ້ມເຫວ,ເຂົາຈຶ່ງເລືອກວຽກທີ່ງ່າຍໆ ທີ່ແນ່ໃຈວ່າຕ້ອງກະທຳວຽກນັ້ນສຳເລັດທທີ່ແນ່ນອນ ຫຼື ບໍ່ກໍ່ເລືອກວຽກທີ່ຍາກທີ່ສຸດເພື່ອເປັນຂໍ້ອ້າງວ່າມັນຍາກເກີນໄປ,ເຂົາຈຶ່ງບໍ່ສຳເລັດຄືກັບໝູ່ທີ່ປະສົບກັບຄວາມຫຼົ້ມເຫຼວມາແລ້ວບຸກຄົນດັ່ງກ່າວນີ້ເຂົາຈະບໍ່ເລືອກວຽກທີ່ມີຄວາມຍາກລະດັບກາງເພາະເຂົາຈະມີຄວາມຫຼົ້ມເຫຼວ ໃນຂະນະທີ່ຜູ້ອື່ນໆມີຜົນສຳເລັດ.ຜ່ານການສຶກສາພົບວ່າ ຜູ້ທີ່ຕ້ອງການສຳເລັດຫຼືແຮງຈູງໃຈໃຝສຳເລັດສູງສ່ວນຫຼາຍແມ່ນຈະຮຽນຢູ່ໃນລະດັບມະຫາວິທະຍາໄລ ແລະ ໄດ້ຄະແນນສະເລ່ຍສູງກ່ວາຜູ້ທີ່ມີຄວາມຕ້ອງການຄວາມສຳເລັດຕໍ່າ ນອກຈາກນີ້ຫຍັງພົບວ່າຜູ້ທີ່ມີຄວາມຕ້ອງການຄວາມສຳເລັດສູງຈະປະສົບຜົນສຳເລັດໃນການປະກອບອາຊີບ ແລະ ມີຖານະທາງເສດຖະກິດສູງກ່ວາ ຜູ້ທີ່ມີຄວາມຕ້ອງການສຳເລັດຕໍ່າ.ຈະມີແນວໂນ້ມ,ຫຼົ້ມເຫວ,ເຂົາຈຶ່ງເລືອກວຽກທີ່ງ່າຍໆ ທີ່ແນ່ໃຈວ່າຕ້ອງກະທຳວຽກນັ້ນສຳເລັດທທີ່ແນ່ນອນ ຫຼື ບໍ່ກໍ່ເລືອກວຽກທີ່ຍາກທີ່ສຸດເພື່ອເປັນຂໍ້ອ້າງວ່າມັນຍາກເກີນໄປ,ເຂົາຈຶ່ງບໍ່ສຳເລັດຄືກັບໝູ່ທີ່ປະສົບກັບຄວາມຫຼົ້ມເຫຼວມາແລ້ວບຸກຄົນດັ່ງກ່າວນີ້ເຂົາຈະບໍ່ເລືອກວຽກທີ່ມີຄວາມຍາກລະດັບກາງເພາະເຂົາຈະມີຄວາມຫຼົ້ມເຫຼວ ໃນຂະນະທີ່ຜູ້ອື່ນໆມີຜົນສຳເລັດ.ຜ່ານການສຶກສາພົບວ່າ ຜູ້ທີ່ຕ້ອງການສຳເລັດຫຼືແຮງຈູງໃຈໃຝສຳເລັດສູງສ່ວນຫຼາຍແມ່ນຈະຮຽນຢູ່ໃນລະດັບມະຫາວິທະຍາໄລ ແລະ ໄດ້ຄະແນນສະເລ່ຍສູງກ່ວາຜູ້ທີ່ມີຄວາມຕ້ອງການຄວາມສຳເລັດຕໍ່າ ນອກຈາກນີ້ຫຍັງພົບວ່າຜູ້ທີ່ມີຄວາມຕ້ອງການຄວາມສຳເລັດສູງຈະປະສົບຜົນສຳເລັດໃນການປະກອບອາຊີບ ແລະ ມີຖານະທາງເສດຖະກິດສູງກ່ວາ ຜູ້ທີ່ມີຄວາມຕ້ອງການສຳເລັດຕໍ່າ.

- **ການປະຍຸກຢູ່ໃນຫ້ອງຮຽນ**

(1). ກຸ່ມນັກຮຽນທີ່ມີແຮງຈູງໃຈທີ່ຈະມຸ່ງສູ່ຄວາມສາເລັດສູງ ຄູຈຶ່ງພະຍາຍາມສອນເນື້ອໃນບົດຮຽນ ຫຼື ໃຫ້ວຽກບ້ານທີ່ມີຄວາມຢາກໃນລະດັບກາງທີ່ທ້າທາຍຄວາມສາມາດຂອງເຮົາຫຼາຍກວ່າການນຳສະເໜີເນື້ອໃນບົດຮຽນ ຫຼື ໃຫ້ວຽກບ້ານທີ່ງ່າຍ ຫຼື ຢາກເກີນໄປ.

(2). ຄູຄວນຄິດສະເໜີວ່າ ຜູ້ຮຽນແຕ່ລະຄົນຈະມີແຮງຈູງໃຈທີ່ຈະມຸ່ງສູ່ຄວາມສາເລັດແຕກຕ່າງກັນ ແລະ ມີປະສົບການໃນຄວາມສຳເລັດຂອງວຽກງ່າຍທີ່ແຕກຕ່າງກັນ. ດ້ວຍວຽກນີ້ວຽກບາງຢ່າງອາດຈະງ່າຍສຳລັບຄົນໆໜຶ່ງ, ແຕ່ມັນອາດຈະຍາກສຳລັບຄົນອີກຄົນໜຶ່ງ. ສະນັ້ນ ຄູຈຶ່ງຄວນໃຫ້ວຽກທີ່ມີຄວາມຍາກງ່າຍແຕກຕ່າງກັນສຳລັບນັກຮຽນແຕ່ລະຄົນ ແລະ ກໍ່ມີການຄາດຫວັງຄວາມສຳເລັດຂອງນັກຮຽນແຕ່ລະຄົນທີ່ແຕກຕ່າງກັນ.

ດັ່ງນັ້ນການປະຍຸກຢູ່ໃນຫ້ອງຮຽນນີ້ ຄູຄວນພິຈາລະນາເບິ່ງນັກຮຽນແຕ່ລະຄົນວ່າ: ເຂົາແມ່ນຄົນປະເພດໃດ. ລະຫວ່າງປະເພດທີ່ຄວາມມຸ່ງຫວັງຄວາມສຳເລັດ ກັບຄົນປະເພດຫຼົບຫຼີກເຊັ່ນ: ຜູ້ທີ່ມຸ່ງຫວັງ

ຄວາມສຳເລັດສູງຈະມັກເຮັດວຽກທີ່ທ້າທາຍ, ທີ່ຄວາມຍາກປານກາງ, ມັກທົດລອງ ແລະກ້າສ່ຽງກັບຫາໃໝ່ໆ, ມັກຕັ້ງມາດຖານ ຫຼື ເປົ້າໝາຍໄວ້ໃນລະດັບທີ່ສົມເຫດສົມຜົນ ແລະ ມີຄວາມພະຍາຍາມໃຫ້ມີຜົນສຳເລັດ. ສ່ວນຜູ້ທີ່ມັກຫຼີກໜີຄວາມຫຼົ້ມເຫຼວຈະບໍ່ທຳງານວຽກທີ່ທ້າທາຍ, ແຕ່ມັກທຳງ່າຍວຽກທີ່ງ່າຍໆ. ທີ່ໝັ້ນໃຈວ່າຕົນຈະເຮັດສຳເລັດເພາະເຂົາມັກໃຫ້ຄູຊົມເຊີຍ ຫຼື ໃຫ້ການເສີມແຮງໃນເມື່ອເຂົາເຮັດສຳເລັດແລ້ວ, ເຂົາມັກທຳງານເຫັນຄວາມກ້າວໜ້າຂຶ້ນເປັນຂັ້ນໆໂດຍບໍ່ຕ້ອງການສ່ຽງ.

### 4.2. ການອ້າງສາເຫດ ແລະ ແຮງຈູງໃຈ

ຜູ້ທີ່ຂຽນໄດ້ກ່າວເຖິງ ການຕື່ນຕົວ,ເປົ້າໝາຍ ແລະ ຄວາມຕ້ອງການໃນຖານະທີ່ເປັນຕົວແປ ທີ່ພົວພັນກັບແຮງຈູງໃຈມາແລ້ວ ຕໍ່ໄປນີ້ຈະເວົ້າເຖິງ ການອ້າງສາເຫດທີ່ເປັນອົງປະກອບໜຶ່ງ ທີ່ກ່ຽວຂ້ອງໂດຍກົງກັບແຮງຈູງໃຈ

#### 4.2.1. ທິດສະດີການອ້າງສາເຫດ (Attribution Theory)

ຫຼາຍໆທ່ານກໍ່ເຄີຍຖາມໂຕເອງວ່າ: ຍ້ອນຫັຍງຂ້ອຍຈຶ່ງໄດ້ຄະແນນໜ້ອຍ ຫຼື ຍ້ອນຫັຍງບົດລາຍງານຂອງຂ້ອຍຈຶ່ງພຽງແຕ່ຜ່ານແຕ່ບໍ່ໄດ້ຄະແນນສູງຄືໝູ່.ນັກຈິດວິທະຍາຫຼາຍໆທ່ານໄດ້ພະຍາຍາມອະທິບາຍຄວາມສຳເລັດ ແລະ ຄວາມລົ້ມເຫຼວໃນລັກສະນະທີ່ພົວພັນກັນ ກັບຄວາມສາມາດ ຄວາມພະຍາຍາມ ອາລົມ,ຄວາມຮູ້,ໂຊກ,ການຊ່ວຍເຫຼືອ,ຄວາມສົນໃຈ,ຄວາມຊັດເຈນ,ຈາກການສອນຂອງຄູ ຫຼື ມີສິ່ງລົບກວນຈາກພາຍນອກ ຫຼື ຄວາມບໍ່ຍຸດຕິທຳຂອງຄູ.ເຫດຜົນທີ່ນຳມາອະທິບາຍ ລ້ວນແຕ່ເປັນການອ້າງສາເຫດທັງນັ້ນ.

ທິດສະດີການອ້າງສາເຫດໄດ້ເລີ່ມຂຶ້ນຈາກການທີ່ ໄຮເດີ (Fritz Heider 1958) ໄດ້ວິເຄາະວ່າ: ສາເຫດທີ່ພາໃຫ້ມະນຸດໄດ້ສະແດງພຶດຕິກຳຈ່າງໆອອກມານັ້ນ ຈະໄດ້ແປໄປຕາມຕົວແປ 2 ຕົວຄື: ຕົວແປພາຍໃນຕົວບຸກຄົນ ແລະ ຕົວແປຢູ່ນອກຕົວບຸກຄົນ. ຕໍ່ມາທ່ານ ຣໍເຕີ (Rotter 1966) ໄດ້ອະທິບາຍວ່າຕົວແປພາຍໃນຕົວບຸກຄົນ ແລະ ຕົວແປທີ່ເປັນສິ່ງແວດລ້ອມ ຈະແມ່ນສິ່ງທີ່ສຳຄັນຄື ກັບສິ່ງທີ່ຄວບຄຸມພຶດຕິກຳຂອງມະນຸດ ເພິ່ນເອີ້ນຕົວແປພາຍໃນຕົວບຸກຄົນວ່າ: ສິ່ງຄວບຄຸມຈາກພາຍໃນ ແລະ ເອີ້ນຕົວແປທີ່ເປັນສິ່ງແວດລ້ອມວ່າ ສິ່ງຄວບຄຸມຈາກພາຍນອກ.

➢ **ສິ່ງທີ່ຄວບຄຸມຈາກພາຍໃນ ແລະ ສິ່ງຄວບຄຸມຈາກພາຍນອກ**

- ບຸກຄົນທີ່ມີຄວາມີຄວາມເຊື່ອວ່າ: ພຶດຕິກຳຖືກຄວບຄຸມຈາກພາຍໃນຈະມີຄວາມໝັ້ນໃຈວ່າເຂົາສາມາດກຳນົດຊະຕາຊີວິດຂອງຕົນເອງໄດ້, ເຂົາຄິດວ່າຄວາມສຳເລັດທີ່ໄດ້ຮັບເກີດຂຶ້ນຈາກຄວາມສາມາດ ຫຼື ຄວາມພະຍາຍາມຂອງເຂົາ ບຸກຄົນປະເພດນີ້ຈະມີຄວາມຮູ້ສຶກວ່າ ແມ່ນຜູ້ມີປະສິດທິພາບ ມີຄວາມເຊື່ອໝັ້ນ,ກ້າສະແດງອອກ, ມີຄວາມພາກພູມໃຈຕົນເອງ,ມີມະໂນທັດທາງບວກ ແລະ ແຮງຈູງໃຈໄຜ່ສຳເລັດສູງ.
- ບຸກຄົນທີ່ເຊື່ອວ່າ: ພຶດຕິກຳຈາກພາຍນອກຈະມີຄວາມຄິດວ່າ ຄວາມສຳເລັດ ຫຼື ຄວາມລົ້ມເຫຼວຈະບໍ່ຂຶ້ນກັບຄວາມສາມາດ ຫຼື ຄວາມພະຍາຍາມ ແຕ່ຈະຂຶ້ນກັບໂຊກ ຫຼື ດວງ ບຸກຄົນປະເພດນີ້ຈະມີ

ຄວາມວິຕົກກາງວົນ,ມີຄວາມສົງໃສ ລະແວງຜູ້ອື່ນ ແລະ ມີລັກສະນະທີ່ເປັນປໍລະປັກ ຕໍ່ກັບຜູ້ອື່ນສູງກ່ວາບຸກຄົນທີ່ເຊື່ອວ່າພຶດຕິກຳທີ່ຄວບຄຸມຈາກພາຍໃນ.

ທ່ານ ໄວເນີ (Bernard Weiner ,1979:1990) ທ່ານໄດ້ຂະຫຍາຍແນວຄວາມຄິດຂ້າງເທິງວ່າ: ສາເຫດສ່ວນໃຫ່ຍທີ່ຄົນເຮົາມາວາງເປັນສາເຫດຂອງຄວາມສຳເລັດ ຫຼື ລົ້ມເຫຼວໄດ້ແບ່ງອອກເປັນ 3 ມິຕິດັ່ງນີ້ຄື:

1) ມິຕິແຫ່ງທີ່ມາຂອງສາເຫດ (Locus Of Causality)
2) ມິຕິຄວາມຄົງທີ່ຂອງສາເຫດ (Stability Of Causality)
3) ມິຕິຄວາມສາາດໃນການຄວບຄຸມສາເຫດ (Controollability Of Causality)

ຢູ່ໃນແຕ່ລະມິຕິຈະປະກອບດ້ວຍ 2 ພາກສ່ວນທີ່ກົງກັນຂ້າມກັນ ເຊັ່ນ: ມິຕິແຫ່ງສາເຫດ ຈະປະກອບດ້ວຍ ສາເຫດຈາກພາຍໃນ - ສາເຫດຈາກພາຍນອກຕົວບຸກຄົນ, ມິຕິຄວາມຄົງທີ່ຂອງສາເຫດຈະປະກອບດ້ວຍສາເຫດຄົງທີ່ - ສາເຫດທີ່ບໍ່ຄົງທີ່. ມິຕິຄວາມສາມາດໃນການຄວບຄຸມສາເຫດ ຈະປະກອບດ້ວຍສາເຫດທີ່ຄວບຄຸມກັນ - ສາເຫດທີ່ຄວບຄຸມບໍ່ໄດ້. ລາຍລະອຽດຂອງແຕ່ລະມິຕິ ອາດພິຈະລະນາຢູ່ໃນຕາຕະລາງລຸ່ມນີ້:

| ມິຕິ | ຕົວຢ່າງ |
|---|---|
| ແຫຼ່ງຂອງສາເຫດ. ຈຳແນກເປັນສາເຫດ ຈາກພາຍໃນຕົວບຸກຄົນ ແລະ ສາເຫດຈາກພາຍນອກຕົວບຸກຄົນ | ທ້າວ ຄຳພອນສອບເສັງໄດ້ຄະແນນດີ ຖ້າເຂົາຄິດວ່າ: ຜົນຄະແນນດີນັ້ນເກີດຈາກຄວາມສາມາດ ແລະ ຄວາມພະຍາຍາມຂອງຕົນ ກໍ່ຖືວ່າແຫຼ່ງຂອງສາເຫດມາຈາກແຫຼ່ງພາຍໃນຕົນ. ແຕ່ເຂົາອ້າງວ່າໄດ້ຄະແນນດີເພາະມີຜູ້ຊ່ວຍ ຫຼື ຄູອອກຂໍ້ສອບງ່າຍໆ ຫຼື ຍ້ອນໂຊກດີເຂົາເດົາຖືກຫຼາຍຂໍ້ ກໍ່ຖືວ່າແຫຼ່ງຂອງສາເຫດໄດ້ມາຈາກແຫຼ່ງພາຍນອກ. |
| ຄວາມຄົງທີ່ຂອງສາເຫດ | ໃນກໍລະນີຕົວຢ່າງຂອງຄຳພອນ ຂ້າງເທິງ. ສາເຫດຂອງເຂົາທີ່ບອກວ່າອ້າງຂໍ້ສອບໄດ້ດີ ຍ້ອນຄວາມສາມາດ,ແມ່ນຕົວຢ່າງຂອງສາເຫດຄົງທີ່ ເພາະຄວາມສາມາດແມ່ນສິ່ງທີ່ປ່ຽນແປງຍາກ ຫຼື ຍັງຄົງຢູ່ເຖິງສະຖານະການຈະປ່ຽນແປງໃປ. ສ່ວນສາເຫດທີ່ອ້າງວ່າ ແກ້ຂໍ້ສອບໄດ້ດີຍ້ອນໂຊກນັ້ນຂະເປັນສາເຫດທີ່ບໍ່ຄົງທີ່,ເນື່ອງຈາກວ່າໂຊກຈະມີການປ່ຽນແປງໄດ້ສະເໝີ. |
| ຄວາມສາມາດໃນການຄວບຄຸມສາເຫດ | ການອ້າງສາເຫດທີ່ວ່າ ແກ້ຂໍ້ສອບໄດ້ດີ ຍ້ອນຄວາມພະຍາຍາມເປັນຕົວຢ່າງຂອງສາເຫດທີ່ |

| | |
|---|---|
| ຈຳແນກເປັນສາເຫດທີ່ຄວບຄຸມໄດ້ ແລະ ສາເຫດທີ່ຄວບຄຸມບໍ່ໄດ້ | ສາມາດຄວບຄຸມໄດ້ ເພາະທຸກຄົນສາມາດຄວບຄຸມຕົນເອງໃຫ້ສາມາດດຸໝັ່ນເພີ່ມຂຶ້ນໄດ້. ແຕ່ສາເຫດທີ່ບອກວ່າແກ້ຂໍ້ສອບໄດ້ດີເພາະ ຄວາມສາມາດ ຫຼື ຂໍ້ສອບງ່າຍໆ ເປັນຄືວຢ່າງຂອງສາເຫດທີ່ບໍ່ອາດຄວບຄຸມໄດ້ |

ທ່ານ ໄວເນີ ໄດ້ອະທິບາຍວ່າ : ໂດຍປົກກະຕິຄົນສ່ວນຫຼາຍຈະອ້າງສາເຫດ ທີ່ເຂົາປະສົບຜົນສຳເລັດ ຫຼື ຄວາມລົ້ມເຫຼວຢູ່ຫຼາຍປະການຄື: ສາເຫດດ້ານຄວາມສາມາດ,ສາເຫດດ້ານຄວາມພະຍາຍາມ, ສາເຫດດ້ານຄວາມຍາກຂອງວຽກງານ ແລະ ສາເຫດມາຈາກໂຊກເປັນຕົ້ນ,ສາເຫດແຕ່ລະຢ່າງນີ້ຈະມີຄຸນສົມບັດຢູ່ໃນມິຕິຕ່າງໆຫຼາຍມິຕິຄື:

- ✓ **ຄວາມສາມາດ** ແມ່ນມາຈາກພາຍໃນຄືວບຸກຄົນ ມັນຄົງທີ່ ແລະ ຄວບຄຸມບໍ່ໄດ້
- ✓ **ຄວາມພະຍາຍາມ** ແບ່ງອອກເປັນ 2 ແບບຄື :ຄວາມພະຍາຍາມທີ່ປະຕິບັດເປັນປະຈຳ ແລະ ຄວາມພະຍາຍາມທີ່ປະຕິບັດສະເພາະວຽກງານໃດໜຶ່ງ.
    - **ຄວາມພະຍາຍາມທີ່ປະຕິບັດເປັນປະຈຳ** ແມ່ນສາເຫດຈາກພາຍໃນຕົວບຸກຄົນຄົງທີ່ ແລະ ຄວບຄຸມໄດ້
    - **ຄວາມພະຍາຍາມທີ່ປະຕິບັດສະເພາະວຽກງານໃດໜຶ່ງ** ເປັນສາເຫດຈາກພາຍໃນຕົວບໍ່ຄົງທີ່ ແລະ ຄວບຄຸມໄດ້.
- ✓ **ຄວາມໝາຍຂອງວຽກງານ:** ແມ່ນສາເຫດຈາກພາຍນອກຕົວຂອງບຸກຄົນຄົງທີ່ ແລະ ຄວບຄຸມບໍ່ໄດ້
- ✓ **ໂຊກ:** ແມ່ນສາເຫດຈາກພາຍນອກຕົວບຸກຄົນ ບໍ່ຄົງທີ່ ແລະ ຄວບຄຸມບໍ່ໄດ້. ຮູບແບບຂອງສາເຫດທີ່ບຸກຄົນນຳມາອ້າງອີງທີ່ຈຳແນກຕາມມິຕິຕ່າງໆຄື:

| ມິຕິ | ສາເຫດຈາກພາຍໃນ | | ສາເຫດຈາກພາຍນອກ | |
|---|---|---|---|---|
| | ຄົງທີ່ | ບໍ່ຄົງທີ່ | ຄົງທີ່ | ບໍ່ຄົງທີ່ |
| ຄວບຄຸມໄດ້ | ຄວາມພະຍາຍາມທີ່ປະຕິບັດເປັນປະຈຳ | ຄວາມພະຍາຍາມທີ່ປະຕິບັດສະເພາະວຽກງານໃດໜຶ່ງ | ການຊ່ວຍເຫຼືອຈາກຄົນອື່ນທີ່ໄດ້ຮັບເປັນປະຈຳ | ການຊ່ວຍເຫຼືອຈາກຜູ້ອື່ນທີ່ໄດ້ຮັບສະເພາະວຽກງານ ໃດໜຶ່ງ |
| ຄວບຄຸມບໍ່ໄດ້ | ຄວາມສາມາດ | ອາລົມ ແລະ ສຸຂະພາບ | ຄວາມຍາກຂອງວຽກງານ | ໂຊກ |

### 4.2.2. ການອ້າງສາເຫດກັບແຮງຈູງໃຈ

ການອ້າສຽງສາເຫດທີ່ຄົນປະສົບຜົນສຳເລັດ ຫຼື ຄວາມລົ້ມເຫຼວທັງ 3 ມິຕິ ໄດ້ກ່າວມານັ້ນຈະມີຄວາມສຳຄັນກັບຄວາມຮູ້ສຶກພາກພູມໃຈຕົນເອງຢູ່ໃນມະໂນທັດ,ຄວາມຄາດຫັວງ ແລະ ແຮງຈູງໃຈຂອງບຸກຄົນດັ່ງນີ້.

- **ແຫຼ່ງຂອງສາເຫດ: ສາເຫດຈາກພາຍໃນ - ສາເຫດຈາກພາຍນອກ**

ໄວເນີ ໄດ້ພົບວ່າ ແຫຼ່ງຂອງສາເຫດເກີດຈາກພາຍໃນ - ພາຍນອກຈະມີຄວາມສຳພັນກັນໃນທາງບວກ ແລະ ທາງລົບ ກັບຄວາມຮູ້ສຶກພາກພູມໃຈຕົນເອງ, ມະໂນທັດ ແລະ ແຮງຈູງໃຈເຊັ່ນ: ຖ້າບຸກຄົນປະສົບຜົນສຳເລັດ ແລ້ວອ້າງວ່າຍ້ອນຄວາມສາມາດຂອງເຂົາ ຍ່ອມເກີດມີຄວາມພາກພູມໃຈ ແລະ ມີມະໂນທັດທາງບວກທັງມີແຮງຈູງໃຈເພື່ອຈະກະທຳສິ່ງນັ້ນຕໍ່ໄປອີກ. ກົງກັນຂ້າມຖ້າບຸກຄົນນັ້ນປະສົບຄວາມລົ້ມເຫຼວ ໂດຍອ້າງສາເຫດວ່າເນື່ອງຈາກຕົວເຂົາບໍ່ມີຄວາມສາມາດ ເຂົາກໍ່ຈະບໍ່ມີຄວາມພູມໃຈຕົນເອງ ແລ້ວມີມະໂນທັດໄປທາງລົບ ແລະ ຂາດແຮງຈູງໃຈເພື່ອກະທຳສິ່ງນັ້ນຕໍ່ໄປອີກ.

ໃນກໍລະນີທີ່ບຸກຄົນປະສົບຄວາມສຳເລັດ ແລ້ວອ້າງວ່າເປັນຍ້ອນໂຊກ ຫຼື ຍ້ອນຜູ້ອື່ນຊ່ວຍ ເຊິ່ງແມ່ນສາເຫດຈາກພາຍນອກ. ບຸກຄົນນັ້ນກໍ່ຈະບໍ່ເກີດມີຄວາມພາກພູມໃຈຄົນເອງ ແລະ ບໍ່ມີແຮງຈູງໃຈ. ກົງກັນຂ້າມຖ້າຫາກເຂົາປະສົບຄວາມລົ້ມເຫຼວແລ້ວບອກວ່າໂຊກບໍ່ດີ ຫຼື ມີຜູ້ອື່ນຊ່ວຍເຫຼືອ ເຂົາກໍ່ອາດມີແຮງຈູງໃຈ ແລະ ຄາດຫັວງວ່າຄັ້ງຕໍ່ໄປອາດປະສົບຄວາມສຳເລັດໄດ້ ຖ້າໂຊກດີ ຫຼື ມີຄົນອື່ນຊ່ວຍເຫຼືອເປັນຕົ້ນ.

- **ຄວາມຄົງທີ່ຂອງສາເຫດ: ສາເຫດຄົງທີ່ - ສາເຫດທີ່ບໍ່ຄົງທີ່.**

\+ **ຄວາມຄົງທີ່ຂອງສາເຫດ ຈະມີຄວາມສຳພັນກັບຄວາມຄາດຫັວງໃນອະນາຄົດ ເຊິ່ງກ່ຽວຂ້ອງໂດຍກົງກັບແຮງຈູງໃຈ.**

ຖ້າບຸກຄົນຫາກອ້າສາເຫດໃນລັກສະນະຄົງທີ່ ກໍ່ຈະເກີດມີຄວາມຄາດຫັວງຄວາມສຳເລັດ ຫຼື ຄວາມລົ້ມເຫຼວໃນອານາຄົດທີ່ຄ້າຍຄືກັບໄດ້ຮັບຢູ່ໃນອາດີດ. ຕົວຢ່າງເຊັ່ນ: ທ້າວ ສຸລິນ ສອບເສັງພາສາອັງກິດໄດ້ຄະແນນດີ ແລ້ວອ້າງວ່າ ຍ້ອນຄວາມສາມາດ. ແຕ່ສອບວິຊາຄະນິດສາດແຕ່ບໍ່ໄດ້ ແລ້ວອ້າງວ່າບໍ່ທະນັດໃນວິຊານີ້ ( ແມ່ນສາເຫດຄົງທີ່) ຍ່ອມເກີດມີຄວາມຄາດຫັວງວ່າ ຖ້າມີການເສັງຄັ້ງຕໍ່ໄປເຂົາກໍ່ຈະເສັງພາສາອັງກິດໄດ້ດີ ແລະ ເສັງວິຊາຄະນິດສາດບໍ່ໄດ້ດີຄ້າຍຄືກັບຜົນທີ່ເຂົາໄດ້ຮັບຜ່ານມານັ້ນ.
ກົງກັນຂ້າມຖ້າບຸກຄົນອ້າງສາເຫດໃນລັກສະນະທີ່ບໍ່ຄົງທີ່ ເຂົາຍ່ອມເກີດມີຄວາມຄາດຫັວງ ອານາຄົດຈາກສິ່ງທີ່ແຕກຕ່າງຈາກຜົນທີ່ໄດ້ຮັບຢູ່ເຊັ່ນ: ນາງ ລິນດາ ເສັງວິຊາເຄມີສາດໄດ້ເກີນຄາດໝາຍແລ້ວ ອ້າງວ່າເສັງໄດ້ດີຍ້ອນໂຊກ ແຕ່ເສັງວິຊາພາສາລາວບໍ່ໄດ້ດີແລ້ວອ້າງວ່າ ຢູ່ໃນໄລຍະນັ້ນສະພາບອາລົມບໍ່ດີ (ສາເຫດທີ່ບໍ່ຄົງທີ່) ນາງລິນດາ ກໍ່ເກີດມີຄວາມຄາດຫັວງວ່າ ໃນການເສັງຄັ້ງຕໍ່ໄປອາດເສັງໄດ້ດີ ຫຼື ບໍ່ໄດ້ດີແຕກຕ່າງຈາກຄັ້ງນີ້.

\+ **ຄວາມສາມາດຂອງການຄວບຄຸມສາເຫດ : ສາເຫດທີ່ຄວບຄຸມໄດ້ - ສາເຫດທີ່ຄວບຄຸມບໍ່ໄດ້.**

ການອ້າງສາເຫດທີ່ຄວບຄຸມໄດ້ຈະມີຄວາມສຳພັນກັບອາລົມ ແລະ ຄວາມຮູ້ສຶກຂອງບຸກຄົນເຊັ່ນ: ຖ້າບຸກຄົນເສັງຕົກວິຊາຄະນິດສາດ ແລ້ວ ອ້າງວ່າເປັນຍ້ອນເຂົາ ບໍ່ຖະນັດ ແລະ ຂາດຄວາມສາມາດ (ແມ່ນສາເຫດທີ່ຄວບຄຸມບໍ່ໄດ້) ກໍ່ອາດເຮັດໃຫ້ເຂົາເກີດມີຄວາມຮູ້ສຶກຜິດຫວັງ ແລະ ທໍ້ຖອຍ ຈະເຮັດໃຫ້ແຮງຈູງໃຈນັ້ນຕໍ່າລົງ. ແຕ່ຖ້າເຂົາວ່າເຂົາເສັງຕົກຍ້ອນຄວາມພະຍາຍາມ (ແມ່ນສາເຫດທີ່ຄວບຄຸມໄດ້) ເຂົາກໍ່ມີຄວາມຮູ້ສຶກລະອາຍໃຈ,ຮູ້ສຶກຜິດ,ຄຽດຊັງຕົນເອງ ແລ້ວກໍ່ເກີດມີຄວາມຄິດວ່າຕໍ່ໄປຖ້າເຂົາພະຍາຍາມກໍ່ຈະເສັງໄດ້ຄະແນນດີ ຈຶ່ງເຮັດໃຫ້ເຂົາມີຄວາມຫວັງ ແລະ ເກີດແຮງຈູງໃຈປັບປຸງຕົນເອງໃນຄັ້ງຕໍ່ໄປ.

ໃນກໍລະນີທີ່ນັກຮຽນເສັງວິຊາຄະນິດສາດໄດ້ຄະແນນດີ ແລ້ວອ້າງສາເຫດວ່າ: ຍ້ອນເຂົາມີຄວາມສາມາດສູງ (ແມ່ນສາເຫດທີ່ຄວບຄຸມບໍ່ໄດ້) ຍ່ອມເຮັດໃຫ້ເກີດມີຄວາມຮູ້ສຶກພາກພູມໃຈຕົນເອງສູງ ແລະ ມີຄວາມຄາດຫວັງເກີດມີແຮງຈູງໃຈ ເພື່ອຈະໃຫ້ໄດ້ດີໃນອະນາຄົດ ແຕ່ຖ້າເຂົາອ້າງສາເຫດວ່າ: ການໄດ້ຄະແນນດີກໍ່ເນື່ອງມາຈາກໂຊກ (ແມ່ນສາເຫດທີ່ຄວບຄຸມບໍ່ໄດ້) ເຂົາຍ່ອມມີຄວາມພາກພູມໃຈໃນຕົນເອງຕໍ່າ ແລະ ບໍ່ເກີດມີຄວາມໝັ້ນໃຈວ່າ ໃນການເສັງຄັ້ງຕໍ່ໄປເຂົາຈະເສັງໄດ້ຄະແນນດີຄືດັ່ງຄັ້ງກ່ອນ ແລ້ວຈະເຮັດໃຫ້ມີແຮງຈູງໃຈຕໍ່າ.

#### 4.2.3. ການປະຍຸກທາງການສຶກສາ

ຈາກສິ່ງທີ່ກ່າວມາຂ້າງເທິງນັ້ນ ຈະເຫັນໄດ້ວ່າຢູ່ໃນເຫດການຢ່າງດຽວກັນ,ຖ້າການອ້າງສາເຫດທີ່ຕ່າງກັນກໍ່ຈະນຳໄປສູ່ພາບອາລົມ,ການຄາດຫວັງ ແລະ ແຮງຈູງໃຈທີ່ຕ່າງກັນ. ການອ້າງສາເຫດບາງຢ່າງຈະນຳໄປສູ່ແນວໂນ້ມພຶດຕິກຳ ແລະ ແຮງຈູງໃຈທີ່ເພິ່ງປາດທະໜາ ແຕ່ການອ້າງສາເຫດບາງຢ່າງ ຈະນຳໄປສູ່ສະພາບອາລົມ ແລະ ແຮງຈູງໃຈທີ່ບໍ່ປາດທະໜາ.

ແນວຄິດດັ່ງກ່າວທີ່ເວົ້າມານັ້ນ ສາມາດນຳໄປປະຍຸກໃຊ້ເຂົ້າໃນການສຶກສາ ໂດຍພັດທະນາລາຍການເຝິກເພື່ອຜູ້ທີ່ມີແຮງຈູງໃຈໃຝ່ສຳເລັດຕໍ່າ ໄດ້ມີການປ່ຽນແປງພຶດຕິກຳການອ້າງສາເຫດ ໄປໃນທິດທາງທີ່ສັງຄົມຕ້ອງການ ນັ້ນກໍ່ແມ່ນປ່ຽນຈາກການອ້າງສາເຫດທີ່ລົ້ມເຫຼວ ວ່າເປັນຍ້ອນຂາດຄວາມສາມາດ (ແມ່ນສາເຫດຈາກພາຍໃນຄົງທີ່ ແລະ ຄວບຄຸມບໍ່ໄດ້) ໃຫ້ໄປເປັນຍ້ອນ ຂາດຄວາມພະຍາຍາມ (ເປັນສາເຫດຈາກພາຍໃນບໍ່ຄົງທີ່ ແລະ ຄວບຄຸມບໍ່ໄດ້) ຫຼື ການປ່ຽນຈາກການອ້າງສາເຫດໃນເມື່ອປະສົບຄວາມສຳເລັດວ່າ ເປັນຍ້ອນໂຊກ (ເປັນສາເຫດຈາກພາຍນອກບໍ່ຄົງທີ່ ແລະ ຄວບຄຸມບໍ່ໄດ້) ໃຫ້ໄປເປັນຍ້ອນມີຄວາມສາມາດ (ເປັນສາເຫດພາຍໃນຄົງທີ່ ແລະ ຄວບຄຸມບໍ່ໄດ້) ຫຼື ຍ້ອນຄວາມພະຍາຍາມສູງ (ເປັນສາເຫດຈາກພາຍໃນບໍ່ຄົງຕົວ ຫຼື ຄວບຄຸມໄດ້)

ການພັດທທະນາລາຍການທີ່ເຝິກໃຫ້ນັກຮຽນປ່ຽນແປງ ການອ້າງສາເຫດທີ່ບໍ່ປາດທະໜາໄປສູ່ການອ້າງສາເຫດທີ່ປາດທະໜານີ້ ສ່ວນຫຼາຍແມ່ນກະທຳກັບນັກຮຽນທີ່ມີຄວາມລົ້ມເຫຼວ ຄວາມສິ້ນຫວັງຕໍ່ການຮຽນ ຫຼື ກະທຳກັບນັກຮຽນທີ່ສະຫຼາດ ທີ່ມີຄວາມຮູ້ສຶກທໍ້ຖອຍງ່າຍ ເມື່ອເຂົາມີຄວາມລົ້ມເຫຼວ.

- **ການດຳເນີນການເຝິກຂອງລາຍການຈະມີຂັ້ນຕອນດັ່ງນີ້:**

( 1 ) ການວິເຄາະພຶດຕິກາການອ້າງສາເຫດຈາກສົມມົດຖານ ຜູ້ທີ່ຝຶກອາດໃຫ້ນັກຮຽນອ່ານເລື່ອງທີ່ສົມມົດຂຶ້ນ ໃຫ້ເຂົາອ້າງສາເຫດຈາກຄວາມສຳເລັດ ຫຼື ຄວາມລົ້ມເຫຼວນັ້ນ ແລ້ວນຳເອົາການອ້າງສາເຫດນັ້ນມາວິເຄາະ ວ່າຈະນຳໄປສູ່ສະພາບອາລົມ ຫຼື ແຮງຈູງໃຈທີ່ປາດທະໜາ

( 2 ) ການົດລາຍການເຝິກເພື່ອພັດທະນາ ການອ້າງສາເຫດທີ່ປາດທະໜາຂອງນັກຮຽນ ຢູ່ໃນລາຍການເຝິກ ອາດປະກອບດ້ວຍຕົວແບບທີ່ເໝາະສົມ ການແນະນຳ  ການໃຫ້ການເສີມແຮງການອ້າງສາເຫດປາທະໜາ

( 3 ) ການດາເນີນການເຝິກຕາມແບບເຝິກທີ່ການົດ ແລະ ປະເມີນຜົນຫຼັງຈາກການເຝິກ

## 5. ການເສີມສ້າງແຮງຈູງໃຈຢູ່ໃນຫ້ອງຮຽນ

ການສ້າງແຮງຈູງໃຈໃນຫ້ອງຮຽນ ຈະກ່ຽວຂ້ອງກັບອົງປະກອບຕ່າງໆຫຼາຍປະການເຊັ່ນ: ບັນຍາກາດຢູ່ໃນຫ້ອງຮຽນ ວິທີສອນຂອງຄູ ລັກສະນະທາງອາລົມ ແລະ ບຸກຄະລິກຂອງຄູ ເນື້ອໃນຂອງບົດຮຽນ ຕະຫຼອດເຖິງຄວາມຕ້ອງການ ຄວາມສົນໃຈ ເປົ້າໝາຍ ແລະ ແຮງກົດດັນຕ່າງໆຢູ່ໃນຕົວຂອງຜູ້ຮຽນ ດ້ວຍເຫດນີ້ເພິ່ນຈຶ່ງເວົ້າເຖິງກົນຂອງວິທີສ້າງແຮງຈູງໃຈໄວ້ແຕກຕ່າງກັນຢ່າງຫຼາກຫຼາຍ.

ທ່ານ ວູຣໂຟ (Woolfolk,1993:387) ທ່ານໄດ້າສະຫຼຸບການເສີມສ້າງແຮງຈູງໃຈໃນການຮຽນທີ່ເປັນໜ້າສົນໃຈ : ການສ້າງແຮງຈູງໃຈຈະກ່ຽວຂ້ອງກັບຄຳຖາມຕົນເອງວ່າ “ ເຂົາສາມາດຮຽນ ຫຼື ເຮັດສິ່ງນັ້ນໄດ້ຫຼືບໍ່ ” ແລະ “ເຂົາຢາກຮຽນ ຫຼື ກະທຳສິ່ງນັ້ນ ຫຼື ບໍ່ ” ແລະ “ສິ່ງໃດທີ່ເຂົາຕ້ອງການ” .

- **ໃນຄຳຖາມທີ 1 :** “ ເຂົາສາມາດຮຽນ ຫຼື ເຮັດສິ່ງນັ້ນໄດ້ຫຼືບໍ່ ” ຖ້າເຂົາເຊື່ອວ່າຕົນເອງສາມາເຮັດໄດ້ “ເຂົາກໍ່ຍ່ອມເກີດມີແຮງຈູງໃຈຮຽນ ຫຼື ກະທຳສິ່ງນັ້ນ. ແນວທາສ້າງແຮງຈູງໃຈປະເດັນນີ້ ກໍ່ແມ່ນການເສີມສ້າງຄວາມເຊື່ອໝັ້ນ ແລະ ການຄາດຫັວງທາງບວກໃນການຮຽນ ຫຼື ກະທຳສິ່ງນັ້ນແກ່ນັກຮຽນ”.
- **ໃນຄຳຖາມທີ 2:** “ເຂົາຢາກຮຽນ  ຫຼື ກະທຳສິ່ງນັ້ນ ຫຼື ບໍ່” ຖ້າເຂົາຢາກຮຽນ ຫຼື ຢາກກະທຳກໍ່ໝາຍຄວາມວ່າເຂົາເກີດແຮງຈູງໃຈຕໍ່ການຮຽນ ຫຼື ກະທຳສິ່ງນັ້ນ. ແນວທາງການເສີມສ້າງແຮງຈູງໃຈໃນປະເດັນນີ້ ກໍ່ແມ່ນ (ການໃຫ້ນັກຮຽນເຫັນຄຸນຄ່າຂອງສິ່ງທີ່ຮຽນ)
- **ໃນຄຳຖາມທີ 3:** “ສິ່ງໃດທີ່ເຂົາຕ້ອງການເຮັດໃຫ້ສຳເລັດ” ຖ້າເຂົາຕອບຄຳຖາມນີ້ໄດ້ ເຂົາຍ່ອມເກີດແຮງຈູງໃຈ ຕໍ່ການຮຽນຫຼືກະທຳສິ່ງນັ້ນ. ແນວທາງການເສີມສ້າງແຮງຈູງໃຈ ປະເດັນນີ້ກໍ່ແມ່ນ (ການຊ່ວຍໃຫ້ນັກຮຽນເກີດຄວາມມຸ້ງໝັ້ນ ແລະ ໃສ່ໃຈໃນສິ່ງທີ່ໄດ້ຮຽນ ຫຼື ກະທຳ)

➢ **ແນວທາງການເສີມສ້າງແຮງຈູງໃຈ ແຕ່ລະປະເດັນທີ່ເວົ້າມາຂ້າງເທິງຈະມີລາຍລະອຽດດັ່ງນີ້:**

❖ **ການເສີມສ້າງຄວາມເຊື່ອໝັ້ນ ແລະ ການຄາດຫັວງເຊີງທາບວກຂອງນັກຮຽນ**

1) ໃຫ້ນັກຮຽນເລີ່ມຮຽນສິ່ງທີ່ມີຄວາມຍາກຢູ່ໃນລະດັບທີ່ເຂົາສາມາດກະທຳໄດ້ແລ້ວຈຶ່ງຄ່ອຍໆເລື່ອນຂຶ້ນສິ່ງທີ່ຍາກຕາມລຳດັບ.

ການດຳເນີນເລື່ອງນີ້ ຄູຈ້ອງຈັດລາດັບຄວາມຍາກຂອງເນື່ອໃນ ທີ່ຈະໃຫ້ນັກຮຽນເປັນຂັ້ນຕອນ ນັກຮຽນແຕ່ລະຄົນອາດເລີ່ມຮຽນໃນຂັ້ນທີ່ຕ່າງກັນ ຈະຂຶ້ນກັບຄວາມສາມາດຂອງແຕ່ລະບຸກຄົນ ການຈະເລື່ອນລໍາດັບຄວາມຍາກໃຫ້ສູງຂຶ້ນ ຄູຕ້ອງແນ່ໃຈວ່າ ນັກຮຽນສາມາດກະທໍາ ຫຼື ເຂົ້າໃຈຢູ່ໃນຂັ້ນຕົ້ນແລ້ວ.

**2) ຄູການົດຈຸດມຸ້ງໝາຍຂອງນັກຮຽນຊັດເຈນ ແລະ ແນ່ໃຈວ່າຄູສາມາດສອນໃຫ້ນັກຮຽນ ເກີດການຮຽນຮູ້.**

ຖ້າບົດຮຽນ ຫຼື ໂຄງການທີ່ຈະໃຫ້ນັກຮຽນມີຄວາມຍາກຫຼາຍ ກໍ່ຈໍາເປັນຕ້ອງໄດ້ຈໍາແນກຈຸດໝາຍອອກເປັນຈຸດໝາຍຍ່ອຍໆ ແລະ ຊ່ວຍໃຫ້ເຂົາຮູ້ສຶກວ່າ ເມື່ອເຮົາຮຽນ ຫຼື ເຮັດໂຄງການໃນບົດຮຽນເຂົາກໍ່ເກີດມີຄວາມກ້າວໜ້າຕາມຈຸດມຸ້ງໝາຍແຕ່ລະຂໍ້ນັ້ນເພີ່ມຂຶ້ນ.

**3) ເນັ້ນການປຽບທຽບກັບຕົນເອງຫຼາຍກ່ວາການປຽບທຽບກັບຜູ້ອື່ນ.**

ຄູຄວນໃຫ້ຜົນສະທ້ອນກັບ (Feedback) ຫຼື ໃຫ້ນັກຮຽນຮັບຮູ້ຜົນງານຂອງຕົນ ເພື່ອໃຫ້ເຂົາຮູ້ວ້າສິ່ງທີ່ເຂົາທໍານັ້ນຜິດ ຫຼື ຖືກ ແລະ ໃຫ້ເຂົາໄດ້ປັບປຸງແກ້ໄຂສິ່ງທີ່ຕົນທໍາຜິດໃນຂັ້ນທໍາອິດ ເມື່ອຮຽນໃປແລ້ວຄູຈິ່ງຊີ້ໃຫ້ນັກຮຽນເຫັນວ່າສິ່ງທີ່ຕົນຄິດວ່າ ມັນຍາກຢູ່ໃນຂັ້ນຕົ້ນນັ້ນ ຈະເປັນສິ່ງທີ່ງ່າຍສໍາລັບເຂົາ ຊີ້ໃຫ້ເຂົາເຫັນອີກວ່າ: ກ່ອນຮຍນ ແລະ ຫຼັງຮຽນ ເຂົາມີຄວາມກ້າວໜ້າຫຼາຍໜ້ອຍພຽງໃດ ເນັ້ນໃຫ້ເຂົາເຫັນວ່າຖ້າຕົນໃຊ້ຄວາມພະຍາຍາມຄວາມສໍາເລັດກໍ່ເກີດຂຶ້ນ.

**4) ຊີ້ແຈງໃຫ້ນັກຮຽນຮູ້ວ່າມີຄວາມສາມາດໃນການຮຽນ ແມ່ນສິ່ງທີ່ພັດທະນາ ແລະ ປັບປຸງໃຫ້ດີຂຶ້ນ**

ຄືດັ່ງກ່າວມາແລ້ວ ທິດສະດີອ້າງສາເຫດວ່າ ຖ້ານັກຮຽນລົ້ມເຫຼວໃນການເສັງແລ້ວອ້າງວ່າເປັນຍ້ອນເຂົາບໍ່ມີຄວາມສາມາດ ຫຼື ຂາດຄວາມຖະໜັດໃນເລື່ອງນັ້ນ.ເຂົາກໍ່ເກີດມີຄວາມທໍ້ຖອຍ ໝົດຫັວງ. ຂາດຄວາມເຊື່ອໝັ້ນ ແລະ ມີຄວາມຄາດຫັວງທາງລົບຫຼາຍກ່ວາທາງບວກ ກໍ່ຍ້ອນເຂົາມີຄວາມເຊື່ອວ່າຄວາມສາມາດແມ່ນສິ່ງຄົງທີ່ ແລະ ບໍ່ອາດປ່ຽນແປງປັບປຸງໄດ້.

ຄູຄວນແນະນໍາໃຫ້ນັກຮຽນຮູ້ວ່າ: ຄວາມສາມາດທາງວິຊາການນັ້ນສາມາດພັດທະນາໃຫ້ດີຂຶ້ນໄດ້ຖ້າໃຊ້ຄວາມພະຍາຍາມ ຫຼື ມຸ້ງໝັ້ນທີ່ຈະປັບປຸງດີຂຶ້ນ. ຄົນທີ່ຄິດເລກບໍ່ເກັ່ງສາມາດມີທັກສະເພີ່ມຂຶ້ນ ຖ້າເຂົາຫາກເຝິກຝົນເລື່ອຍໆ ຄົນທີ່ຮຽນພາສາອັງກິດໄດ້ດີ ສາມາດພັດທະນາທັກສະທາງພາສາໃຫ້ດີຂຶ້ນໄດ້ຖ້າມີໂອກາດເຝິກຝົນ ຫຼື ມີຄວາມມະນະອົດທົນພະຍາຍາມຂຶ້ນ

**5) ສະເໜີຕົວແບບທີ່ດີໃຫ້ນັກຮຽນຮັບຮູ້**

ນັກຮຽນທີ່ບໍ່ມີຄວາມເຊື່ອໝັ້ນຕົນເອງ ຈະຮູ້ສຶກວ່າບໍ່ຢາກກະທໍາສິ່ງໃດເລີຍເພາະຢ້ານຜິດພາດ ຄູອາດເລົ່າພຶດຕິກໍາຂອງຕົວຄູເອງວ່າ: ເຄີຍມີຄວາມຜິດພາດມາກ່ອນຈະມີຄວາມສໍາເລັດ ກໍ່ເພື່ອເນັ້ນໃຫ້

ນັກຮຽນຮູ້ວ່າ: ການຮຽນຮູ້ສິ່ງຕ່າງໆ ຈະບໍ່ເກີດສິ່ງງ່າຍດາຍ ໂດຍບໍ່ມີຄວາມຜິດພາດ ຕົວຄູເອງກໍ່ຍັງມີຄວາມຜິດພາດໄດ້ ສະນັ້ນຈົ່ງກ້າທຳສິ່ງຕ່າງໆໂດຍ ບໍ່ຕ້ອງກາງວົນຫຼືຢ້ານກວາຄວາມລົ້ມເຫຼວ

❖ **ການໃຫ້ນັກຮຽນເຫັນຄຸນຄ່າໃນສິ່ງທີ່ຮຽນ**

ຄູສາມາດໃຫ້ນັກຮຽນເຫັນຄຸນຄ່າໃນສິ່ງທີ່ຮຽນໄດ້ໂດຍການຈູງໃຈນັກຮຽນພາຍໃນ ແລະ ພາຍນອກ ສິ່ງຈູງໃຈພາຍໃນໄດ້ແກ່ ການນຳສະເໜີ ແລະ ກິດຈະກຳທີ່ສອດຄ່ອງ ກັບຄວາມຕ້ອງການຄວາມສົນໃຈ ແລະ ຄວາມຢາກຮູ້ຢາກເຫັນຂອງນັກຮຽນ. ສ່ວນແຮງຈູງໃຈພາຍນອກ ແມ່ນລາງວັນ ຫຼື ສິ່ງຕອບແທນທີ່ນັກຮຽນໄດ້ຮັບຂາກການຮຽນ ຫຼື ການກະທຳກິດຈະກຳນັ້ນໆແນວທາງການ ຊ່ວຍໃຫ້ນັກຮຽນເຫັນຄຸນຄ່າຂອງສິ່ງທີ່ຮຽນ ອາດຈຳແນກອອກເປັນຂໍ້ຍ່ອຍໆ ດັ່ງນີ້:

**1). ຄູຄວນກະກຽມກິດຈະກາໃຫ້ສອດຄ່ອງກັບຄວາມສົນໃຈຂອງນັກຮຽນ**

ກິດຈະກຳ ອາດຈະແມ່ນ ກິລາ, ດົນຕີ,ເຫດການປະຈຸບັນ,ສັດລ້ຽງ,ບັນຫາທີ່ເຂົາກຳລັງປະເຊີນຢູ່ໃນຄອບຄົວ ຫຼື ກັບໝູ່ເພື່ອນ,ລາຍການທາງໂທລະທັດ ຫຼື ບຸກຄະລິກກະພາບ ຢ່າງໃດຢ່າງໜຶ່ງ ລື ຫຼາຍໆຢ່າງກໍ່ໄດ້ ແຕ່ຄູຕ້ອງມີຄວາມແນ່ໃຈວ່າກິດຈະກຳທີ່ເຂົາສົນໃຈນັ້ນ ຮູ້ກໍ່ມີຄວາມຮູ້ພຽງພໍ

**2). ການກະຕຸ້ນການຢາກຮູ້ຢາກເຫັນ**

ແນວທາງການກະຕຸ້ນຄວາມຢາກຮູ້ຢາກເຫັນແກ່ນັກຮຽນ ຄູອາດກະທຳໄດ້ໂດຍວິທີການສ້າງສະຖານະການຂັດແຍ່ງຂຶ້ນລະຫວ່າງສິ່ງທີ່ເຂົາເຊື່ອກັບສິ່ງທີ່ເປັນຈິງ ຕົວຢ່າງເຊັ່ນ:ຖ້າເຂົາເຊື່ອວ່າຢູ່ຂ້າງເທິງດາວເຄາະມີມະນຸດຢູ່ ຕົວຈິງແລ້ວສເທິງດາວນັ້ນບໍ່ມີອົກຊີເລີຍ ແລະ ມີອຸນນະພູມຮ້ອນ ຫຼື ໜາວເກີນໃປ ມະນຸດບໍ່ສາມາດມມີຊີວິດຢູ່ໄດ້ ຂໍ້ຂັດແຍ່ງນີ້ຈະນຳໄປສູ່ການອະພິປາຍ ສາມາດກະຕຸ້ນແກ່ນັກຮຽນໃຫ້ເກີດມີຄວາມຢາກຮູ້ຢາກເຫັນກ່ຽວກັບສະພາບພູມສາດເທິງດາວເຄາະນັ້ນ.

**3). ການສ້າງບົດຮຽນໃຫ້ມ່ວນທີ່ມີຊີວິດຊີວາ**

ການເຮັດໃຫ້ບົດຮຍນມີຄວາມມ່ວນ ອາດເຮັດໄດ້ໂດຍໃຫ້ນັກຮຽນສະແດງບົດບາດ ສົມມຸດ ຫຼື ຫຼິ້ນເກມເຊັ່ນ: ການສອນວິຊາພູມສາດ ເວົ້າເລື່ອງປະເທດອອ້ມຂ້າງ ຄູອາດແບ່ງນັກຮຽນອອກເປັນກຸ່ມໆ ແລະ ກຳນົດແຕ່ລະກຸ່ມເປັນຄົນແຕ່ລະປະເທດ.ນຈັກຮຽນຢູ່ໃນກຸ່ມແຕ່ລະປະເທດຕ້ອງສຶກສາວ່າ: ປະເທດຂອງຕົນມີສິ່ງໃດເປັນສັນຍາລັກປະຈຳຊາດ,ລັກສະນະຂອງທຸງຊາດມີຄືແນວໃດ,ໃຜເປັນນາຍົກລັດທະມົນຕີ,ໃຊ້ສະກຸນເງິນແນວໃດ,ປະເທດເລົ່ານີ້ຈະມີການຕິດຕໍ່ຄ້າຂາຍແນວໃດຕໍ່ກັນ ຈຶ່ງມີອັດຕາແລກປ່ຽນເງິນຕາ ແລະ ອື່ນໆ ວິທີການຮຽນແບບນີ້ພາໃຫ້ນັກຮຽນມີຄວາມມ່ວນຊື່ນຕໍ່ວິຊາຮຽນ ແລະ ໄດ້ມີການຮ່ວມມື ເຊິ່ງກັນ ແລະ ກັນ ເພື່ອສຶກສາຄົ້ນຄ້ວາບົດຮຽນດັ່ງກ່ວນັ້ນ.

**4). ການສອນເນື້ອໃນທີ່ແປກໃໝ່**

ການສອນເນື້ອໃນທີ່ນັກຮຽນຮູ້ ແລ້ວຈະພາໃຫ້ເກີດມີຄວາມເບື່ອໜ່າຍ ແລະ ຮູ້ສຶກວ່າສິ່ງທີ່ຄູສອນນັ້ນບໍ່ມີຄ່າ ສະນັ້ນການນຳສະເໜີເນື້ອໃນທີ່ແປກໃໝ່ຈຶ່ງແມ່ນສິ່ງຈຳເປັນສຳລັບການສ້າງແຮງຈູງໃຈນອກຈາກເນື້ອໃນທີ່ແປກໃໝ່ແລ້ວ ຄູຕ້ອງໃຊ້ວິທີສອນທີ່ຫຼາກຫຼາຍ ໃຊ້ສື່ການສອນຫຼາຍໆປະກອບນຳອີກດ້ວຍ.

**5). ການເນັ້ນໃຫ້ນັກຮຽນເຫັນວ່າສາ ເນື້ອໃນທີ່ຮຽນໃນປະຈຸບັນມີຄວາມສາພັນເຊື່ອມໂຍງກັບຊີວິດປະຈຳວັນ ແລະ ອານາຄົດແນວໃດ**

ວິທີນີ້ອາດບໍ່ເໝາະສົມກັບນັກຮຽນທີ່ຍັງນ້ອຍຢູ່ ເພາະເດັກນ້ອຍເຂົາຈະສົນໃຈສະເພາະສິ່ງທີ່ເຂົາສຳພັດໄດ້ຢູ່ໃນຂະນະນັ້ນເທົ່ານັ້ນ ພວກເຂົາບໍ່ສາມາດເຊື່ອມໂຍງສິ່ງທີ່ເກີດຂຶ້ນໃນປັດຈຸບັນກັບສິ່ງທີ່ເກີດຂຶ້ນໃນອານາຄົດໄດ້

ການເນັ້ນໃຫ້ນັກຮຽນເຫັນວ່າສິ່ງທີ່ຮຽນນັ້ນ ຈະມີຄຸນຄ່າຕໍ່ວຽກງານໃນອານາຄົດຂອງເຂົາ ສະນັ້ນມັນຈຶ່ງຕ້ອງສອດຄ່ອງກັບຄວາມຕ້ອງການ ແລະ ການມຸ້ງຫວັງໃນອານາຄົດຂອງເຂົາອີກດ້ວຍ

**6). ການກະກຽມລາງວັນໃຫ້ແກ່ຜູ້ຮຽນ**

ກໍ່ແມ່ນການເສີມແຮງພາຍນອກ ແມ່ນວິທີທີ່ມີອິດທິພົນຕໍ່ການສ້າງແຮງຈູງໃຈ ໃຫ້ແກ່ຜູ້ຮຽນຫຼາຍທີ່ສຸດ.ເຖິງຢ່າງໃດກໍ່ຕາມການໃຫ້ລາງວັນນີ້ ຄູຕ້ອງແນ່ໃຈວ່າສິ່ງທີ່ໃຫ້ນັ້ນມີຄວາມໝາຍ ເປັນລາງວັນທີ່ແທ້ຈິງສຳລັບຜູ້ທີ່ຮຽນຮູ້ ຫຼື ບໍ ເພາະລາງວັນມັນຈະມີຄຸນຄ່າໄດ້ກໍ່ຕໍ່ເມື່ອ ແມ່ນສິ່ງທີ່ນັກຮຽນຕ້ອງການເທົ່ານັ້ນ.

- ❖ **ການຊ່ວຍເຫຼືອນັກຮຽນໃຫ້ເກີດຄວາມມຸ້ງໝັ້ນ ແລະ ໃສ່ໃຈໃນສິ່ງທີຮຽນ**

**1). ເປີດໂອກາດໃຫ້ນັກຮຽນຕອບສະໜອງໃຫ້ຫຼາຍ**

ການເປີດໂອກາດໃຫ້ນັກຮຽນໄດ້ຕອບສະໜອງ ອາດຢູ່ໃນຮູບແບບການຕອບຄຳຖາມຂອງຄູ ການໃຫ້ເຂົາອອກມາລາຍງານຢູ່ຕໍ່ໜ້າກະດານ ຫຼື ການອອກມາສະແດງ ສາທິດບາງຢ່າງ ຫຼັງຈາກນັກຮຽນໄດ້ສະແດງແລ້ວຄູຄວນໃຫ້ຜົນຍ້ອນກັບແກ່ເຂົາ ເພື່ອໃຫ້ເຂົາມີກຳລັງໃຈ ແລະ ແກ້ໄຂໃນສິ່ງທີ່ຜິດພາດໂດຍທັນທີ ການສະແດງອອກ ແລະ ການໄດ້ຮັບຜົນສະທ້ອນ ແລະ ການໄດ້ຮັບຜົນສະທ້ອນກັບຈະເຮັດໃຫ້ນັກຮຽນເພີ່ມຄວາມໃສ່ໃຈໃນບົດຮຽນນັ້ນຫຼາຍຂຶ້ນຕື່ມ.

**2). ເປີດໂອກາດໃຫ້ນັກຮຽນໄດ້ກະທາຈົນສາເລັດ**

ນັກຮຽນຈະມີຄວາມມຸ້ງໝັ້ນ ແລະ ໃສ່ໃຈ ໃຫ້ສຳເລັດພຽງເວລາເຄິ່ງຊົ່ວໂມງ ແຕ່ຜ່ານໄປເຄິ່ງຊົ່ວໂມງແລ້ວ ເຂົາກໍ່ຍັງກະທຳຢູ່ ເຂົາຍັງສືບຕໍ່ປັ້ນຕຸກກະຕາໄປອີກ 2 ຊົ່ວໂມງ ກໍ່ເພາະເຂົາຕ້ອງການເຫັນຜົນງານຂອງຕົນທີ່ສົມບູນ.

**3). ຫຼີກຫຼຽງຄວາມສາຄັນຂອງຄະແນນ ແລະ ບໍ່ເນັ້ນການແຂ່ງຂັນ**

ຄູຄວນເນັ້ນໃຫ້ນັກຮຽນພໍໃຈໃນຜົນງານ ຫຼື ຄວາມກ້າວໜ້າສຂອງຕົນເອງຫຼາຍກ່ວາຄະແນນທີ່ໄດ້ຮັບ ແລະ ຄູບໍ່ຄວນເນັ້ນກິດຈະກຳທີ່ມີການແຂ່ງຂັນລະຫວ່າງບຸກຄົນ

**4). ສາບລັບວຽກທີ່ຍາກ ຄູຄວນໃຫ້ເວລາໃນການເຮັດວຽກຫຼາຍຂຶ້ນດີກ່ວາຫຼຸດປະລິມານຄວາມຍາກຂອງວຽກລົງ**

ຖ້າຄູໃຫ້ນັກຮຽນເຮັດວຽກທີ່ມີຄວາມສ່ຽງສູງ (ໂອກາດມີຄວາມລົ້ມເຫຼວຈະມີໂອກາດຫຼາຍກວ່າໂອກາດທີ່ຈະປະສົບຜົນສຳເລັດ) ພາໃຫ້ແຮງຈູງໃຈຂອງເຂົາຫຼຸດລົງ ເຖິງຢ່າງໃດກໍ່ຕາມຖ້າວຽກນັ້ນເປັນສິ່ງທ້າທາຍຕໍ່ເຂົາ ຄູຂຶ່ງເພີ່ມເວລາໃນການເຮັດວຽກເພີ່ມອີກ ແລະ ຄູກໍ່ເປັນຜູ້ສະໜັບສະໜູນຊ່ວຍເຫຼືອ ຄູບໍ່ຄວນໃຊ້ວິທີຫຼຸດຄວາມຍາກຂອງວຽກງານນັ້ນໃຫ້ເປັນວຽກທີ່ງ່າຍຂຶ້ນ

5). ການນຳສະເໜີຕົວແບບໃຫ້ແກ່ນັກຮຽນ

ຄູອາດຍົກຕົວຢ່າງຂອງຕົນເອງ ຫຼື ຜູ້ອື່ນກໍ່ໄດ້ ກ່ຽວກັບວິທີເອົາຊະນະວິຊາຮຽນທີ່ຍາກໆ ໃຫ້ນັກຮຽນຟັງ.

## 6. ວິທີການໃຫ້ກຳລັງໃຈ

1) ຄວນໃຫ້ກຳລັງໃຈທັນທີຫຼັງຈາກປະຕິບັດພຶດຕິກຳທີ່ປາຖະໜາເຊັ່ນ: ເກັ່ງຫຼາຍ, ດີ, ດີ, ດີ, ຖືກຕ້ອງ , ຍິ້ມ, ຫົວຫົວ ຫຼື ສະແດງຄວາມຫ່ວງໃຍໃນຂະນະນັກຮຽນເວົ້າ ແລະ ອື່ນໆ.

2) ຄວນໃຫ້ກຳລັງໃຈຢູ່ໃນຈັງຫວະທີ່ເໝາະສົມ ແລະ ເປັນທຳມະຊາດ.

3) ຄວນໃຊ້ວິທີການໃຫ້ກຳລັງໃຈແບບຕ່າງໆ ເຊັ່ນ: ການໃຊ້ພາສາ ແລະ ທ່າທາງເພື່ອສະແດງການຍອມຮັບການຕອບຮັບ ຫຼື ພຶດຕິກຳ.

4) ການໃຫ້ກຳລັງໃຈຕ້ອງບໍ່ເກີນຄວາມເປັນຈິງ.

5) ຄວນໃຫ້ທຸກຄົນມີກຳລັງໃຈ.

6) ຄວນໃຫ້ກຳລັງໃຈໃນດ້ານບວກ ແທນທີ່ຈະເປັນທາງລົບ.

7) ເຈົ້າຄວນໃຫ້ກຳລັງໃຈດ້ວຍທ່າທາງທີ່ຈິງໃຈ.

8) ຢ່າໃຊ້ກຳລັງໃຈປະເພດໃດໜຶ່ງຊ້ຳແລ້ວຊ້ຳອີກ ເພາະຈະເຮັດໃຫ້ເບື່ອງ່າຍ ແລະ ບໍ່ມີຜົນຕໍ່ຈິດໃຈ

9) ການໃຫ້ກຳລັງໃຈຄວນພິຈາລະນາທີ່ເຫມາະສົມກັບອາຍຸ. ການໃຫ້ກຳລັງໃຈບາງປະເພດອາດເໝາະສົມກັບຄົນບາງລະດັບເທົ່ານັ້ນ.

❖ **ສະຫຼຸບ:**

ແຮງຈູງໃຈໝາຍເຖິງພະລັງຈິດເຊິ່ງເປັນພາວະພາຍໃນທີ່ກະຕຸ້ນກຳນົດທິດທາງ ແລະ ຄົງສະພາບພຶດຕິກຳ ເພື່ອບັນລຸຈຸດປະສົງ ຫຼື ເປົ້າໝາຍ ແຮງຈູງໃຈທີ່ປະກົດຂຶ້ນມັກເປັນຜົນລວມລະຫວ່າງຄຸນລັກສະນະ ແລະ ພາວະຂອງເຫດການທາງສິ່ງແວດລ້ອມ ໂດຍທົ່ວໄປຂອງນັກຮຽນຈະແບ່ງອອກເປັນ 2 ປະເພດຄື: ແຮງຈູງໃຈພາຍນອກ ແລະ ແຮງຈູງໃຈພາຍໃນ

ນັກຈິດຕະວິທະຍາໄດ້ອະທິບາຍແຮງຈູງໃຈໄວ້ແຕກຕ່າງກັນ. ກຸ່ມພຶດຕິກຳນິຍົມ ຈະເນັ້ນ ແຮງຈູງໃຈພາຍນອກ ໂດຍອະທິບາຍວ່າ: ການໃຫ້ລາງວັນ ແລະ ການລົງໂທດທີ່ມີບົດບາດສຳຄັນຕໍ່ແຮງຈູງໃຈຂອງບຸກຄົນ. ຖ້າບຸກຄົນໄດ້ຮັບຕົວເສີມແຮງຫຼັງຈາກສະແດງພຶດຕິກຳແລ້ວ ເຂົາກໍ່ມີແນວໂນ້ມສະແດງພຶດຕິກຳນັ້ນຖີ່ຂຶ້ນອີກ. ແຕ່ກຸ່ມມະນຸດນິຍົມ ຈະເນັ້ນແຮງຈູງໃຈພາຍໃນ. ກຸ່ມນີ້ມີຄວາມເຊື່ອວ່າ: ຄວາມຕ້ອງການນັບຖືຕົນເອງ ແລະ ຄວາມຕ້ອງການພັດທະນາສັກກະຍາພາບແຫ່ງຕົນ ແມ່ນສູນກາງຂອງການສະແດງພຶດຕິກຳ ກຸ່ມປັນຍານິຍົມກໍ່ເນັ້ນແຮງຈູງໃຈພາຍໃນເຊັ່ນດຽວກັນ ກັບກຸ່ມມະນິດນິຍົມ ແຕ່ມີຄວາມຄິດວ່າ: ການຄິດ (ຄວາມເຊື່ອ,ຄວາມຄາດຫວັງ,ເປົ້າໝາຍ,ຄ່ານິຍົມ) ເປັນຕົວກຳນົດພຶດຈິກຳ ສ່ວນກຸ່ມຮຽນຮູ້ທາງສັງຄົມເຊື່ອວ່າ: ແຮງຈູງໃຈເປັນຄູນລະຫວ່າງຄວາມຄາດຫວັງ ຜົນກຳທີ່ໄດ້ຮັບຈາກການ

ກະທຳ ກັບຄຸນຄ່າກັບເປົ້າໝາຍທີ່ຕ້ອງການ ເຊິ່ງເປັນການປະສົມປະສານລະຫວ່າງແນວຄວາມຄິດຂອງກຸ່ມພຶດຕິກຳນິຍົມ ແລະ ກຸ່ມປັນຍານິຍົມ

ນອກຈາກມີຄວາມພະຍາຍາມທີ່ຈະອະທິບາຍວ່າ: ແຮງຈູງໃຈແມ່ນສິ່ງໃດແລ້ວ ນັກຈິດຕະວິທະຍາການສຶກສາຍັງໄດ້ພະຍາຍາມສຶກສາ ຫາຄຳຕອບວ່າມີອົງປະກອບໃດແດ່ເພື່ອນຳມາອະທິບາຍວ່າ: ຍ້ອນຫັຍງເຮົາຈຶ່ງມີພຶດຕິກຳດັ່ງນັ້ນ ອົງປະກອບສຳຄັນທີ່ຈະນຳມາອະທິບາຍໃນຄຳຖາມດັ່ງກ່າວໄດ້ແກ່ ພາວະການຕື່ນຕົວການກຳນົດເປົ້າໝາຍ,ຄວາມຕ້ອງການ,ການອ້າງເຫດຜົນ ແລະ ຄວາມເຊື່ອ.

- ✓ **ພາວະການຕື່ນຕົວ**

ໃນການປະກອບກິດຈະກຳຕ່າງໆຈະມີລະດັບຂອງພາວະການຕື່ນຕົວແຕກຕ່າງກັນ ພາວະການຕື່ນຕົວຈະມີປະສິດທິພາບການທຳງານຫຼາຍ ຫຼື ນ້ອຍພຽງໃດ ຈະຂຶ້ນຢູ່ກັບຄວາມຍາກງ່າຍຂອງວຽກນັ້ນ.ຖ້າວຽກນັ້ນງ່າຍພາວະການຕື່ນຕົວສູງກໍ່ຈະຊ່ວຍໃຫ້ປະສິດທິພາບການທຳງານດີກວ່າພາວະການຕື່ນຕົວຕໍ່າ ແຕ່ຖ້າວຽກງານນັ້ນຍາກພາວະການຕື່ນຕົວຕໍ່າຈະຊ່ວຍໃຫ້ປະສິດທິພາບການທຳງານດີກວ່າພະອະການຕື່ນຕົວສູງ. ຢູ່ໃນຫ້ອງຮຽນຄູເຄີຍພົບເຫັນບັນຫາກ່ຽວກັບການຄື່ນຄົວທີ່ສຳຄັນ 2 ປະເດັນຄື: ນັກຮຽນມີພາວະການຕື່ນຕົວຕໍ່າເກີນໄປ ຫຼື ສູງເກີນໄປ,ຖ້າພົບຮັກຮຽນມີພາວະການຕື່ນຕົວຕໍ່າຫຼາຍ ຄູຈະຕ້ອງກະຕຸ້ນ ແລະ ໃຫ້ຄວາມສົນໃຈ ຄວາມຢາກຮູ້ຢາກເຫັນຂອງເຂົາເພີ່ມຂຶ້ນ ແຕ່ຖ້ານັກຮຽນມີພາວະການຕື່ນຕົວສູງເກີນໄປ (ມີຄວາມວິຕົກກາງວົນສູງ) ກໍ່ຈະມີຜົນພາໃຫ້ປະສິດທິພາບຂອງວຽກງານນັ້ນຕໍ່າ ເຊິ່ງເປັນອຸປະສັກຕໍ່ຄວາມສົນໃຈໃນຫ້ອງຮຽນ ແລະ ພາໃຫ້ເຂົາຈື່ຈຳສິ່ງທີ່ຮຽນໄດ້ໜ້ອຍລົງ. ສະນັ້ນຄູຈຶ່ງຊ່ວຍໃຫ້ນັກຮຽນດັ່ງກ່າວໃຫ້ຫຼຸດຄວາມວິຕົກກາງວົນ.

- ✓ **ການກຳນົດເປົ້າໝາຍຂອງການຮຽນ**

ການກຳນົດເປົ້າໝາຍສູງ ຫຼື ຕໍ່າ ລ້ວນແຕ່ມີຜົນຕໍ່ແຮງຈູງໃຈ ການກຳນົດເປົ້າໝາຍທີ່ມີຄວາມສາມາດລະດັບປານກາງ ແລະ ມີແນວໂນ້ມທີ່ຈະປະສົບຜົນສຳເລັດໃນອານາຄົດອັນໃກ້ ຈະມີຜົນເຮັດໃຫ້ເກີດແຮງຈູງໃຈທີ່ດີ

ໄດ້ມີເປົ້າໝາຍ 2 ຢ່າງທີ່ປະກົດຢູ່ໃນການຮຽນຄື: ການກຳນົດເປົ້າໝາຍເພື່ອຮູ້ ແລະ ການກຳນົດເປົ້າໝາຍເພື່ອຄະແນນ ຫຼື ຜົນງານ ນັກຮຍນທີ່ກຳນົດເປົ້າໝາຍເພື່ອຮູ້ ຈະມີຄວາມອົດທົນພາກພຽນ ແລະ ມີແຮງຈູງໃຈທີ່ດີຫຼາຍກວ່າການກຳນົດເປົ້າໝາຍເພື່ອຜົນງານ ຫຼື ຄະແນນ

- ✓ **ຄວາມຕ້ອງການ**

ຄວາມຕ້ອງການ ແມ່ນພາວະທີ່ເກີດຂຶ້ນ ຈາກຄວາມບໍ່ສົມດູນທາງກາຍ ແລະ ຈິດໃຈ ເປັນຕົ້ນເຫດສຳຄັນທີ່ພາໃຫ້ເກີດມີແຮງຈູງໃຈ ແລະ ມີພຶດຕິກຳຕໍ່ສິ່ງຕ້ອງການ ທ່ານມາສະໂລ ໄດ້ສະເໜີທິດສະດີຂອງ

ລຳດັບຂັ້ນຂອງຄວາມຕ້ອງການ ໂດຍອະທິບາຍວ່າ: ມະນຸດມີຄວາມຕ້ອງການຈາກຂັ້ນພື້ນຖານ (ຄວາມຕ້ອງການທາງສະລິລະ) ໄປສູ່ຄວາມຕ້ອງການທີ່ສູງຂຶ້ນ (ຄວວາມຕ້ອງການທາງຈິດໃຈ) ເມື່ອຄວາມຕ້ອງການຂັ້ນຕົ້ນໄດ້ຮັບການຕອບສະໜອງກໍ່ຈະເກີດຄວາມຕ້ອງການທີ່ສູງຂຶ້ນ.

ຄວາມຕ້ອງການທີ່ສຳຄັນຕໍ່ແຮງຈູງໃຈໃນການຮຽນຮູ້ກໍ່ແມ່ນຄວາມຕ້ອງການຄວາມສຳເລັດ ແລະ ຄວາມຕ້ອງການຫຼີກໜີຄວາມລົ້ມເຫຼວ ທັງ 2 ນີ້ເປັນພະລັງທີ່ມີທິດທາງກົງກັນຂ້າມກັນ. ການມຸ້ງກະທຳຈະປະກົດໄປທິດທາງໃດນັ້ນ ຍ່ອມຂຶ້ນກັບວ່າມີພະລັງໃດຫຼາຍກ່ວາ.

✓ **ການອ້າງເຫດຜົນ**

ການອ້າງເຫດຜົນທີ່ບຸກຄັນສຳເລັດ ຫຼື ລົ້ມເຫຼວຈະມີອິດທິພົນທີ່ສຸດ ຕໍ່ສະພາບທາງອາລົມ ຄວາມຄາດຫັວງ ແລະ ແຮງຈູງໃຈ

ທ່ານ ໄວເນີ ອະທິບາຍວ່າ: ສາເຫດທີ່ບຸກຄົນນຳມາອ້າງເມື່ອປະສົບຄວາມສຳເລັດ ຫຼື ລົ້ມເຫຼວ ຈະແບ່ງອອກເປັນ 3 ວິຕິຄື: ມີຕິແຫຼ່ງຂອງສາເຫດ,ມີຕິຄວາມຄົງທີ່ຂອງສາເຫດ,ມີຕິຄວາມສາມາດຄວບຄຸມສາເຫດ

ນອກຈາກອ້າງສາເຫດມີຄວາມສຳພັນໂດຍກົງກັບແຮງຈູງໃຈຂອງບຸກຄົນແລ້ວ ມັນຍັງມີຜົນຕໍ່ຄວາມຮູ້ສຶກຄໍ່ກັບຄຸນຄ່າແຫ່ງຕົນອີກ ຄັນທີ່ມີຄວາມຮູ້ສຶກວ່າຕົນເອງບໍ່ມີຄ່າ ຈະເປັນຄົນປະເພດມັກຫຼີກໜີຄວາມລົ້ມເຫຼວ ຫຼື ຍອມຮັບຄວາມລົ້ມເຫຼວ ເຊິ່ງແມ່ນຄຸນລັກສະນະຂອງແຄ່ລະສະຫາຍ

ເພື່ອເຮັດໃຫ້ການຮຽນຮູ້ຂອງນັກຮຽນດຳເນີນໄປຢ່າງມີປະສິດທິພາບ ຄູຈຳເປັນຕ້ອງໄດ້ສຶກສາເລື່ອນແຮງຈູງໃຈ ເພື່ອຊອກຫາວິທີໃນການພັດທະນາແຮງຈູງໃຈໃນການຮຽນໃຫ້ແກ່ນັກຮຽນ ແນວທາງການເສີມສ້າງແຮງຈູງໃຈຕໍ່ການຮຽນຈະກະທຳໄດ້ດ້ວຍຫຼາຍວິທີ ວິທີທີ່ສຳຄັນທີ່ສຸດ ກໍ່ແມ່ນການເສີມສ້າງການເຊື່ອໝັ້ນ ແລະ ການຄາດຫັວງໃນທາງບວກຂອງນັກຮຽນ ການໃຫ້ເຂົາເຫັນຄຸນຄ່າຂອງສິ່ງທີ່ຮຽນ ແລະ ການຊ່ວຍນັກຮຽນເກີດມີຄວາມມຸ້ງໝັ້ນ ການໃສ່ໃຈໃນສິ່ງທີ່ຮຽນ.

# ບົດທີ 9
# ສະໝອງກັບການຮຽນຮູ້

## 1. ຄວາມໝາຍຄວາມສຳຄັນຂອງສະໝອງກັບການຮຽນຮູ້

### 1.1. ຄວາມໝາຍຂອງສະໝອງ

ສະໝອງເປັນອະໄວຍະວະທີ່ສຳຄັນທາງວິພາກໃນມະນຸດ ແລະ ໃນສັດຫຼາຍຊະນິດ. ເປັນທີ່ຮູ້ຈັກກັນໃນນາມ encephalon, ມັນແມ່ນສ່ວນກາງຂອງລະບົບປະສາດ. ບາງຄັ້ງຄຳສັບນີ້ຍັງຖືກໃຊ້ເພື່ອອ້າງອີງເຖິງອະໄວຍະວະຂອງລະບົບປະສາດຢູ່ໃນຫົວຂອງສັດທີ່ບໍ່ມີກະດູກສັນຫຼັງ.

ສະຫມອງແມ່ນຮັບຜິດຊອບສໍາລັບການຄວບຄຸມ ແລະ ຊີ້ນໍາການເຄື່ອນໄຫວ, ພຶດຕິກໍາ, ແລະ homeostasis. Homeostasis ປະກອບມີການເຕັ້ນຂອງຫົວໃຈ, ຄວາມດັນເລືອດ, ຄວາມສົມດຸນຂອງນ້ໍາ ແລະ ອຸນຫະພູມ ແລະ ອື່ນໆ. ຫນ້າທີ່ຂອງສະຫມອງຍັງມີສ່ວນຮ່ວມໃນສະຫມອງ, ອາລົມ, ຄວາມຈໍາ, ການຮຽນຮູ້ເຄື່ອງຈັກແລະຄວາມສາມາດອື່ນໆກ່ຽວກັບການຮຽນຮູ້.

ສະຫມອງແມ່ນປະກອບດ້ວຍສອງປະເພດຂອງຈຸລັງ, ຈຸລັງປະສາດ ແລະ ຈຸລັງ glial. Glia ມີຄວາມຮັບຜິດຊອບໃນການຮັກສາ ແລະ ປົກປ້ອງ neurons. Neurons, ຫຼື neurons, ແມ່ນຈຸລັງຕົ້ນຕໍທີ່ສົ່ງຂໍ້ມູນໃນຮູບແບບຂອງສັນຍານໄຟຟ້າທີ່ເອີ້ນວ່າທ່າແຮງການປະຕິບັດ. neurotransmitters ເຄື່ອງສົ່ງສັນຍານ neurotransmitter ຂ້າມພາກພື້ນລະຫວ່າງສອງ neurons ເອີ້ນວ່າ synapse. ກະດູກສັນຫຼັງ, ເຊັ່ນແມງໄມ້, ມີ neurons ຫຼາຍລ້ານຢູ່ໃນສະຫມອງຂອງເຂົາເຈົ້າ. ກະດູກສັນຫຼັງຂະຫນາດໃຫຍ່ມັກຈະມີຫຼາຍກ່ວາຫນຶ່ງຮ້ອຍລ້ານ neurons ໃນສະຫມອງຂອງເຂົາເຈົ້າ. ສະຫມອງຂອງມະນຸດແມ່ນເປັນເອກະລັກພິເສດກ່ວາສັດເພາະມັນມີຄວາມຊັບຊ້ອນ ແລະ ໃຫຍ່ກວ່າເມື່ອທຽບກັບຮ່າງກາຍຂອງມະນຸດ.

### 1.2. ຄວາມສໍາຄັນຂອງສະໝອງກັບການຮຽນຮູ້

ສະໝອງເປັນອະໄວຍະວະທີ່ສໍາຄັນທັງໃນມະນຸດ ແລະ ສັດ. ເນື່ອງຈາກວ່າມັນເຮັດໜ້າທີ່ເປັນສູນກາງຂອງລະບົບປະສາດທີ່ຄວບຄຸມ ແລະ ຄໍາສັ່ງ ການເຄື່ອນໄຫວ, ພຶດຕິກໍາ, ລວມທັງການຮັກສາຄວາມສົມດູນໃນຮ່າງກາຍທີ່ເອີ້ນວ່າ homeostasis ເຊັ່ນ: ການເຕັ້ນຂອງຫົວໃຈ, ຄວາມດັນເລືອດ, ຄວາມສົມດຸນຂອງນໍ້າໃນຮ່າງກາຍ ແລະ ອຸນຫະພູມຮ່າງກາຍ ນອກຈາກນັ້ນ, ສະຫມອງຍັງມີສ່ວນຮ່ວມໃນມັນສະຫມອງ, ອາລົມ, ຄວາມຈໍາ, ການຮຽນຮູ້, ການເຄື່ອນໄຫວ. ແລະຄວາມສາມາດອື່ນໆທີ່ກ່ຽວຂ້ອງກັບການຮຽນຮູ້ ມັນຍັງຄວບຄຸມການເຮັດວຽກທາງຈິດເຊັ່ນ: ໄອ, ຈາມ, ການເຕັ້ນຂອງຫົວໃຈ, ນອນ, ຄວາມຫິວ, ຄວາມເຕັມທີ່, ຫຼືແມ້ກະທັ້ງຄວາມຮູ້ສຶກທາງເພດ.

ສະໝອງກັບການຮຽນຮູ້ເປັນການຮຽນຮູ້ທີ່ສອດຄ່ອງກັບການເຮັດວຽກຂອງສະໝອງທາງທໍາມະຊາດເຊັ່ນ: ໃນເລື່ອການຈັດປະສົບການຮຽນຮູ້ຈະເປັນການຈັດປະສົບການຮຽນຮູ້ໃຫ້ສ່ອດຄ່ອງກັບການເຮັດວຽກຂອງສະໝອງແທນທີ່ຈະສອ່ດຄ່ອງກັບອາຍຸຊັ້ນຮຽນຫຼື ຫອ້ງຮຽນພຽງຢ່າງດຽວເພາະເດັກ 5 ປີເທົ່າກັນແຕ່ສະໝອງບໍ່ຄືກັນ . ສະນັ້ນຄວນຄໍານຶງເຖິງຄວາມສໍາຄັນຂອງການພັດທະນາການທາງດານສະໝອງໃນແຕ່ລະຊ່ໍາອາຍຸຢ່າງເໝາະສົມ, ແມ່ນຂະບວນການຈັດການ ແລະການກະຕຸ້ນການຮຽນຮູ້ຕາມແນວທາງສະໝອງກັບການຮຽນຮູ້ເພື່ອໃຫ້ເດັກມີລະດັບມີສະຕິປັນຍາແລະວຸດທິພາວະທາງອາລົມສູງຂຶ້ນ, ສາມາດປັບຕົວເຂົ້າກັບສະພາບແວດລອ້ມໄດ້ຢ່າງມີປະສິຕິພາບ, ເປັນຊັບພະຍາກອນມະນຸດມະນຸດທີມີຄຸນນະພາບເພື່ອນໍາພາອນາຄົດຂອງຊາດໄປສູ່ຄວາມສີວິໄລ.

- **ເຫດຜົນຂອງການພັດທະນາສະໝອງເດັກກອ່ນໄວຮຽນ**
  - ຈຸລັງສະໝອງມີການຕົວຕັ້ງແຕ່ເດັກຢູ່ໃນທອ້ງແມ່
  - ຊວງອາຍຸ 6 ປີຈຸລັງສະໝອງຂອງເດັກມີການເຊື່ອມຕໍ່ເປັນວົງຈອນ
  - ສະໝອງຈະເຮັດໜ້າທີ່ເມື່ອຈຸລັງສະໝອງຕໍ່ກັນເປັນວົງຈອນເຄືອຄ່າຍ
  - ການກະຕຸ້ນປະສາດສໍາພັດແລະການກະຕຸ້ນສະໝອງເຮັດໃຫ້ເກີດເຄືອຄ່າ
  - ສະໝອງຈະເຮັດວຽກໄດ້ດີເມື່ອເສັ້ນປະສາດເອົາເຍື້ອ<< ໄມເຍລິນ >>

## 2. ຄຸນລັກສະນະຂອງສະຫມອງ

ເປັນສູນກາງຂອງພຶດຕິກໍາ ແລະ ຄວບຄຸມການທໍາງານຂອງລະບົບປະສາດອື່ນໆຂອງຮ່າງກາຍໃຫ້ເປັນໄປຢ່າງມີລະບົບລະບຽບສອດຄ່ອງກັນ. ເຊິ່ງແບ່ງອອກປັນ 3 ພາກສວນດ້ວຍກັນຄື:

- ສ່ວນທີ່ 1: ສະໝອງສ່ວນໜ້າ
- ສ່ວນທີ່ 2: ສະໝອງສ່ວນກາງ
- ສ່ວນທີ່ 3: ສະໝອງສ່ວນຫຼັງ



❖ ສະໝອງສ່ວນໜ້າ: ເປັນສ່ວນທີ່ຢູ່ເທິງຂັ້ນສະໝອງຂຶ້ນໄປ ແບ່ງອອກເປັນ 3 ສ່ວນໃຫຍ່ໆຄື:

1) ທາລາມັດ: ຢູ່ເທິງຍອດຂອງສະໝອງສ່ວນກາງ, ເປັນສູນກາງຖ່າຍທອດກະແສປະສາດທີ່ມາຈາກໄຂສັນຫຼັງ, ອະໄວຍະວະສໍາຜັດ, ສະໝອງສ່ວນກາງ ແລະ ສະໝອງສ່ວນຫຼັງເພື່ອໄປຫາເຊຣີບຣັມເພື່ອຕີຄວາມໝາຍ ແລະ ສັ່ງການ.

2) ໄຮໂປທາຣາມັດ: ເປັນສ່ວນນ້ອຍໆທີ່ຢູ່ໃຕ້ທາຣາມັດ, ເຮັດໜ້າທີ່ຄວບຄຸມການເກີດອາລົມ ແລະ ແຮງຈູງໃຈ, ຄວາມຫິວໂຫຍ, ການທໍາງານຂອງຕ່ອມບໍ່ມີທາຣາມັດ ແລະ ຄວບຄຸມອຸນຫະພູມຂອງຮ່າງກາຍອີກດ້ວຍ.

3) ລະບົບລິມລິກ: ເປັນສູນປະສາດທີ່ກະຈາຍຢູ່ອ້ອມຮອບທາຣາມັດມີການທໍາງານເປັນລະບົບທີ່ສະຫລັບຊັບຊ້ອນຫຼາຍ ແລະ ມີສ່ວນສໍາຄັນຢູ່ 4 ສ່ວນຄື:

- ສ່ວນທີ 1: ອະມິກດາລາ ເປັນສ່ວນທີ່ຢູ່ດ້ານຂ້າງຂອງໄຮໂປທາລາມັດມີບົດບາດໃນການກະຕຸ້ນໃຫ້ເກີດຄວາມແຂງກ້າ, ສັດທີ່ດຸຮ້າຍ ຖ້າອະມິດາລາຖືກທໍາລາຍກໍຈະເຊື່ອມຊຶມອ່ອນແອ.

- ສ່ວນທີ 2: ບໍລິເວນເຊບໂທເອີເຣຍ ເປັນສ່ວນໜຶ່ງທີ່ຢູ່ດ້ານໜ້າຂອງທາລາມັດແຕ່ສູງກວ່າເລັກນ້ອຍ, ມີບົດບາດໜ່ວງໜ່ຽວຄວາມແຂງກ້າ,ສັດທີ່ຖືກທໍາລາຍເຊບໂທເອີເຣຍຈະມີຄວາມດຸຮ້າຍ ແລະ ແຂງກະດ້າງ.

- ສ່ວນທີ 3: ຮິບໂປແຄັມປັດ ເປັນສ່ວນທີ່ຢູ່ໃຕ້ທາລາມັດ ແລະ ໄຮໂປທາລາມັດ, ມີບົດບາດໃນການຈືຈໍາປະສົບການ,ຖ້າຖືກທໍາລາຍກໍ່ຈະຈື່ຫຍັງບໍ່ໄດ້ໝົດ.

- ສ່ວນທີ 4: ເຊລີເບລໍາ ເປັນສ່ວນເທິງສຸດຂອງສະໝອງ,ປົກຄຸມຢູ່ຂັ້ນສະໝອງເຕັມກະໂຫລກຫົວຂອງຄົນເຮົາ ຫຼື ເຄີຍເອີ້ນກັນວ່າ: ມັນສະໝອງມີ 2 ຊີກດ້ວຍກັນຄື: ຊີກຂວາ ແລະ ຊີກຊ້າຍ, ເຊຣີເບລໍາທັງສອງຊີກນີ້ເຊື່ອຕໍ່ກັນດ້ວຍໃຍປະສາດຢ່າງຫຼວງຫຼາຍ, ໃຍປະສາດເຫຼົ່ານີ້ຢູ່ບໍລິເວນສ່ວນລຸ່ມຂອງ ເຊຣີເບລໍາ ເອີ້ນວ່າ: ຄໍປັສແຄໂລຊັມ, ເຊຣີເບລໍາແຕ່ລະຊີກຈະຄວບຄຸມການທໍາງານຂອງຮ່າງກາຍພຽງຊີກດຽວ ແຕ່ສະລັບຂ້າງກັນຄື: ເຊຣີເບລໍາຊີກຊ້າຍຈະຄວບຄຸມການທໍາງານຂອງຮ່າງກາຍຊີກຂວາ

ແລະ ກົງກັນຂ້າມ, ສ່ວນຜິວຂອງເຊຣີເບລໍາເປັນທີ່ຮວມຂອງເຊວປະສາດຈຶ່ງມີສີເທົາ ແລະ ເອີ້ນສ່ວນຜິວທີ່ເປັນເໝືອນເປືອກຂອງເຊຣີເບລໍານີ້ວ່າ: ຄໍເທັກຂອງເຊຣີເບລໍາ, ສ່ວນໃນຂອງເຊຣີເບລໍາເປັນໃຍປະສາດເຊິ່ງມີໄຂມັນຫໍ່ຫຸ້ມຢູ່ມີສີຂາວ, ຄາດວ່າ ເຊຣີເບລໍາປະກອບດ້ວຍ: ເຊວປະສາດປະມານ 9 ພັນລ້ານຕົວ ຫຼື ປະມານ 3ສ່ວນ 4 ຂອງເຊວປະສາດທັງໝົດໃນສະໝອງຄົນເຮົາ.

ຣີເບລໍາຂອງຄົນເຮົານອກຈາກແບ່ງອອກ 2 ຊີກແລ້ວ, ຍັງມີຮ່ອງແບ່ງ ເຊຣເບລໍາອອກເປັນສ່ວນໆ ອີກຄື: ມີຮ່ອງແບ່ງຊີຣີເບລໍາອອກເປັນສ່ວນໜ້າແລະສ່ວນຫຼັງຢູ່ເຄິ່ງກາງກະໂຫລກຫົວ ເຊິ່ງຖືກເອີ້ນວ່າ: ຮອງກາງ (Central fissure), ທີ່ດ້ານຂ້າງຍັງມີຮ່ອງບໍ່ລິເວນໃບຫູເບື້ອງໜຶ່ງຂອງເຮົາເປັນທາງຜ່ານໄປດ້ານໜ້າເຖິງບໍລິເວນໃບຫູເບື້ອງໜຶ່ງ, ແບ່ງ ຊີຣີເບລໍາ ອອກເປັນສ່ວນເທິງກັບໃສ່ແລ້ວຮ່ອງທັງສອງນີ້ແບ່ງຊີຣີເບລໍາແຕ່ລະຊີກອອກເປັນ 4 ກີບ.

ທີ່ລໍາຍາວຂະໜາດນິ້ວກ້ອຍຂອງພວກເຮົາຢູ່ໃນແກນກາງຂອງຂໍ້ສະໝອງ, ຕັ້ງແຕ່ເມ ດັນລາໃນສະໝອງສ່ວນຫຼັງຜ່ານສະໝອງສ່ວນກາງໄປເຖິງ ໄຕ້ທາລາມັດ, ການຕໍ່ໄຍຂອງເຊລປະສາດກຸ່ມນີ້ນີ້ກໍຄືກັບຕາໜາງແຫຈຶ່ງເອີ້ນວ່າ: ຣີຕິຄິວລາຣຟໍຣເມຊັນ (Reticular formation), ມີບົດບາດເຮັດໃຫ້ກະແສປະສາດທີ່ມາຈາກສ່ວນຕ່າງໆ ຈອງຮ່າງກາຍກະຈາຍໄປທົ່ວສະໝອງກົບບໍ່ຄືທາລາມັສ ເຊິ່ງກັນຕອງສົ່ງກະແສປະສາດໄປສະເພາະບໍລິເວນທີ່ກ່ຽວຂ້ອງທັງນັ້ນ, ການນເຮັດວຽກຂອງຣີຕິຄິວລາຣຟໍຣເມຊັນ ຈຶ່ງເຮັດໃຫ້ສະໝອງທຸກສ່ວນມີການຕື່ນຕົວ, ເຊິ່ງເອີ້ນອີກແບບໜຶ່ງວ່າ ລະບົບຕື່ນຕົວຂອງຣີຕິຄິວລາຣ (Reticular activating system)

❖ ສະໝອງສ່ວກ່າງ: ເປັນສ່ວນທີ່ຕໍ່າຈາກສະໝອງສ່ວນຫຼັງໄປຈົນສຸດຂໍ້ສະໝອງ, ເປັນທາງຜ່ານຂອງເສັ້ນປະສາດໄປສູ່ສະໝອງສ່ວນໜ້າ, ມີບົດບາດຄວບຄຸມການກົ້ງໜ່ອຍແກ່ນຕາແລະຄວບຄຸມກິລິຍາສະທ້ອນກ່ຽວກັບການເຫັນ, ການໄດ້ຍິນ ແລະ ການສໍາພັດ.

❖ ສະໝອງສ່ວນຫຼັງ: ເປັນສ່ວນທີ່ຢູ່ຕໍ່າຈາກປາຍເທິງຂອງໄຂຫຼັງ ເຊິ່ງປະກອບດ້ວຍ 3 ສ່ວນສໍາຄັນຄື:

1) ເມດັນລາ( Medulla): ເປັນບໍລິເວນທໍາອິດທີ່ຕໍ່າຈາກໄຂສັນຫຼັງ ແລະເປັນສູນຮ່ວມຂອງເສັ້ນປະສາດຈາກໄຂຫຼັງໄຂ່ວກັນສະຫຼັບຊ້າຍ ຂວາ. ນອກຈາກນີ້ຍັງມີເຊວປະສາດທີ່ເຮັດໜ້າທີ່ຄວບຄຸມການຫາຍໃຈ ແລະ ກິລິຍາສະທ້ອນກ່ຽວກັບການຮັກສາການສິ່ງຕົວໃນແນວເນີ້ງຂອງຄົນເຮົາອີກດ້ວຍ.

2) ພອນ(Pons): ຢູ່ເທິງເມດັນລາຂຶ້ນມາເປັນທາງຜ່ານຂອງເສັ້ນປະສາດຈາກໄຂສັນຫຼັງໄປສູ່ສ່ວນສະໝອງອື່ນໆ, ເປັນຮວມຂອງເຊວປະສາດທີ່ກ່ຽວຂ້ອງກັບການໄດ້ຍິນສຽງ, ການໄດ້ຮັບສໍາພັດຈາກບໍລິເວນຫົວ ແລະ ມີບົດບາດການຄວບຄຸມການເຄື່ອນໄຫວເທິງໃບໜ້າອີກດ້ວຍ.

3) ເຊຣີເບລໍາ (Cerebellum): ມີຊື່ເອີ້ນອີກຢ່າງໜຶ່ງວ່າ: ສະໝອງນ້ອຍ, ຕັ້ງຢູ່ບໍລິເວນງ່ອນດົ້ນພໍດີມີບົດບາດໃນການສ້າງໃຫ້ກ້າມເນື້ອຕ່າງໆ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງຮ່າງກາຍສິດຊື່ນ ແລະ ເກີດຄວາມສໍາພັນກັນ. ຖ້າຂາດເຊຣີເບລໍາແມ່ຄົນເຮົາຂະເກີດກະຕຸກກະຕັກ ແລະ ເກະກະໜ້າລໍາຄານ, ເຖິງແມ່ນວ່າຈະເອົານິ້ວມືຈັບທີ່ປ້າຍດັງກໍຈະເຮັດໄດ້ຍາກ. ເຊຣີເບລໍາມີ 2 ຊີກຄື ຊີກຊ້າຍ ແລະ ຂວາ ເຊື່ອມຕໍ່ເຂົ້າກັນໂດຍໄສພອນ.

**2.1. ການເຮັດວຽກຂອງສະໝອງ**

ສ່ວນປະກອບ ແລະໜ້າທີ່ຂອງສະໝອງສ່ວນຕ່າງໆ

- ສະໝອງສ່ວນຄິດ (Cerebral Coitex) ແລະ ສະໝອງສ່ວນຍາກ (Limbi







**ໜ້າທີ່ຂອງສະໝອງສ່ວນຕ່າງໆ**

**2.1.1. ສະໝອງສ່ວນຄິດ (Cerebral Coitex)**

ເປັນສະໝອງສ່ວທີ່ຫໍ່ຫຸ້ມແກນກາງໄວ້ຄ້າຍຄືກັບເປືອກໝາກໄມ້,ສະໝອງສ່ວນຄິດມີໜ້າທີ 2 ຢ່າງ ຄື : ສ່ວນທີ່ເຮັດໜ້າທີ່ປຽນແປງສິ່ງແວດລ້ອມພາຍນອກ ຫຼື ເອີນວ່າປັນຍາພາຍໃນ.

- ແຜນພູມສະໝອງສ່ວນຄິດ.




- ໃນທາງການສຶກສາບົດບາດຂອງສະໝອງທັງ 2 ສ່ວນຈະໃຊ້ຄຳວ່າຄວາມຮູ້ສຳລັບປັນຍາພາຍນອກ ແລະຄຸນນະທຳສຳລັບປັນຍາພາຍໃນ ດັ່ງທີ່ໄດ້ເວົ້າສະເໜີວ່າ << ການສຶກສາສ້າງຄວາມຮູ້ຄູ່ຄຸນນະທຳ>>ໃນຂະນະທີ່ທາງຈິດຕະວິທະຍາໃຊ້ຄຳວ່າ EQ.
- ໃນຄວາມໝາຍໃກ້ຄຽງກັບປັນຍາພາຍນອກແລະຄວາມຮູ້ຄວບຄູ່ກັບຄຳວ່າ IQ .ໃນຄວາມໝາຍທຽບຄູ່ກັບຄຸນະທຳແລະປັນຍາພາຍໃນ.
- ສະໝອງສ່ວນຄິດ(Cerebral Coitex)ມີຄວາມສຳຄັນຍິ່ງຕໍ່ຄວາມສາມາດຊັ້ນສູງຂອງມະນຸດ, ສະໝອງສ່ວນຄິດມີ2ຊີກຄື: ສະໝອງຊີກຊ້າຍ ແລະ ສະໝອງຊີກຂວາ.

1) ສະໝອງຊີກຊ້າຍເຮັດວຽກກ່ຽວກັບຄວາມສາມາດເຂົ້າໃຈພາສາ ແລະການເວົ້າ, ຄວບຄຸມການເຮັດວຽກຂອງຮ່າງກາຍຊີກຂວາ,ສະໝອງຊີກນີ້ຈະຄິດຕາມລຳດັບ, ຄິດລະອຽດ, ວິເຄາະຈຳແນກເປັນສ່ວນໆເຊັ່ນ ເລົ່າບົດຮຽນເກົ່າ,ຟັງຫຼືຈື່ຈຳບົດຮຽນ,ຄຳອະທິບາຍເກົ່າ

2) ສະໝອງຊີກຂວາເຮັດວຽກກ່ຽວກັບຄວາມສາມາດມີສະຕິສຳພັນຈິນຕະນາການ,ມີຄວາມສາມາດທາງດ້ານດົນຕີເຂົ້າໃຈກ່ຽວກັບສຽງ, ຄວບຄຸມການເຮັດວຽກຂອງຮ່າງກາຍຊີກຊ້າຍສະໝອງນີ້ຈະເຫັນສິ່ງຕ່າງໆຢ່າງສຳພັນກັນເປັນພາບລວມເຊັ່ນ ຄິດອອກເປັນຮູບພາບ ຫຼື ເປັນແຜນພາບ.

- ແຜນວາດກ່ຽວກັບສະໝອງຊີກຂວາ ແລະ ຊີກຊ້າຍ

| ສະໝອງຊີກຂວາ(GESTALT) | | ສະໝອງຊີກຊ້າຍ(LOGIC) |
|---|---|---|
| - ການເຫັນ<br>- ການໃຊ້ຄຳສັບ<br>- ຄິດ ແລະຈື່ເປັນພາບລວມ<br>- ຄວາມຄິດສ້າງສັນ<br>- ປະຕິກິລິຍາຕອບສະໝອງອັດຕະໂນມັດ | | - ໃຊ້ເຫດຜົນ<br>- ຈົດຈຳ<br>- ຄິດເປັນລະບົບ<br>- ການອອກສຽງ<br>- ພາສາຄະນິດສາດ<br>- ການຈັດລະດັບຂັ້ນຕອນ |

| | | |
|---|---|---|
| - ຮຽນຮູ້ຈາກຄວາມເຂົ້າໃຈ<br>-  ໃຊ້ຄວາມຮູ້ສຶກ<br>-ການເຄື່ອນໄຫວ( ກ້າມຊີ້ນໃຫ່ຍ)<br>ຕາມອາລົມສີລະປະດົນຕີບໍ່<br>- ມີການຈັດການທີ່ກີ | | - ການເຄື່ອນໄຫວ(ກ້າມຊີ້ນ<br>ນອ້ຍ)<br>- ຮຽນຮູ້ດ້ວຍການທ່ອງຈຳ<br>- ຄວບຄຸ້ມອາລົມ<br>- ມີການຈັດການທີ່ດີ |

### 2.1.2. ສະໝອງສ່ວນຍາກ(Limbic system)

ເປັນສວ່ນຂອງສະໝອງສ່ວນຄິດ, ເຮັດວຽກຢ່າງເປັນລະບົບມີສ່ວນກຽ່ວຂ້ອງກັບເລື່ອງຂອງອາລົມ, ຄວາມຮູ້ສຶກເຊິ່ງເຊື່ອມໂຢ່ງກັບການຮຽນຮູ້ແລະການຮຽນຮູ້ຂອງສະໝອງສ່ວນອື່ນໆ  ການຈັດການຮຽນຮູ້ທີ່ສອດຂ້ອງກັບການເຮັດວຽກຂອງສະໝອງຈຶ່ງຈຳເປັນຕອ້ງຄຳເຖິງອາລົມຄວາມຮູ້ສຶກຂອງເດັກດ້ວຍ, ສະໝອງສ່ວນນີ້ປະກອບດ້ວຍຫຼາຍສ່ວນສ່ວນທີ່ມີຄວາມສຳພັນກັບການຮຽນຮູ້ໄດ້ ແກ່ຮິບໂປແຄມປັດ ແລະ ອາມິດດາລາ.

1) **ຮິບໂປແຄມປັດ(Hippocampus)**

ມີໜ້າທີ່ກ່ຽວກັບການສ້າງ ແລະ ສະສົມຄວາມຈຳ ແລະກ່ຽວຂ້ອງກັບຂະບວນການຮຽນຮູ້ທີ່ຊັບຊ້ອນ.

2) **ອະມິກດາລາ (Amydala)**

ເປັນສ່ວນທີ່ກ່ຽວຂ້ອງກັບການຕອບສະໜອງທາງອາລົມທີ່ຊັບຊ້ອນເຊັ່ນ  ຄວາມຢານຄວາມແຂງກະດ້າງ.

### 2.2. ການປ່ຽນແປງລະດັບໂຄ້ງສ້າງຂອງສະໝອງ

ການປ່ຽນແປງລະດັບໂຄ້ງສ້າງຂອງສະໝອງຄືການຈັດລະບຽບຂອງໄຍປະສາດການເຕີບໂຕ ແລະ ພັດທະນາການຂອງສະໝອງ,ເປັນຮາກຖານຂອງສະໝອງ ຄືການຈັດລະບຽບຂອງໄຍປະສາດ, ການເຕີບໂຕ ແລະ ພັດທະນາການຂອງສະໝອງເປັນຮາກຖານຂອງພັດທະນາການການຮຽນຮູ້ເລີ່ມຕົ້ນຕັ້ງແຕ່ເລີ່ມເປັນຢູ່ໃນທ້ອງທາລົກ

ກິດຈະກຳ  ຈຳແນກສວ່ນປະກອບຂອງສະໝອງ

**ອຸປະກອນ** ເຈ້ຍແຜນໃຫ່ຍ, ບັດຄຳຖາມ, ເຟີດ

**ວິທີດຳເນີນ**

-ລະດົມສະໝອງດ້ວຍຄຳຖາມ, ສະໝອງມີຄວາມສຳຄັນແນວໃດ?

- ບັນທຶກຄຳຕອບໃສ່ກະດານ
- ຄູສະຫຼູບສັງລວມຄຳຕອບທີ່ຖືກຕ້ອງ
- ແບ່ງນັກສຶກສາເປນກຸ່ມ

- ຢາຍບັດຄຳຖາມສະໝອງຂອງຄົນເຮົາແບ່ງອອກເປັນຈັກຊີກ? ຄືຊີກໃດແດ່? ຈົ່ງອະທິບາຍແຕ່ລະ ຊີກພ້ອມທັງຍົກຕົວຢ່າງ

-ແຕ່ລະກຸ່ມຄົ້ນຄວ້າຕອບຄຳຖາມ ແລ້ວລາຍງານ

-ຄູສະຫຼຸບແລະປະກອບຄຳເຫັນການສ້າງຈຸລັງສະໝອງຂອງທາລົກອາຍຸ 3 ຫາ 6 ເດືອນໃນທ້ອງແມ່ ແລະມີຫຼາຍກ່ວາຊ່ວງເປັນໄວເດັກ, ແຕ່ລະຊ່ວງສຸດທ້າຍຂອງການຕັ້ງຈຸລັງສະໝອງເປັນພື້ນຖານການດຳລົງຊີວິດຕໍ່ໄປໂດຍບໍ່ມີການສ້າງໃໝ່ການເຕີບໂຕຂອງສະໝອງໃນຊ່ວງ 0 ຫາ 12ປີເປັນການເຕີບໂຕທາງປະລິມານຢ່າງຍິ່ງເຮັດໃຫ້ສະໝອງມີຂະໜາດ 90% ຫາ 95%ຂອງໄວຜູ້ໃຫຍ່.

## 3. ສະໝອງກັບການຮຽນຮູ້

### 3.1. ກິດຈະກຳທີ່ສົ່ງເສີມການເຮັດວຽກຂອງສະໝອງກັບການຮຽນຮູ້

- ກິດຈະກຳທີ່ສະຫງົບ, ສະມາທິ
- ການເຄື່ອນໄຫວຮ່າງກາຍທັງ 2 ດ້ານ(Brain gym)
- ການຟັງແລະການຫຼິ້ນດົນຕີລະດັບສຽງທີ່ມີຜົນຕໍ່ສະໝອງ
- ການຮຽນຮູ້ໂດຍໃຊ້ປະສາດສຳພັດ

### 3.2. ກິດຈະກຳທີ່ສະຫງົບ, ການສະມາທິຂອງເດັກກ່ອນໄວຮຽນ

ການຈັດກິດຈະກຳການຮຽນຮູ້ຕ່າງໆໃຫ້ແກ່ເດັກເພື່ອໃຫ້ໄດ້ຮັບຜົນດີນັ້ນຄວນກຽມເດັກໃຫ້ມີຄວາມພ້ອມຢູ່ສະເໝີໂດຍເຮັດໃຫ້ເດັກສະຫງົບລົງໃນຂະນະທີ່ລິງຫຼິ້ນ ຫຼື ສົນທະນາກັນໂດຍສະເພາະເດັກກ່ອນໄວຮຽນທີ່ມີໄລຍະຄວາມສົນໃຈສັ້ນ, ບໍ່ມັກຢູ່ສະຫງົບຈະແລ່ນໄປແລ່ນມາດັ່ງນັ້ນຄວນມີການດຶງດູດຄວາມສົນໃຈຂອງເດັກໃຫ້ກັບມາມີສະມາທິກ່ອນທີ່ຄູຈະນຳພາເຂົ້າສູ່ກິດຈະກຳການຮຽນຮູ້.

ການກຽມພ້ອມເພື່ອໃຫ້ເດັກໄດ້ເຂົ້າສູ່ສະມາທິຄູຕ້ອງໄດ້ກະກຽມ ແລະນຳໃຊ້ເທັກນິກຕ່າງໆດ້ວຍຫຼາຍຮູບແບບເຊັ່ນ:

- ການຮ້ອງເພງ.
- ການເລົ່ານິທານ.
- ການເຄື່ອນໄຫວປະກອບສຽງເພງ,ສຽງດົນຕີ,ການຈັດກິດຈະກຳການເຄື່ອນໄຫວຕ່າງໆທີ່ເຮັດໃຫ້ເດັກມີສະມາທິຄູຄວນເລືອກກິດຈະກຳທີ່ເໝາະສົມກັບສະພາບການ ແລະ ສໍາອາຍຸຂອງເດັກ.

- ກິດຈະກຳທີ່ຊ່ວຍສົ່ງເສີມໃຫ້ເດັກມີຄວາມສະຫງົບ ແລະ ມີສະມາທິ ມີປະໂຫຍດດັ່ງນີ້:

1. ຊ່ວຍດຶງດູດຄວາມສົນໃຈໃນການຮັບຮູ້ຂອງເດັກກ່ອນໄວຮຽນ.
2. ເປັນການປ່ຽນອະລິຍະບົດຂອງເດັກເນື່ອງຈາກວ່າເດັກກ່ອນໄວຮຽນ ມີໄລຍະຄວາມສົນໃຈສັ້ນ.
3. ຊ່ວຍໃຫ້ເດັກ ແລະ ຄູມີສຸຂະພາບຈິດທີ່ດີ ແລະ ສົ່ງຜົນພັດທະນາການດ້ານອາລົມຈິດຂອງເດັກ.
4. ເຮັດໃຫ້ເດັກເກີດມີພັດທະນາການດ້ານສະຕິປັນຍາ.
5. ເຮັດໃຫ້ເດັກໄດ້ພັດທະນາດ້ານຮ່າງກາຍທັງກ້າມຊີ້ນໃຫຍ່ ແລະກ້າມຊີ້ນນ້ອຍ.

- ກິດຈະກຳທີ່ຊ່ວຍສົ່ງເສີມໃຫ້ເດັກສະຫງົບ ແລະເກີດສະມາທິກ່ອນທີ່ຈະເຂົ້າສູ່ກິດຈະກຳການຮຽນຮູ້ ໂດຍໃສ່ຊື່ກິດຈະກຳວ່າ:

1. ການເຄື່ອນໄຫວປະກອບເພງ(ເພງດອກໄມ້ບານ).

2. ການເຮັດໂຍຄະສະມາທິ(ເພງປະກອບໂຍຄະ)

3. ການສົ່ງທຽນ;ສົ່ງແກ້ວນໍ້າ.

4. ໃຊ້ຖົງທົ່ວເຫຼືອງເຄື່ອນໄຫວຮ່າງກາຍ

5. ການອອກກຳລັງສະໝອງ(Brain gym Movment)

ຕົວຢ່າງ 1:

ເພງ ດັ່ງດອກໄມ້ບານ

ລົມຫາຍໃຈເຂົ້າ ລົມຫາຍໃຈອອກ

ດັ່ງດອກໄມ້ບານ ພູຜາກ້ວາງໃຫ່ຍ

ດັ່ງສາຍນໍ້າໄຫຼ ໄວ້ ແລະ ເຢັນດີ

- ເວລາຄູຮ້ອງເພງນີ້ຈະໃຫ້ນັກສຶກສາປະກອບທ່າທາງໄປຕາມເນື້ອໃນຂອງສຽງເພງ ຫຼື ໃຫ້ເດັກປະກອບທ່າທາງການເຄື່ອນໄຫວຕາມຈິນຕະນາການ.

**ຕົວຢ່າງ 2:ການເຄື່ອນໄຫວສະຫຼັບຂ້າງ(Cross-ovre movrment)**

- ການເຄື່ອນໄຫວສະຫຼັບຂ້າງຈະເຮັດໃຫ້ການເຮັດວຽກຂອງສະໝອງທັງສອງຊີກຖ່າຍໂຍງຂໍ້ມູນໃຫ້ກັນເຊັ່ນ:ສະໝອງຊີກຂວາຈະສາມາດໃຊ້ຈິນຕະນາການ ການລິເລີ່ມສ້າງສັນຈາກສະໝອງຊີກຊ້າຍໃນການອ່ານ,ການຂຽນ ແລະການເຮັດວຽກປະສານກັນຂອງກ້າມຊີ້ນໄດ້ດີ.

- ການໃຫ້ເດັກເຮັດທ່າເຫຼົ່ານີ້ແມ່ນເພື່ອໃຫ້ຄູຮູ້ວ່າເດັກມີບັນຫາໃນການເຮັດວຽກປະສານກັນລະຫວ່າງມືແລະ ຕີນຫຼືບໍ່.

ຮູບພາບ

ຕົວຢ່າງ 3:

| ທ່າທີ 1 | ທ່າທີ2 |
| --- | --- |
| ນັ່ງຕັ່ງອີ້ ແລ້ວເອົາຂາຂຶ້ນກ່າຍກັນເບື້ອງໜຶ່ງ, ພຽງ ຈາກນັ້ນນວດເບົາໆຊ່ວງບີແຂງຫາຫົວເຂົ່າ ແລະ ຢຽດຂໍ້ຕີນເລີກໆ | ອົາແຂນທັງສອງເບື້ອງຂວາຍກັນໄວ້ທາງໜ້າ ແອວແລ້ວຄ່ອຍໆຍົກແຂນຂຶ້ນ ຫາຍໃຈເຂົ້າ |

ໄປມາ(ໃຫ້ປ່ຽນເບື້ອງຂາເອົາຂຶ້ນ-ລົງ ຕາມວິທີເກົ່າຕາມ ແລ້ວຫາຍໃຈອອກໃຫ້ຄ່ອຍເອົາມືທັງສອງເບື້ອງລົງ

ຄວາມຕ້ອງການ) (ເຮັດຕາມວິທີເກົ່າຕາມຄວາມຕ້ອງການ)

ກິດຈະກຳ: ເຝິກປະຕິບັດຕົວຈິງກ່ຽວກັບກິດຈະກຳທີ່ສົ່ງເສີມການເຮັດວຽກຂອງສະໝອງ.

### 3.3. ໂອກາດແຫ່ງການຮຽນຮູ້ ( Windows of opportunity )

ພັດທະນາທາງສະໝອງສາມາດພິຈາລະນາໃນໂຄງສ້າງພື້ນຖານວ່າ ເປັນປະກົດການໃນການຂະຫຍາຍຕົວ ແລະ ຕັດທ່ອນສ່ວນທີ່ບໍ່ໄດ້ໃຊ້ລວມທັງການເຮັດວຽກຮ່ວມກັນທັງສອງຊີກ,ຂະຫຍາຍການພັດທະນານີ້ເກີດຂຶ້ນໃນລັກສະນະເປັນຂັ້ນຕອນຂອງການພັດທະນາການນັ້ນກໍ່ຄືໃນໄວອາຍຸເຊິ່ງເລີ່ມແຕ່ທາລົກຈົນຮອດໄວລຸ້ນ, ຈະມີໃນບາງສວນຂອງສະໝອງເຕີບໃຫ່ຍ ແລະບັນລຸວຸດທິພາວະຂອງສະໝອງຂອງສວນອື່ນໆ ແລະ ນີ້ກໍ່ຄືຮາກຖານຂອງແນວຄິດ (ໂອກາດແຫ່ງການຮຽນຮູ້)ເຊິ່ງເຂົ້າໃຈໃນເລື່ອງພັດທະນາການຂອງສະໝອງມາສົ່ງເສີມການຮຽນຮູ້ແຕ່ລະເລື່ອງແຕກຕ່າງກັນໄປ, ຖ້າຮາກວ່າເດັກບໍ່ມີການຮຽນຮູ້ໃນຊ່ວງນີ້ຈະເຮັດໃຫ້ການພັດທະນາການຕາມຮູບແບບເປັນໄປໄດ້ຍາກ.

ການສັງເຄາະຄວາມຮູ້ຄວາມເຂົ້າໃຈໃນເລື່ອງການບັນລຸວຸດທິພາວະຂອງສະໝອງຈາກຫຼັງໄປເປັນໜ້າ ແລະ ຜົນຕໍ່ການພັດທະນາພາຍນອກ ແລະ ປັນຍາພາຍໃນແຕ່ໄວ, ການຮຽນຮູ້ເຫຼົ່ານີ້ຈະມີລຳດັບການເກີດຂຶ້ນດັ່ງນີ້:

| | ໄວທາລົກ<br>ອາຍຸ 0-2ປີ | ໄວກ່ອນຮຽນ<br>ອາຍຸ 3-5 ປີ | ໄວຮຽນ<br>ອາຍຸ 6-12 ປີ | ໄວລຸ້ນ<br>ອາຍຸ 13-20/25 ປີ |
|---|---|---|---|---|
| ປັນຍາພາຍນອກ (ຄວາມຮູ້,ຄວາມສາມາດ) | -ການໃຊ້ກ້າມໃຫ່ຍ<br>-ປະສາດຮັບຮູ້ພື້ນຖານ | ການໃຊ້ກ້າມຊີ້ນນ້ອນ, ພາສາ ຈິນຕະນາການ | -ຄະນິດສາດການໃຊ້ເຫດຜົນ,ດົນຕີສີລະປະ | -ທັກສະວິຊາການ, ທັກສະອາຊີບ ແລະ ທັກສະສັງຄົມ |
| ປັນຍາພາຍໃນ (ຄຸນລັກສະນະ) | -ຄວາມຜູກພັນ ແລະໄວ້ວາງໃຈ | ການຄວບຄຸມອາລົມ, ການຮູ້ຖືກ,ຮູ້ຜິດ | -ປະຢັດ, ມີລະບຽບ,ຊອກຮູ້ | -ລັກສະນະທາງເພດ, ລັກສະນະທາງສັງຄົມ |

- ປ້ອງຢ້ຽມໂອກາດແຫ່ງການຮຽນຮູ້.

| ຖືພາ | 1ປີ | 2ປີ | 3ປີ | 4ປີ | 5ປີ | 6ປີ | 7ປີ | 8ປີ | 9ປີ | 10ປີ |
|---|---|---|---|---|---|---|---|---|---|---|
| | ເຄື່ອນໄຫວກ້າມຊີ້ນ | | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| | ຄວບຄຸອາລົມ | | | | | | | | | |
| | ເບິ່ງເຫັນ | | | | | | | | | |
| | ພົວພັນສັງຄົມ | | | | | | | | | |
| | ຮຽນຮູ້ຄຳສັບ | | | | | | | | | |
| | ຮຽນຮູ້2ພາສາ | | | | | | | | | |
| | | ຮ ຽ ນ ເ ລ ກ ແລະເຫດຜົນ | | | | | | | | |
| | | | ຮຽນຮູ້ດົນຕີ | | | | | | | |

- ບາງຫຼັກການແລະຄວາມເຊື່ອທີ່ສຳຄັນກ່ຽວກັບການລ້ຽງດູ ແລະ ພັດທະນາການເດັກກ່ອນໄວຮຽນ

1. ການຮຽນຮູ້ເລີ່ມຕົ້ນແຕ່ມືທຳອິດ
2. 6 ປີທຳອິດຂອງຊ່ວງຊີວິດໃນໄວເດັກປູພື້ນຖານການພັດທະນາໃນອະນາຄົດ
3. ການຄອຍລະວັງເດັກຕັ້ງແຕ່ໄລ່ຍະຕົ້ນຈະຊ່ວຍບັນເທົາຄວາມລຳບາກໃນອະນາຄົດ
4. ການພັດທະນາແລະການຮຽນຮູ້ເປັນໜ້າທີ
5. ເດັກຮຽນຮູ້ແລະພັດທະນາໄດ້ດີຖ້າຮາກເຂົ້າເຈົ້າມີສ່ວນຮ່ວມໃນການປະຕິບັດ
6. ພັດທະນາດ້ານຮ່າງກາຍ,ຄວາມຄິດ,ສັງຄົມອາລົມແລະການຮຽນຮູ້ມີຄວາສຳພັນເຊິ່ງກັນແລະກັນ.
7. ການສະໜັບສະໜູນໃຫ້ແກ່ການພັດທະນາເດັກ,ຊ່ວງທຳອິດບໍ່ພຽງພໍແຕ່ບໍ່ໄດ້ຮັບຜົນທັນທີ່ທັນໃດເທົ່ານັ້ນແຕ່ກໍ່ຈະໄດ້ຮັບຜົນກະທົບຕະຫຼອດໄປ.
8. ເຈ້ຍແຜນໃຫຍ່ 5 ແຜນ, ຕາຕະລາງລຳດັບການພັດທະນາແຕ່ລະໄວ.
9. ການດຳເນີນ ແບ່ງນັກສຶກສາອອກເປັນ 3 ກຸ່ມຢາຍຕາຕະລາງໃຫ້ແຕ່ລະກຸ່ມ,ຄົ້ນຄ້ວາສົນທະນາພອ້ມທັງອະທິບາຍແລ້ວຂຽນໃສ່ເຈ້ຍແຜນໃຫ່ຍ, ຕ່າງໜ້າແຕ່ລະກຸ່ມຂຶ້ນອະທິບາຍ, ແລະປະກອບຄິດຄຳເຫັນ

### 3.4. ປັດໃຈຕໍ່ການພັດທະນາສະໝອງຂອງເດັກກ່ອນໄວຮຽນ

ການປຽ່ນແປງສະໝອງທາງກາຍທີ່ເຮັດໃຫ້ເກີດການຮຽນຮູ້ສະໝອງມີພັດທະນາການຕາມຊ່ວງອາຍຸຕັ້ງແຕ່ນອ້ຍຈົນເຖິງໃຫ່ຍເຊິ່ງມີການກະຕຸນທີ່ເໝາະສົມເຮົາສາມາດປຽ່ນໂຄ້ງສ້າງຂອງສະໝອງໄດ້ຄືສາມາດເພີ່ມ(ການເຊື້ອມຕໍ່)ໃຫ້ຫຼາຍກວ່ານີ້.

- ❖ ກຳມະພັນຈາກພໍ່ແມ່ຈະມີຜົນຕາມລຳດັບຂັ້ນພັດທະນາການສ້າງເຊວສະໝອງເພື່ອໃຫ້ການເຮັດວຽກຂອງສະໝອງແຕ່ລະສ່ວນ.
- ❖ ອາຫານສະໝອງເຊັ່ນ:

- ເຄື່ອງດື່ມໄດ້ໄດ້ແກ່ນ້ຳສະອາດ, ສະໝອງຕ້ອງການນ້ຳຢ່າງໜ້ອຍ 8-12 ຈອກ ຖ້າສະໝອງຂາດ ນ້ຳຈະບໍ່ສາມາດຮຽນຮູ້ໄດ້ຢ່າງສົມບູນ.
- ໂປຣຕີນ(Proteine)ດີທີ່ໄດ້ແກ່ປາ, ໄຂ່ແດງ, ນົມສົ້ມ, ຖົ່ວເຫຼືອງ ແລະຕັບ.
- ຜັກ (Freshvegetables)ໄດ້ແກ່ເຂົ້າກ່ອງ,ຖົ່ວ, ໝາກເດືອຍ.
- ໝາກໄມ້(Fresh fruits)ໄດ້ແກ່ກ້ວຍ, ໝາກກຽງ.......

❖ ການໄດ້ຮັບຄວາມຮັກການອອກກຳລັງກາຍ

❖ ການລິ້ນດົນຕີ ແລະ ສິລະປະ

- **ຄວາມທ້າທາຍ ແລະ ຜົນກະທົບ**

ການປ່ຽນແປງໂຄ້ງສ້າງສະໝອງທາງກາຍທີ່ເຮັດໃຫ້ເກີດການຮຽນຮູ້ທີ່ບໍ່ໄດ້ດີ, ປັດໄຈທີ່ກ່ຽວຄອງກັບການປ່ຽນແປງສະໝອງເຊັ່ນການກະທຳທາງຮ່າງກາຍຈາກການຖືກຮຸກຮານ, ໄດ້ຮັບການປະຕິບັດທີ່ຮຸນແຮງ, ສະພາບແວດລ້ອມທີ່ປອດໄພ, ຄວາມຜິດປົກກະຕິຂອງການຮຽນຮູ້, ວິຊາທີ່ເໝາະສົມ ແລະການກະທຳໃຫ້ຮູ້ສຶກອັບອາຍ.

## 4. ການຈັດກິດຈະກຳການຮຽນຮູ້ທີ່ເຫດເໝາະກັບພັດທະນາການທາງດ້ານສະໝອງຂອງເດັກກ່ອນໄວຮຽນ

ຈາກການຄົ້ນພົບເລື່ອງຂອງການເຮັດວຽກຂອງສະໝອງ ແລະ ຄວາມຮູ້ກ່ຍວກັບພັດທະນາການຂອງເດັກອາຍຸ 0-5 ປີນັກສຶກສາໄດ້ນຳມາເຊື່ອມໂຍງກັບການຮຽນຮູ້ແຕ່ລະໄລ່ຍະຂອງອາຍຸຢ່າງເໝາະສົມ ເຊິ່ງຖ້າມີການກະຕຸ້ນຢ່າງຖືກຕອ້ງພາຍໃຕສິ່ງແວດລອ້ມທີ່ເອື້ອອຳນວຍໃຫ້ເກີດການຮຽນຮູ້ຢ່າງມີປະສິດທິພາບ.

ພັດທະນາການດ້ານສະຕິປັນຍາຂອງເດັກ ນອກຈາກຂຶ້ນກັບການກະຕຸ້ນ ຫຼື ການຈັດປະສົບການທີ່ມີຄຸນນະພາບແລ້ວ ຍັງຂຶ້ນຢູ່ກັບຊ່ວງເວລາຂອງການຮຽນຮູ້ ຫຼື ເອີ່ນວ່າໂອກາດແຫ່ງການຮຽນຮູ້.

ໂຮງຮຽນເປັນສະຖາບັນທາງການສຶກສາທີມີບົດບາດສຳຄັນໃນການພັດທະນາການຮຽນຮູ້ໃຫ້ແກ່ເດັກໂດຍກົງແລະປະສານງານກັບພໍ່ແມ່ຜູ້ປົກຄອງແລະສະຖາບັນອື່ນໆໃນສັງຄົມ.

ດັ່ງນັ້ນ, ການຮຽນຮູ້ຂອງເດັກຕ້ອງກຳນົດຫຼັກສູດແລະຈັດຂະບວນການຮຽນຮູ້ໃຫ້ສອດຄອງກັບພັດທະນາການຂອງເດັກແຕ່ລະຊ່ຳອາຍຸ.

❖ **ໃຈຄວາມ**

ໃນປັດໄຈນີ້ແນວທາງຂອງການສຶກສາໄດ້ມີການນຳເອົາຄວາມຮູ້ກຽ່ວກັບການເຮັດວຽກຂອງສະໝອງ,ຈິຕະວິທະຍາການຮຽນຮູ້, ຈິດຕະວິທະຍາພັດທະນາການຕາມໄວຂອງມະນຸດ ແລະ ການຮຽນຮູ້ຕາມທິດສະດີການສຶກສາຕ່າງໆມາປະສົມປະສານເຂົ້າກັນ, ໂດຍຈັດໃຫ້ມີການອອກແບບຈັດປະສົບການ ການຮຽນຮູ້ໃຫ້ເໝາະສົມກັບພັດທະນາການດ້ານສະໝອງເພື່ອໃຫ້ເກີດການຮຽນຮູ້ທີ່ມີປະສິດຕິພາບໃຫ້ແກ່ເດັກ.

**ວຽກມອບໝາຍ**

1. ໃຫ້ນັກຮຽນລົງສຶກສາລົງສັງເກດການຮຽນຮູ້ຂອງເດັກແຕ່ລະຊ່ວງອາຍຸແລ້ວຂຽນບົດລາຍງານ.

## ເອກະສານອ້າງອີງ


1. ຣສ. ສົມໃຈ ພຸຍຍະພອນ. (2011).ຈິດຕະວິທະຍາການສຶກສາ. ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.
2. ສຸຣາງ ໂອ້ຕະກູນ. (2016).ຈິດຕະວິທະຍາການສຶກສາ. ຈຸລາລົງກອນມະຫາ ວິທະຍາໄລ. ປະເທດໄທ: ສໍານັກພິມແຫ່ງຈຸລາລົງກອນມະຫາວິທະຍາໄລ.
3. ສິລິບູນ ສາຍໂກສຸມ. (2008).ຈິດຕະວິທະຍາການສຶກສາ. ພາກວິຊາຈິດຕະວິທະຍາ ຄະນະສຶກສາສາດ ມະຫາວິທະຍາໄລລາມຄໍາແຫງ. ປະເທດໄທ

| ໂຄງຮ່າງລາຍວິຊາ<br>**ຊື່ວິຊາ: ຈິຕຕະວິທະຍາການສຶກສາ**<br>ຫຼັກສູດສ້າງຄູອະນຸບານ ລະດັບປະລິນຍາຕີ<br>ລະຫັດລາຍວິຊາ: 0108303 | |
|---|---|
| ພາກຮຽນ ແລະ ປີຮຽນ<br>Semester and Year | ພາກຮຽນທີ 1 ປີທີ 2 |
| ຈຳນວນຊົ່ວໂມງ<br>Time | 64 ຊົ່ວໂມງ |
| ຈຳນວນໜ່ວຍກິດ<br>Credit | 3(2-2-2) |
| ອະທິບາຍຄຳໜ່ວຍກິດ<br>Credit Explanation | ວິຊານີ້ມີ 3 ໜ່ວຍກິດ, ຮຽນ 4 ຊົ່ວໂມງຕໍ່ອາທິດ, ໃນນັ້ນຮຽນພາກທິດສະດີ 2 ຊົ່ວໂມງ, ເຝິກປະຕິບັດຕົວຈິງ 2 ຊົ່ວໂມງ ແລະ ວຽກມອບໝາຍ 2 ຊົ່ວໂມງ |
| ຈຸດປະສົງ<br>Objectives | ເພື່ອໃຫ້ນັກສຶກສາຄູສາມາດ:<br>1. ອະທິບາຍຄວາມໝາຍ, ຄວາມສຳຄັນຂອງຈິດຕະວິທະຍາການສຶກສາ ແລະ ຄວາມເປັນຄູ ໄດ້ຢ່າງຖືກຕ້ອງ<br>2. ຈຳແນກຮູບແບບຂອງການຄິດ ແລະ ການຮຽນຮູ້ຂອງຜູ້ຮຽນໄດ້ຢ່າງຊັດເຈນ<br>3. ວິເຄາະ ແລະ ສະຫຼຸບແນວຄິດທິດສະດີການຮຽນຮູ້ໄດ້<br>4. ວາງແຜນສ້າງແຮງຈູງໃຈໃຫ້ຜູ້ຮຽນເກີດການຮຽນຮູ້ໄດ້ຢ່າງສ້າງສັນ |

| | |
|---|---|
| | 5. ມີເຈດຕະຄະຕິທີ່ດີຕໍ່ການປະກອບອາຊີບຄູ ແລະ ການຈັດການຮຽນ-ການສອນທີ່ມີປະສິດທິພາບ ເພື່ອພັດທະນາຜູ້ຮຽນໃນດ້ານຕ່າງໆ |
| ເນື້ອໃນຫຍໍ້<br>Course Description | ວິຊານີ້ຈະໄດ້ຮຽນຮູ້ກ່ຽວກັບຈິດຕະວິທະຍາການສຶກສາ ແລະ ຄວາມເປັນຄູ, ສະຕິ ປັນຍາກັບການສອນ, ຮູບແບບຂອງການຄິດ ແລະ ການຮຽນ, ທິດສະດີການຮຽນຮູ້ ກຸ່ມພຶດຕິກຳນິຍົມ, ທິດສະດີການຮຽນຮູ້ກຸ່ມປັນຍານິຍົມ, ທິດສະດີການຮຽນຮູ້ກຸ່ມ ມະນຸດນິຍົມ, ທິດສະດີການຮຽນຮູ້ທາງສັງຄົມ, ແຮງຈູງໃຈໃນການຮຽນຮູ້ ແລະ ສະໝອງກັບການຮຽນຮູ້ |
| ວິທີດຳເນີນການສອນ<br>Methodology | ວິຊານີ້ຮຽນຢູ່ 16 ອາທິດ, ດຳເນີນການຮຽນ-ການສອນໂດຍໃຊ້ວິທີສິດສອນແບບ ບັນຍາຍອະພິປາຍ, ລະດົມສະໝອງສົນທະນາ, ກໍລະນີສຶກສາ, ຈັດກິດຈະກຳເປັນ ກຸ່ມ, ລົງສັງເກດການຮຽນ-ການສອນຢູ່ໂຮງຮຽນອະນຸບານ, ຂຽນບົດເປັນກຸ່ມ ຫຼື ບຸກຄົນ |
| ການຮຽນ-ການສອນ Teaching Aids | ເອກະສານປະກອບການສອນ, ຮູບພາບ, ແຜນອາດຊ່ວຍຊູ, ແບບທົດສອບບາງດ້ານຈິດຕະວິທະຍາຕົວຢ່າງກໍລະນີສຶກສາທີ່ກ່ຽວຂ້ອງ, ອີເລັກໂທຣນິກ (ເຄື່ອງສາຍ LCD, naudo...) |
| ອາທິດທີ 1 Week 1 | ບົດທີ 1<br>ຈິດຕະວິທະຍາການສຶກສາ ແລະ ຄວາມເປັນຢູ່<br>1. ຄວາມໝາຍ ແລະ ຄວາມສຳຄັນຂອງຈິດຕະວິທະຍາການສຶກສາ<br>2. ຄວາມເປັນຄູ<br>3. ຄວາມສຳຄັນຂອງຈິດຕະວິທະຍາການສຶກສາຕໍ່ອາຊີບຄູ |
| ອາທິດທີ 2<br>Week 2 | ບົດທີ 1 (ຕໍ່)<br>ຈິດຕະວິທະຍາການສຶກສາ ແລະ ຄວາມເປັນຄູ<br>4. ໜ້າທີ່ ແລະ ບົດບາດຂອງຄູ<br>5. ຄູທີ່ມີປະສິດທິພາບ<br>6. ລັກສະນະທີ່ດີຂອງຄູ |
| ອາທິດທີ 3<br>Week 3 | ບົດທີ 1 (ຕໍ່)<br>ຈິດຕະວິທະຍາການສຶກສາ ແລະ ຄວາມເປັນຄູ<br>7. ໃນຖານະເປັນນັກວິທະຍາສາດແຫ່ງພຶດຕິກຳ<br>8. ຈິດຕະວິທະຍາກັບການສອນ |
| ອາທິດທີ 4<br>Week 4 | ບົດທີ 2<br>ສະຕິປັນຍາກັບການສອນ<br>1. ຄວາມໝາຍຂອງສະຕິປັນຍາ<br>2. ຄວາມແຕກຕ່າງດ້ານສະຕິປັນຍາກັບການສອນ<br>2.1 ການຈັດກຸ່ມຕາມຄວາມສາມາດຂອງເດັກ<br>2.2 ເດັກປັນຍາອ່ອນ<br>2.3 ເດັກທີ່ມີປັນຍາດີເລີດ |

| | |
|---|---|
| ອາທິດທີ 5<br>Week 5 | ບົດທີ 3<br>ຮູບແບບການຄິດ ແລະ ການຮຽນ<br><br>1. ຮູບແບບການຄິດ<br>1.1 ຮູບແບບການຄິດທີ່ພິຈາລະນາຄວາມໄວ ແລະ ຄວາມຜິດພາດຂອງການຕອບສະໜອງ<br>1.2 ຮູບແບບການຄິດທີ່ເປັນການຈຳແນກອິດທິພົນຂອງສິ່ງອ້ອມຂ້າງ<br>1.3 ຮູບແບບການຄິດກັບພຶດຕິກຳການຮຽນ-ການສອນ<br>1.4 ຂໍ້ສັງເກດບາງຢ່າງກ່ຽວກັບການຄິດ<br>2. ຮູບແບບການຮຽນ<br>2.1 ຮູບແບບການຮຽນໃນທັດສະນະຂອງຕົນ ແລະ ກັນ<br>2.2 ຮູບແບບການຮຽນກັບການຮຽນ-ການສອນ |
| ອາທິດທີ 6<br>Week 6 | ບົດທີ 4<br>ທິດສະດີການຮຽນຮູ້ກຸ່ມພຶດຕິກຳນິຍົມ<br>1. ຄວາມໝາຍຂອງການຮຽນຮູ້<br>2. ທິດສະດີການຮຽນຮູ້<br>3. ທິດສະດີການວາງເງື່ອນໄຂແບບຄຣາສິກ |
| ອາທິດທີ 7<br>Week 7 | ບົດທີ 4 (ຕໍ່)<br>ທິດສະດີການຮຽນຮູ້ກຸ່ມພຶດຕິກຳນິຍົມ<br>4. ທິດສະດີຄວາມສຳພັນເຊື່ອມໂຍງຂອງທ່ານ ທ່ອນໄດ໌ (Thorndike)<br>5. ທິດສະດີການວາງເງື່ອນໄຂການກະທຳຂອງທ່ານ ສະກິນເນີ (Skinner) |
| ອາທິດທີ 8<br>Week 8 | ບົດທີ 5<br>ທິດສະດີການຮຽນຮູ້ກຸ່ມປັນຍານິຍົມ<br>1. ທິດສະດີການຮຽນຮູ້ກຸ່ມເກັດສະຕັນ (Gestalt Psychology)<br>2. ທິດສະດີຂະບວນການປະມວນສານ (Information Processing Approach)<br>3. ທິດສະດີຂອງທ່ານ ປີອາເຈ (Piaget)<br>4. ທິດສະດີຂອງທ່ານ ວີກ໋ອດສະກີ (Vygolsky) |
| ຕາທິດທີ 9<br>Week 9 | ບົດທີ 6<br>ທິດສະດີການຮຽນຮູ້ກຸ່ມມະນຸດນິຍົມ<br>1. ທິດສະດີຂອງທ່ານ ອັບຣາຮົມ ມາສະໂລ (Abraharn Maslow)<br>2. ທິດສະດີຂອງທ່ານ ຄາລ ໂຣເຈີຣ໌ (Carl Rogers) |
| ອາທິດທີ 10<br>Week 10 | ບົດທີ 6 (ຕໍ່)<br>ທິດສະດີການຮຽນຮູ້ກຸ່ມມະນຸດນິຍົມ<br>3. ທິດສະດີຂອງທ່ານ ໂຄມສ (Corbs)<br>4. ການໝູນໃຊ້ຫຼັກການຂອງນັກຈິດຕະວິທະຍາມະນຸດນິຍົມ |

| | |
|---|---|
| ອາທິດທີ 11<br>Week 11 | ບົດທີ 7<br>ທິດສະດີການຮຽນຮູ້ທາງສັງຄົມ<br>1. ປະຫວັດຫຍໍ້ຂອງທ່ານ ບັນດູລາ (Albert Bandura)<br>2. ແນວຄິດພື້ນຖານຂອງທິດສະດີການຮຽນຮູ້ທາງສັງຄົມ<br>3, ອົງປະກອບຂອງການຮຽນຮູ້ |
| ອາທິດທີ 12<br>Week 12 | ບົດທີ 7 (ຕໍ່)<br>ທິດສະດີການຮຽນຮູ້ທາງສັງຄົມ<br>4. ການຮຽນຮູ້ທີ່ຊັບຊ້ອນ<br>5. ການຮຽນຮູ້ດ້ວຍການສັງເກດໃນຫ້ອງຮຽນ |
| ອາທິດທີ 13<br>Week 13 | ບົດທີ 8<br>ແຮງຈູງໃຈໃນການຮຽນຮູ້<br>1. ຄວາມໝາຍຂອງແຮງຈູງໃຈ<br>2. ທິດສະດີແຮງຈູງໃຈ<br>3. ພາວະຕື່ນຕົວ ແລະ ແຮງຈູງໃຈ |
| ອາທິດທີ 14<br>Week 14 | ບົດທີ 8 (ຕໍ່)<br>ແຮງຈູງໃຈໃນການຮຽນຮູ້<br>4. ເປົ້າໝາຍແຮງຈູງໃຈ<br>5. ການເສີມແຮງຈູງໃຈ<br>6. ວິທີການໃຫ້ກຳລັງໃຈ |
| ອາທິດທີ 15<br>Week 15 | ບົດທີ 9<br>ສະໝອງກັບການຮຽນຮູ້<br>1. ຄວາມໝາຍ ແລະ ຄວາມສຳຄັນຂອງສະໝອງ<br>2. ເນລັກສະນະຂອງກະຕອງ<br>3. ສະໝອງກັບການຮຽນຮູ້<br>4. ການຈັດກິດຈະກຳການຮຽນຮູ້ທີສອດຄ່ອງກັບການເຮັດວຽກຂອງ<br><br>ຜູ້ຮຽບຮຽງ<br><br>1 ປທ. ທ່ານ ນາງ ຄຳປອນ ແກ້ວປັນຍາ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ<br><br>Tun: 020 55913956, 020 99173838, 012 771198 |

| | |
|---|---|
| | Prepared by<br><br>2. ປທ. ທ່ານ ນາງ ຄໍາຫວັນ ຣາຊະຂັນຕີ ກົມອະນຸບານ-ປະຖົມ ກະຊວງສຶກສາທິການ ແລະ ກິລາ<br><br>tun: 020 55669377, 020 28160136, 020 22038226<br><br>3. ປຕ. ທ່ານ ນາງ ອ່າງຄໍາ ບຸດສະດີ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ<br><br>tun: 020 55438099 |
| ອາທິດທີ 16<br>Week 16 | ເຝິກປະຕິບັດຕົວຈິງ<br>ລົງສັງເກດການຮຽນ-ການສອນຢູ່ໂຮງຮຽນອະນຸບານ |
| ການປະເມີນຜົນການຮຽນ<br>Evaluation | 1. ການເຂົ້າຮ່ວມຮຽນ 10%<br>2. ກິດຈະກໍາປູກຄົນ 25%<br>3. ກິດຈະກໍາກຸ່ມ 15%<br>4. ສອບເສັງກາງພາກ 20%<br>5. ສອບເສັງທ້າຍພາກ30%<br>ລວມ 100% |
| ເອກະສານອ້າງອີງ<br>References | 1. ຣສ. ສົມໃຈ ໄຍຍະພອນ (2011).ຈິດຕະວິທະຍາການສຶກສາ, ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.<br>2. ສຸຣາງ ໂຕະກູນ. (2016). ຈິດຕະວິທະຍາການສຶກສາ ຈຸລາລົງກອນມະຫາວິທະຍາໄລ. ປະເທດໄທ: ສໍານັກພິມແຫ່ງຈຸລາລົງກອນມະຫາວິທະຍາໄລ.<br>3. ສີລິບູນ ສາຍໂກສຸມ. (2008). ຈິດຕະວິທະຍາການສຶກສາ. ພາກວິຊາຈິດຕະວິທະຍາ ຄະນະສຶກສາສາດ ມະຫາວິທະຍາໄລລາມຄໍາແຫງ. ປະເທດໄທ. |
| ຜູ້ຮຽບຮຽງຄືນ Revised by | 1 ປຕ. ທ່ານ ມະໄລແພງ ເພັງມະນີ ວິທະຍາໄລຄູດົງຄໍາຊ້າງ<br>1t: 020 97775344<br>2. ປທ. ທ່ານ ນາງ ມະຍຸລີ ສຸວັນນະປະດິດ ວິທະຍາໄລຄູດົງຄໍາຊ້າງ<br>Tun: 020 95387013<br>3. ປທ. ທ່ານ ນາງ ຂຽວສົມພອນ ສີຫາວົງ ວິທະຍາໄລຄູປາກເຊ |

| | |
|---|---|
| | Tun: 020 98009855<br>4. ປຕ. ທ່ານ ນາງ ລຳພອນ ສຸວັນນາ ວິທະຍາໄລຄູປາກເຊ<br><br>ໂທ: 020 97930540 |